ຊີວິດ ແລະ ການເຄື່ອນໄຫວຂອງ

ທ່ານ ກຶມ ພິມເສນາ

(14/7/1911-1/4/1963)

ສາລະບານ

ໜ້າ

1. "ຄຳນຳ" ໂດຍທ່ານບຸນຍັງ ວໍຣະຈິດ,ກຳມະການກົມການເມືອງ,ຜູ້ປະຈຳການຄະນະເລຂາທິການສູນກາງພັກປະຊາຊົນປະຕິວັດລາວ,ຮອງປະທານປະເທດ, ອະດີດ ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ.ລາວ 1
2. ຊີວະປະຫວັດຫຍໍ້ ຂອງພໍ່ກິນິມ ພົນເສນາ 5
3. "ຄວາມຊົງຈຳ ກ່ຽວກັບ ທ່ານ ກິນິມ ພົນເສນາ" ໂດຍ ທ່ານພົນເອກ ຄຳໄຕ ສີພັນດອນ, ອະດີດ ປະທານພັກປະຊາຊົນປະຕິວັດລາວ,ອະດີດ ປະທານປະເທດ, ອະດີດ ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ.ລາວ.....7
4. "ທ່ານ ກິນິມ ພົນເສນາເປັນຄົນທຸງແຫ່ງຂະບວນຮັກຫອມສັນຕິພາບ" ໂດຍ ທ່ານ ພົນໂທ ສະໝານ ວິຍາເກດ, ອະດີດກຳມະການກົມການເມືອງສູນກາງພັກປະຊາຊົນປະຕິວັດລາວ, ອະດີດປະທານສະພາແຫ່ງຊາດແຫ່ງສ.ປ.ປ.ລາວ.....13
5. "ບົດຄຳເຫັນ ກ່ຽວກັບ ທ່ານ ກິນິມ ພົນເສນາ", ໂດຍທ່ານ ພົນເອກ ສີສະຫວາດແກ້ວບຸນພັນ, ອະດີດກຳມະການກົມການ ເມືອງສູນກາງ ພັກ ປະຊາຊົນປະຕິວັດລາວ, ອະດີດນາຍົກລັດຖະມົນຕີ, ອະດີດປະທານສູນກາງແນວລາວສ້າງຊາດແຫ່ງສ.ປ.ປ.ລາວ.....17
6. "ຄຳເຫັນ ກ່ຽວກັບ ທ່ານ ກິນິມ ພົນເສນາ"ໂດຍທ່ານ ດຣ. ທອງລຸນ ສີສຸລິດ, ກຳມະການກົມການເມືອງ ສູນກາງພັກປະຊາຊົນປະຕິວັດລາວ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ແຫ່ງສ..ປ.ລາວ 19

7. “ຄຳເຫັນ ກ່ຽວກັບ ທ່ານ ກີນິມ ພົນເສນາ”ໂດຍທ່ານ ດຣ ພັນຄຳ ວິພາ ວັນ, ກຳມະການກົມການ ເມືອງສູນກາງພັກປະຊາຊົນປະຕິວັດລາວ, ລັດຖະມົນຕີວ່າການກະຊວງສຶກສາ.....27
8. “ພະນະທ່ານ ກີນິມ ພົນເສນາ, ນັກການເມືອງທີ່ກ້າວໜ້າຂອງຊາດ ລາວ”, ໂດຍທ່ານ ສຈ ດຣ ພັນດວງຈິດວິງສາ, ກຳມະການສູນກາງ ພັກປະຊາຊົນປະຕິວັດລາວ, ປະທານສູນກາງແນວລາວສ້າງ ຊາດແຫ່ງ ສ.ປ.ປ.ລາວ.....33
9. “ນ້ຳໃຈຮັກຊາດຂອງ ທ່ານ ລຸງ ກີນິມ ພົນເສນາ ທີ່ສະແດງອອກຕົວ ຈິງໃນເວລາເພິ່ນເປັນເຈົ້າແຂວງ ແຂວງຫົວພັນ”, ໂດຍທ່ານ ໄມສຸກ ໄຊສົມແພງ, ອະດີດກຳມະການສູນກາງພັກປະຊາຊົນ ປະຕິວັດລາວ, ອະດີດ ລັດຖະມົນຕີກະຊວງອຸດສາຫະກຳການຄ້າ, ອະດີດປະທານ ສູນກາງແນວ ລາວສ້າງຊາດແຫ່ງສ.ປ.ປ.ລາວ 37
10. “ຄວາມຊົງຈຳ ທີ່ບໍ່ອາດຫຼົງລືມໄດ້ ກ່ຽວກັບ ພໍ່ກີນິມ ພົນເສນາ”, ໂດຍ ພົນຕີ ຊຽງສົມ ກຸນລະວົງ, ວິລະຊົນແຫ່ງຊາດ, ອະດີດກຳມະການສູນ ກາງພັກປະຊາຊົນປະຕິວັດລາວ, ອະດີດລັດຖະມົນຕີຊ່ວຍ ວ່າການ ກະຊວງປ້ອງກັນຄວາມສະຫງົບແຫ່ງສ.ປ.ປ.ລາວ.....54
11. “ການບອກເລົ່າ ກ່ຽວກັບ ການພົບປະ ລະຫ່ວາງ ປະທານໄກສອນພົມ ວິຫານ ແລະ ທ່ານ ກີນິມ ພົນເສນາ”ໂດຍທ່ານ ຕິງເຢີ່ທໍ, ກຳມະການ ສູນກາງພັກປະຊາຊົນປະຕິວັດລາວ, ຮອງປະທານ ສູນກາງແນວລາວ ສ້າງຊາດແຫ່ງສ.ປ.ປ.ລາວ.....60
12. “ພະນະທ່ານ ກີນິມ ພົນເສນາ ໃນຄວາມຊົງຈຳຂອງພວກຂ້າພະເຈົ້າ”, ໂດຍທ່ານ ດຣ. ປອນເມກ ດາລາລອຍ, ອະດີດກຳມະການສູນກາງ ພັກປະຊາຊົນປະຕິວັດລາວ, ອະດີດລັດຖະມົນຕີວ່າການ ກະຊວງສາ ທາລະນະສຸກແຫ່ງສ.ປ.ປ.ລາວ.....63

13. “ຄຸນງາມຄວາມດີຂອງທ່ານກີນິມ ພົນເສນາ ທີ່ມີຕໍ່ປະເທດຊາດ”, ໂດຍທ່ານ ນາຍພົນ ຄຳອ້ອນ ບຸບຜາ, ອະດີດລັດຖະມົນຕີວ່າການ ສຳນັກງານນາຍົກ, ອະດີດລັດຖະມົນຕີວ່າການກະຊວງ ຍຸຕິທຳແຫ່ງ ສ.ປ.ປ.ລາວ 69
14. “ຄວາມຊົງຈຳ ຂອງເພື່ອນສະໜິດແຕ່ເຍົາໄວ ກ່ຽວກັບ ທ່ານ ກີນິມ ພົນເສນາ”,ໂດຍທ່ານເຫຼື່ອມ ອິນສີຊຽງໃໝ່, ອະດີດ ລັດຖະມົນຕີກະຊວງສຶກສາຂອງລັດຖະບານປະສົມ 3 ຝ່າຍ 72
15.“ບາງຄວາມຊົງຈຳ ເພື່ອເປັນການອຸທິດເຖິງ ວັນມໍລະນະກຳຂອງພໍ່ກີນິມ ພົນເສນາ ຄົບຮອບ 50ປີ” ໂດຍທ່ານ ເຊີນ ເພັດສັງຫານ, ອະດີດ ລັດຖະມົນຕີຊ່ວຍວ່າການກະຊວງຄົມມະຄົມໂຍທາທິການຂົນສົ່ງ ແຫ່ງ ສ.ປ.ປ ລາວ, ທີ່ປຶກສາຄະນະກຳມະການເພື່ອມໍລະດົກ ໂລກ.....76
16. ຄວາມຊົງຈຳກ່ຽວກັບພະນະທ່ານ ກີນິມ ພົນເສນາໂດຍທ່ານ ສຈ ດຣ ສຸລິ ນັນທະວົງ, ອະດີດລັດຖະມົນຕີປະຈຳສຳ ນັກງານນາຍົກລັດຖະ ມົນຕີ, ອະດີດປະທານອົງການກວດສອບແຫ່ງລັດ ແຫ່ງ ສ.ປ.ປ. ລາວ 80
17. “ພະນະທ່ານ ກີນິມ ພົນເສນາ ກັບ ເຫດການລັດຖະປະຫານ 9/8/60” ໂດຍທ່ານ ນາຍ ພົນແຈ້ງ ໄຊຍະວົງ ກອງທັບປະຊາຊົນລາວ, ອະດີດ ລັດຖະມົນຕີຊ່ວຍວ່າການປະຈຳສຳນັກງານນາຍົກລັດຖະມົນຕີ, ອະ ດີດ ຫົວໜ້າອົງການທ່ອງທ່ຽວແຫ່ງຊາດ.....82
18. “ສະດຸດີ ທ່ານ ກີນິມ ພົນເສນາ (ຄົບຮອບ 50 ປີ ຂອງວັນມໍລະນະກຳ ຂອງເພິ່ນ)”ໂດຍທ່ານ ຫົມມະກອນ ມະໂນທຳ ແລະ ທ່ານ ຈັນເພັງ ບຸນນະຜົນ, ອະດີດລັດຖະມົນຕີຊ່ວຍວ່າການ ກະຊວງຄົມມະນາຄົມ,

ໂຍທາທິການ ແລະ ຂົນສົ່ງ ແຫ່ງສ.ປ.ປ.ລາວ ແລະ ອະດີດລັດຖະ
ມົນຕີ ຊ່ວຍວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ
ສ.ປ.ປ.ລາວ ຕາມລຳດັບ 106
19. "ດ້ວຍຄວາມເຄົາລົບຮັກ ແລະ ຄິດຮອດຍາອ້າຍກຶນິມ ພົນເສນາ",
ໂດຍ ທ່ານປ້າພາອະດີ, ພັນລະຍາຂອງທ່ານ ເຫຼື່ອມ ລາດຊະສົມບັດ,
ເພື່ອນສະໜິດຂອງທ່ານກຶນິມ ພົນເສນາ, ອະດີດລັດຖະມົນຕີ ວ່າການ
ກະຊວງການຄັງແຫ່ງລາດຊະອານາຈັກລາວ.....110
20. "ວິລະກຳປະຕິວັດ ຂອງທ່ານກຶນິມ ພົນເສນາ ຍັງຄົງຢູ່ໃນຄວາມຊົງ
ຈຳຂອງຂ້າພະເຈົ້າຕະຫຼອດ ການລະນານ", ໂດຍ ທ່ານບົວສີ ຈະເລີນ
ສຸກ, ອະດີດຫົວໜ້າອະນຸສອນສະຖານໄກສອນ ພົມວິຫານ.....114
21. "ລະນຶກເຖິງພະນະທ່ານ ກຶນິມ ພົນເສນາ", ໂດຍທ່ານ ພັນເອກດຳ
ດວນ ພົມດວງສີ, ອະດີດຫົວໜ້າ ຫ້ອງການ ກະຊວງອຸດສາຫະກຳ
ການຄ້າແຫ່ງສ.ປ.ປ.ລາວ 123
22. "ທ່ານ ກຶນິມ ພົນເສນາ", ໂດຍທ່ານ ຈັນທີເດືອນສະຫວັນ, ບົດລົງຂ່າວ
ໜັງສືພິມປະຊາຊົນສະບັບ ວັນທີ 05/04/1998 132
23. "ປະຫວັດຫຍໍ້ ຂອງທ່ານກຶນິມ ພົນເສນາ, ແລະ ຕະກຸນ ພົນເສນາ",
ໂດຍທ່ານ ສຈ ດຣ ຮຸ່ຍ ພົນເສນາ, ອະດີດຫົວໜ້າຫ້ອງການກະຊວງ
ຍຸຕິທຳແຫ່ງສ.ປ.ປ.ລາວ.....133
24. "ຄວາມຊົງຈຳຂອງຂ້າພະເຈົ້າຕໍ່ການເຄື່ອນໄຫວສ່ວນນ້ອຍໜຶ່ງ ຂອງ
ພະນະທ່ານ ກຶນິມ ພົນເສນາ ຫຼື ເອີ້ນວ່າ "ອ້າຍນິມ" ຫຼື ຂະໜານ
ນາມວ່າ "ບູລຸດເຫຼັກ"" ໂດຍ ທ່ານ ສຈ ດຣ ພອນເທບ ພົນເສນາ, ຄະ
ນະປະຈຳສະພາແຫ່ງຊາດ, ປະທານກຳມາທິການ ວັດທະນະທຳສັງ
ຄົມ ຂອງ ສະພາແຫ່ງຊາດ ແຫ່ງ ສ.ປ.ປ ລາວ 146

25. “ອາໄລຮັກ ຍາລຸງກິນິມ ພິນເສນາ”, ໂດຍ ທ່ານ ສັງທອງ ໄຊຍະ ລາດ.....153
26. “ຈາກບົດບາດເຂີຍນ້ອຍ ທີ່ຢອກຫຼິ້ນ ກາຍມາເປັນເຂີຍແທ້ຂອງພໍ່ເຖົ້າ ກິນິມ ພິນເສນາ ທີ່ເຄົາລົບຮັກ”, ໂດຍ ສຈ ດາລັດ ບຸບຜາ, ກຳມະການ ສະພາມະຫາວິທະຍາໄລແຫ່ງຊາດ, ອາຈານຮັບເຊີນປະຈຳໂຄງການ ປະລິນຍາໂທມະຫາວິທະຍາໄລແຫ່ງຊາດ, ອະດີດກຳມະການປົກ ຄອງແຂວງ, ຫົວໜ້າພະແນກການເງິນແຂວງ ແຂວງຫຼວງພະບາງ, ອະດີດຫົວໜ້າກົມບັນຊີ ກະຊວງການເງິນ, ອະດີດຫົວໜ້າກົມກວດ ສອບໂຄງການ ອົງການກວດສອບແຫ່ງລັດ 158
27. “ພໍ່ກິນິມ ທີ່ແສນຮັກ ແລະ ເຄົາລົບບູຊາ” ໂດຍລູກໆຂອງພໍ່ກິນິມ ແລະ ແມ່ໄພບູນ ພິນເສນາ.....169
27.1ຊີວະປະຫວັດຫຍໍ້ຂອງແມ່ໄພບູນ ພິນເສນາ 209
27.2ບົດກ່າວຄຳໄວ້ອາໄລໃນງານຊາປະນາກິດສົບຂອງແມ່ ໄພບູນ ພິນ ເສນາ 213
27.3 ບົດກາບກອນ ” ບຸນຄຸນພໍ່ແມ່ ” ໂດຍ ບຸນເລີດ ດຳຣົງສັກ.....217
28. “ກອງປະຊຸມຄັ້ງທີ 34 ຂອງສະຫະປະຊາຊາດ ທີ່ກຸງວຽນ, ປະເທດ ອິດຕະລີ, ກ່າວຄຳໄວ້ອາໄລ ເຖິງທ່ານກິນິມ ພິນເສນາ”, ໂດຍທ່ານ ບາກແມສ (ລີເບເຣຍ).....222
29. “ຂໍອວຍພອນໃຫ້ແກ່ອ້າຍເອື້ອຍນ້ອງທັງຫຼາຍ ໃນຄອບຄົວ ພິນເສ ນາ”, ໂດຍ ພິນເອກ ຫວໍ ຫງວນ ຢາບ.....223
30. “ຈົດໝາຍທີ່ສົ່ງເຖິງທ່ານ ເຊັນຢີ ລັດຖະມົນຕີກະຊວງການຕ່າງປະ ເທດຈີນ”, ສະບັບລົງວັນທີ 25 ມິຖຸນາ1962 ໂດຍ ທ່ານ ກິນິມ ພິນ

ເສນາ, ລັດຖະມົນຕີວ່າການກະຊວງການຕ່າງປະເທດໃນ ລັດຖະບານ ປະສົມສາມຝ່າຍ.....225
31. "ຈົດໝາຍທີ່ສົ່ງເຖິງທ່ານ ເຊັນຢີ, ລັດຖະມົນຕີກະຊວງການຕ່າງປະ ເທດຈີນ", ສະບັບລົງວັນທີ10 ຕຸລາ 1962 ໂດຍ ທ່ານ ກີນິມ ພົນ ເສນາ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ໃນລັດຖະບານ ປະສົມສາມຝ່າຍ.....227
32. "ຄວາມຮັກແພງທີ່ສຸດຊຶ່ງ ທີ່ຂ້າມຜ່ານເຄິ່ງສັດຕະວັດ ບັນທຶກ ກ່ຽວກັບ ທ່ານສີຈິນຜິງ ໄດ້ພົບປະ ເພື່ອນຄົນລາວ", ໂດຍນັກຂ່າວ ຊິນຮວາ ອູ ຫຼີໝິງ ແລະ ລີສິງ 231
33. "ຖ້ວຍບິນ ທີ່ບໍ່ຄ່ອຍມີໃຜຮູ້ ແລະ ແຂກພິເສດ (VIP)" ລະນຶກວັນສ້າງ ຕັ້ງກອງທັບປະຊາຊົນ ຫວຽດນາມຄົບຮອບ 57 ປີໂດຍເຈີນກີ.....239
34. "ເຂັມເພັດ ພົນເສນາ, ລູກສາວກົກຂອງທ່ານກີນິມ ພົນເສນາ", ໂດຍ ນັກຂ່າວອະດີດ ສ.ປ.ເຢຍລະມັນ.....248
35. ບົດຂັດຈ້ອນຈາກບົດ "ບັນດາຜູ້ຄົນຂ້າມພູ" (ໂດຍທຽນງາ) ໃນປຶ້ມ ເສັ້ນທາງແຫ່ງມິດຕະພາບ ລາວ-ຫວຽດນາມ ຊຶ່ງເປັນປຶ້ມມູນເຊື້ອ ມິດຕະພາບ ແລະ ການຮ່ວມມືໃນຂະແໜງການຄົມມະນາ ຄົມຂົນສົ່ງ ຫວຽດນາມ-ລາວ 250
36. "ຄະນະຮັບຜິດຊອບເນື້ອໃນເອກະສານ".....251
37. "ຄອບຄົວ ທ່ານ ກີນິມ ພົນເສນາ" 333

ຄຳນຳ

ໂດຍທ່ານ ບຸນຍັງ ວໍຣະຈິດ, ກຳມະການກົມການເມືອງ, ຜູ້ປະຈຳການ ຄະນະເລຂາທິການສູນກາງພັກປະຊາຊົນ ປະຕິວັດລາວ, ຮອງປະທານປະເທດ ແຫ່ງ ສ.ປ.ປ.ລາວ

ເນື່ອງໃນໂອກາດ ທີ່ທ່ານ ກິນິມ ພົນເສນາ, ອະດີດລັດຖະມົນຕີ ກະ ຊວງການຕ່າງປະເທດຂອງລັດຖະບານປະສົມສາມຝ່າຍ, ໄດ້ຖືກຄາດຕະ ກຳ ຄົບຮອບ 50 ປີ, ຂ້າພະເຈົ້າມີຄວາມຍິນດີ ແລະ ຊາບຊຶ້ງເປັນຢ່າງຍິ່ງ ທີ່ເພື່ອນມິດ ແລະ ສະຫາຍຂອງເພິ່ນ ຕະຫຼອດເຖິງນ້ອງນຸ່ງ, ລູກຫຼານຂອງ ເພິ່ນໄດ້ພ້ອມກັນຂຽນບົດຄວາມຊົງຈຳ ກ່ຽວກັບ ຊີວິດແຫ່ງການຕໍ່ສູ້ບໍ່ຍອມ ຈຳນົນຂອງເພິ່ນ ເພື່ອເປັນການສັນລະເສີນ ແລະ ຈາລຶກເຖິງຄຸນງາມຄວາມ ດີຂອງຜູ້ທີ່ລ່ວງລັບໄປ ທີ່ມີຕໍ່ປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າ.

ທ່ານ ກິນິມ ພົນເສນາ ເປັນປັນຍາຊົນກ້າວໜ້າ ທີ່ມີນ້ຳໃຈຮັກຊາດ ອັນແຮງກ້າ ແລະ ມີຄວາມກ້າຫານຕໍ່ສູ້ ກັບຄວາມບໍ່ຍຸຕິທຳ ໃນສັງຄົມ ແລະ ສັດຕູຂອງຊາດໃນຫຼາຍຮູບແບບ. ຕົວຢ່າງ, ເວລາທ່ານປັນເຈົ້າແຂວງ ແຂວງຫົວພັນ ແຕ່ປີ 1949 ເຖິງປີ 1951, ທ່ານໄດ້ປະກາດລົບລ້າງລະ ບອບກວາງລ່ານ ແລະ ໄດ້ໃຊ້ຄວາມໄຫວພິກ ຊີ້ນຳປະຊາຊົນ ຫຼົບຫຼີກຈາກ ການເກນທະຫານ ແລະ ການເສຽສ່ວຍໃຫ້ພວກລ່າເມືອງຂຶ້ນຝະລັ່ງ ແລະ ລູກແຫ້ງຕີນມືຂອງພວກເຂົາ, ທັງມີການຕິດຕໍ່, ພົວພັນ ແລະ ປະສານງາ ງານກັບກຳລັງອິດສະຫຼະຢູ່ເຂດນັ້ນ; ໃນສະໄໝທ່ານເປັນຜູ້ແທນລາດຊະ ດອນ

ຢູ່ວຽງຈັນ, ດ້ວຍການສະໜັບສະໜູນຂອງແນວລາວຮັກຊາດ, ທ່ານ ໄດ້ຈັດຕັ້ງພັກສັນຕິພາບເປັນກາງຂຶ້ນ ຊຶ່ງເປັນພັນທະມິດທີ່ຊື່ສັດ ແລະ ຂະ ຫຍັນຂັນແຂງຂອງແນວລາວຮັກຊາດ ແລະ ໄດ້ຍຽງບ່າຍຽງໄລ່ກັບແນວລາວ ຮັກຊາດ ຕໍ່ສູ້ເພື່ອທວງໃຫ້ປະເທດລາວ ມີສັນຕິພາບ, ເປັນກາງ, ເອກະລາດ ແລະ ຄວາມຖືກຕ້ອງປອງດອງຊາດ. ໂດຍໃຊ້ຖາ ນະຖືກຕ້ອງຕາມກົດໝາຍ ຂອງຕົນໃນສະພາຜູ້ແທນລາດຊະດອນ, ທ່ານໄດ້ຕໍ່ສູ້ກັບພວກຝ່າຍຂວາຈັດ ໃນຖານະເປັນຫົວໜ້າພັກຝ່າຍຄ້ານ ເພື່ອທວງໃຫ້ປະຕິບັດສັນຍາ ລວມລາວ ຄັ້ງທີ່ໜຶ່ງໃນປີ 1957, ທັງໄດ້ໂຄສະນາຫາສຽງ ໃນບັ້ນເລືອກຕັ້ງຜູ້ແທນລາດ ຊະດອນເພີ່ມເຕີມໃນປີ 1958 ຈົນເຮັດໃຫ້ແນວລາວຮັກຊາດມີຜູ້ແທນໃນ ສະພາ 9 ທ່ານ ແລະ ພັກສັນຕິພາບເປັນກາງ ມີ ຜູ້ແທນ 4 ທ່ານ; ເວລາທ່ານ ປະທານ ສຸພານຸວົງ ແລະ ບັນດາທ່ານຜູ້ນຳແນວລາວຮັກຊາດ ຖືກສັດຕູຄຸມ ຂັງຢູ່ຄ້າຍໂພນເຄັງ, ທ່ານໄດ້ເປັນທະນາຍຄວາມສູ້ຄະດີ ທວງໃຫ້ຝ່າຍປະຕິ ການຂວາຈັດປ່ອຍຕົວພວກເພິ່ນ, ທັງໃຊ້ຊັບສິນເງິນຄຳຂອງຕົນເອງເພື່ອຈັດ ຊື້ອຸປະກອນການພິມໃຫ້ແນວລາວຮັກຊາດ ໂດຍໄດ້ຈັດຕັ້ງການພິມໜັງສື ພິມ ແລະ ໃບປົວໃຫ້ແນວລາວຮັກຊາດໃນບ້ານພັກຂອງເພິ່ນ ຢ່າງບໍ່ຫວາດ ຫວັ່ນຢ້ານກົວຕໍ່ການນາບຂູ່ໂຈມຕີຂອງຝ່າຍຂວາຈັດ; ໃນຂະບວນການລັດ ຖະປະຫານ 9/8/60 ຂອງກອງພັນທະຫານລາບອາກາດທີ 2, ທ່ານໄດ້ມີບົດ ບາດສຳຄັນໃນການລິເລີ່ມຜູກສາຍສຳພັນ ລະຫ່ວາງ ຄະນະລັດຖະປະຫານ ແລະ ການນຳຂອງແນວລາວຮັກຊາດ ຊຶ່ງໄດ້ກາຍເປັນພື້ນຖານແຫ່ງການ ສຳພັນສູ້ຮົບອັນໜັກແໜ້ນ ໂດຍປະຕິບັດຕາມຄຳຂ້ວນ “ເອົາສອງຕີໜຶ່ງ” ອັນ ສະແດງອອກ ເປັນຕົ້ນ ໃນບັ້ນລົບວຽງຈັນ 13/12/60, ທ່ານໄດ້ນຳພາຄະນະ

24/VII

ລັດຖະປະຫານ ສົມທົບກັບກຳລັງແນວລາວຮັກຊາດ ຜ່າວົງປິດລ້ອມຂອງ ສັດຕູອອກຈາກວຽງຈັນ ກ້າວໄປເຖິງການປົດປ່ອຍທົ່ງໄຫຫີນຢ່າງມີໄຊ; ໃນຖານະເປັນລັດຖະມົນຕີວ່າການກະຊວງການຕ່າງປະເທດຂອງລັດຖະ ບານປະສົມສາມຝ່າຍ ທີ່ຖືກສ້າງຕັ້ງຂຶ້ນ ໃນວັນທີ 23/6/1962, ທ່ານໄດ້ ມີນະໂຍບາຍສົ່ງເສີມການພົວພັນກັບບັນດາປະເທດຮັກຫອມສັນຕິພາບໃນ ໂລກ, ເປັນຕົ້ນແມ່ນບັນດາປະເທດສັງຄົມນິຍົມ ເຊັ່ນ ສ.ປ.ຈີນ, ສ.ປ.ຫວຽດ ນາມ ແລະ ອະດີດສະຫະພາບໂຊວຽດ; ທ່ານຖືກແຕ່ງຕັ້ງໃຫ້ເປັນຫົວໜ້າ ຄະນະຜູ້ແທນຝ່າຍລາວ ທີ່ປະກອບດ້ວຍຜູ້ຕາງໜ້າຂອງສາມຝ່າຍ ຄື: ຝ່າຍ ແນວ ລາວຮັກຊາດ, ຝ່າຍເປັນກາງ ແລະ ຝ່າຍຂວາ ເພື່ອລົງນາມໃນສັນຍາ ເຊີແນວປີ 1962 ກ່ຽວກັບລາວ ຮ່ວມກັບອີກ 13 ປະເທດໃນໂລກ ເພື່ອຮັບຮູ້ ຄວາມເປັນເອກະລາດ, ອະທິປະໄຕ, ນະໂຍບາຍສັນຕິພາບເປັນກາງ ແລະ ຄວາມຖືກຕ້ອງປອງດອງຊາດຂອງລາວ ໂດຍປາສະຈາກການແຊງແຂງຮຸກ ຮານຂອງຕ່າງປະເທດ.

ຍ້ອນທ່ານກິນິມ ພົນເສນາ ມີນ້ຳໃຈຮັກຊາດອັນສູງສົ່ງ, ບໍ່ຍອມຈຳ ນົນຕໍ່ການຊື້ຈ້າງຈອບອອຍ ແລະ ການນາບຂູ່ນາໆປະການໃດຂອງສັດຕູ, ດັ່ງນັ້ນ ທ່ານຈຶ່ງກາຍເປັນສັ່ງນໜາມຂອງພວກຈັກກະພັດ ແລະ ຝ່າຍປະຕິ ການຂວາຈັດວຽງຈັນ, ພວກເຂົາຈຶ່ງໄດ້ຄາດຕະກຳທ່ານ ຢ່າງໂຫດໜ້ຽມ ໃນ ວັນທີ 1/4/63 ໂດຍພັນລະຍາຂອງທ່ານກໍຖືກຍິງບາດເຈັບສາຫັດ ແລະ ລູກ ຂອງເພີ່ນ 12 ຄົນ ກໍກາຍເປັນ ກຳພ້າພໍ່ທີ່ແສນຮັກ.

ເພື່ອເປັນການສະແດງເຖິງຄວາມຮູ້ບຸນຄຸນ ແລະ ຈາລຶກຄຸນງາມ ຄວາມດີຂອງທ່ານ ທີ່ມີຕໍ່ປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າ, ໃນ

ປີ 1983 ພັກ ແລະ ລັດຖະບານໄດ້ປະດັບຫຼຽນໄຊອິດສະຫຼະຊັ້ນສອງໃຫ້ທ່ານ.

ເຖິງແມ່ນວ່າທ່ານ ກິນິມ ພິນເສນາ ໄດ້ຈາກພວກເຮົາໄປ 50 ປີ ແລ້ວກໍຕາມ, ແຕ່ປະເທດຊາດ ແລະ ປະຊາຊົນລາວ ທຸກຖ້ວນໜ້າຍັງຄົງຈົດຈຳຄຸນງາມຄວາມດີຂອງທ່ານ, ນ້ຳໃຈເສຽສະຫຼະອັນສູງສົ່ງຂອງທ່ານ ທີ່ມີຕໍ່ພາລະກິດຂອງຊາດ ຈະຖືກຈາລຶກໄວ້ໃນປຶ້ມຄຳປະຫວັດສາດຂອງຊາດລາວວິລະຊົນຕະຫຼອດກາລະນານ.

ວຽງຈັນ, ວັນທີ 24 ມີນາ 2013

ບຸນຍັງ ວໍຣະຈິດ

ກຳມະການກົມການເມືອງ,

ຜູ້ປະຈຳການຄະນະເລຂາທິການສູນກາງພັກປະຊາຊົນປະຕິວັດລາວ,

ຮອງປະທານປະເທດແຫ່ງ ສ.ປ.ປ.ລາວ

ປະຫວັດຫຍໍ້ຂອງ ພໍ່ ກິນິມ ພົນເສນາ

- 14/07/1911 ເກີດທີ່ ເມືອງ ປາກເຊ ແຂວງ ຈຳປາສັກ
- ຮ່ຳຮຽນ ຢູ່ທີ່ ໂຮງຮຽນ ປະຖົມ ຢູ່ ປາກເຊ
- ຮ່ຳຮຽນ ຢູ່ທີ່ ໂຮງຮຽນ ມັດທະຍົມ ລີເຊ ປາວີ
- 14/7/1940 ແຕ່ງງານກັບ ແມ່ ໄພບູນ ພົນເສນາ
- ເຮັດວຽກເປັນນາຍພາສາຢູ່ ທີ່ເມືອງ ປາກເຊ
- ຮັບຕຳແໜ່ງເປັນ ເຈົ້າເມືອງ ເມືອງ ປາກຊ່ອງ
- ຮັບຕຳແໜ່ງເປັນ ຮອງເຈົ້າແຂວງ ແຂວງ ຈຳປາສັກ
- ຮັບຕຳແໜ່ງເປັນ ເຈົ້າແຂວງ ແຂວງ ຫົວພັນ
- ຮັບຕຳແໜ່ງເປັນ ເຈົ້າແຂວງ ແຂວງ ອັດຕະປື
- ເປັນຜູ້ແທນລາດຊະດອນ ແຂວງ ຫົວພັນ ແລະ ແຂວງ ອັດຕະປື
- ສ້າງຕັ້ງພັກສັນຕິພາບເປັນກາງ ໂດຍ ດຳລົງຕຳແໜ່ງເປັນ ປະທານ, ທົ່ງເປັນ ຫົວໜ້າ ພັກຝ່າຍຄ້ານໃນ ສະພາ ລາດຊະດອນ
- ດຳລົງຕຳແໜ່ງເປັນ ລັດຖະມົນຕີວ່າການ ກະຊວງຖະແຫຼງຂ່າວ ແລະ ໂຄສະນາການ
- ເປັນທະນາຍຄວາມໃຫ້ ທ່ານ ປະທານ ສຸພານຸວົງ ແລະ ບັນດາທ່ານ ຜູ້ນຳ ແນວລາວຮັກຊາດ ທີ່ຖືກຄຸມຂັງ ໃນຄຸກໂພນເຄັງ
- ເດືອນ 5 ປີ 1960 ດຳລົງຕຳແໜ່ງເປັນ ລັດຖະມົນຕີວ່າການ ກະຊວງ ການຕ່າງປະເທດ ຂອງ ລັດຖະບານ ເປັນກາງໂດຍສະເດັດ ເຈົ້າ ສຸວັນ ນະພູມາ ເປັນນາຍົກ. ໃນໄລຍະທ່ານ ນາຍົກ ສຸວັນນະພູມາ ໄປລີ້ໄພຢູ່ ພະນົມເປັນ, ດຳລົງຕຳແໜ່ງເປັນຜູ້ຮັກສາການນາຍົກລັດຖະມົນຕີ
- 13/12/1960 ນຳພາກຳລັງລັດຖະປະຫານຮ່ວມສຳພັນ ສູ້ລົບຮ່ວມກັບ

ກຳລັງແນວລາວຮັກຊາດ ຜ່າວົງປິດລ້ອມຂອງພວກສັດຕູທີ່ມາບຸກຕີ ວຽງຈັນ ແລ້ວມາຢູ່ນຳກອງທະຫານຢູ່ ວັງວຽງ.

- ເດືອນ 1 ປີ 1961 ພາຍຫຼັງທີ່ກຳລັງແນວລາວຮັກຊາດ ແລະ ກຳລັງ ເປັນກາງໄດ້ປົດປ່ອຍທົ່ງໄຫຫີນ, ໄດ້ເປັນຕົວຕັ້ງຕົວຕີໃນການຕັ້ງສຳ ນັກ ງານຂອງ ລັດຖະບານເປັນກາງທີ່ຄັ້ງໄຂ, ໂດຍເຈົ້າສຸວັນນະພູມາ ເປັນນາຍົກ, ພໍ່ ກີນິມ ເປັນ ລັດຖະມົນຕີວ່າການ ກະຊວງການຕ່າງປະ ເທດ
- 23/6/1962 ດຳລົງຕຳແໜ່ງເປັນ ລັດຖະມົນຕີວ່າການກະຊວງການ ຕ່າງປະເທດ ຂອງ ລັດຖະບານ ປະສົມສາມຝ່າຍ
- 13/07/1962 ເປັນຫົວໜ້າ ຄະນະ ຜູ້ແທນ ຂອງ ລັດຖະບານ ປະ ສົມສາມຝ່າຍ ເຂົ້າຮ່ວມກອງປະຊຸມ ເຊີແນວ ກ່ຽວກັບ ລາວ ແລະ ໄດ້ ຕາງໜ້າໃຫ້ ລັດຖະບານລາວ ຮ່ວມລົງນາມໃນ ສັນຍາ ເຊີແນວ ກ່ຽວ ກັບ ລາວ ກັບ 13 ປະເທດໃນໂລກ
- 01/04/1963 ຖືກຄາດຕະກຳຢ່າງໂຫດຫ້ຽມ ໂດຍ ການບົ່ງການຂອງ ຝ່າຍ ຂວາຈັດ ວຽງຈັນ ທີ່ມີອິດທິກຳລັງຈັກກະພັກ ເປັນຜູ້ໜູນຫຼັງ.

“ຄວາມຊົງຈຳ ກ່ຽວກັບ ທ່ານ ກິນິມ ພົນເສນາ”

ທ່ານ ພົນເອກ ຄຳໄຕ ສີພັນດອນ,
ອະດີດ ປະທານສູນກາງພັກປະຊາຊົນ
ປະຕິວັດລາວ, ອະດີດປະທານປະເທດ ແລະ
ອະດີດນາຍົກລັດຖະມົນຕີ ແຫ່ງສ.ປ.ປ.ລາວ

ຂ້າພະເຈົ້າ ຮູ້ຈັກກັບທ່ານ ກິນິມ ພົນເສນາ ແຕ່ເວລາຮຽນໜັງສືນຳ ກັນ ຢູ່ໂຮງຮຽນມັດທະຍົມອຽງຈັນ ແລະ ຕໍ່ມາຢູ່ລີເຊປາວີອຽງຈັນ, ຍ້ອນວ່າ ພໍ່ຂອງທ່ານກິນິມເປັນໝູ່ ແລະ ຮູ້ຈັກກັນດີ ກັບພໍ່ເຖົ້າມະຫາແກ້ວ. ເວລາໃດ ພໍ່ເຖົ້າມະຫາແກ້ວມາປາກເຊ, ເພິ່ນກໍມັກມາສຶກສາພາສາລາວ ນຳພໍ່ເຖົ້າມະ ຫາແກ້ວ. ຂ້າພະເຈົ້າໄປຮຽນຢູ່ອຽງຈັນກ່ອນທ່ານກິນິມສອງສາມປີ. ເວລາ ນັ້ນ ຂ້າພະເຈົ້າ 8 ປີ, ເພິ່ນກໍເປັນບ່າວແລ້ວ. ພາຍຫຼັງຮຽນຈົບໂຮງຮຽນປະ ຖົມຢູ່ປາກເຊແລ້ວ, ທ່ານກິນິມຈຶ່ງໄປຮຽນຕໍ່ຢູ່ອຽງຈັນ ໂດຍພໍ່ຂອງເພິ່ນໄດ້ ຝາກໃຫ້ໄປຮຽນຢູ່ນຳ ພໍ່ເຖົ້າມະຫາແກ້ວ ທີ່ຖື ທ່ານ ກິນິມ ຄືລູກຫຼານຂອງ ຕົນ. ຍ້ອນວ່າເວລານັ້ນ ຢູ່ ແຂວງຈຳປາສັກ ມີໂຮງຮຽນຢູ່ແຕ່ຈຳປາສັກ, ເມືອງໂຂງ ແລະ ປາກເຊ. ຜູ້ຮູ້ໜັງສື ແມ່ນ ໄປຮຽນຢູ່ວັດນຳຄູບາ, ຢາກຮຽນ ສູງຕ້ອງໄປຮຽນຢູ່ອຽງຈັນ ເພາະມີແຕ່ຢູ່ອຽງຈັນແຫ່ງດຽວ ຈຶ່ງມີໂຮງຮຽນ ລະດັບມັດ ທະຍົມສົມບູນ.

ໃນເວລານັ້ນ ລູກຫຼານທີ່ພໍ່ເຖົ້າມະຫາແກ້ວເອົາມາຢູ່ອຽງຈັນ ມີ 7-8 ຄົນ ຊຶ່ງພັກເຊົ່າຢູ່ໃນເຮືອນຂອງເພິ່ນ ທີ່ຄຸ້ມຫາຍໂສກ. ພວກຂ້າພະເຈົ້າມີ ຄວາມຕັ້ງໃຈຈະເອົາເຮືອນດັ່ງກ່າວເປັນອານຸສອນສະຖານມະຫາແກ້ວ. ທ່ານ ກິນິມ ເປັນຮຸ້ນອ້າຍ, ເພິ່ນ ແລະ ເຈົ້າບຸນອູ້ມ ແລະ ຮຸ້ນອ້າຍຈຳນວນ ໜຶ່ງຢູ່ຊັ້ນສອງ, ພວກຂ້າພະເຈົ້າທີ່ເປັນຮຸ້ນນ້ອງຢູ່ຊັ້ນລຸ່ມ, ໃນນັ້ນກໍມີສີໂລ

ໂລດ ແລະ ສີໂລເມ. ເວລານັ້ນ, ພວກຂ້າພະ ເຈົ້າ ນອນຕຽງໄມ້ແປ້ນໜາໆ ທີ່ເຢັນ, ຜູ້ຢາກປູສາດກໍໄດ້. ພວກຂ້າພະເຈົ້າໄດ້ຮ່ວມຊີວິດນຳກັນ 2 ປີ, ຕໍ່ ມາກ່ອນ ທ່ານ ກີນີມ ຈະຈົບໂຮງຮຽນປະຖົມສົມບູນ 1 ປີ ພໍ່ເຖົ້າມະຫາ ແກ້ວ ກໍເສຍຊີວິດ, ເພິ່ນເຄີຍ ໄປຢູ່ນຳເຈົ້າສຸວັນນະພູມາ ທີ່ມີພັນລະຍາເປັນ ຄົນຝະລັ່ງ, ທັງເປັນອາຈານສອນຂອງທ່ານກີນີມ. ພວກເພິ່ນອີຕົນ ຈຶ່ງເອົາ ໄປຢູ່ນຳ. ຫຼັງຈາກຮຽນຈົບແລ້ວ, ທ່ານກີນີມ ກໍໄດ້ໄປເຮັດວຽກຢູ່ປາກເຊ. ສ່ວນຂ້າພະເຈົ້າ ບໍ່ໄດ້ຮຽນຈົບ ຍ້ອນວ່າແມ່ຂ້າພະເຈົ້າ ແລະ ພໍ່ເຖົ້າມະຫາ ແກ້ວ ກໍເສຍຊີວິດ, ຂ້າພະເຈົ້າໄປເຮັດວຽກຢູ່ປາກເຊແລ້ວ ຈຶ່ງໄປຮຽນຕໍ່ຢູ່ ໄຊ່ອນວິຊາໄປສະນີເປັນເວລາ 2ປີ.

ໃນເວລາຢູ່ນຳກັນ, ພວກຂ້າພະເຈົ້າຖືກັນຄືອ້າຍນ້ອງຄົງ, ຮັກແພງ ກັນ. ເຖິງຈະບໍ່ແມ່ນພີ່ນ້ອງກັນ ໂດຍສາຍເລືອດ ແຕ່ຍ້ອນຄວາມຮັກແພງ ຊ່ວຍເຫຼືອກັນ ເລື່ອງຮ່ຳເລື່ອງຮຽນ, ແກ່ວນເຄີຍກັນ, ໄປໃສກໍບໍ່ປະຖິ້ມກັນ.

ທ່ານກີນີມ ເປັນຄົນທີ່ຮຽນເກັ່ງ, ບໍ່ຕົກຫ້ອງຈັກເທື່ອ ແລະ ເປັນທີ່ ໜຶ່ງຕະຫຼອດ. ລູກເຕົ້າເພິ່ນກໍສົບທອດເພິ່ນ, ຮຽນເກັ່ງຄືພໍ່. ການດຳລົງຊີ ວິດປະຈຳວັນ ໃນເວລານັ້ນ ຄືດັ່ງນີ້: ພວກຂ້າພະເຈົ້າຕື່ນແຕ່ 4 ໂມງເຊົ້າ ເພື່ອເບິ່ງບົດຮຽນ. ເມື່ອຮອດ 5 ໂມງປາຍກໍໄປຕຳເຂົ້າ ເພາະແຕ່ກ່ ກໍບໍ່ມີ ໂຮງສີເຂົ້າ, ເພິ່ນເຮັດນາມີເລົ້າເຂົ້າຢູ່ເຮືອນ. ຕໍ່ມາກໍໄປຕັກນ້ຳຢູ່ນ້ຳສ້າງໃນ ວັດຫາຍໂສກ. ສະໄໝນັ້ນ ຢູ່ວຽງຈັນບໍ່ທັນມີນ້ຳກອ໋ກ, ນ້ຳປະປາ ຫຼື ນ້ຳບາ ດານ, ມີແຕ່ອາໄສໃຊ້ນ້ຳສ້າງໃນວັດ. ຖ້າໄປຕັກນ້ຳຍາມແລງ ຢາກຍາກແດ່ ເພາະນ້ຳບິກລົງຫຼາຍ. ຂ້າພະເຈົ້າ ອາບນ້ຳຢູ່ວັດ ແລ້ວຈຶ່ງຫາບນ້ຳມາ, ກິນ ເຂົ້າເຊົ້າແລ້ວ ຈຶ່ງໄປໂຮງຮຽນ. ໝົດເຮືອນ ມີແຕ່ລົດຖີບຄັນດຽວ ແມ່ນຂອງ ພໍ່ເຖົ້າມະຫາແກ້ວ, ພວກຂ້າພະເຈົ້າຕ້ອງໄດ້ຍ່າງໄປໂຮງຮຽນ. ມື້ໃດທີ່ບໍ່ໄດ້ ກິນເຂົ້າຢູ່ເຮືອນ ກໍຊື້ເຂົ້າເຊົ້າຢູ່ຕະຫຼາດນ້ຳພຸ ຊຶ່ງເປັນຕະຫຼາດຢູ່ກາງເມືອງ ແຫ່ງດຽວຢູ່ວຽງຈັນ. ພວກຂ້າພະເຈົ້າກໍມັກຊື້ຂອງກິນທີ່ຄົນຫວຽດນາມເອົາ

ມາຂາຍ, ເຂົ້າໜຶ້ງໃສ່ໝາກຖົ່ວດິນ ຫຼື ຖົ່ວຂຽວ, ຢໍ ແລະ ແຈ່ວນ້ຳປາ. ຊື້ເຄິ່ງ ອັດ ກໍໄດ້ເຂົ້າປັ້ນບັກໃຫ່ຍໆ. 100 ອັດເປັນໜຶ່ງໜຶ່ງ. ເງິນກໍແມ່ນພໍ່ເຖົ້າມະ ຫາແກ້ວ ດິນໆຢາຍໃຫ້ລູກຫຼານທີ່ຢູ່ນຳເພິ່ນ ຍາມບຸນຍາມສິນ. ເວລານັ້ນ, ພວກຂ້າພະເຈົ້າຕ້ອງໄດ້ຊື້ປີ້ມສໍ້ດ້ວຍຕົນເອງ. ໄລຍະທີ່ຂ້າພະເຈົ້າໄປຢູ່ ໂຮງຮຽນກົມນອນ, ພໍ່ເຖົ້າມະຫາແກ້ວ ກໍເອົາເງິນຄ່າເຊົ່າຕຶກໜ້າ ເຮືອນ 2 ຫ້ອງ, ເດືອນໜຶ່ງຈຳນວນ 3 ໜຶ່ນ ຈ່າຍຄ່າເຄື່ອງນຸ່ງນອນ, ມຸ້ງມ່ານ ໃຫ້ຂ້າ ພະເຈົ້າ.

ຂ້າພະເຈົ້າມາພົບທ່ານກົມິນ ຄັ້ງໃຫມ່ ຄືສະໄໝລາວລອມລາວ ຄັ້ງ ທີໜຶ່ງ ໃນປີ 1958. ຂ້າພະເຈົ້າ ມັກໄປກິນເຂົ້າຢູ່ເຮືອນຂອງເພິ່ນທີ່ຖະໜົນ ສາມແສນໄທ. ທ່ານໄກສອນ, ທ່ານສຸພານຸວົງ, ທ່ານໜູຮັກ ພູມສະຫວັນ ກໍ ມັກມາເຊັ່ນດຽວກັນ. ສ່ວນຫຼາຍກິນຢູ່ເທິງເຮືອນ ແລ້ວລົມວຽກນຳກັນ. ເວ ລານັ້ນ, ເຮືອນຂອງເພິ່ນຂາຍປຶ້ມ ແລະ ປຶ້ນລ່າເນື້ອ, ດັ່ງນັ້ນກ່ອນຂ້າພະ ເຈົ້າຈະອອກໄປເຂດທີ່ໝັ້ນຍັງເຄີຍໄປຂໍຊື້ປຶ້ນລ່າເນື້ອນຳທ່ານກົມິນ ໂດຍຂໍ ລູກປຶ້ນຫຼາຍໆ ເພາະຂ້າພະເຈົ້າມີແຕ່ປຶ້ນສັ້ນ. ການຖືປຶ້ນລ່າເນື້ອແມ່ນຖືກ ກົດໝາຍ. ເພິ່ນບໍ່ໄດ້ຂາຍປຶ້ນໃຫ້ຂ້າພະເຈົ້າແຕ່ໃຫ້ຊື່ໆ.

ທ່ານກົມິນ ເປັນຜູ້ທີ່ກ້າວໜ້າ, ມີຄວາມຕື່ນຕົວປະຕິວັດ ແລະ ໄດ້ ຮ່ວມເຮັດວຽກນຳແນວລາວອິດສະຫຼະ ແລະ ແນວລາວຮັກຊາດໃນຕໍ່ມາ. ແນວລາວຮັກຊາດ ໄດ້ສະໜັບສະໜູນໃຫ້ເພິ່ນອອກສະໝັກຜູ້ ແທນລາດຊະ ດອນໃນສະພາ ເພື່ອຕໍ່ສູ້ຢ່າງຖືກຕ້ອງຕາມກົດໝາຍ ກັບພວກປະຕິການ ຂວາຈັດ, ທັ້ງສະໜັບສະໜູນໃຫ້ເພິ່ນສ້າງຕັ້ງພັກສັນຕິພາບເປັນກາງ ເພື່ອ ຮ່ວມມືກັບກຳລັງປະຕິວັດ. ເພິ່ນເປັນຫຼັກແຫຼ່ງໃນກຳລັງສັນຕິພາບເປັນ ກາງ, ນອກນັ້ນ ຍັງມີທ່ານມະຫາກຸ ສຸວັນນະເມທີ ແລະ ຜູ້ອື່ນໆອີກ. ການ ສ້າງຕັ້ງ ພັກສັນຕິພາບເປັນກາງ ແມ່ນເພື່ອເຕົ້າໂຮມກຳລັງ ແລະ ຂົນຂວາຍ ດຶງດູດທຸກຊັ້ນຄົນໃນສັງຄົມ, ເພາະໃນເວລານັ້ນ, ບາງຄົນກໍ່ບໍ່ທັນເຂົ້າໃຈ

ແລະ ບໍ່ທັນມັກແນວລາວຮັກຊາດ. ແຕ່ຄວາມເປັນຈິງແລ້ວ ທ່ານ ກິນິມ ເຮັດວຽກຢູ່ວຽງຈັນ ເພື່ອປະຕິບັດໜ້າທີ່ຕາມການມອບໝາຍຂອງຄະນະ ປະຕິວັດ, ໃຜກໍປະຕິບັດ ຕາມແນວທາງ, ນະໂຍບາຍຂອງພັກອັນດຽວ.

ທ່ານກິນິມ ມີຄວາມເຫຼື້ອມໃສຕໍ່ແນວລາວຮັກຊາດ, ເພີ່ນເຄີຍສະ ເໜີອອກ "ປ່າ" ໄປຫາກຳລັງອິດສະຫຼະ ແລະ ແນວລາວຮັກຊາດ ແຕ່ພວກ ເຮົາບອກເພີ່ນວ່າ ຜູ້ທີ່ມີຖານະຖືກກົດໝາຍໃຫ້ສືບຕໍ່ ຕໍ່ສູ້ກັບສັດຕູຢູ່ວຽງ ຈັນ, ເຊັ່ນທ່ານ ປະທານສຸພານຸວົງ ແລະ ຜູ້ນຳອື່ນໆ ທີ່ມີຖານະຖືກກົດ ໝາຍ. ມີແຕ່ທ່ານ ປະທານໄກສອນ ພົມວິຫານ ແລະ ຂ້າພະເຈົ້າອອກ"ປ່າ", ເພາະໄລຍະຢູ່ວຽງຈັນ, ຂ້າພະເຈົ້າເຮັດວຽກປິດລັບຢູ່ເຮືອນໃນຄຸ້ມວັດຈັນ. ທ່ານກິນິມ ຍັງມັກສັ່ງໃຫ້ລູກສາວເພີ່ນ ຄືນໆເຂັ້ມເພັດ ພົນເສນາ ໄປສົ່ງ ຈົດໝາຍ ແລະ ເງິນຄຳ, ວັດຖຸສິ່ງຂອງໃຫ້ພວກຂ້າພະເຈົ້າເລື້ອຍໆ. ວຽກ ຂອງຂ້າພະເຈົ້າມີຫຼາຍ ແຕ່ບໍ່ໄດ້ອອກໜ້າອອກຕາແບບເປີດເຜີຍ. ສ່ວນ ຫຼາຍແມ່ນແນະນຳທ່ານສາລີ ວົງຄຳຊາວດ້ານວຽກງານທີ່ພົວພັນກັບຄະນະ ລັດຖະປະຫານ. ພວກຂ້າພະເຈົ້າຢູ່ "ປ່າ" ແມ່ນສ້າງ ກຳລັງປະຕິວັດຢູ່ໃນ ແຕ່ລະທ້ອງຖິ່ນ, ສ່ວນກຳລັງເຂົ້າລວມລາວມີໜ້ອຍໜຶ່ງ. ເວລານັ້ນທ້ອງ ການສຳນັກງານຂອງແນວລາວຮັກຊາດ ຢູ່ເຂດສີຫອມ, ໂຮງພິມຂອງພວກ ເຮົາ ຢູ່ໃກ້ກັບກະຊວງປ້ອງກັນຄວາມສະຫງົບ ໃນປັດຈຸບັນ, ແຕ່ເພື່ອບັງ ໜ້າ, ທ້ອງໜຶ່ງແມ່ນບ່ອນຂາຍເຂົ້າ, ທ້ອງໜຶ່ງແມ່ນໂຮງພິມ. ໃນເຮືອນ ຂອງທ່ານ ກິນິມ ກໍມີເຄື່ອງພິມ ທີ່ເພີ່ນຊື້ ດ້ວຍຕົນເອງ ເພື່ອຈັດພິມໃບປິວ ແລະ ເອກະສານຕ່າງໆຂອງແນວລາວຮັກຊາດ ໂດຍມີເຈົ້າໜ້າທີ່ສະເພາະ ຂອງພວກເຮົາໄປປະຈຳນຳຄອບຄົວ ແລະ ຮັບຜິດຊອບວຽກງານການພິມ ທີ່ເຮືອນພັກ ຂອງທ່ານ ກິນິມ.

ເວລາທີ່ປະທານສຸພານຸວົງ ແລະ ຜູ້ນຳອື່ນໆຂອງແນວລາວຮັກຊາດ ຖືກພວກປະຕິການຂວາຈັດ ຈັບກຸມຄຸມຄັງ, ທ່ານ ກິນິມເປັນຕົວຕັ້ງ ຕົວຕີ

ໃນການຕໍ່ສູ້ໃຫ້ປ່ອຍຕົວປະທານສຸພານຸວົງ ແລະ ຄະນະຂອງເພິ່ນ, ທັງຂົນ ຂວາຍທຸກຊັ້ນຄົນຢູ່ພາຍໃນປະເທດ, ທັງດຶງດູດໃຫ້ອົງການສາກົນມາຊ່ວຍ ອີກ. ຄະນະຜູ້ແທນຂອງແນວລາວຮັກຊາດໄປຕ່າງປະເທດ ກໍໄດ້ສົມທົບ ກັບຄະນະຂອງພັກສັນຕິພາບເປັນກາງຕໍ່ສູ້ທວງໃຫ້ປ່ອຍຕົວພວກເພິ່ນ ອອກ ໂດຍອີກເບື້ອງໜຶ່ງ ກໍກະກຽມໃຫ້ພວກເພິ່ນແຫກຄຸກໂດຍໃຫ້ສະຫາຍ ຊຽງສົມ ກຸນລະວົງ ໄປນອນຢູ່ຄຸກເພື່ອພາພວກເພິ່ນອອກຄຸກ. ເບື້ອງຕົ້ນ ຈະເອົາອອກທາງພູເຂົາຄວາຍ ແຕ່ພິຈາລະນາເບິ່ງແລ້ວເຫັນວ່າທາງຍາກ, ພວກເພິ່ນມີອາຍຸແດ່ ຈຶ່ງຕົກລົງເອົາອອກໄປທາງລ່ອງຕອນຈຶ່ງງ່າຍກ່ວາ.

ພາຍຫຼັງກຳລັງຮັກຊາດ ແລະ ຄະນະລັດຖະບານໄດ້ປົດປ່ອຍທົ່ງ ໄຫຫີນຢ່າງມີໄຊ, ກໍໄດ້ມີການຈັດຕັ້ງລັດຖະບານເປັນກາງຄັ້ງໃຊ ໂດຍໄດ້ ເອົາຍົນໄປຮັບເອົາເຈົ້າສຸວັນນະພູມາ ທີ່ໄປລີ້ໄພຢູ່ພະນົມເປັນກັບມາ ເປັນນາຍົກ, ທ່ານກີນີມ ພົນເສນາເປັນລັດຖະມົນຕີກະ ຊວງການຕ່າງປະ ເທດ.

ເວລາທ່ານກີນີມ ປະຈຳຢູ່ຄັ້ງໃຊ, ຂ້າພະເຈົ້າ ກໍໄດ້ພົບປະ ແລະ ປຶກສາວຽກນຳເພິ່ນເກືອບທຸກມື້. ຄົນທົ່ວໄປບໍ່ຮູ້ວ່າສອງຄົນພວກ ເຮົາເຄີຍຮັກແພງ ຢູ່ກິນເຂົ້ານຳກັນ, ແຕ່ໃນຄວາມເປັນຈິງສອງຄົນພວກຂ້າ ພະເຈົ້າເຄີຍຮ່ວມຊີວິດນຳກັນ ແຕ່ເວລາເປັນນັກຮຽນ ແລະ ຍັງສືບຕໍ່ຮ່ວມຊີ ວິດນຳກັນໃນໄລຍະຕໍ່ສູ້ເຮັດການປະຕິວັດ.

ທ່ານກີນີມ ພົນເສນາເປັນຫົວໜ້າຄະນະຜູ້ແທນຂອງ ລັດຖະບານ ປະສົມ 3 ຝ່າຍໄປຮ່ວມເຈລະຈາ ຢູ່ກອງປະຊຸມເຊີແນວກ່ຽວກັບລາວ ໃນປີ 1962, ໂດຍເພິ່ນຕາງໜ້າຝ່າຍເປັນກາງ, ສ່ວນທ່ານພູມີ ວົງວິຈິດ ຕາງໜ້າ ຝ່າຍແນວລາວຮັກຊາດ ແລະ ພູມີ ໜໍ່ສະອັນ ຕາງໜ້າຝ່າຍຂວາ, ໂດຍ 14 ປະເທດ ຄູ່ສັນຍາໄດ້ຮັບຮອງເອົາເອກະລາດ, ອະທິປະໄຕ ແລະ ຜືນແຜ່ນ ດິນອັນຄົບຖ້ວນຂອງປະເທດລາວ.

ທັງໝົດຂ້າງເທິງນີ້ ຄືຄວາມຊົງຈຳຂອງຂ້າພະເຈົ້າ ກ່ຽວກັບ ທ່ານກິນິມ ພົນເສນາ ຊຶ່ງຂ້າພະເຈົ້າ ເອີ້ນເພີ່ນ ເປັນ “ອ້າຍກິນິມ”.

ທ່ານ ປະທານ ຄຳໄຕ ສີພັນດອນ ຖ່າຍຮູບຮ່ວມກັບລູກຫລານ ຂອງ ພໍ່ ກິນິມ ພົນເສນາ (3/2013)

ຫ້າມຈຳໜ່າຍ

“ທ່ານ ກຶນິມ ພົນເສນາ ເປັນຄັນທຸງແຫ່ງຂະບວນຮັກຫອມສັນຕິພາບ”

ໂດຍພົນໂທ ສະໝານ ວິຍາເກດ, ອະດີດ
ກຳມະການກົມການເມືອງສູນກາງພັກປະຊາຊົນ
ປະຕິວັດລາວ, ອະດີດປະທານສະພາແຫ່ງຊາດ

ຂ້າພະເຈົ້າເປັນຜູ້ເຄື່ອນໄຫວການປະຕິວັດຢູ່ເຂດໃຕ້ ແຕ່ປີ 1948-1954, ແຕ່ຂ້າພະເຈົ້າກໍກຳໄດ້ໝົດ ກ່ຽວກັບຂະບວນການຂອງກຳລັງເປັນກາງ, ໂດຍພື້ນເດັ່ນ ແມ່ນການເຄື່ອນໄຫວຕໍ່ສູ້ປະຕິວັດຂອງ ທ່ານກຶນິມ ພົນເສນາ. ຂ້າພະເຈົ້າເອງ ກໍຮູ້ສຶກເປັນກຽດຢ່າງສູງ ທີ່ມາເລົ່າປະຫວັດຂອງບຸກຄົນທີ່ດີເດັ່ນຜູ້ ໜຶ່ງທີ່ມີຜົນງານຕໍ່ປະເທດຊາດ ຄືດັ່ງທ່ານກຶນິມ ພົນເສນາ.

ການເຄື່ອນໄຫວຕໍ່ສູ້ປະຕິວັດຂອງທ່ານກຶນິມ ພົນເສນາ ຕິດພັນກັບຂະບວນການລວມລາວຄັ້ງທີ 1 ແລະ ຄັ້ງທີ 2 ຂອງແນວລາວຮັກຊາດ. ນອກນັ້ນ ກໍຍັງໄດ້ຮັບຜົນສະທ້ອນຈາກຂະບວນການຮັກຫອມສັນຕິພາບໃນໂລກ ທີ່ຫາກໍຫຼຸດພົ້ນອອກຈາກການທຳລາຍລ້າງຜານຂອງສົງຄາມໂລກຄັ້ງທີສອງ.

ເວລາເຂົ້າລວມລາວ, ແນວລາວຮັກຊາດ ໄດ້ວາງແນວທາງສັນຕິພາບ, ເອກະລາດ, ເອກະພາບ ແລະ ວັດທະນະຖາວອນ, ທັງໄດ້ສ້າງຂະບວນການປຸກລະດົມຂົນຂວາຍທຸກຊັ້ນຄົນໃນສັງຄົມ ໂດຍບໍ່ເລືອກຊັ້ນວັນນະທີ່ມີນ້ຳໃຈຮັກຊາດ ແລະ ຮັກສັນຕິພາບ. ເພື່ອໂດດດ່ຽວພວກປະຕິການຂວາຈັດ, ແນວລາວຮັກຊາດ ໄດ້ເຕົ້າໂຮມທຸກກຳລັງທີ່ຝັກໃຝ່ສັນຕິພາບໃນຕົວເມືອງ, ລວມທັງພັກສັນຕິພາບເປັນກາງ ທີ່ເປັນພັນທະມິດທີ່ຊື່ສັດ ແລະ ຍາວນານຂອງແນວລາວຮັກຊາດ. ໃນສະພາບແວດລ້ອມ ທີ່ຈິດໃຈສັນຕິ

ພາບ ໄດ້ເຊື່ອມຊຶມເຂົ້າໃນໝູ່ປະຊາຊົນລາວຢ່າງກ້ວາງຂວາງ, ທ່ານ ກຶນີມ ພົນເສນາ ໄດ້ສ້າງຕັ້ງພັກສັນຕິພາບເປັນກາງຂຶ້ນ ໂດຍທ່ານເປັນປະທານ ເພື່ອເຕົ້າໂຮມທຸກຊັ້ນຄົນໃນສັງຄົມ, ໂດຍສະເພາະຜູ້ຊົງຄຸນອຸດທິ, ນັກຮຽນ ຮູ້, ປັນຍາຊົນໃນຕົວເມືອງໃຫ່ຍ ເພື່ອຕໍ່ສູ້ກັບການແຊກແຊງຂອງພວກຈັກ ກະພັດຕ່າງດ້າວ ພາຍໃຕ້ຄົນທຸງສັນຕິພາບ, ເປັນກາງ, ເອກະລາດ ແລະ ຄວາມຖືກຕ້ອງປອງດອງຊາດ.

ຍ້ອນວ່າໃນເວລານັ້ນ ຍັງມີຫຼາຍຄົນບໍ່ເຂົ້າໃຈຕໍ່ແນວທາງນະໂຍ ບາຍຂອງແນວລາວຮັກຊາດ, ດັ່ງນັ້ນ ທ່ານກຶນີມ ພົນເສນາ ຈຶ່ງມີບົດບາດ ເປັນຕົວແທນທີ່ແທ້ຈິງຂອງຊັ້ນຄົນທີ່ຮັກສັນຕິພາບ ເພື່ອປະສານສົມທົບ ວຽກງານກັບແນວລາວຮັກຊາດ ໃນການຕໍ່ສູ້ຮ່ວມກັນໃນຫຼາຍດ້ານໂດຍບັນ ລຸຜົນສຳເລັດເປັນກ້າວໆດັ່ງລຸ່ມນີ້:

ໃນບັ້ນເລືອກຕັ້ງເພີ່ມຕື່ມໃນປີ 1958, ທ່ານກຶນີມ ພົນເສນາ ພ້ອມ ດ້ວຍພັກສັນຕິພາບເປັນກາງ ໄດ້ຄຽງບ່າຄຽງໄຫ່ກັບແນວລາວຮັກຊາດ ໃນ ການໂຄສະນາຫາສຽງ ແລະ ດ້ວຍການສະໜັບສະໜູນ ຂອງປະຊາຊົນ ລາວບັນດາເຜົ່າ, ໃນທີ່ສຸດ ກໍມີຜູ້ແທນຂອງແນວລາວຮັກຊາດ 9 ທ່ານຢູ່ໃນ ສະພາ. ສ່ວນຜູ້ແທນຂອງພັກສັນຕິພາບເປັກາງ ມີ 4 ທ່ານ.

ເວລາທ່ານປະທານ ສຸພານຸວົງ ແລະ ບັນດາທ່ານຜູ້ນຳແນວລາວ ຮັກຊາດ ຖືກຄຸມຂັງຢູ່ຄ້າຍໂພນເຄັງ, ທ່ານ ກຶນີມ ພົນເສນາ ກໍໄດ້ຍຶນອອກ ໜ້າອອກຕາຕໍ່ສູ້ກັບພວກຂວາຈັດດ້ວຍຮູບການທັງປຸກລະດົມ, ຂົນຂວາຍ ທຸກຊັ້ນຄົນໃນຕົວເມືອງ, ທັງຍາດແຍ່ງທາງສຽງຂອງສາກົນເພື່ອທວງໃຫ້ ປ່ຽຕົວທ່ານ ປະທານສຸພານຸວົງ ແລະ ຄະນະຂອງເພິ່ນ.

ໂດຍໄດ້ຮັບຜົນສະທ້ອນຈາກແນວທາງຂອງພັກສັນຕິພາບເປັນ ກາງ, ຈຶ່ງໄດ້ເກີດມີຂະບວນການລັດຖະປະຫານ 9/8/60 ໂດຍກອງທະ ຫານພາຍໃນກຳລັງຂອງສັດຕູໄດ້ລຸກຮື້ຂຶ້ນ ເພື່ອທວງໃຫ້ປະເທດລາວມີ

ສັນຕິພາບ, ເປັນກາງ, ເອກະລາດ ແລະ ຄວາມຖືກຕ້ອງປອງດອງຊາດ. ທ່ານກິນິມ ພົນເສນາ ກໍໄດ້ໃຫ້ການສະໜັບສະໜູນຄະນະລັດຖະປະຫານຢ່າງແຂງແຮງ, ໂດຍທ່ານເປັນແກນກາງໃນການຈັດຕັ້ງລັດຖະບານປະສົມຊຸດໃໝ່ ເພື່ອປ່ຽນແທນລັດຖະບານເກົ່າ ທີ່ຖືກໂຄ່ນລົ້ມ.

ທ່ານ ກິນິມ ພົນເສນາ ໄດ້ນຳພາຄະນະລັດຖະປະຫານ ຮ່ວມສຳພັນກັບແນວລາວຮັກຊາດໃນການສູ້ລົບ ເພື່ອປົດປ່ອຍທົ່ງໄຫຫີນ, ອັນນຳໄປສູ່ການສ້າງຕັ້ງລັດຖະບານເປັນກາງຄັ້ງໃຊ ທີ່ມີເຈົ້າສຸວັນນະພູມາເປັນນາຍົກ, ທ່ານ ກິນິມ ພົນເສນາເປັນລັດຖະມົນຕີວ່າການ ກະຊວງການຕ່າງປະເທດ.

ທ່ານ ກິນິມ ພົນເສນາ ເປັນຫົວໜ້າຄະນະຜູ້ແທນຂອງລັດຖະບານປະສົມສາມຝ່າຍ ເຊັນ ສັນຍາເຊີແນວ ກ່ຽວກັບລາວ ກັບ 13 ປະເທດໃນໂລກ ທີ່ຮັບຮູ້ຄວາມເປັນເອກະລາດ-ເປັນກາງ-ອຳນາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງລາວ.

ຄຸນງາມຄວາມດີດັ່ງກ່າວຂ້າງເທິງຂອງທ່ານກິນິມພົນເສນາ ເປັນສິ່ງຢັ້ງຢືນທີ່ໜັກແໜ້ນວ່າ ທ່ານກິນິມ ພົນເສນາ ເປັນປັນຍາຊົນປະຕິວັດ ທີ່ມີນ້ຳໃຈຮັກຊາດ ຮັກປະຊາຊົນ ອັນແຮງກ້າ, ມີຄວາມກ້າຫານຕໍ່ສູ້ຢ່າງບໍ່ຫວາດຫວັ່ນກັບພວກອິດທິກຳລັງຈັກກະພັດ ແລະ ປະຕິການ ເພື່ອໃຫ້ປະເທດຊາດທີ່ແສນຮັກ ແລະ ບູຊາຂອງຕົນ ມີສັນຕິພາບ ແລະ ວັດທະນາຖາວອນ.

ການທີ່ພວກຈັກກະພັດອາເມລິກາ ແລະ ລູກແຫ້ງຕົນມືຂອງພວກເຂົາໄດ້ຄາດຄະກຳເພີ່ນ ຢ່າງໂຫດຮ້າຍສາມານັ້ນເປັນການສະແດງເຖິງຄວາມປະລາໄຊຂອງພວກເຂົາຕໍ່ກ້ອນກຳລັງສາມັກຄີ, ຮັກຫອມສັນຕິພາບຂອງປະຊາຊົນລາວທັ້ງປວງທີ່ຈະສືບຕໍ່ພາລະກິດຕໍ່ສູ້ກູ້ຊາດ ຈົນເຖິງໄຊຊະນະຂັ້ນສຸດທ້າຍ.

ທ່ານ ກິນິມ ພົນເສນາ ສົມແລ້ວ ທີ່ເປັນນັກຮັກຊາດຜູ້ກ້າແກ່ນທີ່ຫາ ຍາກຂອງການປະຕິວັດລາວ ຊຶ່ງລູກຫຼານ ແລະ ຮຸ້ນຄົນລຸ້ນຫຼັງຄວນຈະຮໍ່າ ຮຽນເອົາເປັນແບບຢ່າງ.

"ບົດຄຳເຫັນ ກ່ຽວກັບ ທ່ານກີນິມ ພົນເສນາ"

ໂດຍພົນເອກ ສີສະຫວາດ ແກ້ວບຸນພັນ,
ອະດີດກຳມະການກົມການເມືອງສູນກາງພັກ,
ອະດີດຮອງປະທານປະເທດ ແລະ ນາຍົກລັດ
ຖະມົນຕີຂອງລັດຖະບານແຫ່ງ ສປປ ລາວ,
ອະດີດປະທານສູນກາງແນວລາວສ້າງຊາດ

ຂ້າພະເຈົ້າໄດ້ຮັບຮູ້ວ່າ ທ່ານ ກີນິມ ພົນເສນາ ເປັນຄົນລາວຜູ້ທີ່ມີນ້ຳໃຈຮັກຊາດ ແລະຮັກປະຊາຊົນບັນດາເຜົ່າຢ່າງແທ້ຈິງ, ທັງນີ້ກໍ່ຍ້ອນວ່າ ໃນເວລາທີ່ ທ່ານ ກີນິມ ພົນເສນາ ໄດ້ເປັນເຈົ້າແຂວງຢູ່ ແຂວງ ຫົວພັນ ນັ້ນ, ທ່ານໄດ້ນຳພາຕໍ່ສູ້ລົບລ້າງລະບອບກວ່າງລ່າມ ຊຶ່ງເປັນຮູບການໜຶ່ງ ທີ່ບັງຄັບເອົາປະຊາຊົນແຕ່ລະບ້ານ ໄປເຮັດວຽກໃຫ້ອາຍາຕາແສງ, ເຈົ້າ ເມືອງ, ເຈົ້າແຂວງ ແລະ ເຈົ້ານາຍຜູ້ໃຫຍ່. ການລົບລ້າງລະບອບກວ່າງ ລ່າມໂດຍ ທ່ານ ກີນິມ ພົນເສນາ ໄດ້ຊ່ວຍປະຊາຊົນຫຼຸດພົ້ນອອກຈາກການ ເປັນຂ້ອຍຂ້າໃຫ້ອາຍາລະບອບເກົ່າ.

ເວລາສູນກາງແນວລາວຮັກຊາດເຂົ້າຕໍ່ສູ້ເຈລະຈາກັບຝ່າຍວຽງ ຈັນ, ທ່ານ ກີນິມ ພົນເສນາ ກໍ່ໄດ້ຂົນຂວາຍຊວນເຊື່ອໜູ່ເພື່ອນຜູ້ໃຫຍ່ຝ່າຍ ວຽງຈັນ ແລະ .ຂ້າລັດຖະການຝ່າຍວຽງຈັນມາສະໜັບສະ ໜູນຝ່າຍແນວ ລາວຮັກຊາດ. ທ່ານ ກີນິມ ພົນເສນາ ໄດ້ເປັນຜູ້ໜຶ່ງທີ່ນຳພາ ຕໍ່ສູ້ກັບລັດຖະ ບານຫຸ່ນວຽງຈັນ, ນຳພາຕໍ່ສູ້ກັບຈັກກະພັດອາເມລິກາທີ່ມາບັງຄັບໃຫ້ ພວກ ລັດຖະບານຫຸ່ນວຽງຈັນປະຕິບັດຕາມກົນ ອຸບາຍມ້າງເພສັນຍາວຽງຈັນ.

ຍ້ອນທ່ານ ກີນິມ ພົນເສນາ ມີຈິດໃຈຮັກຊາດ ແລະ ປະຊາຊົນ ອັນສູງສົ່ງຄືແນວນັ້ນ, ທ່ານ ຈຶ່ງໄດ້ສຶກສາອົບຮົມລູກເມຍ ແລະ ຍາດພີ່ນ້ອງ ຈຸ້ມເຈື້ອເຊື້ອສາຍຂອງຕົນ, ຜູ້ໃດກໍ່ມີນ້ຳໃຈຮັກຊາດ ແລະ ຮັກປະຊາຊົນ

ເໝືອນ ດັ່ງເພິ່ນເອງ.

ມາຮອດວັນທີ 1 ເມສາ 1963, ທ່ານ ກິນີມ ພິນເສນາ ໄດ້ຖືກໄມ້ ມີ ຂອງພວກຈັກກະພັດອາເມລິກາ ແລະ ພວກຫຸ່ນຂາຍຊາດລອບຄາດຕະ ກຳທີ່ເຮືອນຂອງເພິ່ນເອງ.

ທ່ານ ກິນີມ ພິນເສນາ ຖືກຄາດຕະກຳ ໄດ້ເຮັດໃຫ້ລູກເມຍ ແລະ ຍາດຕິພີ່ນ້ອງເຊື້ອສາຍ, ສູນກາງແນວລາວຮັກຊາດ, ປະຊາຊົນບັນດາເຜົ່າ, ຂ້າລັດຖະການທຸກຖ້ວນໜ້າມີນ້ຳໃຈຄຽດແຄ້ນ, ເສົ້າສະຫຼົດໃຈ ແລະ ມີ ຄວາມອາໄລອາວອນເຖິງທ່ານ ກິນີມ ພິນເສນາ ຢ່າງສຸດຊຶ້ງຕາບເທົ່າໃດໆ.

ວຽງຈັນ ວັນທີ 18.03.2013

ສີສະຫວາດ ແກ້ວບຸນພັນ

ທ່ານ ກິນິມ ພົນເສນາ ຍັງຢູ່ໃນຄວາມຊົງຈຳຂອງພວກເຮົາຕະຫຼອດໄປ

(ເນື່ອງໃນວັນຄ້າຍວັນເສຍຊີວິດຂອງເພິ່ນ ຄົບຮອບ 50 ປີ)

ສະເໜີໂດຍ ທອງລຸນ ສີສຸລິດ,
ກຳມະການກົມການເມືອງ ສູນກາງພັກ,
ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ
ວ່າການກະຊວງການຕ່າງປະເທດ

ທ່ານ ກິນິມ ພົນເສນາ ໄດ້ສິ້ນຊີວິດໄປ ໃນວັນທີ 1.4.1963 ດ້ວຍການຄາດຕະກຳຢ່າງໂຫດ ຫ້ຽມດ້ວຍນ້ຳມືຂອງກຳ ລັງປະຕິການຂວາຈັດ ຊຶ່ງມີການບົ່ງການຈາກພາຍນອກ, ເຊິ່ງເປັນການສູນເສຍ ບຸກຄົນສຳຄັນຜູ້ໜຶ່ງຂອງຊາດລາວ, ສູນເສຍຜູ້ນຳຂອງພັກສັນຕິພາບເປັນກາງ, ລັດຖະມົນຕີກະຊວງການ ຕ່າງປະເທດ ຂອງລັດຖະບານປະສົມສາມຝ່າຍ, ເປັນນັກການເມືອງທີ່ມີຄວາມຮູ້ຄວາມສາມາດ, ເປັນນັກຮັກຊາດ, ຮັກປະຊາຊົນ, ຜູ້ທີ່ໄດ້ຢຶດໝັ້ນໃນເສັ້ນທາງຕໍ່ສູ້ເພື່ອຕ້ານການຮຸກຮານຂອງຕ່າງຊາດ, ເພື່ອຄວາມເປັນເອກະລາດແຫ່ງຊາດ, ສັນຕິພາບ, ປະຊາທິປະໄຕ ແລະ ຄວາມກ້າວໜ້າຂອງຊາດເຮົາ.

50 ປີ ຜ່ານໄປ ພາບແຫ່ງການເກີດຂຶ້ນທີ່ເປັນເຫດໃຫ້ ທ່ານ ກິນິມ ພົນເສນາ ຕ້ອງເສຍຊີວິດລົງ, ພັນລະຍາຂອງເພິ່ນຖືກບາດເຈັບສາຫັດ, ເຫດການເກີດຂຶ້ນຄັ້ງນັ້ນຍັງຢູ່ໃນຄວາມຊົງຈຳຂອງປະຊາຊົນ ລາວຢ່າງບໍ່ມີວັນລືມໄດ້ ເພາະວ່າການສູນເສຍ ທ່ານ ກິນິມ ພົນເສນາ ໃນພິບຕາດຽວນັ້ນ ມັນບໍ່ແມ່ນ ສະເພາະແຕ່ຄວາມສູນເສຍຜູ້ເປັນສາມີທີ່ແສນຮັກ ຂອງພັນລະ

ยา ແລະ ພໍ່ແສນເຄົາລົບຮັກຂອງລູກໆເທົ່ານັ້ນ ແຕ່ມັນຍັງເປັນຄວາມສູນ
ເສຍອັນໃຫຍ່ຫຼວງ ບວກກັບຄວາມເຈັບປວດຂອງປະຊາຊົນລາວທົ່ວປະ
ເທດ, ເປັນການສ້າງເຫດການສະເທືອນຂວັນໃຫ້ແກ່ກຳລັງຮັກຫອມສັນຕິ
ພາບ ແລະ ຄວາມເປັນທຳໃນໂລກ, ເພາະພວກປະຕິການຂວາຈັດຕ້ອງການ
ກຳຈັດຜູ້ນຳທີ່ມີອຸດົມການທີ່ກ້າວໜ້າ ເປັນຜູ້ນຳທີ່ມີບົດບາດຊີ້ສຳ ທີ່ເປັນ
ສັ່ງໜາມຂອງພວກເຂົາ. ເປັນການປາບປາມຂວັນກຳລັງໃຈຂອງຂະ
ບວນການທີ່ກ້າວໜ້າ. ແຕ່ວ່າຜົນໄດ້ຮັບຂອງເຈດຕະນາຮ້າຍ ດັ່ງກ່າວຂອງ
ພວກເຂົານັ້ນ ຊ້ຳພັດກັບມາຕອບສະໜອງພວກເຂົາ ໃນທາງກົງກັນຂ້າມ
ເຊັ່ນ: ຈາກການສູນເສຍ ທ່ານ ກຶນີມ ພົນເສນາ, ປະຊາຊົນລາວ ທີ່ກ້າວໜ້າ
ໄດ້ຫັນເອົາຄວາມເຈັບປວດດັ່ງກ່າວນັ້ນ ມາເປັນກຳລັງຊຸກຍູ້ນຳ້ໃຈຮັກຊາດ
ຄຽດແຄ້ນສັດຕູ, ສາມັກຄີກັນອ້ອມຂ້າງແນວລາວຮັກຊາດ ແລະ ກຳລັງ
ເປັນກາງຮັກຊາດສືບຕ່ໍງສູ້ຕ້ານກັບການຮຸກຮານຂອງພວກຈັກກະພັດ ແລະ
ປະຕິການຂວາຈັດ ສືບຕ່ໍຍາດເອົາໄຊຊະນະມາສູ່ກຳລັງປະຕິວັດ, ນັບແຕ່
ນັ້ນມາຂະບວນການປະຕິວັດລາວໄດ້ສືບຕ່ໍຂະຫຍາຍຕົວເປັນກ້າວໆມາ
ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ຈົນໄດ້ຮັບໄຊຊະນະ
ຂັ້ນສຸດທ້າຍໃນການສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະ
ຊາຊົນລາວ ຂຶ້ນ ໃນວັນທີ 2 ທັນວາ 1975.

ເຖິງວ່າ ທ່ານ ກຶນີມ ພົນເສນາ ເປັນນັກປົກຄອງຢູ່ໃນລະບອບສັກດິ
ນາ, ແຕ່ເພິ່ນເປັນຜູ້ປົກຄອງທີ່ມີຄວາມສາມາດ, ມີຄວາມເປັນທຳ, ເຂົ້າ
ໃຈຄວາມມຸ້ງມາດປາດຖະໜາຂອງປະຊາຊົນ, ຊ່ວຍເຫຼືອປະຊາຊົນ, ແທດ
ເຖິງປະຊາຊົນ ແລະ ຊອກຊ່ອງທາງແກ້ໄຂຄວາມຫຍຸ້ງຍາກຂັດສົນໃຫ້
ປະຊາຊົນ, ຍ້ອນວ່າ ເພິ່ນເປັນນັກຕໍ່ສູ້ທີ່ກ້າແກ່ນ, ບໍ່ຍອມຈຳນົນຕໍ່ອິດທິ

ກຳລັງໃດໆ, ກ້າຫານທົນທານ ບໍ່ຍອມຕໍ່ການຊີ້ຈ້ຳໆຈອບອອຍ ບໍ່ລັ່ງເລຕໍ່ກົນ ອຸບາຍເລ່ຫຼ່ຽມທີ່ມີລັກສະນະສ້ຽມແຫຼມຂອງຝ່າຍກົງກັນຂ້ຳມ ເພື່ອຢາກ ໂນ້ມນ້ຳວ ຕ່ຳວປັ້ນຫຼັກໝັ້ນຂອງເພິ່ນ, ແຕ່ເພິ່ນຕໍ່ສູ້ຈົນເຖິງວິນາທີສຸດທ້ຳຍ ຂອງຊີວິດເພິ່ນ.

ທ່ານ ກິນິມ ພົນເສນາ ເປັນນັກກົດໝາຍ ທີ່ມີຄວາມສາມາດສູງ ໂດຍເພິ່ນໄດ້ອີ້ງໃສ່ກົດໝາຍ ທີ່ມີຂອງປະເທດ ແລະ ຂອງສາກົນ ຕໍ່ສູ້ຕ້ານ ກັບຄວາມອະທຳ, ຕໍ່ສູ້ຕ້ານກັບກົນອຸບາຍລາຍຫຼ່ຽມ ຂອງພວກປະຕິການ ຂວາຈັດ ທີ່ສ້ຳງເລື່ອງລ່ວຂຶ້ນມາຕ່ຳງໆນ່ຳໆ ເພື່ອຊອກເງື່ອນໄຂດັບສູນກຳ ລັງປະຕິວັດ, ກຳລັງຮັກຊ່ຳດ ໂດຍຈັບກຸມຜູ້ນຳຂອງແນວລ່ວຮັກຊ່ຳດ ຂັງຄຸກໂພນເຄັ້ງ ແລະ ເພິ່ນໄດ້ຕໍ່ສູ້ທ່ຳງກົດໝາຍໃນ ຖ່ານະເປັນຜູ້ແທນລ່ວ ຊະດອນ ເພື່ອບັງຄັບໃຫ້ພວກເຂົ້ຳປ່ອຍຕົວບັນດ່ຳຜູ້ນຳແນວລ່ວຮັກຊ່ຳດ ຢ່ຳງໜ້ຳ ເກ່ງຂ່ຳມ.

ທ່ານ ກິນິມ ພົນເສນາ ເປັນນັກການທູດ ທີ່ມີຄວາມຮູ້, ຄວາມສ່ຳ ມ່ຳດ, ມີຄວາມກ້ຳແກ່ນແໜ້ນໜ່ຽວໃນການຕໍ່ສູ້ໃນເວທີສາກົນ ປະກອບ ສ່ວນເຂົ້ຳໃນການເຈລະຈ່ຳ ເພື່ອກ້ຳວໄປເຖິງ ສ່ຳມ່ຳດເຊັນສັນຍ່ຳ ເຊີແນວ ກ່ຽວກັບລ່ວ ແລະ ເພິ່ນເອ່ງໄດ້ເປັນຜູ້ຕ່ຳງໜ້ຳໃຫ້ຝ່ຳຍກຳລັງເປັນກ່ຳງລ່ຽ ນ່ຳມໃນສັນຍ່ຳດັ່ງກ່ຳວ ໃນວັນທີ 13/7/1962.

ທ່ານ ກິນິມ ພົນເສນາ ເປັນຜູ້ເສ່ຽສະຫຼະຜົນປະໂຫຍດສ່ວນຕົວ ແລະ ຄອບຄົວ ເພື່ອພ່ຳລະກິດລວມ ຂອງຊ່ຳດ ເພິ່ນໄດ້ເອ່ຳຊັບສົມບັດສ່ວນຕົວ ຊ່ວຍການປະຕິວັດໃນຫຼ່ຳຍກ່ຳລະນີ ແລະ ຫຼ່ຳຍຮູບຫຼ່ຳຍສີ, ເພິ່ນຍັ່ງເປັນພໍ່ ທີ່ເຄ່ຳລິບຮັກຂອງລູກຫຼ່ຳນ ສຶກສ່ຳອົບຮົມຄອບຄົວລູກຫຼ່ຳນໃຫ້ເປັນຄົນຮູ້ ຜູ້ດີ, ມີຄວາມກ້ຳວໜ້ຳປະກອບສ່ວນເຂົ້ຳໃນການ່ຳນຂອງຊ່ຳດ.

ທ່ານ ກິນິມ ພົນເສນາ ໄດ້ຈາກພວກເຮົາໄປແລ້ວ ທ່ານ ໆຈາກນີ້ 50 ປີ ເຕັມ, ແຕ່ພາລະກຳ, ຊື່ສຽງຮຽງນາມຂອງເພິ່ນ ໄດ້ຈາລຶກໄວ້ໃນປະຫວັດ ສາດການຕໍ່ສູ້ກູ້ຊາດຂອງລາວເຮົາ. ຄຸນສົມບັດ, ສິນທຳ, ຄວາມເດັດດ່ຽວກ້າ ຫານ, ຄວາມເສຽສະຫຼະເພື່ອຊາດ ເພື່ອປະຊາຊົນຂອງເພິ່ນໄດ້ເປັນ ແລະ ຈະເປັນແວ່ນແຍງອັນໄສແຈ້ງໃຫ້ຄົນລຸ້ນຫຼັງສືບຕໍ່ຮ່ຳຮຽນຕໍ່ໆໄປ.

ວຽງຈັນ, ວັນທີ 29 ມີນາ 2013

ທອງລຸນ ສີສຸລິດ

24 / VII

ຫ້າມຈຳໜ່າຍ

“ຄຳເຫັນ ກ່ຽວກັບທ່ານ ກິນິມ ພົນເສນາ”

ໂດຍ ທ່ານ ດຣ ພັນຄຳ ວິພາວັນ ກຳມະການ
ກົມການເມືອງສູນກາງພັກ, ລັດຖະມົນຕີ ວ່າ
ການກະຊວງສຶກສາທິການ

ຂ້າພະເຈົ້າຂຽນຄຳເຫັນນີ້ຕາມການສະເໜີຂອງທ່ານ ນາງ ເຂັມ ເພັດ ພົນເສນາ ອະດີດຮອງປະທານ ສູນກາງສະຫະພັນແມ່ຍິງລາວ ຊຶ່ງໃນ ຄອບຄົວ ພວກຂ້າພະເຈົ້າຖືວ່າ ເພິ່ນເປັນເອື້ອຍໃຫຍ່ທີ່ພວກຂ້າພະເຈົ້າເຄົາ ລົບນັບຖື ນັ້ນກໍ່ຍ້ອນວ່າພໍ່ຂອງເພິ່ນຄື ທ່ານ ກິນິມ ພົນເສນາ ໄດ້ມີຄວາມ ຈົ່ງເຄີຍ ແລະ ຮັກແພງກັບພໍ່ຂອງຂ້າພະເຈົ້າ (ພໍ່ອິນໂຍທາ) ໃນສະໄໜທີ່ ທ່ານ ກິນິມ ພົນເສນາ ໄປເປັນເຈົ້າແຂວງໆຫົວພັນລະຫວ່າງປີ 1950. ເນື່ອງຈາກວ່າຂ້າພະເຈົ້າເປັນຄົນລຸ້ນລູກ ທັງບໍ່ມີໂອກາດໄດ້ພົບກັບ ທ່ານ ກິນິມ ພົນເສນາ ຈັກເທື່ອ ສະນັ້ນ ໃນບົດຄຳເຫັນນີ້ຂ້າພະເຈົ້າ ຈຶ່ງຂໍອະນຸ ຍາດຍົກເອົາບາງເນື້ອໃນສຳຄັນທີ່ ທ່ານ ພູມີ ວົງວິຈິດ ໄດ້ຂຽນໄວ້ໃນປຶ້ມ ບັນ ທຶກຄວາມຊົງຈຳຂອງເພິ່ນ ເຊິ່ງສະທ້ອນໃຫ້ເຫັນເຖິງທັດສະນະຂອງ ຜູ້ນຳການປະຕິວັດລຸ້ນທຳອິດ ທ່ານໜຶ່ງ ທີ່ມີຕໍ່ ທ່ານ ກິນິມ ພົນເສນາ. ພ້ອມ ກັນນີ້ຂ້າພະເຈົ້າກໍ່ຂໍຍົກເອົາການບອກເລົ່າຂອງພໍ່ ຂອງຂ້າພະເຈົ້າອັນເປັນ ທັດສະນະຂອງປະຊາຊົນ, ຂອງຊາວນາບ້ານນອກຜູ້ໜຶ່ງທີ່ມີຕໍ່ ທ່ານ ກິນິມ ພົນເສນາ ເພື່ອເປັນຂໍ້ມູນຫຼັກຖານໃຫ້ ທ່ານຜູ້ອ່ານ ແລະ ຄົນລຸ້ນຫຼັງເຮົາ ເຫັນແຈ້ງຕື່ມແບບຢ່າງການດຳລົງຊີວິດ ແລະ ການຕໍ່ສູ້ຂອງ ທ່ານ ກິນິມ ພົນເສນາ.

ປີ 2009 ຂ້າພະເຈົ້າໄດ້ຖືກແຕ່ງຕັ້ງໃຫ້ຮັບຕຳແໜ່ງເປັນ ລັດຖະມົນ

ຕິ່ວ່ຳກຳນ ກະຊວງສຶກສຳທິກຳນ, ໃນຊ່ວງເວລຳດັ່ງກ່ຳວ ຂ້ຳພະເຈົ້ຳໄດ້ ຊອກຫຳອ່ຳນປຶ້ມທີ່ມີຊື່ວ່ຳ: "ຄວຳມຊົງຈຳຂອງຊີວິດເຮົຳໃນຂະບວນວິວັດ ແຫ່ງ ປະຫວັດສຳດຂອງປະເທດລຳວ" ຊຶ່ງ ທ່ຳນ ພູມີ ວົງວິຈິດ ໄດ້ເລີ່ມຂຽນ ເມື່ອ ວັນທີ 6/4/1984 ອັນເປັນວັນເກີດຂອງທ່ຳນ ຄົບຮອບ 75 ປີ ແລະ ຫຼັງຈຳກນັ້ນ ສະຖຳບັນວິທະຍຳສຳດສັງຄົມຂອງ ກະຊວງສຶກສຳໄດ້ນຳເອົຳ ອອກມຳພິມເຜີຍແຜ່ເມື່ອ ວັນທີ 6/4/1987. ອ່ຳນປຶ້ມບັນທຶກດັ່ງກ່ຳວ ເຮັດ ໃຫ້ຂ້ຳພະເຈົ້ຳເຫັນພຳບຊີວິດຂອງ ທ່ຳນ ພູມີ ວົງວິຈິດ ຜູ້ນຳປະຕິວັດລຸ້ນ ທຳອິດທີ່ປ່ຽນປຶ້ນໄປມຳຫຼຳຍບັ້ນຫຼຳຍຕອນໃນຂະບວນວິວັດແຫ່ງກຳນຕໍ່ ສູ້ປະຕິວັດອັນອົງອຳດກ້ຳຫຳນເດັດດ່ຽວໝ່ຽວແໜ້ນ ແລະ ເຕັມໄປດ້ວຍນ້ຳ ໃຈເສຍສະຫຼະເພື່ອຊຳດເພື່ອປະຊຳຊົນ, ພ້ອມກັນນັ້ນປຶ້ມບັນທຶກດັ່ງກ່ຳວກໍ ໄດ້ຍົກໃຫ້ເຫັນພຳບແຫ່ງຊີວິດຂອງບັນດຳນັກກຳນເມືອງ ທີ່ກ້ຳວໜ້ຳທ້ຳ ຫຼຳຍໃນນັ້ນກໍ່ມີ ທ່ຳນ ກິນິມ ພົນເສນຳ. ທ່ຳນກິນິມ ພົນເສນຳ ເປັນຜູ້ໜຶ່ງ ທີ່ເລີ່ມຕົ້ນດ້ວຍກຳນເຮັດວຽກຮັບໃຊ້ລະບອບສັກດິນຳ ແລະ ລະບອບຫົວ ເມືອງຂຶ້ນ ແຕ່ທ່ຳນພັດເປັນຜູ້ມີນ້ຳໃຈຮັກຊຳດ ແລະ ຮັກບ້ຳນເກີດເມືອງ ນອນຂອງຕົນ, ທ່ຳນມີຄວຳມກ້ຳຫຳນຕໍ່ສູ້ກັບຈັກກະພັດຜູ້ຮຸກຮຳນ ແລະ ລູກ ແຫ້ງຕົນມືຂອງພວກເຂົຳ ໂດຍບໍ່ຄຳນຶງເຖິງຄວຳມອັນຕະລຳຍຕໍ່ຊີວິດຂອງ ຕົນ; ທ່ຳນ ກິນິມ ພົນເສນຳ ໄດ້ຖືກພວກຈັກກະ ພັດອຳເມລິກຳ ແລະ ລູກ ແຫ້ງຕົນມືລອບຄຳດຕະກຳ ເມື່ອວັນທີ 1 ເດືອນ 4 ປີ 1963. ທ່ຳນ ພູມີ ວົງວິຈິດ ໄດ້ຂຽນກ່ຽວກັບບຳງກຳນເຄື່ອນໄຫວທີ່ສຳຄັນຂອງ ທ່ຳນ ກິນິມ ພົນເສນຳ ເປັນຕົ້ນທ່ຳນໄດ້ເປັນທະນຳຍຄວຳມປ້ອງກັນຜູ້ນຳແນວລຳວ ຮັກຊຳດ ທີ່ຖືກພວກ ຜຸຍ ຊະນະນິກອນ ແລະ ພູມີ ໜໍ່ສະຫວັນ ກ່ຳວຫຳ ໂດຍເສກສັນປັ້ນແຕ່ງຂຶ້ນຢ່ຳງບໍ່ມີມູນຄວຳມຈິງເພື່ອຈັບໄປຂັງຄຸກໂພນເຄັງ ແລ້ວຫວັງຈະເອົຳຂຶ້ນສຳນຕັດສິນລົງໂທດ. ຫຼັງຈຳກນັ້ນພຳຍຫຼັງກຳນລັດ ຖະປະຫຳນ ເມື່ອວັນທີ 9/8/1960 ຂອງ ຮ້ອຍເອກ ກອງແລ ໂຄ້ນລົ້ມລັດ

ຖະບານຫຸ່ນອຸງຈັນ ສ້າງຕັ້ງລັດຖະບານໃໝ່ຂຶ້ນໂດຍມີ ເຈົ້າ ສຸວັນນະພູມາ ເປັນນາຍົກລັດຖະມົນຕີ, ໃນຂະນະນັ້ນ ທ່ານ ກົງນິມ ພົນເສນາ ເປັນບຸກຄົນ ທີ່ກ້າວໜ້າ ຊຶ່ງໄດ້ຖືກແຕ່ງຕັ້ງໃຫ້ເປັນ ຄະນະລັດຖະບານ.

ໃນໂອກາດດັ່ງກ່າວ ທ່ານໄດ້ດຳເນີນຕາມຂັ້ນຕອນຂອງກົດໝາຍ ຢ່າງໄວວາ ລົບລ້າງຄະດີຂໍ້ກ່າວຫາໃຫ້ແກ່ຜູ້ນຳແນວລາວຮັກຊາດ ຕໍ່ມາໃນ ລັດຖະບານປະສົມສາມຝ່າຍທີ່ສ້າງຕັ້ງຂຶ້ນເມື່ອ ປີ 1962 ຕາມສັນຍາເຊີ ແນວນັ້ນ, ທ່ານ ກົງນິມ ພົນເສນາ ກໍ່ໄດ້ຖືກແຕ່ງຕັ້ງໃຫ້ເປັນ ລັດຖະມົນຕີວ່າ ການ ກະຊວງການຕ່າງປະເທດ. ນັບແຕ່ເປັນຄະນະລັດຖະບານຂອງເຈົ້າ ສຸວັນນະພູມາ ເມື່ອປີ 1960 ແລະ ຕໍ່ມາເປັນລັດຖະມົນຕີວ່າການກະຊວງ ການຕ່າງປະເທດຂອງລັດຖະບານປະສົມສາມຝ່າຍ ທ່ານ ກົງນິມ ພົນເສນາ ໄດ້ມີການເຄື່ອນໄຫວຮ່ວມມືຢ່າງແໜ້ນແຟ້ນກັບຝ່າຍແນວລາວຮັກຊາດ ແລະ ພົວພັນຮ່ວມມືກັບບັນດາປະເທດສັງຄົມນິຍົມ ເປັນຕົ້ນ ອະດີດສະຫະ ພາບໂຊວຽດ, ຫວຽດນາມ. ຍ້ອນແນວນັ້ນ ທ່ານ ຈຶ່ງກາຍເປັນເປົ້າໝາຍ ການທຳລາຍຂອງ ພວກຈັກກະພັດ ແລະ ປະຕິການ ຂາຍຊາດ.

ເມື່ອອ່ານບັນທຶກຄວາມຊົງຈຳ ຂອງທ່ານ ພູມີ ວົງວິຈິດ ໄດ້ເຮັດໃຫ້ ຂ້າພະເຈົ້າ ຫວນຄິດຄຶນເຖິງການບອກເລົ່າຂອງ ພໍ່ອິນໂຍທາ (ພໍ່ຂອງ ຂ້າພະເຈົ້າ) ທີ່ໄດ້ເສຍຊີວິດແລ້ວ ເມື່ອປີ 1994. ພໍ່ໄດ້ເວົ້າເຖິງ ທ່ານ ກົງນິມ ພົນເສນາ ໃນເວລາທີ່ ຂ້າພະເຈົ້າຍັງເປັນເດັກນັກຮຽນປະຖົມ ຫ້ອງ ປ 5. ຂ້າພະເຈົ້າຍັງຈື່ວ່າເວລານັ້ນເປັນເວລາທີ່ກຸງມໃສ່ບຸນປີໃໝ່ລາວ ແລະ ເປັນ ເວລາທີ່ ຂ້າພະເຈົ້າເອງ ກຳລັງຫວນຄືນບົດຮຽນ ເພື່ອເສັງຈົບປະຖົມແລ້ວ ເສັງເຂົ້າຮຽນຕໍ່ມັດທະຍົມ ທີ່ເມືອງຊຳເໜືອ. ຢູ່ບ້ານຂອງຂ້າພະເຈົ້າ (ບ້ານ ກາງ, ເມືອງຊຳເໜືອ) ເວລານັ້ນໄປທາງໃດກໍ່ໄດ້ຍິນພວກຜູ້ໃຫຍ່ລົມກັນ ກ່ຽວກັບການເສຍຊີວິດຂອງ ທ່ານ ກົງນິມ ພົນເສນາ ອັນໄດ້ເຮັດໃຫ້ຂ້າພະ ເຈົ້າ ສົນໃຈຢາກຮູ້. ມີມື້ໜຶ່ງໃນພາເຂົ້າແລງ ຂ້າພະເຈົ້າ ໄດ້ຖາມພໍ່ວ່າ: ທ່ານ

ກິນິມ ພົນເສນາ ແມ່ນໃຜ ? ແລະ ເປັນຫຍັງຈຶ່ງມີຄົນລອບຂ້າເພິ່ນ ? ພໍ່ເວົ້າ ວ່າ: ລູກບໍ່ຮູ້ເພິ່ນດອກ ລູກຍັງນ້ອຍ, ພໍ່ຮູ້ເພິ່ນດີໃນສະໄໜທີ່ເພິ່ນມາເປັນ ເຈົ້າແຂວງໆເຮົາພຸ້ນ (ລະຫວ່າງປີ 1950) ຍາມນັ້ນລູກຍັງບໍ່ທັນເກີດຊ້ຳ, ເຂົາລອບຂ້າເພິ່ນຍ້ອນວ່າເພິ່ນບໍ່ມັກອາເມລິກາແລ້ວເຮັດດີນຳຝ່າຍເຮົາ (ໝາຍເຖິງຝ່າຍແນວລາວຮັກຊາດ) ຍ້ອນແນວນັ້ນຝ່າຍອາເມລິກາ ຈຶ່ງເອົາ ປືນລອບຍິງເພິ່ນ (ພໍ່ເວົ້າຕາມພາສາຊາວບ້ານນອກ) ພໍ່ຕອບຂ້າພະເຈົ້າ ພຽງນັ້ນແລ້ວ ກໍ່ລົມກັບແມ່ເລື່ອງກຽມອັດນ້ຳໜ້ອຍເຂົ້າໃສ່ນາ.

ເມື່ອປີ 1983 ຂ້າພະເຈົ້າຮຽນຈົບແຕ່ ສະຫະພາບໂຊວຽດ ໄດ້ຮັບ ໜ້າທີ່ຢູ່ກະຊວງສຶກສາ, ພໍ່ແມ່ຈຶ່ງໂຍກຍ້າຍຈາກແຂວງຫົວພັນ ມາຢູ່ກັບຂ້າ ພະເຈົ້າ ທີ່ນະຄອນຫຼວງວຽງຈັນ. ລະຫວ່າງເດືອນ 11/1983 ເປັນໄລຍະ ກະກຽມການສະເຫຼີມສະຫຼອງ ວັນສ້າງຕັ້ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 8 ປີ. ໃນໄລຍະນັ້ນສື່ຕ່າງໆ ເຊັ່ນ: ໜັງສືພິມ, ວິ ທະຍຸກະຈາຍສຽງ, ໂທລະພາບແຫ່ງຊາດມີການໂຄສະນາເຜີຍແຜ່ປະ ຫວັດ ແລະ ມຸນເຊື້ອຕໍ່ສູ້ປະຕິວັດຂອງຊາດເຮົາຢ່າງກວ້າງຂວາງ ມີມື້ໜຶ່ງ ພໍ່ ບອກຂ້າພະເຈົ້າ ວ່າມື້ໃດຫວ່າງໃຫ້ພາເພິ່ນເຂົ້າໄປໃນວຽງແດ່. ຂ້າພະເຈົ້າ ຖາມເພິ່ນວ່າຈະໄປເຮັດຫຍັງ ? ເພິ່ນຕອບວ່າ: ຢາກໄປເບິ່ງເຂດເຮືອນພັກ ຂອງ ທ່ານ ກິນິມ ພົນເສນາ ທີ່ເພິ່ນຢູ່ໃນສະໄໝ ລາວລອມລາວ ແລະ ບ່ອນ ທີ່ເຂົາລອບຍິງເພິ່ນ, ຂ້າພະເຈົ້າເລີຍຖາມພໍ່ວ່າ: ພໍ່ມີຫຍັງພົວພັນກັບເພິ່ນ? ພໍ່ຕອບວ່າ: ພໍ່ເຄົາລົບນັບຖືແລະສັດທາຕໍ່ເພິ່ນ, ເພິ່ນເປັນຄົນດີ, ຮັກຊາດ, ຮັກປະຊາຊົນ; ໃນສະໄໝເພິ່ນໄປເປັນເຈົ້າແຂວງໆຫົວພັນ ເພິ່ນໄດ້ລິເລີ່ມ ລົບລ້າງລະບອບກວາງລ່ານ ຊຶ່ງເປັນກົນໄກກົດຂີ່ຂູດຮີດຂອງລະບອບສັກ ດິນາ, ສຳລັບຕໍ່ຄອບຄົວເຮົາເພິ່ນຖືເປັນຮັກເປັນແພງ, ເພິ່ນເປີດໂອກາດໃຫ້ ພໍ່ໄປມາຫາສູ່ເພິ່ນທີ່ເຮືອນພັກຂອງເພິ່ນ ທີ່ເມືອງຊຳເໜືອ ເພິ່ນມັກຖາມເຖິງ

[1] ຄວາມຊົງຈຳຂອງຊີວິດເຮົາ ໃນຂະບວນວິວັດແຫ່ງປະຫວັດສາດຂອງປະເທດລາວ - ໜ້າ 126.

[2] ຄວາມຊົງຈຳໃນຊີວິດຂອງເຮົາໃນຂະບວນວິວັດແຫ່ງປະຫວັດສາດຂອງປະເທດລາວ - ໜ້າ 150

ສະພາບຊີວິດການເປັນຢູ່ແນວຄິດຈິດໃຈຂອງຊາວບ້ານ ພ້ອມກັນນັ້ນກໍ ແນະນຳໃຫ້ມີໜ່ວຍສາມັກຄີເຮັດນາ, ເຮັດເຮືອນເພື່ອປັບປຸງຊີວິດໃຫ້ດີຂຶ້ນ. ພໍ່ເວົ້າຕໍ່ວ່າເຖິງພໍ່ເປັນປະຊາຊົນສາມັນທຳມະດາ, ເປັນຊາວບ້ານນອກສ່ວນ ເພິ່ນເປັນອາດຍາເຈົ້າແຂວງແຕ່ເພິ່ນບໍ່ຖືກງດ, ເພິ່ນຈິງໃຈເຮັດລົ້ງເຄີຍສະ ໜິດສະໜົມຮັກແພງກັບພໍ່. ອີກດ້ານໜຶ່ງລະຫວ່າງປີ ລາວລອມລາວ ຖ້າບໍ່ມີ ທ່ານ ກິນິມ ພົນເສນາ ບາງເທື່ອພໍ່ອາດຄ້າງຢູ່ວຽງຈັນບໍ່ໄດ້ກັບຊຳເໜືອກໍ່ ເປັນໄປໄດ້, ຂ້າພະເຈົ້າຖາມ ພໍ່ວ່າເປັນຫຍັງ? ພໍ່ຕອບວ່າ: ລະຫວ່າງປີ ລາວລອມລາວ (ທ້າຍປີ 1958) ບ້ານເມືອງມີສັນຕິພາບ ພໍ່ ມາວຽງຈັນ ເພື່ອ ມາເບິ່ງບ້ານເບິ່ງເມືອງນຳເພິ່ນ. ເມື່ອໄດ້ຮັບຂ່າວວ່າພໍ່ຮອດວຽງຈັນ ທ່ານ ກິ ນິມ ພົນເສນາ ໄດ້ບອກພໍ່ໃຫ້ໄປຢາມເພິ່ນແດ່ ກໍພໍດີພໍ່ຢາກຊື້ລູກປືນແຝດ ແດ່ເພາະເພິ່ນມີຮ້ານຂາຍປືນແຝດ (ປືນລ່າເນື້ອ). ພໍ່ໄປພົບເພິ່ນ ເພິ່ນຖື ເປັນກັນເອງ ເພິ່ນຖາມພໍ່ວ່າ: ອິນໂຍທາສະບາຍດີບໍ? ຂ້ອຍດີໃຈທີ່ໄດ້ພົບ ກັບເຈົ້າ ຂ້ອຍບໍ່ນຶກເລີຍວ່າຊິໄດ້ພົບເຈົ້າອີກ. ຫຼັງຈາກຖາມຂ່າວຄາວຄອບ ຄົວ ແລະ ສະພາບການອື່ນໆແລ້ວ ເພິ່ນຖາມຕໍ່ວ່າ: ເຈົ້າມີວຽກຫຍັງຈຶ່ງມາ ເຖິງວຽງຈັນ? ພໍ່ຕອບວ່າ: ຂ້ານ້ອຍຄິດວ່າ ບ້ານເມືອງມີສັນຕິພາບແລ້ວ ບໍ່ມີ ເສິກບໍ່ມີເສືອແລ້ວ ຂ້ານ້ອຍ ຢາກເຫັນເມືອງຫຼວງວຽງຈັນ ກໍເລີຍມາເພື່ອໃຫ້ ເຫັນວຽງຈັນໝາຍຊາດຊີວິດຂອງຂ້ານ້ອຍນີ້ແລ້ວ. ຫຼັງຈາກລົມຕໍ່ຫຼາຍເລື່ອງ ແລ້ວສຸດທ້າຍເພິ່ນເລີຍເວົ້າມຳພໍ່ວ່າ: ດີແລ້ວ ອິນໂຍທາ ເອີຍ ທີ່ເຈົ້າມາຫາ ຂ້ອຍດຽວນີ້ສະພາບການບ້ານເມືອງບໍ່ປົກກະຕິປານໃດ, ຖ້າເຈົ້າແລ້ວວຽກ ໃຫ້ຟ້າວກັບຄືນເມືອຊຳເໜືອສາ! ຢູ່ດົນໄປຢ້ານສະພາບການບ້ານເມືອງ ປ່ຽນແປງ ແລ້ວເຈົ້າຈະຄ້າງຢູ່ວຽງຈັນພີ ບໍ່ສາມາດກັບຊຳເໜືອໄດ້; ເພິ່ນໄດ້ ແນະນຳຫຼາຍບັນຫາກ່ຽວກັບສະພາບການຢູ່ວຽງຈັນ. ຫຼັງຈາກພົບ ທ່ານ ກິ ນິມ ພົນເສນາ 5 ມື້ພໍ່ກັບຊຳເໜືອໂດຍເຮືອບິນໂດຍສານ. ພໍ່ຮອດຊຳເໜືອບໍ່ ເທົ່າໃດເດືອນ ກໍຍິນຂ່າວພວກ ຜຸຍ ຊະນະນິກອນ ຈັບ ສະເດັດເຈົ້າ ສຸພາ

ນຸວິງ ແລະ ຜູ້ນຳແນວລາວຮັກຊາດເຂົ້າຄຸກໂພນເຄັງ. ພໍ່ເວົ້າຕໍ່ວ່າ: ທ່ານ ກິນິມ ພິນເສນາ ເປັນຄົນດີ, ເປັນຄົນມອງກວ້າງເຫັນໄກ, ເປັນຄົນບໍ່ມັກ ພວກລ່າເມືອງຂຶ້ນແລະລະບອບສັກດິນາພໍ່ເສຍໃຈທີ່ສຸດທີ່ເພິ່ນເສຍຊີວິດໄວ ໂພດ.

ຈາກຄວາມເຫັນຂອງ ທ່ານ ພູມີ ວົງວິຈິດ ຊຶ່ງໃນຖານະຜູ້ນຳການ ປະຕິວັດລຸ້ນທຳອິດທີ່ຂຽນໄວ້ໃນປຶ້ມບັນທຶກຄວາມຊົງຈຳຂອງທ່ານ ແລະ ການບອກເລົ່າຂອງ ພໍ່ ອິນໂຍທາ ຊຶ່ງໃນຖານະເປັນປະຊາຊົນຊາວບ້ານ ນອກຄົນໜຶ່ງ ທີ່ມີຕໍ່ ທ່ານ ກິນິມ ພິນເສນາ ນັ້ນສາມາດເປັນຫຼັກຖານທາງ ປະຫວັດສາດຈຳນວນໜຶ່ງທີ່ຢັ້ງຢືນວ່າ ເຖິງແມ່ນວ່າ ທ່ານ ກິນິມພິນ ເສນາ ໄດ້ກຳເນີດ, ເຕີບໃຫຍ່ຂຶ້ນພາຍໃຕ້ລະບອບສັກດິນາລ່າເມືອງຂຶ້ນຂອງຈັກ ກະພັດ ແລະ ເຮັດການຮັບໃຊ້ລະບອບດັ່ງກ່າວກໍຕາມ, ແຕ່ທ່ານເປັນຜູ້ມີນ້ຳ ໃຈຮັກຊາດ ຮັກປະຊາຊົນ ຮັກຄວາມເປັນເອກະລາດແຫ່ງຊາດ, ມີນ້ຳໃຈອົງ ອາດກ້າຫານຕໍ່ສູ້ກັບພວກຈັກກະພັດ ແລະ ລູກແຫຼ້ງຕີນມືຂອງພວກເຂົາ. ທ່ານເປັນຜູ້ກ້າຫານໃຊ້ໜ້າທີ່ຕຳແໜ່ງຂອງຕົນຢືນຢັດຕໍ່ສູ້ກັບສັດຕູຂອງປະ ຊາຊົນ ຈົນເຖິງວິນາທີສຸດທ້າຍ ແລະ ໄດ້ເສຍສະຫຼະຊີວິດເພື່ອຊາດເພື່ອ ປະຊາຊົນ. ຊີວິດ ແລະ ການເຄື່ອນໄຫວຂອງທ່ານ ໄດ້ເປັນແບບຢ່າງ ແລະ ບົດຮຽນອັນດີໃຫ້ແກ່ພວກເຮົາຜູ້ເປັນລູກເປັນຫຼານ ແລະ ເປັນຜູ້ສືບທອດ ພາລະກິດປະຕິວັດ, ພາລະກິດແຫ່ງການປົກປັກຮັກສາ ແລະ ສ້າງສາປະ ເທດຊາດໃຫ້ມີຄວາມໝັ້ນຄົງ ແລະ ຮັ່ງມີເຂັ້ມແຂງ.

ນະຄອນຫຼວງວຽງຈັນ, ວັນທີ 22 ມີນາ 2013

ດຣ. ພັນຄຳ ວິພາວັນ

“ ພະນະທ່ານ ກຶນີມ ພົນເສນາ,
ນັກການເມືອງທີ່ກ້າວໜ້າ ຂອງຊາດລາວ.”

ສຈ. ດຣ. ພັນດວງຈິດ ວົງສາ, ກຳມະການ
ສູນກາງພັກປະຊາຊົນປະຕິວັດລາວ,
ປະທານສູນກາງແນວລາວສ້າງຊາດ

ໃນຖານະທີ່ເປັນນັກຄົ້ນຄ້ວາປະຫວັດສາດ, ຂ້າພະເຈົ້າ ກໍ່ຮູ້ຈັກບົດ ບາດສຳຄັນ ແລະພາລະກິດອັນໂດດເດັ່ນ ຂອງ ທ່ານ ກຶນີມ ພົນເສນາ, ແຕ່ ຄວາມຮູ້ ຂອງຂ້າພະເຈົ້າຍັງໜ້ອຍເກີນໄປ ທຽບໃສ່ຜົນງານ ອັນໃຫຍ່ຫຼວງ ຂອງເພິ່ນ ທີ່ໄດ້ອຸທິດ ຕໍ່ປະເທດຊາດ ຂອງພວກເຮົາ.

ພະນະ ທ່ານ ກຶນີມ ພົນເສນາ, ໃນສະໄໝທີ່ເປັນເຈົ້າແຂວງ (ຂອງ ລະບອບເກົ່າ) ຢູ່ແຂວງຫົວພັນ **<u>ເປັນເຈົ້າແຂວງບຸກທະລຸ ລົບລ້າງລະບອບ ກວາມລ່າມ</u>** ຢູ່ແຂວງ ຫົວພັນເປັນຄັ້ງທຳອິດ. ປະຊາຊົນຊາວ ແຂວງຫົວພັນ ທີ່ທຸກຍາກ ເຄີຍເປັນຂ້ອຍຂ້າ, ຮັບໃຊ້ອາດຍາທຸກຂັ້ນ ທຸກຊັ້ນ ແຕ່ຂັ້ນບ້ານ, ຕາແສງ, ຂັ້ນເມືອງ, ຂັ້ນກິ່ງເມືອງ ແລະຮອດຂັ້ນແຂວງ ຖືກເສຍເງິນຄ່າຫົວ, ຄ່າສັດລ້ຽງ, ແຮງງານຮັບໃຊ້ຕະຫຼອດໄລຍະຫຼາຍສິບປີ. ຈົນຮອດສະໄໝເຈົ້າ ແຂວງ ກຶນີມ ພົນເສນາ ປະກາດລົບລ້າງລະບອບກວາມລາມ ປະຊາຊົນຜູ້ ທຸກຍາກ ຢູ່ແຂວງຫົວພັນ ຈຶ່ງພົ້ນຈາກລະບອບຂູດຮີດ ໄດ້ສ່ວນໃດສ່ວນໜຶ່ງ ຈົນກວ່າແຂວງຫົວພັນ ໄດ້ຮັບການປົດປ່ອຍສົມບູນ ລະບອບກວາມລາມ ຈຶ່ງ ຖືກລົບລ້າງຢ່າງສິ້ນເຊີງ.

ພະນະທ່ານ ກຶນີມ ພົນເສນາ, ເປັນນັກການເມືອງ ທີ່ກ້າວໜ້າ ໃນສະ ໄໝປະເທດຊາດຕົກຢູ່ໃນສະພາບການເມືອງຄັບຂັນໜຶ່ແໜມ. ໃນຊຸມປີ 1959 ຕໍ່ 1960 ສະພາບການປະຕິວັດລາວ ຢູ່ໃນສະພາວະກົ້ວທີ່ສຸດ ປຽບ

ເໝືອນນ້ຳໜັກ 1 ໂຕ່ນເກາະຫ້ອຍເສັ້ນຜົມເສັ້ນດຽວ ບໍ່ຮູ້ຈັກວ່າຈະຂາດຍາມ ໃດ. ສະໄໝນັ້ນກອງພັນທີ່ສອງ ກອງທັບປົດປ່ອຍປະຊາຊົນລາວທີ່ເຂົ້າ ປະສົມ ຢູ່ທີ່ໆໄຫຫີນຊຸງຂວາງຖືກສັດຕູປົດລ້ອມ. ຜູ້ນຳພັກ ແລະ ແນວລາວ ຮັກຊາດ 16 ທ່ານເຂົ້າລວມລາວ ຄັ້ງທີ່ 1ເຊັ່ນ: ປະທານ ສຸພາ ນຸວົງ, ທ່ານ ໜູຮັກ ພູມສະຫວັນ, ທ່ານ ພູມີ ວົງວິຈິດ, ທ່ານ ພູນ ສີປະເສີດ ແລະ ທ່ານ ອື່ນໆ ຖືກພວກປະຕິການຂວາຈັດ ຈັບໃສ່ຄຸກທະຫານ ຢູ່ຄ້າຍໂພນເຄັງໃນ ເວລານັ້ນ ບັນດາປະຊາຊົນ, ຊັ້ນຄົນ, ສາສະໜາ, ຊົນຊາດ, ຊົນເຜົ່າ, ຜູ້ຊົງຄຸນ ວຸດທິ ນັບເປັນໝື່ນເປັນແສນ ທີ່ຮັກຊາດ, ຮັກຄວາມເປັນທຳ ໄດ້ຕໍ່ສູ້ຕ້ານ ສັດຕູ, ໃນນີ້ກໍມີພະນະທ່ານ ກິນິມ ພົນເສນາ, ຫົວໜ້າພັກ ສັນຕິພາບເປັນ ກາງໄດ້ຢືນຂຶ້ນສະໝັກໃຈ ເປັນທະນາຍຄວາມ ຂອງຜູ້ນຳປະຕິວັດ ທີ່ຖືກຂັງ ຄຸກຢູ່ໂພນເຄັງ. ເພິ່ນໄດ້ເຂົ້າພົບກັບຜູ້ນຳຢູ່ໃນຄຸກຫຼາຍຄັ້ງ ແລະ ຕໍ່ສູ້ກັບພວກ ປະຕິການຂວາຈັດ ເພື່ອປົກປ້ອງຜູ້ນຳພັກ ແລະແນວລາວຮັກຊາດ, ສະກັດ ກັ້ນບໍ່ໃຫ້ສັດຕູ ເອົາຜູ້ນຳໄປປະຫານຊີວິດ. ອັນນີ້ແມ່ນໜຶ່ງໃນບັນດາປັດ ໄຈປະກອບສ່ວນເຮັດໃຫ້ຜູ້ນຳປະຕິວັດ ໂຕນອອກຈາກຄຸກໂພນເຄັງຢ່າງ ປອດໄພ.

ພະນະທ່ານ ກິນິມ ພົນເສນາ ແມ່ນນັກການເມືອງຕ່າງປະເທດທີ່ ຄ່ອງຕົວ ໃນປີ 1962 ລັດຖະບານປະສົມ 03 ຝ່າຍ ຂອງລາວໄດ້ຮັບການສ້າງ ຕັ້ງຂຶ້ນ. ພະນະ ທ່ານ ກິນິມ ພົນເສນາ ໄດ້ຮັບການແຕ່ງຕັ້ງເປັນ ລັດຖະມົນຕີ ວ່າການກະຊວງການຕ່າງປະເທດ ຂອງລັດຖະບານປະສົມ 03 ຝ່າຍ ຂອງ ລາວ, ທ່ານ ໄດ້ສະແດງອອກໃຫ້ເຫັນຄວາມສາມາດຄ່ອງຕົວ ໃນການສ້າງ ສາຍພົວພັນທະໄມຕີ ກັບບັນດາປະເທດສັງຄົມນິຍົມ, ກ່ອນອື່ນ ທ່ານ ໄດ້ ເກ້ຍກ່ອມ ເຈົ້າຊີວິດ ແລະນາຍົກລັດຖະມົນຕີ ສະເດັດເຈົ້າ ສຸວັນນະພູມາ ທຳ ການຢ້ຽມຢາມສັນທະວະໄມຕີ ແລະ ສ້າງສາຍພົວພັນການທູດ ກັບປະເທດ ຫວຽດນາມໃນປີ 1962, ຢ້ຽມຢາມຈີນ, ຢ້ຽມຢາມອະດີດສະຫະພາບໂຊ

ຫວຽດ ແລະປະເທດເພື່ອນມິດອື່ນໆ. ສະນັ້ນ ປີ 2012 ລາວ ແລະຫວຽດນາມ ໄດ້ຮ່ວມກັນລະນຶກ ສະເຫຼີມສະຫຼອງ ວັນສ້າງຕັ້ງ ສາຍພົວພັນການທູດ ຄົບ ຮອບ 50 ປີ, ພວກເຮົາບໍ່ອາດລືມໄດ້ພາລະກິດ ຂອງ ພະນະທ່ານ ກີນິມ ພົນ ເສນາ, ລັດ ຖະມົນຕີວ່າການກະຊວງການຕ່າງປະເທດ ໃນຍຸກນັ້ນ.

ໃຜຢູ່ເບື້ອງຫຼັງການເສຍຊີວິດ ພະນະ ທ່ານ ກີນິມ ພົນເສນາ? ພວກ ເຮົາຮູ້ດີແລ້ວ, ໃນລະບອບເກົ່າກໍຄື ລະບອບເມືອງຂຶ້ນ-ເຄິ່ງສັກດິນານັ້ນ ພວກເຮົາເຫັນໄດ້ແຈ້ງວ່າ ພວກກຳອຳນາດປະຕິການຂວາຈັດຈະຈ້ອງມອງ ເບິ່ງໃຜໆກໍ່ຕາມໃນສັງຄົມນັ້ນ. <u>ດ້ານໜຶ່ງ</u> ຖ້າຜູ້ໃດຖືກນຳໃຊ້ເປັນເຄື່ອງມື ຫາກບໍ່ມີປະສິດທິຜົນ, ເຂົາກໍ່ຫາວິທີປັດເຂ່ຍ ດ້ວຍການລັດຖະປະຫານໂຄ່ນ ລົ້ມ ແລ້ວເອົາຜູ້ໃໝ່ມາປ່ຽນແທນ ຕາມຕຳລາໃຊ້ມ້າຫຼາຍໂຕ, ໂຕນີ້ໃຊ້ ການບໍ່ໄດ້ເຂ່ຍຖີ້ມ ເອົາໂຕໃໝ່ມາໃຊ້, ຈະເຫັນແຈ້ງການປ່ຽນນາຍົກ ໃນລະ ບອບເກົ່າກັບໄປຫຼົບມາຫຼາຍຄັ້ງ. <u>ດ້ານສອງ</u> ເຂົາຈອບມອງໃຜມີຄວາມ ກ້າວໜ້າ, ໃຜມີອິດທິພົນໂດດເດັ່ນຂຶ້ນ ເຂົາກໍ່ຫາວິທີຈັດການ, ດັ່ງກໍລະນີ ພະນະ ທ່ານ ກີນິມ ພົນເສນາ, ເປັນນັກການເມືອງ ທີ່ໂດດເດັ່ນ ແລະ ມີທັດ ສະນະ-ກ້າວໜ້າ, ອ່ຽງໄປຫາການປະຕິວັດ, ສັດຕູຈຶ່ງໃຫ້ພວກສືບລາດສະ ການລັບ (ຊີໄອເອ) ຕິດຕາມ ແລະໃຊ້ວິທີຄາດຕະກຳຢ່າງບ້ຽວາດ ໂຫດຮ້າຍ ສາມານ ແລະ ໄຮ້ມະນຸດສະທຳທີ່ສຸດ!.

ແຕ່ການຕໍ່ສູ້ປະຕິວັດ, ເມື່ອມີຄົນໜຶ່ງໄດ້ລົ້ມລົງ ໝື່ນຄົນ ແສນຄົນໄດ້ ລຸກຂຶ້ນ ຈັບປືນຕໍ່ສູ້ຕ້ານສັດຕູ ປົດປ່ອຍປະເທດຊາດ, ລູກຫຼານ ພະນະ ທ່ານ ກີນິມ ພົນເສນາ ສືບຕໍ່ຢູ່ໃນອ້ອມເອິກ ຂອງການປະຕິວັດ, ຂອງພັກ ຂອງ ແມ່ວລາວຮັກຊາດ ແລະ ກ້າວເດີນໄປຕາມເສັ້ນທາງຂອງການປະຕິວັດ ດ້ວຍຄວາມເຊື່ອໝັ້ນ, ເຂົາເຈົ້າໄດ້ຕັ້ງໜ້າຮ່ຳຮຽນ ແລະ ຝຶກຝົນຕົນເອງ, ປະ ກອບສ່ວນ ເຮັດການປະຕິວັດ, ຊຶ່ງໃນປັດຈຸບັນ ແຕ່ລະຄົນລ້ວນແຕ່ມີໜ້າທີ່ມີ ຄວາມຮັບຜິດຊອບໃນຖັນແຖວການນຳຂອງພັກ, ລັດ, ມະຫາຊົນຂັ້ນຕ່າງໆ.

ປະເທດຊາດພວກເຮົາ ມີຜູ້ນຳການປະຕິວັດ, ມີນາຍທະຫານທີ່ເກ່ງກ້າ, ປີຊາສາມາດສະຫຼາດສ່ອງໃສ, ມີນັກຮົບແຂ່ງຂັນວິລະຊົນ ພິລະອາດຫານ ແລະ ມີບັນດານັກຮຽນຮູ້ປັນຍາຊົນຜູ້ຮັກຊາດ, ຊຶ່ງໃນນັ້ນ ກໍມີທ່ານກິ ນິມ ພົນເສນາ ເປັນຜູ້ໜຶ່ງທີ່ໂດດເດັ່ນເປັນແບບຢ່າງໃນດ້ານການຕໍ່ສູ້ເສຍ ສະຫຼະເພື່ອຊາດ ເພື່ອປະຊາຊົນ ແລະ ໄຊຊະນະຂອງການປະຕິວັດ. ໃນ ຖານະແນວໂຮມ ກໍຄືປະຊາຊົນບັນດາເຜົ່າ, ບັນດາຊັ້ນຄົນໃນທົ່ວປະເທດ, ພວກເຮົາຂໍຈົດຈຳຈາລຶກຜົນງານ, ການອຸທິດ ແລະ ຂໍສັນລະເສີນຄຸນງາມ ຄວາມດີ ກໍຄື ກຽດປະຫວັດອັນສູງສົ່ງຂອງທ່ານ ກິນິມ ພົນເສນາ ຕາບ ເທົ່າໃດໆ.

ສຈ. ດຣ. ພັນດວງຈິດ ວົງສາ

“ນ້ຳໃຈຮັກຊາດ ຂອງ ທ່ານ ລຸງ ກິນິມ ພົນເສນາ ທີ່ສະແດງອອກ ຕໍ່ວຽກໃນເວລາເພິ່ນເປັນ ເຈົ້າແຂວງ ແຂວງຫົວພັນ”

ໂດຍ ທ່ານ ໄມສຸກ ໄຊສົມແພງ, ອະດີດ ກຳມະການ ສູນກາງພັກປະຊາຊົນປະຕິວັດລາວ, ອະດີດ ລັດຖະ ມົນຕີ ວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ອະດີດ ປະທານແນວລາວສ້າງຊາດ

ຂ້າພະເຈົ້າ, ໄມສຸກ ໄຊສົມແພງ, ອະດີດສະຫມຽນນາຍກອງ ເມືອງຊ່ອນ ແຂວງຫົວພັນ ໄດ້ພົບ ແລະ ໄດ້ຮັບ ການຊີ້ນຳ-ນຳພາ ຂອງ ທ່ານ ລຸງ ກິນິມ ພົນເສນາ ກ່ຽວກັບວຽກງານຕ້ານຝຣັ່ງ ຢູ່ຊຳເຫນືອ ແຂວງ ຫົວພັນ ແຕ່ທ້າຍປີ 1948 ເຖິງຕົ້ນປີ 1950.

- ສິ່ງຊຸກຍູ້ໃຫ້ຕົນເອງໄດ້ພົບ ມາຈາກສິ່ງທີ່ອຳນວຍໃຫ້ຄືດັ່ງນີ້:

1. ຄັ້ງທີ 01: ເລີ່ມຕົ້ນແຕ່ເວລາ ລຸງ ກິນິມ ພົນເສນາໄປເຖິງ ຊຳ ເຫນືອ, ເພິ່ນຮັບຫນ້າທີ່ ເປັນເຈົ້າແຂວງ ຕາມການແຕ່ງຕັ້ງຈາກ ລັດຖະບານ. ຜູ້ເປັນເຈົ້າແຂວງ ແຂວງຫົວພັນເວລານັ້ນ ແມ່ນເຈົ້າ ຣັດຕະນະປັນຍາ, ລູກຊາຍຂອງເຈົ້າສີສະຫວ່າງວົງ ລູກຄົນລະ ແມ່. ເຈົ້າຣັດຕະນະປັນຍາ ບ່ຍອມມອບຫນ້າທີ່ ດື້ດ້ານຢູ່ບ່ຫນີ. ລຸງ ກິນິມ ກໍ່ເຂົ້ານັ່ງຮ່ວມໂຕະດຽວ ຢູ່ສົ້ນແຕ່ເບື້ອງປະຕູ ຂອງຫ້ອງ ການເຈົ້າແຂວງ. ມີລາຍງານ ແລະ ວຽກໃດເຖິງເຈົ້າແຂວງ ແມ່ນ ລຸງ ກິນິມ ພົນເສນາ ຮັບເອົາກ່ອນ-ອ່ານກວດເບິ່ງແລ້ວ ອັນໃດ ຄວນໃຫ້ ເຈົ້າຣັດຕະນະປັນຍາຮູ້ ເພື່ອແກ້, ເລື່ອງສຳຄັນ ແມ່ນລຸງ ກິນິມ ແກ້. ສຸດທ້າຍ ເຈົ້າຣັດຕະນະປັນຍາ ກໍ່ຕ້ອງໄດ້ມອບສິດ-ຫນ້າທີ່ເຈົ້າແຂວງໃຫ້ ລຸງ ກິນິມ. ຂ້າພະເຈົ້າ ໄດ້ຮັບການມອບ

ຫມາຍຂອງນາຍກອງ ໃຫ້ໄປຮັບເອົາເຈ້າຣັດຕະນະປັນຍາ ຢູ່ຊຳເຫນືອກັບໄປຫລວງພະບາງ ກ່ໄດ້ພົບລຸງ ກິນິມ ແຕ່ບ່ທັນມີການພົວພັນເຖິງວຽກງານ.

2. ຄັ້ງທີ 02: ນາຍກອງ ແຕ່ງໃຫ້ໄປຊຳເຫນືອ ພົບເຈ້າແຂວງ ລາຍງານສະພາບການເມືອງຊ່ອນ. ຂ້າພະເຈ້າ ໄດ້ເດີນທາງໄປຊຳເຫນືອ ມື້ທີ 03 ໄດ້ເຂົ້າໄປກິນເຂົ້າງາຍ ຢູ່ບ້ານປູ່ງ ເມືອງຊຳເຫນືອ ໄກຈາກຊຳເຫນືອ 03 ຫລັກກິໂລແມັດ. ເຂົ້າພັກເຮືອນນາຍບ້ານບ້ານປູ່ງ, ນາຍບ້ານເລ່າໃຫ້ຮູ້ວ່າ: ເຈ້າແຂວງໃຫມ່ ທ່ານ ກິນິມ ພົນເສນາ ມີນ້ຳໃຈຮັກແພງ, ປົກປັກຮັກສາປະຊາຊົນ, ຕ້ານຝຣັ່ງທີ່ໃຊ້ແຮງປະຊາຊົນເກີນຂອບເຂດ, ໂດຍສະເພາະ ແມ່ນປະຊາຊົນທີ່ຖືກເກັບເກນເປັນກຸລີຫາບແບກເປ້ຂົນສິ່ງເຄື່ອງຂອງ, ອາວຸດ ແລະ ສະບຽງອາຫານໃຫ້ກອງທະຫານຝຣັ່ງ ທີ່ອອກຊອກຕີກຳລັງກອງທະຫານລາວອິດສະຫລະ, ໃຊ້ວິທີຢ່າງໂຫດຫ້ຽມເອົາເຊືອກມັດແຂນ ຕິດໃສ່ຄັນຫາບສາຍເປ້ ເພື່ອບ່ໃຫ້ໂຕນຫນີໄດ້. ນັບແຕ່ມື້ໄປ ເຖິງມື້ກັບຄືນເຖິງຊຳເຫນືອ ໂດຍບ່ມີກຳນົດ, ທ່ານເຈ້າແຂວງ ກິນິມ ພົນເສນາ ກ້າຫານຕ່ສູ້ເຊິ່ງຫນ້າກັບຝຣັ່ງ, ໂດຍເອົາກົດຫມາຍຂອງຝຣັ່ງ ແລະ ກົດຫມາຍຂອງລາວ ຕ່ສູ້-ຕ່ວ່າ ສາມາດຈຳກັດໄດ້ ໃນບາງເທື່ອ. ເຈ້າແຂວງຄົນອື່ນທີ່ຜ່ານມາ ບ່ກ້າຄິແນວນັ້ນ, ເຮັດໃຫ້ຕົນເອງຮູ້ວ່າ: ທ່ານ ກິນິມ ພົນເສນາ ມີນ້ຳໃຈຮັກຊາດ ຮັກປະຊາຊົນ.

- ເມື່ອໄປເຖິງຊຳເຫນືອແລ້ວ, ມື້ລຸນມາເຖິງໂມງການ ກ່ໄປໂຮງການເຈ້າແຂວງ ເພື່ອຈະຂໍເຂົ້າພົບເຈ້າແຂວງ. ເມື່ອໄປຮອດໂຮງການເຈ້າແຂວງ, ເຫັນຫມູ່ຂ້າຣາຊະການ ລວມຟັງການເລ່າສະພາບການຢູ່ ເມືອງ ຊຽງຄໍ້ ຂອງ ນາຍຄູ ຄຳເຫລັກ ທີ່ຈາກຊຽງຄໍ້ ໄປຊຳ

ເຫນືອ. ຄູຄຳເຫລັກ ເລົ່າເລື່ອງໄດ້ພົບ ທ່ານ ໄກສອນ ພົມວິຫານ, ໄດ້ຮູ້-ໄດ້ຍິນ ປະຊາຊົນເລົ່າເລື່ອງທະຫານຝຣັ່ງ ໄລ່ຍິງທ້າວສະ ຫມານ ພະນັກງານ ລາວອິດສະຫລະ ເວລາຍ່າງຜ່ານທົ່ງນາ ຈະ ເຂົ້າໄປປ່າ. ຝຣັ່ງ ສຸມຍິງປືນໃສ່ບໍ່ຖືກສະຫມານ ຂ້າມຜ່ານທົ່ງນາ ເຂົ້າໄປປ່າໄດ້ຢ່າງປອດໄພ. ປະຊາຊົນຕັ້ງຊື່ໃຫ້ວ່າ: ທ້າວສະ ຫມານເສືອໂຄ່ງ. ພາກັນຫົວ. ເວລາເລົ່າເລື່ອງບໍ່ທັນສຸດ, ທ່ານ ເຈົ້າແຂວງ ກິນິມ ພົນເສນາ ກໍ່ມາຮອດ. ເພິ່ນຖາມວ່າ: ພວກເຈົ້າ ຫົວມ່ວນເລື່ອງຫຍັງ. ມີຜູ້ຕອບວ່າ: ມ່ວນເລື່ອງໄດ້ຟັງ ຄູຄຳເຫລັກ ເວົ້າເລື່ອງໄດ້ພົບ ທ່ານໄກສອນ ພົມວິຫານ ແລະ ເລື່ອງທະ ຫານຝຣັ່ງໄລ່ຍິງ ທ້າວ ສະຫມານ ທີ່ກຳລັງຍ່າງຜ່ານທົ່ງນາ ແຕ່ບໍ່ ຖືກ, ຈຶ່ງໄດ້ຊື່ວ່າ: ທ້າວສະຫມານເສືອໂຄ່ງ. ເຈົ້າແຂວງ ໄດ້ຈັບ ເອົາແຂນຄູຄຳເຫລັກ ເຂົ້າໄປຫ້ອງຂອງເພິ່ນ ເຮັດໃຫ້ຕົນເອງຮູ້ຕື່ມ ວ່າ: ທ່ານລຸງ ກິນິມ ພົນເສນາ ແມ່ນຄົນຮັກຊາດແທ້. ໄດ້ລໍຖ້າເວ ລາ ຄູ ຄຳເຫລັກ ອອກຈາກຫ້ອງ ຈະເຂົ້າໄປພົບເຈົ້າແຂວງ ໂດຍ ກົງ, ໂດຍບໍ່ຜ່ານຫົວຫນ້າຫ້ອງການ.

ເມື່ອເຫັນຄູຄຳເຫລັກ ອອກ ຈາກຫ້ອງແລ້ວ ຕົນເອງກໍ່ເຂົ້າໄປພົບ ໂລດ. ພາຍຫລັງໄດ້ລາຍງານໃຫ້ ທ່ານ ລຸງເຈົ້າແຂວງ ຮູ້ສະພາບ ການຢູ່ເມືອງຊ່ອນ: ເມືອງ ຊ່ອນ ແມ່ນເມືອງທີ່ມີພົນລະເມືອງພຽງ ແຕ່ 9000 ກວ່າ ຄົນ ຈຶ່ງຍຸບຊື່ເມືອງລົງເປັນກອງ. ປະຈຸບັນ ມີ ແຕ່ນາຍກອງ ແລະ ສະ ຫມຽນ 01 ຄົນ ແມ່ນຂະນ້ອຍ ໄມສຸກ ໄຊສົມແພງ. ເວລານາຍ ກອງບໍ່ຢູ່ ຫລື ເວລາຢູ່, ນາຍກອງໄດ້ ມອບຫນ້າທີ່ ແລະ ສິດແກ້ໄຂ ວຽກງານຕາງນາຍກອງໄດ້. ເມືອງ ຊ່ອນ ເປັນເມືອງນ້ອຍ, ພົນລະເມືອງໂດຍມາກ ແມ່ນເຜົ່າຂ້າ-ແມ້ວ ແລະ ເຜົ່າໄທ-ລາວ ແຕ່ທຸກ ຍາກອິດຢາກຂາດເຂີນ ຍ້ອນ

ຖືກເສຍສ່ວຍອາກອນແຕ່ລະປີ-ເປັນ ກຸລີ ຮັບໃຊ້ຝຣັ່ງ ແລະ ເປັນ ທາດຮັບໃຊ້ຕາແສງນາຍຝຣັ່ງ-ນາຍ ບ້ານ-ເພຍທ້າວເຈົ້າຂຸນ ໂດຍ ບໍ່ມີກຳນົດ. ເຜົ່າແມ້ວ ພັດຖືກເສຍ ພາສີຢາຝິ່ນ ເຮືອນລະ 05 ເບ້ຍ. ເຮືອນບໍ່ໄດ້ເຮັດໄຮ່ສອນຢາຝິ່ນ ກໍ່ຕ້ອງໄດ້ເສຍຄືກັນ. ເວລາ ເຮັດໄຮ່ນາ ພັດຖືກເກັບເກນໄປເປັນ ກຸລີ ແລະ ຮັບໃຊ້ເຮັດໄຮ່ນາ ໃຫ້ ຕາແສງນາຍຝຣັ່ງ-ນາຍບ້ານ-ເພຍທ້າວເຈົ້າຂຸນທີ່ ເປັນພໍ່ລ່ານ ຈຶ່ງຖືກທຸກຍາກອຶດຢາກ-ເຈັບໄຂ້ ໄດ້ພະຍາດ. ບໍ່ມີເງິນເສຍ ສ່ວຍ ສາອາກອນ ຕ້ອງໄປຢືມເງິນນຳພໍ່ລ່ານ, ມີດອກເບ້ຍແຕ່ລະປີ, ບໍ່ມີ ເງິນໃຊ້ແທນ ຫນີ້ເພີ່ມທະວີຂຶ້ນ ຈຳເປັນຕ້ອງຂາຍລູກ ຫລື ສົ່ງລູກ ໄປເປັນຂ້ອຍຮັບໃຊ້ພໍ່ລ່ານ ທີ່ ເປັນເຈົ້າຫນີ້. ຕໍ່ສະພາບດັ່ງກ່າວ ຂໍ ໃຫ້ ທ່ານເຈົ້າແຂວງການນຳ ແກ້ໄຂຊ່ວຍ.

ທ່ານ ກິນິມ ພົນເສນາ ເຈົ້າແຂວງ ໄດ້ຕົກລົງໃຫ້ຍົກເລີກ-ຍົກເວັ້ນ-ຢຸດຕິ ບໍ່ເກັບເກນສ່ວຍສາອາກອນ ນຳປະຊາຊົນຜູ້ທຸກຍາກ ເປັນ ຕົ້ນແມ່ນເຜົ່າຊົນຂ້າ-ແມ້ວ ແລະ ເຜົ່າລາວ-ໄທ ຜູ້ທຸກຍາກ ແລະ ບໍ່ເກັບພາສີຢາຝິ່ນນຳເຜົ່າແມ້ວ. ຕົນເອງດີໃຈ-ຂອບໃຈ ແລ້ວກັບ ຄືນ, ເຮັດໃຫ້ຕົນເຊື່ອຖື ທ່ານເຈົ້າແຂວງ ເປັນຜູ້ຮັກແພງປະຊາຊົນ. ກັບຄືນເຖິງເມືອງຊ່ອນລາຍງານໃຫ້ນາຍກອງ, ນາຍກອງກໍ່ດີໃຈ, ອອກຄຳສັ່ງໃຫ້ທຸກຕາແສງໃນຜົ້ງ ຢຸດຕິການເກັບເສຍສ່ວຍສາອາ ກອນ ນຳເຜົ່າຊົນຂ້າ-ແມ້ວ ແລະ ປະຊາຊົນລາວຜູ້ທຸກຍາກ ແລະ ຢຸດຕິການໃຊ້ແຮງງານຂອງປະຊາຊົນ ຮັບໃຊ້ພໍ່ລ່ານທີ່ຖືປະຊາ ຊົນ ເປັນຂ້າທາດ, ໃຫ້ມີການຕົກລົງກັນ ກ່ຽວກັບກຳນົດວັນ-ເວລາ ຮັບໃຊ້.

3. ການເຂົ້າພົບຄັ້ງທີ 02 ແມ່ນເລື່ອງໄດ້ຮັບຄຳສັ່ງຂອງເຈົ້າແຂວງ ໃຫ້ເກັບເກນເອົາຊາວໜຸ່ມ ໄປເປັນທະຫານໃຫ້ຝຣັ່ງ.

ນາຍກອງ ກໍ່ແຕ່ງໃຫ້ຕົນເອງໄປຊຳເຫນືອ ພົບເຈົ້າແຂວງ. ຕົນເອງ ໄປເຖິງຊຳເຫນືອ ເຂົ້າພົບ ທ່ານ ກົມົມ ພົມເສນາ ເຈົ້າແຂວງ ລາຍງານໃຫ້ເພິ່ນຊາບ: ຊາວຫນຸ່ມເມືອງຊ່ອນ ບໍ່ພຽງແຕ່ທຸກຍາກ, ຍັງຕິດຝີ່ນ, ເຈັບໄຂ, ສຸຂະພາບອ່ອນເພຍ, ຈະເປັນທະຫານໃຫ້ ຝຣັ່ງໄດ້ບໍ ຂໍໃຫ້ ທ່ານ ເຈົ້າແຂວງ ຊ່ວຍຊີ້ນຳແກ້ໄຂ.

ທ່ານ ເຈົ້າແຂວງ ມີຄຳສັ່ງຊີ້ນຳ ໃຫ້ປະຕິບັດດັ່ງນີ້:

- ໃຫ້ເຈົ້າຮັບຜິດຊອບ ອອກຄຳສັ່ງນຳພາ ໃຫ້ທຸກຕາແສງໃນຜ້ຽ ຊຸມສ້າງສຳມະໂນຄົວຄືນໃຫມ່: ເອົາຊື່ຜູ້ທີ່ມີສຸຂະພາບດີ ອອກ ຈາກສຳມະໂນຄົວ. ເຮັດບັນຊີຕ່າງຫາກ ແລ້ວເຕືອນຊາວຫນຸ່ມ ແລະ ປະຊາຊົນ ໃຫ້ຮັກສາຄວາມລັບ ໃຫ້ຊາວຫນຸ່ມຜູ້ທີ່ມີສຸຂະ ພາບທີ່ບໍ່ດີ ເຂົ້າໃນສຳມະໂນຄົວ. ເວລາໃດຈະມີຝຣັ່ງມາກວດເອົາ ຊາວຫນຸ່ມ, ເຈົ້າແຂວງ ຈະມີຈົດຫມາຍບອກໃຫ້ຮູ້ກ່ອນແລ້ວໃຫ້ ເຈົ້າ ບອກຊາວຫນຸ່ມ ຫນີເຂົ້າປ່າລີ້ຕົວ, ໃຫ້ປະຊາຊົນຮັກສາຄວາມ ລັບ.
- ໃຫ້ເຈົ້າພາເອົາຊາວຫນຸ່ມ ທີ່ບໍ່ມີເງື່ອນໄຂຈະເປັນທະຫານໄດ້ນັ້ນ ມາມອບໃຫ້ຝຣັ່ງກວດເອົາ.

ໄດ້ຮັບຄຳສັ່ງຊີ້ນຳແລ້ວ ກໍ່ຂອບໃຈ ແລະ ກັບຄືນເມືອງຊ່ອນລາຍ ງານໃຫ້ນາຍກອງ. ນາຍກອງ ມອບຫມາຍໃຫ້ຕົນເອງປະຕິບັດ. ຕົນເອງ ໄດ້ລົງມືປະຕິບັດ ອອກຄຳສັ່ງແນະນຳໃຫ້ຕາແສງໃນຜ້ຽ. ຕົນເອງ ໄດ້ລົງໄປທຸກຕາແສງໃນຜ້ຽ ນຳພາປະຕິບັດຕາມຄຳສັ່ງ ແນະນຳຂອງເຈົ້າແຂວງ ແລະ ການມອບຫມາຍຂອງນາຍກອງ. ຜົນກວດກາສຳເລັດ ໄດ້ນັດໃຫ້ຊາວຫນຸ່ມໂຮມຄົບຫນ້າ ຢູ່ບ້ານ ເມືອງຍົດ. ຕົນເອງ ໄດ້ໄປລໍຖ້າຢູ່ເມືອງຍົດ, ຊາວຫນຸ່ມໄດ້ມາໂຮມ ຄົບຫນ້າ ຕາມກຳໜົດ. ຕົນເອງ ໄດ້ກວດກາ ແລະ ລຸລ່ວງແນວ

ຄິດ ແລ້ວນຳພາຂະບວນຊາວໜຸ່ມ 167 ຄົນໄປຊຳເໜືອ ພາຂຶ້ນໄປຫາຄ້າຍຝຣັ່ງ ມອບໝາຍໃຫ້ເຂົ້າກວດເອົາ. ຜູ້ກວດມີ ຝຣັ່ງ ແລະ ລາວ. ກວດແຕ່ລະຄົນ ແລ້ວໃຊ້ຕີນເຕະກົ້ນອອກ. ຜົນ ກວດໄດ້ມີ 03 ຄົນ, ເອົາແທ້ 01 ຄົນ, 02 ຄົນສົ່ງກັບຄືນບ້ານ. ເວລາໃດຕ້ອງການ ຈຶ່ງມີຄຳສັ່ງຮຽກເອົາ. ຈົນເຖິງຕົ້ນເດືອນ ປີ 1950 ກໍ່ບໍ່ມີຄຳສັ່ງ. ກອງທະຫານປະຕິວັດ ເຂົ້າໄປຄຸ້ມຄອງເມືອງ ຊ່ອນ. ຖືວ່າເອົາແທ້ແຕ່ 01 ຄົນ.

ໄດ້ພາຊາວໜຸ່ມທັງໝົດ ກັບຄືນ. ຕົນເອງ ເຂົ້າພົບເຈົ້າແຂວງ ລາຍງານໃຫ້ເພີ່ນຊາບ. ເພີ່ນກໍ່ຊົມເຊີຍນຳ.

4. ເຂົ້າພົບຄັ້ງທີ 03: ແມ່ນເລື່ອງເຈົ້າແຂວງ ສັ່ງໃຫ້ທຸກເມືອງສົ່ງສະ ບຽງອາຫານ ໄປລ້ຽງກອງທັບຝຣັ່ງ ເມືອງລະ 02 ເດືອນ. ເມືອງ ຊ່ອນ ຖືກລະດູຝົນຕົກນ້ຳນອງ ແລະ ແມ່ນໄລຍະປະຊາຊົນອຶດ ຢາກ.

   ນາຍກອງ ມອບໜ້າທີ່ໃຫ້ຕົນເອງໄປຊຳເໜືອ ລາຍງານໃຫ້ເຈົ້າ ແຂວງ.

   ຕົນເອງ ໄດ້ເດີນທາງໄປຊຳເໜືອ ເຂົ້າພົບ ທ່ານລຸງ ກີນິມ ພົນ ເສນາ. ພົບຄັ້ງນີ້ ຕົນເອງໄດ້ນັບຖືເພີ່ນເປັນລຸງ, ເປັນຜູ້ນຳພາຜູ້ທຳ ອິດ ໃນໜ້າທີ່ຕ້ານຝຣັ່ງ. ພາຍຫລັງລາຍງານແລ້ວ ທ່ານ ລຸງ ກີ ນິມ ໄດ້ຕົກລົງຊີ້ນຳດັ່ງນີ້:

   ໃຫ້ເຈົ້າເຮັດລາຍງານເຖິງເຈົ້າແຂວງດ່ວນ ວ່າເມືອງຊ່ອນບໍ່ສາ ມາດສົ່ງສະບຽງອາຫານ ລ້ຽງກອງທັບຝຣັ່ງຢູ່ຊຳເໜືອໄດ້ ເພາະ ວ່າ ກອງທັບລາວອິດສະຫລະ ເຂົ້າຄອບຄອງແລ້ວ. ທຸກເສັ້ນທາງ ມີທະຫານສະກັດ, ຂໍໃຫ້ເຈົ້າແຂວງ ສັ່ງເອົາຈາກເມືອງອື່ນແທນ. ຕົນເອງໄດ້ຖາມ ລຸງກີນິມ ພົນເສນາ ວ່າ: ເວລາມາກອງທັບບໍ່

ທັນເຂົ້າເຖິງເມືອງຊ່ອນ. ລຸງກີນິມ ເວົ້າວ່າ: ເຂົາເຈົ້າເດີນທາງຂຶ້ນໄປແລ້ວ ຄືຈະເຖິງແລ້ວ. ຕົນເອງດີໃຈ, ຂອບໃຈ ແລ້ວກັບຄືນ. ລາຍງານໃຫ້ນາຍກອງ ເພິ່ນກໍ່ມອບໃຫ້ຕົນເອງປະຕິບັດ.

- ຕົນເອງ ໄດ້ອອກຄຳສັ່ງໃຫ້ທຸກຕາແສງໃນຜົ້ງ ຢຸດບໍ່ສົ່ງສະບຽງອາຫານ ໄປລ້ຽງຝຣັ່ງຢູ່ຊຳເໜືອ. ຈຳນວນໃດໄດ້ອອກເດີນທາງສົ່ງສະບຽງອາຫານໄປຊຳເໜືອ ໃຫ້ແຕ່ງຄົນນຳດ່ວນ ສັ່ງໃຫ້ເອົາກັບຄືນ. ພາກສ່ວນໃດເອົາໄປເຖິງຊຳເໜືອ ບໍ່ທັນມອບໃຫ້ຝຣັ່ງໃຫ້ເອົາໄປຂາຍໃຫ້ພີ່ນ້ອງພໍ່ຄ້າຈີນ ຢູ່ ຕະຫລາດຊຳເໜືອ. ມີຄົນຖາມໃຫ້ວ່າ: ຢູ່ບ້ານຫ້ວຍ ແລະ ບ້ານຕ່າງໆຂອງເມືອງຊຳເໜືອ.
- ສ່ວນລາຍງານ ສົ່ງໃຫ້ເຈົ້າແຂວງ ໄດ້ຂຽນໃສ່ຊອງໝາຍນ້ຳເໜົາກແດງດ່ວນທີ່ສຸດ. ຕາມຮີດຄອງທ້ອງຖິ່ນຕ້ອງມີເຄື່ອງໝາຍຕິດມັດໃສ່ຊອງ: ມີຂົນປີກໄກ່, ມີໝາກເຜັດແດງ, ມີທອນດິນນ້ອຍ ຈູດໄຟໃຫ້ເປັນຖ່ານສົ້ນໜຶ່ງ. ເຮັດແນວນີ້ຖືວ່າ ດ່ວນທີ່ສຸດ ບໍ່ມີວັນ-ຄືນ, ຄ້າງຢູ່ບ້ານໃດ ບ້ານນັ້ນ ຕ້ອງໄດ້ຮັບໂທດ. ສົ່ງແລ້ວເຊື່ອວ່າ ຈະເຖິງທ່ານເຈົ້າແຂວງ.
- ແຕ່ນັ້ນຕໍ່ມາ ກໍ່ບໍ່ໄດ້ໄປຊຳເໜືອ ພົບທ່ານລຸງ ກີນິມ ພົນເສນາອີກ. ຈົນເຖິງ ສະໄໝລວມລາວ, ຕົນເອງໄປວຽງຈັນ ພັກຢູ່ເຮືອນ ລຸງ ຫນູຮັກ ພູມສະຫວັນ, ເລຂາຄະນະພັກ, ຫົວໜ້າຄະນະຄຸ້ມຄອງພະນັກງານ ແນວລາວຮັກຊາດ, ຂ້າຣາຊະການຂອງຝ່າຍແນວລາວຮັກຊາດ ເຂົ້າລວມລາວ ແລະ ບັນດາກອງທະຫານຝ່າຍປະເທດລາວ ຢູ່ວຽງຈັນ, ກອງພັນທີ 01 - ທີ 02 ຂອງ ຝ່າຍປະເທດລາວ ຢູ່ຊຽງເງິນ ແລະ ທົ່ງໄຫຫີນ. ໄດ້ພົບລຸງ ກີນິມ ພົນເສນາ ຢູ່ເຮືອນ ລຸງ ຫນູຮັກ ຈຶ່ງມີໂອກາດໄດ້ພົບ-ລາຍງານໃຫ້ເພິ່ນຊາບເລື່ອງການເຄື່ອນໄຫວຂອງຕົນ. ລຸງກີນິມ ໄດ້ຊົມເຊີຍ ແລະ

ແນະນຳໃຫ້ເຮັດສຳເລັດໜ້າທີ່ ຂອງຂັ້ນເທິງມອບໝາຍໃຫ້. ແຕ່ນັ້ນມາ ກໍ່ບໍ່ມີໂອກາດ ໄດ້ພົບ. ແຕ່ນັ້ນມາ ຕົນເອງກໍ່ຖືລຸງ ກິນິມ ເປັນຜູ້ນຳພາສຳຄັນຜູ້ໜຶ່ງ, ຈົນເຖິງໄດ້ຮັບຂ່າວ່າຖືກເສຍຊີວິດ-ຍ້ອນສັດຕູຄາດຕະກຳ - ປ້າ ໄພບູນ ພົນເສນາ ກໍ່ຖືກລູກປືນເຈັບສາຫັດ. ຕົນເອງ ໄດ້ຍົກມືນົບໄຫວ້ ສະແດງຈິດໃຈເຄົາລົບ, ສະແດງຄວາມໄຫວ້ອາໄລ ເຖິງດວງວິນຍານຂອງ ລຸງ, ສະແດງ ຄວາມເສົ້າສະຫລົດໃຈຕໍ່ເພິ່ນ ແລະ ອວຍພອນໃຫ້ປ້າຫາຍເຈັບ ເປັນ ພ້ອມລູກຫລານມີສຸຂະພາບແຂງແຮງ.

ເງື່ອນໄຂສະດວກໃຫ້ແກ່ຕົນເອງ ທີ່ໄດ້ຈັດຕັ້ງປະຕິບັດຕາມຄຳສັ່ງ ແນະນຳ ຂອງທ່ານ ລຸງ ກິນິມ ພົນເສນາ ຄືດັ່ງກ່າວນັ້ນ ກໍ່ແມ່ນນາຍກອງ ຄຳສຸກ ສີວົງສາ ທີ່ມີໃຈຄຸງດແຄ້ນໃຫ້ຝຣັ່ງ, ເພາະເຈົ້າເມືອງ ຄຳສິງ ພໍ່ຂອງ ເພິ່ນ ຖືກກອມມີແຊຝຣັ່ງຢູ່ຊຳເໜືອ ວາງແຜນຄາດຕະກຳ ພາໄປລ່າເນື້ອ ແລ້ວຍິງເຈົ້າເມືອງຄຳສິງ ຕາຍຢູ່ປ່າ ແລ້ວຖົ້ມໂທດໃສ່ ຄຳສຸກ ສີວົງສາ ທີ່ແມ່ນລູກຊາຍກົກ ຍິງພໍ່ຕາຍ ເພື່ອຕົນເອງຈະໄດ້ຂຶ້ນເປັນເຈົ້າເມືອງຊຳເໜືອ. ຟ້ອງກັນ-ຕໍ່ສູ້ຕໍ່ວ່າກັນ ເພື່ອບໍ່ໃຫ້ໄດ້ເຂົ້າຄຸກ. ສຸດທ້າຍ ກອມມີແຊ ຢ້ານຄຳສຸກ ຟ້ອງຮອດເຈົ້າຊີວິດຢູ່ຫລວງພະບາງ ແລະ ຫລົກຈາກການແກ້ແຄ້ນ, ກອມມີແຊ ຈຶ່ງສົ່ງຄຳສຸກໄປເປັນເຈົ້າເມືອງ ຢູ່ແຂວງໄຊຍະບູລີ ແລະ ແຫ່ງອື່ນໆ...

ດັ່ງນັ້ນ, ຄຳສຸກ ຈຶ່ງມີຈິດໃຈເປັນເອກະພາບກັບເຈົ້າແຂວງ! ດ້ານ ໜຶ່ງ, ຄຳສຸກ ນາຍກອງຕົນເອງ ໄດ້ເອີ້ນພໍ່ເຖົ້າຕາໃຫ້ເພິ່ນ ເພາະເມຍກົກ ຂອງເພິ່ນ ແມ່ນແມ່ເຖົ້ານາຍຂອງຕົນເອງ. ຕົນເອງ ຖືວ່າ ແມ່ນຫລານຂອງ ເພິ່ນ ທີ່ໄວ້ໃຈໄດ້. ວຽກງານຢູ່ເມືອງຊ່ອນ ໂດຍມາກແມ່ນຕົນເອງ ເປັນຜູ້ປະ ຕິບັດ. ນາຍກອງສ່ອນຫລາຍ ໄປລ່າເນື້ອ ຫາຍິງກວາງ-ຟານຕາມປ່າ ມາ ກິນຢ່າງສະໜຸບໃຈ.

ປະຫວັດການພົວພັນ-ຮັບການຊີ້ນຳ ຂອງ ທ່ານ ລຸງກິນີມ ພົນເສນາ ສົ້ນສຸດພຽງເທົ່ານັ້ນ.

ເພາະສະນັ້ນ, ຂ້າພະເຈົ້າ ໄມສຸກ ໄຊສົມແພງ ຈຶ່ງຂໍຢັ້ງຢືນຄວາມເປັນຈິງ ກ່ຽວກັບນ້ຳໃຈຮັກຊາດ ແລະ ການປະກອບສ່ວນ ເຂົ້າໃນການປະຕິວັດຂອງ ທ່ານ ກິນີມ ພົນເສນາ ແລະ ທ່ານ ປ້າ ໄພບູນ ພົນເສນາ ຜູ້ເປັນພັນລະຍາຂອງເພິ່ນ ໃນສະໄໝການປະຕິວັດຊາດປະຊາທິປະໄຕ ດັ່ງນີ້:

ກ. ໃນລະບອບເກົ່າ:

ຂ້າພະເຈົ້າໄດ້ເຂົ້າເປັນສະໝຸນເຮັດວຽກຢູ່ຫ້ອງການປົກຄອງຂອງເຈົ້າແຂວງ ໂດຍພະຍາ ພູມີ ວົງວິຈິດ ເປັນເຈົ້າແຂວງໆຫົວພັນ. ປີ 1945 ຝາດສິດຍີ່ປຸ່ນ ຍັງເປັນເຈົ້າປົກຄອງ ແຕ່ບໍ່ດົນ ຝາດສິດຍີ່ປຸ່ນຍອມຈຳນົນຕໍ່ກຳລັງແຮງຂອງສຳພັນທະມິດພາກັນແຕກໜີໃນເວລາກາງຄືນ. ຢູ່ຕໍ່ມາບໍ່ດົນພະຍາ ພູມີ ວົງວິຈິດ ໄດ້ຂ່າວວ່າໄດ້ເຂົ້າຮ່ວມຂະບວນການຮັກຊາດ ຢູ່ແຂວງຫຼວງພະບາງໂຄ່ນລົ້ມເຈົ້າຊີວິດ. ຂະບວນການຮັກຊາດຢຶດອຳນາດແລ້ວໄປວຽງຈັນ. ລັດຖະບານ ລປລ ໂດຍພະຍາຄຳມ້າວວິໄລເປັນນາຍົກ ໄດ້ແຕ່ງຕັ້ງໃຫ້ພະຍາພູມີ ວົງວິຈິດກັບຄືນເປັນເຈົ້າແຂວງໆ ຫົວພັນ. ເມື່ອກັບຄືນເຖິງຊຳເໜືອກາງເດືອນຕຸລາ 1945 ໄດ້ພົບທ່ານ ເລຮຽມ ມາຍທີ່ປຶກສາກອງພົນ 52 ກອງທັບຫວຽດມິງ. ຫຼັງຈາກກອງທັບຫວຽດມິງກັບຄືນປະເທດພາຍຫຼັງຕີຝຣັ່ງຢູ່ເມືອງລາບ ເມືອງຫົວເມືອງ ຢຶດໄດ້ອາວຸດອຸປະກອນສະບຽງອາຫານຕ່າງໆ ແລ້ວໄດ້ຖອນທັບກັບຄືນຫວຽດນາມ. ຕໍ່ມາບໍ່ດົນພະຍາ ພູມີ ວົງວິຈິດໄດ້ໜີໄປອີກ. ແຂວງຫົວພັນມີເຈົ້ານາຍຜັດປ່ຽນກັນເປັນເຈົ້າແຂວງເຖິງຕົ້ນປີ 1946 ທະຫານຝຣັ່ງ 1 ກອງພັນໄດ້ເຂົ້າຢຶດຄອງຊຳເໜືອ ແຂວງຫົວພັນ. ອຳນາດການປົກຄອງແຂວງໄດ້ຮັບໃຊ້

ຝຣັ່ງ. ເຖິງກາງປີ 1947 ເຈົ້າແຂວງໄດ້ຕົກລົງໃຫ້ຕົນເອງໄປເປັນສະໝຸນ ໃຫ້ນາຍກອງເມືອງຊ່ອນໂດຍແມ່ນຜູ້ຊ່ວຍຊຸງທຸນບຸນລືໄຕເປັນນາຍກອງ. ຊຸງທຸນເປັນຮອງນາຍກອງເມືອງຊ່ອນຫຼາຍປີແລ້ວເປັນຄົນຂູດຮີດ, ຮ້າຍ ດ່າ, ປັບໃໝ ຈົນຮັ່ງມີນຳກາມຂູດຮີດປະຊາຊົນແມ້ວ (ມົ້ງ) ຈັບນາຍບ້ານ 5 ຄົນເຂົ້າຄອກຄັບແຄບ. ກົນກັບທີ່ຂີ້ຍ່ຽວກັບບ່ອນ, ເຮັດໃຫ້ພີ່ນ້ອງຊາວມົ້ງ ຄຸງດແຄ້ນແຮງອອກຄອກຂັງແລ້ວກັບໄປຢູ່ບ້ານປຸກລະດົມກັນສ້າງຕັ້ງກອງ ທະຫານຂຶ້ນ 2 ກອງຮ້ອຍ ຢູ່ຜີ້ງເມືອງກູດ ແລະ ຕາແສງເມືອງເປີ. ນອກນັ້ນ ບ່ອນອື່ນກໍ່ກຽມກຳລັງຄືກັນເພື່ອເຮັດເສິກຈັບຂ້ານາຍກອງຊຸງທຸນ. ຊຸງທຸນ ໂຕນໜີໄປຊຳເໜືອ, ເຈົ້າແຂວງໄດ້ສັ່ງເອົາຜູ້ຊ່ວຍຄືຄຳສຸກສິງວົງສາ ເຈົ້າ ເມືອງໆວຸງພູຄາ ແຂວງໄຊຍະບູລີ ມາເປັນນາຍກອງເມືອງຊ່ອນໄດ້ພົບ ເຈົ້າຟ້າລາວພາ ແລະ ຄະນະບັນຊາ 2 ກອງຮ້ອຍຕົກລົງແກ້ໄຂກັນໄດ້ ໂດຍສັນຕິ.

ຢູ່ແຂວງກໍ່ມີພະນະທ່ານ ກົນິມ ພົນເສນາ ເປັນເຈົ້າແຂວງ ປ່ຽນ ແທນເຈົ້າຣັດຕະນະປັນຍາລູກມືຂອງຝຣັ່ງ. ຂ້າພະຈົ້າໄປຊຳເໜືອເພື່ອລາຍ ງານສະພາບການຢູ່ເມືອງຊ່ອນ ໄດ້ເຫັນຕົວຈິງ ແລະ ຮູ້ວ່າທ່ານເຈົ້າແຂວງ ກົນິມໄດ້ຕໍ່ສູ້ຝຣັ່ງດ້ວຍກົດໝາຍ ເພື່ອປົກປ້ອງປະຊາຊົນທີ່ຝຣັ່ງເກນເອົາໄປ ເປັນກູລີຂົນສິ່ງຫາບແບກເປ້ອາວຸດອຸປະກອນສະບຽງອາຫານຈາກຊຳເໜືອ ໄປແຕ່ລະເມືອງໂດຍບໍ່ມີກຳນົດ. ເຂົາໄດ້ເອົາເຊືອກມັດແຂນຕິດໃສ່ຄາມ ຫາບ-ສາຍເປ້ ແລະ ເລື່ອງອື່ນໆທີ່ຝຣັ່ງກະທຳຢ່າງໂຫດຮ້າຍ.

ເມື່ອຮູ້ວ່າເຈົ້າແຂວງເປັນຄົນຮັກແພງປະຊາຊົນ, ຕົນເອງຈຶ່ງເຂົ້າ ໄປພົບເພິ່ນຢູ່ຫ້ອງເຮັດວຽກຂອງເພິ່ນເພື່ອລາຍງານສະພາບການເມືອງ ຊ່ອນໃຫ້ເພິ່ນຮູ້ໂດຍເພິ່ນຕັ້ງໃຈຮັບຟັງ. ເພິ່ນກໍ່ຮູ້ໄດ້ປະຫວັດຊາດສະໄໝ ເຈົ້າຟ້າປົດໄຈຕີຝຣັ່ງ ແລະ ເຈົ້ານາຍອາດຍາສິດລາວໃນທົດສະວັດທີ 10 ແລະ 20. ພາຍຫຼັງລາຍງານສຸດແລ້ວ ທ່ານເຈົ້າແຂວງກົນິມ ພົນເສນາ ໄດ້

ໃຫ້ຄຳຊີ້ນຳຄືດັ່ງນີ້:

1. ໃຫ້ຢຸດຕິບໍ່ເກັບເອົາເງິນເສ້ສ່ວຍສາອາກອນນຳປະຊາຊົນເຜົ່າ ແມ້ວ-ຂ້າ ແລະ ຄົນລາວຜູ້ທຸກຍາກ.
2. ບໍ່ໃຫ້ເກັບພາສີຢາຝິ່ນນຳປະຊາຊົນເຜົ່າແມ້ວ.
3. ບໍ່ເກັບເກນເອົາຊາຍໜຸ່ມໄປເປັນທະຫານໃຫ້ຝຣັ່ງ. ໃຫ້ເຈົ້າປະຕິບັດເອງບໍ່ເຮັດເປັນຄຳສັ່ງ. ໃຫ້ໄປພົບທຸກຕາແສງ ບາງຜົ້ງບອກໃຫ້ຂຸນປົ້ມສຳມະໂນຄົວພົນລະເມືອງຄົນໃໝ່. ເອົາຊື່ຊາຍໜຸ່ມຜູ້ທີ່ມີສຸຂະພາບດີນັ້ນອອກເຮັດບັນຊີຕ່າງຫາກແລ້ວເຕືອນເຂົາເຈົ້າໄວ້ເວ ລາໃດຝຣັ່ງຈະແຕ່ງຕັ້ງຄົນໄປກວດເອົາຊາວໜຸ່ມຂ້ອຍຈະຂຸນເຈ້ຍ ໝາຍໄປໃຫ້ເຈົ້າ-ເຈົ້າຈົ່ງສັ່ງໃຫ້ຊາຍໜຸ່ມດັ່ງກ່າວໜີໄປລ້ຽ່ຢູ່ປ່າ ບ່ອນປິດລັບ ແລະ ເຕືອນໃຫ້ປະຊາຊົນຮັກສາຄວາມລັບໃຫ້ຊາວ ໜຸ່ມ. ແລ້ວໃຫ້ເຈົ້າໄປເລືອກເອົາຊາຍໜຸ່ມຜູ້ທີ່ມີສຸຂະພາບບໍ່ດີເຈັບ ເປັນພະຍາດປະຈຳຕົວກິນຢາຝິ່ນຈ່ອຍຜອມທີ່ຈະເປັນທະຫານບໍ່ ໄດ້ນັ້ນມີເທົ່າໃດ. ໃຫ້ເຈົ້າພາເອົາມາມອບໃຫ້ຝຣັ່ງຢູ່ຊຳເໜືອ ກວດ ເອົາ. ຕົນເອງດີໃຈຮັບປະຕິບັດຕາມຄຳສັ່ງຊີ້ນຳ. ຕົນເອງໄດ້ພາ ເອົາຊາຍໜຸ່ມທີ່ສຸຂະພາບບໍ່ດີໄດ້ 167 ຄົນເອົາໄປມອບໃຫ້ຝຣັ່ງຢູ່ ຊຳເໜືອກວດເອົາ. ເຫັນການກວດແຕ່ລະຄົນແລ້ວໃຊ້ຕົນເຕະກົ້ນ ອອກຊຶ່ງໝາຍຄວາມວ່າບໍ່ເອົາ. ກວດໝົດແລ້ວພໍເອົາໄດ້ແຕ່ 2 ຄົນ. ເອົາແທ້ 1 ຄົນ. 1 ຄົນສົ່ງຄືນໄປບ້ານເວລາໃດຕ້ອງການຈະ ສັ່ງເອົາ. ຕົນເອງ ແລະ ຊາຍໜຸ່ມທຸກຄົນດີໃຈພາກັນກັບຄືນ. ຕົນ ເອງເຂົ້າພົບລາຍງານໃຫ້ເຈົ້າແຂວງຮູ້, ເພີ່ນຊົມເຊີຍນຳ.
4. ມີຄຳສັ່ງຂອງເຈົ້າແຂວງເປັນທາງການໃຫ້ທຸກເມືອງເກັບເກນ ເອົາສະບຽງອາຫານມີຊື່ລາຍການຄັກແນ່. ແຕ່ລະເມືອງລ້ຽງຝຣັ່ງ ຢູ່ຊຳເໜືອ 2 ເດືອນ. ເມືອງຊ່ອນຕົກໃສ່ລະດູຝົນ ປະຊາຊົນອຶດ

ເຂົ້າທຸກຍາກ ນາຍກອງຄຳສຸກສິງວົງສາແຕ່ງຕັ້ງໃຫ້ຕົນເອງ ໄປ ພົບເຈົ້າແຂວງອີກຫຼັງຈາກພົບລາຍງານແລ້ວທ່ານເຈົ້າແຂວງເວົ້າ ວ່າບໍ່ຍາກ ໃຫ້ເຈົ້າກັບຄືນໄປແລ້ວເຮັດລາຍງານເຊັນຊື່ປະທັບຕາ ນາຍກອງໃສ່ແລ້ວສົ່ງໃຫ້ເຈົ້າແຂວງດ່ວນວ່າເມືອງຊ່ອນມີກອງທະ ຫານລາວອິດສະລະເຂົ້າຢຶດຄອງແລ້ວເພີ່ນສັ່ງຫ້າມວ່າບໍ່ໃຫ້ສົ່ງສະ ບຽງອາຫານໄປລ້ຽງຝຣັ່ງຢູ່ຊຳເໜືອທະຫານອິດສະລະສະກັດລັດ ທາງໝົດແລ້ວລາຍງານໃຫ້ສົ່ງໄປທາງເມືອງຫົວເມືອງ-ເມືອງ ເປັນເມືອງຮານ-ບໍ່ໃຫ້ສົ່ງມາທາງເມືອງຍຶດ. ເຈົ້າແຂວງຈະສັ່ງໃຫ້ ເມືອງຊຳເໜືອລ້ຽງ. ຕົນເອງດີໃຈກັບຄືນໄດ້ຖາມເຈົ້າແຂວງວ່າ ມີ ກອງທັບອິດສະລະຂຶ້ນໄປເມືອງຊ່ອນແທ້ບໍ່-ເພາະວ່າເວລາຂ້າ ນ້ອຍມາບໍ່ທັນມີ. ເຈົ້າແຂວງໃຫ້ຮູ້ວ່າພວກເພີ່ນກຳລັງເດີນທາງ ຂຶ້ນໄປ, ເຈົ້າໄປຮອດເມືອງຊ່ອນຈະພົບພວກເພີ່ນຍິ່ງເຮັດໃຫ້ຕົນ ເອງດີໃຈ ແລະ ເຊື່ອຖືພະນະທ່ານກົນິມເປັນຄົນຮັກຊາດ. ຖືເພີ່ນ ເປັນຜູ້ນຳພາຕົນເອງ ແລະ ກໍ່ເຂົ້າໃຈວ່າເພີ່ນມີການພົວພັນກັບ ທ່ານຜູ້ນຳແນວລາວອິດສະລະແລ້ວ. ຕົນເອງກັບຄືນເຖິງເມືອງຍຶດ ໄດ້ພົບທະຫານຫວຽດນາມໜຶ່ງໝູ່ໂອ້ລົມກັນ. ພວກເພີ່ນໃຫ້ຮູ້ວ່າ ກອງບັນຊາການທະຫານສ່ວນຫຼາຍຢູ່ເມືອງຊ່ອນ. ໄປເຖິງເມືອງ ຊ່ອນຂຶ້ນເຮືອນໄປເຫັນທະຫານ1 ໝູ່ພັກຢູ່ເຮືອນຂອງຕົນເອງມີ ພະນັກງານການເມືອງ1ຄົນນັ່ງລົມກັບພໍ່ເຖົ້າຂອງຕົນຢູ່ຊື່ວ່າຄຳ ທອງ ຮູ້ພາສາລາວດີ ທັງຮູ້ພາສາມົ້ງສຽງປາກຄືຄົນຊຽງຂວາງ. ຕົນເອງກໍ່ນັ່ງລົມກັບເພີ່ນ. ມື້ລຸນມາໄດ້ລົງໄປບ້ານຊ່ອນໃຕ້ ເພາະ ກອງບັນຊາການທະຫານລາວຫວຽດນາມ ແລະ ຫົວໜ້າກອງພະ ນັກງານສ້າງຮາກຖານການເມືອງພັກຢູ່ເຮືອນຕາແສງເພຍຄຳ (ໄມຊະນະທີ່ຊ່ອນໃຕ້) ຜູ້ເປັນຫົວໜ້າກອງພະນັກງານການເມືອງ

ແມ່ນທ້າວໂອ ວົງສະວັນ (ທງວ່ງນຢາລ້າຍ) ຄົນຫວຽດນາມ-ອະ ດີດເປັນແພດຊັ້ນກາງເຮັດວຽກຢູ່ວຽງຈັນຮູ້ພາສາໜັງສືລາວດີ. ຜູ້ທີສອງບັນຊາກອງນ້ຳຊຳແມ່ນທ່ານ ພາ ເພັດສະວົງ ພີ່ນ້ອງຂອງ ຕົນໄດ້ຮູ້ກັນດີແຕ່ເວລາເປັນນັກຮຽນປະຖົມຢູ່ຊຽງຄໍ້ ເຮືອນກໍ່ມ໋ກັນ ຂັ້ນແຕ່ທາງ. ຜູ້ທີ່ 3 ຫົວໜ້າບັນຊາກອງຮ້ອຍ 160 ຫວຽດນາມ ຊື່ ທ້າວສະຫວ່າງ ທງວຽນວັນເຮືອງ ຮູ້ພາສາລາວໜັງສືລາວດີກໍ່ ແມ່ນຄົນຫວຽດເຮັດວຽກຢູ່ລາວໃນສະໄໝຝຣັ່ງປົກຄອງ. ຕົນເອງ ລາຍງານສະພາບການໃຫ້ພວກເພິ່ນສຳເລັດແລ້ວຖາມພວກເພິ່ນ ວ່າຈະໃຫ້ເຮົາເຮັດວຽກຊ່ວຍແນວໃດ? ພວກເພິ່ນຕອບວ່າໄລຍະ ຕົ້ນນີ້ໃຫ້ເຈົ້າເຮັດໜ້າທີ່ນາຍກອງອອກຄຳສັ່ງໃຫ້ທຸກຕາແສງນາຍ ຜ້ງທັນປ່ຽນແນວຄິດຈິດໃຈປະໃຈເກົ່າສ້າງໃຈໃໝ່ໄປນຳການປະຕິ ວັດກູ້ຊາດຕ້ານຝຣັ່ງແລະພວກລູກມືຂາຍຊາດ. ໃຫ້ຕາແສງນາຍ ຜ້ງປະຊາຊົນທຸກເຜົ່າຮ່ວມມືຮ່ວມຈິດຮ່ວມໃຈກັບພະນັກງານນັກ ຮົບລາວ-ຫວຽດນາມເຮັດໜ້າທີ່ປ້ອງກັນບ້ານເມືອງ ຕີຝຣັ່ງລູກມື ລ້ຽງດູຊ່ວຍເຫຼືອກອງທະຫານ ແລະ ພະນັກງານນັກຮົບປ້ອງກັນ ພະນັກງານນັກຮົບ ແລະ ອື່ນໆ. ວຽກດ່ວນໃຫ້ອອກຄຳສັ່ງລະດົມ ເອົາແຮງງານຂອງປະຊາຊົນທັບມ້າງປົດຄ້າຍເກົ່າຂອງຝຣັ່ງຢູ່ ບ້ານຊ່ອນເໜືອທີ່ແມ່ນຕົກຄ້າຍໃຫຍ່ແໜ້ນໜາ ບໍ່ໃຫ້ສັດຕູອາໃສ ຢູ່ໄດ້. ຕົນເອງເວົ້ານຳພວກເພິ່ນວ່າເມືອງຊ່ອນເປັນເມືອງນ້ອຍໃສ່ ຊື່ກອງ ແຕ່ສິດອຳນາດທຸກຢ່າງຄືເມືອງອື່ນໆ ມີທະຫານປາກຕີຊ້ຽງ ແຕ່ 1 ໝູ່. ມື້ອື່ນໃຫ້ແຕ່ງອ້າຍນ້ອງໄປຮັບເອົາອາວຸດ, ປືນ, ລູກປືນ ລູກແຕກ ນຳເຂົາເຈົ້າເພາະເຮົາໄດ້ສັ່ງໃຫ້ເຂົາເຈົ້າກຽມແລ້ວ. ຕົນ ເອງເຮັດໜ້າທີ່ນາຍກອງຊົ່ວຄາວເດືອນກ່ວາ. ພາຍຫຼັງທຸກຕາ ແສງນາຍຜ້ງ ແລະ ປະຊາຊົນທັນປ່ຽນຈິດໃຈຮ່ວມມືກັບການປະ

ຕີວັດໄດ້ແລ້ວພວກເພິ່ນຈຶ່ງຕົກລົງຮັບເອົາຕົນເອງເຂົ້າເປັນຄົນປະຕີວັດ.

ຂ. ໄລຍະເຂົ້າຮັບໃຊ້ການປະຕີວັດກູ້ຊາດ:

- ວັນທີ 10.6.1950 ມີກອງປະຊຸມພະນັກງານຮາກຖານຢູ່ໂຮງຮຽນບ້ານຊ່ອນໃຕ້. ຕົນເອງເຂົ້າຮ່ວມ. ຜູ້ເປັນປະທານນຳພາກອງປະຊຸມນີ້ແມ່ນທ່ານພາ ເພດຊະວົງ ຜູ້ບັນຊາກອງຮ້ອຍນ້ຳຊຳ. ຜູ້ທີ 2 ແມ່ນທ້າວ ໂອ ວົງສະວັນ ຫົວໜ້າກອງພະນັກງານສ້າງຮາກຖານການເມືອງ.
- ໃນກອງປະຊຸມນີ້ທ່ານ ພາ ເພັດສະວົງໄດ້ປະກາດແຕ່ງຕັ້ງໃຫ້ຕົນເອງເປັນຮອງປະທານປົກຄອງເມືອງຊ່ອນແລະຮັກສາການປະທານປົກຄອງເມືອງຊ່ອນເພາະບໍ່ທັນແຕ່ງຕັ້ງປະທານປົກຄອງເມືອງ. ຕົນເອງໄດ້ມີຄຳເຫັນຕໍ່ກອງປະຊຸມວ່າ: ຕົນເອງກໍ່ແມ່ນຄົນຮັກຊາດຮັກປະຊາຊົນຜູ້ໜຶ່ງໂດຍສະເພາະກໍ່ແມ່ນປະຊາຊົນເມືອງຊ່ອນທີ່ແມ່ນບ້ານເກີດເມືອງນອນຂອງຕົນ. ບັນດາທ່ານກໍ່ຮູ້ມາແລ້ວໃນເວລາພວກເຂົາເຮັດວຽກຮັບໃຊ້ລະບອບເກົ່າຕົນເອງເຮັດກັບປະຊາຊົນເມືອງຊ່ອນຄືແນວໃດ. ໄດ້ນຳພາພີ່ນ້ອງຕ້ານຝຣັ່ງມາແລ້ວຄືແນວໃດ? ດຽວນີ້ໂອກາດດີມາຮອດແລ້ວເຮົາໄດ້ຮັບແຕ່ງຕັ້ງຈາກກອງປະຊຸມຂໍປະຕິຍານຕົນເອງເດັດດ່ຽວນຳພາພວກທ່ານ ແລະ ປະຊາຊົນເຮັດການປະຕີວັດ.
- ຜ່ານໄລຍະການເຮັດວຽກແຕ່ເດືອນ 6 ເຖິງເດືອນ 10 ປີ 1950 ມີກອງປະຊຸມໃຫຍ່ຜູ້ແທນປະຊາຊົນຫົວເມືອງ ຕົນເອງໄດ້ຮັບແຕ່ງຕັ້ງໃຫ້ເປັນປະທານຄະນະກຳມະການປົກຄອງເມືອງຊ່ອນ ຕໍ່ນັ້ນມາກໍ່ໄດ້ຮັບຄຳສັ່ງຂອງສູນກາງແນວລາວອິດສະລະແລະລັດຖະ

ບານລາວຕໍ່ຕ້ານຕະຫຼອດມາ.

- ເຖິງສະໄໝລອມລາວຄັ້ງທີໜຶ່ງຈຶ່ງໄດ້ພົບ ທ່ານ ກິນິມ ພົນເສນາ ຢູ່ຊຳເໜືອເວລາເພິ່ນເປັນ ລັດຖະມົນຕີກະຊວງການຕ່າງປະເທດ ມາ ນຳຄະນະລັດຖະບານໂດຍສະເດັດເຈົ້າສຸວັນນະພູມາເປັນນາ ຍົກ ລັດຖະມົນຕີ ພົບປະເຈລະຈານຳບັນດາຜູ້ນຳສູນກາງແນວ ລາວອິດ ສະລະທີ່ປ່ຽນມາເປັນແນວລາວຮັກຊາດ ນຳໂດຍສະເດັດ ເຈົ້າສຸພາ ນຸວົງ ແຕ່ບໍ່ມີໂອກາດໄດ້ພົບລົມກັບທ່ານ ກິນິມ ພົນເສ ນາ ມີແຕ່ ຫຼຽວເຫັນກັນ.

ໄດ້ພົບໂອ້ລົມກັບທ່ານ ກິນິມ ຢູ່ເຮືອນຂອງທ່ານ ໝູຮັກ ພູມສະ ຫວັນທີ່ຄຸ້ມນາໄຮ່ດຽວ ວຽງຈັນດ້ວຍບັນຍາກາດຈິດໃຈອັນດີ. ຕົນເອງກໍ່ໄດ້ ລາຍງານໃຫ້ເພິ່ນຮູ້ເລື່ອງຕົນເອງເຮັດການປະຕິວັດ. ຫຼັງຈາກໄດ້ຮັບຄຳຊີ້ ນຳນຳພາຂອງເພິ່ນ ຕໍ່ມາກໍ່ຕິດຕາມເບິ່ງການເຄື່ອນໄຫວຮັກຊາດຂອງເພິ່ນ ຕະຫຼອດມາຈົນເຖິງວັນເພິ່ນຖືກເສຍຊີວິດຍ້ອນລູກມືຂອງສັດຕູຍິງ. ຂ້າງ ເທິງນີ້ໄດ້ເລົ່າຄືນເລື່ອງໄດ້ພົບ ແລະ ຮັບເອົາຄຳຊີ້ນຳນຳພາຂອງເພິ່ນ.

2. ກ່ຽວກັບ ທ່ານ ປ້າໄພບູນ ພົນເສນາ ພັນລະຍາທ່ານ ກິນິມ ພົນ ເສນາ

ທ່ານ ປ້າ ໄພບູນ ພົນເສນາ ກໍ່ແມ່ນຄົນຮັກຊາດຜູ້ໜຶ່ງທີ່ໄດ້ປະ ກອບສ່ວນຮ່ວມຈິດຮ່ວມໃຈກັບສາມີເຄື່ອນໄຫວນຳແນວລາວຮັກຊາດຕະ ຫຼອດມາ. ປ້າ ໄພບູນ ກໍ່ຖືກລູກປືນຍິງບາດເຈັບໜັກພ້ອມກັບສາມີຂອງ ເພິ່ນ. ພາຍຫຼັງປົວດີແລ້ວ ກໍ່ເປັນຄົນເສຍອົງຄະແຕ່ກໍ່ຍັງສືບຕໍ່ເຄື່ອນໄຫວ ປະກອບສ່ວນນຳການປະຕິວັດຕະຫຼອດມາເຖິງວັນສຸດທ້າຍຂອງຊີວິດ. ລູກ ຫຼານຂອງເພິ່ນທຸກຄົນ ລ້ວນແຕ່ໄດ້ເຮັດວຽກປະກອບສ່ວນໃນການປະຕິວັດ ແລະ ພັດທະນາສ້າງສາລະບອບໃໝ່ເຖິງປັດຈຸບັນ.

ໃນໄລຍະປີ 1964 ປ້າ ໄພບູນ ພົນເສນາໄດ້ເອົາເງິນສ່ວນຕົວ

36.000 ໂດລາສະຫະລັດມອບໃຫ້ສູນກາງພັກ. ຜູ້ຮັບເອົາແມ່ນ ທ່ານ ໜູຮັກ ພູມສະຫວັນ ຜູ້ປະຈຳການກົມການເມືອງສູນກາງພັກ ແລ້ວໄດ້ເອົາ ຈຳນວນເງິນ ດັ່ງກ່າວໄປຝາກໄວ້ຢູ່ທະນາຄານຫວຽດນາມ.

ໄປເຖິງຮ່າໂນ້ຍທ່ານ ໜູຮັກໄດ້ພົວພັນກັບຄະນະເຊເປ31(CP 31). ຜູ້ມາພົບທ່ານ ໜູຮັກ ແມ່ນທ່ານ ດິງວັນແຄງ ຮອງຫົວໜ້າອົງການເຊ ເປ31 ທີ່ແມ່ນຕາງໜ້າສູນກາງພັກກອມມຸນິດຫວຽດນາມ ເຮັດໜ້າທີ່ຊ່ວຍ ລາວໂດຍກົງ ສືບທອດຄະນະພັກແຄ້ວນລາວໃນອະດີດ. ມີຕົນເອງເຂົ້າ ຮ່ວມນຳໃນຖານະເປັນຫົວໜ້າຫ້ອງການ 98 ຊຶ່ງແມ່ນຫ້ອງການປິດລັບ ຕາງໜ້າ ສູນກາງພັກປະຊາຊົນປະຕິວັດລາວ ພົວພັນກັບບັນດາປະເທດ ສັງຄົມນິຍົມ ອ້າຍນ້ອງຂໍການຊ່ວຍເຫຼືອ-ຮັບເອົາການຊ່ວຍເຫຼືອຄຸ້ມຄອງ ແລະ ຈັດສົ່ງໃຫ້ທຸກພາກຂອງລາວຕາມຄຳສັ່ງແຜນການຂອງສູນກາງພັກ. ໄດ້ຕົກລົງໃຫ້ຫົວໜ້າຮັບຜິດຊອບການເງິນຂອງອົງການເຊເປ31 ແລະ ຫົວ ໜ້າການເງິນຂອງຫ້ອງການ98ທີ່ແມ່ນ ສະຫາຍຫວຽດນາມຮັບຜິດຊອບ ເອົາເງິນຈຳນວນດັ່ງກ່າວໄປຝາກໄວ້ຢູ່ທະນາຄານຂອງຫວຽດນາມທີ່ນະ ຄອນຫຼວງຮ່າໂນ້ຍ. ໃບຢັ້ງຢືນຮັບຝາກເງິນຕົນເອງກໍ່ບໍ່ໄດ້ເຫັນນຳອາດ ແມ່ນການເງິນຂອງເຊເປ31 ມອບໃຫ້ທ່ານ ໜູຮັກ ພູມສະຫວັນ ເພື່ອສະ ດວກເວລາຕົນມາຮັບເອົາເງິນໃຊ້ຈ່າຍເຂົ້າໃນວຽກງານປະຕິວັດອັນຈຳ ເປັນ.

- ຈົນມາຢູ່ວຽງຈັນປ້າໄພບູນຈິ່ງເວົ້ານຳຕົນເອງວ່າໃຫ້ເຮັດໃບຢັ້ງຢືນ ຮັບຮູ້ ເລື່ອງມອບເງິນຈຳນວນ 36000 ໂດລາໃຫ້ລຸງໜູຮັກ ພູມສະຫວັນ. ຕົນເອງກໍ່ ໄດ້ຂຽນໃບຢັ້ງຢືນຮັບຮູ້ ແລ້ວເອົາໃຫ້ລຸງໜູຮັກ ພູມສະຫວັນເບິ່ງ ເພິ່ນເຫັນດີແລ້ວ ກໍ່ເອົາໄປມອບໃຫ້ປ້າໄພບູນ. ຕໍ່ມາບໍ່ດົນປ້າໄພບຸນປ່ວຍ ໄຂ ແລະເສຍຊີວິດ. ລູກຫຼານ ຂອງເພິ່ນຊອກຫາໃບຢັ້ງຢືນຮັບຮູ້ນັ້ນບໍ່ເຫັນ ຈົນ ມາເຖິງວັນທີ 8.3.2013, ລູກສາວ ແລະ ລູກໃພ້ ຂອງປ້າໄພບູນຈິ່ງ

ມາພົບໃຫ້ຕົນເອງຂຽນໃບຮັບຮູ້ຢັ້ງຢືນໃຫ້ອີກ ຈຶ່ງໄດ້ຂຽນໃບຢັ້ງຢືນຮັບຮູ້ ສະບັບນີ້ ໃຫ້ລູກຫຼານຂອງເພິ່ນແທນສະບັບກ່ອນ.

ຂໍໃຫ້ການນຳອົງການຈັດຕັ້ງພັກ-ລັດຂັ້ນເທິງຮັບຮູ້ເປັນທາງການ

ນະຄອນຫລວງວຽງຈັນ, 11/3/2013

ຜູ້ຮັບຮູ້ຢັ້ງຢືນ

ໄມສຸກ ໄຊສົມແພງ

ອະດີດກຳມະການສູນກາງພັກ, ອະດີດລັດຖະມົນຕີວ່າການກະຊວງອຸດສາຫະກຳ-ການຄ້າ, ອະດີດປະທານສູນກາງແນວລາວສ້າງຊາດ, ພະນັກງານອາວຸໂສບຳນານ.

<u>ສະຫຼຸບ</u>: ດ້ວຍເຫດໃດ ເຈົ້າແຂວງ ກິນິມ ພົນເສນາ ຈຶ່ງມີຈິດໃຈຮັກຊາດ ຄືແນວນັ້ນ?

ຍ້ອນວ່າ ທ່ານປະທານ ໄກສອນ ພົມວິຫານ ເປັນໝູ່ເພື່ອນຮັກແພງກັນ ແຕ່ເວລາຍັງເປັນນັກຮຽນ ຢູ່ໂຮງຮຽນມັດທະຍົມສະຫວັນນະເຂດ. ປີ 1948 ປະທານ ໄກສອນ ນຳພາກອງພະນັກງານ ແລະ ທະຫານ ເຂົ້າປົດປ່ອຍເອົາ ເມືອງ ຊຽງຄໍ້, ຕັ້ງສຳນັກງານປົດລັບ ຢູ່ ຜຽງສາລາວຮຸ່ງ, ຫ້ອຍຊາຍ, ມອງນ້ຳ, ໄດ້ແຕ່ງ ໃຫ້ສະຫາຍ <u>ບ້າວເຊີນ</u> ພະນັກງານຫວຽດນາມ ຂົນຂວາຍສ້າງຮາກຖານການ ເມືອງ ຊຶ່ງແຕ່ກ່ອນ ກໍ່ແມ່ນໝູ່ຮຽນນຳກັນຢູ່ໂຮງຮຽນ ມັດທະຍົມສະຫວັນນະເຂດ ຮູ້ເຄີຍກັບທ່ານ ກິນິມ ພົນເສນາ. ຂຶ້ນໄປພົບ ພົວພັນກັບທ່ານ ກິນິມ ພົນເສນາ, ສະຫາຍ ບ້າວເຊີນ ສ້າງຮາກຖານລັບ ຢູ່ບ້ານນາລີວ ຊຳເໜືອ ເປັນບ່ອນອາໃສ ເພື່ອຕິດຕໍ່ກັບທ່ານກິ ນິມ ພົນເສນາ, ຈຶ່ງເຮັດໃຫ້ທ່ານ ກິນິມ ກາຍເປັນຄົນຮັກຊາດ ປະກອບສ່ວນຕໍ່ການປະຕິວັດຊາດ ປະຊາທິປະໄຕ. ເວລານັ້ນ ຕົນເອງນັບຖືທ່ານ ກິນິມ ຄືກັບຜູ້ນຳຂອງຕົນຜູ້ຫນຶ່ງ.

“ຄວາມຊົງຈຳ ທີ່ບໍ່ອາດຫຼົງລືມໄດ້ ກ່ຽວກັບ ພໍ່ກິນິມ ພົນເສນາ”

ໂດຍພົນຕີຊຽງສົມ ກຸນລະວົງ,ວິລະຊົນແຫ່ງຊາດ,
ອະດີດກຳມະການສູນກາງພັກປະຊາຊົນປະຕິວັດລາວ,
ອະດີດລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນ
ຄວາມສະຫງົບ

ຂ້າພະເຈົ້າ ໄດ້ຮັບການມອບໝາຍຈາກສູນກາງແນວລາວຮັກຊາດ ໃຫ້ມາຢູ່ນຳຄອບຄົວຂອງພໍ່ກິນິມ, ແມ່ໄພບູນ ພົນເສນາ ໃນຖານະເປັນປ້ອງກັນຂອງພໍ່. ໃນເວລາເກີດລັດຖະປະຫານ 9/8/60, ພໍ່ດຳລົງຕຳແໜ່ງ ເປັນ ລັດຖະມົນຕີ ກະຊວງຖະແຫຼງຂ່າວ, ໂຄສະນາ. ຝ່າຍວຽງຈັນ ກໍມີຕຳຫຼວດ, ທະຫານ ແຕ່ພໍ່ບໍ່ໄວ້ໃຈ ຈຶ່ງເວົ້າ ນຳລູງໜູຮັກພູມສະຫວັນ ຂໍປ້ອງກັນຂອງ ຝ່າຍແນວລາວຮັກຊາດ. ດ້ວຍເຫດຜົນດັ່ງກ່າວ, ຂ້າພະເຈົ້າຈຶ່ງໄດ້ມາຢູ່ນຳ ຄອບຄົວໂດຍກົງ. ຂ້າພະເຈົ້າກໍເຫັນຄວາມສຳຄັນໃນການປ້ອງກັນ, ໃກ້ຊິດ ຜູ້ມີຖານະອິດທິພົນໃນສັງຄົມ ຈຶ່ງຕັດສິນ ໃຈເອົາຊີວິດແລກກັບຄວາມປອດ ໄພຂອງເພິ່ນ. ພໍ່ ແລະ ແມ່ ກໍຖືຂ້າພະເຈົ້າເປັນລູກເປັນເຕົ້າ, ຂ້າພະເຈົ້າ ຢູ່ເຮືອນນຳເພິ່ນ ຄືດັ່ງຢູ່ເຮືອນຂອງພໍ່ແມ່ຄົງຂອງຕົນເອງ. ນ້ອງນຸ່ງໃນ ເຮືອນຍັງນ້ອຍ, ຍັງຮຽນໜັງສື, ພໍ່ກິນິມບອກວ່າໃຫ້ ຖືເຂົາເຈົ້າຄືນ້ອງ, ເຈົ້າ ເປັນອ້າຍກົກໃນຄອບຄົວ, ຖ້າເຂົາເຈົ້າເຮັດບໍ່ຈົບບໍ່ງາມກໍບໍ່ໃຫຊາເຂົາ. ຂ້າ ພະເຈົ້າຢູ່ນຳ ຄອບຄົວຂອງພໍ່ແມ່, ເພິ່ນບໍ່ເຄີຍຮ້າຍດ່າ ຈັ່ມວ່າໃຫ້ຂ້າພະເຈົ້າ ຈັກເທື່ອ, ມີຫຍັງກໍເວົ້າລົມ, ສັ່ງສອນຄືດັ່ງລູກຂອງເພິ່ນແທ້ໆ.

ໃນການປະຕິບັດໜ້າທີ່ຂອງຕົນ, ຂ້າພະເຈົ້າຕິດຕາມພໍ່ໄປທຸກ ບ່ອນ. ໃນເວລານັ້ນ ພໍ່ມັກໄປເຮັດວຽກຢູ່ສະຖານີວິທະຍຸກະຈາຍສຽງຍາມ ກາງຄືນ, ຂ້າພະເຈົ້າເປັນຫ່ວງຢ້ານບໍ່ປອດໄພ, ບໍ່ຢາກໃຫ້ພໍ່ໄປແຕ່ເພິ່ນກໍ

ໄປເພາະເພີ່ນວ່ານັ້ນແມ່ນວຽກຂອງເພີ່ນ.

ໃນໄລຍະປະຕິບັດໜ້າທີ່ປ້ອງກັນພໍ່ກິນິມເປັນເວລາໜຶ່ງປີປາຍ, ມີສາມເຫດການສຳຄັນທີ່ຂ້າພະເຈົ້າຈື່ໄດ້, ນັ້ນຄື:

<u>ເຫດການທີ່ໜຶ່ງ</u>: ຕອນຂ້ອນແຈ້ງ 1-2 ໂມງ, ປະຕິການລາວ ທີ່ແຕກຈາກວຽງຈັນໄປຝັ່ງໄທສີຊຽງໃໝ່ ໄດ້ລັກຫຼອນມາບຸກຕີອ່າງນ້ຳປະປາທີ່ຫາດດອນຈັນ, ພໍ່ໄດ້ປຸກລູກເຕົ້າທັ້ງໝົດໃຫ້ໄປຢູ່ໃນຫ້ອງຂອງຊຽງບາງ (ຊື່ຂອງຂ້າພະເຈົ້າໃນເວລານັ້ນ), ພວກນ້ອງໆທັ້ງຫຼາຍ, ຜູ້ນ້ອຍນອນຫຼັບຄາມີ, ຜູ້ໃຫ່ຍນັ່ງອ້ອມຂ້າພະເຈົ້າ. ພໍ່ບອກພວກນ້ອງໆທັ້ງຫຼາຍວ່າບໍ່ຕ້ອງຢ້ານ, ເພີ່ນກຳຄົນເປັນຮ້ອຍເປັນພັນ. ຈົນສຽງປືນມິດແລ້ວ, ທຸກຄົນຈຶ່ງກັບໄປນອນ. ພໍ່ກິນິມເອົາມືມາຍ່ອງຫົວຂອງຂ້າພະເຈົ້າວ່າປອດໄພດີແລ້ວ.

<u>ເຫດການທີສອງ</u>: ພາຍຫຼັງກອງທັບປົດປ່ອຍປະຊາຊົນລາວປົດປ່ອຍແຂວງຫົວພັນ, ສູນກາງແນວລາວຮັກ ຊາດໄດ້ແຕ່ງຕັ້ງລຸງມາ ໄຊ ຄຳພິທູນ ເປັນເຈົ້າແຂວງ. ລຸງມາ ໄດ້ອອກຖະແຫຼງການປຸກລະດົມ ປະຊາຊົນໃຫ້ລຸກຂຶ້ນ ຕ່ໍສູ້ພາຍໃຕ້ການນຳພາຂອງແນວລາວຮັກຊາດ ແລະ ປະທານສຸພານຸວົງ. ພໍ່ກິນິມ ພົນເສນາ ຢາກໄປພົບປະທານ ສຸພານຸວົງ ຈຶ່ງສະເໜີໃຫ້ຄະນະລັດຖະປະຫານ ຈັດເຮືອບິນໃຫ້ເພີ່ນໄປຊຳເໜືອ. ຄະນະລັດຖະປະຫານໄດ້ຈັດຍົນ ບີເວີໃຫ້ພໍ່ໜຶ່ງລຳ, ໂດຍມີເຈົ້າສີສຸມັງ ສີສະເຫຼີມສັກ ໄປນຳເພີ່ນ. ນອກນັ້ນ ກໍມີຂ້າພະເຈົ້າ ແລະ ດຣ. ແກ່ນແກ້ວ ພົນເສນາ. ນັກບິນ ພັດແມ່ນທ້າວກຸປະສົງ, ນ້ອງຊາຍຂອງກຸປະສິດ ທີ່ຢູ່ນຳລັດຖະບານຂອງພູມີ, ບຸນອຸ້ມຢູ່ສະຫວັນນະເຂດ. ຂ້າພະເຈົ້າຢ້ານກຸປະສົງຈະເອົາຍົນລົງສະຫວັນ ຈຶ່ງໄດ້ກະກຽມໃຫ້ຕົນເອງ ແລະ ແກ່ນແກ້ວ ຖືປືນໄປຜູ້ລະສອງກະບອກ ເພື່ອປ້ອງກັນ ແລະ ໃນຕະຫຼອດເວລາບິນ ກໍຕິດຕາມນັກບິນຢ່າງໃກ້ຊິດ, ຖ້າເຫັນເຮືອບິນອ່ວາຍບໍ່ຖືກທາງກໍຮີບຈັບງ່ອນບັກນັກບິນໂລດ.

ໃນເມື່ອເຮືອບິນໃກ້ຈະຮອດຊຽງຂວາງແລ້ວ ກໍໄດ້ຕິດຕໍ່ໄປທາງ ຊໍາເໜືອ ເພື່ອຖາມວ່າລົງໄດ້ບໍ່. ທາງຊໍາເໜືອ ຕອບວ່າດຽວນີ້ຍັງລົງເດີ່ນ ບິນຊໍາເໜືອບໍ່ທັນໄດ້ ຈຶ່ງຕ້ອງໄດ້ແວ່ຊຽງຂວາງກ່ອນ. ນາຍພົນອໍາຄາ ສຸຂະ ວົງໄດ້ຕາງ ໜ້າໃຫ້ຄະນະລັດຖະປະຫານ ປະຈໍາພາກ 2 ແລະ ຮ້ອຍເອກ ດໍາດວນ ໄດ້ມາຕ້ອນຮັບພໍ່ ແລະ ພາເພີ່ນໄປພັກເຊົາຢູ່ເຮືອນຂອງເຈົ້າ ແຂວງສາຍຄໍາ.

ເມື່ອກິນເຂົ້າແລ້ວ, ຂ້າພະເຈົ້າກັບແກ່ນແກ້ວ ເອົາຖະແຫຼງການ ຂອງເຈົ້າແຂວງ ຫົວພັນທີ່ພິມມາແຕ່ວຽງຈັນ (<u>ໝາຍເຫດ</u>: ເຮືອນພໍ່ກິນິມ, ແມ່ໄພບູນ ພົນເສນາ ເປັນໂຮງພິມແຫ່ງທໍາອິດຂອງແນວລາວຮັກຊາດ ຢູ່ວຽງຈັນ ໂດຍ ມີອ້າຍນ້ອງແນວລາວຮັກຊາດພາກສ່ວນອື່ນຮັບຜິດຊອບ) ໄປຢາຍຕາມຕະຫຼາດຊຽງຂວາງ. ພວກທະຫານຊຽງຂວາງ ທີ່ບໍ່ສະໜັບສະ ໜູນລັດຖະບານວຽງຈັນ, ທ່າທີບໍ່ດີໃຈ. ຂ້າພະເຈົ້າເບິ່ງສະຖານະການບໍ່ຄັກ ຈຶ່ງໄປພົບ ພັນ ໂທຄໍາຮູ ທີ່ເປັນຫົວໜ້າກອງບັນຊາການທະຫານພາກ 2 ຢູ່ ຊຽງຂວາງ ແລະ ພັນຕີວັງປາວ ເປັນຮອງ. ທ່ານຄໍາຮູ ບອກວ່າ ສະພາບ ການຢູ່ຊຽງຂວາງໃນປັດຈຸບັນ ສັບສົນຫຼາຍ ຄືໄຂ່ຕໍາຫີນ ຈຶ່ງເຕືອນໃຫ້ລະວັງ ວັງປາວຈະເຮັດ ລັດຖະປະຫານໄປຂົ້ນກັບຝ່າຍສະຫວັນນະເຂດ. ຖ້າຄະ ນະພໍ່ກິນິມ ຈະຢູ່ຊຽງຂວາງເພື່ອລໍຖ້າສະພາບການເດີ່ນບິນ ຂອງຊໍາເໜືອ ຈະດີນ ແລະ ບໍ່ປອດໄພ ເພາະຢ້ານວັງປາວຈະເຮັດລັດຖະປະຫານ. ຂ້າພະ ເຈົ້າຟ້າວໄປລົມສະພາບ ດັ່ງກ່າວໃຫ້ພໍ່ກິນິມ ເພື່ອສະເໜີໃຫ້ເພີ່ນກັບວຽງ ຈັນ. ເພີ່ນບໍ່ຕອບ. ສຸດທ້າຍ ກ້ຽວກ່ອມດິນເຕີບ ເພີ່ນຈຶ່ງຕົກລົງກັບນໍາຍົນ ດາໂກຕາທີ່ໄດ້ຈັດເອົາລູກເມຽທະຫານຊຽງຂວາງເມືອວຽງຈັນສີ່ຄົນອອກ ເພື່ອໃຫ້ຄະນະຂອງພໍ່ກັບວຽງຈັນ. ຮອດວຽງຈັນ, ຂ້າພະເຈົ້າຈຶ່ງຫາຍທ່ວງ ເໝືອນດັ່ງເອົາສ້ຽນໜາມອອກຈາກຫົວອົກ. ມື້ຄໍ່າ, ວັງປາວເຮັດລັດຖະປະ ຫານໂຄ່ນລົ້ມຄໍາຮູ. ພໍ່ໄດ້ຂ່າວກໍເວົ້ານໍາຂ້າພະເຈົ້າວ່າ ຖ້າກູບໍ່ຟັງຄວາມມຶງ

ກໍຕາຍແທ້. ຕໍ່ມາມີຫຍັງເພີ່ນກໍມາ ປຶກສານຳ. ທ່ານໜູຮັກ ກໍທຸ້ງມາເຮືອນພໍ່ເປັນປະຈຳ, ຍິ່ງເພີ່ມຄວາມເຊື່ອໝັ້ນ, ຮັກແພງກັນຕື່ມ.

ວັນທີ 8, ທະຫານກຸປະສິດ ຢູ່ຈີນາຍໂມ້ ມັດແພຂາວຢູ່ຄໍແລ່ນໄປຫາຮ້ອຍເອກຄຳລ້ອມ ທີ່ຮັກສາຄວາມສະຫງົບປອດໄພ. ກຸປະສິດຈະໂຄ່ນລົ້ມຄະນະລັດຖະປະຫານທີ່ເວລານັ້ນ ມີແຕ່ 800 ຄົນ. ພວກເຂົາພັດຍັງມີທັງທະຫານຮັບຈ້າງໄທ ແລະ ລັດຖະບານສະຫວັນນະເຂດອີກ. ໃນສະພາບການດັ່ງກ່າວ, ລຸງໜູຮັກເອີ້ນຂ້າພະເຈົ້າ ໄປຫາທີ່ສຳນັກງານຂອງແນວລາວຮັກຊາດຢູ່ນາໄຮ່ດຸງ. ເພີ່ນເວົ້າວ່າເຮົາຮັກສາວຽງຈັນບໍ່ໄດ້ແລ້ວ. ເຮົາຕ້ອງຮັກສາຖານະຖືກຕ້ອງຕາມກົດໝາຍຂອງລັດຖະບານເຈົ້າສຸວັນນະພູມາ. ດັ່ງນັ້ນໃຫ້ຂ້າພະເຈົ້າໄປເວົ້ານຳທ່ານ ເດືອນຈັດຍົນດາໂກຕາເອົາຄອບຄົວຂອງຄະນະລັດຖະບານທີ່ສຳຄັນໄປລີ້ໄພທີ່ພະນົມເປັນ. ໃນວັນທີ 12/12/60 ແມ່ໄພບູນ ພົນເສນາ ແລະ ລູກພ້ອມກັບຄອບຄົວຄະນະລັດຖະບານຈຳນວນໜຶ່ງ ໄດ້ຂຶ້ນຍົນຈາກວຽງຈັນໄປພະນົມເປັນ. ສ່ວນພໍ່ ກົນົມໄດ້ອອກຈາກວຽງຈັນນຳຄະນະລັດຖະປະຫານ ແລະ ບັ້ນລົບວຽງຈັນ ກໍເລີ່ມຂຶ້ນໃນວັນທີ 13/12/60. ລຸງໄກສອນ ພົມວິຫານມາບັນຊາຢູ່ນຳພື້ນຖານແຂວງວຽງຈັນ. ຂ້າພະເຈົ້າເປັນຜູ້ຕິດຕໍ່ກັບເພີ່ນ. ໃນເວລານັ້ນ ມີກອງພັນ 500 ຂອງແນວລາວຮັກຊາດ ສົມທົບກັບກຳລັງຂອງຄະນະລັດຖະປະຫານ 800 ຄົນຕໍ່ສູ້ປົກ ປັກຮັກສາ ວຽງຈັນ. ໃນກາງຄືນຂອງວັນທີ 16/12/60, ກຳລັງຂອງພວກເຮົາໄດ້ຖອນຈາກວຽງຈັນໄປຊຽງຂວາງ. ສອງກອງຮ້ອຍຂອງແນວລາວຮັກຊາດ ແລະ ຂອງທ່ານເດືອນໄດ້ສົມທົບກັນຕີສັດຕູ ແລະ ປົດປ່ອຍທົ່ງໄຫຫີນ ຊຽງຂວາງ ໃນວັນທີ 1/1/61.

ຕໍ່ມາກໍໄດ້ຕັ້ງສຳນັກງານນາຍົກລັດຖະມົນຕີ ຢູ່ຄັ້ງໄຂ ແລະ ຕ້ອນຮັບສະເດັດສຸວັນນະພູມາເປັນນາຍົກ. ຍ້ອນສາມາດຮັກສາຖານະ, ບົດບາດຖືກຕ້ອງຕາມກົດໝາຍຂອງລັດຖະບານສຸວັນນະພູມາ ຕາມພະລາດຊະອົງ

ການຂອງ ເຈົ້າຊີວິດ ຈຶ່ງສາມາດສືບຕໍ່ຂໍການຊ່ວຍເຫຼືອຈາກປະເທດເພື່ອນມິດ, ເປັນ ຕົ້ນແມ່ນປະເທດຫວຽດນາມ, ຈີນ, ອະດີດສະຫະພາບໂຊວຽດ. ພໍ່ກີນີມ ໄດ້ປະກອບສ່ວນຢ່າງໃຫ່ຍຫຼວງໃນລັດຖະບານ ແລະ ກຳລັງເປັນກາງຮັກຊາດ. ເວລາມາເຖິງຄັ້ງໄຂ, ພໍ່ເຄີຍສະເໜີເອົາກຳລັງເປັນກາງເຂົ້າກັບແນວລາວຮັກຊາດ, ແຕ່ທາງສູນກາງແນວລາວຮັກຊາດວ່າໃຫ້ຮັກສາໄວ້ທັງສອງກຳລັງ, ເອົາສອງກຳລັງຕີໜຶ່ງ, ຊຶ່ງໝາຍເຖິງກຳລັງແນວລາວຮັກຊາດ ແລະ ກຳລັງເປັນກາງຮັກຊາດ ຕີກັບຝ່າຍຂວາ. ພວກເຮົາເຂົ້າໃຈກັນບໍ່ມີບັນຫາ. ມື້ໃດເຂົ້າກັນເປັນອັນດຽວຂຶ້ນກັບເວລາເທົ່ານັ້ນ.

<u>ເຫດການທີສາມ</u>: ມື້ເກີດລັດຖະປະຫານກອງແລ ຍ້ອນຫຍັງ? ຍ້ອນຄະນະລັດຖະປະຫານ ຝັກໄຝ່ຫາສັນຕິ ພາບເປັນກາງ, ພໍ່ກີນີມ ພິນ ເສນາ ເປັນຜູ້ສ້າງຕັ້ງພັກສັນຕິພາບເປັນກາງ ຊຶ່ງເປັນພັກທີ່ເຂົ້າຫາໄດ້ທຸກຊັ້ນຄົນ, ລວມທັງທະຫານ, ຕຳຫຼວດ ແລະ ພວກຢູ່ຕະຫຼາດ ກໍມັກໄດ້ຮັບຜົນສະທ້ອນຈາກພັກສັນຕິພາບເປັນກາງ. ມື້ເກີດລັດຖະປະຫານ, ຄະນະລັດຖະປະຫານໄປຫາພໍ່ກີນີມ ເພື່ອພົວພັນກັບແນວລາວຮັກຊາດຢູ່ປ່າ. ພໍ່ກີນີມ ຈຶ່ງໄປຖາມ ປ້າຄຳແພງ ບຸບຜາ ຢູ່ວັດຊຽງແວ່, ເພິ່ນຈຶ່ງສະເໜີໃຫ້ໄປຫາຂ້າພະເຈົ້າຢູ່ເຮືອນພໍ່ໝອດ ທີ່ບ້ານ ..... ຂ້າພະເຈົ້າ ເວົ້ານຳພໍ່ວ່າ ພວກແນວລາວຮັກຊາດ ມັກມາເອົາເຂົ້າເອົານ້ຳຢູ່ບ້ານນາຍາງ. ພໍ່ເລີຍນັດໃຫ້ພາເພິ່ນໄປ. ຂ້າພະເຈົ້າຈຶ່ງມາສຳນັກນາຍົກນຳພໍ່. ພວກເພິ່ນປະຊຸມກັນຢູ່ຊັ້ນ 2, ຂ້າພະເຈົ້າລໍຖ້າຢູ່ຊັ້ນ 1. ມື້ຕໍ່ມາຈຶ່ງໄປບ້ານນາຍາງ, ມີຄະນະລັດຖະປະຫານຈຳນວນໜຶ່ງຕິດຕາມໄປນຳພໍ່. ທ່ານ ສາລີ ວົງຄຳຊາວ ແລະ ທ່ານ ຄຳຜົນ ບຸດດາຄຳ ເປັນຜູ້ມາພົບ ແລະ ປະຊຸມ ນຳຄະນະຂອງພໍ່ກີນີມ. ທີ່ປະຊຸມສະເໜີໃຫ້ພໍ່ກີນີມ ເປັນປະທານກິຕິມະສັກຂອງກອງປະຊຸມສອງຝ່າຍ ໂດຍຝ່າຍແນວລາວຮັກຊາດແມ່ນທ່ານສາລີເປັນຫົວໜ້າ, ທ່ານ ຄຳຜົນເປັນຮອງ ແລະ ຂ້າພະເຈົ້າເປັນຄະນະ. ເມື່ອພໍ່ ໄດ້ຍິນຊື່ຂອງຂ້າພະເຈົ້າ ໃນຄະນະຝ່າຍແນວລາວຮັກຊາດຈຶ່ງມາຍ່ອງຫົວຂ້າພະເຈົ້າ ແລ້ວເວົ້າວ່າປານນັ້ນ

ຖາມວ່າຮູ້ແນວລາວຮັກຊາດ, ພັດຕອບວ່າເປັນເຂີຍເຮືອນພໍ່ໝອດຊື່ໆ, ແທ້ໆຫືອມືງເອງເປັນແນວລາວຮັກຊາດ.

ໃນທີ່ປະຊຸມຂ້າງເທິງ, ທ່ານສາລີ ສະເໜີຈັດຕັ້ງຂ້າພະເຈົ້າ, ຮ້ອຍຕີຊຽງສົມ ເປັນນາຍທະຫານຕິດຕໍ່ສອງຝ່າຍ ໂດຍມອບໃຫ້ໄປຢູ່ນຳຄະນະລັດຖະປະຫານ, ໂດຍຄະນະລັດຖະປະຫານ ຮັບຜິດຊອບດ້ານການກິນຢູ່, ພັກເຊົາຂອງທະຫານເຂດປ້ອງກັນວຽງຈັນຂອງແນວລາວຮັກຊາດແລະ ຄະນະລັດຖະປະຫານຈະສະໜອງອາວຸດຢູ່ສາງໃຫ້ຝ່າຍແນວລາວຮັກຊາດ.

ຈາກນັ້ນ, ທ່ານຮ້ອຍໂທເດືອນ ສຸນນະລາດ ໄດ້ເຮັດຄຳສັ່ງໄປຫາ ຮ້ອຍໂທຄຳໄກ້ ຢູ່ສາງອາວຸດຢູ່ບໍລິຄຳໄຊເພື່ອ ຂົນອາວຸດເຂົ້າປ່າໃຫ້ແນວລາວຮັກຊາດ. ເວລານັ້ນ ໄດ້ໃຊ້ລົດເຊເອມເຊ 18 ຄັນ ຂົນ 4 ມື້ ຈຶ່ງໝົດ, ລະອຽດ ຄື ຂົນໄປດ່ານສູງພູພະນັງ 8 ຄັນ, ຂົນໄປດົງບັງ ໄຊທານີ 5 ຄັນ ແລະ ຂົນໄປປາກຂະຍຸງ 5 ຄັນ. ສ່ວນທີ່ເຫຼືອ ແມ່ນຂົນທາງເຮືອບິນໄປນ້ຳບາກເມືອງງອຍ ແລະ ເມືອງພະໂພ ຢູ່ເຂດໃຕ້. ສະຫຼຸບແລ້ວ, ແມ່ນສອງພໍ່ລູກຮ່ວມກັນຂົນອາວຸດ, ພໍ່ກິນິມ ເປັນຜູ້ສັ່ງ, ລູກເປັນຜູ້ຂົນ.

ພໍ່ກິນິມ ເປັນຜູ້ນຶ່ງ ທີ່ມີນ້ຳໃຈຮັກຊາດ ອັນສູງສົ່ງ, ມີຄວາມສາມາດ ແລະ ເປັນຄົນກ້າຫານ, ກ້າຕໍ່ສູ້ກັບສິ່ງທີ່ບໍ່ເປັນທຳ. ພໍ່ສ້າງຕັ້ງພັກສັນຕິພາບເປັນກາງ ເພື່ອດູດດຶງກຳລັງຮັກຊາດ ແລະ ສາກົນ, ຊຶ່ງກໍຖືກຕ້ອງກັບຄຳຂວັນທີ່ ແນວລາວຮັກຊາດວາງໄວ້ໃນສະໄໝລວມລາວຄັ້ງທີໜຶ່ງ ໃນປີ 1957 ຄື ປະເທດລາວສັນຕິພາບ, ເອກະລາດ, ເປັນກາງ, ປະຊາທິປະໄຕ ແລະ ວັດທະນະຖາວອນ. ພໍ່ເປັນບຸກຄົນທີ່ສຳຄັນ ທີ່ໄດ້ປະກອບສ່ວນຢ່າງໃຫ່ຍຫຼວງ ເຂົ້າໃນຂະບວນການ ຕໍ່ສູ້ກູ້ຊາດຂອງປະຊາຊົນລາວທົ່ວປະເທດ. ພັກສັນຕິພາບເປັນກາງ ຂອງພໍ່ກິນິມ ກໍເປັນພັນທະມິດທີ່ຂະຫຍັນຂັນແຂງຂອງແນວລາວຮັກຊາດໂດຍພໍ່ບໍ່ໄດ້ລົດລະໃນການຕໍ່ສູ້ ເພື່ອພາລະກິດຂອງຊາດ ຈົນເຖິງວິນາທີສຸດທ້າຍແຫ່ງຊີວິດຂອງເພິ່ນ.

“ການບອກເລົ່າ ກ່ຽວກັບການພົບປະ ລະຫວ່າງ ທ່ານ ປະທານໄກສອນ ພົມວິຫານ ແລະ ທ່ານກຶນີມ ພົນເສນາ”

ໂດຍ ຕົງເຢີ ທໍ່, ກຳມະການສູນກາງພັກປະຊາຊົນ ປະຕິວັດລາວ, ຮອງປະທານແນວລາວສ້າງຊາດ

ສະຫາຍ ສົມມາດ ພົນເສນາ ທີ່ຮັກແພງ

ໃນຖານະເປັນຜູ້ຕາງໜ້າສູນກາງແນວລາວສ້າງຊາດ ທີ່ສືບມູນເຊື້ອຂອງ ແນວລາວອິດສະຫລະ ແລະ ແນວລາວຮັກຊາດໃນເມື່ອກ່ອນ, ຕາມທີ່ເຮົາຈື່ບໍ່ລືມ ຢູ່ກອງປະຊຸມຫວນຄືນລາວ-ຫວຽດນາມ ໃນການເລີ່ມເຄື່ອນໄຫວກໍ່ສ້າງກອງກຳລັງປະກອບອາວຸດລາວເໜືອ ຢູ່ທີ່ຕິວເມືອງຊໍາເໜືອປີ 200... ວ່າ:

ອີງຕາມການມອບໝາຍ ຂອງປະທານໂຮຈິມິງ ໃນປີ 1947, ປະທານໄກສອນ ພົມວິຫານ ແລະ ທ່ານ ສີສະຫວາດ ແກ້ວບຸນພັນ ພ້ອມພະນັກງານອາສາສະໝັກຫວຽດນາມ, ໄດ້ມາຕັ້ງຢູ່ບ້ານລາວໂຄເຜົ່າມົ້ງຫວຽດນາມ ທີ່ຕັ້ງບ້ານຕິດກັບຊາຍແດນລາວ-ຫວຽດ ເຂດຫນອງນ້ຳ-ພຽງສາ-ລາວຮຸ່ງ. ຍ້ອນທ່ານລາວໂຄ ເປັນຜູ້ມີບົດບາດຕໍ່ເຜົ່າມົ້ງເຂດນັ້ນ ນັບທັງ ຫນອງນ້ຳ-ພຽງສາມົ້ງລາວ. ປະທານໄກສອນ ຈຶ່ງອີງໃສ່ຈຸດພິເສດດັ່ງກ່າວ ເພື່ອຄ່ອຍໆທຳຄວາມເຂົ້າໃຈ ແລະ ລົ້ງເຄັຍຕໍ່ມົ້ງເຂດນັ້ນ ເປັນຕົ້ນແມ່ນ ຄອບຄົວຂອງທ່ານລາວລູ, ລາວໄມເຕັ້ງ. ພາຍຫລັງມີພື້ນຖານເຂດນັ້ນ ຈຳນວນຫນຶ່ງເພີ່ມກຳລັງໄດ້ແບ່ງຫນ້າທີ່ແຍກໄປຂົນຂວາຍກຳລັງຄື: ຈຸທີ I ໄປພຽງສາ-ລາວຮຸ່ງ (ແກ້ວແວນ) ລົ້ງໄປເຂດເມືອງຊຽງຄໍ້, ສ່ວນຈຸທີ II ໄດ້ລົ້ງໄປເຂດພົ້ງຊາຍໄປເມືອງຮົ່ງ, ສິບຮາວ (ພາກໃຕ້ເມືອງຊຽງຄໍ້) ແລ້ວຂຶ້ນໄປເຂດເມືອງປົວ - ໄປຕິດຕາມສະພາບຢູ່ຕິວເມືອງຊໍາເໜືອ. ເວລານັ້ນ ທ່ານ ກຶນີມ ພົນເສນາ ເປັນເຈົ້າແຂວງ ມີເຮືອນສ່ວນລວມຢູ່ບ້ານພັກຫາດເມືອງ

ຊຳເຫນືອດຽວນີ້, ເມື່ອຮູ້ໄດ້ສະພາບການເຄື່ອນໄຫວ ຂອງທ່ານກີນິມ ພິນ ເສນາ... ຊຶ່ງໄດ້ມີຫາງສຽງວ່າ: ທ່ານ ກີນິມ ບໍ່ໄດ້ໃຊ້ອຳ ນາດບາດໃຫຍ່ ເຮັດຕາມຝຣັ່ງເສດ, ຫລາຍຄົນສາມາດເຂົ້າພົບລົມກັນໄດ້ສຳບາຍ, ທ່ານ ມັກຈະເມີນເສີຍຕໍ່ຫາງສຽງທົ່ວໄປ ທີ່ວິຈານໃສ່ຮ້າຍຫວຽດມິງ ຫລື ພວກ ລາວຕໍ່ຕ້ານ ແນວນີ້ແນວນັ້ນ. ຈາກນັ້ນ ສາຍລັບຈຶ່ງຄ່ອຍໆເວົ້າລົມສູ່ກັນ ຟັງວ່າ: ທ່ານໄກສອນ ພົມວິຫານ ທີ່ໄປນຳຫວຽດມິງ ເປັນລາວຕໍ່ຕ້ານນັ້ນ ດີແທ້ໆ ແລະ ເກ່ງກ້າແທ້ ໄດ້ຍິນວ່າເພິ່ນໄດ້ເຂົ້າມາແຂວງຫົວພັນເຮົາ ນີ້ແລ້ວ; ຈຸດປະສົງໂອ້ລົມກັນແນວນັ້ນ ເພື່ອໃຫ້ທ່ານກີນິມໄດ້ຍິນ ເພື່ອຢັ່ງ ເບິ່ງວ່າ ເພິ່ນມີຄວາມສົນໃຈຫຍັງບໍ? ເພິ່ນກໍ່ມິດບໍ່ປາກຫຍັງ, ແຕ່ເມື່ອຄົນ ທັ້ງຫລາຍຫນີໄປແລ້ວ, ທ່ານກີນິມ ຈຶ່ງກວັກມືເອີ້ນທ້າວສາຍລັບເຮົາທີ່ເປັນ ຄົນຮັບໃຊ້ນັ້ນວ່າ: ມື້ກ້ານັ້ນ ພວກເຈົ້າເວົ້າວ່າໄກສອນມາແຂວງເຮົານີ້ ມີແທ້ບໍ່ ຫລື ເວົ້າຫລິ້ນ? ມີໃຜຮູ້ເລື່ອງນີ້?

ທ້າວນັ້ນຈຶ່ງເວົ້າວ່າ: ຂ້ານ້ອຍບໍ່ເຫັນ ແຕ່ມີຜູ້ຮູ້ຄັກແນ່ໃດ່ລູງ! ເພິ່ນ ເວົ້າວ່າ ຖ້າເຈົ້າຮູ້ຈັກໃຜຮູ້ເລື່ອງນີ້ດີ ໃຫ້ພາມາພົບເຮົາເນີ! ຕໍ່ມາເມື່ອຮູ້ໄດ້ ແຈ້ງວ່າ: ທ່ານໄກສອນ ມາເຄື່ອນໄຫວຢູ່ເມືອງຊຽງຄໍ້ ເພິ່ນຈຶ່ງຂຽນຫນັງສື ໄປຫາທ່ານໄກສອນ ເພື່ອສະແດງວ່າຕົນກໍ່ ຢາກໄປນຳລາວຕໍ່ຕ້ານ. ຈາກ ນັ້ນ ກໍ່ມີການນັດພົບກັນ ຢູ່ບ້ານນາລົ່ວ ຢູ່ທິດຕາເວັນອອກສ່ຽງເຫນືອ ຂອງ ຕົວເມືອງຊຳເຫນືອ. ການພົບນັ້ນ ບໍ່ແມ່ນພົບຢູ່ບ້ານ ແຕ່ຫາກແມ່ນຖຽງນາ ຢູ່ແຄມຫ້ວຍນ້ອຍໆນາລົ່ວ ທີ່ໄລ່ຽງນ້ຳຊຳ. ເມື່ອໄດ້ພົບລົມກັນ, ທ່ານກີ ນິມ ໄດ້ສະເຫນີຢາກອອກໄປນຳ; ແຕ່ທ່ານໄກສອນ ພົມວິຫານ ໄດ້ຕອບ ວ່າ: ດີແລ້ວ ເຈົ້າມີນ້ຳໃຈຮັກຊາດອັນດູດດື່ມແທ້ ແຕ່ຢູ່ໃສກໍ່ເຮັດການປະຕິ ວັດຄືກັນ, ເຈົ້າຈຶ່ງຮັກສາອຳນາດເປັນເຈົ້າແຂວງຢູ່ນຳຝຣັ່ງ ມີຫຍັງຈຶ່ງສົ່ງ ຂ່າວຫາກັນ, ຖ້າເຈົ້າອອກໄປພວກເຮົາຈະຂາດບໍ່ມີສາຍຕິດຕໍ່ ພາຍໃນກຳ ລັງຂອງຝຣັ່ງເສດ, ພວກເຮົາຈະບໍ່ຮູ້ສະພາບການເຄື່ອນໄຫວຂອງຝຣັ່ງເສດ ແລະ ພວກມັກກີຢູ່ແຕ່ລະເມືອງ (ມັກກີ ແມ່ນພວກປະກອບອາວຸດຢູ່ທ້ອງ ຖິ່ນ-ຮາກຖານຂອງຝຣັ່ງເສດ). ນັບແຕ່ນັ້ນມາ ປະທານໄກສອນ ພົມວິຫານ ກໍ່ ຫາທຸກວິທີທາງ ເພື່ອສົ່ງຂ່າວຫາກັນຢ່າງລຸ່ນຕິດ. ປະທານໄກສອນ ພົມວິຫານ ໄດ້ຕີລາຄາສູງທີ່ສຸດ ເມື່ອມີເພື່ອນເປັນຜູ້ໃຫຍ່ - ມີອຳນາດ ຮູບ

ນອກເປັນສັດຕູ, ແຕ່ທາດແທ້ ແມ່ນນັກຮັກຊາດ - ແມ່ນນັກປະຕິວັດ. ທ່ານ ກິນິມ ພົນເສນາ ໄດ້ຫາທຸກຮູບການ ແລະ ວິທີການ ເພື່ອອຳນວຍຄວາມ ສະດວກ ແກ່ກຳລັງຂອງລາວອິດສະຫລະເຄື່ອນໄຫວກໍ່ສ້າງຮາກຖານການ ເມືອງຢູ່ແຂວງຫົວພັນ ໃນໄລຍະທີ່ທ່ານກິນິມ ພົນເສນາ ເປັນເຈົ້າແຂວງ ແຂວງ ຫົວພັນ. ມາໃນໄລຍະປີ 1957 - 1962 ທີ່ມີການລອມລາວ ເຖິງວ່າ ທ່ານກິນິມ ພົນເສນາ ຈະຢູ່ໃນຖານະໃດ - ກຳລັງໃດກໍ່ຕາມ ທ່ານໄດ້ມີທ່າ ອ່ຽງຊ່ວຍກຳລັງແນວລາວຮັກຊາດ ໃນທຸກເວທີຕໍ່ສູ້. ດ້ວຍເຫດນັ້ນ ຝ່າຍປະ ຕິການ ລັດຖະບານວຽງຈັນ ຈຶ່ງສະແດງຄວາມປໍລະປັກ ກັບທ່ານ ກິນິມ ພົນ ເສນາ ກໍ່ຄືຝ່າຍແນວລາວຮັກຊາດ. ພວກມັນຈຶ່ງກໍ່ການວາງແຜນຄາດຕະ ກຳ ທ່ານ ກິນິມ ພົນເສນາ ໃນປີ 1963.

ສັງລວມໄດ້ວ່າ: ຖ້າຫາກເປັນນັກຮັກຊາດທີ່ແທ້ຈິງ ຄືດັ່ງ ທ່ານ ກິ ນິມ ພົນເສນາ, ເຖິງວ່າ ຈະຢູ່ໃນຖານະໃດ, ຢູ່ກຳລັງຂອງພາກສ່ວນໃດ ແລະ ຢູ່ໃນສະພາບການຄືແນວໃດ ກໍ່ສາມາດຊ່ວຍຊາດ-ຊ່ວຍປະຊາຊົນ ແລະ ການປະຕິວັດໄດ້.

ຜູ້ໃຫ້ຂ່າວ ແລະ ເລົ່າຕໍ່ໆມາ: ທ່ານ ທ້າວຈູມ, ທ້າວເມືອງ ອະດີດ ເຈົ້າເມືອງຊຽງຄໍ້ ແລະ ທ່ານ ເພັດສະວົງ ອາດີດທະຫານຝຣັ່ງເສດ ທີ່ຫັນ ມາເປັນນັກຮົບກອງລາດສະວົງ ວັນທີ 20/ມັງກອນ/1949.

ຜູ້ຂຽນ



ຕິງເຢີ່ຫ໋

ກຳມະການສູນກາງພັກ, ຮອງປະທານແນວລາວສ້າງຊາດ

“ພະນະທ່ານ ກິນິມ ພົນເສນາ ໃນຄວາມຊົງຈຳຂອງພວກຂ້າພະເຈົ້າ”

ໂດຍ ດຣ ປອນເມກ ດາລາລອຍ, ອະດີດ ກຳມະ
ການສູນກາງພັກປະຊາຊົນປະຕິວັດລາວ ແລະ ອະດີດ
ລັດຖະມົນຕີວ່າການ ກະຊວງສາທາລະນະສຸກ

ແຕ່ ວັນທີ 1 ເດືອນ 4 ປີ 1963 ຮອດ ວັນທີ 1 ເດືອນ 4 ປີ 2013 ພໍດີ 50 ປີ ເຕັມໄດ້ຜ່ານໄປແລ້ວ. ກ່ອນນີ້ 50 ປີ, ເວລານັ້ນ: ຂ້າພະເຈົ້າ ຍັງ ເປັນນັກສຶກສາການແພດ ຢູ່ມະຫາວິທະຍາໄລ ມົງເປີລີເຢ (Montpellier) ປະເທດຝຣັ່ງ. ຂ້າພະເຈົ້າ ພວມຮຽນປີທີ 6 ພາກທິດສະດີກ່ອນຈະອອກ ໄປເຮັດພາກປະຕິບັດຕົວຈິງ ຢູ່ໂຮງໝໍເມືອງ Forbach ມໍ່ຊາຍແດນຝຣັ່ງ-ເຢັຍລະມັນ ແລະ ຕໍ່ມາ ເຮັດພາກປະຕິບັດຕົວຈິງຢູ່ໂຮງໝໍສາກົນຂອງມະ ຫາວິທະຍາໄລປາຣີ... ຕໍ່ໜ້າຄຸ້ມ Cite Universitaire Paris 14e ຂ້າງ Parc Montsouris...

ເວລາໄດ້ຮັບຂ່າວ່າ ພະນະທ່ານ ກິນິມ ພົນເສນາ, ລັດຖະມົນຕີ ວ່າການ ກະຊວງການຕ່າງປະເທດ ລັດຖະບານປະສົມຄັ້ງທີ 2 ຂອງລາວ ຖືກຄາດຕະກຳ, ພວກຂ້າພະເຈົ້າ, ນັກສຶກສາລາວບໍ່ກ້າເຊື່ອເລີຍ, ຄິດວ່າ ແມ່ນວັນທີ 1 ເດືອນ 4 ທີ່ຕາມຮີດຄອງຢູ່ປະເທດຝຣັ່ງເປັນວັນທີ່ໃຫ້ ຊື່ວ່າ ວັນ (poisson d'avril) ໝາຍຄວາມວ່າ ເປັນວັນທີ່ຢອກກັນດ້ວຍການ ຕົວະກັນໄດ້...

ແຕ່ເມື່ອເວລາຜ່ານໄປ, ຂ່າວທີ່ໄດ້ໂດ່ງດັງໄປທົ່ວໂລກໃນເວລາ ນັ້ນ ໄດ້ກາຍເປັນຄວາມຈິງ. ນັກສຶກສາພວກຂ້າພະເຈົ້າ ກໍ່ຄືທົ່ວໄປ ແມ່ນຮູ້ ສຶກສຸດທີ່ເຈັບປວດ, ເສັຍອົກ, ເສັຍໃຈ, ຄຽດແຄ້ນ ແລະ ທັງໄດ້ທັນຄວາມ

ເຈັບປວດ ແລະ ຄວາມຄຽດແຄ້ນ ໃຫ້ກາຍເປັນກຳລັງຕັດສິດໃຈໃຫມ່ໃຫ່ຍ ຫຼວງກວ່າເກົ່າ ເພື່ອປະເຊີນໜ້າກັບສະພາບການໃໝ່...

ເພື່ອເຂົ້າໃຈແລະກຳໃຫ້ໄດ້ສະພາບການ, ພວກຂ້າພະເຈົ້າ ໄດ້ຈັບເອົາໂອກາດດັ່ງກ່າວ ເພື່ອພ້ອມກັນເບິ່ງຄືນສະພາບການ ເປັນຕົ້ນການຜັນແປໄປຂອງສະພາບການຢູ່ພາຍໃນປະເທດ ຕັ້ງແຕ່ໄດ້ມີການສ້າງຕັ້ງລັດຖະບານປະສົມປີ 1957 ເປັນຕົ້ນມາ: ໂດຍສະເພາະເຫດການໃຫ່ຍໆ ທີ່ສຳຄັນເຊັ່ນ: ເຫດການທີ່ຜູ້ນຳແນວລາວຮັກຊາດໄດ້ຖືກຈັບກຸມເຂົ້າຄຸກໂພນເຄັ່ງ, ເຫດການແຫກຄຸກຢ່າງບໍ່ຄາດຝັນຂອງພວກເພິ່ນ, ການຜ່າມ້າງວົງປິດລ້ອມຂອງກອງພັນທີ 2 ຢູ່ທົ່ງໄຫຫີນຊ່ຽງຂວາງ, ລັດຖະປະຫານພາຍໃນຝ່າຍຂວາ ເດືອນສິງຫາປີ 1960 ແລະໄຊຊະນະຕ່ໍໆມາ ໃນສະຫນາມຮົບຂອງກຳລັງປະຕິວັດອັນໄດ້ພາໄປເຖິງກອງປະຊຸມເຊີແນວປີ 1962 ກ່ຽວກັບລາວ...ແລະ ໄດ້ມີການສ້າງຕັ້ງລັດຖະບານປະສົມຄັ້ງທີ 2 ຂອງສະເດັດ ສຸວັນນະພູມາ ອັນໄດ້ມີພະນະທ່ານ ກົມ ພົນເສນາເປັນລັດຖະມົນຕີ ວ່າການ ກະຊວງການຕ່າງປະເທດ...

ເວລາເບິ່ງຄືນສະພາບການ, ພວກຂ້າພະເຈົ້າ ໄດ້ສຸມໃສ່ຊອກເຂົ້າໃຈວ່າ ເພື່ອມ້າງລັດຖະບານປະສົມທັງໆທີ່ນ້ຳເຫມິກເຊັ່ນສັນຍາກ່ໍຍັງບ່ໍທັນແຫ້ງ, ດ້ວຍເຫດໃດ ພວກຄາດຕະກຳຈຶ່ງສຸມໃສ່ ພະນະທ່ານ ກົມ ພົນເສນາ? ພວກຂ້າພະເຈົ້າມີຄວາມຮູ້ສຶກວ່າ ການຈາກໄປຂອງພະນະທ່ານ ກົມ ພົນເສນາ ໄດ້ເປັນການບ່ົງບອກວ່າສະພາບການຈະຜັນແປໄປຢ່າງສະຫລັບສັບຊ້ອນ ແຕ່ກ່ໍເຊື່ອໝັ້ນຢ່າງແນ່ໃຈວ່າ ສຸດທ້າຍ ການປະຕິວັດກ່ໍຈະໄດ້ຮັບໄຊຊະນະ ເຖິງວ່າບ່ໍຮູ້ໄດ້ວ່າຍາມໃດແທ້ຢ່າງລະອຽດ...

ຍ້ອນໄດ້ຕັ້ງຄຳຖາມຂຶ້ນ, ພວກຂ້າພະເຈົ້າຈຶ່ງຈຳໄດ້ເປັນຢ່າງດີ ບົດບາດອັນພົ້ນເດ່ັນຂຶ້ນ ຂອງພະນະທ່ານ ກົມພົນເສນາ: ພວກຂ້າພະເຈົ້າມີຄວາມເຂົ້າໃຈວ່າ ພະນະທ່ານກົມ ພົນເສນາ ເປັນນັກການເມືອງທີ່

ຮັກຊາດຢ່າງເລິກເຊິ່ງ ແລະ ດູດດື່ມ. ເພິ່ນນັ້ນ ສຸດທີ່ອ້ຽງອາດກ້າຫານ ເດັດດ່ຽວ ແລະ ເດັດຂາດໃນການຈັດຕັ້ງປະຕິບັດຍຸດທະສາດ ແລະ ຍຸດໂທ ບາຍຂອງພັກ ນັ້ນຄືປະຕິບັດນະໂຍບາຍສັນຕິພາບເປັນກາງ ຢ່າງມີຫຼັກ ການ ແລະ ມີຫຼັກໝັ້ນຄື: ປະຕິບັດນະໂຍບາຍສັນຕິພາບເປັນກາງ ທີ່ຕິດພັນ ເບື້ອງຫນຶ່ງກັບຄວາມຖືກຕ້ອງປອງດອງຊາດ ແລະ ອີກເບື້ອງຫນຶ່ງ, ເບື້ອງ ສາກົນ ແມ່ນຮັບຮູ້ປະເທດສັງຄົມນິຍົມ ທີ່ຍັງບໍ່ທັນຖືກຮັບຮູ້ ເປັນຕົ້ນ ສາທາ ລະນະລັດປະຊາທິປະໄຕ ຫວຽດນາມ, ສາທາລະນະລັດ ປະຊາຊົນຈີນ, ອະດີດສະຫະພາບໂຊຫວຽດ...

ຄວາມກ້າຫານແລະຄວາມຕັດສິນໃຈສູງນັ້ນ ໄດ້ມີສ່ວນສຳຄັນໃນ ການປະກອບສ່ວນ ເຮັດໃຫ້ການຊັ່ງຊາກຳລັງຢູ່ລາວມີການປ່ຽນແປງທີ່ກ້າ ເກ່ງ ແລະ ກ້າວໜ້າກວ່າເກົ່າ ໃນເວລານັ້ນ...ບົນພື້ນຖານມີການປະສານ ສົມທົບເປັນຢ່າງດີກັບຝ່າຍແນວລາວຮັກຊາດ, ພ້ອມດ້ວຍກຳລັງເປັນກາງ ທີ່ຮັກຊາດອື່ນໆ ເພິ່ນໄດ້ເປັນແກນນຳໃນການຈັດຕັ້ງປະຕິບັດຍຸດທະສາດ ແລະ ຍຸດໂທບາຍທີ່ຖືກຕ້ອງສະຫຼາດລ່ອງໃສຂອງພັກ ແລະ ໄດ້ປະກອບ ສ່ວນອັນສຳຄັນ ແລະ ມີຄວາມໝາຍ ເຮັດໃຫ້ປະຫວັດສາດລາວ ທີ່ເຖິງ ວ່າໄດ້ມີບາດລ້ຽວທີ່ສະຫລັບສັບຊ້ອນ ແຕ່ສຸດທ້າຍກໍ່ໄດ້ຮັບໄຊຊະນະອັນ ສົມບູນ ແລະ ມີການພັດທະນາດີຂຶ້ນຢ່າງຕໍ່ເນື່ອງຄືໃນທຸກວັນນີ້ ສິ່ງນັ້ນ ໄດ້ເປັນໄປ ຄື ເພິ່ນໄດ້ໄຝ່ຝັນຢາກໃຫ້ເປັນໄປ...

ໂອກາດທີ່ປະເສີດ ແລະ ຫາຍາກທີ່ພວກນັກສຶກສາ ຄືພວກຂ້າ ພະເຈົ້າໄດ້ມີ ໃນການໄປຂໍເຂົ້າພົບ, ໂອ້ລົມສໍ້ຖາມ ແລະ ແລກປ່ຽນຄຳຄິດ ຄຳເຫັນ ນຳພວກເພິ່ນແມ່ນ:

-ເວລາກອງປະຊຸມເຊີແນວ ໄດ້ເລີ່ມຕົ້ນມີການເຈລະຈາຢູ່ເຊີແນວ (Geneve): ພວກຂ້າພະເຈົ້າ ໃນຖານະຄະ ນະກຳມະການສັນຕິພາບ, ເປັນ ກາງ ແລະ ຖືກຕ້ອງປອງດອງຊາດ ໄດ້ພາກັນເດີນທາງໄປພົບຄະນະຜູ້

ແທນຢູ່ເຊີແນວ:

ໄປຂໍເຂົ້າພົບ ປະທານສຸພານຸວົງ, ຂໍເຂົ້າພົບ ພະນະທ່ານ ພູມີ ວົງ ວິຈິດ, ພົບທ່ານ ຄຳເຝື່ອນ ຕຸນາລົມ, ພົບ ທ່ານ ຈະເລີນ ພອງຈັນ, ພົບ ທ່ານ ທອງຈັນ ອຸປະລາວັນ ແລະ ຜູ້ອື່ນໆຢູ່ແວກຊ໊ວ (Versoix), ໄປຂໍພົບ ຄະນະຜູ້ແທນເປັນກາງ: ເປັນຕົ້ນແມ່ນ ສະເດັດສຸວັນນະພູມາ, ພະນະທ່ານ ກິນິມ ພົນເສນາ, ທ່ານ ກຸຍຫລີ ບັນຈົງພານິດ, ທ່ານ ອຸ່ນເນື້ອ ພິມມະ ສອນ...

ໃນເວລາພົບປະ ອັນໃດພວກຂ້າພະເຈົ້າບໍ່ແຈ້ງ, ອັນໃດພວກຂ້າ ພະເຈົ້າບໍ່ເຂົ້າໃຈ ກໍ່ລ້ວນແຕ່ໄດ້ສໍ້, ໄດ້ຖາມເຈາະຈີ້ມ ຈົນກ່ວາຈະກະຈ່າງ ແຈ້ງໂດຍພື້ນຖານ...

ສິ່ງນັ້ນ ໄດ້ກາຍເປັນການສຶກສາອົບຮົມພວກຂ້າພະເຈົ້າ ຢ່າງມີ ຄວາມໝາຍ ແລະ ສຸດທີ່ເປັນຜົນປະໂຫຍດອັນລ້ຳຄ່າຫາບໍ່ໄດ້... ເພາະມັນ ໄດ້ກາຍເປັນການແກ້ໄຂ ທາງດ້ານແນວຄິດການເມືອງທີ່ເລິກເຊິ່ງ ສາມາດ ເວົ້າໄດ້ວ່າເປັນຫນຶ່ງໃນບັນດາເຫດຜົນທີ່ເປັນກົກເຄົ້າ ເຮັດໃຫ້ຂະບວນການ ນັກສຶກສາລາວຢູ່ຝຣັ່ງ ແລະ ເອີຣົບ ມີຄວາມຕັດສິນໃຈໄປນຳການປະຕິວັດ ຢ່າງສຸດກົກ ສຸດປາຍ...

-ພາຍຫຼັງກອງປະຊຸມເຊີແນວ, ເວລາລັດຖະບານປະສົມແຫ່ງຊາດ ຄັ້ງທີ 2 ຂອງສະເດັດສຸວັນນະພູມາ ໄດ້ມີການເຄື່ອນໄຫວຢູ່ຝຣັ່ງ ເປັນຕົ້ນ ແມ່ນເວລາຄະນະຂອງພວກຂ້າພະເຈົ້າ ໄດ້ເຄື່ອນໄຫວຢູ່ປາຣີ ແລະ ຢູ່ມົງ ເປີລີເຢ, ຕູລູເຊ : ໄດ້ນຳເອົາເອກະສານເປັນທາງການ ຂອງກຳລັງປະຕິ ວັດໄປເຜີຍແຜ່, ເອົາຮູບຂອງໄຊຊະນະບັ້ນຕ່າງໆໄປວາງສະແດງ ແລະ ເອົາຮູບເງົາສີສົມລະປະຂອງແນວລາວຮັກຊາດໄປສາຍ ອັນໄດ້ເຮັດໃຫ້ ຫຼາຍຜູ້ຫຼາຍຄົນໃນຫມູ່ນັກສຶກສາ ແລະ ຄົນລາວເຮົາ ກໍ່ຄືໃນຫມູ່ນັກສຶກສາ ແລະ ຄົນຫວຽດນາມ, ກຳປູເຈຍ, ຝຣັ່ງ ແລະ ປະເທດອື່ນໆໃນໂລກເຂົ້າໃຈ

ແລະ ສະຫນັບສະໜູນຢ່າງກວ້າງຂວາງ... ຈົນເຖິງຂັ້ນຕຳຫລວດຝຣັ່ງໄດ້ ລົງມາກວດກາ...

ໃນທ່າມກາງບັນຍາກາດຄືດັ່ງກ່າວ, ຢູ່ ປາຣີ, ສະເດັດສຸວັນນະ ພູມາ ກໍ່ໄດ້ຈັດຕັ້ງການພົບປະກັບນັກສຶກສາ ຢູ່ ຮ້ານອາຫານ Chatelet ປາ ຣີ. ສ່ວນພະນະທ່ານ ກີນີມ ພົນເສນານັ້ນ, ກ່ອນເພິ່ນຈະກັບປະເທດ, ເພິ່ນ ກໍ່ໄດ້ລົງໄປຮອດມົງເປີລີເຢ ເພື່ອພົບປະໂອ້ລົມກັບນັກສຶກສາພວກຂ້າພະ ເຈົ້າ...

ເຖິງແມ່ນວ່າ ສົງຄາມຕົວຈິງ ຈະມີການຜັນແປໄປເທື່ອລະກ້າວ ຢູ່ ພາຍ ໃນປະເທດດ້ວຍລັກສະນະທີ່ນັບມື້ນັບດຸເດືອດ ແລະ ຮ້າຍກາດຂຶ້ນ, ເຖິງແມ່ນວ່າ ຂະບວນການຂົ່ມຂູ່ຈະກໍ່ສົງຄາມ ໄດ້ປັ່ນຂັ້ນໄດຂຶ້ນເທື່ອລະ ກ້າວແລ້ວກໍ່ຕາມ,...ແຕ່ເວລານັ້ນ ຢູ່ປະເທດຝຣັ່ງແມ່ນໄດ້ເປັນໄລຍະຫນຶ່ງ ທີ່ມີລັກສະນະສຸດທີ່ຟົດຟື້ນຂອງການປະຕິວັດ ເພາະວ່າ ພາຍໃນໝູ່ຄົນລາວ ຢູ່ຝຣັ່ງ ແລະ ບັນດານັກສຶກສາ ແມ່ນມີຄວາມເຂົ້າໃຈ ແລະ ເຊື່ອໝັ້ນຢ່າງ ແນ່ໃຈວ່າ ສຸດທ້າຍ ການປະຕິວັດ ແມ່ນແນ່ນອນຈະໄດ້ຮັບໄຊຊະນະ ແລະ ໄປເຖິງໄຊຊະນະທີ່ສົມບູນ ແລະ ກ້າວໜ້າຈະເລີນຮຸ່ງເຮືອງຂຶ້ນເທື່ອລະ ກ້າວຢ່າງຕໍ່ເນື່ອງ ຄືທຸກວັນນີ້... (ແຕ່ເວລານັ້ນ ບໍ່ມີໃຜຈະສາມາດວາດ ພາບໄດ້ຢ່າງຈະແຈ້ງວ່າຈະເປັນຄືແນວໃດແທ້)... ສິ່ງນັ້ນ ໄດ້ປັບປຸງຄວາມ ສາມັກຄີເປັນ ເອກະພາບ ຢ່າງກວ້າງຂວາງ ແລະ ໜັກແໜ້ນໃຫ້ແກ່ຂະ ບວນການປະຕິວັດ ຢູ່ແຫ່ງຕ່າງໆໃນໄລຍະຕໍ່ມາ...

ບໍ່ພຽງແຕ່ເທົ່ານັ້ນ, ບັນຍາກາດຄວາມສາມັກຄີ, ເອກະພາບ ແລະ ມິດຕະພາບ ຍັງໄດ້ກາຍເປັນເງື່ອນໄຂ, ເປັນພື້ນຖານໃຫ້ແກ່ການປະດິດ ສ້າງ ທາງດ້ານສິນລະປະ ແລະ ວັນນະຄະດີ ທີ່ຈັບໃຈແລະດູດດື່ມ... ແມ່ນ ໃນສິ່ງແວດລ້ອມ ແລະ ບັນຍາກາດນັ້ນ ທີ່ ສີສຸພັນ ຈຸມມະນີວົງ ໄດ້ແຕ່ງ ເພັງທີ່ໂດ່ງດັງ ແລະ ເປັນອໍາມະຕະເຖິງທຸກວັນນີ້ ນັ້ນແມ່ນເພງ “ສະຫວັດ

ດີ້ນ້ອງສາວ" ທີ່ໃຊ້ທັ້ງພາສາລາວ ແລະ ຝຣັ່ງ...

ເຖິງວ່າ ພະນະທ່ານ ກິນິມ ພິນເສນາ ເພິ່ນໄດ້ຈາກພວກເຮົາໄປ ແລ້ວ ຢ່າງບໍ່ມີວັນກັບເປັນເວລາ 50 ປີ (ເຄິ່ງສັດຕະວັດ) ແລ້ວກໍ່ຕາມ ແຕ່ ຄຸນງາມຄວາມດີ, ຜົນງານ, ຕົວແບບ ແລະ ມູນເຊື້ອອັນຈີບງາມ, ມີຄວາມ ໝາຍ ແລະ ສົມກຽດຂອງເພິ່ນ ຍັງຄົງຕົວ ແລະ ຂະຫຍາຍຕົວນຳພວກເຮົາ: ລູກຫຼານ ແລະ ປະຊາຊົນລາວບັນດາເຜົ່າຕະຫຼອດໄປ...

“ຄຸນງາມຄວາມດີຂອງທ່ານ ກຶນີມ ພົນເສນາ ທີ່ມີຕໍ່ປະເທດຊາດ”

ໂດຍນາຍພົນ ຄຳອ້ວນ ບຸບຜາ, ອະດີດ
ລັດຖະມົນຕີປະຈຳສຳນັກນາຍົກລັດຖະມົນຕີ,
ອະດີດລັດຖະມົນຕີວ່າການກະຊວງຍຸຕິທຳ

ທ່ານ ກຶນີມ ພົນເສນາ, ເປັນຜູ້ຊົງຄຸນວຸດທິ ທີ່ສະຫງາດແຫຼມຄົມ. ທ່ານ ເປັນນັກການເມືອງ ແລະ ນັກເສດຖະກິດ ທີ່ເຫັນກ້ວາງມອງໄກ. ທ່ານມີຄວາມເດັດດ່ຽວຕໍ່ສູ້ ເພື່ອໃຫ້ປະເທດມີສັນຕິພາບ, ເອກະ ລາດ, ເອກະພາບ, ມີຄວາມປອງດອງ, ມີປະຊາທິປະໄຕ ແລະ ສ້າງສາປະເທດ ຊາດໃຫ້ຈະເລີນຮຸ່ງ ເຮືອງ.

ຂ້າພະເຈົ້າ ໄດ້ມີໂອກາດພົບທ່ານເປັນເທື່ອທຳອິດ ໃນມື້ລັດຖະ ບານຈັດພິທີຖະຫວາຍຄວາມເຄົາລົບ ຮັບຕອ້ນການກັບຄືນມາຈາກປະເທດ ໄທ ຂອງສະເດັດເຈົ້າເພັດຊະລາດ ໃນວັນທີ 06 ເມສາ ປີ 1957 ຢູ່ເຮືອນ ພັກຫໍຄຳຂ້າງວັດພະແກ້ວ ນະຄອນຫຼວງວຽງຈັນ. ຂ້າພະເຈົ້າໄດ້ຖາມເພີ່ນ ວ່າ: “ທ່ານ ກັບ ລຸງຄຳເພົ້າ ບຸບຜາ ໄດ້ມີການເປີກສາທັດສະນະໃນການ ສ້າງພັກສັນຕິ ພາບເປັນກາງເປັນ ແນວໃດ?” ເພີ່ມໄດ້ຕອບຂ້າພະເຈົ້າວ່າ: ການຈະຮັກສາຄວາມເປັນເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນ ຄົບຖ້ວນຂອງຊາດລາວໄວ້ໄດ້, ມີແຕ່ຕ້ອງເຮັດແນວໃດ ບ່ໃຫ້ຕ່າງປະເທດ ມາຄອບງຳ ຫຼື ຄວບຄຸມປະເທດເຮົາໄດ້. ສະນັ້ນ, ການຕໍ່ສູ້ເພື່ອສັນຕິພາບ ແລະ ເປັນກາງ ແມ່ນເປັນເສັ້ນທາງດຽວ ທີ່ຈະພາໃຫ້ປະເທດຊາດຫຼຸດພົ້ນ ອອກຈາກໄພພິບັດຕ່າງໆ”. ຕໍ່ຄຳເວົ້າຂອງເພີ່ນ ໄດ້ເຮັດໃຫ້ຂ້າພະເຈົ້າເຫັນ ໄດ້ວ່າ: ທ່ານ ກຶນີມ ພົນເສນາ ແມ່ນມີຈິດໃຈສຳນຶກ ແລະ ອຸດົມການທີ່ຢາກ

ຈະພິທັກຮັກສາຄວາມເປັນຊາດລາວ ຢ່າງເດັດດ່ຽວໝຽວແໜ້ນແທ້. ແລະ ຂ້າພະເຈົ້າ ກໍໄດ້ເວົ້ານຳເພີ່ມວ່າ: "ນ້ອງຂໍສະໜັບສະໜູນຕໍ່ອຸດົມການຂອງ ຍາອ້າຍ ແລະ ຂອງລຸງຄຳເພົ້າຢ່າງສຸດຂີດ" ແລະ ເພີ່ນກໍໄດ້ຕອບວ່າ: "ຂໍ ຂອບ ໃຈຍານ້ອງ ທີ່ເຫັນບັນຫານຳ".

ໃນປີ 1961, ກອງປະຊຸມລັດຖະບານ ສັນຕິພາບ-ເປັນກາງ ໄດ້ ຈັດຂຶ້ນຢູ່ຄັງໄຂ, ແຂວງຊຽງ ຂວາງ ໂດຍແມ່ນສະເດັດເຈົ້າ ສຸວັນນະພຸມາ ເປັນນາຍົກ, ທ່ານ ກຶນີມ ພົນເສນາ ປະທານພັກສັນຕິພາບເປັນກາງ ທັງ ເປັນລັດຖະມົນຕີ ວ່າການກະຊວງການຕ່າງປະເທດ, ທ່ານ ຄຳສຸກ ແກ້ວ ລາ ເປັນລັດ ຖະມົນຕີວ່າການກະຊວງສາທາລະນະສຸກ. ຂ້າພະເຈົ້າໄດ້ມີ ໂອກາດໄປຮ່ວມ ຊຶ່ງກອງປະຊຸມໄດ້ຍົກບັນຫາການຕໍ່ສູ້ຕ້ານການຮຸກຮານ ຂອງລັດຖະບານຈັກກະພັດອາເມລິກາ ແລະ ລູກມື ແລະ ກອງປະຊຸມໄດ້ ເວົ້າເຖິງການຮ້ອງຂໍການຊ່ວຍເຫຼືອຈາກອະດີດສະຫະພາບໂຊວຽດ, ສປ ຈີນ, ສສ. ຫວຽດນາມ, ບັນດາປະເທດສັງຄົມນິຍົມ, ບັນດາປະເທດທີ່ຮັກ ຫອມສັນຕິ ພາບໃນທົ່ວໂລກ. ທ່ານ ກຶນີມ ພົນເສນາ ເປັນຜູ້ໜຶ່ງໃນແກນ ນຳທັດສະນະ ດັ່ງກ່າວ ເຊິ່ງມັນໄດ້ເປັນປັດໄຈໃຫ້ກັບບັນດາຊັ້ນຄົນ ສະໜັບ ສະໜູນນັບມື້ ນັບຫຼາຍຂຶ້ນ.

ໃນປີ 1962 ຫຼັງຈາກປິດປ່ອຍຫຼວງນ້ຳທາ ຊຶ່ງເຮັດໃຫ້ຝ່າຍອຽງ ຈັນຍອມເຈລະຈາ ກັບຝ່າຍກຳລັງເປັນກາງ ແລະ ຝ່າຍປະເທດລາວ ແລະ ຍອມ ສ້າງຕັ້ງລັດຖະບານປະສົມສາມຝ່າຍ ລະຫ່ວາງ ຝ່າຍເປັນກາງ, ຝ່າຍ ປະເທດລາວ ແລະ ຝ່າຍອຽງຈັນ ແລະ ຍອມຮັບໃຫ້ເຈົ້າສຸວັນນະພູມາ ເປັນ ນາຍົກ, ສະເດັດເຈົ້າສຸພານຸວົງ ເປັນຮອງ ນາຍົກ ແລະ ທ່ານ ກຶນີມ ພົນເສ ນາ ເປັນລັດຖະມົນຕີວ່າການກະຊວງການຕ່າງປະເທດ. ໄຊຊະນະດັ່ງກ່າວ ແມ່ນໄດ້ສ່ອງແສງເຖິງການຊັ່ງຊຳກຳລັງ ທີ່ໄດ້ປ່ຽນທາງດ້ານການເມືອງ

---

[1] ທ່ານ ຄຳເພົ້າ ບຸບຜາ ແມ່ນຜູ້ແທນລາດຊະດອນຊຸດທຳອິດ, ເປັນນັກຕໍ່ສູ້ເດັດດ່ຽວໝຽວແໜ້ນໃນສະພາແຫ່ງຊາດ ແລະ ໄດ້ ຮ່ວມມືຢ່າງໃກ້ຊິດກັບທ່ານ ກຶນີມ ພົນເສນາໃນເວລານັ້ນ, ສຸດທ້າຍ ໄດ້ຖືກອຸປະຕິເຫດ ພ້ອມດ້ວຍລູກສາວ (ຊຶ່ງຄາດວ່າແມ່ນ ອຸປະຕິເສດແບບຄາດຕະກຳໂດຍກຳລັງມືດປະຕິການ ຊຶ່ງເປັນການສູນເສຍຜູ້ຊົງຄຸນວຸດທິທີ່ຮັກຊາດຜູ້ໜຶ່ງແຕ່ທີ່ຖືກຫຼົງລືມ).

ແລະ ການທະຫານຂອງຍຸດໂທບາຍຂອງການປະຕິວັດ ທີ່ເອົາສອງຕີໜຶ່ງ (2 ຕີ 1) ແລະ ໄຊຊະນະດັ່ງກ່າວ ໄດ້ກ້າວໄປເຖິງມີກອງປະຊຸມ 14 ປະເທດ ກ່ຽວກັບການຢຸດຕິການຄອບຄອງຂອງຈັກກະພັດອາເມລິກາຢູ່ ລາວ ແລະ ວັນທີ 23/7/62 ໄດ້ມີການເຊັນສັນຍາຢູ່ເຊີແນວ, ຊຶ່ງທ່ານ ກີນິມ ພົນເສນາ ໃນນາມລັດຖະມົນຕີວ່າການກະຊວງການຕ່າງປະເທດຂອງລັດ ຖະບານປະສົມ 3 ຝ່າຍ ໄດ້ເປັນຜູ້ເຊັນ ອັນເປັນການຢັ້ງຢືນເຖິງຄວາມມຸ້ງ ມາດປາຖະໜາຂອງປວງຊົນລາວທັງຊາດ ທີ່ຢາກໃຫ້ມີສັນຕິພາບ, ເປັນ ເອກະລາດ, ມີປະຊາທິປະໄຕ ແລະ ຜົນແຜ່ນດິນອັນຄົບຖ້ວນຂອງຕົນ ເພື່ອພັດທະນາໃຫ້ຈະເລີນຮຸ່ງເຮືອງ.

ທ້າຍປີ 1962 ຕົ້ນປີ 1963, ລັດຖະບານປະສົມ 3 ຝ່າຍ ໄດ້ສຸມ ໃສ່ການວາງແຜນ ເພື່ອເຮັດໃຫ້ສັນຍາເຊີແນວ ແລະ ໂຄງການການເມືອງ ທີ່ຈະເຮັດໃຫ້ປະເທດມີສັນຕິພາບ, ເອກະລາດ, ປະຊາທິ ປະໄຕ, ເອກະ ພາບ ແລະ ວັດທະນະຖາວອນ ໄດ້ປາກົດເປັນຈິງນັ້ນ ແມ່ນທຸກພັກຝ່າຍ ການເມືອງຕ້ອງປະຕິບັດຢ່າງເຂັ້ມງວດ. ໃນໄລຍະນີ້ ຝ່າຍປະຕິການຂວາ ຈັດ ແມ່ນຂັດຂວາງທຸກຂໍ້ສະເໜີຂອງຝ່າຍຮັກຊາດ, ທັງໃຊ້ກົນອຸບາຍໂຫດ ຮ້າຍ ແລະ ໃຊ້ວິທີຫັນປ່ຽນກຳລັງເປັນກາງໂດຍສັນຕິ. ການຕໍ່ສູ້ກັນລະ ຫ່ວ່າງຝ່າຍຮັກຊາດ ກັບຝ່າຍປະຕິການ ໃນຕອນນີ້ ທ່ານ ກີນິມ ພົນເສນາ ເປັນຜູ້ໜຶ່ງໃນແກນນຳຂອງຝ່າຍຮັກຊາດ ທີ່ຈະນຳເອົາຜົນປະໂຫຍດ ອັນ ສູງສຸດ ມາໃຫ້ປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າ.

ສະຫຼຸບຄວາມແລ້ວ, ຄຸນງາມຄວາມດີ ຊຶ່ງທ່ານ ກີນິມ ພົນເສນາ ໄດ້ອຸທິດທັງສະຕິປັນຍາ, ທັງຄວາມສຸກສ່ວນຕົວ ແລະ ຊີວິດຂອງເພິ່ນ ເພື່ອປະເທດຊາດນັ້ນ ແມ່ນຄຸນນະທຳອັນປະເສີດ ທີ່ປະຊາຊົນລາວທັງ ຊາດໄດ້ ຈາລຶກໄວ້ໃນປະຫວັດສາດຂອງຊາດລາວ. ນີ້ແມ່ນຄຳເຫັນໂດຍ ຫຍໍ້ຂອງສ່ວນໜຶ່ງ ທີ່ຂ້າພະເຈົ້າໄດ້ມີການພົວພັນ ແລະ ຮ່ວມມືກັບເພິ່ນ.

*ວຽງຈັນ, ວັນທີ 23 ກຸມພາ 2013

“ຄວາມຊົງຈຳ ຂອງເພື່ອນສະໜິດແຕ່ເຍົາໄວ ກ່ຽວກັບ ທ່ານ ກິນິມ ພົນເສນາ”

ໂດຍ ທ່ານ ເຫຼື້ອມ ອິນສີຊຽງໃໝ່, ອະດີດ
ລັດຖະມົນຕີກະຊວງສຶກສາທິການຂອງ
ລັດຖະບານປະສົມ 3 ຝ່າຍ

ຂ້າພະເຈົ້າ ເຄີຍຮຽນຢູ່ໂຮງຮຽນ ມັດທະຍົມ ປາວີ ຢູ່ວຽງຈັນ ກັບ ຍາກິນິມ ພົນເສນາ ແຕ່ປີ 1930 ເຖິງປີ 1934. ເວລານັ້ນພວກຂ້າພະເຈົ້າ ມີນຳກັນ ສາມສະຫາຍ ຄື ຍາກິນິມ, ຍາເຫຼື້ອມ ລາດຊະສົມບັດ ແລະ ຂ້າ ພະເຈົ້າເອງ. ຖ້າຍັງມີຊີວິດຢູ່ ຍາກິນິມ ແລະ ຍາເຫຼື້ອມ ຈະມີອາຍຸ 101 ປີ ແລະ 99 ປີ ຕາມລຳດັບ. ທັງສອງທ່ານ ຮຽນຢູ່ຫ້ອງດຽວກັນ. ສ່ວນຂ້າພະ ເຈົ້າປີນີ້ ໄດ້ 98 ປີ, ຮຽນຢູ່ສູງກ່ວາພວກເພິ່ນຫ້ອງໜຶ່ງ. ອາຈານຂອງພວກ ຂ້າພະ ເຈົ້າແມ່ນ ທ່ານ ນາງ ອາລິນ ຊຶ່ງຕໍ່ມາແມ່ນພັນລະຍາ ຂອງເຈົ້າສຸ ວັນນະພູມາ. ອາຈານ ຮັກພວກຂ້າພະເຈົ້າທັງສາມ ແລະ ຖືເປັນຄື ລູກເຕົ້າ ຂອງເພິ່ນ.

ສາມສະຫາຍພວກຂ້າພະເຈົ້າ ເປັນຄົນທຸກນຳກັນ ແລະ ມັກຫຼິ້ນ ນຳກັນ. ຂ້າພະເຈົ້າໄດ້ທຶນຫຼວງ ແລະ ຢູ່ວັດມີໄຊ, ຕໍ່ມາແມ່ນວັດອິນແປງ, ຍ່າງໄປຮຽນຄູ່ມື້ຄືຍາກິນິມ. ສ່ວນຫຼາຍພວກຂ້າພະເຈົ້າບໍ່ເຄີຍອອກໄປທ່ຽວ ໃສ ເພາະໜ້າອາຍຜູ້ສາວ; ເຖິງແມ່ນວ່າ ເວລານັ້ນກໍເຄີຍມີຜູ້ສາວຮັກຂ້າພະ ເຈົ້າຢູ່ໃດ. ພວກຂ້າພະເຈົ້າ ມັກຫຼິ້ນກິລາ, ໂດຍສະເພາະແມ່ນເຕັນນິດ. ພວກຂ້າພະເຈົ້າມັກໄປຕີເຕັນນິດ ຢູ່ເດີ່ນໃກ້ໆກັບ ໂຮງຮຽນການຊ່າງປາກ ປາສັກດຽວນີ້, ຍ້ອນຕີບໍ່ເກັ່ງ ຈຶ່ງມັກເຮັດໃຫ້ລູກເຕັນນິດ ບິນຂ້າມໄປໂຮງ ຮຽນການຊ່າງປາກປາສັກ. ແຕ່ພວກຝະລັ່ງບໍ່ໃຫ້ເຂົ້າ, ດັ່ງນັ້ນ ຈຶ່ງຕ້ອງເສຍ

ເງິນຕື່ມ ເພື່ອຊື້ລູກເຕັນນິດໃໝ່. ຈົນຮອດເວລາເຮັດການເປັນເຈົ້າເປັນນາຍ ແລ້ວ, ຍາມພັກ ຫຼື ມີເວລາຫ່ວາງ ຍາກິນມຍັງມັກໄປຕີເຕັນນິດ ທີ່ເດີ່ນ ກີລາແຫ່ງຊາດ, ເພາະເປັນກີລາປະເພດດຽວທີ່ເພີ່ນມັກ.

ມາຄິດຄືນດຽວນີ້ ກໍຍັງຢາກຫົວ. ເພາະໃນເວລາຮ່ວມຊີວິດຢູ່ໂຮງ ຮຽນ ມັດທະຍົມປາວີ, ສາມສະຫາຍທີ່ທຸກນຳກັນ ເຮັດຫຍັງກໍເຮັດນຳກັນ ແລະ ຍ້ອນເຮົາທຸກຈົ່ງຕົກລົງອອກເງິນຜູ້ລະ 3 ຫຼຽນ ແລ້ວມອບໃຫ້ຂ້າພະ ເຈົ້າເປັນຜູ້ຮັກສາ. ໃນທີ່ສຸດບໍ່ມີໃຜໄດ້ໃຊ້ ເພາະຂ້າພະເຈົ້າໄດ້ໃຊ້ຈ່າຍຜູ້ດຽວ ໂດຍບໍ່ມີສິ້ນມີຫົວ. ຍາກິນມ ແລະ ຍາເຫຼືອມ ກໍບໍ່ໄດ້ເວົ້າຫຍັງ, ມີແຕ່ຍາກິ ນິມ ວ່າເຊົາ, ບາດນີ້ ບໍ່ໂຮມເງິນນຳກັນອີກ.

ພາຍຫຼັງສຳເລັດການສຶກສາ, ຍາກິນມ ກັບເມືອປາກເຊ. ຕໍ່ມາກໍ ເປັນເຈົ້າເມືອງ ເມືອງປາກຊ່ອງ, ເປັນຜູ້ ແທນ... ແລະ ສຸດທ້າຍ ກໍດຳລົງ ຕຳແໜ່ງລັດຖະມົນຕີວ່າການກະຊວງການຕ່າງປະເທດ. ສ່ວນຂ້າພະເຈົ້າ ໄປຮຽນຕໍ່ ຢູ່ພະນົມເປັນ. ໃນປີ 1948, ຂ້າພະເຈົ້າໄດ້ດຳລົງຕຳແໜ່ງເປັນ ລັດຖະມົນຕີກະຊວງການຄັງ, ເປັນຜູ້ແທນ ແລະ ເປັນລັດຖະມົນຕີກະຊວງ ສຶກສາທິການ.

ໃນປີ 1947, ຂ້າພະເຈົ້າພ້ອມດ້ວຍຍາກິນມ ແລະ ຕົວແທນຈາກ ແຂວງຕ່າງໆ (ທັງໝົດ 43 ທ່ານ) ໄດ້ຮ່ວມສ້າງລັດຖະທຳມະນູນສະບັບທຳ ອິດຂອງລາວນຳກັນ ແລະ ທັງສອງ ແລະ ຕົວແທນທີ່ຮັກຊາດຫຼາຍທ່ານ ກໍໄດ້ຂັດກັບພວກຝະລັ່ງໂດຍທາງອ້ອມ ທີ່ຢາກປ່ຽນພາສາລາວເປັນພາສາ ລາແຕງ, ໂດຍສືບຕໍ່ໃຊ້ອັກສອນລາວຈົນເທົ່າເຖິງທຸກມື້ນີ້.

ໃນປີ 1962 ກໍມີການເຊັນສັນຍາເຊີແນວ ກ່ຽວກັບລາວ ໂດຍມີ 14 ປະເທດຮັບຮອງ ແລະ ຍາກິນມ ເປັນຜູ້ຕາງໜ້າລັດຖະບານປະສົມສາມ

---

[1] ເງິນໃນສະໄໝນັ້ນ ມີຄຸນຄ່າສູງ.ເຊັ່ນໃນປີ 1934, ຂ້າພະເຈົ້າມີເງິນ 6 ກີບ,ຂ້າພະເຈົ້າເອົາເງິນ 3 ກີບໄປຕັດ ສູດນຶ່ງຊຸດ, ເສື້ອເຊີດ ໜຶ່ງໂຕ ແລະ ເກີບໜຶ່ງຄູ. ຍັງອີກ 3 ກີບ ແມ່ນປ່ຽນເປັນເງິນກີບເຈ້ັງໄປພະນົມເປັນ.

ฝ่าย ไปร่อมลิ่วลายเซ้นในสันยาดั่งก่าอ. เอลานั้น ใผก็เชื่ออ่าลัดถะบานปะสิมจะพั้นถิ่งเพาะมีสันยาละดับสาก็นรับรู้นำ.

แต่บ่นึกบ่ฝันอ่าสะพาบกานจะมีกานอุ้นอาย ปั่นป่วนย่างร้ายแรง จินในที่สุด ยาก็นิม ถืกลาดตะก่าในอันที่ 1/4/63. ข้าพะเจ้าเมื่อคิดเถิ่งเหดกานที่เส้าสะหุ็ดใจดั่งก่าอ ก่ค้อยใจลืดั่งตินได้สูนเสีย อ้ายน้องคิ่งของติน. ข้าพะเจ้า เถิ่งแม่นอ่าอยู่คินละฝ่ายกับยาก็นิม, เพิ่นเป็นหัวหน้าพักสันติพาบเป็นกาง, ข้าพะเจ้าอยู่ฝ่ายขวา, แต่ยาก็นิม กับข้าพะเจ้าก่ยังรักแพงกันลืเก่า และ มีน้ำใจรักซาดลีกัน. เพาะกานเป็นฝ่ายขวา ก่แม่นเพิ่นตั้งให้เป็น. ข้าพะเจ้ายังอยู่ในปะเหดลาวอยู่มื้นี้ ก่ย้อนเป็นคินรักซาด ติอจิง.

เถิ่งแม่นอ่า ยาก็นิม จะล่องลับไปแล้วก่ตาม, แต่กานพิอพัน, รักแพง ละห่อาง สองคอบคัว พอกข้าพะเจ้ายังคิ่งบ่มีกานป่วนแปงแต่ปะกานใดเลีย. เอลายาก็นิม เสิงชีวิดไปแล้อ, ข้าพะเจ้าก่ได้ไปยามพันละยาของเพิ่นที่ได้รับบาดเจับสาหัด จากเหดกานลาดตะก่ายาก็นิม.

กานผูกพัน และ รักแพงกัน ละห่อาง สองคอบคัว ยังคิ่งสืบต่ไปรอดรุ้นคิน ลุ้นลูก และ หลาน. แต่ความรักแพงละห่อาง ข้าพะเจ้า และ ยาก็นิมมาเถิ่ง ความรักแพงละห่อาง พันละยา ของสองสะหายพอกเฮา ที่ไปมาหาสู่กันย่างเป็นปะจำ และ ลูกหลานของยาก็นิม ก่มักจะได้มุ่งสิ้มที่ แม่หอม (ชื่อของพันละยาข้าพะเจ้า) ฝากให้เขาเจ้า. รอดรุ้นลูกของทังสองคอบคัว ก่รักแพงกัน และหุ้มน่ากัน, มารอดเซ่นหลานก่ยังรักสาความรักแพงน่ากัน. หลานชายข้าพะเจ้าผู้หนึ่ง ก่มีร้านกาเฟ อยู่ ปากเซ ซึ่งปาก็ดอ่าแม่นลูกหลานตะกุน พินเสนาให้กานช่อยเหือแก่ผู้กุ่อ.ส่อนหลานอีกผู้หนึ่งที่เรัด

ວຽກຢູ່ອົງການກວດສອບແຫ່ງລັດ ກໍໄດ້ຮັບການຊ່ວຍເຫຼືອ, ແນະນຳຈາກ ລູກເຂີຍຂອງຍາກິນິມ ທີ່ຊື່ວ່າ ສຈ ດາລັດ ບຸບຜາ, ດຽວນີ້ ກໍມີຄວາມກ້າວ ໜ້າໃນວຽກງານ, ໂດຍໄດ້ຮັບໜ້າທີ່ເປັນເລຂາຂອງທ່ານປະທານອົງການ ກວດສອບແຫ່ງລັດ.

ຂ້າພະເຈົ້າຍັງຄົງຕິດຕາມສະພາບການເຮັດວຽກ ແລະ ຄວາມ ກ້າວໜ້າຂອງລູກໆຂອງຍາກິນິມ, ຊຶ່ງຂ້າພະເຈົ້າກໍຮັກ ແລະ ຖືເຂົາເຈົ້າຄື ລູກຂອງຕົນເອງ ແລະ ເຂົາເຈົ້າກໍເອີ້ນຂ້າພະເຈົ້າ ແລະ ພັນລະຍາຂອງຂ້າ ພະເຈົ້າເປັນ "ຍາພໍ່ເຫຼືອມ" ແລະ "ຍາແມ່ຫອມ". ຂ້າພະເຈົ້າກໍດີໃຈທີ່ເຫັນ ວ່າ ພວກລູກ ເຂັ້ມເພັດ, ເຂັ້ມແພງ, ສົມມາດ ແລະ ເຂັ້ມມະນີ ລ້ວນແຕ່ເຄີຍ ຫຼື ພວມໄດ້ຮັບໜ້າທີ່ການງານທີ່ສຳຄັນ ໃນວົງການລັດຖະບານ. ສົມມາດ ຍາມໃດມາສະຫວັນ ກໍໜັ້ນມາແວ່ຢາມຂ້າພະເຈົ້າເລື້ອຍ. ຂ້າພະເຈົ້າມີ ຄວາມດີໃຈທີ່ເຫັນວ່າລູກຂອງຍາກິນິມ ສາມາດສືບທອດພາລະກິດຂອງພໍ່ ແລະ ເຮັດໃຫ້ຄວາມມຸ້ງຫວັງຂອງພໍ່ປາກົດຜົນເປັນຈິງ.

24/VII
ຫ້າມຈຳໜ່າຍ

“ບາງຄວາມຊົງຈຳ ເພື່ອເປັນການອຸທິດເຖິງ ວັນມໍລະນະກຳ ຂອງ ພໍ່ ກິນິມ ພິນເສນາຄົບຮອບ 50 ປີ (1963-2013)”

ໂດຍ: ເຊີນ ເພັດສັງຫານ (ລູກບຸນທຳຜູ້ກົກ ຂອງ ພໍ່ກິນິມ ແລະ ແມ່ໄພບູນ),ອະດີດ ລັດຖະມົນຕີ ຊ່ວຍວ່າການ ກະຊວງໂຍທາທິການ ແລະ ຂົນ ສົ່ງ,ທີ່ປຶກສາ ຄະນະກຳມະການແຫ່ງຊາດ ເພື່ອມໍລະດົກໂລກ

ຂ້າພະເຈົ້າ ໄດ້ພົບປະທຳຄວາມລົ້ງເຄີຍ ກັບ ພໍ່ ກິນິມ ໃນສອງໄລຍະ:

- ເທື່ອທີຫນຶ່ງ ແມ່ນເວລາທີ່ຂ້າພະເຈົ້າ ຫນີຈາກພໍ່ແມ່ຢູ່ສະຫວັນນະ ເຂດ ມາຮຽນຕໍ່ມັດທະຍົມຕອນປາຍ ທີ່ນະຄອນຫລວງວຽງຈັນກໍ່ ໄດ້ມີໂອກາດ ແວ່ເຂົ້າເຮືອນຂອງເພິ່ນ ຕັ້ງຢູ່ຖະຫນົນສາມແສນໄທ ເພື່ອຊື້ຫນັງສືພິມ ແນວລາວຮັກຊາດ ທີ່ແມ່ນຫນັງສືພິມ ນັກສຶກ ສາ-ຊາວຜູ້ອອກແຮງງານ ມັກອ່ານໃນເວລານັ້ນ. ຄັ້ງທຳອິດທີ່ພົບ ເພິ່ນ ເພິ່ນກໍ່ໄດ້ຖາມຮູ້ ທ້ອງຖິ່ນ-ພໍ່ແມ່ຂອງຂ້າພະເຈົ້າ. ຜູ້ທີ່ໃກ້ ຊິດ ແລະ ໃຫ້ຄວາມອົບອຸ່ນຕໍ່ຂ້າພະເຈົ້າຢ່າງເປັນປະຈຳໃນທຸກ ຄັ້ງທີ່ຂ້າພະເຈົ້າມີໂອກາດໄປຫາ-ມາແວ່ຢາມ ກໍ່ແມ່ນ ແມ່ເຖົ້າໄພ ບູນ ແລະ ນ້ອງເຂັມເພັດ. ສ່ວນພໍ່ກິນິມນັ້ນ ກໍ່ບໍ່ສູ້ພົບຫນ້າພໍ້ຕາ ເພິ່ນເລື້ອຍປານໃດ ຄົງຈະແມ່ນເພິ່ນເຮັດວຽກປະຈຳການຢູ່ຫ້ອງ ການຂອງເພິ່ນ. ໃນສະໄຫມນັ້ນ ຕາມຂ້າພະເຈົ້າຈື່ບໍ່ລືມ ແມ່ນເພິ່ນ ເປັນປະທານ ຂອງພັກສັນຕິພາບເປັນກາງ ຊຶ່ງມີ ລຸງ ມະຫາກຸ ເປັນຮອງ.
- ໃນປີ 1960, ຂ້າພະເຈົ້າ ໄດ້ຮັບທຶນໄປຮຽນຕໍ່ ຢູ່ມະຫາວິທະຍາໄລ

ທີ່ປະເທດຝະລັ່ງເສດ. ເມື່ອໄປ ຮອດແລ້ວ ກໍ່ໄດ້ເຂົ້າເປັນສະມາ ຊິກ ຂອງຄະນະກຳມະການສະຫນັບສະຫນູນການເມືອງເປັນ ກາງ ທີ່ແມ່ນການຈັດຕັ້ງຂອງນັກສຶກສາລາວຮຸ່ນອ້າຍ ໄດ້ພາກັນ ຈັດຕັ້ງຂຶ້ນ ເພື່ອເປັນກຳລັງກົດດັນເລັ່ງທວງ ໃຫ້ຈັກກະພັດອາເມ ລິກາ ຢຸຕິສົງຄາມບ້າງເພທຳລາຍ ແລະ ແຊກແຊງໃນລາວ, ສົ່ງ ເສີມແນວທາງປອງດອງຊາດ, ສົ່ງເສີມໃຫ້ລາວທຸກຝ່າຍຈົ່ງໄດ້ ຫັນຫນ້າເຂົ້າກັນ ແລະ ທຳຄວາມເຂົ້າໃຈຊຶ່ງກັນ ແລະ ກັນ. ໃນໄລ ຍະດຽວກັນນີ້ ກໍ່ໄດ້ມີກອງປະຊຸມສາກົນ ຈັດຂຶ້ນທີ່ເມືອງເຊີແນວ ປະເທດສະວິດ ເພື່ອຊ່ວຍໄກ່ເກ່ຍໃຫ້ລາວສາມຝ່າຍໂຮມເຂົ້າກັນ ແລະ ຈັດຕັ້ງລັດຖະບານປະສົມ. ພໍ່ກິນີ້ ກໍ່ໄດ້ເຂົ້າຮ່ວມກອງປະ ຊຸມດັ່ງກ່າວ ໃນນາມລັດຖະບານລາວ ທີ່ຖືກຕ້ອງຕາມກົດຫມາຍ.

ເວົ້າລວມແລ້ວ ຕາມຄວາມຮັບຮູ້ຂອງຂ້າພະເຈົ້ານັ້ນ ພັກສັນຕິ ພາບເປັນກາງ ແລະ ແນວລາວຮັກຊາດມີອຸດົມການ, ມີແນວທາງການ ເມືອງທັງພາຍໃນ ແລະ ຕ່າງປະເທດ ຄ້າຍຄືກັນ, ປາສະຈາກການຂັດ ແຍ່ງແບບເອົາເປັນເອົາຕາຍ ຈຶ່ງບໍ່ມີຄວາມລຳບາກ ໃນການເຂົ້າຫາກັນ-ຮ່ວມກັນ-ຈັບມືກັນ ເພື່ອຮັບຜິດຊອບຕໍ່ໂຊກຊາຕາກຳຂອງບ້ານເມືອງ. ສ່ວນຝ່າຍຂວາອ່ຽງຈັນນັ້ນ ມີອຸດົມການ ແລະ ແນວທາງນະໂຍບາຍການ ເມືອງ ຢາກເປັນຂ້ອຍຂ້າມ້າໃຊ້ຂອງຈັກກະພັດ, ເຊິ່ງກົງກັນຂ້າມກັບແນວ ລາວຮັກຊາດ ແລະ ພັກສັນຕິພາບເປັນກາງ ເວົ້າສະເພາະ, ເວົ້າລວມກໍ່ ແມ່ນກັບຄວາມມຸ່ງມາດປາຖະຫນາ ຂອງປະຊາຊົນລາວທັງຊາດ.

ໃນສ່ວນເລິກຂອງພວກເຂົາແລ້ວ ແມ່ນຢາກໃຫ້ສົງຄາມສືບຕໍ່ ແລະ ບໍ່ຢາກໃຫ້ມີລັດຖະບານປະສົມ ເພາະມັນຈະເປັນການເສຍຜົນປະ ໂຫຍດ-ເສຍຖານະບົດບາດສ່ວນຕົວຂອງພວກເຂົາ. ແຕ່ພວກເຂົາຖືກສະ ພາບການທັງພາຍໃນ ແລະ ສາກົນຫນີບຮັດ ຈົນບໍ່ສາມາດຈະປະຕິເສດໄດ້,

ໃນທີ່ສຸດ ກໍ່ຕ້ອງຍອມຮັບການສ້າງຕັ້ງລັດຖະ ບານປະສົມສາມຝ່າຍ ແລະ ພໍ່ກິນິມ ກໍ່ໄດ້ຖືກແຕ່ງຕັ້ງໃຫ້ເປັນລັດຖະມົນຕີວ່າການ ກະຊວງການຕ່າງ ປະເທດ ອັນເປັນເຫດການສຸດທີ່ສຳຄັນ ແລະ ມີຄວາມຫມາຍສຳລັບຂ້າ ພະເຈົ້າ ກໍ່ຄືສຳລັບຄົນລາວທີ່ຮັກແພງຊາດ ຮັກແພງສັນຕິພາບ. ຢາກໃຫ້ມີ ຄວາມປອງດອງຊາດ, ມີສັນຕິພາບ, ມີເອກະລາດ ຢູ່ລາວເຮົາ. ຕໍ່ມາ, ໃນປີ 1961, ພໍ່ກິນິມ ກໍ່ໄດ້ເດີນທາງມາປະເທດຝະລັ່ງເສດ ເພື່ອທຳການຢ້ຽມ ຢາມສັນທະວະໄມຕີ. ໃນໂອກາດນີ້ ເພິ່ນກໍ່ໄດ້ຈັດການພົບປະກັບນັກສຶກສາ ລາວ ຢູ່ນະຄອນຫລວງປາຣີ ແລະ ເມືອງມົງແປນລີເອ ເພື່ອເລົ່າສະພາບ ການລວມຢູ່ລາວ ແລະ ແນວທາງນະໂຍບາຍການເມືອງ ພາຍໃນ ແລະ ຕ່າງປະເທດ ຂອງລັດຖະບານປະສົມ. ນອກຈາກນີ້ແລ້ວ ເຮົາເອງຍັງໄດ້ ພົບປະສ່ວນຕົວນຳເພິ່ນ ແລະ ເພິ່ນກໍ່ໄດ້ເລົ່າສູ່ຟັງ ຄວາມເປັນຈິງຄືແນວໃດ ທີ່ບໍ່ສາມາດເລົ່າແບບກວ້າງຂວາງທົ່ວໄປໄດ້. ໃນນີ້ ເພິ່ນໄດ້ໃຫ້ຮູ້ຄວາມບໍ່ ຈິງໃຈ-ເລ່ກົນອຸບາຍຂອງຈັກກະພັດອາເມລິກາ ແລະ ຝ່າຍລາວຂວາຈັດ ວຽງຈັນ ແມ່ນຍິວເສືອອອກຈາກຖ້ຳ ເພື່ອສະດວກໃນການສົງຫາມມັນ. ລັດຖະບານປະສົມນີ້ ເປັນພຽງແຕ່ຮູບການເທົ່ານັ້ນ, ແຕ່ເນື້ອແທ້ແມ່ນ ການຕໍ່ສູ້ລະຫວ່າງສອງເສັ້ນທາງ: ອັນຫນຶ່ງແມ່ນການປະຕິວັດຊາດປະຊາ ທິປະໄຕ ຕ້ານກັບພວກລ່າເມືອງຂຶ້ນແບບໃຫມ່ ກັບພວກສັກດິນາຜະເດັດ ການນາຍທຶນພາຍໃນ. ການຕໍ່ສູ້ໃນປັດຈຸບັນ ໄດ້ມີການຫັນປ່ຽນຮູບການ ຈາກການຕໍ່ສູ້ດ້ວຍອາວຸດຢູ່ໃນສະຫນາມຮົບ ມາເປັນການຕໍ່ສູ້ທາງດ້ານ ການເມືອງ-ສັງຄົມໃນຕົວເມືອງ ແລະ ໂດຍສະເພາະ ແມ່ນໃນແວດວົງຂອງ ລັດຖະບານປະສົມ ຊຶ່ງບໍ່ມີການແນະນຳ-ບັນຊາໂດຍກົງ ຂອງອາເມລິກາ ອີກແລ້ວ. ພ້ອມກັນນັ້ນ, ກໍ່ໄດ້ຮັບການສະໜັບ ສະໜູນຢ່າງແຮງກ້າ ຈາກ ປະຊາຊົນລາວທັງຊາດ ແລະ ຈາກວົງຄະນາຍາດສາກົນ ອັນໄດ້ເຮັດໃຫ້ ຝ່າຍຂວາ ວຽງຈັນ ແລະ ອາເມລິກາ ຕົກຢູ່ໃນທ່າຮັບຈົນຕາແຈ ຢ່າງບໍ່ເຄີຍ

ມີມາໃນປະຫວັດສາດ, ແລະ ພໍ່ກີນີມ ຍັງໃຫ້ຮູ້ວ່າ: ການຕໍ່ສູ້ດັ່ງກ່າວຈະເພີ່ມທະວີຂຶ້ນເລື້ອຍໆ. ພວກອາເມລິກາ ແລະ ພວກຝ່າຍຂວາວຽງຈັນ ສາມາດກະທຳຫລາຍແນວ ທີ່ບໍ່ສາມາດຄາດຄະເນໄວ້ກ່ອນໄດ້ ເພື່ອມ້າງເພທຳລາຍ ລັດຖະບານປະສົມພວກເຮົາ ທີ່ເມື່ອເຂົ້າມາຢູ່ວຽງຈັນ ກໍ່ໝາຍຄວາມວ່າມາ ຢູ່ໃນກຳມືພວກເຂົາ. ແຕ່ພວກເຮົາກໍ່ບໍ່ມີຄວາມຢ້ານກົວ ແລະ ທໍ້ຖອຍແຕ່ຢ່າງໃດ, ເພາະພວກເຮົາເຮັດເພື່ອຊາດ ເພື່ອປະຊາຊົນ ຢ່າງແທ້ຈິງ ແລະ ພໍ່ ກີນີມ ຍັງເນັ້ນວ່າ: ຍາມໃດກໍ່ດີ ສົນທຳ ຍ່ອມຊະນະອະທຳ ຕະຫລອດໄປ.

ອັນສຳຄັນອີກປະການຫນຶ່ງ ກໍ່ແມ່ນເພິ່ນໄດ້ເນັ້ນໃຫ້ເຫັນ ຫນ້າທີ່ຕົ້ນຕໍອັນສຳຄັນ ຂອງນັກສຶກສາລາວຜູ້ຮັກຊາດ ຢູ່ຕ່າງປະເທດນັ້ນ ຕ້ອງຕັ້ງໃຈຮຽນໃຫ້ໄດ້ ແລ້ວນຳເອົາຄວາມຮູ້-ຄວາມຫລັກ ກັບຄືນເມືອສ້າງສາປະເທດຊາດ ແລະ ຮັບໃຊ້ປະຊາຊົນ ໃຫ້ດີ.

ການຈາກໄປຂອງພໍ່ກີນີມ ໂດຍບໍ່ມີວັນກັບ ແມ່ນການສູນເສຍອັນໃຫຍ່ຫລວງ ຂອງຄອບຄົວ ກໍ່ຄືຂອງປະເທດຊາດ, ແຕ່ອັນສຳຄັນ ແມ່ນນ້ຳໃຈກ້າຫານ ຍອມເສຍສະຫລະທຸກຢ່າງ ຮອດຊີວິດຂອງຕົນ ເພື່ອຊາດ ເພື່ອປະຊາຊົນ. ນ້ຳໃຈອັນພິລະອາດຫານນີ້ ຈະເປັນແວ່ນແຍງ ແລະ ຈະຍືນຍົງ ນຳພວກເຮົາຕະຫລອດໄປ.

<u>ໝາຍເຫດ:</u> ໃນປີ 1978, ແມ່ໄພບູນ ພົມເສນາ ໄດ້ຮັບເອົາ ຂ້າພະເຈົ້າ ເປັນລູກ

ນະຄອນຫລວງວຽງຈັນ, ວັນທີ 27/02/2013

“ຄຳເຫັນຂອງ ສ.ຈ ດຣ ສຸລິ ນັນທະວົງ ໃນໂອກາດຄົບຮອບ 50 ປີ ແຫ່ງການເສຍຊີວິດ ຂອງ ທ່ານ ກຶນີມ ພົນເສນາ”

ໂດຍ ສຈ ດຣ ສຸລິ ນັນທະວົງ, ອະດີດລັດຖະມົນຕີ
ປະຈຳສຳນັກງານນາຍົກລັດຖະມົນຕີ, ອະດີດ
ປະທານອົງການກວດສອບແຫ່ງລັດ

ຂ້າພະເຈົ້າ ໄດ້ມີໂອກາດພົວພັນກັບ ທ່ານ ກຶນີມ ພົນເສນາ ໃນໄລຍະທີ່ເພິ່ນໄດ້ໄປພົວພັນວຽກງານການເມືອງຢູ່ທີ່ປະເທດຝຣັ່ງ (ລະຫວ່າງທ້າຍປີ 1960 ຫາ ປີ 1962). ໃນໄລຍະນັ້ນ ພວກຂ້າພະເຈົ້າແມ່ນນັກສຶກສາທີ່ “ກ້າວໜ້າ” ແລະ ໄດ້ເຕົ້າໂຮມກັນເຂົ້າໃນການຈັດຕັ້ງທີ່ເອີ້ນໂດຍຫຍໍ້ວ່າ C. S. P. N ເພື່ອສະໜັບສະໜູນແນວທາງ “ການເມືອງເປັນກາງ” ທີ່ໄດ້ກຳນົດໄວ້ໃນຖະແຫຼງການການເມືອງ 12 ຂໍ້ ຂອງ ອົງການແນວລາວຮັກຊາດ.

ໃນໄລຍະຕໍ່ມາ ຄະນະ C. S. P. N ໄດ້ກາຍເປັນອົງການຊາວໜຸ່ມແນວລາວຮັກຊາດທີ່ປະເທດຝຣັ່ງ.

ຂ້າພະເຈົ້າແມ່ນຜູ້ໜຶ່ງທີ່ໄດ້ຖືກມອບໝາຍຈາກການຈັດຕັ້ງດັ່ງກ່າວໃຫ້ພົວພັນ ແລະ ຊ່ວຍອຳນວຍຄວາມສະດວກໃນການເຄື່ອນໄຫວຂອງຜູ້ນຳ ແລະ ຄະນະຂອງການປະຕິວັດເຮົາ ໃນໄລຍະທີ່ເພິ່ນໄປເຄື່ອນໄຫວຢູ່ປະເທດຝຣັ່ງ.

ຄືຮູ້ນຳກັນ, ທ່ານ ກຶນີມ ພົນເສນາ ແມ່ນຜູ້ກໍ່ຕັ້ງພັກ “ສັນຕິພາບ-ເປັນກາງ” ຊຶ່ງມີແນວທາງການເມືອງ “ເປັນກາງ” ໃກ້ຄຽງກັນກັບແນວທາງການເມືອງຂອງອົງການແນວລາວຮັກຊາດ. ພາຍຫຼັງອັນເອີ້ນວ່າ “ການປະຕິວັດກອງແລ” ໃນປີ 1960 ທີ່ໄດ້ເຮັດໃຫ້ສະພາບການການເມືອງຢູ່ປະ

ເທດເຮົາມີການຫັນປ່ຽນຢ່າງເລິກເຊິ່ງ, ອົງການ C. S. P. N ກໍ່ໄດ້ອອກຖະແຫຼງການສະໜັບສະໜູນເຫດການດັ່ງກ່າວ ທັງຢືນຢັນເປັນທາງການການສະໜັບສະໜູນແນວທາງທີ່ໄດ້ກຳນົດໄວ້ໃນຖະແຫຼງການ 12 ຂໍ້ຂອງແນວລາວຮັກຊາດ.

ທ່ານ ກີນິມ ພົນເສນາ ໄດ້ເຂົ້າຮ່ວມໃນລັດຖະບານທີ່ມີ ເຈົ້າສຸວັນນະພູມາ ເປັນນາຍົກລັດຖະມົນຕີ. ເຈົ້າສຸວັນນະພູມາ ແມ່ນຫົວໜ້າຄະນະຝ່າຍເປັນກາງທີ່ມີ ທ່ານ ກີນິມ ພົນເສນາ ເປັນຜູ້ນຳທີ່ສຳຄັນຜູ້ໜຶ່ງ.

ດັ່ງນັ້ນ ແນວທາງ "ການເມືອງ ເປັນກາງ" ຈຶ່ງປົກຄຸມ ແລະ ຕິດພັນໃນການເຄື່ອນໄຫວຂອງລັດຖະບານ (ນັບທັງລັດຖະບານປະສົມ 3 ຝ່າຍ) ໃນໄລຍະນັ້ນ. ຄິດວ່າ ຍ້ອນໜ້າທີ່ທີ່ເພີ່ນໄດ້ຖືກມອບໝາຍໃນ ລັດຖະບານປະສົມ ແລະ ຍ້ອນເພີ່ນໄດ້ຖືກມອບໝາຍໃຫ້ເປັນຫົວໜ້າຄະນະ "ຝ່າຍກາງ" ເພື່ອເຂົ້າຮ່ວມ ກອງປະຊຸມເຊີແນວ ປີ 1962, ທ່ານ ກີນິມ ພົນເສນາ ຈຶ່ງໄດ້ຖືກມອບໝາຍໃຫ້ໄປເຄື່ອນໄຫວຢູ່ ປາຣີ ເມືອງຫຼວງຂອງປະເທດຝຣັ່ງ ຊຶ່ງເປັນບ່ອນທີ່ມີຄວາມສະດວກຫຼາຍດ້ານ ເພື່ອອຳນວຍໃຫ້ແກ່ການຕິດຕໍ່ພົວພັນການເຂົ້າຮ່ວມການເຈລະຈາລະຫວ່າງ ພັກຝ່າຍຕ່າງໆ ໂດຍສະເພາະລະຫວ່າງ ຄົນລາວຢູ່ພາຍໃນ ຫຼື ຕ່າງປະເທດ ແລະ ລະຫວ່າງອົງການການທູດ, ໂດຍສະເພາະສຳລັບບັນດາປະເທດທີ່ມີໜ້າທີ່ເຂົ້າຮ່ວມກອງປະຊຸມເຊີແນວ ປີ 1962.

ການເຄື່ອນໄຫວຂອງ ທ່ານ ກີນິມ ພົນເສນາ ໄດ້ຊຸກຍູ້ ແລະ ປະກອບສ່ວນຢ່າງສຳຄັນໃນການກຳນົດເນື້ອໃນ ແລະ ຂໍ້ຕົກລົງທີ່ໄດ້ສະເໜີ ແລະ ສຸດທ້າຍໄດ້ຖືກຮັບຮອງໃນກອງປະຊຸມເຊີແນວ.

ຄືໄດ້ຮູ້ນຳກັນ, ອັນນັ້ນແມ່ນຜົນສຳເລັດທີ່ໃຫຍ່ຫຼວງທີ່ສຸດຂອງການປະຕິວັດເຮົາ. ປະຊາຊົນລາວເຮົາຕ້ອງຮັບຮູ້ຜົນງານດັ່ງກ່າວ, ຮັບຮູ້ບຸນຄຸນຂອງຜູ້ທີ່ໄດ້ປະກອບສ່ວນ ແລະ ຈາລຶກໄວ້ໃນປະຫວັດສາດຂອງຊາດເຮົາ.

ພະນະທ່ານ ກິນິມ ພົນເສນາ ກັບເຫດການລັດຖະປະຫານ 9/8/60

ໂດຍ: ນາຍພົນ ແຈ້ງ ໄຊຍະວົງ
(ກອງທັບປະຊາຊົນລາວ) ອະດີດລັດຖະມົນຕີ
ຊ່ວຍວ່າການ ສຳນັກງານນາຍົກລັດຖະມົນຕີ,
ອະດີດປະທານອົງການທ່ອງທ່ຽວແຫ່ງຊາດ.

ພະນະທ່ານ ກິນິມ ພົນເສນາ, ເປັນຜູ້ມີບົດບາດຊື່ສຽງຮຽງນາມ ອັນສູງສົ່ງ ທີ່ຕິດພັນແໜ້ນກັບ ເຫດການລັດຖະປະຫານ 09/08/1960 ຂອງ ກອງພັນທະຫານລາບ ອາກາດທີ 2 ທີ່ ຮ້ອຍເອກ ກອງແລ ເປັນຫົວໜ້າກອງ ຮ້ອຍໂທ ເດືອນ ສູນນາລາດ ເປັນຮອງ ຄະນະກອງພັນທີ 2 ດັ່ງກ່າວ. ມີການ ເຂົ້າຮ່ວມຂອງບັນດາກອງ ແລະ ພາກສ່ວນຕ່າງໆ ຂອງເລົ່າລົບທະຫານ ລາບອາກາດ ຢູ່ນະຄອນຫຼວງວຽງຈັນ ເວລານັ້ນ, ຊຶ່ງຂ້າພະເຈົ້າ ຮ້ອຍໂທ ແຈ້ງ ໄຊຍະວົງ ກໍ່ເປັນຜູ້ໜຶ່ງນຳເອົາກຳລັງທີ່ ຢູ່ໃຕ້ການບັນຊາຂອງຕົນ ເຂົ້າ ຮ່ວມ ແຕ່ວັນເວລາເລີ່ມຕົ້ນຢຶດອຳນາດ(9/8/60). ຍ້ອນແນວນັ້ນ ຈຶ່ງຮູ້ໄດ້ ເຫດການຜັນແປຕ່າງໆ ທີ່ມີ ການຕິດພັນກັບການເຄື່ອນໄຫວຂອງ ພະນະ ທ່ານ ກິນິມ ພົນເສນາ. ໃນການ ເປັນທີ່ເພິ່ງອາໄສໃນແຕ່ລະໄລຍະຂອງ ການລັດຖະປະຫານດັ່ງກ່າວ ຈົນເຖິງຂັ້ນສຳເລັດສຸດທ້າຍ ແລະ ເຖິງຂັ້ນໄດ້ ປົດປ່ອຍທົ່ງໄຫຫີນ ຈຸດຍຸດທະສາດເປັນຕາຍຂອງພວກລູກແຫລ້ງຕົນມືຂອງ ອາເມລິກາ ແລະ ມີຄຸນງາມຄວາມດີ ໃນການປະ ກອບສ່ວນສ້າງກຳລັງເປັນ ກາງຮັກຊາດ ຢູ່ເຂດຊຽງຂວາງທົ່ງໄຫຫີນ ຜົ້ງສາລີ ໃຫ້ເຕີບໃຫ່ຍ ເຂັ້ມແຂງ ຢ່າງໄວວາ. ຄຽງບ່າຄຽງໄລ່ກັບກຳລັງຂອງຝ່າຍປະເທດລາວເວລານັ້ນ. ດັ່ງ ນັ້ນຂ້າພະເຈົ້າ ຂໍຍົກເອົາບາງເຫດການ ລຸ່ມນີ້: ຕາມທັດສະນະ ແລະ ຄວາມ

ຮັບຮູ້ຂອງຂ້າພະເຈົ້າແລ້ວ ການລັດຖະປະຫານ 9/8/60 ໄດ້ມີຄວາມໝາຍທີ່ມີລັກສະນະປະຫວັດສາດທາງດ້ານການເມືອງ ແລະ ການທະຫານ, ຊຶ່ງເກີດຂຶ້ນພາຍໃນຂອງ ກຳລັງລູກແຫລ້ງຕົນມີຊັ້ນຈຳຂອງພວກເຂົາ, ລຸກຂຶ້ນຢຶດອຳນາດໂຄ່ນລົ້ມ ລັດຖະບານຫຸ່ນຂອງລັດທິລ່າເມືອງຂຶ້ນແບບໃໝ່ຂອງ ຈັກກະພັດອາເມລິກາ ແລະ ໄດ້ສ້າງຕັ້ງລັດຖະບານປະສົມຂຶ້ນອັນໄດ້ເຮັດ ໃຫ້ອຳນາດຫຸ່ນດັ່ງກ່າວລົ້ມລະລາຍ ຢູ່ນະຄອນຫຼວງວຽງຈັນ, ຈາກນັ້ນມັນໄດ້ເຮັດໃຫ້ ກຳລັງລັດຖະປະຫານ ທີ່ພວກເຂົາຖືວ່າຜິດກົດໝາຍ ກັບມາຖືກຕ້ອງຕາມກົດໝາຍທີ່ບັນດາປະເທດເພື່ອນມິດໃນຄ້າຍສັງຄົມນິຍົມໃນເມື່ອກ່ອນ ຮັບຮູ້ ແລະ ໃຫ້ການຊ່ວຍເຫຼືອ.

ການສະໜັບສະໜູນ ແລະ ຊ່ວຍເຫຼືອດັ່ງກ່າວ ເວົ້າລວມກໍ່ແມ່ນຍ້ອນມີລັດຖະບານຖືກຕ້ອງຕາມກົດໝາຍ ທີ່ກຳລັງລັດຖະປະຫານຈັດຕັ້ງຂຶ້ນ, ຊຶ່ງໃນນັ້ນມີ ພະນະ ທ່ານ ກົມມ ພົມເສນາ ທີ່ເປັນຜູ້ສະໜິດຕິດແໜ້ນກັບລັດຖະປະຫານ ເປັນລັດຖະມົນຕີວ່າການກະຊວງຕ່າງປະເທດ ແລະ ເປັນບ່ອນອີງທີ່ເຊື່ອໝັ້ນຂອງ ພວກເຮົາ ທີ່ເດັດດ່ຽວໜຽວແໜ້ນ ດຳເນີນພາລະບົດບາດຂອງຕົນ ຈຶ່ງສາມາດຈັດຕັ້ງລັດຖະບານປະສົມຂຶ້ນໄດ້ ແລະ ໄດ້ເປັນຜູ້ທີ່ຢູ່ຄຽງຂ້າງຮ່ວມເປັນຕາຍກັບ ຄະນະລັດຖະປະຫານ ການເຂົ້າຮ່ວມໃນຄະນະລັດຖະບານຄື ພະນະ ທ່ານ ກົມມ ພົມເສນາ ບໍ່ແມ່ນຜູ້ຖືກມອບໝາຍໃຫ້ຈັດຕັ້ງລັດຖະບານຮັບເອົາງ່າຍດາຍ. ຖ້າບໍ່ໃຊ້ອຳນາດລັດຖະປະຫານບັງຄັບ ດັ່ງບາງເທດການຂ້າພະເຈົ້າຜູ້ຮ່ວມໃນຂະບວນທີ່ຍັງມີຊີວິດຢູ່ ແລະ ພໍຈື່ຈຳໄດ້ການເປັນມາຂອງສະພາບການຄື:

- ຢຶດອຳນາດທາງການເມືອງ ແລະ ການທະຫານໄດ້ໝົດຢູ່ນະຄອນຫຼວງວຽງຈັນ ແລະ ພາຍຫລັງ ໄດ້ກວດເອົາສະມາຊິກສະພາຜູ້ແທນລາດຊະດອນ, ສະມາຊິກລັດຖະບານເກົ່າ, ຂ້າລັດຖະການ ແລະ ນາຍທະຫານ ຕຳຫລວດ ຜູ້ຄັດຄ້ານລັດຖະປະຫານ ມາຄຸມຕົວໄວ້ທີ່ກອງບັນຊາ

ກາມຄະນະລັດຖະປະຫາມ ທີ່ຫໍສະໝຸດແຫ່ງຊາດ ຢູ່ຫນ້າຫໍວັດທະນະທໍ ດງວນີ້. (ຊັ້ນສອງ)ມີຈໍານວນປະມານ 200 ກວ່າຄົນ ໂດຍຂ້າພະເຈົ້າ ຮ້ອຍ ໂທ ແຈ້ງ ໄຊຍະວົງ ແລະ ຮ້ອຍຕີ ທຽບນໍາກໍາລັງຂອງຕົນອອກຄຸມຕົວ ເອົາທົ່ວນະຄອນຫຼວງວຽງຈັນ (ພາຍຫລັງຢຶດອໍານາດໃນຕອນຊ້ໍາຂອງ ວັນທີ 9/8/60 ແລະ ໝົດມື້ໝົດຄືນຂອງວັນທີ 9/8/60).

- ວັນທີ 10/8/60 ຕອນເຊົ້າຊາວນະຄອນຫຼວງວຽງຈັນ ແລະ ກາມ ຈັດຕັ້ງຕ່າງໆ ໄດ້ມາຮ່ວມຊຸມນຸມ ສະໜັບສະໜູນ ຄະນະລັດຖະປະຫາມ ໂດຍແມ່ນ ຮ້ອຍເອກ ກອງແລ ຫົວໜ້າຄະນະລັດຖະປະຫາມ, ເປັນຜູ້ອອກ ຢືນຕ້ອນຮັບ, ຮ້ອຍໂທ ເດືອນຮອງ ຫົວໜ້າຄະນະ ແລະ ພວກຂ້າພະເຈົ້າກໍ່ມີ ໜ້າ ຢູ່ນັ້ນໃນນາມຄະນະ. ກອງແລເປັນຜູ້ຕາງໜ້າຄະນະຢືນຢູ່ລະບຽງຊັ້ນ ສອງ ອາຄານດັ່ງກ່າວ ທັງສະແດງຄວາມຂອບໃຈຜູ້ມາສະໜັບສະໜູນທັງດີ ໃຈຕໍ່ ໄຊຊະນະທັງມີນ້ໍາຕາຍ້ອຍໃຫ້ສະອື້ນຂຶ້ນຕໍ່ໜ້າທີ່ຊຸມນຸມ. ເມື່ອໂອ້ລົມ ຜູ້ສະໜັບສະໜູນແລ້ວ, ໄດ້ເຂົ້າຫ້ອງກາມປຶກສາຫາລືກັນ ພ້ອມນັ້ນພວກ ເຮົາໄດ້ ຖາມຮ້ອຍເອກກອງແລວ່າ ທ່ານ ໄດ້ສະອຶກສະອື້ນນ້ໍາຕາໄຫຼໃຫ້ຂຶ້ນ ນັ້ນ ແມ່ນຍ້ອນຫຍັງ? ຜູ້ກ່ຽວຕອບ: ດີໃຈໄດ້ໄຊຊະນະ, ດີໃຈນໍາຂະບວນຊຸມ ນຸມຝ່າຍຕໍ່ຕ້ານ

- ສະໜັບສະໜູນຫລວງຫລາຍ. ແຕ່ຕົ້ນຕໍແລ້ວ ແມ່ນຄິດເຖິງວ່າ ຈະພາໝູ່ຄະນະພ້ອມນາຍ ແລະ ພົນທະຫານເຮັດລັດຖະປະຫານແລ້ວຈະ ໄປແນວໃດ? ເມື່ອຮ້ອຍເອກ ກອງແລເວົ້າແນວນັ້ນ ພວກເຮົາວ່າ ຕ້ອງເດັດ ຂາດ, ຖ້າເຮົາຖອຍຫລັງຈະຖືກພວກທີ່ເຮົາໂຄ່ນລົ້ມໄປນັ້ນ ຫັນມາຕັດຄໍເຮົາ ໝົດ. ພໍລົມກັນແລ້ວ ກໍ່ ຂໍຄໍາເຫັນໍາ ພະນະທ່ານ ກິນິມ ພົນເສນາ (ເພີ່ນ ຢູ່ຮ່ວມກັບ ຄະນະລັດຖະປະຫານຢູ່ຫັ້ນແລ້ວ) ເພີ່ນວ່າຕ້ອງຕັ້ງລັດຖະບານ ປະສົມຂຶ້ນດ່ວນ ເພື່ອໃຫ້ຄະນະລັດຖະປະຫານມີອໍານາດ ທີ່ຖືກຕ້ອງຕາມ ກົດໝາຍ ແລະ ຕ້ອງອີງໃສ່ກໍາລັງ ແລະ ກາມນໍາພາຂອງຝ່າຍປະເທດລາວ

ຈຶ່ງຈະຍືນຍົງຄົງຕົວ ແລະ ຮັກສາໝາກຜົນຂອງການລັດຖະປະຫານໄດ້.

▪ ແຕ່ເວລານັ້ນມາ ພວກເຮົາກໍ່ໄດ້ອີງໃສ່ ຄຳເຫັນແນະນຳຂອງ ພະນະທ່ານ ກິນິມ ແລະ ໄດ້ຈັດຕັ້ງປະຕິບັດຄື: ແບ່ງໜ້າວຽກຕິດຕໍ່ກັບຝ່າຍປະເທດລາວ ຢູ່ພື້ນຖານແນວຫລັງນະຄອນຫຼວງວຽງຈັນ ເພື່ອໃຫ້ເພີ່ນນຳກຳລັງເຂົ້າຊ່ວຍ ແລະ ຮ້ອຍເອກ ກອງແລເອງ ເອົາຍົນເອລີກົບຈາກ ເດັ່ນບິນວັດໄຕ ໄປຕ້ອນເອົາ ຜູ້ນຳຂອງຝ່າຍປະເທດລາວ ທີ່ໂຕນອອກຈາກຄຸກໂພນເຄັງໄປ ຮອດເມືອງໄຊສົມບູນ ເຂົ້າມາ (ຜ່ານການຮູ້ໄດ້ຈາກກຳລັງພື້ນຖານຂອງ ຝ່າຍປະເທດລາວທີ່ໄດ້ມີການພົວພັນດັ່ງກ່າວ).

▪ ເລື່ອງສ້າງຕັ້ງລັດຖະບານປະສົມ ກໍ່ອີງໃສ່ ຄຳເຫັນແນະນຳຂອງ ເພີ່ນ (ພະນະທ່ານ ກິນິມ) ພວກເຮົາໄດ້ໄປເຊີນເອົາເຈົ້າສຸວັນນະພູມາ ທີ່ ເຮືອນຂອງເພີ່ນ ທີ່ມີກຳລັງຂອງພວກເຮົາ ໄປປ້ອງກັນເພີ່ນຢູ່ນັ້ນ ມາກອງບັນຊາການ ຄະນະລັດຖະປະຫານຊັ້ນສອງ ທີ່ຫໍສະໝຸດແຫ່ງຊາດດຽວນີ້. ເມື່ອ ເພີ່ນມາຮອດແລ້ວ ພວກເຮົາ ກໍ່ສະເໜີເພີ່ນຈັດຕັ້ງ ລັດຖະບານຂຶ້ນໂດຍສະ ເໜີເພີ່ນເປັນນາຍົກ, ພະນະທ່ານ ກິນິມ ພົນເສນາ ເປັນລັດຖະມົນຕີວ່າການ ກະຊວງການຕ່າງປະເທດ; ເພີ່ນຕອບວ່າບໍ່ໄດ້, ມັນຜິດຕໍ່ລັດຖະທຳມະ ນູນ, ການຈັດຕັ້ງ ລັດຖະບານຕ້ອງໄດ້ຜ່ານສະພາ ແລະ ຕ້ອງໄດ້ຮັບການ ແຕ່ງຕັ້ງຈາກ ພະລາຊະອົງການຂອງ ພະບາດສົມ ເດັດພະເຈົ້າມະຫາຊີວິດ. ພວກເຮົາໂດຍມີພະນະ ທ່ານ ກິນິມ ພົນເສນາ ເປັນບ່ອນອີງ ໄດ້ສະເໜີນຳ ເຈົ້າສຸວັນນະພູມາຕື່ມວ່າ, ພວກຂ້ານ້ອຍເຮັດລັດຖະປະຫານໂດຍ ໂຄ້ນລົ້ມ ລັດຖະບານ ຫຸ່ນເຈົ້າສົມສະໜິດ ຢຶດໄດ້ອຳນາດທາງການເມືອງ ແລະ ການ ທະຫານໝົດແລ້ວ, ຖ້າວ່າ ພວກຂ້ານ້ອຍ ຍັງນັບຖືກົດໝາຍລັດຖະທຳມະ ນູນຂອງພວກຫຸ່ນນັ້ນຢູ່ ກໍ່ບໍ່ມີລັດຖະປະຫານແນວນີ້. ເພາະອຳນາດກົດ ໝາຍລັດຖະທຳມະນູນ ອັນນັ້ນ ມັນແມ່ນເຄື່ອງມືຂອງພວກຫຸ່ນທັງນັ້ນ ຈະ ເອົາມາໃຊ້ບໍ່ໄດ້. ແຕ່ເພີ່ນກໍ່ຍັງຢືນຢັນວ່າບໍ່ໄດ້, ສະເໜີແນວໃດ ເພີ່ນກໍ່ບໍ່

ຍິນຍອມ ຈຶ່ງໄດ້ປະກາດພັກຜ່ອນແລ້ວຈຶ່ງປະຊຸມຕໍ່. ພວກຂ້າພະເຈົ້າຍາດ ແຍ່ງເອົາ ເວ ລາພັກຜ່ອນນັ້ນ ເພື່ອຂໍຄຳເຫັນນຳ ພະນະທ່ານ ກິນິມ ພິນເສນາ ແລະ ລາຍງານທ່າທີຂອງ ເຈົ້າ ສຸວັນນະພູມາ ໃຫ້ເພີ່ນຮັບຮູ້, ພະນະ ທ່ານ ກິນິມ ແນະນຳ ແລະ ເນັ້ນໜັກຕື່ມວ່າ ເຖິງຂັ້ນນັ້ນແລ້ວຕ້ອງ ໃຊ້ອຳນາດຂອງ ລັດຖະປະຫານບັງຄັບ! (ພະນະທ່ານເວລານັ້ນລໍຖ້າຟັງຜົນຂອງການ ປະຊຸມກັບ ເຈົ້າສຸວັນນະພູມາ ຢູ່ ຫ້ອງຂ້າງ, ເຈົ້າສຸວັນນະພູມາບໍ່ຮູ້).

▪ ໃນເວລາເຂົ້າປະຊຸມຕື່ມອີກ ເຈົ້າສຸວັນນະພູມາ ກໍ່ຍັງຢືນຢັນ ຄວາມເວົ້າຂອງເພີ່ນ(ປະຕິເສດ) ບໍ່ຍອມຕັ້ງ ລັດຖະບານ, ເວລານັ້ນສະພາບ ເຄັ່ງ ຕຶງຫຼາຍ ພວກເຮົາພ້ອມກັນອອກຈາກຫ້ອງປະຊຸມ ແລະ ຮ່ວມກັນຕົກລົງ ວ່າ ຮ້ອຍໂທ ເດືອນ ສຸນນາລາດ, ຮອງ ຮ້ອຍເອກ ກອງແລ, ສັ່ງທະຫານກຸ່ມ ພ້ອມເຂົ້າປະຈຳເປົ້າໝາຍ, ເມື່ອມີຄຳສັ່ງ, ທະຫານທຸກຄົນສາກປືນ ແລະ ຈີ້ ໃສ່ຜູ້ຖືກຄຸມຕົວຢູ່ນັ້ນ ພ້ອມທັງປິດລ້ອມເຈົ້າສຸວັນນະພູມາ. ທ່ານ ຮ້ອຍໂທ ເດືອນ ທັງຮ້ອງກຸ່ມກຳລັງ ແລະ ຮ້ອງຂຶ້ນວ່າຖ້າ ສະເດັດ ບໍ່ຍອມຕັ້ງລັດຖະ ບານ, ຈະກຳຈັດຜູ້ທີ່ຖືກຄຸມຕົວຢູ່ນີ້ທັງໝົດ ພ້ອມກັບຜູ້ທີ່ຄັດຄ້ານແຜນ ການຂອງພວກເຮົາ. ເຈົ້າ ສຸວັນນະພູມາ ໄດ້ຍິນ ແນວນັ້ນກໍ່ລຸກຂຶ້ນທັງສັ່ນທັງ ເຊັນ ອອກປາກວ່າ: "ຂໍນຳ, ຂໍນຳ", ຂ້ອຍຈະຕັ້ງລັດຖະບານຕາມພວກເຈົ້າສະ ເໜີ ແຕ່ຜູ້ແທນເພື່ອເປີດສະພາວິສາມັນຂຶ້ນເດ? ຖ້າບໍ່ມີຜູ້ແທນກໍ່ເປີດບໍ່ໄດ້. ພວກເຮົາຈຶ່ງໃຫ້ເພີ່ນຮູ້ວ່າ ພວກເຮົາ ໄດ້ຄຸມຜູ້ແທນລາຊາດອນໄວ້ ກວ່າ 50% ຂອງຈຳນວນຜູ້ແທນທີ່ມີ, ເຈົ້າສຸວັນນະພູມາ ຈຶ່ງຍອມ, ຈາກນັ້ນ ພວກ ເຮົາ ເຊີນເພີ່ນລົງຈາກຊັ້ນສອງ ຂຶ້ນລົດ ພ້ອມຄຸມເອົາຜູ້ແທນ ຢູ່ນັ້ນຂຶ້ນລົດ ໃຫຍ່ທະຫານໄປ ທີ່ຫໍສະພາ (ສຳນັກງານນາຍົກເກົ່າດຽວນີ້) ແລ້ວເຈົ້າສຸວັນ ນະພູມາ ເປັນປະທານກອງປະຊຸມສະພາ ແລະ ສະເໜີຈັດຕັ້ງ ລັດຖະບານ ຂຶ້ນ ໂດຍມີ ພະນະ ທ່ານກິນິມ ພິນເສນາ ເປັນ ລັດຖະມົນຕີວ່າການ ກະຊວງ ຕ່າງປະເທດ ຕາມເປົ້າໝາຍຂອງພວກເຮົາ ແລະ ຊື່ຜູ້ອື່ນໆ ທີ່ພວກເຮົາມີ

ເປົ້າໝາຍທີ່ພໍຮັບເອົາໄດ້, ກອງປະຊຸມສະພາໃນຄັ້ງນັ້ນແມ່ນ ຢູ່ຝ່າຍໃຕ້ອຳ ນາດ ປາຍປືນຂອງ ກຳລັງ ລັດຖະປະຫານ ທີ່ຢືນປິດລ້ອມຢູ່ທາງນອກ ແລະ ລະ ບຽງໃນ ຊັ້ນສອງຂອງຫ້ອງປະຊຸມ, ແຕ່ພໍເຈົ້າສຸວັນນະພູມາ ສະເໜີ ແລະ ໄດ້ ຂໍມະຕິສະພາ, ຜູ້ແທນສະພາທັງ ໝົດຢູ່ນັ້ນກໍ່ພ້ອມກັນຊື້ມືເຫັນດີໝົດ ເພາະ ຢ້ານອຳນາດກຳລັງອາວຸດປິດລ້ອມຈີ້ໃສ່ຢູ່ນັ້ນ. ຕັ້ງແຕ່ມີລັດຖະບານ ຂອງ ລັດຖະປະຫານຂຶ້ນ ພະນະທ່ານ ກິນິມ ໃນນາມລັດຖະມົນຕີວ່າການ ກະຊວງ ຕ່າງປະເທດ ກໍ່ໄດ້ອອກເຄື່ອນໄຫວຂໍການສະໜັບສະໜູນ ແລະ ຊ່ວຍເຫຼືອ ຈາກລັດຖະບານ ຂອງບັນດາປະ ເທດສັງຄົມນິຍົມ ອ້າຍນ້ອງເວ ລານັ້ນ, ກ່ອນອື່ນໝົດຫວຽດນາມ, ຈີນ ແລະ ອະດີດສະຫະພາບ ໂຊວຽດ ແລະ ອະດີດ ບັນດາປະເທດສັງຄົມນິຍົມ ຢູ່ຢູຣົບຕາເວັນອອກ ແລະ ປະເທດ ອື່ນໆ.

- ຈາກນັ້ນ, ຈຶ່ງໄດ້ມີການສະໜັບສະໜູນຊ່ວຍເຫຼືອ ຈາກລັດຖະ ບານປະເທດດັ່ງກ່າວ ຊຶ່ງກ່ອນອື່ນໝົດ ຫວຽດນາມ, ຈີນ ແລະ ອະດີດສະຫະ ພາບໂຊວຽດ. ຍ້ອນໄດ້ຮັບການສະໜັບສະໜູນ ແລະ ຊ່ວຍເຫຼືອນັ້ນ ຈຶ່ງ ໄດ້ເຮັດໃຫ້ກຳລັງລັດຖະປະຫານເຂັ້ມແຂງ ແລະ ເຕີບໃຫຍ່ຂຶ້ນຢ່າງໄວວາ. ທະຫານໄດ້ຈັດຕັ້ງຂຶ້ນຕື່ມຫລາຍກອງທີ່ເປັນກຳລັງສູ້ຮົບຈຸດໜັກ ແລະ ກຳ ລັງໜູນອື່ນໆຫລາຍກອງຢູ່ໃນນະຄອນຫຼວງວຽງຈັນພາຍຫລັງມີລັດຖະບານ ແລ້ວ. ສຳລັບກອງສູ້ຮົບມີຄື: ກອງພັນທະຫານລາບອາກາດທີ3 ແລະ ກອງພັນທີ4, ກອງ ພັນທີ4ແມ່ນ ກອງທີ່ຂ້າພະເຈົ້າສັງກັດຢູ່ ໂດຍຫົວໜ້າ ກອງພັນແມ່ນ ທ່ານ ທັນ ສະຫວັນວິໄລ. ມີ 4 ກອງຮ້ອຍ, ກອງຮ້ອຍທີ 1 ແມ່ນ ທ່ານ ທຽບ ລິດທິເດດ ເປັນຫົວໜ້າ, ກອງຮ້ອຍທີ 2 ໂດຍ ຮ້ອຍໂທ ຊຽງເລິງ ຜີແຕ່ງ ເປັນຫົວໜ້າ, ກອງຮ້ອຍທີ 3 ແມ່ນ ຮ້ອຍໂທ ຈຳປາ ເປັນຫົວໜ້າ ແລະ ກອງຮ້ອຍທີ 4 ແມ່ນ ຮ້ອຍໂທ ແຈ້ງ ໄຊຍະວົງ(ຂ້າພະເຈົ້າ)ເປັນຫົວໜ້າ.

ເມື່ອຈັດຕັ້ງ ແລະ ປະກອບແລ້ວກໍ່ໄດ້ມີຄຳສັ່ງໃຫ້ຂັບໄລ່ກຳລັງ

ຕ້ານລັດຖະປະຫານລົງທິດໄຕ້, ຊຶ່ງມີກອງຮ້ອຍຂອງ ຮ້ອຍຕີ ທຽບ ແລະ ກອງຮ້ອຍຂອງ ຂ້າພະເຈົ້າ, ສົມທົບໜຶ່ງກອງຮ້ອຍຂອງກອງພັນທີ 2 ແລະ ໜຶ່ງກອງຮ້ອຍຂອງຝ່າຍປະເທດລາວ ໂດຍ ທ່ານສົມພິງ ເປັນຫົວໜ້າໄປ ຮ່ວມ. ນອກນັ້ນມີ ທ່ານສົມສັກ ໄຊສົງຄາມ (ປະເທດລາວ) ໄປປະສານງານ ກັບ ດ້ານລົບປາກຊັນໂດຍແມ່ນ ຮ້ອຍໂທ ທອງມີ ເປັນຫົວໜ້າດ້ານລົບ ຈາກນັ້ນພວກເຮົາໄດ້ບຸກໄລ່ສັດຕູ ທີ່ຕັ້ງຢູ່ແຕ່ປ້ອມບ້ານໃຫມ່-ປາກຊັນ ໄລ່ ຮອດປາກກະດິງພາຍຫລັງສູ້ຮົບປົດປ່ອຍ ປາກກະດິງໄດ້ກົນເວລາໝົດ ຕອນບ່າຍມື້ນັ້ນ ຈຶ່ງຢຶດປາກກະດິງໄດ້ ຫລັງຈາກນັ້ນຈຶ່ງຜັນຂະຫຍາຍການ ຂັບໄລ່ສັດຕູດັ່ງນີ້:

- ກອງຮ້ອຍຂອງ ຮ້ອຍໂທ ແຈ້ງ ໄຊຍະວົງ ຂັບໄລ່ສັດຕູຮອດ ບຸງ ກວາງ ແລ້ວໃຫ້ກັບຈັ້ງທ່າ ຢູ່ບ້ານຊອດ-ສົມສະໝຸກ.
- ກອງຮ້ອຍຂອງ ຮ້ອຍຕີ ທຽບ ໄປຕາມທາງ ເລກທີ່ 13ໃຕ້ ປາກ ກະດິງ ໄລ່ຕີສັດຕູຮອດບ້ານໂພນສີ ແລະຢຸດຢູ່ທີ່ນັ້ນ.

ປີກຂ້າພະເຈົ້າຮັບຜິດຊອບຕິດແຄມຂອງ ແລະ ຕາມລຳແມ່ນ້ຳ ຂອງ, ດ້ານລົບປະກອບເຮືອລົບໃຫ້ສອງລຳຕະຫລອດໄລຍະເວລາຈັ້ງທ່າຢູ່ ນັ້ນສັດຕູບຸກຂຶ້ນມາຫລາຍບັ້ນຕາມຈີ່ໄດ້ຮອດ 9 ບັ້ນ. ທາງບົກ 1 ບັ້ນ, ທາງ ນ້ຳສູ້ລົບກັບ ເຮືອລົບ 8 ບັ້ນ. ພວກຂ້າພະເຈົ້າຕ້ານໄດ້ທຸກຄັ້ງ ເຮັດໃຫ້ພວກມັນຕາຍ ແລະ ບາດເຈັບຈຳນວນຫລາຍ. ສ່ວນປີກຂອງ ຮ້ອຍຕີ ທຽບ ສັດຕູບ່ໃດ້ບຸກຂຶ້ນ ຫລັງຈາກຕີຂັບໄລ່ພວກເຂົາຮອດທັ້ນ ນັບ ແຕ່ຕົ້ນເດືອນ 11/1960 ຮອດວັນທີ 7/12/1960, ພູມີ ບຸນອຸ້ມ ເປີດບັ້ນຮົບ ບຸກຕີຂຶ້ນມາຂະໜາດໃຫຍ່ທັ້ງປືນໃຫ່ຍ105+ ທະຫານລາບ ແລະ ເຮືອລົບ ປ້ອມບັນຊາເຂົາໃຊ້ຍົນເຮລິກົບບິນ ແລະ ຂຶ້ນລົງຢູ່ຝັ່ງໄທເບື້ອງນັ້ນ. ສຳລັບ ປີກຂອງ ຮ້ອຍຕີ ທຽບ ພວກເຂົາໃຊ້ທະຫານລາບ+ປືນໃຫ່ຍບຸກຂຶ້ນມາ, ສ່ວນທິດປີກຂອງຂ້າພະເຈົ້ານັ້ນ ມັນໄດ້ຍິງປືນໃຫ່ຍຖະຫຼີ່ມເຮັດໃຫ້ລູກ 105

ຕົກໃສ່ຂຸມ ແລະ ນັກສາຍເສຍຊີວິດ, ເຄື່ອງສື່ສານຕິດຕໍ່ໝຸ່ນໜັກ. ແຕ່ນັ້ນ ຕິດຕໍ່ດ້ານລົບບໍ່ໄດ້ມີແຕ່ຕິດຕໍ່ໃນໄລຍະໃກ້ກັບຂອງກອງ ຮ້ອຍຕີ ທຽບ ໄດ້, ຮ້ອຍຕີ ທຽບ ບອກວ່າດຽວນີ້ລາວໄດ້ຖອຍກຳລັງຮອດປາກກະດິ່ງໝົດແລ້ວ ຮູ້ແນວນັ້ນຂ້າພະເຈົ້າ ຈຶ່ງໄດ້ສັ່ງກຳລັງຖອຍມາເຕົ້າໂຮມ ແລະ ຕ້ານສັດຕູ ບຸກຂຶ້ນມາຢູ່ທີ່ນັ້ນໝົດມື້ຂອງວັນທີ 8/12/1960 ສັດຕູບຸກຂຶ້ນບໍ່ໄດ້ມີແຕ່ຍິງ ປືນ ໃຫ່ຍ 105 ໃສ່ ແລະ ໃຊ້ເຮືອລົບ 3 ລຳເຄື່ອນຕີ ພວກເຮົາຕາມແມ່ນ້ຳ ຂອງ, ພວກເຮົາໄດ້ໃຊ້ເຮືອລົບ 2 ລຳ ຍິງຕໍ່ຕ້ານຄືນ ເຮັດໃຫ້ເຮືອລົບຂອງ ພວກ ເຂົາບຸກຂຶ້ນມາບໍ່ໄດ້. ຮອດຕອນບ່າຍຂອງມື້ນັ້ນ (8/12/1960) ປະ ມານ 4 ໂມງແລງ, ຮ້ອຍເອກ ກອງແລ ແລະ ປ້ອງກັນ (ຈ່າກະຕຶກ) ແລະ ນາຍທະຫານຜູ້ໃກ້ຊິດຜູ້ໜຶ່ງໄປຮອດເພື່ອລະດົມກຳລັງໃຈທະຫານທີ່ຖອຍ ມາໂຮມຢູ່ນັ້ນ. ພາຍຫຼັງໄດ້ຟັງຂ້າພະເຈົ້າ ລາຍງານການຜັນແປຂອງບັ້ນລົບ ແລະ ລະດົມກຳລັງແລ້ວ, ກຳນຳເອົາລົດອາແອ້ມ (ລົດຖັງ) ທີ່ຂີ່ມາແຕ່ວຽງ ຈັນ ຂ້າມບັກໄປຝັ່ງນ້ຳກະດິ່ງເບື້ອງນັ້ນ ເພື່ອກຳສະພາບການ ແລະ ໃຫ້ກຳ ລັງໃຈທະຫານຢູ່ນັ້ນ (ກອງຮ້ອຍຂອງ ຮ້ອຍໂທ ຊຽງເລິງຜີແຕ່ງ) ເວລານັ້ນ ຂ້າພະເຈົ້າ ບອກວ່າ ບໍ່ໃຫ້ໄປເພາະວ່າສັດຕູຍິງ 105 ມາຖະຫຼີ່ມບໍ່ຂາດ, ແຕ່ ຮ້ອຍເອກ ກອງ ແລ ວ່າບໍ່ເປັນຫຍັງ ເຮົາຈະຂ້າມກໍເລີຍເອົາລົດອາແອ້ມ ຂຶ້ນບັກຂ້າມໄປ, ພໍຂ້າມຫວິດນ້ຳແລ້ວ ຢູ່ລະຫວ່າງແຄມນ້ຳກະດິ່ງ ຫາບ້ານ ຫາດຊາຍຄຳ ຖືກປືນໃຫ່ຍສັດຕູຍິງຖະຫຼີ່ມຕົກຖືກ ຮ້ອຍໂທ ຊຽງເລິງ ຜີ ແຕ່ງຟົ້ງໄປ 10 ກ່ວາແມັດ ຄໍຫັກ ແລະ ເສຍຊີວິດກັບທີ່. ເມື່ອເຫັນເປັນ ແນວນັ້ນ ຮ້ອຍເອກ ກອງແລ ພ້ອມຜູ້ຕິດຕາມຂຶ້ນລົດແລ້ວກັບເມືອຮອດ ປາກກະດິ່ງຝັ່ງນີ້ ແລ້ວໄດ້ສັ່ງ ໃຫ້ຂ້າພະເຈົ້ານຳພາກຳລັງຖອຍເມືອຮັກສາ ໂຕເມືອງວຽງຈັນ. ໂດຍປະຕິບັດ ຄຳສັ່ງນັ້ນ ໃນຕອນເຊົ້າຂອງວັນທີ 9/12/1960, ຂ້າພະເຈົ້າໄດ້ນຳກຳລັງ ກອງຮ້ອຍຂອງຕົນມາຮອດວຽງຈັນ ແລະ ຕັ້ງຢູ່ຄ້າຍໂພນໄຊ (ບ່ອນກະຊວງຕ່າງປະເທດຕັ້ງຢູ່ດຽວນີ້) ຕອນເຊົ້າ

ຂອງວັນທີ10/12/1960 ແຕ່ເດີກ ລະຫວ່າງ5-6ໂມງ ເຫັນທະຫານມັດ ແພຂາວມາປິດລ້ອມ (ຢູ່ທາງນອກຮົ້ວຄ້າຍ) ຂ້າພະເຈົ້າເຫັນແນວນັ້ນກໍ່ໄດ້ ສັ່ງກອງທະຫານກຸ່ມສູ້ລົບ ແລະ ພ້ອມນັ້ນກໍ່ຮ້ອງຖາມພວກມານັ້ນເພາະຮູ້ ຫົວໜ້າເຂົາ. ຂ້າພະເຈົ້າຖາມວ່າພວກ ເຈົ້າມາຫຍັງ? ເຂົາຕອບວ່າ ມາຕາມ ຄຳສັ່ງຈີນາຍໂມ້ ເພື່ອຂັບໄລ່ຝ່າຍປະເທດລາວ(ອິດສະລະ) ແລະ ພວກ ເປັນໃຈຮ່ວມກັບອິດສະລະຢຶດນະຄອນຫລວງວຽງຈັນ. ຂ້າພະເຈົ້າວ່າ ໃຫ້ ຖອຍຄືນດຽວນີ້, ພວກເຮົາບໍ່ຮ່ວມມືກັບ ພວກເຈົ້າ ຖ້າພວກເຈົ້າບໍ່ຖອຍຈະ ຖືກຕີ. ເຫັນບໍ່ໄດ້ທ່າແນວນັ້ນເຂົາກໍ່ເລີຍຖອຍ(ພວກທີ່ມານັ້ນມີຈຳນວນໜຶ່ງ ຂອງກອງພັນທີ2ທີ່ຮູ້ກັນດີ. ພວກນີ້ຢູ່ໃນ ກອງຮ້ອຍຈີນາຍໂມ້ຂອງກຸປາສິດ) ຕໍ່ ເຫດການນີ້ກອງແລໄດ້ຮູ້ແຕ່ທ່ຽງຄືນຂອງ ວັນທີ 10/12/1960 ພຸ້ນ ແລະ ໄດ້ປົບໄປລີ້ຢູ່ຕູບເຟືອງບ້ານປາກທ້າງຂ້າງເດີ່ນບິນ. ຮອດຕອນເຊົ້າ ມາເມື່ອ ພວກເຮົາຮັກສາສະພາບການໄດ້ຄືນສູ່ປົກກະຕິແລ້ວ ຮ້ອຍເອກ ກອງແລ ຈຶ່ງເຂົ້າມາຫາກຳລັງຢູ່ໃນເມືອງ.

ເມື່ອ ຮ້ອຍເອກ ກອງແລ ມາແລ້ວກໍ່ໄດ້ຮ່ວມປະຊຸມກັນ ໃນຄະນະ ລັດຖະປະຫານ ເພື່ອພ້ອມກັນຕີລາຄາສະພາບການ. ເວລານັ້ນ ຝ່າຍພູມີ-ບຸນອຸ້ມ ໄດ້ສົ່ງທະຫານມາໂດດຈ້ອງລົ່ງທີ່ ທົ່ງນາທ່າເດື່ອ ແລະ ສົ່ງຈຳນວນ ຫລາຍເຂົ້າມາຈີນາຍໂມ້ ແລະ ຕອນເຊົ້າມື້ນັ້ນພວກຈີນາຍໂມ້ສົມທົບກຳລັງ ໂດດຈ້ອງລົ່ງນັ້ນ ຂະຫຍາຍກຳລັງ ຢູ່ບໍລິເວນຫຼັກ4(ທ່າເດື່ອ). ຕໍ່ໜ້າສະ ພາບການດັ່ງກ່າວ, ຝ່າຍເຮົາໄດ້ເອົາ 2 ກອງຮ້ອຍຂອງ ກອງພັນທີ 2 ໄປ ຕັ້ງລັດຢູ່ບໍລິເວນຫຼັກ 3 (ແຖວເຮືອນ ເຈົ້າສຸວັນນະພູມາ) ເພື່ອຈັ້ງທ່າກຸ່ມ ພ້ອມຕ້ານການບຸກລຸກຂອງພວກເຂົາ.

ຕໍ່ໜ້າສະພາບການດັ່ງກ່າວຄະນະພວກເຮົາໄດ້ພ້ອມກັນເຂົ້າລາຍ ງານ ທ່ານ ນາຍົກ ເຈົ້າສຸວັນນະພູມາ ທີ່ຫ້ອງການສຳນັກງານນາຍົກ ແລະ ຂໍບຸກໂຈມຕີສັດຕູທີ່ຂຶ້ນມາຕັ້ງຢູ່ ເພື່ອຂັບໄລ່ພວກເຂົາອອກຈາກເຂດນະ

ຄອນວ່ງຈັນ ແຕ່ເຈົ້າສຸວັນນະພູມາ ບໍ່ໃຫ້ຕີ, ເພິ່ນຈະແກ້ໄຂໂດຍສັນຕິກັບກຸ ປະສິດເອງ. ຮ້ອຍເອກ ກອງແລຕາງໜ້າຄະນະລາຍງານນຳເພິ່ນວ່າ: ຖ້າ ເຮົາບໍ່ຕີເຂົາກ່ອນ ແນ່ນອນເຂົາກໍ່ຈະບຸກເຮົາ, ເນື່ອງຈາກວ່າເຂົາໄດ້ເພີ່ມ ກຳລັງໂດດຈ້ອງລົງຫລາຍມື້ແລ້ວ ແລະ ຈຳນວນໜຶ່ງກໍ່ຂ້າມມາແຕ່ໄທ. ເພິ່ນກ່າວວ່າບໍ່ເປັນຫຍັງ, ເຂົາບໍ່ຕີເຮົາດອກ ເມື່ອເພິ່ນກ່າວວ່າແນວນັ້ນ ພວກເຮົາຈຶ່ງອອກຈາກຫ້ອງການເພິ່ນແລ້ວເຂົ້າພົບ ພະນະທ່ານ ກີນິມ ຢູ່ ຫ້ອງການເພິ່ນທີ່ ສຳນັກງານລັດຖະບານ (ກະຊວງຕ່າງປະເທດ) ເພື່ອລາຍ ງານສະພາບການໃຫ້ເພິ່ນຮູ້ ແລະ ທັດສະນະທ່າທີຂອງເຈົ້າສຸວັນນະພູມາ, ພ້ອມໄດ້ສະເໜີບຸກໂຈມຕີສັດຕູກ່ອນເຂົາບຸກເຮົາ. ພະນະ ທ່ານ ກີນິມ ມີຄຳ ເຫັນວ່າ: ເອົາແຕ່ຄວາມຕັດສິນໃຈຂອງຄະນະລັດຖະປະຫານ, ເພິ່ນເຫັນດີ ເຫັນພ້ອມ ແລະ ຈະຄ່ງບ່າຄ່ງໄລ່ຮ່ວມກັບຄະນະລັດຖະປະຫານ, ແຕ່ ຕ້ອງຮັບປະກັນໄຊຊະນະ.

ເມື່ອ ພະນະທ່ານ ກີນິມໃຫ້ຄຳເຫັນ ແລະ ຊີ້ນຳແນວນັ້ນ ພວກເຮົາ ກໍ່ໄດ້ປະຊຸມເພື່ອວາງຄວາມຕັດສິນໃຈ ແລະ ວາງແນວບຸກຂອງແຕ່ລະກອງ. ຮອດຕອນຄ່ຳຂອງວັນທີ 10/8/1960 ກໍ່ໄດ້ນັດຫົວໜ້າຂອງແຕ່ລະກອງ ໄປ ຢູ່ກາງທາງຫລັກ 3 ຕໍ່ໜ້າເຮືອນ ເຈົ້າສຸວັນນະພູມາ ເພື່ອມອບໝາຍໜ້າທີ່ ໃຫ້ຫົວໜ້າແຕ່ລະກອງຜັນຂະຫຍາຍກຳລັງບຸກເຂົ້າແຕ່ລະປີກ. ແຕ່ພໍປະ ມານ9ໂມງແລງ, ເຈົ້າສຸວັນນະພູມາ ຂີ່ລົດປະຈຳນາຍົກມາ ແລ້ວຖາມພວກ ເຮົາ ດ້ວຍທ່າທີເຄັ່ງຄຽດຂຶ້ນວ່າ: ພວກເຈົ້າຈະເຮັດຫຍັງ? ຮ້ອຍເອກ ກອງ ແລ ຕອບວ່າ ຈະກຽມແຜນບຸກຕີສັດຕູ. ເຈົ້າສຸວັນນະພູມາ ເວົ້າວ່າ: ເຊົາໆ, ມັນຈະນອງເລືອດ, ຟັງຄວາມຂ້ອຍ, ຖ້າບໍ່ຟັງ ຂ້ອຍບໍ່ຢູ່ນຳພວກເຈົ້າ. ເຖິງ ພວກເຮົາຈະລາຍງານເຫດຜົນແນວໃດ ເພິ່ນກໍ່ສັ່ງແຕ່ວ່າໃຫ້ຢຸດເຊົາ. ເຫັນ ແນວນັ້ນພວກເຮົາໄດ້ຢຸດເຊົາ (ຕາມແຜນຈະເລີ່ມບຸກໂຈມຕີສັດຕູເວລາ 4 ໂມງເຊົ້າ) ໃນວັນທີ11/8/1960

ຈາກສະພາບການແນວນັ້ນ, ພວກເຮົາກໍ່ໄດ້ປ່ຽນແຜນປ້ອງກັນໂດຍ ມອບໃຫ້ 2 ກອງຮ້ອຍຂອງ ກອງພັນທີ່ 2 ລົງມາປ້ອງກັນຢູ່ບໍລິເວນຫລັກ 3 ຕໍ່ຫນ້າສັດຕູ ຢູ່ບໍລິເວນທ່າເຮືອຫລັກ 4. ສ່ວນກຳລັງອື່ນ ທີ່ຈະເຂົ້າຮ່ວມບຸກ ສັດຕູກໍ່ໄດ້ຮັບໜ້າທີ່ເຄື່ອນອອກຈາກ ນະຄອນຫລວງວຽງຈັນ ໄປຕັ້ງທ່າ ປ້ອງກັນທິດຫຼັກ 21 (ທາງ13ໃຕ້). ຊຶ່ງໃນນັ້ນມີກອງຮ້ອຍຂອງຂ້າພະເຈົ້າ ແລະ ກອງຮ້ອຍຂອງ ຮ້ອຍຕີ ທຽບ ຢູ່ແນວໜ້າຕ້ານສັດຕູບຸກລຸກຢູ່ທີ່ນັ້ນ. ຫລາຍຄັ້ງສັດຕູບຸກຂຶ້ນມາບໍ່ໄດ້, ມີແຕ່ຍິງປືນໃຫ່ຍ 105 ຖະຫຼີ່ມໃສ່ທະຫານ ລາບບຸກຂຶ້ນບໍ່ໄດ້. ຢູ່ທິດຈີນາຍໂມ້ ພວກເຂົາໄດ້ບຸກໂຈມຕີເຂົ້າວຽງຈັນ ແຕ່ ເວລາບ່າຍ 1 ໂມງ ຮອດປະມານ 5:30 ໂມງ ຂອງວັນທີ11/12/1960, ເຖິງເວລາປະມານ 5 ໂມງແລງ, ຮ້ອຍໂທທອງມີ, ຮອງຫົວໜ້າຄະນະລັດ ຖະປະຫານ ແລະ ທັງເປັນຜູ້ບັນຊາບັ້ນລົບປ້ອງກັນນະຄອນວຽງຈັນ ໃນເວ ລານັ້ນອອກໄປແຈ້ງໃຫ້ຂ້າພະເຈົ້າຮູ້ວ່າ: ສັດຕູຢຶດໄດ້ໂຕເມືອງວຽງຈັນໝົດ ແລ້ວ ແຕ່ທິດນີ້ຮອດດົງໂດກ, ທິດເໜືອຮອດຫລັກ 2. ກຳລັງພວກເຮົາໄດ້ ຖອຍໄປຕ້ານຢູ່ເຂດທົ່ງປົ່ງແນວຫລັງຢູ່ບ້ານອີ່ໄລ. ໃຫ້ໂຕນຳກຳລັງທັງໝົດ ຂອງພວກເຮົາຢູ່ທິດນີ້ຖອຍຮອດ 3 ແຍກ ແລ້ວໄປ ຂ້າມບັກທ່າງ່ອນ ຕໍ່ໄປ ຂ້າມທີ່ເມືອງເກົ່າ, ແລ້ວໄປເຕົ້າໂຮມກັນຢູ່ບ້ານອີ່ໄລ ເພື່ອກຽມບຸກຢຶດເອົາ ວຽງຈັນຄືນ. ຫຼັງຈາກໄດ້ຮັບຄຳສັ່ງນັ້ນຂ້າພະເຈົ້າໄດ້ນຳກຳລັງຖອຍໄປຕາມ ທິດດັ່ງກ່າວ. ຖອຍໄປພ້ອມກັບກອງຮ້ອຍຕ່າງໆ ຂອງກອງພັນທີ 4 ແລ້ວ ຍັງມີກອງປືນໃຫຍ່ 105 ຂອງ ຮ້ອຍໂທ ບຸນສີ ທີ່ມີໜ້າທີ່ຊ່ວຍໜູນປືກນັ້ນ ຂອງພວກເຮົາ, ສ່ວນກອງອື່ນໆທີ່ຢູ່ສາມແຍກໄປທ່າງ່ອນມີ ກອງພັນທີ 3 ທີ່ຕັ້ງຂຶ້ນໃໝ່ ພ້ອມກັບກອງພັນທີ 4 ໂດຍຫົວໜ້າກອງພັນແມ່ນ ຮ້ອຍເອກ ສຸດໃຈ ບໍ່ຖອຍນຳ, ເມື່ອສັດຕູມາຮອດກໍ່ຫັກຫຼັງພວກເຮົາ ແລະ ເຂົ້າຮ່ວມ ນຳພວກເຂົາ. ເມື່ອເຄື່ອນຮອດທ່າເມືອງເກົ່າ(ບ້ານເກົ່ນ)ບໍ່ມີບັກຂ້າມ, ມີແຕ່ ເຮືອພາຍທຳມະດາຂອງປະຊາຊົນ. ເມື່ອເປັນແນວນັ້ນ ຈຶ່ງໄດ້ຂໍຄວາມຊ່ວຍ

ເຫຼືອນຳປະຊາຊົນຕັດເອົາໄມ້ໄຜ່ບ້ານ ມາເປັນແພເອົາທະຫານຂ້າມຈົນເຖິງ ທ່ຽງຄືນຈຶ່ງແລ້ວ ແລະ ໄດ້ເອົາພາຫະນະຂົນສົ່ງ ພ້ອມກັບປືນໃຫຍ່ຂ້າມ ໝົດ ແລະ ໄດ້ນຳກຳລັງທັງໝົດມາເຖິງບ້ານອີ່ໄລ ຊຶ່ງເປັນຈຸດເຕົ້າໂຮມ ໃນ ຕອນເດິກຂອງຕອນເຊົ້າວັນທີ12/12/1960.

ຮອດຕອນເຊົ້າຂອງ ວັນທີ 14/12/1960 ແຕ່ລະກອງທີ່ ໄດ້ຮັບໜ້າ ທີ່ເຂົ້າບຸກໂຈມຕີເອົາວຽງຈັນຄືນກໍ່ໄດ້ເຄື່ອນຮອດບໍລິເວນທົ່ງປ່ຽ. ເສັ້ນຂະ ຫຍາຍກຳລັງຕາມແຜນເຂົ້າແຕ່ລະປີກຄື:

- ກອງຮ້ອຍທີ 4 ຂອງກອງພັນທີ4 (ກອງຂ້າພະເຈົ້າ) ເຂົ້າທິດ ປາກທ້າງ-ນາໄຮ່ດຽວ-ອານຸສາວະລີ ແລະ ບໍລິເວນໂຮງການລັດຖະບານ (ຫໍປະຕູໄຊດຽວນີ້).
- ກອງຂອງ ຮ້ອຍຕີ ທຽບ ເຂົ້າດ້ານທາງຊູ່ສີໄຄ,ຫລັກ2...
- 2 ກອງຮ້ອຍ ກອງພັນທີ 2 ເຂົ້າປີກຂວາທາງຫລວງພະບາງຫາ ແຄມຂອງ
- ກອງຮ້ອຍຂອງວິລະຊົນສີທອງປ້ອງກັນຢູ່ບໍລິເວນວັດຊຽງແວ່

+ <u>ການຜັນແປບັ້ນລົບ:</u>

- ປີກຂອງກອງພວກຂ້າພະເຈົ້າບຸກຕີແລະຂັບໄລ່ສັດຕູເລີ່ມຕົ້ນ ແຕ່ເຂົ້າຮອດແຄມບ້ານນາໄຮ່ດຽວແລ້ວຂັບໄລ່ຕີສັດຕູຜ່ານຄ້າຍຢູ່ແຊດ (USAID) ແລະຢູ່ໂຊມ (USOM) ຂອງອາເມລິກາຂັບຕີສັດຕູຮອດ ປະຕູ ໄຊດຽວນີ້.
- ປີກຂອງ ຮ້ອຍຕີ ທຽບ ຕີຮອດແຕ່ຫລັກ 2
- ປີກແຄມຂອງ ຂອງກອງພັນທີ 2 ບຸກຕີສັດຕູຮອດແຕ່ບໍລິເວນ ປາກປາສັກ ທັງສອງປີກນີ້ໄດ້ຖືກສັດຕູຕ້ານແຮງ ຈົນໄດ້ຖອຍອອກ.

ສ່ວນປີກຂອງກອງຂອງຂ້າພະເຈົ້າ ຈັ້ງຢູ່ເຂດອານຸສາວະລີຈົນຮອດ 17ໂມງແລງ.ບໍ່ໄດ້ຍິນສຽງປືນ ຂອງທິດອື່ນເລີຍ ເພາະຖອຍໝົດແລ້ວ. ເວ

ลานั้ນ ສັດຕູສຸມຍິງປືນໃຫ່ຍ 105 ໃສ່ບໍລິເວນຂອງກອງຂອງຂ້າພະເຈົ້າ ແລະ ສູ້ລົບກັບສັດຕູຢູ່ນັ້ນ. ເມື່ອບ່ໄດ້ຍິນສຽງປືນທິດອື່ນ ແລະ ຕິດຕ່ໍກັນບ່ໄດ້,ຂ້າພະເຈົ້າໄດ້ແຕ່ງຈຸສຶບຂ່າວໄປກຳສະພາບແລ້ວກັບມາລາຍງານວ່າ: ສັດຕູໄດ້ຮອດວັດໄຕ ແລະ ກຳລັງເຮົາຖອຍໝົດແລ້ວ, ຂ້າພະເຈົ້າຈຶ່ງໄດ້ ສັ່ງກຳລັງຖອຍຕາມແລວທາງນາໄຮ່ດງ-ປາກທ້າງຂ້າງເດີ່ນບິນ. ຕາມ ແລວທາງຖອຍດັ່ງກ່າວ ກ່ໍຮູ້ສຶກແສນເສົ້າສະຫລົດໃຈ ເມື່ອເຫັນຊາກສົບ ຂອງພາກສ່ວນ ກອງໜູ່ເພື່ອນທີ່ເຂົ້າບຸກວຽງຈັນຖອຍອອກ, ຖືກສັດຕູຍິງ ປືນໃຫ່ຍ 105 ລັດທາງຕາຍຂາກຸດຄໍຂາດ..ຕາມທີ່ເຫັນໄດ້ມີປະມານ 20 ກວ່າຄົນ, ສ່ວນບໍລິເວນນອກເສັ້ນທາງຖອຍ ບ່ໍຮູ້ວ່າເປັນເທ່ົາໃດ.

ປີກວັດຊຽງແວ່, ໂດຍກອງຂອງ ວິລະຊົນ ສີທອງ ຕ້ານກຳລັງສັດ ຕູບຸກຂຶ້ນມາ ທັງທະຫານລາບປືນໃຫ່ຍ ທາງບົກ ແລະ ທາງນ້ຳຂອງ ສະ ຫາຍ ວິລະຊົນ ສີທອງ ນຳພາກຳລັງຕັນຕ້ານສັດຕູຢູ່ນັ້ນ ສະຫາຍ ຖືກປືນ ສັດ ຕູ ແລະ ເສຍສະລະໄປຢ່າງສົມກຽດສັກສີ ເພື່ອປະຊາຊົນ ແລະ ພາລະ ກິດປະຕິວັດ.

ເຖິງເວລາຄ່ຳມືດ, ທຸກພາກສ່ວນກຳລັງຂອງ ພວກເຮົາທີ່ເຂົ້າບຸກ ເພື່ອຢຶດເອົາ ນະຄອນວຽງຈັນຄືນ ນັ້ນໄດ້ພ້ອມກັນຖອຍໝົດ, ຍັງແຕ່ຊາກ ສົບຜູ້ທີ່ເສຍຊີວິດ ແລະ ບາດເຈັບທີ່ເຫລືອຄວາມສາມາດເອົາອອກມາໄດ້ ເທ່ົານັ້ນ. ແຕ່ນັ້ນມາກ່ໍສິ້ນສຸດບັ້ນລົບສຸດທ້າຍທີ່ນະຄອນວຽງຈັນ.

ຂະບວນຖອຍໄດ້ໄປເຕ້ົາໂຮມຢູ່ເຂດບ້ານອີ່ໄລ, ຊຶ່ງໃນນັ້ນ ພະນະ ທ່ານ ກິນິມ ກ່ໍໄດ້ຖອຍອອກນຳຂະບວນການນຳຂອງກຳລັງລັດຖະປະຫານ (ແຕ່ຂາພະເຈົ້າບ່ໍໄດ້ພົບເພ່ີນ, ຮູ້ແຕ່ໜູ່ເລ່ົາສູ່ຟັງ ເພາະຂ້າພະເຈົ້າ ຢູ່ນຳ ກອງສູ້ລົບ). ຮູ້ຂ່າວແນວນັ້ນ ກ່ໍມີກຳລັງໃຈຂຶ້ນຕ່ໍມ ເພາະມີຜູ້ທີ່ເປັນບ່ອນອີງ ຜູ້ໜຶ່ງຕັ້ງແຕ່ຕົ້ນລັດຖະປະຫານມາຕະຫລອດ. ສ່ວນຜູ້ນຳອ່ືນໆໃນລັດຖະ ບານປະສົມນັ້ນ ຂ້າພະເຈົ້າກ່ໍບ່ໍຮູ້ວ່າເພ່ີນອອກຈາກວຽງຈັນເວລາໃດ.

ເມື່ອກຳລັງແຕ່ລະພາກສ່ວນເຕົ້າໂຮມຢູ່ບ້ານອີ່ໄລແລ້ວ ໄດ້ພ້ອມກັນຂຶ້ນລົດໄປວັງວຽງ ຕາມຄຳສັ່ງ(ສ່ວນລົດນັ້ນແຕ່ລະກອງ ໄດ້ນຳເອົາອອກມາພ້ອມເມື່ອຖອຍອອກຈາກວຽງຈັນໃນວັນທີ11/12/1960 ພຸ້ນ, ພາຍຫລັງສົ່ງກຳລັງເຂົ້າບຸກວຽງຈັນໃນວັນທີ 14/12/1960 ຮອດທົ່ງປ່ຽງຈຸດຂະຫຍາຍກຳລັງແລ້ວກັບຄືນມາຖ້າຢູ່ບ້ານອີ່ໄລ) ທີ່ເປັນແນວຫລັງຂອງປືນລົບ.

ໃນຕອນເຊົ້າຂອງວັນທີ 15/12/1960 ຮອດວັງວຽງ. ເລີ່ມແຕ່ວັນທີ 16/12/1960 ມີຍົນຂອງ ອະດີດສະຫະພາບໂຊວຽດ ຈາກຮ່າໂນຍ ຫວຽດນາມ ໄດ້ບັນທຸກເຂົ້າ, ນ້ຳ ແລະ ລູກປືນ ພ້ອມອຸປະກອນຮັບໃຊ້ສູ້ຮົບຈຳນວນໜຶ່ງ, ມາປ່ອນລົງໃຫ້ຢູ່ທີ່ວັງວຽງ ເພື່ອປະກອບໃຫ້ກຳລັງທັງໝົດ ທີ່ຖອຍອອກມາຈາກວຽງຈັນເວລານັ້ນ, ຈົນພໍກັບຄວາມຕ້ອງການບໍ່ພຽງແຕ່ຈັ້ງທາຢູ່ວັງວຽງໄດ້ ແຕ່ຍັງສຳຮອງໄວ້ເພື່ອສູ້ລົບຕໍ່ໄປທີ່ຄະນະບັນຊາການລວມໄດ້ມີແຜນໃຫ້ແຕ່ລະກອງຮູ້ແລ້ວ.

ຈາກການທີ່ໄດ້ຮັບການສະໜັບສະໜູນ ແລະ ໃຫ້ການຊ່ວຍເຫຼືອເອົາຍົນມາປ່ອນເຄື່ອງໃຫ້ໃນສະພາບເຄັ່ງຕຶງຢູ່ເວລານັ້ນ, ຂ້າພະເຈົ້າເອງ ແລະ ໝູ່ເພື່ອນກໍ່ໄດ້ຮັບຮູ້ວ່າ: ແມ່ນຜົນງານຂອງລັດຖະບານປະສົມເວົ້າ ລວມ ແລະ ພິເສດໃນນັ້ນແມ່ນ : ຜົນງານຂອງ ລັດຖະມົນຕີວ່າການກະຊວງຕ່າງປະເທດ(ພະນະທ່ານ ກົມົມ) ທີ່ໄດ້ເຄື່ອນໄຫວຂໍການສະໜັບສະໜູນ ແລະ ຊ່ວຍເຫຼືອຈາກບັນດາປະເທດໃນຄ້າຍສັງຄົມນິຍົມ ເວລາຍັງຢູ່ນະຄອນວຽງຈັນ, ອັນນີ້ຖືວ່າ ເປັນຄຸນງາມຄວາມດີຂອງເພີ່ນ. ພວກເຮົາກໍ່ຄື ຂ້າພະເຈົ້າເອງ ບໍ່ຫຼົງລືມບຸນຄຸນເພີ່ນ ທີ່ໄດ້ໃຫ້ການຊ່ວຍເຫຼືອເວລາເຄັ່ງຕຶງ, ບໍ່ແມ່ນແຕ່ໄດ້ວັດຖຸປະກອບແຕ່ສຳຄັນນັ້ນເປັນການໃຫ້ກຳລັງໃຈອັນໃຫ່ຍຫລວງແກ່ເລົ່າທະຫານ ແລະ ຜູ້ຮ່ວມຖອຍອອກຈາກນະຄອນວຽງຈັນທັງມີຄວາມເຊື່ອໝັ້ນ ວ່າສືບຕໍ່ເສັ້ນທາງລັດຖະປະຫານຮ່ວມເປັນຮ່ວມຕາຍກັບກຳລັງຝ່າຍປະເທດລາວ ແລະ ອີງໃສ່ຄ້າຍສັງຄົມນິຍົມຕ້ອງມີໄຊຊະ

ນະ. ຈາກນ້ຳໃຈເຊື່ອໝັ້ນດັ່ງກ່າວກຳລັງໃຈນາຍ ແລະ ພົນທະຫານ ກໍພຸ້ງ ເດັ່ນເຂັ້ມແຂງຂຶ້ນ. ແນວຄິດທໍ້ຖອຍລັ່ງເລ ແລະ ອິດເມື່ອຍຈາກການສູ້ລົບ ປ້ອງກັນນະຄອນວຽງຈັນ ແລະ ເສຍນະຄອນວຽງຈັນໃຫ້ສັດຕູ ຍ້ອນບຸກຕີ ຄືນເອົາບໍ່ໄດ້ ກໍກັບມາມີຄວາມຕັດສິນໃຈເດັດດ່ຽວຂຶ້ນ. ຍ້ອນອັນນີ້ແລ້ວ ຈຶ່ງຍອມເສຍສະລະກ້າຫານ ພ້ອມກັບບຸກຢຶດທີ່ງໄຫຫີນທີ່ໝັ້ນ ຍຸດທະສາດ ເປັນດາບຂອງສັດຕູໄດ້ຢ່າງໄວວາດັ່ງເຫດການ ແລະ ການຜັນແປຂອງບັ້ນ ລົບດັ່ງກ່າວໂດຍລວມດັ່ງລຸ່ມນີ້:

ພາຍຫຼັງຊັບຊ້ອນປັບປຸງກຳລັງກຽມພ້ອມທຸກປະການຢູ່ວັງວຽງ ແລ້ວ, ຮອດວັນທີ 29/12/1960 ໄດ້ເຄື່ອນກຳລັງທັງໝົດຈາກວັງວຽງ. ສ່ວນກຳລັງສູ້ລົບຕົ້ນຕໍເວລານັ້ນມີ: ກອງທັບທະຫານລາບອາກາດທີ 2 ແລະ ກອງພັນທີ 4 (ຂ້າພະເຈົ້າ) ສັງກັດຢູ່ນອກນັ້ນແມ່ນກຳລັງໜູນຄື: ປືນ ໃຫ່ຍ 105 (ຮ້ອຍໂທ ບຸນສີ) ທະຫານຊ່າງ (ຮ້ອຍເອກທອງພູນ) ພ້ອມ ລົດດຸດ D4 ແລະ ທະຫານຊ່າງຈຳນວນໜຶ່ງ, ກອງບັນຊາການເຄື່ອນ ຕາມມີ: ຮ້ອຍເອກ ກອງແລ, ຮ້ອຍໂທ ເດືອນ ສຸນນາລາດ, ຮ້ອຍໂທ ກອງສີ ຂັດຕິຍະລາດ, ຮ້ອຍເອກ ຄຳລ້ອມ, ພ້ອມນາຍຮ້ອຍ, ນາຍພັນຈຳນວນໜຶ່ງ ທີ່ຮ່ວມລັດຖະປະຫານ. ຝ່າຍປະເທດລາວມີ ທ່ານ ສີງກະໂປ ຈຸນລະມະນີ ແລະ ພະນັກງານຈຳນວນໜຶ່ງ. ຝ່າຍຊ່ຽວຊານການທະຫານຫວຽດນາມມີ ທ່ານ ຮວາ ແລະ ວິຊາການປືນໃຫ່ຍບາງຄົນ ເຫຼືອນັ້ນແມ່ນຜູ້ບັນຊາດ້ານ ລົບບັງຄັບກອງພັນ, ກອງຮ້ອຍຊຶ່ງໃນນັ້ນມີ:

- ຮ້ອຍໂທ ທອງມີທ໊ອໜ້າບັນຊາການແນວລົບ.
- ຮ້ອຍໂທ ຄຳກ້ຽວ ເປັນຜູ້ຮອງ
- ຮ້ອຍເອກ ທັນ ສະຫວັນວິໄລ ຫົວໜ້າກອງພັນທີ 4 ແລະ ນາຍ ທະຫານເສນາທິການດ້ານລົບ ແລະ ລົດຖັງ (AM) ໜຶ່ງຄັນ.

- ການເຄື່ອນສູ່ຈຸດໝາຍ (ທົ່ງໄຫຫີນ) ຈັດເປັນ 3ພາກສ່ວນຄື :

- ▪ ກຳລັງທະຫານສູ້ລົບ (ກອງພັນທີ 2 ແລະ ກອງພັນທີ 4 ແມ່ນ ກອງໜ້າ).
- ▪ ກອງບັນຊາການດ້ານລົບພ້ອມກຳລັງໜູນ ແລະ ຮັບປະກັນ (ເປີດເສັ້ນທາງ, ແພດໝໍ, ສື່ສານ, ປືນໃຫ່ຍ...ຢູ່ທີ 2 (ຕິດຫຼັງ ກຳລັງສູ້ລົບ).
- ▪ ກອງບັນຊາການສູງສຸດເຄື່ອນຕາມຫຼັງດ້ານລົບໂດຍ 1 ກອງ ຮ້ອຍຂອງ ກອງພັນທີ 2 ປ້ອງກັນ.

• ການເຄື່ອນກຳລັງ (ຕາມແຜນ)

- ▪ ວັນທີ 29/12/1960 ຈາກວັງວຽງ-ຮອດສາລາພູຄູນທ່ຽງຄືນ (ແຕ່ວັງວຽງສາລາພູຄູນບໍ່ ມີສັດຕູລັດທາງ)
- ▪ ວັນທີ 30/12/1960 ຕອນເຊົ້າມືດ ສະທະພາບໂຊຫວຽດຈາກ ຮ່າໂນຍມາປ່ອນເຂົ້າ, ນ້ຳມັນ ແລະ ລູກກະສຸນຕື່ມຢູ່ 3 ແຍກພູ ຄູນ. ຫຼັງຈາກໄດ້ປະກອບໃຫ້ແຕ່ລະພາກສ່ວນແລ້ວກໍເລີ່ມ ເຄື່ອນກຳລັງຕາມແຜນແບ່ງຄື :

- 2 ກອງຮ້ອຍຂອງກອງພັນທີ 2 ປ່ຽນກັນອອກໜ້າຈາກພູຄູນ ຮອດປ້ຽປາງ.ຖືກສັດຕູ ລັດຕິ 2ຄັ້ງ.ຢູ່ກ່ອລັນ ແລະ ປ້ຽປາງ ແຕ່ ບຸກທະລຸໄດ້ (ຜູ້ຮັບຜິດຊອບ 2 ກອງນີ້ບໍ່ຈີ່ຊີ)
- ຈາກປ້ຽປາງ, ກອງຮ້ອຍຂອງ ຮ້ອຍຕິ ທຽບ ອອກໜ້າປ່ຽນ ຮອດເມືອງສຸຍ (ທາງໄລຍະນັ້ນບໍ່ມີສັດຕູ ເພາະເຂົາຖືກຕີແຕກ ຈາກປ້ຽປາງແລ້ວປົບຖອຍໄປຈ້ັງທ່າ ຕ້ານຢູ່ຂົວນ້ຳງຶ່ມ ແລະ ບໍ ລິເວນຕີນພູບ້າ).
- ແຕ່ເມືອງສຸຍຫາຈຸດຂະຫຍາຍກຳລັງບຸກຕີທ່ຽງໄຫຫີນ ບໍລິເວນ ທ້ອຍນ້ຳເຢັນ ແລະ ພູບ້າ. ກອງຂອງຂ້າພະເຈົ້າ (ກອງຮ້ອຍທີ 4) ໄລຍະທາງນີ້ ໄດ້ຖືກສັດຕູລັດຕິສອງຈຸດຄື: ຈຸດທຳອິດຢູ່

ຂ້ອນ້ຳງຶ່ມ, ກອງຮັກສາຂ້ອ ແລະ ທຳລາຍຂ້ອ ແຕ່ຖືກກຳລັງ ຂອງ ຂ້າພະເຈົ້າບຸກຕີຢ່າງໄວວາລະຫວ່າງ 10 ນາທີ ເຮັດໃຫ້ ສັດຕູຕາຍ ແລະ ບາດເຈັບຈຳນວນໜຶ່ງ ແລະ ຢຶດຂ້ອໄດ້, ສັດ ຕູທຳລາຍຂ້ອບໍ່ທັນ ຈຶ່ງຂ້າມຂ້ອເຫຼັກນັ້ນຂອງກຳລັງທັງໝົດໄດ້ ແລ້ວສືບຕໍ່ໄລ່ຕີສັດຕູຮອດນ້ຳເຢັນ ຕອນບ່າຍປະມານ 16ໂມງ ກໍ່ຢຸດເພື່ອ ແບ່ງແນວລົບຮັບຜິດຊອບຕົວຈິງ ແລະ ສະຖານທີ່ ແຕ່ບໍ່ຮູ້ວ່າທ້ວຍນ້ຳເຢັນມີຂ້ອ. ສັດຕູຈຸດຂ້ອນັ້ນ ເມື່ອເຄື່ອນເຂົ້າ ສະໜາມ ເອົາພາຫະນະລົດລາງຜ່ານໄປບໍ່ໄດ້ ຈຶ່ງໄດ້ນຳລົດ ດຸດ ດຸດທາງຂ້າມໃຫ່ມປະມານຊົ່ວໂມງໜຶ່ງແລ້ວ ແລະ ຂ້າມໄດ້ (ສ່ວນທະຫານລາບ ຂ້າມໄປຖ້າຢູ່ຈຸດຂະຫຍາຍກຳລັງໝົດ ແລ້ວ) ລົດຂ້າພະເຈົ້າ (ລົດຈີບທະຫານ) ຂ້າມກ່ອນຄັນອື່ນ ເຊິ່ງ ເປັນຈຸດຂະຫຍາຍກຳລັງ ແລ້ວກໍລົງລົດ ເຂົ້າຫາກຳລັງຂອງຕົນ ທີ່ລໍຖ້າຢູ່. ຂ້າມຕາມຫຼັງຄັນທີ 2 ແມ່ນລົດຂອງ ຮ້ອຍໂທ ທອງມີ (ຜູ້ບັນຊາດ້ານລົບ) ຫວິດກັບລົດຂ້າພະເຈົ້າພຽງແຕ່ 3 ນາທີ, ຂ້າມນ້ຳເຢັນຂຶ້ນໄປພໍດີເຖິງຈຸດຂະຫຍາຍກຳລັງສັດຕູຍິງປືນຄົກ 106 ມາ ແຕ່ທິດພູບ້າ ຕົກຖືກລົດ ຮ້ອຍໂທ ທອງມີ ຄໍຂາດກັບ ທີ່. ຈາກເຫດ ການນັ້ນ ບໍ່ມີຜູ້ບັນຊາລວມບັ້ນລົບດັ່ງກ່າວ. ຜູ້ ຮອງດ້ານລົບ (ຮ້ອຍໂທ ແພງກ້ຽວ)ກໍ່ບໍ່ຮູ້ແນວໃດ, ມີແຕ່ມອບ ໃຫ້ຜູ້ບັງຄັບບັນດາກອງທີ່ຈະບຸກເຂົ້າໂຈມຕີນັ້ນ ແຕ່ ລະກອງ ຮັບຜິດຊອບເອງໄປຕາມແນວລົບຜູ້ບັນຊາດ້ານລົບ ໄດ້ມອບ ແລ້ວຄື :

- 2 ກອງຮ້ອຍຂອງກອງພັນທີ 2 ເຂົ້າທິດເບື້ອງຂວາຂອງ ທາງ ເຂົ້າທີ່ງໄຫຫີນ, ລາດງອ່ນ, ລາດຖ້ຳ, ທາງເດີ່ນບິນ.

- ການຜັນແປບັ້ນລົບປົດປ່ອຍທີ່ງໄຫຫີນ

- ປົກຂວາ (2 ກອງຮ້ອຍຂອງກອງພັນທີ 2 ຖືກສັດຕູຕ້ານເລັກ ນ້ອຍຢູ່ ບໍລິເວນລາດຖ້ຳ.ແລ້ວສັດຕູແຕກຖອຍໄປທິດລາດ ຮ່ວງ, ຊຸງຂວາງ).
- ປົກຕາມທາງຖືກສັດຕູລັດຍົງບາງຈຸດແລ້ວພວກມັນກໍ່ແຕກ ຖອຍ
- ປົກຊ້າຍ ກອງຂ້າພະເຈົ້າເອງມີ ກອງພັນ 25 ປີ ຂອງສັດຕູ ຮັກ ສາເດີ່ນບິນ ແລະ ບໍລິເວນຖືກກອງຂອງ ຂ້າພະເຈົ້າ ບຸກຕີຢ່າງ ບ້ຽເອີ່ນ, ພວກເຂົາສູ້ຢູ່ນັ້ນລະຫວ່າງ 20 ນາທີ ແລ້ວແຕກຖອຍ ໄປ ທິດໂພນສະຫວັນ, ພວກເຮົາຢຶດໄດ້ອາວຸດຍຸດໂທປະກອນ ຈຳນວນໜຶ່ງ ແລະ ຍົນດາໂກຕາ 1 ລຳ ທີ່ບັນທຸກເຄື່ອງເຕັມ ກຽມບິນຂຶ້ນໜີມາວຽງຈັນແຕ່ບໍ່ທັນ ເພາະພວກເຮົາ ຢຶດສະໜາມ ກ່ອນ. ຮອດລະຫວ່າງ 05 ໂມງເຊົ້າຂອງວັນທີ 1 ເດືອນ 1 ປີ 1961, ພວກເຮົາຢຶດສະໜາມໄດ້ທັ້ງໝົດຢູ່ ທົ່ງໄຫຫີນ ແລະ ອ້ອມ ແອ້ມ.

- ດ້ວຍເຫດນັ້ນ, ປັດໄຈ ແລະ ເງື່ອນໄຂອັນໃດຈຶ່ງປົດປ່ອຍ ທົ່ງໄຫຫີນ ຍຸດທະສາດໄດ້ໄວອາຄົດແນວນັ້ນ? ຂ້າພະເຈົ້າຂໍຍົກບາງດ້ານຕາມ ຄວາມເຂົ້າໃຈ ແລະ ຮັບຮູ້ຄື:

1. ດ້ານເຫດຜົນ:

ທົ່ງໄຫຫີນເປັນ ເປົ້າໝາຍທີ່ຈະຕ້ອງຢຶດເອົາໃຫ້ໄດ້ ເພື່ອເປັນ ທີ່ຕັ້ງຈຸດອີງເປັນຕາຍຂອງກຳລັງລັດຖະປະຫານ ທັງເປັນບ່ອນ ທີ່ເປັນຈຸດຍຸດທະສາດອີງໃສ່ ແລະ ຮ່ວມກັບກຳລັງແນວຮັກ ຊາດອີກ ແລະ ອີງໃສ່ຫວຽດນາມຈຶ່ງເອົາຊະນະຝ່າຍກະບົດ ແລະ ພວກລູກແຫ້ງຕີນມືຂອງອາເມ ລິກາ ຖ້າບໍ່ໄດ້ແນວນັ້ນ ກຳລັງລັດຖະປະຫານ 9/8/1960 ແລະ ລັດຖະປະຫານປະສົມ

ເວລານັ້ນບໍ່ຄົງຕົວຢູ່ໄດ້. ກຳລັງຄະນະລັດຖະປະຫານໂດຍ ໄດ້ຮັບການສະໜັບສະນູນຈາກການນຳແນວລາວຮັກຊາດຈຶ່ງໄດ້ຕັດສິນໃຈແນວນັ້ນ

2. ດ້ານປັດໄຈ ແລະ ເງື່ອນໄຂ:

- ມີຄວາມຕັດສິນໃຈຂອງຄະນະລັດຖະປະຫານ, ຢູ່ໃນນັ້ນກໍ່ມີ ພະນະທ່ານ ກິນິມ ທີ່ໄດ້ວາງນະໂຍບາຍຂອງພັກສັນຕິພາບເປັນກາງ ໂດຍແມ່ນເພີ່ນເປັນຫົວໜ້າຄື ສັນຕິພາບເປັນກາງ ເອກະລາດ ແລະ ຄວາມຖືກຕ້ອງປອງດອງຊາດອັນໄດ້ເປັນບ່ອນອີງເບື້ອງຕົ້ນການວາງນະໂຍບາຍ 9 ຂໍ້ຂອງຄະນະລັດຖະປະຫານ.
- ມີການປະສານກັບ ແນວລົບທິດອື່ນໆຂອງ ກຳລັງຜ່ານແນວລາວຮັກຊາດ.
- ກຳລັງລັດຖະປະຫານໄດ້ມີການປັບປຸງທາງດ້ານຈິດໃຈ ແລະ ການຈັດຕັ້ງຄືນໃໝ່ພາຍຫຼັງເສຍນະຄອນວຽງຈັນກ່ອນມາຢູ່ວັງວຽງຊຶ່ງໃນນີ້ກໍ່ໄດ້ມີຍົນຂອງ ອະດີດ ສະຫະພາບໂຊວຽດ ຮ່ວມກັບ ຫວຽດນາມ ເອົາເຄື່ອງຈາກຮ່າໂນຍມາປ່ອນໃຫ້ຢູ່ວັງວຽງ ຕາມທີ່ໄດ້ກ່າວມາ. ອັນນີ້ມັນໄດ້ເປັນການປະກອບສ່ວນສຳຄັນໃຫ້ແກ່ການປັບປຸງກຳລັງ, ບໍ່ແມ່ນແຕ່ວັດຖຸອຸປະກອນ, ອາຫານການກິນ ແຕ່ສຳຄັນຍັງແມ່ນ ກຳລັງໃຈທະຫານມີຄວາມເຊື່ອໝັ້ນວ່າ ອີງໃສ່ຝ່າຍແນວລາວຮັກຊາດ ແລະ ຄ້າຍສັງຄົມນິຍົມຕ້ອງໄດ້ໄຊຊະນະ. ຜົນງານນີ້ກໍ່ມີການປະກອບສ່ວນສຳຄັນຂອງພະນະທ່ານ ກິນິມ ທີ່ເຄື່ອນໄຫວເຮັດວຽກ ງານຕ່າງປະເທດຢ່າງຄ່ອງແຄ້ວຢູ່ໃນລັດຖະບານປະສົມ ເພື່ອຍາດແຍ່ງເອົາການຊ່ວຍ ເຫຼືອຂອງສາກົນ.
- ກຳລັງລັດຖະປະຫານທີ່ຖອຍອອກຈາກວຽງຈັນ ໄດ້ນຳເອົາພາ

ທະນະຂົນສິ່ງ, ພາຫະນະເປີດທາງ (ລົດດຸດ D4) ຕາມທີ່ໄດ້ກ່າວມາ, ພ້ອມທະຫານຊ່າງແສງຈຳນວນໜຶ່ງ ຖອຍອອກມາ ພ້ອມປືນໃຫຍ່ 105 ຍິງຊ່ວຍໜູນທະຫານລາບ ບຸກໄຂທາງລົດ ດຸດບຸກ ເບີກທາງຕາມທະຫານລາບໃນການເຄື່ອນກຳລັງຈຶ່ງ ວ່ອງໄວເໜືອຄວາມນຶກຄິດຂອງຝ່າຍກົງກັບຂ້າມ. ເນື່ອງຈາກ ວ່າ ກຳລັງວັງປາວ ແລະ ກອງບັນຊາການຂອງສັດຕູຢູ່ທົ່ງໄຫ ຫີນ ໄດ້ສົ່ງກຳລັງຂອງເຂົາ ອອກສະກັດລັດທາງຕາມເສັ້ນທາງ ບໍ່ຫ່າງຈາກ ສາລາພູຄູນເທົ່າໃດ ຫຼັງຈາກການຈັດຕັ້ງດັກສະ ກັດລັດທາງຕັດເສັ້ນທາງ, ຕັດກົກໄມ້ທັບທາງເປັນຫລາຍຈຸດ (ຂ້າພະເຈົ້າກໍ່ໄດ້ເປັນຜູ້ໜຶ່ງ ຢູ່ໃນກຳລັງໄຂເສັ້ນທາງດັ່ງກ່າວ ແລະ ບຸກຢຶດທົ່ງໄຫຫີນ ດັ່ງໄດ້ກ່າວກໍ່ເຫັນຕົວຈິ່ງແທ້) ພາຍຫຼັງ ຢຶດທົ່ງໄຫຫີນ ໄດ້ຖາມນຳສະເລີຍເສິກທີ່ຈັບໄດ້, ເຂົາວ່າກອງ ບັນຊາການຂອງເຂົາບອກວ່າ "ພວກລາວແດງ" (ກຳລັງລັດຖະ ປະຫານ) ຈະບຸກຕີຂຶ້ນມາຢຶດທົ່ງໄຫຫີນໄດ້ ແລະ ຂຶ້ນມາຮອດ ຢ່າງໄວກໍ່ຕ້ອງໜຶ່ງເດືອນ ເພາະຕາມເສັ້ນທາງຂຶ້ນມາ ມີທະ ຫານເຂົາຮັກສາແໜ້ນ ແລະ ຕັດທາງຫຼາຍຈຸດແລ້ວ. ແຕ່ຍ້ອນ ພວກເຮົາມີພາຫະນະເປີດທາງ ແລະ ມີກຳລັງກອງປືນໃຫຍ່, ມີກອງທະຫານທີ່ເຂັ້ມແຂງ ແລະ ຍອມສະລະຊີວິດ, ທັງມີພາ ຫະນະເຄື່ອນທີ່ຄົບຖ້ວນ ບຸກຂຶ້ນມາຢ່າງສາຍຟ້າແລບ, ດ້ວຍ ຍຸດທະວິທີທີ່ຄ່ອງແຄ້ວ. ເຖິງແມ່ນວ່າ ຜູ້ບັນຊາດ້ານລົບຖືກລູກ ປືນ 106 ສັດຕູຍິງລັດທາງເສຍຊີວິດກໍ່ຕາມ, ແຕ່ລະກອງກໍ່ ເປັນເຈົ້າຕົນເອງ ບຸກເຂົ້າຕາມປີກທີ່ຜູ້ບັນຊາດ້ານລົບໄດ້ມອບ ໝາຍໃຫ້ຈົນໄດ້ປິດປ່ອຍທົ່ງໄຫຫີນຍຸດທະສາດໄດ້ ດ້ວຍໄຊຊະ ນະອັນໃຫ່ຍຫຼວງ ຂ້າພະເຈົ້າຮັບຮູ້ ແລະ ເຂົ້າໃຈວ່າ ເຫດຜົນ

ແລະ ປັດໃຈດັ່ງກ່າວເປັນສິ່ງສຳຄັນຕົ້ນຕໍ ສ່ວນດ້ານ ອື່ນໆ ແລະ ເງື່ອນໄຂອຳນວຍໃຫ້ນັ້ນກໍໄດ້ມີການປະກອບສ່ວນທີ່ປະ ຕິເສດບໍ່ໄດ້ .

ເຫດການຜັນແປແຕ່ມື້ເລີ່ມລົງມືເຮັດລັດຖະປະຫານ 9/8/1960 ດ້ວຍການໂຄ້ນລົ້ມລັດຖະບານທຸ່ນເຈົ້າ ສົມສະໜິດ ຂອງລັດທີ່ລ່າເມືອງຂຶ້ນ ແບບໃຫມ່ ອາເມລິກາ ຮອດບັ້ນລົບປົດປ່ອຍທົ່ງໄຫຫີນ, ທີ່ມີການຕິດແໜ້ນ ກັບ ພະນະທ່ານ ກົງໂມ ພົນເສນາ ຢ່າງຕັດແຍກອອກຈາກກັນບໍ່ໄດ້. ແຕ່ ວັນທີ 1/1/1961, ແມ່ນເຂົ້າໄລຍະກຳລັງເປັນກາງ ຮ່ວມກັບກຳລັງຂອງ ແນວລາວຮັກຊາດ (ເວລານັ້ນ) ປົກປັກຮັກສາ ແລະ ເປີດກວ້າງເຂດປົດ ປ່ອຍ ເຂົ້າສູ່ໄລຍະຕໍ່ສູ້ປົດປ່ອຍຊາດ. ຄະນະລັດຖະບານປະສົມທີ່ ເຈົ້າ ສຸ ວັນນະພູມາເປັນນາຍົກ, ຊຶ່ງໃນນັ້ນ ພະນະທ່ານ ກົງໂມພົນເສນາ, ລັດຖະມົນ ຕີວ່າການກະຊວງຕ່າງປະເທດ, ຜູ້ທີ່ເດັດດຽວໜຽວແໜ້ນ ຮ່ວມຂະບວນ ການລັດຖະປະຫານ ແລະ ສະມາຊິກລັດຖະບານຈຳນວນໜຶ່ງທີ່ໜີອອກ ຈາກວຽງຈັນເມື່ອສະພາບວຽງຈັນມີການຫັນປ່ຽນ (ສັດຕູຢຶດໄດ້).

ເວລານັ້ນ ພະນະທ່ານ ກົງໂມ ຍິ່ງມີບົດບາດໂດດເດັ່ນຂຶ້ນໃນການ ເປັນບ່ອນອີງຂອງກຳລັງເປັນກາງ, ເພີ່ນທັງຕໍ່ສູ້ຢູ່ພາຍໃນລັດຖະບານກັບ ຜູ້ທີ່ຍັງມີແນວຄິດປໍລະປັກກັບແນວລາວຮັກຊາດ, ທັງສືບຕໍ່ເຄື່ອນໄຫວພົວ ພັນກັບບັນດາປະເທດສັງຄົມນິຍົມອ້າຍນ້ອງ ຢ່າງສະໜິດແໜ້ນ. ຍ້ອນ ແນວນັ້ນປະເທດເພື່ອນມິດສະຫາຍ ອ້າຍນ້ອງຈຶ່ງທຸ້ມເທການຊ່ວຍເຫຼືອພາ ຫະນະ, ອາວຸດຍຸດໂທປະກອນ, ອຸປະໂພກບໍລິໂພກຢ່າງຫຼວງຫຼາຍ ອັນໄດ້ ເຮັດໃຫ້ກຳລັງເປັນກາງ ແລະ ກຳລັງແນວລາວຮັກຊາດ ເຕີບໃຫຍ່ເຂັ້ມແຂງ ຂຶ້ນຢ່າງໄວວາຮອບດ້ານ ສິ່ງທັງໝົດທີ່ໄດ້ເລົ່ານີ້ ກໍ່ແມ່ນຜົນງານປະກອບ ສ່ວນສຳຄັນຂອງ ພະນະທ່ານ ກົງໂມ ກັບປັດໃຈອື່ນໆທີ່ເປັນຜົນງານ ແລະ ຕົ້ນຕໍ. ດ້ວຍເຫດນັ້ນພາຍໃນລັດຖະບານປະສົມເວລານັ້ນ ກໍເກີດມີການຜັນ

ແຍກ, ຝ່າຍໜຶ່ງຍອມຈຳນົນ ກັບຂ້ຳຮ່ວມກັບຝ່າຍອຸງຈັນ ຕ້ານແນວລາວ ຮັກຊາດ, ພະນະທ່ານ ກຶນີມ ທີ່ເປັນຜູ້ເດັດດ່ຽວຕາມເປົ້າໝາຍເປັນອັນໜຶ່ງ ອັນດຽວກັບແນວລາວຮັກຊາດອັນໄດ້ເປັນສ້ຽນໜາມຂອງພວກທີ່ຕ່ຳຕ້ານ ແນວທາງດັ່ງກ່າວ, ເຂົາຈຶ່ງໄດ້ ສັ່ງໃຫ້ກຳລັງທະຫານຢູ່ໄຕ້ອຳນາດຂອງເຂົາ ຄາດຕະກຳ ພະນະທ່ານ ເພື່ອບ່ໃຫ້ຝ່າຍກຳລັງເປັນກາງມີບ່ອນອີງ ແລະ ສະຫລາຍໂຕ. ແຕ່ກົງກັນຂ້ຳມ ກຳລັງຄວາມຄຸງດແຄ້ນຂອງ ຝ່າຍກຳລັງທີ່ ຢຶດໝັ້ນອຸດົມການລັດຖະປະຫານ ລຸກຂຶ້ນເປັນໄຟຄຸງບ່າຄຸງໄລ່ກັບກຳລັງ ແນວລາວຮັກຊາດຕ້ານຄືນກັບພວກສັດຕູ, ຈາກນັ້ນກໍໄດ້ເຮັດໃຫ້ກຳລັງເປັນ ກາງຜັນແຍກເປັນສອງຝ່າຍ (ຝ່າຍເປັນກາງຮັກຊາດ ອີງໃສ່ກຳລັງແນວ ລາວຮັກຊາດ, ພວກທໍລະຍົດນຳໂດຍ ຜູ້ນຳ ລັດຖະບານກໍ່ກັບຍອມຈຳນົນ ຕໍ່ຝ່າຍອຸງຈັນ ເປັນສັດຕູກັບຝ່າຍກຳລັງເປັນກາງຮັກຊາດ ແລະ ແນວລາວ ຮັກຊາດ).

ຈາກສະພາບເປັນແນວນັ້ນ ຂ້ຳພະເຈົ້າຜູ້ໜຶ່ງ ຢູ່ໃນເຫດການເມື່ອ ຫວນຄືນ ກໍ່ຍັງຈື່ຈຳໄດ້ຈຶ່ງຂໍຍົກເອົາມາຂຽນໄວ້ເປັນຄວາມຊົງຈຳຂອງຕົນ, ແຕ່ກໍ່ແນ່ນອນ ຍັງມີຫຼາຍສິ່ງທີ່ເປັນຜົນງານ ແລະ ຄຸນງາມ ຄວາມດີຂອງ ພະນະທ່ານ ກຶນີມ ພົນເສນາ ທີ່ຂ້ຳພະເຈົ້າບ່ໄດ້ຂຽນອອກໃນບົດນີ້ໝົດຄົບ ຖ້ວນ ເພາະຈື່ຈຳບ່ໄດ້ໝົດ, ຫາກຈະຖາມໝູ່ຄູ່ມິດສະຫາຍ ທີ່ຢູ່ໃນຄະນະ ລັດຖະປະຫານ ທີ່ສຸດກົກສຸດປາຍນຳກັນກໍ່ຈາກໄປໝົດແລ້ວ

ສັງລວມແລ້ວ, ພາຍຫຼັງພວກລູກແຫ້ງຕົນມືຂອງຈັກກະພັດອາເມລິ ກາໄດ້ຄາດຕະກຳ ພະນະທ່ານກຶນີມ ພົນເສນາ ທີ່ພວກເຂົາຄິດວ່າກຳລັງ ເປັນກາງຈະຕ້ອງໝຸ່ນທະລາຍເພາະບ່ມີບ່ອນອີງ, ແຕ່ກົງກັນຂ້ຳມ ບັນດາ ກຳລັງທີ່ຍັງຢຶດໝັ້ນອຸດົມການ 09/08/1960 ຍິ່ງມີຄວາມຄຸງດແຄ້ນລຸກຂຶ້ນ ເປັນໄຟຕໍ່ພວກເຂົາທີ່ໄດ້ຄາດຕະກຳ ຜູ້ທີ່ເປັນເປົ້າໝາຍບ່ອນເພິ່ງພາອາໃສ ຂອງຕົນ, ຈາກນັ້ນກຳລັງເປັນກາງຮັກຊາດກໍ່ໄດ້ຜັນແຍກອອກເປັນສອງ

ຝ່າຍ, ຝ່າຍທໍລະຍົດ ກໍ່ນໍາຜູ້ນໍາລັດຖະບານປະສົມ ຍອມຈໍານົນມອບຊີວິດຊີ ວາຄືນໃຫ້ ຝ່າຍອຸງຈັນ ກັບມາຕ້ານຝ່າຍຮັກຊາດ ແລະ ປະຕິວັດ, ຝ່າຍທີ່ ຍັງຢຶດໝັ້ນອຸດົມການ 09/08/1960 ກໍ່ຍິ່ງເພີ່ມທະວີຄຸງບ່າຄຸງໄລ່ກັບກໍາ ລັງຝ່າຍແນວລາວຮັກຊາດ ຕ້ານການບຸກລຸກຂອງສັດຕູ ຮັກສາເຂດປົດ ປ່ອຍ ແລະ ຮ່ວມກັນບຸກຕ່າວໂຈມຕີຂັບໄລ່ພວກລູກແຫ້ງຕີນມື ແລະ ພວກ ທໍລະຍົດນັ້ນ ໃຫ້ແຕກສະຫຼາຍຢ່າງເຈັບແສບ, ບັນດາກໍາລັງຮັກຊາດກໍ່ໄດ້ ພ້ອມກັນປົດປ່ອຍທົ່ວປະເທດ ແລະ ໄດ້ສະຖາປະນາ ສ.ປ.ປ.ລາວ ໃນວັນ ທີ 2 ທັນວາ 1975 ພາຍໄຕ້ການນໍາພາ ແລະ ແນວທາງທີ່ໜັກແໜ້ນກ້າວ ຂຶ້ນຂອງ ພັກປະຊາຊົນປະຕິວັດລາວ

ມາຮອດເວລານີ້ ເຖິງແມ່ນວ່າ ພະນະທ່ານ ກິນິມ ພົນເສນາ ຜູ້ທີ່ ໄດ້ເປັນທີ່ເພິ່ງທີ່ອີງ ແລະ ຕິດພັນສະໜິດແໜ້ນກັບລັດຖະປະຫານ 09/08/1960 ແລະ ກໍາລັງເປັນກາງຮັກຊາດ ຢູ່ເຂດທົ່ງໄຫຫີນຊຸງຂວາງ ແລະ ທັງເປັນຜູ້ທີ່ກ້າວເດີນຕາມແນວທາງກໍ່ຄືເປົ້າໝາຍ ຍຸດທະສາດຂອງ ການນໍາ ພັກປະຊາຊົນປະຕິວັດລາວ. ເຖິງແມ່ນວ່າເພິ່ນໄດ້ລ່ວງລັບຈາກພວກ ເຮົາໄປແລ້ວ ແລະ ຍ້ອນຖືກຄາດຕະກໍາ ທີ່ແສນໂຫດຮ້າຍປ່າເຖື່ອນຈາກ ການບົ່ງການຂອງພວກຜູ້ນໍາ ທີ່ເປັນລູກແຫ້ງຕີນມືບອກໄດ້ໃຊ້ຟັງຂອງຈັກ ກະພັດອາເມລິກາເວລານັ້ນ, ມາຮອດປັດຈຸບັນໄດ້ 50 ປີແລ້ວ, ແຕ່ບົດບາດ, ຊື່ສຽງຮຽງນາມ ແລະ ຄຸນງາມຄວາມດີຂອງເພິ່ນ ທີ່ມີຢູ່ໃນເຫດການ 09/08/1960 ແລະ ຕໍ່ເນື່ອງເຖິງວິນາທີທີ່ເພິ່ນໄດ້ຈາກໄປ ອັນໄດ້ເປັນ ການເສຍຫາຍຢ່າງໃຫຍ່ຫຼວງ ຕໍ່ຂະບວນການຮັກຊາດ ຕ້ານຈັກກະພັດອາ ເມລິກາເວລານັ້ນ, ທັງປະເທດຊາດ, ປະຊາຊົນກໍ່ຄືພວກເຮົາທີ່ເປັນຜູ້ໄດ້ຢູ່ ແລະ ຮູ້ເຫັນເປັນຈິງ ໃນເຫດການນັ້ນໆ ຍັງຈື່ຈໍາໄວ້ໃນຈິດວິນຍານຂອງ ພວກເຮົາຕະຫຼອດມາໂດຍບໍ່ມີວັນເວລາຈືດຈາງຫ່າງເຫີນເຖິງເທົ່າປັດຈຸບັນ.

ມາໃນວາລະເຖິງ 50 ປີ ທີ່ເພິ່ນໄດ້ຈາກໄປ, ຂ້າພະເຈົ້າ ທ່ານ ແຈ້ງ

ໄຊຍະວົງ ທີ່ເປັນຜູ້ໜຶ່ງຢູ່ໃນຄະນະລັດຖະປະຫານ 09/08/1960 ທີ່ໄດ້ຮ່ວມຢູ່ໃນເຫດການນັ້ນໆກັບເພິ່ນດັ່ງໄດ້ກ່າວມາ ແຕ່ຕົ້ນຮອດປາຍ ທີ່ຍັງຊົງຈຳໄດ້ຄຸນງາມຄວາມດີຂອງເພິ່ນທີ່ມີໄວ້, ຈຶ່ງຂໍອຸທິດສ່ວນບຸນກຸສົນແຫ່ງຈິດໃຈອັນບໍລິສຸດຂອງຕົນ ແລະ ທັງເປັນການອາໄລອາວອນເຖິງດວງວິນຍານ ແລະ ພົບພູມອັນສູງສົ່ງຂອງເພິ່ນຈາກການໄດ້ຂຽນບົດທີ່ວ່າ: "ບົດບາດຊື່ສຽງຮຽງນາມຂອງ ພະນະທ່ານ ກົງໂມ ພົມເສນາ ກັບເຫດການລັດຖະປະຫານ 09/08/1960" ແດ່ເພິ່ນນອກນັ້ນ ການຂຽນບົດນີ້ ກໍ່ເພື່ອໃຫ້ຜູ້ທີ່ບໍ່ໄດ້ຢູ່ໃນເຫດການນັ້ນໆໃນໄລຍະກ່ອນນີ້ 50 ປີ ຮູ້, ສະເພາະຢ່າງຍິ່ງຜູ້ທີ່ຢູ່ໃນໄວກາງ ແລະ ໄວໜຸ່ມ ທີ່ເປັນຜູ້ສືບທອດ ຕໍ່ອາຊາຄົດຂອງ ຊາດເສີມຂະຫຍາຍມູນເຊື້ອຄຸນງາມຄວາມດີອັນຫຼວງຫຼາຍຂອງເພິ່ນ ພ້ອມກັນກ້າວເດີນຕາມເສັ້ນທາງກ້າວຂຶ້ນທີ່ໜັກແໜ້ນຂອງ ແນວທາງຂອງພັກປະຊາຊົນ ປະຕິວັດລາວ ໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດໃຫ້ ບັນລຸເຖິງເປົ້າໝາຍທີ່ເພິ່ນໄດ້ກຳນົດໄວ້ດ້ວຍຄວາມບໍລິສຸດ, ຂາວສະອາດແຈ່ມໃສ ເພື່ອໃຫ້ປະເທດຊາດຈະເລີນຮຸ່ງເຮືອງສີວິໄລ ແລະ ໃຫ້ປະຊາຊົນບັນດາເຜົ່າລາວເຮົາຫຼຸດພົ້ນອອກຈາກຄວາມທຸກຍາກ ແລະ ກ້າວຂຶ້ນຕໍ່ໆໄປ.

24/VII
ຫ້າມຈຳໜ່າຍ

ວັນທີ 18/03/2013.

“ສະດຸດີ ທ່ານ ກິນິມ ພິນເສນາ
(ຄົບຮອບ 50 ປີ ຂອງວັນມໍລະນະກຳ ຂອງເພິ່ນ)”

ຄຳເຫັນຂອງ ທ່ານ ຫິມມະກອນ ມະໂນທັມ ແລະ ທ່ານ ຈັນເພັງ ບຸນນະຜິນອະດີດ ລັດຖະມົນຕີ ຊ່ວຍວ່າການ ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ແລະ ກະຊວງອຸດສະຫະກຳ ແລະ ການຄ້າ ຕາມລຳດັບ

ວັນທີ 01 ເມສາ 1963 ເປັນວັນທີ່ໂສກເສົ້າເສຍດາຍທີ່ສຸດ ຂອງ ກຳລັງເປັນກາງ ແລະ ຄົນລາວຜູ້ຮັກຫອມສັນຕິພາບ ທີ່ໄດ້ສູນເສຍ ພະນະ ທ່ານ ກິນິມ ພິນເສນາ, ອະດີດ ລັດຖະມົນຕີວ່າການ ກະຊວງການຕ່າງປະ ເທດ ຂອງລັດຖະບານປະສົມແຫ່ງຊາດ, ທັງເປັນຜູ້ນຳກຳລັງເປັນກາງຜູ້ ຫນຶ່ງ ທີ່ຮັກຊາດ ແລະ ກ້າວໜ້າ.

ຄືນວັນທີ 01 ເມສາ 1963 ນັ້ນ, ພາຍຫລັງກັບມາແຕ່ງານລ້ຽງຮັບ ຮອງ, ພະນະທ່ານ ກິນິມ ພິນເສນາ ແລະ ພັນລະຍາ ໄດ້ຖືກໄມ້ມືຂອງພວກ ປະຕິການຂວາຈັດຍິງ ທີ່ບ້ານພັກຂອງເພິ່ນ ໃຈກາງນະຄອນຫລວງວຽງຈັນ ຢ່າງໂຫດຫ້ຽມ. ເພິ່ນເອງ ໃຈຂາດກັບທີ່, ສ່ວນພັນລະຍາຂອງເພິ່ນໄດ້ຖືກ ບາດເຈັບຢ່າງສາຫັດ. ເມື່ອພວກເຮົາທີ່ຢູ່ຄັ້ງໄຂ ແລະ ແຫ່ງອື່ນໆໄດ້ຊາບ ຂ່າວ ທາງວິທະຍຸກະຈາຍສຽງຕອນ 06 ໂມງເຊົ້າຂອງວັນຕໍ່ມາ, ກໍ່ຮູ້ສຶກກະ ທົບກະເທືອນໃຈ ແລະ ຄຽດແຄ້ນຂຶ້ນທັນທີທັນໃດ ຫາອັນປຽບບໍ່ໄດ້ ຈຶ່ງໄດ້ ຈີກປື້ນສັ້ນອອກມາຍິງຂຶ້ນຟ້າ 05 ນັດ ເພື່ອເປັນການປຸກລະດົມຊາວໜຸ່ມ ແລະ ຂ້າລາຊະການຢູ່ຄັ້ງໄຂ ແລະ ຄົນລາວໃນແຫ່ງອື່ນ ໃຫ້ຊາບວ່າ: “ເຂົາໄດ້ຄາດຕະກຳ ພະນະທ່ານ ກິນິມ ພິນເສນາ ແລ້ວ!” ການສັ່ງຫານ ພະນະທ່ານ ກິນິມ ພິນເສນາ ຄັ້ງນີ້ ມັນຕັ້ງແມ່ນນ້ຳມືຂອງພວກທີ່ບໍ່ຫວັງດີ

ຕ່ສັນຕິພາບເປັນກາງ ແລະ ຄວາມຖືກຕ້ອງປອງດອງຊາດ ຢ່າງບ້ງອາດ. ຜູ້ຢູ່ເບື້ອງຫລັງຂອງເຫດການນີ້ ມັນແມ່ນພວກປະຕິການຂາຍຊາດລາວ ໂດຍແມ່ນຈັກກະພັດອາເມລິກາຫນູນຫລັງ ຢ່າງແນ່ນອນ. ເຫດການນີ້ຍິ່ງ ເຮັດໃຫ້ພວກເຮົາເຫັນແຈ້ງຕື່ມ ພຶດຕິກຳອັນຊົ່ວຊ້າປ່າເຖື່ອນ ຂອງພວກທີ່ບ່ ຫວັງດີຕ່ຊາດ, ເຫັນແຈ້ງເລ່ຫລ່ຽມໂຫດຮ້າຍສາມານ, ໃຈດຳອຳມະຫິດຂອງ ພວກຂາຍຊາດ ທີ່ຍອມທຳທຸກສິ່ງທຸກຢ່າງ ເພື່ອເງິນຄຳ.

ພະນະທ່ານ ກິນິມ ພົນເສນາ, ຕາມທີ່ພວກເຮົາເຄີຍຮູ້ແຕ່ປີ 1961 ມາ ທີ່ Geneve, ເພິ່ນເປັນຄົນງ່າຍດາຍ, ບ່ຖືກງດ, ເຂົ້າມານັ່ງກິນເຂົ້າກັບ ພວກເຮົາແບບຄອບຄົວກັນເອງ, ເພິ່ນຖືພວກເຮົາຄືນ້ອງຄົງ, ເພິ່ນເປັນຄົນ ໃຈກວ້າງຂວາງ, ປາກເວົ້າກົງໄປກົງມາ ໂດຍບ່ມີການເຊື່ອງອຳແຕ່ຢ່າງໃດ. ພວກເຮົາໄດ້ສໍ້ຖາມເພິ່ນຫລາຍບັນຫາ, ເພິ່ນກ່ຕອບສະບາຍ ແລະ ຖືກຈຸດທີ່ ພວກເຮົາສົນໃຈໂລດ.

ໃນການພົບປະກັບນັກຂ່າວຕ່າງປະເທດ, ເພິ່ນກ່ເວົ້າກົງໄປກົງມາ ເຮັດໃຫ້ນັກຂ່າວສາກົນມັກເພິ່ນຫລາຍ ເພາະເພິ່ນເວົ້າມີເຫດມີຜົນ. ຖ້າເຂົາ ຫາກເຈາະຈີ້ມເຖິງຄວາມລັບ ຫລື ບັນຫາລະອຽດອ່ອນ ເພິ່ນກ່ຕອບໂລດ ວ່າ: "ຂ້ອຍບ່ບອກພວກເຈົ້າດອກ", ພວກເຂົາກ່ຫົວ.

ໃນສະຫນາມຕ່ສູ້ການເມືອງຕ່າງປະເທດ, ເພິ່ນ ແລະ ທ່ານ ພູມີ ວົງວິຈິດ, ຜູ້ຕາງຫນ້າຝ່າຍແນວລາວຮັກຊາດ, ໄດ້ມີການພົວພັນກັນດີ ເພື່ອ ເຮັດໃຫ້ຄຳເວົ້າ ແລະ ການເຄື່ອນໄຫວເປັນເອກະພາບກັນ ເພື່ອຫັນເປ້າ ໄປທີ່ພວກປະຕິການລາວ ແລະ ຈັກກະພັດຜູ້ຮຸກຮານ. ເພິ່ນໄດ້ເຮັດໃຫ້ຜູ້ ແທນຂອງຫລາຍປະເທດ ທີ່ເຂົ້າຮ່ວມກອງປະຊຸມທີ່ Geneve ເຂົ້າໃຈສະ ພາບຕົວຈິງຂອງລາວໄດ້ດີ. ຜົນສຳເລັດຂອງກອງປະຊຸມສາກົນທີ່ Geneve ໃນ ປີ 1961-1962 ນັ້ນກ່ມີສ່ວນປະກອບອັນສຳຄັນຂອງເພິ່ນ ແລະ ໃນເວ ທີຕ່ສູ້ການເມືອງສາກົນ.

ທັດສະນະຂອງເພິ່ນ ຕໍ່ອ້າຍເອື້ອຍນ້ອງຊາວໜຸ່ມ, ຕໍ່ຂ້າລາຊະການ, ຕໍ່ນາຍ ແລະ ພົນທະຫານຝ່າຍເປັນກາງກໍ່ຈະແຈ້ງ. ເພິ່ນບອກໂດຍກົງໂລດວ່າ ໃຜເປັນມິດ ໃຜເປັນສັດຕູ. ຄວາມສຳພັນຂອງເພິ່ນ ກັບຝ່າຍແນວ ລາວຮັກຊາດ ກໍ່ແໜ້ນແຟ້ນ. ເປັນຄົນເວົ້າແນວໃດ ກໍ່ກະທຳໄປແນວນັ້ນ ເພິ່ນຈຶ່ງໄດ້ຮັບຄວາມເຊື່ອໜັ້ນ ຈາກກຳລັງເປັນກາງທີ່ຮັກຊາດ, ຝ່າຍແນວລາວຮັກຊາດ ແລະ ຜູ້ນຳ ຂອງບັນດາປະເທດສັງຄົມນິຍົມອີກດ້ວຍ.

ການສູນເສຍ ພະນະທ່ານ ກຶນີມ ພົນເສນາ ໄປ ມັນໄດ້ສ້າງຄວາມລະແວງສົງໃສ ແລະ ຄວາມບໍ່ປອດໄພ ໃນນະຄອນຫລວງວຽງຈັນ. ໃນທີ່ສຸດ, ມັນໄດ້ນຳໄປເຖິງ ບ່ອນແຕກຫັກຂອງກຳລັງເປັນກາງ ເປັນ 02 ຝ່າຍ. ຝ່າຍໜຶ່ງ ຖືກຊີ້ຈ້າງຈອບອອຍຈາກອາເມລິກາ ໄປຍອມຈຳນົນເຂົາ ແລະ ອີກຝ່າຍໜຶ່ງ ຢຶດໝັ້ນແນວຄິດຮັກຊາດຄຽດແຄ້ນສັດຕູ ຫັນມາສຳພັນກັບແນວລາວຮັກຊາດສືບຕໍ່ຕໍ່ສູ້ ຈົນເຖິງໄຊຊະນະ.

ຍ້ອນນະຄອນຫລວງບໍ່ປອດໄພ, ລັດຖະບານປະສົມຈຶ່ງຖືກເຂົາໂຄ່ນລົ້ມ ແລ້ວຕ້ອງຫັນມາຕໍ່ສູ້ດ້ວຍກຳລັງອາ ວຸດອີກ ຈົນເຖິງປີ 1975 ຈຶ່ງ ສາມາດຍາດມາໄດ້ສັນຕິພາບ ແລະ ຄວາມຖືກຕ້ອງປອງດອງຊາດ ຢ່າງ ສົມບູນ. ຈາກເວລານັ້ນ ມາເຖິງໄລຍະສຸດທ້າຍ, ຊາດຕ້ອງໄດ້ສູນເສຍຊີ ວິດຂອງຄົນລາວໄປຫລາຍຄົນ, ເສຍຊັບສົມບັດຂອງຊາດ, ບ້ານເມືອງຖືກ ທຳລາຍຍ້ອນລະເບີດ 3 ລ້ານໂຕນ ຂອງຈັກກະພັດອາເມລິກາ. ກວ່າຈະ ຍາດໄດ້ໄຊ ຊະນະຂັ້ນສຸດທ້າຍມາໃຫ້ຊາດ ແລະ ປະຊາຊົນລາວ ນັ້ນຄືການ ລົບລ້າງລະບອບກົດຂີ່ຂູດຮີດ ແລະ ຂຸນເສິກ ມາສ້າງຕັ້ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນໃນວັນທີ 02 ທັນວາ 1975 ຢ່າງສະ ຫງ່າອີງອາດ.

ເຫດການວັນທີ 01 ເມສາ 1963 ນັ້ນ, ຜູ້ຮັກຊາດທີ່ຍັງມີຊີວິດຢູ່ ບໍ່ ເຄີຍໄດ້ຫລົງລືມແຕ່ປະການໃດ. ມັນເປັນສັນຍານໃຫ້ແກ່ຮຸ່ນໃໝ່ ໄດ້ຮັບ

ຊາບໄວ້ວ່າ ໃຜຮັກຊາດແທ້, ໃຜຫລອກລວງ, ໃຜມັກສັນຕິພາບ, ໃຜມັກສົງ
ຄາມ. ພະນະທ່ານ ກິນິມ ພົນເສນາ ເປັນນັກການເມືອງທີ່ດີ ມີຈັນຍາບັນ
ຂອງນັກການເມືອງ ທີ່ແທ້ຈິງ.

“ດ້ວຍຄວາມເຄົາລົບຮັກ ແລະ ຄິດຮອດ ຍາອ້າຍກິນິມ ພົນເສນາ”

ໂດຍທ່ານປ້າພາວະດີ ລາດຊາສົມບັດ, ພັນລະຍາ
ຂອງທ່ານເຫຼື່ອມ ລາດຊະສົມບັດ, ອະດີດຫົວໜ້າ
ຫ້ອງວ່າການກະຊວງການຕ່າງປະເທດ

ຂ້າພະເຈົ້າ ຮູ້ຈັກກັບຍາອ້າຍກິນິມ ແຕ່ຍັງນ້ອຍ, ຍ້ອນວ່າຍາພໍ່ຂອງເພິ່ນ ເຕ່ງມາ ຮັກແພງກັນກັບເຈົ້າພໍ່ຂອງຂ້າພະເຈົ້າ ຄືເຈົ້າສັກປະເສີດ ນະຈຳປາສັກ ຊຶ່ງເປັນຊື່ທີ່ເຈົ້າຊີວິດໄທພະລາດຊະທານໃຫ້ເວລາດິນແດນ ສ່ວນໜຶ່ງຂອງເມືອງຈຳປາສັກຕົກເປັນຂອງປະເທດໄທ. ເວລາເຕ່ງມາ ມາ ຄ້າຂາຍທີ່ກຸງເທບກໍຈະມາຢາມ ແລະ ພັກເຊົາທີ່ເຮືອນຂອງພວກຂ້າພະເຈົ້າ ທີ່ບ້ານໄຊໂຍນະຄອນກຸງເທບ.

ຄັນເວົ້າແທ້ ຍັງແມ່ນ ເຕ່ງມາ ແລະ ຍາອ້າຍ ກິນິມ ເປັນຜູ້ຊຸກຍູ້ ແລະ ສົ່ງເສີມໃຫ້ຂ້າພະເຈົ້າ ແຕ່ງງານກັບຍາອ້າຍເຫຼື່ອມ ເພາະຍາອ້າຍກິ ນິມ ເປັນເພື່ອນສະໜິດຂອງຍາອ້າຍເຫຼື່ອມ ແລະ ເຄີຍເຊີນຍາອ້າຍເຫຼື່ອມ ມາຢາມເພິ່ນທີ່ບ້ານພໍ່ເຖົ້າແດງພັນ (ຍາພໍ່ຂອງຍາເອື້ອຍໄພບູນ ພົນເສນາ). ເວລານັ້ນ ຖືກຍາມບຸນຊ່ວງເຮືອ ຢູ່ຈຳປາສັກ, ຄົນມາເບິ່ງເປັນແຖວ. ຂ້າພະ ເຈົ້າ ຕັດຜົມມ້າມາແຕ່ເມືອງໄທ ເພື່ອເບິ່ງການເຕັ້ນເຊ ບຸນຊ່ວງເຮືອ ແລະ ໄດ້ພົບຍາອ້າຍເຫຼື່ອມຢູ່ໃນບຸນຊ່ວງເຮືອ. ພໍດີຍາອ້າຍເຫຼື່ອມຈະຖືກທາງ ການສົ່ງໄປເປັນທູດຢູ່ໄຊ່ງ່ອນ, ທາງເຕ່ງມາ ແລະ ຍາອ້າຍກິນິມ ຈຶ່ງເປັນຜູ້ ຕາງໜ້າຂອງຍາດຝ່າຍຊາຍມາສູ່ຂໍຂ້າພະເຈົ້ານຳເຈົ້າພໍ່ ແລະ ເຈົ້າແມ່. ເບື້ອງຕົ້ນ ເຈົ້າແມ່ບໍ່ຢາກເຫັນດີນຳ, ເພາະຂ້າພະ ເຈົ້າຫາກໍອອກໂຮງຮຽນ ໃໝ່, ເຮັດຫຍັງກໍບໍ່ທັນເປັນ. ແຕ່ເຈົ້າພໍ່ ພ້ອມກັບເຕ່ງມາກໍບອກວ່າບໍ່ເປັນ

ຫຍັງດອກ, ຢູ່ໄຊ່ງ່ອນກໍມີຄົນຮັບໃຊ້ຢູ່. ສຸດທ້າຍເຈົ້າແມ່ກໍຕົກລົງ. ຍາອ້າຍ ກີນີມ ແລະ ຍາເອື້ອຍໄພບູນ ເປັນເຈົ້າ ພາບຈັດງານດອງຂອງພວກຂ້າພະ ເຈົ້າທີ່ຈຳປາສັກ. ຍາເອື້ອຍໄພບູນ ຍັງເອົາຄຳໜຶ່ງບາດມອບໃຫ້ຂ້າພະ ເຈົ້າເປັນຂອງຂວັນ.

ໃນໄລຍະຕໍ່ມາ, ຍາອ້າຍກີນີມ ແລະ ສາມີຂອງຂ້າພະເຈົ້າ ກໍສືບຕໍ່ ຮັກສາການໄປມາຫາສູ່ກັນ, ເຖິງແມ່ນວ່າແຕ່ລະຄົນກໍເຮັດວຽກງານທີ່ແຕກ ຕ່າງກັນກໍຕາມ. ເຊັ່ນ ຍາອ້າຍກີນີມ ເປັນຮອງເຈົ້າແຂວງຈຳປາສັກ, ເຈົ້າ ແຂວງຫົວພັນ ແລະ ລັດຖະມົນຕີກະຊວງການຕ່າງປະເທດ. ສ່ວນຍາອ້າຍ ເຫຼື່ອມ ກໍເປັນເຈົ້າ ແຂວງ ແຂວງຈຳປາສັກ, ລັດຖະມົນຕີ ກະຊວງການຄັງ, ເປັນທູດຢູ່ປະເທດຝະລັ່ງ, ພະມ້າ, ກຳພູຊາ, ໄທ...

ເວລາຍາອ້າຍ ແລະ ຄອບຄົວຍ້າຍມາແຕ່ແຂວງຫົວພັນໃໝ່ໆ, ບໍ່ທັນມີເຮືອນຢູ່ ກໍມາພັກເຊົ່ານຳເຮືອນຂອງພວກຂ້າພະເຈົ້າ ທີ່ຢູ່ຫຼັງຫ້ອງ ການຂອງລັດຖະບານ (ຊຶ່ງເປັນກະຊວງວັດທະນະທຳໃນປັດຈຸບັນ). ເວລາ ນັ້ນ, ຂ້າພະເຈົ້າ ກໍຖືພາລູກສາວຜູ້ທີສອງຊື່ອາລູນີ ທີ່ຄອງຈະຄອດອອກມາ. ສ່ວນຍາເອື້ອຍໄພບູນ ກໍຖືພາຜູ້ທີ່ຫ້າ ຊື່ນາງເຂັມວຽງ ແລະ ຄອງຈະຄອດ ອອກເຊັ່ນດຽວກັນ. ລູກສາວສອງຄົນ ກໍກຳເນີດອອກ ໃນເວລາທີ່ບໍ່ຫ່າງກັນ ປານໃດ, ດັ່ງນັ້ນ ທັງສອງຄອບຄົວ ກໍງັນກຳພ້ອມໆກັນເລີຍ. ຕໍ່ມາ, ຄອບ ຄົວຂອງຍາອ້າຍກີນີມ ຈຶ່ງຍ້າຍໄປຢູ່ບ່ອນໃໝ່, ແຕ່ເຖິງຈະບໍ່ຢູ່ໃນຫຼັງຄາ ເຮືອນອັນດຽວນຳກັນກໍຕາມ, ແຕ່ຄວາມຮັກແພງ, ສະໜິດສະໜົມ ລະ ຫ່ວາງ ສອງຄອບຄົວກໍບໍ່ໄດ້ຈາງຫາຍໄປ. ລູກເຕົ້າຂອງທັງສອງຄອບຄົວກໍ ຮຽນໜັງສື ແລະ ຫຼີ້ນນຳກັນ. ຍາມສິ້ງທ້າຍປີເກົ່າ (ບຸນໂນແອນ) ຂອງທຸກປີ ພວກລູກຂອງຍາອ້າຍກີນີມ ກໍມັກມາສະຫຼອງຢູ່ນຳຄອບຄົວຂອງພວກຂ້າ ພະເຈົ້າ. ຄຶດມາຄືນກໍຍັງຮູ້ສຶກມີຄວາມອົບອຸ່ນ ມ່ວນຊື່ນເບີກບານ...

ຍາອ້າຍກີນີມ ເພິ່ນຮັກຍາອ້າຍເຫຼື່ອມ ແລະ ຂ້າພະເຈົ້າອີ່ຫຼີ. ຂ້າພະ

ເຈ້າຈື່ວ່າ ມີຄັ້ງໜຶ່ງ ເພິ່ນກັບຈາກໄປເຮັດວຽກຢູ່ສະຫະລັດອາເມລິກາ ຍັງ ເອົາໝູນຄຳ 1 ໂດລາ ມາຕ້ອນຂ້າພະເຈົ້າອີກ. ຜົວເມຽພວກຂ້າພະເຈົ້າກໍ ນັບຖື ແລະ ຮັກແພງຍາອ້າຍ ແລະ ຍາເອື້ອຍເຊັ່ນດຽວກັນ. ເວລາຍາອ້າຍ ກິນິມໄປເຮັດວຽກຢູ່ໄທ, ຍາອ້າຍເຫຼື້ອມເປັນທູດຢູ່ນັ້ນ, ຂ້າພະເຈົ້າຍັງລືດ ເຄື່ອງໃຫ້ຍາອ້າຍຄືດັ່ງເຮັດນຳອ້າຍຄົ້ງໆຂອງຕົນ..

ຍາອ້າຍກິນິມ ໄດ້ຈາກໂລກນີ້ໄປໄດ້ 50 ປີແລ້ວ, ຍາເອື້ອຍໄພບູນ ກໍໄດ້ ຈາກໄປ ໄດ້ 2 ປີແລ້ວ, ຂ້າພະເຈົ້າ ຄຶດຮອດຫາພວກເພິ່ນຫຼາຍໆ, ດົນໆຍັງ ຝັນເຫັນພວກເພິ່ນເລື້ອຍໆ. ຂ້າພະເຈົ້າຍັງຄິດເສຍໃຈຢູ່ ຖ້າເວລາທີ່ຍາອ້າຍ ກິນິມ ຕິດຕາມເຈົ້າຊີວິດໄປຢ້ຽມຢາມພະມ້າ ຫາກຟັງຄວາມຍາອ້າຍເຫຼື້ອມ ທີ່ເປັນທູດຢູ່ພະມ້າໃນເວລານັ້ນ, ເພິ່ນກໍອາດຈະບໍ່ຖືກຄາດຕະກຳ. ເພາະຍາ ອ້າຍເຫຼື້ອມໄດ້ເວົ້ານຳເພິ່ນວ່າ: ກິນິມ, ຢ່າຟ້າວເມືອ. ເຮົາໄດ້ຍິນຂ່າວບໍ່ດີ, ຢູ່ນຳເຮົາໄລຍະໜຶ່ງຈຶ່ງເມືອກໍໄດ້. ແຕ່ຍາອ້າຍກິນິມ ກໍບໍ່ຍອມຟັງ, ມີແຕ່ວ່າ ເພິ່ນຕ້ອງປະຕິບັດໜ້າທີ່ຂອງເພິ່ນໃນການຕິດຕາມເຈົ້າຊີວິດໄປຢ້ຽມຢາມ ແລະ ຂອບໃຈທຸກໆປະເທດພາຄີ ທີ່ໄດ້ເຊັນສັນຍາຢູ່ເຊີແນວ ກ່ຽວກັບ ລາວ ໃນຖານະເປັນຫົວໜ້າຄະນະຜູ້ແທນຂອງລັດຖະບານລາວໄປຮ່ວມ ແລະ ເຊັນສັນຍາເຊີແນວ... ພາຍຫຼັງຍາອ້າຍຖືກຄາດຕະກຳຢ່າງໂຫດຫ້ຽມ, ຜົວ ເມຍພວກຂ້າພະເຈົ້າ ພ້ອມກັບທຸກເອກຄະລັດຖະທູດລາວປະຈຳຢູ່ຕ່າງປະ ເທດໄດ້ກັບມາສົ່ງສະການເພິ່ນ. ຍາອ້າຍເຫຼື້ອມຍັງຈົ່ມ ແລະ ຫວນຄືນພາບ ສຸດ ທ້າຍແຫ່ງການພົບກັບຍາອ້າຍກິນິມຢູ່ພະມ້າ. ເພາະຍາອ້າຍຈັບມືລາ ໝູ່ເພື່ອນຮຽບຮ້ອຍ ແລ້ວ ພັດກັບຄືນມາສັ່ງລາ ເພິ່ນອີກສອງສາມເທື່ອ, ເບິ່ງຄືໃຫ້ລາໆເປັນການສັ່ງລາຈາກ ກັນຊົ່ວນິລັນດອນ.

ເຖິງວ່າຍາອ້າຍກິນິມ ແລະ ຍາເອື້ອຍໄພບູນ ໄດ້ລ່ວງລັບໄປແລ້ວ ກໍຕາມ, ແຕ່ລູກເຕົ້າຂອງເພິ່ນຍັງຄົງໃຫ້ຄວາມເຄົາລົບ, ນັບຖືຂ້າພະເຈົ້າ, ໂດຍຖືຂ້າພະເຈົ້າດັ່ງນ້າສາວຄົ້ງຂອງພວກເຂົາເຈົ້າ. ເວລາຍາອ້າຍເຫຼື້ອມ

ຍັງມີຊີວິດ ແລະ ເຈັບປ່ວຍໜັກ ຫຼື ກໍລະນີຂ້າພະເຈົ້າເຈັບປ່ວຍ ພວກຫຼານກໍ ໝັ່ນມາຢາມ ແລະ ຖາມຂ່າວຄາວ. ທຸກປີເມື່ອເຖິງປີໃໝ່ສາກົນ ແລະ ປີໃໝ່ ລາວ, ພວກຫຼານ ກໍບໍ່ລືມມາອວຍພອນນ້າສາວຂອງເຂົາເຈົ້າຈັກເທື່ອ. ເຂົາ ເຈົ້າສົມແລ້ວ ທີ່ເປັນລູກຜູ້ດີຂອງຍາອ້າຍກິນິມ ແລະ ຍາເອື້ອຍໄພບູນພິນ ເສນາ.

“ວິລະກຳປະຕິວັດ ຂອງ ທ່ານ ກຶນີມ ພົນເສນາ ຍັງຄົງຢູ່ໃນ ຄວາມຊົງຈຳຂອງຂ້າພະເຈົ້າຕະຫລອດກາລະນານ”

ໂດຍ: ທ່ານ ບົວສີ ຈະເລີນສຸກ
ອະດີດ ຫົວໜ້າ ອະນຸສອນສະຖານ ໄກສອນ ພົມວິຫານ

ເນື່ອງໃນໂອກາດລະນຶກ ວັນທີ 01 ເມສາ 1963

ເນື່ອງໃນໂອກາດລະນຶກ ວັນຄົບຮອບ 50 ປີ ທີ່ ທ່ານ ກຶນີມ ພົນເສນາ ຖືກສັດຕູລອບຄາດຕະກຳ (ວັນທີ 01 ເມສາ 1963 01 ເມສາ 2013), ຂ້າ ພະເຈົ້າ ທ່ານ ບົວສີ ຈະເລີນສຸກ ພະນັກງານຊ່ວຍວຽກ ຄະນະຊີ້ ນຳສູນກາງ ພັກ-ສູນກາງແນວລາວຮັກຊາດ ກ່ຶຄືແນວລາວສ້າງຊາດ ໃນປະຈຸບັນ ໄດ້ ຫວນຄືນຄວາມຊົງຈຳຂອງຕົນ ຕໍ່ວິລະກຳຂອງ ທ່ານ ກຶນີມ ພົນເສນາ ໂດຍ ສັງເຂບ ເພື່ອລະນຶກວັນສຳຄັນປະຫວັດສາດດັ່ງກ່າວ ໃຫ້ມີ ເນື້ອໃນເລິກເຊິ່ງ ແລະ ສົມກຽດ.

ຂ້າພະເຈົ້າ ຍັງຈົດຈຳໄດ້ວັນເວລາ ທີ່ມີໂອກາດພົບປະໂອ້ລົມກັບ ທ່ານ ກຶນີມ ພົນເສນາ ຢ່າງເປັນກັນເອງນັ້ນແມ່ນວັນທີ 15/05/1959 ເຊິ່ງເປັນ ເວລາທີ່ການຕໍ່ສູ້ ລະຫວ່າງກຳລັງປະຕິວັດກັບກຳລັງປະຕິການດຳເນີນ ໄປ ຢ່າງດຸເດືອດຂັ້ງຂວາດທີ່ສຸດ. ໃນການພົບປະຄັ້ງປະຫວັດສາດນີ້ ຂ້າພະເຈົ້າ ໄດ້ປິດລັບລອດສາຍຕາ ຂອງພວກລາຊະການລັບຝ່າຍວຽງຈັນ ເຂົ້າພົບ ທ່ານ ກຶນີມ ພົນເສນາ ຢູ່ເຮືອນຂອງທ່ານເອງ. ດ້ວຍຈຸດປະສົງແມ່ນ ນຳສົ່ງ ເອກະສານລັບ ພ້ອມທັງສົ່ງຄວາມຢ້ຽມຢາມຖາມຂ່າວ ຂອງທ່ານ ຫນູຮັກ ພູມສະຫວັນ ເຖິງ ທ່ານ ກຶນີມ ພົນເສນາ ແລະ ຄອບຄົວ. ທ່ານ ຫນູຮັກ

ພູມສະຫວັນ ໄດ້ແນະນຳວ່າ: “ພາຍຫລັງລັດຖະບານ ຜຸຍ ຊະນະນິກອນ ຂໍສິດພິເສດຈາກສະພາແລ້ວ, ລັດຖະບານ ຜຸຍ ຊະນະນິກອນ ໄດ້ປະກາດ ນະໂຍບາຍ ຕ້ານຄອມມູນິດ ມ້າງເພທຳລາຍສັນຍາເຊີແນວ, ສັນຍາວຽງຈັນ ແລະ ຄວາມຖືກຕ້ອງປອງດອງຊາດ, ໃຊ້ກຳລັງທະຫານ, ຕຳຫລວດ ດຳເນີນ ການປາບປາມກຳລັງແນວລາວຮັກຊາດ ແລະ ກຳລັງເປັນກາງຮັກຊາດ:

ໃນວັນທີ 11/05/1959 ພວກເຂົາໄດ້ບັງອາດອອກຄຳສັ່ງ ໃຫ້ກຳລັງ ທະຫານປົດລ້ອມກອງພັນທີ 1-2 ຂອງ ຝ່າຍປະເທດລາວ. ກາງຄືນ ຂອງ ວັນທີ 12/05/1959 ພວກເຂົາໃຊ້ກຳລັງຕຳຫລວດ ກັກບໍລິເວນເຮືອນ ສະເດັດເຈົ້າສຸພານຸວົງ, ເຮືອນຜູ້ນຳແນວລາວຮັກຊາດ ແລະ ກຳລັງເປັນກາງ ຮັກຊາດ ອັນໄດ້ເຮັດໃຫ້ສະພາບການ ບ້ານເມືອງເຄັ່ງຕຶງຂຶ້ນກວ່າເວລາ ໃດຫມົດ. ດັ່ງນັ້ນ, ພວກເຮົາຈະຕ້ອງເພີ່ມທະວີ ຄວາມມີສະຕິລະວັງຕົວ. ເຖິງວ່າ ສະພາບການຈະຜັນປ່ຽນໄປໃນກໍລະນີໃດກໍ່ຕາມ, ພວກເຮົາຕ້ອງ ເດັດດ່ຽວຕໍ່ສູ້ຈົນເຖິງທີ່ສຸດ.” ເມື່ອຂ້າພະເຈົ້າເວົ້າສຸດຄວາມແລ້ວ, ທ່ານ ກີນິມ ພົນເສນາ ໄດ້ທຸ່ນທ່ຽງເວົ້ານຳຂ້າພະເຈົ້າວ່າ: “ຂ້າພະເຈົ້າ ຂໍຝາກຄວາມຂອບ ອົກຂອບໃຈຢ່າງຈິງໃຈໄປຍັງທ່ານ ຫນູຮັກ ພູມສະຫວັນ ແດ່ເນີ. ຂ້າພະເຈົ້າ ພ້ອມດ້ວຍຄະນະນຳ ແລະ ກຳລັງສັນຕິ ພາບເປັນກາງທັງຫມົດ ມີຄວາມ ເປັນເອກະພາບກັນ ກັບຄວາມເຫັນຂອງທ່ານ ຫນູຮັກ ພູມສະຫວັນ ແລະ ຂໍໃຫ້ ຄຳຫມັ້ນສັນຍາຕໍ່ເພິ່ນວ່າ: ພວກເຮົາຢຶດຫມັ້ນເສັ້ນທາງສັນຕິພາບ ເປັນກາງ, ເຊື່ອຫມັ້ນໃນແນວທາງ ແລະ ການນຳອັນສະຫລາດສ່ອງໃສ ຂອງສູນກາງແນວລາວຮັກຊາດ. ຂ້າພະເຈົ້າ ພ້ອມກັບກຳລັງເປັນກາງທັງ ຫມົດ ຈະຢືນຢູ່ຄຽງບ່າຄຽງໄຫລ່ກັບຜູ້ນຳ ແລະ ກຳລັງແນວລາວຮັກຊາດ ຕໍ່ສູ້ຕໍ່ໄປຢ່າງເດັດດ່ຽວຫມຽວແຫ້ນຈົນເຖິງທີ່ສຸດ.”

ເມື່ອເພິ່ນສັງເກດເຫັນວ່າ ຂ້າພະເຈົ້າຕັ້ງໃຈຟັງເພິ່ນໂອ້ລົມ ທ່ານ ກີນິມ ພົນເສນາ ກໍ່ສືບຕໍ່ເວົ້າເຖິງຄວາມຮູ້ສຶກ ຂອງເພິ່ນຕໍ່ກັບສະພາບການທີ່ເກີດ

ຂຶ້ນ ແລະ ມີຄວາມເຄັ່ງຕຶງຢູ່ໃນເວລານັ້ນວ່າ: ແມ່ນຝ່າຍວຽງຈັນ ພູມີ ຫນໍ່ສະ ຫວັນ, ຜຸຍ ຊະນະນິກອນ, ບຸນອູ້ມ, ແລະ ລູກມືຈັກກະພັດອາເມລິກາ ຫວັ່ງ ມ້າງເພທຳລາຍສັນຍາເຊັ້ແນວ, ສັນຍາວຽງຈັນ, ຕ້ານຄອມມູນິດ, ທຳລາຍ ແນວຮ່ວມສຳພັນ ລະຫວ່າງກຳລັງເປັນກາງ ກັບກຳລັງແນວລາວຮັກຊາດ, ແກ່ດຶງເອົາປະເທດລາວເຮົາ ໄປຂຶ້ນກັບລັດທິລ່າເມືອງຂຶ້ນແບບໃຫມ່ ຂອງ ຈັກກະພັດອາເມລິກາ. ແຕ່ຄວາມຈິງແລ້ວ ເສັ້ນທາງສັນຕິພາບເປັນກາງ, ແນວທາງ ແລະ ການນຳຂອງແນວລາວຮັກຊາດ ຫວັ່ງຈະສ້າງຄວາມຖືກ ຕ້ອງປອງດອງຊາດ, ເຮັດໃຫ້ປະເທດລາວ ເປັນປະເທດສັນຕິພາບເປັນກາງ, ເອກະລາດ ປະຊາທິປະໄຕ ເອກະພາບ ແລະ ວັດທະນະຖາວອນ ກ້າວຂຶ້ນ ຕາມທິດສັງຄົມນິຍົມ ນັ້ນແມ່ນຖືກຕ້ອງ ແລະ ສອດຄ່ອງກັບຄວາມມຸ່ງມາດ ປາດຖະຫນາຂອງປະຊາຊົນລາວບັນດາເຜົ່າ ແລະ ສອດຄ່ອງກັບທ່າອ່ຽງ ລວມຂອງຍຸກສະໄຫມ, ເພາະພາຍຫລັງໄຊ ຊະນະ ຂອງສາມປະເທດໃນອິນ ດູຈີນ ໃນປີ 1954, ພວກລັດທິລ່າເມືອງຂຶ້ນຝຣັ່ງ ຍອມຖອນກຳລັງກັບຄືນ ປະເທດແລ້ວ, ບັນດາປະເທດກຳລັງຕໍ່ສູ້ເພື່ອເອກະລາດ ຢູ່ທະວີບອາຊີ, ອາຟຣິກາ ໄດ້ເກີດມີທ່າອ່ຽງສັນຕິພາບ ເປັນກາງຂຶ້ນ ແລະ ຂະຫຍາຍຕົວຢູ່ ໃນຂອບເຂດໂລກຄວາມຈິງ ແລ້ວທ່າອ່ຽງສັນຕິພາບເປັນກາງໃນໄລຍະນີ້ ແມ່ນມີຄວາມຈຳເປັນພາວະວິໄສ. ທ່າອ່ຽງສັນຕິພາບເປັນກາງ ໄດ້ກາຍເປັນ ກຳລັງແຮງສັງລວມອັນມະຫາສານ, ປະກອບສ່ວນອັນສຳຄັນເຂົ້າໃນການ ຕໍ່ສູ້ ເພື່ອເຮັດໃຫ້ປະເທດຕົນ ເປັນປະເທດສັນ ຕິພາບເປັນກາງ ເອກະລາດ ແທ້ໆຊາດ, ປະຊາທິປະໄຕ ແລະ ວັດທະນາຖາວອນ ກ້າວຂຶ້ນຕາມທິດສັງຄົມ ນິຍົມ ແລະ ຄວາມກ້າວໜ້າທາງສັງຄົມ ຕໍ່ໄປ.

ໃນປີ 1957 ທ່ານ ກີນີມ ພົນເສນາ ໄດ້ມີໂອກາດພົບປະກັບ ທ່ານ ຫມູຮັກ ພູມສະຫວັນ. ເພິ່ນໄດ້ຢືນຢັນ ຕໍ່ທ່ານ ໝູຮັກ ພູມສະຫວັນ ວ່າ: "ຂ້າພະເຈົ້າເອງ ແລະ ຫມູ່ຄະນະໄດ້ສະໜັບສະໜູນຢ່າງເຕັມປ່ຽມ

ຕໍ່ແນວທາງສັນຕິພາບເປັນກາງ ທີ່ແນວລາວຮັກຊາດໄດ້ປະກາດອອກ ແລະ ພວກຂ້າພະເຈົ້າ ຈະຮ່ວມສຳພັນກັບແນວລາວຮັກຊາດ ຕໍ່ສູ້ເພື່ອສັນຕິພາບ ເປັນກາງ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາ ວອນ. ໃນສະເພາະໜ້ານີ້ ແມ່ນຕໍ່ສູ້ເລັ່ງຫວ່ງໃຫ້ຝ່າຍວ່ງຈັນ ຕ້ອງ ຈິງໃຈເຈ ລະຈາກັບຝ່າຍປະເທດລາວ, ປະຕິບັດຄວາມຖືກຕ້ອງປອງດອງຊາດ, ດຳ ເນີນການເລືອກຕັ້ງຜູ້ແທນທົ່ວປະເທດ ແລະ ສ້າງຕັ້ງລັດຖະບານປະສົມຊົ່ວ ຄາວແຫ່ງຊາດຂຶ້ນ ໂດຍໄວ". ມາຮອດເດືອນ 10/1957 ຝ່າຍວ່ງຈັນ ໄດ້ ຍອມເຊັນສັນຍາວ່ງຈັນ, ການເຂົ້າລວມລາວຄັ້ງທີໜຶ່ງ ໄດ້ປະກົດຜົນເປັນ ຈິງ ແລະ ລັດຖະບານປະ ສົມຊົ່ວຄາວແຫ່ງຊາດ ໂດຍແມ່ນ ສະເດັດເຈົ້າສຸວັນ ນະພູມມາ ເປັນນາຍົກ ໄດ້ຮັບການສ້າງຕັ້ງຂຶ້ນ. ມາຮອດວັນ ທີ 04 ພຶດສະພາ 1958 ກໍ່ໄດ້ດຳເນີນການເລືອກຕັ້ງເພີ່ມເຕີມທົ່ວປະເທດ. ພັກສັນຕິພາບເປັນ ກາງຂອງ ທ່ານ ກຶນີມ ພົນເສນາ ໄດ້ຮ່ວມສຳພັນກັບແນວລາວຮັກຊາດ ສົ່ງຜູ້ ແທນເຂົ້າສະໜັກຮັບເລືອກຕັ້ງ 04 ທ່ານ, ກໍ່ໄດ້ຮັບເລືອກຕັ້ງທັງ 04 ທ່ານ. ໃນນັ້ນ, ທ່ານ ກຶນີມ ພົນເສນາເອງ ໄດ້ຮັບການເລືອກຕັ້ງ ດ້ວຍຄະແນນສຽງ ຢ່າງຫລວງຫລາຍ. ພັກແນວລາວຮັກຊາດທີ່ໄດ້ຮັບການເລືອກຕັ້ງມີ 09 ທ່ານ, ໃນນັ້ນມີ ສະເດັດເຈົ້າສຸພານຸວົງ ໄດ້ຮັບການເລືອກຕັ້ງດ້ວຍຄະແນນ ສຽງຢ່າງຖ້ວມລົ້ນ. ອັນນັ້ນໝາຍຄວາມວ່າ ກຳລັງສັນຕິພາບເປັນກາງ ແລະ ແນວລາວຮັກຊາດ ໄດ້ຊະນະການເລືອກຕັ້ງ ຢ່າງສົມກຽດ.

ໃນເມື່ອສ້າງຕັ້ງສະພາແຫ່ງຊາດສຳເລັດແລ້ວ, ຢູ່ໃນກອງປະຊຸມສະ ພາ ຄັ້ງປະຖົມມະເລີກ ແລະ ຄັ້ງອື່ນໆ ທ່ານ ກຶນີມ ພົນເສນາ ກໍ່ໄດ້ຮ່ວມ ສຳພັນກັບແນວລາວຮັກຊາດ ສືບຕໍ່ການຕໍ່ສູ້ຢູ່ໃນສະພາຢ່າງແຮງກ້າ ແລະ ສົມເຫດສົມຜົນ ເພື່ອຫວັງເຮັດໃຫ້ປະເທດຊາດລາວ ເດີນຕາມເສັ້ນທາງ ສັນຕິພາບເປັນກາງ ເອກະລາດ ປະຊາທິປະໄຕ ເອກະພາບ ແລະ ວັດທະນາ ຖາວອນ ຢ່າງແທ້ຈິງ.

ແຕ່ໃນເວລານັ້ນເອງ, ຜູຍ ຊະນະນິກອນ ພ້ອມພັກພວກທີ່ເປັນລູກມືອາເມລິກາ ໄດ້ໂຄ່ນລົ້ມລັດຖະບານປະສົມຊົ່ວຄາວແຫ່ງຊາດ ແລະ ປະກອບລັດຖະບານຊຸດໃຫມ່ ໂດຍບໍ່ມີຄົນຂອງແນວລາວຮັກຊາດ ແລະ ກຳລັງເປັນກາງຮັກຊາດເຂົ້າຮ່ວມ. ພວກເຂົາຂໍສິດພິເສດຈາກສະພາ ປະກາດຕ້ານຄອມມູນິດ, ທຳລາຍສັນຍາເຊີແມວ-ສັນຍາວຽງຈັນ ແລະ ສັນຍາອື່ນໆ ທີ່ໄດ້ເຊັນກັນ, ໃຊ້ກຳລັງທະຫານ, ຕຳຫລວດ ປາບປາມຈັບກຸມຄຸມຂັງຄົນຂອງແນວລາວຮັກຊາດ ແລະ ກຳລັງເປັນກາງຮັກຊາດ ຢ່າງປ່ວງບ້າ.

ຕໍ່ສະພາບການດັ່ງກ່າວ, ທ່ານ ກິນິມ ພົນເສນາ ແລະ ກຳລັງເປັນກາງຮັກຊາດທັງຫມົດໄດ້ ຢຶດຫມັ້ນໃນເສັ້ນທາງ ສັນຕິພາບເປັນກາງ ໄດ້ຮັດແຫນ້ນສາຍສຳພັນກັບ ແນວລາວຮັກຊາດ ດຳເນີນການຕໍ່ສູ້ຕໍ່ໄປຢ່າງເດັດດ່ຽວຫນຽວແຫນ້ນເດັດຂາດ ບໍ່ຍອມຈຳນົນ.

ຜ່ານການເຄື່ອນໄຫວດັ່ງກ່າວນັ້ນຂອງທ່ານ ກິນິມ ພົນເສນາ ຂ້າພະເຈົ້າ ຈຶ່ງສັງລວມໄດ້ວ່າ:

ທ່ານ ກິນິມ ພົນເສນາ ແມ່ນນັກຮັກຊາດຜູ້ຫນຶ່ງ ທີ່ດີເດັ່ນຢຶດຫມັ້ນໃນແນວທາງສັນຕິພາບເປັນກາງຢ່າງຫນັກແຫນ້ນ, ຍາມໃດກໍ່ຢູ່ຄຽງບ່າຄຽງໄຫລ່ ກັບແນວລາວຮັກຊາດ ດຳເນີນການຕໍ່ສູ້ຢ່າງຕໍ່ເນື່ອງ ບໍ່ວ່າຢູ່ໃນລັດຖະບານ, ຢູ່ໃນສະພາ ແລະ ນອກສະພາ, ເຊິ່ງສະແດງໃຫ້ເຫັນແຈ້ງ ໃນເວລາລັດຖະບານ ຜູຍ ຊະນະນິກອນ ຈັບບັນດາຜູ້ນຳຂອງພັກ, ຂອງແນວລາວຮັກຊາດ ຂັງຄຸກໂພນເຄັງ, ທ່ານ ກິນິມ ພົນເສນາ ກໍ່ເປັນທະນາຍ ຄວາມຜູ້ຫນຶ່ງ ຕໍ່ສູ້ທວງໃຫ້ລັດຖະບານ ຜູຍ ຊະນະນິກອນ ຕ້ອງປ່ອຍຕົວ ສະເດັດເຈົ້າສຸພານຸວົງ ແລະ ຜູ້ນຳຄົນອື່ນໆ ຂອງແນວລາວຮັກຊາດ. ພ້ອມກັນນັ້ນ ກໍ່ດຳເນີນການຂົນຂວາຍປຸກລະດົມ ປະຊາຊົນທຸກຊັ້ນຄົນຢູ່ໃນ ນະຄອນຫລວງວຽງຈັນ, ພາຍໃນປະເທດ ແລະ ປະຊາຊົນຜູ້ຮັກຫອມສັນຕິພາບ ພ້ອມກັບນັກກົດຫມາຍອື່ນໆ, ພະສົງສຳມະເນນ, ບັນດາປະເທດຄູ່ສັນຍາ

ເຊີແນວ ກ່າວປະນາມການກະທຳທີ່ຜິດກົດຫມາຍ ຂອງລັດຖະບານ ຜູຍ ຊະນະນິກອນ ແລະ ພັກພວກ ທວງໃຫ້ພວກເຂົາຕ້ອງປ່ອຍສະເດັດເຈົ້າ ສຸພານຸວົງ ແລະ ຜູ້ນຳອື່ນໆໂດຍ ໄວ. ເຮັດໃຫ້ ຜູຍ ຊະນະນິກອນ ຕ້ອງຢຸດຕິ ຫລື ເລື່ອນການຕັດສິນລົງໂທດ ສະເດັດເຈົ້າສຸພານຸວົງ ແລະ ຜູ້ນຳ ອື່ນໆ ຂອງແນວລາວຮັກຊາດ, ອັນເປັນການປະກອບສ່ວນສ້າງເງື່ອນໄຂ ແລະ ໂອ ກາດໃຫ້ກະກຽມໂຕນຄຸກໂພນເຄັງ ຄັ້ງມະຫັດສະຈັນວັນທີ 23-24/05/ 1960 ຂອງສະເດັດເຈົ້າສຸພານຸວົງ ພ້ອມຜູ້ນຳຂອງພັກ ແລະ ຂອງແນວລາວ ຮັກຊາດ ອອກໄປສູ່ເຂດທີ່ຫມັ້ນປະຕິວັດ ໄດ້ຢ່າງປອດໄພທຸກປະການ.

ພາຍຫລັງສະເດັດເຈົ້າສຸພານຸວົງ ແລະ ຜູ້ນຳອື່ນໆຂອງແນວລາວຮັກ ຊາດ ໂຕນຄຸກໂພນເຄັງແລ້ວ, ທ່ານ ກິນີມ ພົນເສນາ ຍັງສືບຕໍ່ຂົນຂວາຍ ປະຊາຊົນທຸກຊັ້ນຄົນ, ນາຍ ແລະ ພົນທະຫານ, ຕຳຫລວດ ແລະ ຂ້າລາຊະ ການ ສະຫນັບສະຫນູນເສັ້ນທາງສັນຕິພາບເປັນກາງ ຢ່າງບໍ່ຮູ້ອິດຮູ້ເມື່ອຍ. ມາຮອດວັນທີ 09/08/1960 ກອງທະຫານຮາບອາກາດທີ 2 ນຳໂດຍຮ້ອຍ ເອກ ກອງແລ ແລະ ຮ້ອຍໂທ ເດືອນ ສຸນນະລາດ ລຸກຂຶ້ນລັດຖະປະຫານ ໂຄ່ນລົ້ມລັດຖະບານປະຕິການສົມສະຫນິດ ລົງເປັນຜົນສຳເລັດ. ຈາກນັ້ນ, ທ່ານ ກິນີມ ພົນເສນາ ກໍ່ໄດ້ນຳພາກຳລັງເປັນກາງຮັກຊາດທັງຫມົດ ຮ່ວມສຳ ພັນສູ້ຮົບກັບກຳລັງແນວລາວຮັກຊາດ ຕໍ່ສູ້ປ້ອງກັນນະຄອນ ຫລວງວຽງຈັນ ຢ່າງເດັດດ່ຽວ. ຕໍ່ຈາກນັ້ນ, ກໍ່ສົມທົບກັບກຳລັງແນວລາວຮັກຊາດ ປົດປ່ອຍ ທົ່ງໄຫຫີນຊ່ຽງຂວາງ ໃນວັນທີ 01/01/1961. ຈາກນັ້ນ ກໍ່ຂະຫຍາຍກຳ ລັງເປີດກວ້າງເຂດປົດປ່ອຍໄດ້ 2/3 ແລະ ປົດປ່ອຍພົນລະເມືອງເຄິ່ງຫນຶ່ງ ຂອງທົ່ວປະເທດ.

ມາຮອດຈຸດນີ້ ບົນທ່ວງທ່ານີ້ໄຊ ພວກເຮົາໄດ້ໃຊ້ສອງກຳລັງຕີຫນຶ່ງ (ຫມາຍຄວາມວ່າ: ກຳລັງແນວລາວຮັກຊາດ ແລະ ກຳລັງເປັນກາງຮັກຊາດ ຕີຊະນະກຳລັງຂອງຝ່າຍວຽງຈັນ). ທັງສອງກຳລັງໄດ້ເປີດບັ້ນຮົບປົດປ່ອຍ

ແຂວງ ຫລວງນ້ຳທາ ແລະ ອື່ນໆໃນປີ 1962 ເຮັດໃຫ້ຝ່າຍວຽງຈັນປະລາໄຊຢ່າງຫນັກຫນ່ວງ ຈຳເປັນຕ້ອງຍອມເຊັນສັນຍາເຊີແນວຄັ້ງທີສອງ ຟື້ນຟູສັນຕິພາບຢູ່ລາວ ສ້າງຕັ້ງລັດຖະບານປະສົມ ສາມຝ່າຍ (ຝ່າຍແນວລາວຮັກຊາດ ກຳລັງສັນຕິພາບເປັນກາງ ແລະ ຝ່າຍວຽງຈັນ). ໃນລັດຖະບານປະສົມ ຊື່ວຄາວແຫ່ງຊາດເທື່ອນີ້, ທ່ານ ກົມ ພົມເສນາ ເປັນລັດຖະມົນຕີວ່າການກະຊວງການຕ່າງປະເທດ ຢ່າງສົມກຽດ. ພາຍຫລັງທ່ານໄດ້ຮັບຕຳແຫນ່ງອັນມີກຽດສະຫງ່າແລ້ວ, ທ່ານກໍ່ສືບຕໍ່ປະຕິບັດຫນ້າທີ່ຂອງທ່ານ ດ້ວຍຄວາມຈຸບຈ້ວຍຫ້າວຫັນ ໂຄສະນາເຜີຍແຜ່ແນວທາງສັນຕິພາບເປັນກາງ ຄວາມຖືກຕ້ອງປອງດອງຊາດ ຢູ່ພາຍໃນ ແລະ ຕ່າງປະເທດ ຢ່າງກວ້າງຂວາງ, ເຊິ່ງໄດ້ຮັບການສະຫນັບສະຫນູນຊ່ວຍເຫລືອ ທາງດ້ານວັດຖຸປັດໄຈ ຈາກບັນດາປະເທດ ສັງຄົມນິ ຍົມອ້າຍນ້ອງ ແລະ ປະເທດຕ່າງໆໃນໂລກ ຢ່າງຫລວງຫລາຍ ເປັນຕົ້ນແມ່ນ ປະເທດ ສສ ຫວຽດນາມ, ສ.ປ. ຈີນ, ອະດີດສະ ຫະພາບໂຊວຽດ ແລະ ອື່ນໆ ອັນເປັນປັດໄຈປຸກລະດົມກຳລັງໃຈ ຊ່ວຍການປະຕິວັດລາວກ້າວຂຶ້ນສູ່ຍອດສູງໃຫມ່.

ບົນທ່ວງທ່າໄຊຊະນະ, ການເຕີບໃຫຍ່ຂະຫຍາຍຕົວຂອງກຳລັງປະຕິວັດດັ່ງກ່າວ ໄດ້ເຮັດໃຫ້ຝ່າຍກົງກັນຂ້າມ ຕົກເຂົ້າໃນທ່າປະລາໄຊ ນັບມື້ນັບຫນັກຫນ່ວງ. ແຕ່ດ້ວຍສັນດານກະຫາຍສົງຄາມ ຕາຍບໍ່ຫລາບນາບບໍ່ຈື່, ພວກເຂົາໄດ້ປ່ອງບ້າໃຊ້ເລ່ຫລ່ຽມກົນອຸບາຍ ຫວັງແກ່ດຶງເອົາເຈົ້າສຸວັນນະພູມາ, ຮ້ອຍເອກກອງແລ, ແບ່ງແຍກແກ່ດຶງກຳລັງເປັນກາງໄປເຂົ້າຝ່າຍເຂົາ. ຮ້າຍແຮງໄປກວ່ານັ້ນ, ພວກເຂົາໄດ້ວາງແຜນຄາດຕະກຳບຸກຄົນສຳຄັນທີ່ເປັນ ແກນນຳຂອງກຳລັງເປັນກາງ ຫວັງນາບຂູ່ນ້ຳໃຈຮັກຊາດຂອງກຳລັງເປັນກາງ ແລ້ວແກ່ດຶງເອົາກຳລັງເປັນກາງທັງ ຫມົດໄປເຂົ້າກັບຝ່າຍວຽງຈັນ. ດ້ວຍກົນອຸບາຍດັ່ງກ່າວ, ມາຮອດວັນທີ 01 ເມສາ 1963 ພວກເຂົາໄດ້ໃຊ້ກຳລັງ ທະຫານ ສັງຫານຊີວິດຂອງທ່ານ ກົມ ພົມເສນາ ຢ່າງໂຫດຮ້າຍ

ປ່າເຖື່ອນທີ່ສຸດ ເຮັດໃຫ້ທ່ານ ກິນິມ ພົນເສນາ ສົ້ນລົມຫາຍໃຈລົງກັບທີ່ ເຊິ່ງບໍ່ສາມາດກອບກູ້ ເອົາຊີວິດຂອງເພິ່ນໄວ້ໄດ້. ທ່ານໄດ້ຈາກພວກເຮົາໄປ ໂດຍບໍ່ມີວັນກັບຄືນມາອີກແລ້ວ ຍັງເຫລືອໄວ້ແຕ່ຄຸນງາມຄວາມດີອັນປະ ເສີດຂອງເພິ່ນ ໄວ້ໃຫ້ລູກຫລານຂອງພວກ ເຮົາສືບຕໍ່ໄປ. ການຈາກໄປຂອງ ທ່ານ ກິນິມ ພົນເສນາ ເປັນການສູນເສຍຜູ້ນຳສັນຕິພາບເປັນກາງ ທີ່ດີເດັ່ນຜູ້ ຫນຶ່ງ ຂອງກຳລັງເປັນກາງຮັກຊາດ ແລະ ຂອງແນວລາວຮັກຊາດ, ລູກຮັກ ຂອງປະຊາຊົນລາວບັນດາເຜົ່າ ປະຊາຊົນຜູ້ຮັກຫອມສັນຕິພາບເປັນກາງ ແລະ ກ້າວໜ້າທາງສັງຄົມໃນໂລກ.

ໂດຍສືບຕໍ່ເສີມຂະຫຍາຍ ມູນເຊື້ອຕໍ່ສູ້ບໍ່ຍອມຈຳນົນ ແລະ ອຸດົມການ ຂອງ ທ່ານ ກິນິມ ພົນເສນາ, ພວກເຮົາທີ່ເປັນລູກຫລານ ທີ່ໄດ້ສືບທອດ ວິລະກຳຂອງທ່ານ ພ້ອມກັບກຳລັງເປັນກາງຮັກຊາດ ຮ່ວມສຳພັນສູ້ຮົບຄຽງ ບ່າຄຽງໄຫລ່ ກັບກຳລັງແນວລາວຮັກຊາດ ພາຍໃຕ້ການນຳພາຂອງ ພັກ ປະຊາຊົນປະຕິວັດລາວ ສືບຕໍ່ການຕໍ່ສູ້ ຍາດເອົາໄຊຊະນະນີ້ ໄປສູ່ໄຊຊະນະ ໃຫມ່ ຍິ່ງໃຫຍ່ກວ່າເກົ່າ. ສ້າງການລະໂອກາດ ແລະ ຈັບເອົາການລະໂອກາດ ປະຕິວັດຮ້ອຍປີມີເທື່ອຫນຶ່ງ ລຸກຮື້ຂຶ້ນຢຶດອຳນາດການປົກຄອງທົ່ວປະເທດ ໄດ້ຢ່າງສົມບູນ, ສະຖາປະນາປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນຢ່າງສະຫງ່າຜ່າເຜີຍ. ກຳລັງເປັນກາງຮັກຊາດ ໄດ້ເຊື່ອມ ເຂົ້າກັບກຳລັງແນວລາວຮັກຊາດ ກາຍເປັນແຜ່ນທອງດຽວກັນໃນວົງຄະນາ ຍາດແຫ່ງຊາດ ພ້ອມກັນຕໍ່ສູ້ປົກປັກຮັກສາ ແລະ ພັດທະນາປະເທດລາວ ກ້າວຂຶ້ນຕາມທິດສັງຄົມນິຍົມ ຕາມອຸດົມການຂອງ ທ່ານ ກິນິມ ພົນເສນາ ພັກ ແລະ ປະຊາຊົນລາວບັນດາເຜົ່າ ໄດ້ເລືອກເອົາໄວ້ ເຮັດໃຫ້ປະເທດຊາດ ລາວ ມັ່ງຄັ່ງເຂັ້ມແຂງ ປະຊາຊົນມີ ຄວາມຜາສຸກ ສັງຄົມມີຄວາມສີວິໄລ ແລະ ຍຸດຕິທຳເທື່ອລະກ້າວ ຢ່າງຫນັກແຫນ້ນ.

ເນື່ອງໃນໂອກາດລະນຶກວັນທີ 01/04/1963 ຂ້າພະເຈົ້າ ຂໍຝາກ

ຄວາມຊົ່ງຈຳກ່ຽວກັບນ້ຳໃຈຮັກຊາດ ຮັກສັນຕິພາບເປັນກາງເອກະລາດ ອິດສະຫລະພາບ ແລະ ຮັກສັງຄົມນິຍົມ ຂອງ ທ່ານ ກິນິມ ພົນເສນາ ໄວ້ນຳທ່ານຜູ້ອ່ານ ແລກປ່ຽນບົດຮຽນທີ່ເປັນປະໂຫຍດ ເພື່ອຫມູນໃຊ້ເຂົ້າ ໃນຫນ້າທີ່ການງານ ຂອງແຕ່ລະທ່ານ ທີ່ເຫັນວ່າ ສອດຄ່ອງ ແລະ ເຫມາະ ສົມດ້ວຍ.

ຂໍຂອບໃຈ

11/03/2013



ທ່ານ ບົວສີ ຈພເລີນສຸກ

“ລະນຶກເຖິງພະນະທ່ານກຶນິມ ພິນເສນາ”

ໂດຍ ທ່ານພັນເອກດຳດວນ ພິມດວງສີ,
ອະດີດຫົວໜ້າຫ້ອງການກະຊວງອຸດສາຫະກຳ
ການຄ້າແຫ່ງ ສ.ປ.ປ.ລາວ

ກ່ອນໜ້ານີ້ 50 ກວ່າປີ ປະເທດຊາດຂອງພວກເຮົາຕົກຢູ່ພາຍໄຕ້ ລັດທິລ່າເມືອງ ຂຶ້ນແບບໃໝ່ຂອງ ຈັກກະພັດອາເມລິກາ ທີ່ເຂົ້າມາແທນຈັກ ກະພັດລັດທິລ່າເມືອງຂຶ້ນແບບ ເກົ່າຂອງຝລັ່ງເສດ ໃນປີ 1955, ພວກເຂົາ ໄດ້ສ້າງຕັ້ງລັດຖະບານຫຸ່ນ ແລະ ກອງທະຫານຫຸ່ນຂຶ້ນມາເປັນພາຫານະ ແລະເຄື່ອງມືໃນການ ແຊກແຊງ ແລະ ຮຸກຮານປະເທດຂອງພວກເຮົາ ລວມ ທັງບັນດາປະທດໃນອິນໂດຈີນ ອາດີດອານານິຄົມ ຂອງຝລັ່ງເສດ ເພື່ອປາບ ຂະບວນການຕໍ່ສູ້ກູ້ຊາດຂອງປະຊາຊົນ 3 ຊາດໃນອິນໂດຈີນ. ກອງພັນທະ ຫານລາບອາກາດທີ 2 ກໍເປັນກອງໜຶ່ງທີ່ພວກເຂົາໄດ້ສ້າງຂຶ້ນມາປາບປາມ ເຂັ່ນຂ້າປະຊາຊົນລາວ ທຸກບ່ອນທີ່ມີປະຊາຊົນລຸກຂຶ້ນຕໍ່ສູ້ ເຂົາກໍສົ່ງກອງ ພັນນີ້ ເປັນກຳລັງເຄື່ອນທີ່ໄປໂດດຈ້ອງລົງເຂັ່ນຂ້າທຳລາຍເຜົາຜານ ບ້ານ ເຮືອນຂອງປະຊາຊົນ. ຕໍ່ມາດ້ວຍຄວາມອຶດເມື່ອຍຕໍ່ການທຳລາຍເຂັ່ນ ຂ້າ ປະຊາຊົນ ແລະ ໄດ້ຮັບຜົນສະທ້ອນຈາກກະແສຟອງຂອງການປະຕິວັດ ໃນໂອກາດລວມລາວຄັ້ງທີໜຶ່ງ ພວກເຂົາຈຶ່ງມີສະຕິ ຢັ້ງຄິດວ່າ ພວກເຂົາໄດ້ ຕົກເປັນເຄື່ອງມືຮຸກຮານຂອງຈັກກະພັດອາເມລິກາ ແລະ ລັດຖະບານຫຸ່ນ ລູກມືຂອງເຂົາແລ້ວ ຈຶ່ງຄິດແກ້ບາບທີ່ພວກເຂົາໄດ້ກະທຳມາ ໂດຍການເຮັດ ລັດຖະປະຫານ ລັດຖະບານຫຸ່ນ ລູກມືຂອງ ຈັກກະພັດອາເມລິກາທີ່ມີເຈົ້າ ສົມສະນິດເປັນນາຍົກລັດຖະມົນຕີ.

ເມື່ອເຮັດລັດຖະປະຫານຂຶ້ນດ້ວຍຄວາມ ຄຽດແຄ້ນ ໃນຄືນວັນທີ 9 ສິງຫາ 1960ແລ້ວ, ພວກເຂົາບໍ່ຮູ້ວ່າຈະເຮັດແນວໃດຕໍ່ໄປ ຈຶ່ງຄຶດເຫັນວ່າ ພະນະທ່ານ ກຶມ ພົມເສນາ ຫົວໜ້າພັກ ສັນຕິພາບເປັນກາງ ເປັນບຸກຄົນທີ່ມີແນວທາງນະໂຍບາຍ ສ້າງສັນຕິພາບ ແລະ ຄວາມຖືກຄ້ອງປອງດອງຊາດ ກັບຝ່າຍແນວລາວຮັກຊາດ ຈຶ່ງໄດ້ມາໄຫວ້ວອນ ທ່ານເປັນຜູ້ນຳ ແລ້ວ ທ່ານ ກໍເຫັນວ່າ ຄວນເຊີນເອົາສະເດັດເຈົ້າສຸວັນນະພູມາຂຶ້ນມາເປັນນາຍົກລັດຖະ ມົນຕີຈະດີ ເພາະວ່າສະເດັດ ເຈົ້າສຸວັນນະພູມາ ກໍເຄີຍເປັນນາຍົກລັດຖະ ມົນຕີມາຫລາຍສະໄໝແລ້ວ ແຕ່ເທື່ອໃດທີ່ເວົ້າ ເຖິງການສ້າງຄວາມຖືກ ຕ້ອງປອງດອງຊາດກັບຝ່າຍແນວລາວຮັກຊາດ ເພິ່ນກໍຖືກປົດອອກຈາກ ຕຳແໜ່ງ. ສະໄໝທີ່ ເພິ່ນຖືກແຕ່ງຕັ້ງໄປເປັນເອກອັກຄະຣາຊະທູດລາວຢູ່ ປະເທດຝລັ່ງເສດ ຜູ້ຂຽນກໍເຄີຍໄປເຝົ້າເພິ່ນ, ທຸກຄັ້ງທີ່ ກ່າວເຖິງບັນຫາບ້ານ ເມືອງ ເພິ່ນກໍໄດ້ເວົ້າວ່າ:" ມີແຕ່ຂ້ອຍຜູ້ດຽວນີ້ ແຫລະ ທີ່ຈະສ້າງສັນຕິພາບ ແລະຄວາມຖືກຕ້ອງປອງດອງຊາດກັບຝ່າຍແນວລາວຮັກຊາດໄດ້.". ເມື່ອ ເວລາລັດຖະບານວຽງຈັນຈັບຜູ້ນຳ ແນວລາວຮັກຊາດໄປຂັງໄວ້ໂພນເຄັງ ເພິ່ນກໍກັບມາສະໝັກເປັນຜູ້ແທນຣາຊະດອນແຂວງຫລວງພະບາງ, ການ ຍົກເພິ່ນຂຶ້ນມາເປັນນາຍົກລັດຖະມົນຕີຄັ້ງນີ້ ຈະເປັນການທົດສອບແນວ ທາງ ສ້າງສັນຕິພາບ ແລະ ປອງດອງຊາດທີ່ເພິ່ນເຄີຍເວົ້າມາ.

ຂ່າວການເຮັດລັດຖະປະຫານຢູ່ວຽງຈັນ ຄັ້ງນັ້ນໄດ້ດັງໄປທົ່ວໂລກ ພວກເຮົາທີ່ເປັນນັກສຶກສາ ວິຊາທະຫານຢູ່ປະເທດຝລັ່ງເສດໄດ້ຕິດຕາມ ສະຖານະການທາງບ້ານດ້ວຍຄວາມກັງວົນໃຈ, ດັ່ງນັ້ນພໍປິດການຮຽນເຮົາ ກໍຂໍກັບບ້ານໃນທັນໃດ ດ້ວຍຄວາມຫວັງຢາກມາຮ່ວມໃນຂະບວນການ ເພື່ອ ເຮັດໃຫ້ປະເທດຊາດ ມີສັນຕິພາບແລະຖືກຕ້ອງປອງດອງກັນ. ເຮົາໄດ້ກັບ ມາເຖິງວຽງຈັນໃນວັນທີ 21 ສິງຫາ 1960 ແລ້ວກໍໄດ້ໄປ ພົບຮ້ອຍໂທເດືອນ ສຸນນະລາດ ຮອງຫົວໜ້າຄະນະລັດຖະປະຫານຢູ່ຫໍຄຳ ເພາະຢູ່ທີ່ນັ້ນເປັນ

ກອງບັນຊາການປ້ອງກັນນະຄອນຫລວງວຽງຈັນ ຊຶ່ງແຕ່ລະຄືນຝ່າຍຕ້ານ ລັດຖະປະຫານນຳໂດຍ ເຈົ້າບູນອູ້ມ ນະຈຳປາສັກ ແລະ ນາຍພົນ ພູມີ ນໍ່ສະຫວັນ ກໍໃຊ້ປືນໃຫຍ່ ຍິງຂວ້າມນ້ຳຂອງເຂົ້າມາເມືອງວຽງຈັນບໍ່ເວັ້ນແຕ່ ລະຄືນ, ໃນເວລາດຽວກັນນັ້ນ ເຂົາກໍ່ສົ່ງກຳລັງບຸກເຂົ້າມາທາງປາກຊັນ, ຝ່າຍລັດຖະປະຫານກໍສົ່ງກຳລັງໄປສູ້ຮົບ ກັບພວກເຂົາ, ທັງສອງຝ່າຍໄດ້ປະ ທະກັນຢູ່ບໍລິເວນເມືອງປາກຊັນ. ນາຍພົນອຳຄາ ສຸຂະວົງ ແລະ ເຮົາ ກໍໄດ້ ໄປກວດດູສະພາບການສູ້ລົບດັ່ງກ່າວ, ແຕ່ເວລານັ້ນ ຝ່າຍຕ້ານລັດຖະປະ ຫານໄດ້ຖືກຕີຖອຍໄປທາງນ້ຳກະດິງ ເວລານີ້ຍັງມີການສູ້ຮົບກັນຢູ່ພູກະດັນ, ແຕ່ກ່ອນທີ່ເຂົາຈະຖອຍຈາກເມືອງປາກຊັນໄປ ເຂົາກໍໄດ້ທຳ ລາຍຂົວເຫລັກ ຂ້າມນ້ຳຊັນແລ້ວ. ໃນຕອນທ່ຽງຄືນຂອງວັນທີ 2 ຕຸລາ 1960 ພວກເຮົາໄດ້ ຮັບໂທລະເລກ ຈາກສະເດັດເຈົ້າສຸວັນນະພູມາ ສັ່ງໃຫ້ກັບວຽງຈັນດ່ວນ ມາ ເຖິງເວລາໃດໃຫ້ໄປລາຍງານຢູ່ສຳນັກງານນາຍົກ ລັດຖະມົນຕີ (ເວລານັ້ນຢູ່ ທຳພິພິຕະພັນແຫ່ງຊາດປັດຈຸບັນ). ພວກເຮົາໄດ້ເດີນທາງກັບວຽງຈັນ ໂດຍ ທັນທີ, ມາເຖິງກໍເປັນເວລາ 3 ໂມງເຊົ້າ.

ເມື່ອເຂົ້າພົບສະເດັດເຈົ້າສຸວັນນະພູມາກໍມີພະນະທ່ານ ກົມ ພົນ ເສນາຮ່ວມຢູ່ນຳ ພວກເພິ່ນໄດ້ຜັດປ່ຽນກັນ ຊີ້ແຈງສະພາບການໃຫ້ພວກ ເຮົາຟັງວ່າ: “ເວລານີ້ຢູ່ເຂດທະຫານພາກ 2 ພັນໂທຄຳຮູ້ ບຸດສະຣາດ ໄດ້ ປະກາດຢຶດອຳນາດພັນເອກຄຳຄ່ອງ ແລະ ຮັບຮູ້ລັດຖະບານເຈົ້າສຸວັນນະ ພູມາແລ້ວ ເຂົາໄດ້ຮ້ອງຂໍໃຫ້ ສົ່ງນາຍທະຫານຊັ້ນຜູ້ໃຫຍ່ແລະເສນາທິການ ໄປຊ່ວຍ, ຈຶ່ງແຕ່ງຕັ້ງໃຫ້ພວກທ່ານສອງຄົນໄປດູແລສະຖານະການແລ້ວ ລາຍງານມາໃຫ້ລັດຖະບານຮູ້.” ເມື່ອໄດ້ຮັບຄຳສັ່ງແລ້ວພວກເຮົາກໍເມືອ ພັກຜ່ອນ ແລະນັດກັນ ວ່າ 9 ໂມງເຊົ້າ ວັນທີ 3 ຕຸລາ ຈະຂຶ້ນເຄື່ອງບິນ ໄປທີ່ງໄຫຫີນ. ພວກເຮົາໄປເຖິງທີ່ງໄຫຫີນເວລາ 10,30 ໂມງ ກໍມີພັນໂທ ຄຳຮູ້ ບຸດສະຣາດມາຮັບໄປກອງບັນຊາການທະຫານພາກ 2 ຢູ່ທີ່ງໄຫຫີນ

ແລະລາຍງານ ສະຖານະການໃນເຂດທະຫານພາກ 2 (ທີ່ກວມເອົາແຂວງ ຊຽງຂວາງ ແລະຫົວພັນ) ວ່າ: “ປັດຈຸບັນເຂດ ຍ່ອຍຫົວພັນກຳລັງຖືກກຳລັງ ແນວລາວຮັກຊາດບຸກໂຈມຕີ, ທະຫານ 6 ກອງພັນປະຈຳເຂດຍ່ອຍຊຳເໜືອ ກຳລັງຖອຍມາທາງຊຽງຂວາງ ແຕ່ບໍ່ສາມາດຕິດຕໍ່ທາງໂທລະເລກກັນໄດ້ 2 ມື້ແລ້ວ.” ພວກເຮົາຕິດຕາມ ສະຖານະການສູ້ຮົບໃນເຂດທະຫານພາກ 2 ຢູ່ ສອງມື້ ຕໍ່ມາກໍສາມາດຕິດຕໍ່ກັບ ພັນເອກຄຳຄ່ອງ ຜູ້ບັນຊາການທະຫານ ພາກ 2 ຊຶ່ງຖືກຢຶດອຳນາດແລ້ວ ລາຍງານມາວ່າ:” ປະຈຸບັນໄດ້ຖອຍມາຈັ້ງຢູ່ ເມືອງເປີນ ແລະ ຖືກກຳລັງຂອງແນວລາວຮັກຊາດໄລ່ຕິດຕາມມາຢ່າງໃກ້ ຊິດ, ທະຫານອິດເມື່ອຍແລະເສັຍກຳລັງໃຈຫລາຍ, ຂາດເຂົ້າກິນມາໄດ້ 5 ມື້ ແລ້ວ, ສົ່ງເຂົ້າໃຫ້ດ່ວນແດ່.” ພວກເຮົາກໍໄດ້ສົ່ງເຂົ້າສຸກ ແລະ ເຂົ້າສານໃສ່ ເຄື່ອງ ບິນໄປຖິ້ມລົງໃຫ້ ແລະໃຊ້ເຄື່ອງບິນ ບີເວີ ໄປຮັບເອົາ ພັນເອກຄຳຄ່ອງ ແລະ ພັນໂທຄອງ ວົງມະລາດມາ, ພັນເອກຄຳຄ່ອງຖືດຢຶດອຳນາດແລ້ວ ຈະຈັດສົ່ງໄປວຽງຈັນ, ສ່ວນ ພັນໂທ ຄອງວົງມະລາດ ມາຮັບຄຳສັ່ງ ແລ້ວຈະ ໃຫ້ກັບຄືນໄປຫາກົມກອງທະຫານທີ່ຢູ່ເມືອງເປີນ. ຢູ່ຕໍ່ມາອີກປະມານ 1 ຊົ່ວໂມງ ກໍໄດ້ຮັບລາຍງານ ຈາກ ພັນຕີ ຖະໜອມ ພະຂົນ ຢູ່ເມືອງເປີນວ່າ:” ດຽວນີ້ ພວກເຮົາຖືກກຳລັງແນວລາວຮັກຊາດ ປິດລ້ອມໝົດ ທຸກດ້ານແລ້ວ ຂໍຄຳສັ່ງດ່ວນ”, ເຮົາຈຶ່ງໄດ້ໃຫ້ຄຳສັ່ງໂດຍທັນທີວ່າ:” ໃຫ້ຢຸດຕິການສູ້ຮົບກັນ ແລ້ວໃຫ້ຕິດຕໍ່ ກັບຜູ້ບັງຄັບບັນຊາຂອງຝ່າຍແນວລາວຮັກຊາດບໍ່ໃຫ້ສູ້ຮົບ ກັນໂດຍເດັດຂາດ”. ເວລາຜ່ານໄປບໍ່ເຖິງ20 ນາທີ ພັນຕີຖະໜອມ ພະຂົນ ກໍລາຍງານມາອີກວ່າ:” ຕິດຕໍ່ກັບຜູ້ບັນຊາການແນວລາວຮັກຊາດໄດ້ແລ້ວ ເພິ່ນ ຢາກລົມນຳພວກທ່ານ”. ເຮົາໄດ້ລົມກັບຜູ້ບັນຊາການກອງທະຫານ ຝ່າຍແນວລາວຮັກຊາດຢູ່ ເມືອງເປີນ ເວລານັ້ນ ໂດຍໄດ້ແຈ້ງໃຫ້ຮູ້ວ່າ:” ທະຫານໃນເຂດທະຫານພາກ 2 ນີ້ໄດ້ປະກາດຂຶ້ນນຳລັດຖະບານ ເຈົ້າສຸວັນ ນະພູມາຊຶ່ງມີຄະນະລັດຖະປະຫານສະໜັບສະໜູນ, ເປົ້າໝາຍກໍແມ່ນ

ເພື່ອສ້າງສັນຕິພາບແລະຄວາມຖືກ ຕ້ອງປອງດອງຊາດກັບຝ່າຍແນວລາວ ຮັກຊາດ ສະນັ້ນຢ່າໃຫ້ມີການສູ້ຮົບກັນອີກ ໃຫ້ຮ່ວມມືກັນເພື່ອເຮັດໃຫ້ມີ ສັນຕິພາບ ແລະ ຄວາມຖືກຕ້ອງປອງດອງຊາດ", ຝ່າຍຜູ້ບັງຄັບບັນຊາ ຂອງກຳລັງແນວລາວຮັກຊາດກໍ ຕອບຮັບວ່າ ຈະບໍ່ຈັບກຸມ ຫລື ທຳລາຍ ທະຫານຂອງລັດຖະບານຢ່າງເດັດຂາດ ແລະບອກວ່າຈະພາກັນກັບ ໄປຊຳ ເໜືອ, ແຕ່ຂໍເກັບເອົາອາວຸດທັງໝົດໄວ້ກ່ອນ ເພື່ອຮັບປະກັນຄວາມ ປອດໄພ".

ພ້ອມດຽວກັນນັ້ນ ພວກເຮົາກໍລາຍງານໃຫ້ສະເດັດເຈົ້າສຸວັນນະພູມາ ຊາບ ເປັນອັນລະອຽດ. ເຊົ້າວັນຕໍ່ມາ ພວກເຮົາເຫັນເຄື່ອງບິນ ດາໂກຕາ ບິນ ມາແຕ່ທາງວຽງຈັນ ເມື່ອເຄື່ອງບິນລົງຈອດກໍເຫັນ ພະນະທ່ານກິນິມ ພົນ ເສນາລົງຈາກເຄື່ອງບິນໂດຍຕິດຕາມລົງມາມີພະນັກງານຄົນສູງຊາວ ຊຶ່ງບໍ່ ເຄີຍເຫັນມາກ່ອນ (ຮູ້ຊື່ຕາມຫລັງແມ່ນ ສະຫາຍຊຽງສົມ ກູນລະວົງ)ພ້ອມ ດ້ວຍທະຫານປ້ອງກັນຈຳນວນໜຶ່ງ. ພວກເຮົາໄດ້ລາຍງານສະພາບການທັງ ໝົດໃຫ້ເພິ່ນຊາບ, ຈຸດປະສົງຂອງເພິ່ນແມ່ນເປັນຫ່ວງເປັນໄຍນຳທະຫານທີ່ ຖືກປິດອາວຸດ ແລະ ກັບຄືນໄປຊຳເໜືອນັ້ນ ເພິ່ນຢາກໄປຕິດຕາມຫາກອງ ທະຫານດັ່ງກ່າວ, ແຕ່ກໍເປັນໄປບໍ່ໄດ້ ເພາະວ່າເຂົາເຈົ້າໄດ້ອອກເດີນທາງ ຈາກເມືອງເປັນໄປແລ້ວ, ສິ່ງທີ່ເຮັດໄດ້ໃນເວລານີ້ກໍມີແຕ່ເອົາເຂົ້າໄປຖິ້ມ ຢາຍ ຕາມທາງກັບຄືນຊຳເໜືອ ເພື່ອໃຫ້ເຂົາເຈົ້າມີສະບຽງອາຫານພຽງພໍ. ໃນເວລາທີ່ພວກເຮົາກຳລັງລາຍງານ ສະພາບການໃຫ້ພະນະທ່ານ ກິນິມ ພົນ ເສນາຢູ່ນັ້ນ ກໍມີເຄື່ອງບິນ ດາໂກຕາ ອີກລຳໜຶ່ງບິນມາແຕ່ທິດໄຕ້ ສັນນິຖານ ວ່າ ຄົງມາແຕ່ສະຫວັນນະເຂດ ມາລົງທີ່ງໄຫຫີນໂດຍບໍ່ໄດ້ມີການນັດໝາຍ ກັນມາກ່ອນ, ລົງຈາກເຄື່ອງບິນລຳນັ້ນແມ່ນທ່ານນາຍພົນ ບູນເລີດ ສະນີຈັນ, ມີທະຫານຕິດຕາມມາ 7 ຄົນ ລວມທັງນັກບິນ ຊຶ່ງແມ່ນຮ້ອຍເອກທ້າວມາ ເປັນຄົນຂັບ. ເມື່ອເຫດການເປັນແນວນີ້ ຈຶ່ງນັດກັນໄປໂອ້ລົມກັນຢູ່ເຮືອນ

ເຈົ້າສາຍຄຳ ເຈົ້າແຂວງໆຊຽງຂວາງ, ເບື້ອງຕົ້ນ ແຕ່ລະຄົນກໍທັກທາຍກັນ ເປັນທຳມະດາ ເພາະວ່າທຸກຄົນກໍເຄີຍ ຮູ້ຈັກຮັກແພງກັນມາກ່ອນ, ແຕ່ເມື່ອ ກ້າວເຂົ້າສູ່ເປົ້າໝາຍແລະຈຸດປະສົງທີ່ເດີນທາງມາພົບກັນໂດຍບັງເອີນ ນີ້ ບັນຍາກາດກໍຄ່ອຍໆເຄັ່ງຕຶງຂຶ້ນ. ທ່ານນາຍພົນບຸນເລີດ ສະນີຈັນ ຊັກຊວນ ໃຫ້ພວກເຮົາຮ່ວມມືກັນ ປາບຂະບວນການລັດຖະປະຫານຂອງກອງພັນທະ ຫານລາບອາກາດທີ 2 ເພາະເປັນການກະທຳທີ່ຜິດຕໍ່ ກົດໝາຍ. ພະນະທ່ານ ກິນິມ ພົນເສນາ ໄດ້ຕອບວ່າ: "ການທີ່ກອງພັນທະຫານລາບອາກາດທີ່ສອງ ເຮັດລັດ ຖະປະຫານກໍຍ້ອນກະແສຄວາມບໍ່ພໍໃຈຂອງກອງທັບ ແລະ ປະຊາ ຊົນຕໍ່ອຳນາດການປົກຄອງຂອງລັດຖະ ບານ ທີ່ຢູ່ພາຍໄຕ້ການບົ່ງການຂອງ ອົງການຢູແຊດຂອງສະຫະລັດອາເມຣິກາ ມັນສະແດງອອກໃນການ ລຸກຮື້ ຂຶ້ນສະໜັບສະໜູນຂອງປະຊາຊົນທຸກຊັ້ນຄົນ, ເຖິງແມ່ນວ່າການເຮັດລັດ ຖະປະຫານເປັນການກະທຳທີ່ຜິດ ກົດໝາຍ ແຕ່ປັດຈຸບັນ ພະບາດສົມເດັດ ພະເຈົ້າມະຫາຊີວິດກໍໄດ້ມີພະຣາຊະອົງການ ຈັດຕັ້ງລັດຖະບານ ຂຶ້ນມາບໍຣິ ຫານປະເທດຖືກຕ້ອງຕາມກົດໝາຍແລ້ວ ໃນນັ້ນກໍມີຫລາຍທ່ານໃນ ຄະນະຕໍ່ຕ້ານລັດຖະປະຫານ ໄດ້ຕຳແໜ່ງເປັນລັດຖະມົນຕີໃນລັດຖະບານ, ຄວນທີ່ຈະມາຮ່ວມກັນບໍລິຫານປະເທດຊາດບ້ານເມືອງ ຮ່ວມກັນ ແລ້ວ ບ້ານເມືອງກໍຈະເກີດຄວາມສະຫງົບສຸກ". ທ່ານນາຍພົນອຳຄາ ສຸຂະວົງກໍ ກ່າວເສີມຂຶ້ນວ່າ: "ການ ທີ່ກອງພັນທະຫານຣາບອາກາດທີ 2 ເຮັດລັດ ຖະປະຫານນັ້ນ ກໍຍ້ອນເຂົາອິດເມື່ອຍໃນການອອກໄປ ສູ້ຮົບ ເຂັ່ນຂ້າປະ ຊາຊົນ, ຂ້າຕາຍຢູ່ບ່ອນໃດພົກໜ້າຂຶ້ນມາກໍເຫັນເປັນປະຊາຊົນລາວ, ເຜົ່າ ເຮືອນຫລັງໃດກໍ ແມ່ນ ເຮືອນຂອງປະຊາຊົນລາວບັນດາເຜົ່າ ຜູ້ທຸກຍາກທຳ ມາຫາກິນດ້ວຍຄວາມສຸດຈະຣິດ ຊຶ່ງບໍ່ໄດ້ເປັນພິດ ເປັນໄພຕໍ່ຜູ້ໃດ ແຕ່ລັດ ຖະບານພາຍໄຕ້ການບົ່ງການຂອງສະຫະລັດອາເມລິກາ ຊ້ຳພັດສັ່ງໃຫ້ກອງ ທະຫານໄປ ປາບປາມເຂັ່ນຂ້າປະຊາຊົນຂອງຕົນເອງຢ່າງບໍ່ອີດຫຼຸມາ,

ສາຍເຫດກໍຄືວ່າ ເວລາໃດບໍ່ສົ່ງທະຫານອອກໄປ ເຂັ່ນຂ້າປະຊາຊົນ ອົ່ງການ ຢູແຊດກໍຕັດກ່ານຊ່ວຍເຫລືອ." ທ່ານນາຍພົນບຸນເລີດ ສະນີຈັນຈົ່ງເປີດເຜີຍ ອອກມາວ່າ" ປະເທດລາວຕ້ອງອີງໃສ່ການຊ່ວຍເຫລືອຂອງສະຫະລັດອາເມ ລິກາ ທິດສະດີຂອງເຈົ້າບູນອູ້ມ ນະຈຳປາສັກໄດ້ເວົ້າວ່າ :" ລາວເປັນຊາດ ເຄືອພູ ຢາກລຸກຢືນຂຶ້ນຕ້ອງມີຄ້າງ ສະຫະລັດອາເມລິກາເປັນຄ້າງພູເພື່ອໃຫ້ ເຮົາເກາະຢືນຂຶ້ນດັ່ງນັ້ນຈົ່ງຕ້ອງອາໄສເຂົາ." ເຮົາທີ່ຢູ່ໃນທີນັ້ນກໍອົດບໍ່ໄດ້ຈົ່ງ ໄດ້ມີຄວາມເຫັນ ວ່າ:"ຖ້າເປັນແນວນີ້ ເມື່ອໃດປະເທດຊາດເຮົາຈົ່ງຈະມີ ສັນຕິພາບ ແລະປອງດອງຊາດ, ແລ້ວຄົນລາວ ເຮົາ ຈະຕ້ອງຂ້າກັນຕາຍເພື່ອ ຄວາມພໍໃຈຂອງຈັກກະພັດອາເມລິກາຢ່າງບໍ່ມີວັນສິ້ນສຸດຫລືບໍ່?" ຈາກນັ້ນ ແຕ່ລະຄົນກໍອອກຄວາມຄິດຄວາມເຫັນກັນຢ່າງຫລາກຫລາຍ, ບາງຄົນກໍ ເວົ້າວ່າ:"ມື້ນີ້ແມ່ນກອງພັນທະຫານລາບ ອາກາດທີ 2 ເຮັດລັດຖະປະຫານ ແຕ່ກໍຍັງມີອີກຫລາຍກົມກອງທີ່ມີຄວາມບໍ່ພໍໃຈ ພວກເຂົາຈົ່ມວ່າ, ໄປສູ້ຮົບ ຢູ່ແນວໜ້າ ກັບມາຄ້າຍຈະຫາທີ່ຊົ້ນຫ້ອນອນກໍບໍ່ມີ ບາດພວກເຈົ້ານາຍ ກໍແຂ່ງກັນສ້າງຄະລືຫະພໍປານຫໍປະສາດຮາຊະວັງຜູ້ລະຫລາຍໆຫລັງ ມີລົດ ຮັບໃຊ້ຄົນງາມໆຫລາຍໆຄົນ ລວມທັງລູກທັງເມັຍອີກ ບາດລູກເມັຍ ຂອງ ພວກເຂົາຢູ່ບ້ານຫາເຂົ້າໃສ່ໝໍ້ກໍທັງຍາກຂາດການດູແລເບິ່ງແຍງ, ເວລາສູ້ ຮົບຖືກບາດ ເຈັບມາລົ້ນ ໂຮງ ພະຍາບານກໍຕ້ອງນອນຕາມລະບຽງ ຫລືກາງ ເຕັນຢູ່ຕາມເດີ່ນ ຫາຢາປິ່ນປົວກໍບໍ່ພຽງພໍ, ຕາຍໄປກໍບໍ່ມີຄ່າຫົວ," ການເປັນ ການຖືກຖຽງກັນຟົດສະນັ່ນ ບໍ່ສາມາດສະຫລຸບ ແລະຕົກລົງຫຍັງກັນໄດ້ ຈົນເຖິງເດິກດື່ນ ທ່ຽງຄືນກໍແຍກກັນໄປນອນ ໂດຍທີ່ບໍ່ມີໃຜໄດ້ກິນເຂົ້າແລງ ເລີຍ. ເຊົ້າວັນໃໝ່ ພະນະທ່ານ ກິນິມ ພົນເສນາ ກໍກັບຄືນວຽງຈັນ, ສ່ວນ ນາຍພົນ ບຸນເລີດ ສະນີຈັນ ກໍກັບຄືນສະຫວັນນະເຂດ.

ພວກເຮົາຕິດຕາມສະຖານະການຢູ່ທົ່ງໄຫຫີນ ໂດຍສະເພາະການ ເດີນທາງກັບຊຳເໜືອຂອງທະຫານ 6 ກອງພັນ ເປັນເວລາ 3 ວັນ ແລ້ວຈົ່ງກັບ

ຄືນວຽງຈັນ ເພື່ອລາຍງານ ໃຫ້ສະເດັດເຈົ້າສຸວັນນະພູມາ ຊາບ.

ໃນຕອນແລງຂອງວັນທີ 9 ຕຸລາ 1960 ສະເດັດເຈົ້າສຸວັນນະພູມາກໍ ເອີ້ນພວກເຮົາໄປພົບອີກ ແລະ ມີຄຳສັ່ງວ່າ:" ໃຫ້ພວກເຈົ້າກັບໄປທົ່ງໄຫຫີນ ອີກ, ໄປກຽມກອງປະຊຸມພົບປະກັບຜູ້ນຳແນວລາວຮັກຊາດຢູ່ຄັງໄຂ. ກຽມ ໃຫ້ແລ້ວພາຍໃນສອງວັນ, ຖ້າກຽມແລ້ວໃຫ້ລາຍງານມາໃຫ້ຊາບ." ພວກເຮົາ ຂຶ້ນເຄື່ອງບິນໄປ ຍັງທົ່ງໄຫຫີນໃນເຊົ້າຂອງວັນທີ 10 ຕຸລາ 1960, ພໍເຄື່ອງ ບິນເຈີດລົງເດີ່ນ ແນມເຫັນຄົນນຸ່ງເຄື່ອງດຳເຕັມເດີ່ນ ແລະເຫັນພັນຕີ ວັງປາວ ເອົາລົດຈີບແລ່ນເຂົ້າມາຮັບຢູ່ປາກປະຕູເຮືອບິນ, ເຮົາຖາມວ່າ:" ໂຕເອົາພີ່ ນ້ອງລາວສູງມາເຮັດຫຍັງຫລາຍຄົນແທ້ ? ລາວຕອບວ່າ: "ເອົາມາປະກອບ ອາວຸດ." ເມື່ອມາເຖິງກອງບັນ ຊາການທະຫານພາກສອງແລ້ວ ເຂົາກໍຫາຍ ໂຕໄປ. ໃນທັນໃດນັ້ນກໍມີ ຮ້ອຍໂທ ອຸດົມ ພັນທະວົງ ທີ່ ພວກເຮົາເອົາໄປ ຊ່ວຍວຽກ ແລ່ນເຂົ້າມາຄຳນັບແລ້ວລາຍງານວ່າ: " ເຂົາຢຶດອຳນາດ ພວກ ທ່ານ ແລ້ວໄດ໊ " ເຮົາລຸກຢືນຂຶ້ນຢ່າງບໍ່ຮູ້ຕົວ ຄຶດວ່າຈະໄປປາກໂຟນີ ຕິດຕໍ່ກັບ ວຽງຈັນ, ແຕ່... ເຂົາປິດຈັກ ໂຟນີ ທຸກບ່ອນຮຽບຮ້ອຍແລ້ວ ຈຳເປັນຕ້ອງມາ ນັ່ງແນມເບິ່ງໜ້າກັນກັບນາຍພົນອຳຄາສຸຂະວົງ ຄຶດຫຍັງບໍ່ອອກ. ອີກປະ ມານ 1 ຊົ່ວໂມງກໍມີທະຫານເຜົ່າມົ້ງຂອງວັງປາວມາເຊີນພວກເຮົາຂຶ້ນລົດທີ່ ເຂົາຂັບເອງໃສ່ເກັຍ 1 ຕະຫລອດທາງ ແຕ່ກອງບັນຊາການທະຫານພາກ 2 ໄປຍັງສະໂມສອນ ຢູ່ໃກ້ສະໜາມບິນ ເພື່ອພົບປະກັບເຈົ້າແຂວງ ສາຍຄຳ ແລະ ພະຍາຕູບີ ໂດຍມີທະຫານຍາມປ້ອງກັນຢ່າງໜາແໜ້ນ, ແຕ່ຄອຍແລ້ວ ຄອຍເລົ່າ ກໍບໍ່ເຫັນໃຜມາພົບຈົນເຖິງບ່າຍ 3 ໂມງ ຈຶ່ງເຫັນ ເຄື່ອງບິນ ດາໂກ ຕາ C 47 ລຳໜຶ່ງບິນມາແຕ່ທິດໄຕ້ ມາລົງເດີ່ນທົ່ງໄຫຫີນ ໂດຍຮ້ອຍເອກ ທ້າວມາ ເປັນຄົນຂັບ. ບໍ່ນານ ເຂົາກໍມາເຊີນພວກເຮົາໄປຂຶ້ນເຄື່ອງບິນ ແລະ ປິດອາວຸດ ກວດຄົ້ນຕົວກ່ອນເຄື່ອງບິນຈະຂຶ້ນສູ່ທ້ອງຟ້າ. ພວກເຮົາຖືກຂັງ ດ່ວນໃນຫ້ອງມືດທີ່ດຳດວນ ສະຫວັນນະເຂດເປັນເວລາ 3 ປີ ໂດຍບໍ່ຮູ້ຂ່າວ

ຄາວຫຍັງທາງນອກເລີຍ, ຈົນເຖິງການລວມລາວຄັ້ງທີ 2 ເມື່ອປີ1963, ເຂົາໄດ້ມ້າງເພກຳລັງເປັນກາງຂອງສະເດັດເຈົ້າສຸວັນນະພູມາ ຜັນແຍກ ອອກຈາກແນວລາວຮັກຊາດ ແລະ ຄາດຕະກຳພະນະທ່ານກົງມ ພົນເສນາ ໃນວັນທີ 1 ເມສາ 1963 ແລ້ວ ເຖິງວັນທີ 14 ພຶດສະພາເຂົາ ຈຶ່ງປ່ອຍພວກ ເຮົາອອກຈາກທີ່ຄຸມຂັງ ມາກັກບໍລິເວນຢູ່ສະຫວັນນະເຂດເປັນເວລາຫລາຍ ເດືອນອີກ.

ການສູນເສັຍພະນະທ່ານກົງມພົນເສນາ ເປັນການສູນເສັຍຜູ້ນຳທີ່ມີ ອຸດົມການຢາກແກ້ໄຂບັນຫາຂອງຊາດ ຢາກໃຫ້ປະເທດຊາດມີສັນຕິພາບ ມີຄວາມຖືກຕ້ອງປອງດອງກັນ ຢາກໃຫ້ສົງຄາມຂ້າຟັນກັນລະຫວ່າງພີ່ນ້ອງ ຮ່ວມຊາດດຽວກັນ ພາຍໄຕ້ການບົ່ງການຂອງຕ່າງຊາດ ສິ້ນສຸດລົງ. ພະນະ ທ່ານໄດ້ສຸມສະຕິປັນຍາ ເຫື່ອແຮງເພື່ອພາລະກິດສ້າງສັນຕິພາບ ແລະ ຄວາມຖືກຕ້ອງປອງດອງຊາດ ເພື່ອໃຫ້ປະເທດຊາດມີເອກກະລາດ ອະທິ ປະໄຕບົນດິນແດນອັນສັກກະລະບູຊາຂອງຊາດລາວ. ເຖິງແມ່ນວ່າທ່ານຈະ ຈາກ ໄປເຖິງ 50 ປີແລ້ວກໍຕາມ ຂ້າພະເຈົ້າກໍຍັງລະນຶກເຖິງທ່ານມາໂດຍ ຕະ ຫລອດ ແລະ ຂໍໄຫ້ວອອນໃຫ້ດວງວິນຍານຂອງທ່ານຈົ່ງໄປສູ່ສຸຂະຕິເຖີດ.

“ท่าน ກິນິม ພิมเสนา”

โดย ท่าน จันที เดือนสะหวัน (นามปากกา จ.เดือนสะหวัน)

ในหนังสือพิมปะชาชีน สะบับวันที 07/04/1998 หน้า 03

ปะชาชีน ວันที 7-4-1998 ໜ້າ 3

ท่าน ກິນิม ผิมเสนา

- จ.เดือนสะหวัน

-ວันที 1 เมสา 1998 , ป้าไพบุน ผิมเสนา ผ้อมลอบลือ ยาดถีผิ้นอง ได้ธ่วมกับเสัดบุนกินตามแด่ ท่าน ກິນิม ผิมเสนา ผู้เป็นบิดา เป็นปู่ ที่ได้ล่วงลับไปแล้ว 35 ปีเต็ม. ในงานเตื่อบี้ ได้มีถือแทน ผู้นำพัก -ลัด, พะนักงาน, ทะหาน และ ปะชาชีน ชาวมะละอนทลวงจะวัน เจ้าร่วมฝ่างทลวงทลาย.

ท่านกินิม ผิมเสนา ผม่นอะถีดถือตน้าพักสันตีพาย เป็นเป็นตนึงในกำลังสันตีพาย ถ่สู้ปะเชินหน้ากับผอกปะถีกานจอาจัด เพื่อให้มีกานจอมลาอถั้งต่ำยึดในปี 1957.

พายหลังฝ่ายแนวลาวอักขาดเจ้าร่วมในวังละนา ยาดแต่วชาด, ท่าน ກິนิม ผิมเสนา ได้เป็นถ้อถั้งถ้อถี สะหนับสะหนุนฝ่ายแนวลาวอักขาด เพิ่นพ้อมด้วยสะมาชิกในพักสันตีพายได้โสสะนาตาสฎรในขั้นเลือกถั้ง ผู้แทนธาชะกอนเพิ่นเติม จันที 4 ผึดสะพา 1958 จินเสัดให้ฝ่ายแนวลาวอักขาดมีถือแทนเจ้าปั่งในสะพาจำนอน 9 ท่าน และ ผู้แทนฝ่ายสันตีพาย 4 ท่าน.

ท่าน และ ลอบลือของท่าน มีลูกหลานเจ้อธาสีเตลื้อมใสถ่กำลังปะถีอัด, เธือนถึก 2 ชั้นที่ถั่วยู่ก้าหน้ายของถะหนึบเส้นชั้น สามแสบไท ได้กายเป็นบ่อนชุกเชื่องพะนักงานปะถีอัดเป็นบ่อนฝึมใยบือ ในลาอถีกานปะถีอัดมีบ่ลอมหยุ้งยากและ ตางกัน โดยสะเพาะย่างยิ่ง พายหลังสะเด็ดเจ้าสุพานุอ้ว และ ขับดาผู้นำแนวลาวอักขาดถูกจับอ้ว. ท่านกินิม ผิมเสนา บ่ได้สิบสำภามบายอู่ของพอกปะถีกานของาจัด และ ชุโอเอ เพิ่นได้ออกตน้าออกตาต่สู้ตองให้ลัดถะบาน ผุยะนะมีกอบ และ ถ่มาแมมลัดถะบาน ของเจ้าสีมะนิด ตองให้พอกเอ้ำตอง ป่อยสะเด็ดเจ้าสุพานุอ้ว ผ้อมด้วยละมะนำของฝ่ายแนวลาวอักขาดถั่วหมิด, ตองให้ จักกะพัด อาเมลิกา ต้องยุดติกานแซกแซงจอกงานพายใน ของลาว, ต่สู้ตองให้ปะเทดลาวมีเอกะลาด สันตีพาย ลวมถูกต้องป่องดองชำด และ เดินตามแนวทางสันตีพายเป็นกาง ... ตองให้ พูกสายสำพันกับ ปะเทดสะหะพายโซอฮด และ บันดาปะเทดสังคมนิยม...

พายหลังกานลัดถะปะตาน ของกองพันสะตานลายอากาดที 2 ของกองตับแห่วชาดในมื้อันที 9 สิงตา 1960 ท่าน ກິนิม ผิมเสนา ผ้อมด้วยลอบลือได้ถ่อนออกจากมะลอนอุดงจัน ไปธ่วมมือกับฝ่ายแนวลาว อักขาด และ กำลังเป็นกางที่อักขาดที่ ถังไธ-แลวชุดวอาง. ลัดถะบานปะสม 3 ฝ่าย ปี 1962 , ท่านได้ถูกแถ่งถั้งให้เป็นลัดถะมนตีอากานกะของกานต่างปะเทด . ย้อนลวามอักขาดอันสูงสั่ง ก้าปะเชินหน้ากับพอกปะถีกานของาจัด และ ชุโอเอ เสัดให้กับอุบายของพอกเอ้ำถูกอัดจังอะ ในที่สุดพอกเอ้ำก่ได้ให้พอกมีบือดลอยสังตามท่าน ກິนิม ผิมเสนา ในล่ำสึบของวันที 1 เมสา 1963 ยู่ที่เธือนพักของเพิ่นที่ลุมตาดดำ พายหลังกับจากภารกานล้วงที่พะลาอ้วงต่ำ.

เพิ่นได้จากไปเป็นเวลา 35 ปี, ลอบลือตะกุนผิมเสนา ยังถือมีย่ต่าอะถีดของท่าน ฉุกตลามของท่านตุกถิบได้ยับหน้าที่อธกานอันมีกฎของปะเทดชาด และ ตุกอันล้อมแต่ยู่ในหน้าที่ต่ำแหน่งล่ำดับของพัก-ลัด.

ປະຫວັດຫຍໍ້ຂອງ ທ່ານ ກິນິມ ພົນເສນາ

ໂດຍ: ໂດຍ ສຈ. ດຣ ຮຸ່ຍ ພົນເສນາ,
ອະດີດຫົວໜ້າຫ້ອງການກະຊວງຍຸຕິທຳ
ແຫ່ງສ.ປ.ປ.ລາວ

ກ່ອນສົງຄາມໂລກ ຄັ້ງທີສອງ ໃນຊຸມປີ 1939 1945

ທ່ານ ກິນິມ ພົນເສນາ ເກີດທີ່ ຈຳປາສັກ, ໄດ້ເຕີບໃຫຍ່ ຢູ່ ເມືອງປາກເຊ, ແຂວງຈຳປາສັກ. ເພິ່ນໄດ້ບຸກບືນສູ້ຊົນ ຊອກຫາຄວາມຮູ້ດ້ວຍຕົນເອງ ເພື່ອອະນາຄົດອັນກ້າວໜ້າ. ໃນເວລານັ້ນ ຍັງບໍ່ທັນມີເສັ້ນທາງລົດທຸງວສະ ດວກເທື່ອ ແລະ ເນື່ອງຈາກວ່າ ເມືອງປາກເຊ ຍັງບໍ່ທັນມີໂຮງຮຽນ ມັດທະຍົມ ເທື່ອ, ເພິ່ນຈຶ່ງໄດ້ຕັດສິນໃຈ ເດີນທາງໄປຕາມລຳແມ່ນ້ຳຂອງທາງກຳປັ່ນ ເພື່ອຂຶ້ນມາຮຽນ ຢູ່ມັດທະຍົມວຽງຈັນ. ພາຍຫລັງທີ່ໄດ້ຮັບໃບປະກາສະນີຍະ ບັດ ຊັ້ນມັດທະຍົມ, ເພິ່ນໄດ້ເຂົ້າຮັບໃຊ້ລັດຖະການ ນຳອົງການປົກຄອງ ທ້ອງຖິ່ນ ທີ່ຂຶ້ນນຳຝຣັ່ງ.

ໂດຍອີງໃສ່ຄວາມຮູ້ຄວາມສາມາດພື້ນຖານຂອງເພິ່ນ ເພິ່ນຈຶ່ງໄດ້ຮັບ ການແຕ່ງຕັ້ງ ໃຫ້ເປັນພະນັກງານປະຈຳການ ຢູ່ເມືອງ ປາກເຊ ແລະ ຕໍ່ມາ ກໍ່ໄດ້ເປັນເຈົ້າເມືອງ ເມືອງ ປາກຊ່ອງ.

ໃນເວລາ ເປັນເຈົ້າເມືອງ ເມືອງປາກຊ່ອງ

ໃນໂອກາດທີ່ເພິ່ນ ເປັນເຈົ້າເມືອງ ເມືອງປາກຊ່ອງ, ເພິ່ນໄດ້ຊ່ວຍ ເຫລືອແກ້ໄຂ ພັດທະນາໃຫ້ເມືອງ ປາກຊ່ອງ ກາຍເປັນເມືອງທີ່ມີຄວາມ ອຸດົມສົມບູນ ທາງດ້ານເສດຖະກິດ. ພ້ອມກັນນັ້ນ, ເພິ່ນໄດ້ຊ່ວຍແກ້ໄຂ

ຄວາມທຸກຍາກ ໃຫ້ແກ່ປະຊາຊົນບັນດາເຜົ່າຕ່າງໆ ໃນເຂດປົກຄອງຂອງ ເພິ່ນ. ປະຊາຊົນບັນດາເຜົ່າ ກໍ່ໄດ້ຍ້ອງຍໍຊົມເຊີຍເພິ່ນວ່າ: ມີນ້ຳໃຈຊ່ວຍ ເຫລືອ ປົກປ້ອງປະຊາຊົນ ໄດ້ທຳມາຫາກິນທາງດ້ານການປູກຝັງ ເປັນຕົ້ນ ແມ່ນ: ກາເຟ, ຊາ ແລະ ເຄື່ອງປ່າຂອງດົງຕ່າງໆ ໃຫ້ສາມາດສົ່ງອອກຂາຍໃຫ້ ປະເທດໃກ້ຄຽງໄດ້.

<u>ອີງຕາມ ສົນທິສັນຍາ ຝຣັ່ງ-ລາວ ໃນປີ 1946</u>

ສາທາລະນະລັດ ຝຣັ່ງ ໄດ້ມອບຄວາມເປັນເອກະລາດຄືນ ໃຫ້ແກ່ລາ ຊະອານາຈັກລາວ ມີອຳນາດອະທິປະໄຕ ແລະ ມີການສ້າງລັດຖະທຳມະນູນ ທີ່ເປັນກົດໝາຍພື້ນຖານ ຂອງລາຊະອານາຈັກລາວ. ລັດຖະທຳມະນູນ ດັ່ງກ່າວ ໃນເບື້ອງຕົ້ນ ມີ 43 ມາດຕາ ຊຶ່ງແມ່ນ ຄະນະກຳມາທິການພິເສດ ປະກອບດ້ວຍ 43 ສະມາຊິກ ເປັນຕົວແທນ ທີ່ຖືກແຕ່ງຕັ້ງມາຈາກແຂວງ ຕ່າງໆ. ໃນນັ້ນ, ທ່ານ ກິນິມ ພົນເສນາ ກໍ່ແມ່ນໜຶ່ງໃນບັນດາສະມາຊິກ ຄະນະກຳມາທິການ ທີ່ໄດ້ສ້າງລັດຖະທຳມະນູນຄັ້ງທຳອິດ ແຫ່ງ ລາຊະອາ ນາຈັກລາວ ຕາງໜ້າໃຫ້ແຂວງຈຳປາສັກ. ພາຍຫລັງ ທີ່ລັດຖະທຳມະນູນ ໄດ້ຖືກສ້າງຂຶ້ນສຳເລັດ, ເພິ່ນກໍ່ໄດ້ຮັບການແຕ່ງຕັ້ງ ເປັນເຈົ້າແຂວງ ແຂວງ ອັດຕະປື.

<u>ໃນເວລາ ເປັນເຈົ້າແຂວງ ແຂວງອັດຕະປື</u>

ພາຍຫລັງ ທີ່ໄດ້ເຮັດສຳເລັດໜ້າທີ່ ໃນຄະນະກຳມາທິການ ສ້າງລັດ ຖະທຳມະນູນ ແຫ່ງລາຊະອານາຈັກ ຕາມສົນທິສັນຍາ ຝຣັ່ງ-ລາວ(ປີ1946). ຫລາຍປີຕໍ່ມາ, ເພິ່ນໄດ້ຖືກແຕ່ງຕັ້ງ ໃຫ້ເປັນເຈົ້າແຂວງ ແຂວງອັດຕະປື ຊຶ່ງ ເປັນແຂວງໜຶ່ງ ທີ່ຢູ່ຫ່າງໄກສອກຫລີກ, ທິດຕາເວັນອອກສ່ຽງໃຕ້ ຕິດກັບ ຫວຽດນາມ ແລະ ທິດໃຕ້ ຕິດກັບກຳປູເຈຍ. ແຂວງດັ່ງກ່າວ ເປັນແຂວງໜຶ່ງ

ທີ່ປະກອບດ້ວຍບັນດາເຜົ່າລາວເທິງຕ່າງໆ ແລະ ເປັນແຂວງຍຸດທະສາດ ຂອງ ການປະຕິວັດ ຢູ່ພາກໃຕ້ ໃນການປະກອບສ່ວນຕໍ່ສູ້ ກັບຈັກກະພັດເກົ່າ ແລະ ໃຫມ່ ເພື່ອປົດປ່ອຍປະເທດຊາດ ໃຫ້ເປັນເອກະລາດ ຄືດັ່ງທຸກວັນນີ້. ໃນເວລາທີ່ເພິ່ນ ໄດ້ປະຕິບັດພາລະຫນ້າທີ່ ເປັນເຈົ້າແຂວງ, ເພິ່ນກໍ່ໄດ້ອອກແຮງ ນໍາພາປະຊາຊົນ ສ້າງສາພັດທະນາແຂວງ ໃຫ້ກຸ້ມຕົນເອງ ເພື່ອຫລຸດພົ້ນອອກຈາກຄວາມທຸກຍາກ ຕາມແນວທາງອຸດົມການຍຸດຕິທໍ.

ນອກຈາກນັ້ນ, ກໍ່ຍັງໄດ້ລະດົມຊຸກຍູ້ ບັນດາເຜົ່າຕ່າງໆ ໃຫ້ມີຄວາມຮັກແພງສາມັກຄີ, ເອື້ອເຟື້ອອາລີ ເຊິ່ງກັນ ແລະ ກັນ.

ໃນໄລຍະເວລາ ທີ່ເພິ່ນເປັນເຈົ້າແຂວງ ແຂວງອັດຕະປື, ນອກຈາກ ການນໍາພາ ທາງດ້ານການພັດທະນາແລ້ວ, ເພິ່ນກໍ່ໄດ້ຊ່ວຍເຫລືອປະຊາຊົນ ປົກປ້ອງສິດຜົນປະໂຫຍດອັນຊອບທໍ ເພື່ອສະກັດກັ້ນ ການບ່ຽດບ່ຽນທີ່ບໍ່ເປັນທໍາຂອງອໍານາດການປົກຄອງ ຈັກກະພັດຝຣັ່ງ. ປະຊາຊົນໃນແຂວງ ກໍ່ໄດ້ຍ້ອງຍໍຊົມເຊີຍເພິ່ນ ທີ່ມີນ້ໍາໃຈຮັກຊາດ ຮັກປະຊາຊົນ.

24/VII

<u>ໃນເວລາ ເປັນຜູ້ແທນ ປະຈໍາສະພາແຫ່ງຊາດ</u>

ເນື່ອງໃນໂອກາດ ການເລືອກຕັ້ງສະມາຊິກສະພາ ຄັ້ງຕໍ່ມາ, ເພິ່ນກໍ່ໄດ້ ສະຫມັກເລືອກຕັ້ງ ຢູ່ແຂວງອັດຕະປື ແລະ ໄດ້ຮັບເລືອກຕັ້ງ ເປັນຜູ້ແທນ ປະຈໍາສະພາແຫ່ງຊາດ. ເພິ່ນໄດ້ຊ່ວຍເຫລືອ ແກ້ໄຂຂໍ້ຫຍຸ້ງຍາກຕ່າງໆ ທາງ ດ້ານການເມືອງ ແລະ ການປົກຄອງ ເພື່ອໃຫ້ສອດຄ່ອງ ກັບອຸດົມການ ຍຸດຕິທໍ.

ໃນໂອກາດດຽວກັນນັ້ນ, ເພິ່ນໄດ້ສ້າງຕັ້ງ ພັກການເມືອງຫນຶ່ງຂຶ້ນ ທັງ ເປັນຫົວຫນ້າພັກ ນັ້ນຄື ພັກສັນຕິພາບເປັນກາງ, ຊຶ່ງເປັນພັກ ທີ່ມີຄວາມ ເປັນກາງຮັກຊາດ ເພື່ອຫລີກເວັ້ນສົງ ຄາມກາງເມືອງ ທີ່ຈະເຮັດໃຫ້ປະເທດ ຊາດ ຖືກມ້າງເພທໍາລາຍ ຈາກກຸ່ມຈັກກະພັດ ຫລື ບຸກຄົນ ທີ່ຫວັງມ້າງເພ

ທຳລາຍປະເທດຊາດ.

ໂດຍອີງຕາມ ພາລະບົດບາດ ແລະ ປະສົບການຂອງເພິ່ນ, ເພິ່ນໄດ້ຖືກເລືອກຕັ້ງ ໃຫ້ເປັນຮອງປະທານສະພາແຫ່ງຊາດ ເພື່ອຊີ້ນຳການຈັດຕັ້ງປະຕິບັດພາລະບົດບາດ ຂອງສະພາແຫ່ງຊາດ ຕາມລະບຽບກົດໝາຍທີ່ໄດ້ກຳນົດໄວ້.

<u>ໃນເວລາ ເປັນເຈົ້າແຂວງ ແຂວງຫົວພັນ</u>

ຫລັງຈາກນັ້ນ, ເພິ່ນກໍ່ໄດ້ຮັບການແຕ່ງຕັ້ງ ໃຫ້ເປັນເຈົ້າແຂວງ ແຂວງຫົວພັນ. ໃນເວລາປະຕິບັດ ພາລະໜ້າທີ່ ເຈົ້າແຂວງ, ເພິ່ນກໍ່ໄດ້ເຮັດສຳເລັດໜ້າທີ່ ເປັນຕົ້ນແມ່ນ: ປົກຄອງແຂວງ ຕາມທິດທາງ ອຸດົມການຍຸຕິທຳ, ໃຫ້ທິດທາງຊີ້ນຳ ສ້າງສາພັດທະນາແຂວງ ເພື່ອໃຫ້ມີສະເຖຍລະພາບ ຫລຸດພົ້ນ ອອກຈາກຄວາມທຸກຍາກ ນັ້ນຄື: ຄວາມພໍຢູ່ພໍກິນ ຂອງປະຊາຊົນບັນດາເຜົ່າ ຕາມເຂດທ້ອງຖິ່ນຊົນນະບົດຫ່າງໄກສອກຫລີກ. ສິ່ງໜຶ່ງທີ່ເດັ່ນ ກໍ່ຄື: ການຕ້ານກັບການກົດຂີ່ ຂອງພວກຈັກກະພັດຝຣັ່ງ ທີ່ໃຊ້ອຳນາດບັງຄັບໃຫ້ປະຊາຊົນ ອອກແຮງ ງານເກີນຂອບເຂດ ເຊັ່ນ: ຝຣັ່ງ ໄດ້ບັງຄັບໃຫ້ປະຊາຊົນ ລຳລຽງເຄື່ອງອຸປະໂພກ-ບໍລິໂພກ ໃຫ້ກອງທະຫານ ປະຈຳເຂດດັ່ງກ່າວ ໂດຍບໍ່ຄຳນຶງເຖິງຄວາມສາມາດຂອງປະຊາຊົນ ທີ່ສາມາດແບກຫາບໄດ້. ຕົວຢ່າງ: ບຸກຄົນໜຶ່ງ ຈະຕ້ອງແບກຫາບເຄື່ອງໜັກ 20 ກິໂລ ລຳລຽງໃຫ້ກອງທັບ ໃນໄລຍະທາງ 20 ກວ່າຫລັກ ຊຶ່ງເພິ່ນໄດ້ຄັດຄ້ານຄຳສັ່ງດັ່ງກ່າວ ວ່າບໍ່ສົມເຫດສົມຜົນ ແລະ ໃຫ້ແບກຫາບຫລຸດລົງ ຕາມຄວາມສາມາດ ຂອງແຕ່ລະຄົນ. ຄຳເຫັນດັ່ງກ່າວ ຍັງຢູ່ໃນຄວາມຊົງຈຳ ຂອງປະຊາຊົນ ແຂວງຫົວພັນ ມາຮອດເທົ່າທຸກວັນນີ້ວ່າ ເພິ່ນເປັນຜູ້ມີນ້ຳໃຈມະນຸດສະທຳແທ້ໆ.

ໃນໄລຍະ ຈັກກະພັດ ອາເມລິກາ ຮຸກຮານອິນດູຈີນ

ພາຍຫລັງການເຊັນ ສົນທິສັນຍາສັນຕິພາບ ລະຫວ່າງ ຝຣັ່ງ, ຫວຽດ ນາມ, ກຳປູເຈຍ ແລະ ລາວ ໃນເດືອນກໍລະກົດ 1954 ຊຶ່ງຫມາຍເຖິງ ການ ປະລາໄຊຂອງຝຣັ່ງ ໃນສົງຄາມດຽນບຽນຟູ (ສສ ຫວຽດນາມ), ຈັກກະພັດ ອາເມລິກາ ກໍ່ໄດ້ເຂົ້າມາເຮັດສົງຄາມແທນຈັກກະພັດຝຣັ່ງ ເພື່ອດັບສູນຜູ້ ທີ່ມີອຸດົມການ ມາກ-ເລນິນ ອອກຈາກພາກພື້ນດັ່ງກ່າວ. ພາລະຫນ້າທີ່ດ້ານ ການເມືອງ ຂອງທ່ານ ກີນິມ ພົນເສນາ ໃນຍຸກຈັກກະພັດອາເມລິກາ ຮຸກຮານ ອິນດູຈີນ ແມ່ນເພີ່ນໄດ້ອອກແຮງຊ່ວຍເຫລືອ ບັນດາຜູ້ນຳ ປະຕິວັດ ທີ່ຖືກຈັບ ກຸມຄຸມຂັງ ໃຫ້ພົ້ນຈາກຂໍ້ກ່າວຫາ. ບໍ່ວ່າຍາມໃດ ເພີ່ນກໍ່ມີນ້ຳໃຈກ້າຫານ ຕໍ່ສູ້ ຕ້ານກັບການກະທຳອັນບໍ່ດີ ຂອງຝ່າຍລາຊະອານາຈັກ ກໍ່ຄື ຝ່າຍຈັກກະ ພັດອາເມລິກາ ໂດຍບໍ່ຄຳນຶງເຖິງອັນຕະລາຍ ແກ່ຄວາມປອດໄພ ໃນຊີວິດ ຂອງເພີ່ນ. ທັງນີ້ ຍ້ອນວ່າ: ເພີ່ນມີນ້ຳໃຈຮັກຊາດ, ຮັກປະຊາຊົນ, ຮັກການ ປະຕິວັດຕາມອຸດົມການອັນໂປ່ງໃສໃນການຕໍ່ສູ້ກູ້ຊາດ ເພື່ອປົດປ່ອຍອອກ ຈາກແອກປົກຄອງ ຂອງຈັກກະພັດເກົ່າ ແລະ ໃຫມ່ ດັ່ງທີ່ໄດ້ບັນທຶກໄວ້ ໃນປະຫວັດສາດຜ່ານມາ.

ລັດຖະປະຫານ ຄັ້ງທຳອິດ ຢູ່ ລາຊະອານາຈັກລາວ

ໃນວັນທີ 09 ສິງຫາ 1960, ກອງແລ ໄດ້ເຮັດລັດຖະປະຫານ ເພື່ອ ໂຄ່ນລົ້ມລັດຖະບານຝ່າຍຂວາ ໃນເວລານັ້ນ ກໍ່ໄດ້ຮັບຜົນສຳເລັດ. ແຕ່ກອງ ແລ ບໍ່ມີຄວາມຮູ້-ຄວາມສາມາດທາງດ້ານການເມືອງ ແລະ ຂາດປະສົບ ການ ບໍ່ສາມາດສ້າງຕັ້ງ ລັດຖະບານໃຫມ່ ຂຶ້ນແທນລັດຖະບານທີ່ຖືກໂຄ່ນ ລົ້ມໄດ້. ກອງແລ ຈຶ່ງໄດ້ຮ້ອງຂໍຄວາມຊ່ວຍເຫລືອ ນຳສະເດັດເຈົ້າ ສຸວັນ ນະພູມາ ແລະ ທ່ານ ກີນິມ ພົນເສນາ ເພື່ອສ້າງຕັ້ງລັດຖະບານໃຫມ່ຂຶ້ນ ແທນ. ໃນນີ້, ສະເດັດເຈົ້າ ສຸວັນນະພູມາ ເປັນນາຍົກລັດຖະມົນຕີ ແລະ ທ່ານ

ກິນິມ ພົນເສນາ ເປັນລັດຖະມົນຕີ່ວ່າການ ກະຊວງວັດທະນະທຳ ແລະ ຖະ ແຫລງຂ່າວ. ສຳລັບ ກອງແລແລ້ວ ໃນເບື້ອງຕົ້ນ ມີຍົດຮ້ອຍເອກ ກໍ່ໄດ້ປະ ກາດຕົນ ເປັນນາຍພົນ ເນື່ອງໃນໂອກາດ ທີ່ຕົນໄດ້ເຮັດລັດຖະປະຫານສຳ ເລັດ ພ້ອມທັງສ້າງຕັ້ງຂະບວນການຫນຶ່ງຂຶ້ນ ເອີ້ນວ່າ: ພັກຝ່າຍກາງ.

ໃນເດືອນພະຈິກ ປີ 1960, ນາຍພົນ ພູມີ ຫນໍ່ສະຫວັນ, ຫົວຫນ້າພັກ ຝ່າຍຂວາ ຢູ່ ແຂວງ ສະຫວັນນະເຂດ ຊຶ່ງເປັນພັກທີ່ຢູ່ພາຍໃຕ້ອິດທິພົນ ຂອງ ຈັກກະພັດອາເມລິກາ ທີ່ບໍ່ພໍໃຈຕໍ່ການເຮັດລັດຖະປະຫານຂອງ ກອງແລ, ໄດ້ຍົກກຳລັງເຂົ້າຕີເອົານະຄອນຫລວງວຽງຈັນ ເພື່ອຂັບໄລ່ຝ່າຍກາງ ອອກ ຈາກລັດຖະບານໃຫມ່. ຝ່າຍກາງ ຈຶ່ງໄດ້ໄປສົມທົບກັບການປະຕິວັດ ຢູ່ເຂດ ຊຽງຂວາງ ແລະ ມາຕັ້ງ ຖານທີ່ຫມັ້ນ ຢູ່ ວັງວຽງ.

<u>ສົນທິສັນຍາ ສາມຝ່າຍ ເອີ້ນວ່າ ສົນທິສັນຍາ ເຊີແນວ ວ່າດ້ວຍ ສັນຕິພາບ</u>

ໃນປີ 1961, ອີງຕາມ ການພົບປະເຈລະຈາ ທາງດ້ານການເມືອງ ເພື່ອ ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ແລະ ວັດທະນະຖາວອນ ລະຫວ່າງ ສາມສະເດັດ ຄື: ສະເດັດເຈົ້າ ສຸວັນ ນະພູມາ (ຝ່າຍກາງ), ສະເດັດ ເຈົ້າ ສຸພານຸວົງ (ຝ່າຍປະຕິວັດ) ແລະ ສະເດັດເຈົ້າ ບຸນອູ້ມ ນະຈຳປາສັກ (ຝ່າຍຂວາ) ຄັ້ງທຳອິດຢູ່ຄັງໄຊ, ຕໍ່ມາຢູ່ພະນົມເປັນ, ປະເທດ ກຳປູເຈຍ, ແລະ ໃນວັນທີ 22 ມິຖຸນາ 1961 ຢູ່ ຊູຣິກ, ປະເທດ ສະວິດເຊີແລນ. ການ ເຈລະຈາ ແມ່ນໄດ້ຮັບຜົນດີ ເພື່ອສ້າງຕັ້ງລັດ ຖະບານປະສົມສາມຝ່າຍ.

<u>ສົນທິສັນຍາ ເຊີແນວ ວ່າດ້ວຍ ສັນຕິພາບ</u>

ໃນປີ 1962 ໄດ້ມີການເຊັນສົນທິສັນຍາເຊີແນວ ໂດຍສືບຕໍ່ ຈາກການ ເຈລະຈາ ຂອງສາມສະເດັດ ທີ່ໄດ້ກ່າວມາຂ້າງເທິງນີ້, ເພື່ອປະກາດອຳນາດ ອະທິປະໄຕ ແລະ ສັນຕິພາບ ຂອງ ປະເທດລາວ ຢ່າງເປັນທາງການ ຕໍ່ສາກົນ

ໃນວັນທີ 09 ກໍລະກົດ 1962. ບັນດາປະເທດ ທີ່ເຂົ້າຮ່ວມໃນສົນທິສັນຍາປະກອບດ້ວຍ 14 ປະເທດ ຄື:

1. ປະເທດ ກາມາດາ
2. ປະເທດ ສະຫະລັດ ອາເມລິກາ
3. ປະເທດ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ
4. ປະເທດ ສາທາລະນະລັດ ຝຣັ່ງ
5. ປະເທດ ສາທາລະນະລັດ ອິນເດຍ
6. ປະເທດ ສາທາລະນະລັດ ປະຊາຊົນຈີນ
7. ປະເທດ ສາທາລະນະລັດ ປະຊາຊົນ ໂປໂລຍ
8. ປະເທດ ສາທາລະນະລັດ ຫວຽດນາມໃຕ້ (ກ່ອນປົດປ່ອຍ ປີ 1975)
9. ປະເທດ ລາດຊະອານາຈັກ ກໍາປູເຈຍ
10. ປະເທດ ລາດຊະອານາຈັກ ໄທ
11. ປະເທດ ລາດຊະອານາຈັກ ສະຫະພາບ ອັງກິດ ລວມທັງ ອຽກລັງ ເຫນືອ
12. ປະເທດ ສະຫະພັນ ມຽນມາ
13. ປະເທດ ສະຫະພາບ ໂຊຫວຽດ
14. ປະເທດ ລາວ

ສໍາລັບ ຜູ້ຕາງໜ້າລັດຖະບານ ຂອງປະເທດລາວ ແມ່ນ ທ່ານ ກິນິມ ພິນເສນາ ທີ່ໄດ້ເຂົ້າຮ່ວມ ກອງປະຊຸມ ແລະ ລົງລາຍເຊັນ ໃນສົນທິສັນຍາ ເຊີແນວ ວ່າດ້ວຍ ສັນຕິພາບ ໃນວັນທີ 09 ກໍລະກົດ 1962.

ໂດຍອີງຕາມ ການປັບປຸງລັດຖະບານໃຫມ່ ເພື່ອໃຫ້ສອດຄ່ອງກັບ ສົນທິສັນຍາສັນຕິພາບ ທີ່ໄດ້ກ່າວມາຂ້າງເທິງນີ້, ສາຍຝ່າຍ (ຂວາ, ກາງ, ຊ້າຍ) ໄດ້ສ້າງຕັ້ງລັດຖະບານປະສົມສາມຝ່າຍຂຶ້ນ. ໃນນັ້ນ, ທ່ານ ກິນິມ

ພົນເສນາ ໄດ້ຮັບການແຕ່ງຕັ້ງ ເປັນລັດຖະມົນຕີວ່າການ ກະຊວງການຕ່າງ ປະເທດ.

ເພື່ອປົກປັກຮັກສາສັນຕິພາບໃຫ້ຫມັ້ນຄົງ ແລະ ມີສະຖຽນລະພາບ ຍືນຍົງຕະຫລອດໄປ, ທ່ານ ກິນິມ ພົນເສນາ ໄດ້ປະຕິບັດຕາມແນວທາງ ນະໂຍບາຍຮັກສາອຳນາດອະທິປະໄຕ ຂອງຊາດ ຢ່າງເຂັ້ມງວດ, ສະແດງ ອອກຄື: ເພິ່ນໄດ້ສຳຫລວດກວດກາການເຄື່ອນໄຫວ ຂອງຈັກກະພັດອາເມ ລິກາ ຢູ່ປະເທດລາວ ຊຶ່ງໃນເວລານັ້ນ ນະໂຍບາຍຂອງຈັກກະພັດອາເມລິກາ ແມ່ນມີຈຸດປະສົງຢາກປັດເຂ່ຍ ອຸດົມການຄອມມູນິດ ມາກ-ເລນິນ ອອກ ຈາກເຂດແຄ້ວ ອາຊີຕາເວັນອອກສ່ຽງໃຕ້, ໃນນັ້ນ ລວມທັ້ງ ຫວຽດນາມ, ກຳປູເຈຍ ແລະ ລາວ.

ສະເພາະ ປະເທດລາວ ແມ່ນເປັນເປົ້າຫມາຍ ເພື່ອແບ່ງແຍກປະເທດ ໃຫ້ຢູ່ພາຍໃຕ້ອິດທິພົນຂອງຕົນ, ເປັນຕົ້ນແມ່ນການຊ່ວຍເຫລືອ ດ້ານວັດ ຖຸອຸປະກອນສົງຄາມ ຫລື ອື່ນໆ ຊຶ່ງຈັກກະພັດອາເມລິກາ ໄດ້ສົ່ງໃຫ້ບັນດາ ນາຍພົນ ຜູ້ບັນຊາການກອງທັບຂັ້ນຕ່າງໆ ໂດຍບໍ່ຜ່ານລັດຖະບານປະສົມ ສາມຝ່າຍ. ຕົວຢ່າງ: ຈັກກະພັດອາເມລິກາ ໄດ້ສົ່ງອຸປະກອນສົງຄາມ ໃຫ້ ນາຍພົນ ວັງປາວ ຢູ່ເຂດລ່ອງແຈ້ງ, ແຂວງ ຊຽງຂວາງ ຢ່າງເສລີ ເພື່ອຕ້ານ ກັບລັດຖະບານປະສົມສາມຝ່າຍ.

ທ່ານ ກິນິມ ພົນເສນາ ໃນນາມລັດຖະມົນຕີວ່າການ ກະຊວງການຕ່າງ ປະເທດ ໄດ້ຄັດຄ້ານຕໍ່ແນວ ທາງການເມືອງ ຂອງຈັກກະພັດອາເມລິກາ ທີ່ໄດ້ຊຸກຍູ້ຊ່ວຍເຫລືອ ບັນດານາຍພົນ ຢູ່ແຂວງຕ່າງໆ ຕາມຈຸດປະສົງແບ່ງ ແຍກປະເທດຊາດ ບໍ່ໃຫ້ຂຶ້ນກັບລັດຖະບານແຫ່ງຊາດ ເພື່ອຫວັງປົກຄອງ ພາຍໃຕ້ອິດທິພົນຂອງຕົນ.

ສະນັ້ນ, ທ່ານ ກິນິມ ພົນເສນາ ຈຶ່ງໃຊ້ມາດຕະການ ຫ້າມບໍ່ໃຫ້ມີການ ສົ່ງອຸປະກອນສົງຄາມ ໃຫ້ນາຍພົນ ວັງປາວ ແລະ ບັນດານາຍພົນຝ່າຍຂວາ

ອື່ນໆ ອີກຕໍ່ໄປ. ຖ້າຕ້ອງການຢາກຊ່ວຍເຫລືອປະເທດລາວ ກໍ່ຕ້ອງໃຫ້ຜ່ານ ລັດຖະບານ ຕາມລະບຽບຫລັກການ.

<u>ການຄາດຕະກຳ ທ່ານ ກິນິມ ພົນເສນາ</u>

ໃນວັນທີ 01 ເມສາ 1963, ເນື່ອງໃນໂອກາດ ວັນສະເຫລີມສະຫລອງ ສົນທິສັນຍາ ເຊີແນວ ວ່າດ້ວຍສັນຕິພາບ ຄົບຮອບຫນຶ່ງປີ ຢູ່ ຫໍຄຳ. ພາຍຫລັງ ງານດັ່ງກ່າວສິ້ນສຸດລົງ, ເພິ່ນກໍ່ໄດ້ກັບເມືອເຮືອນ ຢູ່ທາດດຳ. ໃນເວລານັ້ນ, ທະຫານຍາມເຮືອນເພິ່ນ ຊຶ່ງເປັນລູກນ້ອງຂອງກອງແລ ໄດ້ຮັບຄຳສັ່ງຈາກ ກອງແລ ໃຫ້ຄາດຕະກຳເພິ່ນ ໂດຍໃຊ້ປືນຍິງເພິ່ນ ຈົນເສັຍຊີວິດຢ່າງໂຫດ ຫ້ຽມ. ສ່ວນພັນລະຍາຂອງເພິ່ນ, ຍາປ້າໄພບູນ, ກໍ່ໄດ້ຮັບບາດເຈັບຢ່າງສາ ຫັດ, ແຕ່ໂຊກດີ ເພິ່ນຈຶ່ງລອດຊີວິດ.

ຫລັງຈາກນັ້ນ, ກອງແລ ກໍ່ໄດ້ຂົ້ນຊັ້ນໃຫ້ລູກນ້ອງ ຜູ້ທີ່ຍິງເພິ່ນເສຍ ຊີວິດ ຈາກນາຍສິບ ຂົ້ນເປັນນາຍຮ້ອຍ. ແຜນການດັ່ງກ່າວ ແມ່ນເປັນການຊື້ ຈ້າງກອງແລ ຂອງສູນກາງສືບລາຊະການລັບອາເມລິກາ (CIA) ຫວັງປັດ ເຂ່ຍກຳລັງຮັກຊາດ ອອກຈາກອຳນາດລັດ ແລະ ການປະຕິວັດ ເພື່ອຈັກກະ ພັດອາເມລິກາ ຈະໄດ້ປົກຄອງປະເທດລາວ ງ່າຍຂົ້ນ.

ສຳລັບກອງແລ, ຜູ້ກ່ຽວໄດ້ທໍລະຍົດຕໍ່ຊາດ, ຕໍ່ປະຊາຊົນ, ຕໍ່ການປະຕິ ວັດ ເຮັດໃຫ້ບັນດາປະຊາຊົນ ແລະ ກຳລັງຮັກຊາດ ບໍ່ພໍໃຈຕໍ່ຜູ້ກ່ຽວ. ດ້ວຍ ເຫດນັ້ນ, ກອງແລ ຈຶ່ງບໍ່ສາມາດສືບຕໍ່ ຢູ່ປະເທດລາວໄດ້ອີກ. ຜູ້ກ່ຽວ ຈຶ່ງໄດ້ ໂຕນຫນີໄປຢູ່ອາເມລິກາ ຮອດເທົ່າທຸກວັນນີ້.

ຫລັງຈາກ ທ່ານ ກິນິມ ພົນເສນາ ໄດ້ເສຍຊີວິດແລ້ວ, ບ້ານເມືອງ ກໍ່ປັ່ນ ປ່ວນ, ບໍ່ມີສັນຕິພາບ, ເພາະຝ່າຍຂວາ ຢາກປັດເຂ່ຍ ຝ່າຍປະຕິວັດ ແລະ ຝ່າຍເປັນກາງຮັກຊາດ ອອກຈາກລັດຖະບານປະສົມສາມຝ່າຍ ເພື່ອກຳອຳ ນາດການປົກຄອງປະເທດລາວ ພາຍໃຕ້ອິດທິພົນ ຂອງຈັກກະພັດອາເມ

ລິກາ. ຜູ້ຮັກຊາດຝ່າຍປະຕິວັດ ແລະ ຝ່າຍເປັນກາງຮັກຊາດ ບາງທ່ານ ຢູ່ນະ ຄອມ ຫລວງວຽງຈັນ ກໍ່ຖືກຈັບກຸມ ໂດຍຝ່າຍຂວາ, ເປັນຕົ້ນແມ່ນ ບັນດາຜູ້ນຳ ທີ່ເປັນສະມາຊິກ ໃນຄະນະລັດຖະບານປະສົມສາມຝ່າຍ ຄື: ສະເດັດເຈົ້າ ສຸພານຸວົງ ກໍ່ໄດ້ຖືກຈັບຕົວເຂົ້າຄຸກ ຢູ່ຄ້າຍ ໂພນເຄັງ, ທ່ານ ພູມີ ວົງວິຈິດ ແລະ ທ່ານ ຜູ້ນຳຝ່າຍເປັນກາງຮັກຊາດອື່ນໆ ກໍ່ຖືກຈັບຕົວເຊັ່ນດຽວກັນ.

ຄອບຄົວ ຂອງທ່ານ ກິນິມ ພົນເສນາ ກໍ່ໄດ້ໄປຢູ່ເຂດປົດປ່ອຍ ແຂວງ ຫົວພັນ ເພື່ອປະກອບສ່ວນຢ່າງຕັ້ງໜ້າ ຕໍ່ສູ້ກັບຝ່າຍຂວາ ກໍ່ຄື ບັນດາຜູ້ນຳ ໃນລາຊະອານາຈັກລາວ ແລະ ຈັກກະພັດອາເມລິກາ. ບັນດາລູກໆຂອງເພິ່ນ ກໍ່ໄດ້ໄປຮຽນຢູ່ ສສ ຫວຽດນາມ, ສປ ຈີນ, ສັງຄົມນິຍົມ ເຢັຍລະມັນຕາເວັນ ອອກ ແລະ ສະຫະພາບ ໂຊຫວຽດ, ຕາມແນວທາງ ນະໂຍບາຍຂອງພັກ ເພື່ອ ສ້າງບຸກຄະລິກ ລັກສະນະ ທາງດ້ານວິຊາຊີບ ຕາມອຸດົມການ ມາກ-ເລນິນ. ຈາກນັ້ນ, ກໍ່ໄດ້ປະກອບ ສ່ວນ ຮັບໃຊ້ຊາດ ຮັບໃຊ້ການປະຕິວັດ ດ້ວຍຄວາມ ທ້າວທັນ ມີຈິດໃຈປະຕິວັດຮັກຊາດ ຈົນຮອດເທົ່າທຸກວັນນີ້.

ปะหวัดหย้

ก่ๆอกับ

ตะกุน พินเสนา

ภิภเด้า:

เต่ียพ่ๆอยิๆ มาจาภ ปะเทดจิน, ดุ้ม เต้ภอุย, บ้าม ห้ม้ย, เม้อๆ เก้ิงราย, แดวๆ ภวาๆต้ๆ, ฮินเผ่า แตจ๋อ มาต้ิงถิ่นถาม ยู่ จำปาสัภ, อาฮิบ ถ้าขายดอๆเทบ และ ติ้มเห้ิา.

ได้แต่งดอๆกับแม่เถ้ิาแดงอิบ, ปะฮาฮิน บ้าม ดอมแดง, มีลูภ ร่วมกัน ถิ:

1. เต่ียมา
2. อาว ปาม
3. อาว โสพา
4. อาว เม้ิา
5. อาว เต๋ิา
6. อา อามี้
7. อาว หูพัด

เต่ียมา ได้กับไปรๆม ยู่ เม้อๆจิน, ได้ส้าๆดอบถ้ิว และ มีลูภ รอ่มกัน ถิ:

1. ท่าน ภิมิม
2. ท่าน ภิเด้ๆ
3. ท่าน นาๆ พวๆ
4. ท่าน ดำลๆๆ
5. ท่าน ดำลๆม

- ອາວ ປານ ມີລູກ ຄື : ທ່ານ ບຸນເຮັ້ງ, ປະຈຸບັນ ຢູ່ ບ້ານ ໂພນແພງ, ຈຳປາສັກ
- ອາວ ໂສພາ ມີລູກ ຄື: ທ່ານ ຢີນ ແລະ ທ່ານ ຊົ້ງ
- ອາວ ເນົາ ມີລູກ ຄື: ທ່ານ ເຕັກ, ທ່ານ ໜູລົ້ນ ແລະ ທ່ານ ໜູເລັກ
- ອາວ ເຕົ່າ ມີລູກ ຄື: ທ່ານ ປີຊາ, ທ່ານ ຕ່ອນ, ທ່ານນາງ ມະໄລ, ທ່ານ ມົ້ງຄົນ
- ອາ ນີ ມີລູກ ຄື: ທ່ານ ກິສິນ, ທ່ານ ພອນໄຊ, ທ່ານ ພອນເທບ, ທ່ານນາງ ວັນເພັນ, ທ່ານນາງ ພຽນເພັນ, ທ່ານນາງ ຄຳເພັດ
- ອາວ ໜູພັດ ມີລູກ ຄື : ທ່ານ ຍົມ ເປັນຜູ້ບູລະນະ ສ້ອມແປງກ່ອງພອນ ເຕ້ຍພ່ຽວຢ້ຽ ຢູ່ ຈຳປາສັກ.

<u>ທີ່ມາຂອງນາມສະກຸນ ພົນເສນາ :</u>

ເຈົ້າສັກປະເສີດ ນະຈຳປາສັກ ນ້ອງຊາຍຂອງເຈົ້າຍາດຂະໜ່ອມ ນະຈຳປາສັກ ເປັນຜູ້ຕັ້ງນາມສະກຸນ ໃຫ້ ທ່ານ ກິນິມ ທີ່ມີຜົນງານຕໍ່ບ້ານ ເມືອງ. ເພາະວ່າ ໃນເມື່ອກ່ອນຄົນລາວເຮົາ ບໍ່ມີນາມສະກຸນ, ມີແຕ່ຊື່ ເອີ້ນ ກັນ ຕາມປະເພນີ ຄື ເອີ້ນຊື່ ສາມີ-ພັນລະຍາປະສົມກັນ.

ເຕ້ຍອ່ຽມກຸຍ ແມ່ນຫຼານຂອງເຕ້ຍພ່ຽວຢ້ຽ (ລູກຂອງນ້ອງຊາຍເພີ່ນ) ມາຈາກ ປະເທດຈີນ ພ້ອມດຽວກັນກັບ ເຕ້ຍມາ ມາຢູ່ນຳລຸງ ທີ່ ຈຳປາສັກ, ມີອາຊີບ ຕົ້ມເຫຼົ້າຫາຝົນ ທ້ຽ່ວຍເບິ່ງແຍງ ທ່ານ ກິນິມ ແຕ່ຍັງນ້ອຍ.

ຫຼັງຈາກນັ້ນ, ກໍໄດ້ມາຢູ່ນຳ ກວນ ສີສົມບັດ ທີ່ເມືອງ ປາກເຊ, ເປັນ ເຖົ້າແກ່ ຄ້າຂາຍເຄື່ອງປ່າຂອງດົງ ເປັນຕົ້ນ ໝາກແໜ່ງ, ຂັ່ງ, ປ່ານ, ຍານ, ໝາກຈອງ ເພື່ອສົ່ງໄປຂາຍ ຢູ່ ອຸບົນ ປະເທດໄທ ທາງປາກນ້ຳມູນ, ຈຶ່ງໄດ້ພົບ ກັບແມ່ ຈວນ ລັດຕະນະສົນ ຢູ່ ອຸບົນ, ປະເທດ ໄທ. ຈາກນັ້ນ ກໍໄດ້ແຍກອອກ

ຈາກ ກວນ ສີສົມບັດ ເພື່ອມາຄ້າຂາຍ ດ້ວຍຕົນເອງ ຢູ່ ເມືອງ ປາກເຊ, ແຂວງ ຈຳປາສັກ. ໃນເວລານັ້ນ ເພິ່ນເປັນຜູ້ມີຖານະດີ ຜູ້ໜຶ່ງ, ຊາວຈີນ ຈຶ່ງໄດ້ເລືອກ ເອົາເພິ່ນເປັນ ອ້າງປາງ (ຕາແສງຈີນ).

ຄອບຄົວ ຂອ່ງ ເຕ່ຍ ອຸ່ງມກຸຍ ແລະ ເຕ່ຍມາ ກໍ່ໄດ້ໄປມາຫາສູ່ກັນຕະ ຫຼອດຮອດລູກຫຼານເທົ່າທຸກວັນນີ້.

ເຕ່ຍອຸ່ງມກຸຍ ມີລູກຮ່ວມກັບແມ່ຈອມ ລັດຕະນະສິນ ຄື:

1. ທ່ານ ນາງ ບົວສິນ
2. ທ່ານ ຮີ
3. ທ່ານ ຮົກ
4. ທ່ານ ບຸນລົບ
5. ທ່ານ ສົ້ວ
6. ທ່ານ ຊ່ວງ
7. ທ່ານ ກວາງ
8. ທ່ານ ນາງ ອຸດົມ
9. ທ່ານ ຮຸ່ຍ
10. ທ່ານ ນາງ ສົມພອນ
11. ທ່ານ ນາງ ສົມພິນ
12. ທ່ານ ຮ່ວງ
13. ທ່ານ ນາງ ນ້ອຍ

24 / VII
ห้องจำหน่าย

ຄວາມຊົງຈຳຂອງຂ້າພະເຈົ້າ ຕໍ່ການເຄື່ອນໄຫວສ່ວນນ້ອຍໜຶ່ງ ຂອງ ພະນະທ່ານ ກິນິມ ພິລເສນາ ຫລື ເອີ້ນວ່າ "ອ້າຍນິມ" ຫລື ຂະໜານນາມວ່າ "ບຸລຸດເຫຼັກ"

ໂດຍສຈ. ດຣ ພອນເທບ ພິນເສນາ,
ຄະນະປະຈຳສະພາແຫ່ງຊາດ,
ປະທານກຳມາທິການວັດທະນຳສັງຄົມຂອງສະພາແຫ່ງຊາດ

- ເພິ່ນເປັນຜູ້ສືບທອດຕະກູນພໍ່ເຖົ້າໃຫຍ່ **ພິລເສນາ ທີ່ດອນແດງ ນະຄອນຈຳປາສັກ**, ເພິ່ນມັກທຽວໄປຢາມ ເມືອງ ຈຳປາສັກ ແລະ ໃນແຕ່ລະເທື່ອທີ່ໄປ ເພິ່ນໄດ້ໄປຢາມອາຂອງເພິ່ນທີ່ຮັກໄຄ່ ໄວ້ເນື້ອເຊື່ອໃຈ ນັບຖືກັນ ເຊິ່ງແມ່ນ "ແມ່ແດງນິ ພິລເສນາ" ເພື່ອຈະໄດ້ເລົ່າສະພາບການຄວາມໃນໃຈໃຫ້ຟັງ. ໂດຍໃນເວລານັ້ນຂ້າພະເຈົ້າກໍຍັງເປັນເດັກນ້ອຍຢູ່, ພໍແຕ່ໄດ້ນັ່ງອ້າປາກຟັງ ຂ້າງໆແມ່ ລະຫວ່າງປີ 1954-1960.
- ຕາມທີ່ແມ່ໄດ້ເລົ່າສູ່ຟັງ "ອ້າຍນິມ" ເພິ່ນໄດ້ຜ່ານຊີວິດສູ້ຊົນຕັ້ງແຕ່ຍັງນ້ອຍ, ຮຽນໜັງສືເກັ່ງ, ບໍ່ຍອມຄົນ ແລະ ສະຫຼາດຫຼັກແຫຼມ ດຸໝັ່ນຂະຫຍັນພຽນ. ເພິ່ຍເຄີຍໄດ້ອາໃສຢູ່ນຳເຮືອນຂອງອາຈານຝະລັ່ງ, ຕັ້ງໜ້າຮຽນໜັງສືສອບເສັງຈົນເຜີຫຼັບຄາໂຕະ ແລ້ວເຮັດປາກກາຫຼຸດມືຕົກຈົນປາຍຫົວເຫຼັກແຕກເຮັດໃຫ້ຂຽນຕໍ່ບໍ່ໄດ້, ເພິ່ນຮ້ອງໄຫ້ເສຍໃຈ ເພາະຈະໄປສອບເສັງມື້ອື່ນເຊົ້າ, ອາຈານຝະລັ່ງໄດ້ຍິນຈຶ່ງໄດ້ເອົາປາກກາອັນໃຫມ່ໃຫ້ໄປສອບເສັງ.
- ເພິ່ນເຄີຍຜ່ານຊີວິດຮ່ຳຮຽນກົດໝາຍ, ເປັນນາຍພາສາ, ເປັນເຈົ້າເມືອງ, ເຈົ້າແຂວງ ຈຶ່ງຮູ້ບັນຫາຄວາມບໍ່ຖືກຕ້ອງຂອງອຳນາດການປົກຄອງຂອງຝະລັ່ງ ທີ່ມີຕໍ່ປະຊາຊົນລາວ ແລະ ໄດ້ສະໝັກເລືອກຕັ້ງເປັນຜູ້ແທນຣາຊະ

ດອນ ແລະ ໄດ້ເປັນຜູ້ສ້າງຕັ້ງພັກ ສັນຕິພາບເປັນກາງ ແລະ ໄດ້ເປັນຮອງປະທານສະພາຜູ້ແທນຣາຊະດອນ, ເປັນພັກຝ່າຍຄ້ານ ມີແນວທາງເຕົ້າໂຮມລາວເຂົ້າກັນ ເພື່ອສ້າງລາວໃຫ້ເປັນປະເທດ ເອກະລາດ ມີສັນຕິ ພາບເປັນກາງແລະບໍ່ໃຫ້ເປັນລູກແຫ້ງຂອງຈັກກະພັດ ອາເມລິກາ ແລະ ຝະລັ່ງ.

- ເພິ່ນໄດ້ເປັນປາກກະບອກສຽງຂອງປະຊາຊົນລາວຜູ້ທຸກຍາກ, ຜູ້ອອກແຮງງານ, ຢູ່ໃນເວທີການເມືອງ, ຢູ່ໃນສະພາ ແລະ ຄັດຄ້ານການກະທຳສິ່ງຄາມຂອງພວກຂວາຈັດ ໂດຍສະເພາະພວກຂວາຈັດ "ພັກຊາດກ້າວໜ້າ" ແລະ ເພິ່ນຍັງໄດ້ຮ່ວມສຳພັນກັບ "ພັກລາວຮ່ວມສຳພັນ" ຈຶ່ງເຮັດໃຫ້ເພິ່ນໄດ້ຮັບການສະໜັບສະໜູນຈາກ ປະຊາຊົນລາວ ໂດຍສະເພາະຈະມີພວກຖີບສາມລໍ້ໄປນັ່ງສໍ່ລໍ່ຟັງ, ປົນຮ້ອສະພາຟັງເວລາເປີດສະພາ ແລະ ຕິບມີເຊຍເພິ່ນຕະຫຼອດເວລາ.

- ເພິ່ນໄດ້ເວົ້າໃຫ້ແມ່ຂ້າພະເຈົ້າຟັງວ່າ ເຂົາຈະຊື້ຈ້ຽງເພິ່ນເປັນເງິນ 1ລ້ານ ໂດລາ ສະຫາລັດ ໃນສະໄໝນັ້ນ ເພື່ອໃຫ້ເພິ່ນມາເປັນ ລັດຖະມົນຕຣີ ໂດຍຕ້ອງປະຖິ້ມແນວທາງ ສັນຕິພາບເປັນກາງ ຕ້ານແນວລາວຮັກຊາດ, ແຕ່ເພິ່ນບໍ່ຍອມຕໍ່ການຊື້ຈ້ຽງຈອບອອຍຂອງພວກຂວາຈັດ ໂດຍມີອາເມລິກາ ຢູ່ເບື້ອງຫຼັງ.

- ເວລາເລືອກຕັ້ງຜູ້ແທນຣາຊະດອນ ເຊິ່ງແມ່ນ ເອື້ອຍໄພບູນ ພິລເສນາ ສະໜັກໃນນາມພັກ ສັນຕິພາບເປັນກາງ ຢູ່ແຂວງຈຳປາສັກ, ຂ້າພະເຈົ້າ ແລະ ເອື້ອຍບຸນລິດ ໄດ້ຕິດຕາມການເລືອກຕັ້ງ ແລະ ໄດ້ຖືກນາບຂູ່ຈາກເຈົ້າໜ້າທີ່ວ່າຈະ "ຈັບໄປເຂົ້າຄຸກ" (ຈາກພັກຂອງ ເຈົ້າ ບຸນອຸ້ມ).

- ອ້າຍນິມ ໄດ້ເປັນ ທະນາຍຄວາມ ຕໍ່ສູ້ເພື່ອປົກປ້ອງ ການນຳຂອງແນວລາວຮັກຊາດ ທີ່ຖືກຄຸມຂັງຢູ່ຄຸກໂພນເຄັງທີ່ຖືກໂທດປະຫານຊີວິດ. ເວລາເພິ່ນມາຈຳປາສັກ ເພິ່ນໄດ້ເລົ່າໃຫ້ແມ່ຂອງຂ້າພະເຈົ້າຟັງເຖິງນະໂຍບາຍຂອງເພິ່ນ ແລະ ໃຫ້ເປັນຜູ້ເຜີຍແຜ່ຕໍ່ປະຊາຊົນທີ່ມາຊື້ເຄື່ອງຂອງ ກ່ຽວກັບ

ນະໂຍບາຍຂອງແນວລາວຮັກຊາດ, ສັນຕິພາບເປັນກາງ ແລະ ໃຫ້ເກັບກຳ ຂໍ້ມູນຕ່າງໆ ໂດຍມີການພົວພັນກັບ ສຳນັກງານແນວລາວຮັກຊາດແບບ ປິດລັບ ເຊິ່ງແມ່ນ ທ່ານ ສອນ ເປັນຜູ້ຕາງໜ້າຢູ່ເມືອງຈຳປາສັກ.

- ຫຼັງຈາກ ກອງແລ ເຮັດລັດຖະປະຫານ, ເພິ່ນໃຫ້ກອງແລໄປເຊີນເອົາ ເຈົ້າ ສຸວັນນະພູມາ ມາພົບເພື່ອໃຫ້ໄປເປັນນາຍົກແລ້ວຕັ້ງລັດຖະບານໃຫມ່ ໃຫ້ ໄປເຈລະຈາກັບແນວລາວຮັກຊາດ ເພື່ອເຕົ້າໂຮມປະເທດຊາດ ເຮັດໃຫ້ປະ ເທດລາວມີສັນຕິພາບເປັນກາງ, ປົດສະຈາກກອງທັບຂອງຝະລັ່ງ, ອາເມລິ ກາ "ຄຳເວົ້າຂອງ ກອງແລ ທີ່ ປາຣີ ຢູ່ບ້ານທ່ານ ປະດິດ ປະເທດຝະລັ່ງ".

- ໃນນາມທີ່ເປັນລັດຖະບານ ມີແນວທາງເປັນກາງ ທີ່ຖືກຮັບຮອງເອົາຈາກ ສະພາຜູ້ແທນ ຣາຊະດອນ ເພິ່ນໄດ້ວາງແນວທາງສັນຕິພາບເປັນກາງ ຮຽກ ຮ້ອງເຕົ້າໂຮມຄວາມສາມັກຄີກັບແນວລາວຮັກຊາດ, ຮຽກຮ້ອງເອົາການ ຊ່ວຍເຫຼືອ ແລະ ຜູກມິດກັບປະເທດສັງຄົມນິຍົມ ໂດຍສະເພາະແມ່ນກັບ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ, ສາທາລະນະລັດ ປະຊາຊົນ ຈີນ ແລະ ສະຫະພາບ ໂຊຫວຽດ.

- ຫຼັງຈາກເກີດການເຮັດປະຕິວັດຕ້ານຄືນຈາກ ກຸປະສິດ ອະໄພ ໂດຍຮວມ ຫົວກັບພວກປະຕິການຈາກພາກໄຕ້ (ພູມີ ໜໍ່ສະຫວັນ, ບຸນອຸ້ມ ນະຈຳປາ ສັກ) ໂດຍໄດ້ຮັບການສະໜັບສະໜູນຈາກປະຕິການ ທະຫານຂອງຈອມພົນ ສະຣິດ ທະນາຣັທ ໄດ້ບຸກຕີເຂົ້ານະຄອນຫຼວງ ວຽງຈັນ, ເພິ່ນຜູ້ດຽວທີ່ຢືດໝັ້ນ ບັນຊາການຕໍ່ສູ້ ຈົນຮອດນາທີສຸດທ້າຍ ຈົນທະຫານຂອງກອງແລ ທ້າວກະ ຕິກ ໄດ້ຂັບລົດມາເຖິງເຮືອນເພິ່ນ ເພື່ອມາປຸກເອົາເພິ່ນໄປ, ພໍແຕ່ລົດເພິ່ນ ຫວິດອອກຈາກປະຕູເຮືອນໄດ້ບໍ່ພໍເທົ່າໃດນາທີ ພວກສັດຕູເອົາປືນມາ ຈໍ່ໃສ່ປະຕູໜ້າເຮືອນ ແລ້ວຈັບເອົາລູກຫຼານໄປ ໂດຍສະເພາະແມ່ນ ທ້າວ ອ້ຶງ ໄດ້ຫາຍສາບສູນໄປເລີຍ, ເພິ່ນຈຶ່ງຖອນອອກໄປສົມທົບກັບການນຳ ແນວ ລາວຮັກຊາດ ຢູ່ຊຳເໜືອ.

- ພວກພີ່ນ້ອງລູກຫຼານທີ່ເຫຼືອ ແມ່ນຢູ່ໃນການປົກຄອງຂອງຝ່າຍຂວາ ແມ່ນໄດ້ຖືກຄວບຄຸມຕິດຕາມ, ຊູ່ເຂັ່ນເປັນປະຈຳ, ອ້າຍ ຕ່ອນ ພິລເສນາ ຢູ່ປາກເຊຖືກຈັບ, ທ່ານ ສີສະອາດ ຖືກຄາດຕະກຳ.
- ພວກຂ້າພະເຈົ້າໄດ້ແຕ່ ລັກຟັງຕິດຕາມຂ່າວຈາກວິທະຍຸກະຈາຍສຽງ ຂອງ ສ.ປ ຫວຽດນາມ, ແນວລາວຮັກຊາດຢ່າງຕໍ່ເນື່ອງ.
- ຫຼັງຈາກພວກຂວາຈັດ ຖືກປະລາໄຊ ແລະ ອາເມລິກາຍອມໃຫ້ສ້າງຕັ້ງ ລັດຖະບານປະສົມ ເທື່ອທີ່ 2 ນັ້ນ ເພິ່ນໄດ້ຖືກແຕ່ງຕັ້ງເປັນລັດຖະມົນຕີ ກະ ຊວງການຕ່າງປະເທດ ເຊິ່ງເພິ່ນໄດ້ເອົາກາລະໂອກາດນີ້ ຜູກສຳພັນກັບທູດ ຂອງຄ້າຍສັງຄົມນິຍົມ ແລະ ໄດ້ຂໍຄວາມຊ່ວຍເຫຼືອໃນນາມລັດຖະບານທີ່ຖືກ ຕ້ອງຕາມກົດໝາຍ ໂດຍສະເພາະການສົ່ງນັກສຶກສາໄປຮຽນຢູ່ປະເທດ ສັງຄົມນິຍົມ ແລະ ຍັງຂໍຄວາມຊ່ວຍເຫຼືອດ້ານຍຸດໂທປະກອນໃຫ້ກຳລັງປະ ກອບອາວຸດ ແລະ ປະກອບສ່ວນສ້າງກຳລັງແຮງໃຫ້ແກ່ຝ່າຍປະຕິວັດ.
- ຍ້ອນການເຄື່ອນໄຫວຂອງເພິ່ນ ເປັນສິ່ງກີດຂວາງແຜນການ ມ້າງສັນຕິ ພາບ ແລະ ກະທາຍສິງຄາມຂອງ ອາເມລິກາ ແລະ ລູກແຫ້ງຕີນມື ເພື່ອຈະ ດັບມອດການປະຕິວັດ, ຍ້ອນຫຼັກໝັ້ນຂອງເພິ່ນ ເພິ່ນໄດ້ຖືກຂະໜານນາມ ຈາກວິທະຍຸ ສ.ປ ຫວຽດນາມ ວ່າເປັນ "ບຸລຸດເຫຼັກ".
- ຈາກແຜນການຂອງ ອາເມລິກາ (C.I.A) ເຊິ່ງສ້າງຄວາມແບ່ງແຍກພາຍ ໃນ ພັກສັນຕິພາບເປັນກາງເອງ, ຜູ່ບໍ່ມີອຸດົມການໝຸ່ງແໜ້ນ ແມ່ນຖືກຊື້ຈ້າງ ຈອບອອຍ ດ້ວຍຫຼາຍຮູບຫຼາຍສີ ແລະ ແຍກອອກມາເຂົ້າຂ້າງກັບຝ່າຍຂວາ ຈັດ.
- ຜູ້ທີ່ມີອຸດົມການໜັກແໜ້ນ ແມ່ນໄດ້ເຂົ້າຮ່ວມກັບ ແນວລາວຮັກຊາດ ເຊັ່ນທ່ານ ກິນິມ, ຮ້ອຍໂທເດືອນ. ຕໍ່ມາໄດ້ມີຂໍ້ຂັດແຍ່ງພາຍໃນເກີດ ຂຶ້ນຫຼັງ ຈາກພວກເພິ່ນກັບມາແຕ່ໄປຢ້ຽມຢາມ ອາເມລິກາ, ຜູ້ທີ່ບໍ່ມີອຸດົມການໜັກ ແໜ້ນ ແມ່ນໄດ້ຖືກຊື້ຈ້າງຈອບອອຍ ແຕ່ທ່ານ ກິນິມ ບໍ່ຍອມຮັບເອົາການຊື້

ຈ້າງຈອບອອຍ ຫຼາຍໆລ້ານໂດລາສະຫະລັດ ອີກເທື່ອໜຶ່ງ ຈາກຝ່າຍຂວາ, ອາເມລິກາ (CIA).

- ເຂົາເຈົ້າຈຶ່ງມີການວາງແຜນ ຄາດຕະກຳເພິ່ນ ໂດຍການສົ່ງທະຫານຂອງເຂົາໄປສັບປ່ຽນກັບທະຫານຍາມປ້ອງກັນຂອງເພິ່ນທີ່ເປັນ ຝ່າຍເປັນກາງເອງ. ຫລັງຈາກທີ່ເພິ່ນກັບຈາກໆໄນລ້ຽງຢູ່ພະລາດຊະວັງຫໍຄຳຕອນຄ່ຳ ເພິ່ນໄດ້ຖືກຄາດຕະກຳໂຫດ ໂດຍທະຫານປ້ອງກັນທີ່ມີຊື່ວ່າ "ທ້າວ ກອງ" ທີ່ບ້ານພັກຂອງເພິ່ນເອງ ພ້ອມກັນນັ້ນພັນລະຍາເພິ່ນກໍ່ໄດ້ຮັບບາດເຈັບສາຫັດ. ຫລັງຈາກມີການຄາດຕະກຳເກີດຂຶ້ນ ໜັງສືພິມວຽງຈັນໃໝ່ ທີ່ເປັນປາກກະບອກສຽງຂອງຝ່າຍຂວາ ໄດ້ອອກຂ່າວວ່າ: ການຄາດຕະກຳດັ່ງກ່າວ ແມ່ນຍ້ອນ ທ່ານ ກີນິມ ວາງແຜນເຮັດລັດຖະປະຫານ ໂດຍເພິ່ນຈະເປັນປະທານປະເທດ ແລ້ວໃຫ້ເຈົ້າສຸພານຸວົງ ເປັນນາຍົກ ໂດຍໃນໜັງສືພິມໄດ້ມີຂໍ້ຄວາມເປັນພາສາຈີນ ທີ່ເຂົາແອບອ້າງວ່າ ເປັນເນື້ອໃນຈາກຈົດໝາຍທີ່ ທ່ານ ກີນິມ ຂຽນເຖິງທູດຈີນ ເຊິ່ງໃນຄວາມເປັນຈິງແລ້ວ ເພິ່ນຂຽນພາສາຈີນບໍ່ເປັນ.

- ການສູນເສຍຊີວິດເພິ່ນໄດ້ກ້ອງກັງວານໄປທົ່ວປະເທດ ແລະ ທົ່ວໂລກ. ພວກຂ້າພະເຈົ້າຮູ້ສຶກເຈັບແຄ້ນແໜ້ນໃຈ ເໝືອນຟ້າຜ່າລົງມາໃສ່ຫົວໃຈ, ໂສກເສົ້າເສຍໃຈ ແລະ ຢ້ານກົວ. ຂ້າພະເຈົ້າພ້ອມລູກຫຼານຈຳນວນໜຶ່ງ ໄດ້ຂຶ້ນມາບວດ ແລະ ໄດ້ເຫັນການເຄື່ອນໄຫວຂອງ ຄູບາອາຈານ ຢູ່ວັດທາດຫຼວງ ທີ່ຮັກຫອມສັນຕິພາບ ໂດຍສະເພາະ ປະຊາຊົນ, ປັນຍາຊົນ ຜູ້ຮັກຫອມສັນຕິພາບ ແມ່ນໂສກເສົ້າເສຍໃຈ ແລະ ມີການເລົ່າກັນວ່າ "ສົງຄາມຈະເກີດຂຶ້ນອີກແລ້ວ".

- ທ່ານ ກີນິມ ພິລເສນາ ແມ່ນ "ບຸລຸດເຫຼັກ" ຍຶດໝັ້ນໃນອຸດົມການ ຕໍ່ສູ້ເພື່ອສັນຕິພາບ, ຄວາມເປັນເອກະລາດຂອງປະເທດຊາດ, ຄວາມຍຸດຕິທຳຂອງປະຊາຊົນບັນດາເຜົ່າຢ່າງແທ້ຈິງ.

- ເພິ່ນໄດ້ປະກອບສ່ວນຢ່າງໃຫຍ່ຫຼວງ ໃຫ້ແກ່ພາລະກິດ ປົດປ່ອຍຊາດ ຕ້ານຈັດກະພັດຜູ້ຮຸກຮານ.
- ເພິ່ນເປັນຜູ້ເຕົ້າໂຮມຄວາມສາມັກຄີພາຍໃນຕະກູນ ພົລເສນາ ແລະ ຄວາມສາມັກຄີກັບກຳລັງຮັກຊາດ ທີ່ແທ້ຈິງ ເພື່ອປົດປ່ອຍປະເທດຊາດ.
- ເພິ່ນມັກສິ່ງເສີມລູກຫຼານຜູ້ຮຽນດີຮຽນເກັ່ງມີຄຸນສົມບັດ ແລະ ສົ່ງເສີມ ນັກສຶກສາລາວ ໃຫ້ໄດ້ຮຽນຕໍ່ຢູ່ຕ່າງປະເທດສັງຄົມນິຍົມ ເພື່ອກັບມາປະ ກອບສ່ວນໃນການປົດປ່ອຍປະເທດຊາດ ແລະ ສ້າງສາປະເທດຊາດ.
- ເພິ່ນເຄີຍເວົ້າວ່າ ຢາກເອົາຊະນະສັດຕູໄດ້ນັ້ນ "ເຮົາຕ້ອງຕັ້ງໃຈຮໍ່າຮຽນ ໃຫ້ມີຄວາມຮູ້ ຄວາມສາມາດ, ຮຽນໃຫ້ເກັ່ງກວ່າເຂົາ ຈຶ່ງຊະນະເຂົາໄດ້".
- ການເສຍສະລະຂອງເພິ່ນ ໄດ້ກາຍເປັນຈຸດເຍືອງໄຟໃຫ້ແກ່ພີ່ນ້ອງລູກ ຫຼານໄດ້ເຕົ້າໂຮມກັນ ປະກອບສ່ວນເຂົ້າໃນພາລະກິດປົດປ່ອຍຊາດ, ປົກ ປັກຮັກສາ ແລະ ສ້າງສາປະເທດຊາດ ບໍ່ວ່າທາງກົງ ຫຼື ທາງອ້ອມ, ບໍ່ວ່າ ຢູ່ພາຍໃນ ຫຼື ຢູ່ຕ່າງປະເທດ.
- ເພິ່ນບໍ່ຢ້ານຕໍ່ການນາບຂູ່, ບໍ່ຍອມຖືກຊື້ຈ້າງຈອບອອຍ ເພື່ອທໍລະຍົດຕໍ່ ປະເທດຊາດ, ຕໍ່ປະຊາຊົນລາວ.
- ເພິ່ນບໍ່ຢ້ານຄວາມຕາຍ, ເພິ່ນເຄີຍເວົ້າວ່າ "ເຖິງມື້ນຶ່ງ ເພິ່ນຈະຖືກຄາດ ຕະກຳ ແຕ່ກໍຍັງມີລູກຫຼານນັກສຶກສາຮັກຊາດ ທີ່ເພິ່ນໄດ້ສົ່ງເສີມໄປຮຽນ ຢ່າງຫຼວງຫຼາຍທີ່ຕ່າງປະເທດນັ້ນ ຈະໄດ້ສືບຕໍ່ໃນພາລະກິດປົດປ່ອຍຊາດ ແລະ ພັດທະນາສ້າງປະເທດຊາດຕໍ່ໄປ" ອັນນີ້ແມ່ນ ສັດຈະທຳທີ່ເພິ່ນໄດ້ ເວົ້າໄວ້ ແລະ ກໍ່ແມ່ນຄວາມຈິງທີ່ຕາຍບໍ່ເປັນ.

ສົມແລ້ວທີ່ຂ້າພະເຈົ້າ ໄດ້ຟັງວິທະຍຸຈາກ ສ.ປ ຫວຽດນາມ ທີ່ວ່າເພິ່ນ ເປັນ **"ບຸລຸດເຫຼັກ"** ຂອງລາວ. ໃນເວລາ 50 ປີຜ່ານມາ ຍັງຊົງຈຳໃນສະໝອງ ຂອງຂ້າພະເຈົ້າ ເຊິ່ງເປັນໜຶ່ງໃນປັດໃຈ ທີ່ເຮັດໃຫ້ຂ້າພະເຈົ້າໄດ້ປະກອບ ສ່ວນເຂົ້າໃນພາລະກິດປະຕິວັດ ແລະ ໄດ້ຢູ່ໃນຄະນະນຳພາ ຂົນຂວາຍນັກ

ຮຽນຮູ້ ແລະ ປັນຍາຊົນ ກັບມາຮັບໃຊ້ປະເທດຊາດ, ຮັບໃຊ້ປະຊາຊົນ ບັນດາເຜົ່າ.

ຈາກ: ນ້ອງຊາຍ ສດຈ. ດຣ. ພອນເທບ ພິລເສນາ
ຄະນະປະຈຳສະພາແຫ່ງຊາດ
ປະທານກຳມາທິການ ວັດທະນະທຳ-ສັງຄົມ

“ອາໄລຮັກ ຍາລຸງ ກິນິມ ພິນເສນາ”

ໂດຍ ສັງທອງ ໄຊຍະລາດ

ຂ້າພະເຈົ້າ ຮູ້ຈັກກັບ ຍາລຸງ ກິນິມ ພິນເສນາ ແຕ່ສະໄໝຊຸມປີ 58, 59 ພຸ້ນ. ເວລານັ້ນ ຂ້າພະ ເຈົ້າເຮັດວຽກຢູ່ ບໍລິສັດ ໄພບູນ ສາຂາ ປາກເຊ.

ໃນບັ້ນເລືອກຕັ້ງເພີ່ມເຕີມ ປີ 1958, ຍາລຸງ ກິນິມ ມາເຮັດວຽກຢູ່ ປາກ ເຊ ແລະ ອັດຕະປື ເພື່ອໂຄສະນາຫາສຽງໃຫ້ພັກສັນຕິພາບເປັນກາງ ແລະ ແນວລາວຮັກຊາດ. ຂ້າພະເຈົ້າມັກຂັບລົດພາເພິ່ນໄປວຽກ.ມີຄັ້ງໜຶ່ງ, ຂ້າພະ ເຈົ້າຂັບລົດໂດຟິນຂອງ ບໍລິສັດ ໄພບູນ ພາຍາລຸງ ກິນິມ ໄປໂຄສະນາຫາ ສຽງຢູ່ ສະຜ່າຍດອນໂຄ. ຍາລຸງ ກິນິມ ນັ່ງຢູ່ເບາະຫຼັງ, ສ່ວນ ລຸງ ສີສະອາດ, ນ້ອງເຂີຍ ຂອງ ຍາປ້າ ໄພບູນ ພິນເສນາ ນັ່ງຢູ່ເບາະໜ້າຂ້າງຂ້າພະເຈົ້າທີ່ ເປັນຜູ້ຂັບລົດ. ເວລາກັບຈາກສະຜ່າຍ ຮອດຄ້າຍທະຫານ ໂພນສີໄຄ ຢູ່ໃກ້ ເດີ່ນບິນປາກເຊ, ຟ້າຢາກຄ່ຳແດ່ແລ້ວ, ທະຫານເອົາໄມ້ມາກັ້ນໄວ້ ບ່ໃຫ້ໄປຕໍ່ ເພາະໄດ້ຮັບຄຳສັ່ງຈາກ ພັນໂທ ຜາສຸກ. ເມື່ອເຫັນສະພາບຄືແນວນັ້ນ ຍາລຸງ ກິນິມ ຖາມ ຂ້າພະເຈົ້າວ່າ: ຊຽງ (ເພິ່ນມັກເອີ້ນ ຂ້າພະເຈົ້າແບບນີ້) ຮູ້ເຂົ້າບ່? ຂ້າພະເຈົ້າຕອບວ່າ: ຂ້ານ້ອຍຮູ້ຈັກກັບ ຮ້ອຍເອກ ຄຳໃບ ທີ່ເປັນຫົວໜ້າຢູ່ ຄ້າຍນີ້. ຍາລຸງ ກິນິມ ເລີຍໃຫ້ລົງໄປເວົ້ານຳ ຮ້ອຍເອກ ຄຳໃບ ເພື່ອຂໍກັບປາກ ເຊ. ສຸດທ້າຍທະຫານກໍ່ຍອມເປີດທາງໃຫ້. ຫຼັງຈາກນັ້ນບ່ດົນ, ພວກທະຫານ ກໍ່ມາຈັບຂ້າພະເຈົ້າ ພ້ອມທັງ ທ່ານ ຕ່ອນ ພິນເສນາ ແລະ ທ່ານ ສະຫວ່າງ ຈັນເທພາ ຊຶ່ງເປັນຜູ້ຊ່ວຍວຽກ ທີ່ໃກ້ຊິດຂອງ ຍາລຸງ ກິນິມ ເພາະພວກເຂົາ

ຖືວ່າ ເປັນພວກທີ່ພາ ຍາລຸງ ກິນິມ ໄປຕິດຕໍ່ກັບແນວລາວຮັກຊາດ. ພວກເຂົາ ເອົາໄປກັກຂັງ 7-8 ມື້ ຈຶ່ງປ່ອຍພວກຂ້າພະເຈົ້າອອກຈາກຄຸກ.

ຂ້າພະເຈົ້າຍັງຈື່ວ່າ ເວລາທີ່ ທ່ານ ຖາວອນ ສີຈະເລີນ, ພະນັກງານ ຂອງແນວລາວຮັກຊາດ ນອນ ໂຮງໝໍຢູ່ປາກເຊ, ຍາລຸງ ກິນິມ ໃຫ້ຂ້າພະເຈົ້າ ພາເພິ່ນໄປຢາມ ທ່ານ ຖາວອນ. ຕໍ່ມາໄດ້ຍິນວ່າ ພາຍຫຼັງ ຍາລຸງ ກິນິມ ອອກ ຫວິດຈາກຫ້ອງນອນຂອງ ທ່ານ ຖາວອນ, ພວກທະຫານກໍ່ເຂົ້າມາກວດຫ້ອງ ຂອງ ທ່ານ ຖາວອນ ແລ້ວຄົ້ນທຸກຈອກທຸກແຈ, ເພາະເຂົາສົງໄສວ່າ ຍາລຸງ ກິນິມ ມາສົ່ງຂ່າວຄາວ ຫຼື ເອກະສານລັບໃດໜຶ່ງໃຫ້ແນວລາວຮັກຊາດ. ຕໍ່ສະ ພາບການດັ່ງກ່າວ, ທາງແນວລາວຮັກຊາດ ເລີຍເອົາ ທ່ານ ຖາວອນ ອອກ ມາໄວ້ປ່າກ້ວຍຢູ່ເຮືອນຂອງ ລຸງ ສີສະອາດ ທີ່ເປັນນ້ອງເຂີຍຂອງ ປ້າ ໄພບູນ ພົນເສນາ, ພັນລະຍາ ຂອງ ຍາລຸງ ກິນິມ. ໃນໜຶ່ງໂມງຂ້ອນແຈ້ງຂອງວັນຕໍ່ ມາ, ມີລົດຈີບທະຫານຄັນໜຶ່ງ ແລ່ນເຂົ້າມາໜ້າເຮືອນ, ຈາກນັ້ນມີ ທະຫານ ປະຕິການຜູ້ໜຶ່ງ ເອີ້ນໃຫ້ໄຂປະຕູ. ພວກຂ້າພະເຈົ້າໄປຈອບສ່ອງເບິ່ງ ຈຶ່ງເຫັນວ່າແມ່ນ ທະຫານແນວລາວຮັກຊາດທີ່ປອມເປັນທະຫານປະຕິການ ພາ ທ່ານ ສີທົນ ກົມມະດຳ ມາຮັບເອົາ ທ່ານ ຖາວອນ ສີຈະເລີນ. ນັ້ນແມ່ນ ຄັ້ງທຳອິດ ທີ່ຂ້າພະເຈົ້າໄດ້ພົບ ທ່ານ ສີທົນ ກົມມະດຳ.

ຫຼັງຈາກເຫດການດັ່ງກ່າວ, ພວກ ທ້າວ ທອງພູນ ຢູ່ກົມປະສານງານ ກໍ່ເອົາຂ້າພະເຈົ້າໄປສືບ ສວນຫຼາຍຄັ້ງ, ທັງຂູ່ຈະຈັບຂ້າພະເຈົ້າອີກ, ເພາະ ພວກເຂົາຖືວ່າ ຂ້າພະເຈົ້າເປັນຄົນທີ່ ຍາລຸງ ກິນິມ ສ້າງເປັນນັກສືບສອດ ແນມໃຫ້ເພິ່ນ.

ເມື່ອສັດຕູເຫັນວ່າ ຍາລຸງ ກິນິມ ຍັງສືບຕໍ່ເຄື່ອນໄຫວຕໍ່ສູ້ຕ້ານກັບ ພວກເຂົາ, ເພື່ອເປັນການນາບຂູ່ເພິ່ນ, ພວກເຂົາຈຶ່ງໄດ້ ຄາດຕະກຳ ລຸງ ສີສະ ອາດ ຢ່າງໂຫດຫ້ຽມໃນວັນທີ 18 ເດືອນ 11 ປີ 1960, ເພາະ ລຸງ ສີສະອາດ ເປັນສະມາຊິກຂອງ ພັກສັນຕິພາບເປັນກາງ ທີ່ໄດ້ສະໜັບສະໜູນແນວທາງ

ຂອງ ພັກ ຢ່າງ ຕັ້ງ ໜ້າ.

ຕາມ ໄດ້ ຍິນ ປ້າ ບຸນ ລັດ, ພັນ ລະ ຍາ ຂອງ ລຸງ ສີ ສະ ອາດ ເລົ່າ ໃຫ້ ຟັງ ວ່າ ກ່ອນ ເວລາ ເກີດ ເຫດ ຮ້າຍ ນັ້ນ, ລຸງ ສີ ສະ ອາດ ແລະ ຄອບ ຄົວ ຫາ ກໍ່ ກິນ ເຂົ້າ ແລງ ແລ້ວ, ເພິ່ນ ຈຶ່ງ ເອີ້ນ ລູກ ມາ ຮຽນ ໜັງ ສື. ໃນ ຂະ ນະ ທີ່ ລູກໆ ຂອງ ເພິ່ນ ພວມ ຍ່າງ ມາ ຫາ ພໍ່ ເພື່ອ ນັ່ງ ລົງ ຮຽນ ໜັງ ສື ຂ້າງ ພໍ່, ລຸງ ສີ ສະ ອາດ ພວມ ກົ້ມ ລົງ ໄຂ ຕູ້ ເພື່ອ ເອົາ ປຶ້ມ ອອກ ມາ ພາ ລູກ ຮຽນ ໜັງ ສື, ພໍ ດີ ແນມ ເຫັນ ມີ ກ້ອນ ມົນໆ ໃດ ໜຶ່ງ ຖືກ ແກ່ວ ງ ເຂົ້າ ມາ ຜ່ານ ປະ ຕູ ເຫຼັກ ໜ້າ ບ້ານ ທີ່ ໄຂ ແງ້ ບ ແງ ຢູ່, ລຸງ ສີ ສະ ອາດ ທັນ ເວົ້າ ແຕ່ ວ່າ ບໍ່ ແມ່ນ ລູກ ແຕກ ຫວາ? ກໍ່ ພໍ ດີ ມີ ສຽງ ລູກ ແຕກ ແຕກ ຂຶ້ນ ແລ້ວ ລຸງ ສີ ສະ ອາດ ກໍ່ ລົ້ມ ລົງ ເສຍ ຊີ ວິດ ທັນ ທີ.

ເວລາ ໄດ້ ຍິນ ສຽງ ລະ ເບີດ ແຕກ, ຂ້າ ພະ ເຈົ້າ ຍັງ ໄປ ກິນ ເຂົ້າ ຢູ່ ເຮືອນ ໝູ່ ທີ່ ບໍ່ ໄກ ກັບ ເຮືອນ ລຸງ ສີ ສະ ອາດ ປານ ໃດ. ເມື່ອ ສຽງ ລູກ ແຕກ ດັງ ຂຶ້ນ, ຜູ້ ຄົນ ທັງ ຫຼາຍ ກໍ່ ແຕກ ຕື່ນ ແລະ ແລ່ນ ໄປ ເບິ່ງ. ຂ້າ ພະ ເຈົ້າ ຟ້າວ ແລ່ນ ກັບ ມາ ເຮືອນ ລຸງ ສີ ສະ ອາດ ເພື່ອ ເອົາ ລູກ ຂອງ ເພິ່ນ ຄື ທ້າວ ວິ ເສດ, ທ້າວ ຕູ ຍ ແລະ ທ້າວ ອ໋ອດ ທີ່ ບາດ ເຈັບ ໄປ ໂຮງ ໝໍ. ທ້າວ ອ໋ອດ ເຈັບ ໜັກ ກວ່າ ໝູ່, ເຖິງ ປັດ ຈຸ ບັນ ນີ້ ຍັງ ເສຍ ອົງ ຄະ ຢູ່ ຂາ. ຖ້າ ພວກ ຫຼານ ຫາ ກ ຍ່າງ ໄປ ຮອດ ບ່ອນ ຮຽນ ໜັງ ສື ກັບ ພໍ່ ຄົງ ຈະ ເສຍ ຊີ ວິດ ພ້ອມ ດຽວ ກັບ ພໍ່ ໝົດ. ຄິດ ຄືນ ມາ ແລ້ວ ຈັ່ງ ແມ່ນ ເປັນ ໜ້າ ເສົ້າ ສະ ຫຼົດ ໃຈ ແທ້.

ຍາ ລຸງ ກີ ນິມ ໄດ້ ປະ ນາ ມ ການ ກະ ທຳ ທີ່ ໂຫດ ຮ້າຍ ຂອງ ພວກ ສັດ ຕູ. ເມື່ອ ການ ນາ ບ ຊູ ເພິ່ນ ບໍ່ ໄດ້ ຜົນ, ໃນ ທີ່ ສຸດ ສັດ ຕູ ກໍ່ ຄາດ ຕະ ກຳ ຍາ ລຸງ ກີ ນິມ ຢ່າງ ໂຫດ ຮ້າຍ ສາ ມານ ໃນ ວັນ ທີ 1 ເດືອນ 4 ປີ 1963. ຂ້າ ພະ ເຈົ້າ ຮູ້ ສຶກ ເຈັບ ແຄ້ນ ແໜ້ນ ໃຈ ທີ່ ບໍ່ ສາ ມາດ ປ້ອງ ກັນ ຍາ ລຸງ ກີ ນິມ ໃຫ້ ພົ້ນ ຈາ ກ ເງື້ອມ ມື ຂອງ ພວກ ຄາດ ຕະ ກອນ ໂຫດ ນັ້ນ ໄດ້, ເພາະ ຜ່ານ ມາ ມີ ຫຼາຍ ຄັ້ງ ທີ່ ສະ ພາບ ການ ເຄັ່ງ ຕຶງ, ເຂົາ ເຈົ້າ ຈະ ມັກ ເວົ້າ ກັນ ໃນ ຫ້ອງ ການ ປະ ສານ ງານ ວ່າ: "ໄປ ຕະ ຫຼາດ ເຊົ້າ" ຊຶ່ງ ຮູ້ ໄດ້ ໂລດ ວ່າ ແມ່ນ ໄປ ເຮືອນ ຍາ ລຸງ ກີ ນິມ; ອັນ ນີ້ ແມ່ນ ພີ່ ນ້ອງ ຂອງ

ຂ້າພະເຈົ້າຄື ຮ້ອຍເອກ ຄຳສິງ ສຸຂະເສີມ ແລະ ພັນໂທ ອະລິຍາ ພິມມະສອນ ມັກເຕືອນໃຫ້ຮູ້, ແລ້ວຂ້າພະເຈົ້າ ກໍ່ລາຍໆານໃຫ້ ຍາລຸງ ກິນິມ.

ມື້ເພິ່ນຖືກຄາດຕະກຳນັ້ນ, ເພິ່ນໄດ້ໃຫ້ ທ້າວ ຝັ້ນ ຄົນຂັບລົດຂອງເພິ່ນ ໄປເອີ້ນ ບັນດາຜູ້ຊ່ວຍວຸງກຂອງເພິ່ນມາຫາຢູ່ເຮືອນຂອງເພິ່ນ, ເຊິ່ງມີ ທ່ານ ສຸບັນ ສະລິດທິລາດ, ທ່ານ ຈັນສະໝອນ ວົງສະຜ່ານ, ທ່ານ ສຸລິວົງ ພະໄຊ ສິດທິເດດ, ທ່ານ ມະໄລຄຳ, ທ່ານ ສີມອນ ແລະ ຂ້າພະເຈົ້າ. ຍາລຸງ ກິນິມ ວ່າ ເພິ່ນໄດ້ຮັບເຈ້ຍນ້ອຍ ທີ່ມີຄົນເອົາມາປະໄວ້ເຮືອນ ແລະ ເຕືອນບໍ່ໃຫ້ອອກ ໄປໃສ ເພາະວ່າ ຈະມີການຂ້າຄົນ! ຍາລຸງ ກິນິມ ເລີຍເຕືອນພວກຂ້າພະເຈົ້າ ວ່າ ໃນມື້ນີ້ບໍ່ໃຫ້ອອກໄປໃສ ລໍຟັງສະພາບກ່ອນ, ເຮົາຈະໄປໆານລ້ຽງຮັບຮອງ ຂອງ ເຈົ້າຊີວິດ ກໍ່ຈະຟ້າວກັບ.

ແຕ່ສຸດທ້າຍເລື່ອງທີ່ເສົ້າສະຫຼົດໃຈກໍ່ເກີດຂຶ້ນ, ຍາລຸງ ກິນິມ ໄດ້ເສຍຊີ ວິດ, ຍາປ້າ ໄພບູນ ຖືກຍິງບາດເຈັບສາຫັດ ແລະ ໄດ້ຍ້າຍຈາກເຮືອນຂອງ ເພິ່ນ ໄປພັກເຊົ່າຢູ່ເຮືອນຂອງ ທ່ານ ພູມີ ວົງວິຈິດ. ໃນມື້ຕໍ່ມາ, ພວກສັດຕູ ກໍ່ເອົາລົດຖັງ ມາອ້ອມເຮືອນ ທ່ານ ພູມີ ວົງວິຈິດ ເພື່ອຊ່ຂວັນ. ເວລານັ້ນ ທ່ານ ໂປ້ ໂພທິສັກ ແລະ ທ່ານ ປະເສີດ ຈາກສຳນັກແນວລາວຮັກຊາດ ກໍ່ໄດ້ອອກ ໄປເວົ້ານຳພວກທະຫານ ບໍ່ໃຫ້ມາກຸກວນ, ເຂົາຈຶ່ງບໍ່ໄດ້ບຸກເຂົ້າມາໃນເຮືອນ.

ຕໍ່ມາ ຍາປ້າ ໄພບູນ ໄດ້ໄປປິ່ນປົວຢູ່ ສ.ປ. ຈີນ ແລະ ສ.ປ. ຫວຽດນາມ ແລ້ວ ກັບໄປເຂດປົດປ່ອຍ. ຂ້າພະເຈົ້າກໍ່ໄດ້ແຕ່ງງານກັບ ນາງ ບຸນລິດ ຈະເລີນຊັບ, ນ້ອງສາວຂອງ ຍາປ້າ ໄພບູນ ແລະ ພວກຂ້າພະເຈົ້າ ເອົາ ພໍ່ເຖົ້າ ແດງພັນ ຈາກເມືອງ ຈຳປາສັກ ມາຢູ່ນຳຈີນເຖິງນາທີສຸດທ້າຍແຫ່ງລົມຫາຍ ໃຈຂອງເພິ່ນ. ເວລາໄປສົ່ງສະການເພິ່ນ, ບັນດາສະຖານທູດຂອງ ປະເທດ ສັງຄົມນິຍົມເຊັ່ນ: ອະດີດສະຫະພາບໂຊຫວຽດ, ສ.ປ. ຈີນ, ສ.ປ. ຫວຽດນາມ ແລະ ໂປໂລຍ ກໍ່ໄດ້ສົ່ງພວງມາລາມາໄວ້ອາໄລເຖິງດວງວິນຍານຂອງ ພໍ່ເຖົ້າ ແດງພັນ ໂດຍ ຍາລຸງ ກິນິມ ປັນລູກເຂີຍຂອງເພິ່ນ.

ເຖິງແມ່ນວ່າ ຍາລຸງ ກິນິມ ໄດ້ເສຍຊີວິດໄປແລ້ວ ແລະ ຍາປ້າ ກໍ່ຢູ່ເຂດປົດປ່ອຍ, ແຕ່ພວກຂ້າພະເຈົ້າ ຍັງສືບຕໍ່ພົວພັນນຳເພິ່ນທາງຈົດໝາຍ ໂດຍແມ່ນພະນັກງານຂອງແນວລາວຮັກຊາດເປັນຜູ້ສົ່ງໃຫ້. ຮ້ານ ຂາຍຢາ ສົມບູນ ໂອສົດ ຂອງພວກຂ້າພະເຈົ້າ ກໍເປັນບ່ອນຕິດຕໍ່ພົວພັນ ລະຫວ່າງ ກຳລັງແນວລາວຮັກຊາດ ກັບ ຜູ້ຮັກຊາດ ຢູ່ເຂດຕົວເມືອງວຽງຈັນ. ພວກຂ້າພະເຈົ້າ ຍັງສືບຕໍ່ຂາຍຢາໃຫ້ ແນວລາວຮັກຊາດ, ຫຼາຍເທື່ອກໍ່ສັ່ງຊື້ປຶ້ມ ໃຫ້ ທ່ານ ປະທານ ສຸພານຸວົງ ອ່ານ ຕາມບັນຊີທີ່ເພິ່ນຝາກມາໃຫ້. ຫຼາຍເທື່ອກໍ່ມອບຢາກິນ ບໍ່ເກັບເງິນໃຫ້ກຳລັງແນວລາວຮັກຊາດ ຄືດັ່ງສະໄໝ ຍາລຸງ ກິນິມ ຢູ່ໃນສຳນັກ ລັດຖະບານເປັນກາງ ຢູ່ຄັງໄຂ, ເພິ່ນກໍ່ສັ່ງໃຫ້ ພວກຂ້າພະເຈົ້າ ໄປຊື້ວິທະຍຸ, ຈັກພິມດີດ ແລະ ຢາປົວພະຍາດ ເພື່ອໃຫ້ອ້າຍນ້ອງ ແນວລາວຮັກຊາດມາເອົາໄປຝາກໃຫ້ເພິ່ນ.

ເຖິງວ່າ ຍາລຸງ ກິນິມ ໄດ້ລ່ວງລັບໄປແລ້ວ 50 ປີ, ຍາປ້າ ໄພບູນ ກໍເສຍຊີວິດໄດ້ 2 ປີ ແລ້ວ, ແຕ່ພວກຂ້າພະເຈົ້າ ຍັງຄົງເຄົາລົບ, ນັບຖືພວກເພິ່ນ ທີ່ເປັນຄົນຮັກຊາດ, ຮັກປະຊາຊົນ ແລະ ເຮັດວຽກເພື່ອປະເທດຊາດຢ່າງ ແທ້ຈິງ. ພວກຂ້າພະເຈົ້າ ຂໍວິງວອນໃຫ້ດວງວິນຍານຂອງພວກເພິ່ນທັງສອງ ຈົ່ງໄປສູ່ສຸຂະຕິເຖີດ.

(ໝາຍເຫດ: ທ່ານ ສັງທອງ ໄຊຍະລາດ ເປັນລູກຊາຍຂອງ ພໍ່ເຖົ້າ ຈາມນາກ ທີ່ມີຊື່ປະຕິວັດຄື ພໍ່ເຖົ້າ ປະເສີດ "ຄໍລາຍ" ຍ້ອນເພິ່ນສັກລາຍໝຶດໂຕ. ເດີມ ເປັນທະຫານຂອງຝຣັ່ງ ແຕ່ຍ້ອນຜິດກັບຝຣັ່ງ ແລ້ວຂ້າຝຣັ່ງ ຈຶ່ງນຳເອົາລູກ ນ້ອງ 30 ຄົນ ຫັນທິດໄປຫາແນວລາວຮັກຊາດ ແຕ່ປີ 1948. ຕໍ່ມາເພິ່ນເຮັດ ວຽກປິດລັບພາຍໃຕ້ການຊີ້ນຳຂອງ ທ່ານ ສາລີ ວົງຄຳຊາວ. ເພິ່ນໄດ້ເສຍຊີ ວິດຢູ່ ເມືອງ ສັງທອງ ໃນປີ 1973).

จากบิดบาด “*ເຂີຍນ້ອຍ ທີ່ເອີ້ນຢອກຫຼີ້ນ*”ກາຍມາເປັນ “*ເຂີຍແທ້ ຂອງພໍ່ເຖົ້າທີ່ເຄົາຣົບຮັກ*”

ໂດຍ ສຈ ດາລັດ ບຸບຜາ, ກຳມະການ
ໃນສະພາມະຫາວິທະຍາໄລແຫ່ງຊາດ,
ອາຈານສອນໂຄງການປະລິນຍາໂທ, ອະດີດ
ກຳມະການປົກຄອງແຂວງແຂວງຫຼວງພະບາງ,
ຫົວໜ້າພະແນກການເງິນແຂວງແຂວງຫຼວງພະບາງ, ອະດີດຫົວໜ້າກົມ ບັນຊີ
ກະຊວງການເງິນ, ອະດີດຫົວໜ້າກົມກວດສອບໂຄງການອົງການກວດສອບແຫ່ງລັດ

ຫວນຄືນຫຼັງຄວາມຊົງຈຳຕ່າງໆບົນພື້ນຖານເຫດການປະຫວັດສາດ ເມື່ອຍັງເຍົາໄວ, ແລະ ດ້ານໜຶ່ງອີກ ຕາມການບອກເລົ່າຈາກແຫຼ່ງທີ່ໜ້າເຊື່ອຖືຂອງພໍ່ຄຳເພັງ ບຸບຜາ[1],ທີ່ເຄີຍເປັນເພື່ອນຮ່ວມງານລຸ້ນນ້ອງກັບພໍ່ເຖົ້າກິນິມ ພົນເສນາ ໃນຂະບວນການຕໍ່ສູ້ເພື່ອສັນຕິພາບ ແລະ ຄວາມປອງດອງຊາດ ແລະ ກາຍມາເປັນພໍ່ດອງຕາມຫຼັງ, ຕະຫຼອດເຖິງການຕິດຕາມຂໍ້ມູນຂ່າວສານ ກ່ຽວກັບ ຊື່ສຽງຮຽງນາມຂອງພໍ່ເຖົ້າກິນິມ ພົນເສນາຢູ່ພາຍໃນປະເທດ ກໍຄືຢູ່ພາກພື້ນ ແລະ ສາກົນ, ໂດຍສະເພາະ ເນື້ອໃນຄຳອົບຮົມສັ່ງສອນ ອັນລ້ຳຄ່າ ແລະ ທີ່ຍັງສະສົມຄວາມເຂັ້ມຂຸ້ນ ແລະ ຄວາມປະເສີດເລີດລ້ຳ ທາງດ້ານຄຸນຄ່າປະຫວັດສາດນັ້ນ ລ້ວນແຕ່ເປັນແຮງບັນດານໃຈເຮັດໃຫ້ຂ້າພະເຈົ້າຂໍອະນຸຍາດສະແດງບາງຄຳເຫັນຊຶ່ງບໍ່ເຄີຍໄດ້ມີໂອກາດ ແລະ ຈະບໍ່ມີໂອກາດເວົ້າວ່າໂດຍກົງກັບພໍ່ເຖົ້າທີ່ເຄົາລົບຮັກເລີຍ ແລະ ຂໍຖືເອົາເປັນສ່ວນໜຶ່ງຂອງຄວາມຊົງຈຳອັນເລັກນ້ອຍນີ້ເພື່ອລະນຶກເຖິງວັນຄົບຮອບຫ້າສິບປີ ແຫ່ງການເສຍສະຫຼະອຸທິດເລືອດເນື້ອເພື່ອປະເທດຊາດຂອງພໍ່ເຖົ້າ

---

[1] ພໍ່ຄຳເພັງ ບຸບຜາ ເປັນສ່ຽວກັບ ທ່ານ ໄກສອນ ພົມວິຫານ ຄືເກີດໃນປີ 1920;

ກິນິມພິນເສນາ ໃນຖານະເຂີຍນ້ອຍ ທີ່ທ່ານເຄີຍເອີ້ນຢອກຫຼີ້ນເມື່ອກ່ອນ ຈົນ ກາຍມາເປັນເຂີຍແທ້ຂອງພໍ່ເຖົ້າທີ່ເຄົາຣົບຮັກ ແລະ ທີ່ຍັງຄົງສືບຕໍ່ເອກອ້າງ ທີ່ມີພໍ່ເຖົ້າທີ່ເຄົາລົບຮັກເປັນແບບຢ່າງໃຫ້ລູກຫຼານສືບທອດ ໃນການຜັນຂະ ຫຍາຍ ແລະ ປະຕິບັດສິດ ແລະ ໜ້າທີ່ຂອງພະນັກງານສະມາຊິກພັກອາວຸໂສ ໃນໄລຍະປັດຈຸບັນ.

ໃນວັນທີ 10 ທັນວາ ປີ 1960, ພາຍຫຼັງທີ່ໄດ້ຕິດຕາມຄອບຄົວ[2]ໄປ ນະຄອນຢາງກຸ້ງ, ປະເທດພະມ້າ ແລະ ໄດ້ພັກຢູ່ຫັ້ນເປັນເວລາສາມເດືອນ. ເວລານັ້ນ, ໄດ້ແຕ່ຕິດຕາມບັ້ນລົບວຽງຈັນ ທາງວິທະຍຸ, ສົງຄາມກາງເມືອງ ໄດ້ເກີດຂຶ້ນແລ້ວ, ການຕໍ່ສູ້ຍັງຄົງຈະຍືດເຍື້ອຍາວນານ ແລະ ກໍຮູ້ສຶກວ່າ ຍັງ ອີກດົນຢູ່ຈຶ່ງຈະໄດ້ກັບຄືນສູ່ວຽງຈັນ[3]. ຫຼັງຈາກນັ້ນໄດ້ເດີນທາງຜ່ານຄຸນມິງ ໄປນະຄອນຫຼວງຮາໂນຍ ແລະ ພັກຢູ່ຫັ້ນ[4] ເປັນເວລາ 1ເດືອນ ແລ້ວຈຶ່ງໄປ ຝົ່ງສາລີເໜືອ ຜ່ານດຽນບຽນຟູ.

ໃນວັນທີ 12 ທັນວາ ປີ 1960, ພາຍຫຼັງທີ່ຄອບຄົວພິນເສນາ, ຄອບຄົວ ສີສະເຫຼີມສັກ ແລະນັກການເມືອງຝ່າຍເປັນກາງຈຳນວນໜຶ່ງ ໄດ້ໄປລີ້ໄພ ທີ່ພະນົມເປັນໄລຍະໜຶ່ງກໍເດີນທາງໄປນະຄອນຫຼວງຮາໂນຍ ແລະ ພັກຢູ່ຫັ້ນ ໄລຍະໜຶ່ງແລ້ວ ຕາມຫຼັງລູກຫຼານຂອງພວກເພິ່ນຈຶ່ງຖືກສົ່ງໄປຮຽນ ທີ່ປະ ເທດຈີນ ແລະ ສ່ວນໜຶ່ງທີ່ອະດີດສະຫະພາບໂຊວຽດ.

ໃນໄລຍະເວລາຢູ່ນະຄອນຫຼວງຮາໂນຍນັ້ນເອງ, ພວກຂ້າພະເຈົ້າກໍ ໄດ້ມີໂອກາດລົ້ງແກ່ນກັບຄອບຄົວພິນເສນາ, ລູກໆຂອງທ່ານກິນິມ ພິນເສ

---

[2]ມີຄອບຄົວ ທ່ານ ຄຳສຸກ ແກ້ວລາ, ນ້ອງຍ່າຄຳຊາວ ແກ້ວລາ, ຊຶ່ງພວກຂ້າພະເຈົ້າເອີ້ນວ່າ ຫົວຕາຄຳສຸກ;

[3]ໃນຕົວຈິງ ໃນກາງປີ 1962 ພູ້ນຈຶ່ງໄດ້ເດີນທາງກັບຄືນສູ່ວຽງຈັນ;

[4]ພັກທີ່ໂຮງແຮມ ເມໂຕໂປນ (Metropole)ດຽວນີ້ ກາຍເປັນໂຮງແຮມຫົງຍິດ

[5]ຊຶ່ງພັກທີ່ຫໍພັກລັດຖະບານ ກ່ອນຈະຍ້າຍໄປຢູ່ບ້ານພັກແຫ່ງໜຶ່ງຄຸ້ມກວາງຈູ ຊຶ່ງຫ່າງໄກ ຈາກໂຮງແຮມປະມານ 2 ຫຼັກ ຊຶ່ງປັດຈຸບັນນີ້ ແມ່ນສະຖານທູດລາວນັ້ນເອງ.

ນາ, ຊຶ່ງລຸ້ນເອື້ອຍກໍຮູ້ກັນມາກ່ອນແຕ່ຕອນຢູ່ວຽງຈັນພູ້ນ. ໄດ້ຫຼິ້ນນຳກັນເປັນປະຈຳ ເຊັ່ນໝາກລີ້, ໝາກຕີ່, ທວາຍກັນ ແລະ ຢອກໃຍກັນຕາມພາສາເດັກນ້ອຍ.

ນອກນັ້ນ, ກໍຍັງໄດ້ມີໂອກາດໄປຢ້ຽມຢາມສະຖານທີ່ຕ່າງໆ ເຊັ່ນຫໍພິພິດຕະພັນທະຫານ, ງານສະແດງສິນລະປະວັນນະຄະດີ ເວລາຮັບຕ້ອນການນຳຝ່າຍເປັນກາງ ແລະ ແນວລາວຮັກຊາດ ໂດຍມີທ່ານນາຍົກຟາມ ວັນດີງໃຫ້ກຽດເຂົ້າຮ່ວມຮັບຕ້ອນເຈົ້າສຸວັນນະພູມາ, ເຈົ້າສຸພານຸວົງ, ທ່ານ ກີນີມ ພົນເສນາ, ພໍ່ຂອງຂ້າພະເຈົ້າ, ທ່ານຄຳເພັງ ບຸບຜາ ແລະ ບຸກຄົນທີ່ສຳຄັນອື່ນໆ ຊຶ່ງປາກົດເຫັນບາງຄັ້ງຄາວ ແລະ ໄປຜ່ານດຽນບຽນຟູຫ້ວງຂາໄປ ແລະ ຂາກັບ ໃນຕົ້ນ ແລະ ກາງປີ 1961, ທັງໝົດລ້ວນແລ້ວແຕ່ເປັນບັນຍາກາດປຸກລະດົມມູນເຊື້ອການຕໍ່ສູ້ປະຕິວັດອັນພິລະອາດຫານຂອງກອງທັບ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ໃຫ້ແກ່ຜູ້ທີ່ເຂົ້າຮ່ວມຊົມທຸກຮຸ້ນຄົນ, ຈຶ່ງເຮັດໃຫ້ເວົ້າໄດ້ຢ່າງໝົດຈົດໝົດໃຈວ່າ ນັບແຕ່ເວລາຍັງນ້ອຍ ເສັ້ນທາງການຕິດຕາມຄອບຄົວທີ່ໄດ້ມີສ່ວນຮ່ວມໃນຂະບວນການປະຕິວັດຊາດ ປະຊາທິປະໄຕຂອງລາວໄດ້ເຮັດໃຫ້ຫຼາຍຄົນລິເລີ່ມປູກຈິດສຳນຶກມານະຈິດປະຕິວັດ, ນ້ຳໃຈຄຽດແຄ້ນຕໍ່ ຄວາມຮ້າຍກາດ ແລະ ໂຫດຫ້ຽມຂອງສັດຕູຜູ້ຮຸກຮານແຕ່ລະສະໄໝ ນັບແຕ່ເວລານັ້ນມາ. ມີເທື່ອໜຶ່ງໄດ້ຍິນຂ່າວວ່າ ທ່ານ ປະທານ ໂຮຈິມິນ ໄປຢ້ຽມຢາມ ຫໍພັກລັດຖະບານ, ພວກຂ້າພະເຈົ້າພາກັນແລ່ນຈາກໂຮງແຮມເພື່ອຈະໄປເບິ່ງ ແຕ່ໜ້າເສງດາຍບໍ່ທັນຊ້ຳ.

ໃນໄລຍະອັນສັ້ນໆ ທີ່ເວລາພັກຢູ່ຜິ້ງສາລີ, ເຖິງແມ່ນວ່າພວກ ຂ້າພະເຈົ້າຈະຈົບໂຮງຮຽນປະຖົມ ແລ້ວກໍຕາມ, ພໍ່ຄຳເພັງ ກໍຍັງໃຫ້ໄປຮຽນຕື່ມທີ່ຊັ້ນ ປ 6 ຢູ່ໂຮງຮຽນປະຖົມ ແລະ ກໍມີໂອກາດລົ້ງແກ່ວນກັບໝູ່ເພື່ອນຫຼາຍ

ຄົນ[6], ແລະ ພ້ອມກັນນັ້ນ ກໍໄດ້ມີໂອກາດສໍາພັດກັບຊີວິດການເປັນຢູ່ ຂອງພໍ່ແມ່ພີ່ນ້ອງໃນເຂດພູດອຍຢູ່ເຂດທີ່ໜາວສົມຄວນຊຶ່ງໃນຕອນເຊົ້າເບິ່ງໄລຍະຫ້າແມັດແມ່ນແນມບໍ່ເຫັນໜ້າກັນຊໍ້າ, ໜາວຫຼາຍຈົນໄດ້ເອົາຖ່ານໃສ່ກະປ໋ອງນໍ້ານົມໄປດັງຝັງນໍາ.

ໃນເດືອນມິຖຸນາ ປີ 1961, ເວລາສະເດັດເຈົ້າສຸວັນນະພູມາ ແລະ ສະເດັດເຈົ້າສຸພານຸວົງ ພ້ອມດ້ວຍທ່ານກໍານົມພົນເສນາ ແລະ ຄະນະ ໄປຢ້ຽມຢາມ ຜົ້ງສາລີ, ເວລານັ້ນ ພໍ່ຄໍາເພັງກໍເປັນຜູ້ຕາງໜ້າ ລັດຖະບານປະຈໍາພາກເໜືອ ຊຶ່ງພະນັກງານ, ພໍ່ແມ່ປະຊາຊົນແລະ ນັກຮຽນໄດ້ໄປເຕົ້າໂຮມກັນຢູ່ເດີ່ນບິນໃຫ້ການຮັບຕ້ອນຢ່າງອົບອຸ່ນ. ພໍ່ຄໍາເພັງ ກໍໄດ້ຝາກຝັງລູກໆ ນໍາສະເດັດ ແລະ ຄະນະເພື່ອໃຫ້ມີໂອກາດໄດ້ໄປສຶກສາຕໍ່ຂັ້ນມັດທະຍົມທີ່ພະນົມເປັນ, ຊຶ່ງໃນເວລານັ້ນ ກໍໄດ້ຮັບຊາບ ວ່າລູກຫຼານຄອບຄົວພົນເສນາ, ຄອບຄົວແກ້ວລາ ແລະ ຄອບຄົວສີສະເຫຼີມສັກສ່ວນໜຶ່ງ ກໍໄດ້ໄປຮຽນຢູ່ສປຈີນ ແລະ ອີກສ່ວນໜຶ່ງໄປຮຽນທີ່ອະດີດສະຫະພາບໂຊວຽດແລ້ວ. ພໍ່ຄໍາເພັງເອງ ກໍໄດ້ທາບທາມຂ້າພະເຈົ້າຢູ່ວ່າອາດຈະໃຫ້ໄປຮຽນຕໍ່ຢູ່ຈີນ, ແຕ່ຫາກໜາວໃດ, ຢູ່ປັກກິ່ງຍາມໜາວກໍເປັນນໍ້າກ້ອນໝົດ, ແຕ່ຂ້າພະເຈົ້າກໍໄດ້ສະເໜີຄືນວ່າ ແຕ່ຢູ່ຜົ້ງສາຫຼີກໍຢູ່ຍາກຢູ່ແລ້ວ, ຖ້າໄປທາງອື່ນບ່ອນບໍ່ໜາວໄດ້ກໍດີ. ສຸດທ້າຍຂັ້ນເທິງກໍຮັບອຸປະກາລະໃຫ້ສອງອ້າຍນ້ອງ[7]ໄປຮຽນຕໍ່ຊັ້ນມັດທະຍົມ 1 ທີ່ພະນົມ ເປັນທີ່ລີເຊເດກາກເຕ, ຢູ່ໂຮງຮຽນກິນນອນ ຊຶ່ງເປັນໂຮງຮຽນຂອງ

---

[6]ຕາມຫຼັງ ມາຮອດປີ 77 ເວລາເປັນພະນັກງານສັງກັດຢູ່ກະຊວງການເງິນ ແລະ ເວລາໄປລົງພື້ນຖານທີ່ພາກເໜືອກໍໄດ້ມີໂອກາດພົບພໍ້ຄືນບາງຄົນ ເຊັ່ນ ນາຍຄູລາວເອີ, ຟູຈີລີ, ຟູຈີຈົງ, ປາວຈົງ ແລະ ກໍໄດ້ເລົ່າເລື່ອງຫຼັງຄືນຢ່າງເບີກບານມ່ວນຊື່ນ.

[7]ຂ້າພະເຈົ້າ ແລະ ອ້າຍພົງສະຫວັດ ບຸບຜາ, ປັດຈຸບັນເປັນລັດຖະມົນຕີ ປະຈໍາສໍານັກງານປະທານປະເທດ

ຝະລັ່ງ[8].

ເດີນທາງກັບຈາກຜົ້ງສາລີ ເນື່ອງຈາກຕິດຕ້ອຍທ້ອຍຕາມຜູ້ໃຫ່ຍ ກໍໄດ້ພັກຢູ່ຫໍພັກລັດຖະບານ, ພວກຂ້າພະເຈົ້າໄດ້ພັກຢູ່ຫ້ອງດຽວກັບທ່ານຜູ້ ແທນ ສກ (ຂໍສະຫງວນນາມ), ນອນບໍ່ຫຼັບແດ່[9] ຕື່ນເຊົ້າມາຂ້າພະເຈົ້າ ອອກ ມາຢ້ຽມເບິ່ງຫ້ອງນອກ, ພໍດີທ່ານ ກິນິມ ພົນເສນາ ເພິ່ນກໍອອກມາເຫັນເລີຍ ເວົ້າວ່າ "ອ້າວເຂີຍນ້ອຍ ເມື່ອຍຫຼາຍບໍ່ ຈຶ່ງຄໍທົບເທິງນອນຢູ່?" ຂ້າພະເຈົ້າ ກໍບໍ່ກ້າເວົ້າວ່າ ບໍ່ໄດ້ນອນຍ້ອນສະອອນສຽງຜາຍລົມກ້ອງດັງຂອງຍາທ່ານ ຜູ້ແທນ ສກ ແຕ່ກໍອຶດທົນຢູ່ໃນໃຈ ແຕ່ກໍຫາກຕອບວ່າ "ເມື່ອຍຢູ່ຂະ ນ້ອຍ.""ຊັ້ນ ອ້າຍເດ້?" ຂ້າພະເຈົ້າເລີຍເອີ່ຍຂຶ້ນວ່າ "ຍັງນອນຢູ່, ເມົາຍົນ ຕີ້ເບາະ"[10]. ເພິ່ນມີແຕ່ເວົ້າຕື່ມວ່າໄປຮຽນໃຫ້ຕັ້ງໃຈຮຽນແທ້ໆເດີ້! ກໍເລີຍຕອບ ວ່າ "ໂດຍ!".

ຂ້າພະເຈົ້າຍັງຈື່ບໍ່ລືມ ກ່ຽວກັບ ຄໍາຖາມຢອກຫຼີ້ນຂອງເພິ່ນ ຊຶ່ງເຫັນໄດ້ ວ່າເພິ່ນກໍຖືຄືລູກໆຫຼານໆຂອງຕົນເອງ, ແລະ ກໍເປັນການຢັ້ງຢືນໃຫ້ເຫັນວ່າ ເພິ່ນເວົ້າວ່ານໍາທຸກຄົນ, ທັງເຖົ້າແກ່ ແລະ ເດັກນ້ອຍ ໂດຍຕ່າງກັນກັບຜູ້ໃຫ່ຍ ທ່ວໄປຂອງລະບອບເກົ່າ, ດັ່ງທີ່ຫຼາຍຄົນເຄີຍຍ້ອງຍໍ.

ໃນປີ 1962, ພາຍຫຼັງການລອມລາວຄັ້ງທີ 2, ທ່ານ ກິນິມ ພົນເສນາ ໄດ້ຖືກແຕ່ງຕັ້ງເປັນ ລັດຖະມົນຕີວ່າການກະຊວງການຕ່າງປະເທດ ແລະ ພໍ່

---

[8]ນັບວ່າເປັນໄລຍະທີ່ຫຍຸ້ງຍາກສົມຄວນ, ບໍ່ເຄີຍຢູ່ຫ່າງໄປຈາກຄອບຄົວ, ສົມທົບໃສ່ພວກ ເດັກນ້ອຍຝະລັ່ງ ແລະ ຂະແມກໍດູຖູກ ແຕ່ກໍຫາກເປັນໄລຍະທີ່ໄດ້ຜ່ານການທົດສອບທີ່ໄດ້ ເຮັດໃຫ້ພວກຂ້າພະເຈົ້າມີກໍາລັງໃຈຕໍ່ສູ້ຮໍ່າຮຽນ ແລະ ໄດ້ພື້ນຖານເພື່ອເວລາກັບມາຮຽນຕໍ່ ທີ່ລີເຊອງຈັນ ໃນປີ 1962 ທີ່ຫ້ອງມ 2 ຈຶ່ງຮຽນໄດ້ສະດວກຫຼາຍກ່ວາເກົ່າ.

[9]ນອນຢູ່ຫ້ອງດຽວກັບທ່ານຜູ້ແທນ ສກ, ເພິ່ນຊໍ້າຜາຍລົມຕະຫຼອດຄືນ, ຫ້ອງນັ້ນກໍສຽງກ້ອງ ແດ່, ສຽງຜາຍລົມແຕ່ລະຄັ້ງກໍເລີຍສະທ້ອນເປັນຈັ່ງຫວະຍາວໆເຕີບ, ທັງທົນຢູ່ໃນໃຈ ແຕ່ກໍຫາກຢາກວ່ານອນບໍ່ໄດ້ເລີຍ!!

[10]ເວລາຍັງນ້ອຍ, ອ້າຍພີ່ງສະຫວັດ ມັກເມົາຍົນ.

ຄໍາເພັ້ງ ບຸບຜາ ກໍໄດ້ເປັນລັດຖະມົນຕີຊ່ວຍວ່າການປັບປຸງໝູ່ບ້ານ ໃນລັດຖະບານປະສົມສາມຝ່າຍ, ຂ້າພະເຈົ້າກໍໄດ້ກັບຄືນມາເຂົ້າຮຽນທີ່ຊັ້ນ ມັດທະຍົມສອງ ທີ່ລີເຊອງ໋ຈັນ. ຢູ່ໃນຄອບຄົວ ກໍມັກຈະໄດ້ຍິນຂ່າວຄາວ ກ່ຽວກັບການເຄື່ອນໄຫວຂອງພໍ່ ທັ້ງສອງໃນຂອບເຂດ ແລະ ລະດັບວຽກງານຂອງໃຜລາວ. ແຕ່ກໍເຫັນວ່າເຫດການໄລຍະນັ້ນກໍລະອິດລະອ້ຽວສົມຄວນ.

ແຕ່ກ່ອນນັ້ນ, ພໍ່ຄໍາເພັ້ງກໍເຄີຍລົມສູ່ຟັງວ່າພໍ່ໄດ້ເຄື່ອນໄຫວຢ່າງຕັ້ງໜ້າຮ່ວມກັບ ທ່ານ ກິນິມ ພົນເສນາໃນຂະບວນການຕໍ່ສູ້ໃນຮູບການຖືກກົດໝາຍ ຜ່ານສະພາຜູ້ແທນລາດຊະດອນ, ໂດຍສະເພາະໃນການສະໜັບສະໜູນການເຈລະຈາການເຕົ້າໂຮມລາວຄັ້ງທີໜຶ່ງ, ໃນໄລຍະຕໍ່ສູ້ທວງໃຫ້ປ່ອຍຕົວຜູ້ນໍາແນວລາວຮັກຊາດທີ່ຖືກກັກຂັງ ແລະ ໃນຂະບວນການເຕົ້າໂຮມລາວຄັ້ງທີ່ສອງ[11]. ທ່ານ ກິນິມ ເຄີຍເວົ້າກັບພໍ່ວ່າ: "ໃນການຕໍ່ສູ້ເພື່ອຄວາມຍຸຕິທໍາ, ເພື່ອຍາດສິດທິແຫ່ງຄວາມສະເໝີພາບ ແລະ ຄວາມເປັນທໍາມາໃຫ້ປະເທດຊາດ ແລະ ປະຊາຊົນ ບໍ່ຕ້ອງຢ້ານຕາຍ, ຕ້ອງມີຄວາມກ້າຫານຢູ່ສະເໝີ". ໃນຕົວຈິງ, ເພິ່ນກໍສະແດງອອກຄືແນວນັ້ນແທ້. ເວົ້າແທ້ທໍາຈິງ, ເສັ້ງສະຫຼະທຸກສິ່ງທຸກຢ່າງ, ຈົນຖືກ ຄາດຕະກໍາ ແລະ ເສັ້ງຊີວິດຄາໜ້າທີ່ໆໄດ້ບັນລຸຜົນເປັນຢ່າງດີ. ດ້ວຍເຫດນັ້ນ ເພິ່ນຈຶ່ງເປັນແອ່ນແຍ໋ງອັນປະເສີດທີ່ສຸດໃຫ້ແກ່ທຸກຊັ້ນຄົນ ບ່ວ່າຢູ່ລາວ ກໍຄືຢູ່ໃນຂະບວນການຂອງຜູ້ຮັກຫອມສັນຕິພາບໃນໂລກ.

ໃນຕອນເຊົ້າຂອງວັນທີ 2 ເມສາ, ມື້ນັ້ນ ປາກົດວ່າອາກາດໜາວເຢັນ

---

[11]ໃນສະໄໝລັດຖະບານສັນຕິພາບເປັນກາງຄັ້ງໄຂ, ພໍ່ຄໍາເພັ້ງ ບຸບຜາ ກໍໄດ້ມີບົດບາດສໍາຄັນຕ່າງໜ້າລັດຖະບານໃນການຍາດແຍ໋ງການສະໜັບສະໜູນຊ່ວຍເຫຼືອຈາກຕ່າງປະເທດ ເຊັ່ນສສຫວຽດນາມ ແລະ ສປຈີນ ໂດຍໄດ້ພົບປະກັບນາຍົກຟາມວັນດົ໋ງ ແລະ ນາຍົກຈູນເອີນລາຍ ຕາມລໍາດັບ;

ແລະ ທ້ອງຟ້າສີບົດໆແດ່, ເວລາເລີກຫຼິ້ນ, ນາງ ລັດສະໝີ ວິພາກອນ[12] ໝູ່ຢູ່ທ້ອງດຽວກັນ ໄດ້ຮ້ອງໄຫ້ຂຶ້ນຍ້ອນ ໄດ້ຮູ້ວ່າ ຍາລຸງກິນິມ ພົນເສນາ ຖືກຍິງເສຽຊີວິດຄາທີ່ ສ່ວນ ຍາປ້າໄພບູນ ກໍຖືກຍິງບາດເຈັບສາຫັດ[13]. ຂ້າພະເຈົ້າ ແລະ ໝູ່ ກໍຕາຊຶມໄປຕາມໆກັນ. ຕອນຄ່ຳຂອງມື້ຕໍ່ມາ, ເອື້ອຍ ບຸນຍິງ ພ້ອມດ້ວຍຂ້າພະເຈົ້າກໍໄດ້ໄປກິນທານ ທັງໄປຖາມຂ່າວອ້າຍແກ່ນແກ້ວ ແລະ ເອື້ອຍ ເຂັມເພັດທີ່ໄດ້ກັບຈາກ ອະດີດສະຫະພາບໂຊວຽດມາຮ່ວມງານສົ່ງສະການທີ່ເສົ້າສະຫຼົດໃຈດັ່ງກ່າວ.

ສິ່ງທີ່ພໍ່ຄຳເພັງໄດ້ຢ້ຳຢູ່ຢ່າງເປັນປະຈຳນັ້ນ, ຄືຄວາມກ້າຫານ, ເພິ່ນເອງກໍໄດ້ສັ່ງຄວາມໄວ້ເຊັ່ນດຽວກັນ, ວ່າຖ້າ ພໍ່ເປັນຫຍັງໄປ ກໍໃຫ້ພວກລູກໆສືບຕໍ່ເດີນຕາມເສັ້ນທາງທີ່ຖືກຕ້ອງເປັນທຳເດີ້; ໝາຍເຖິງສືບຕໍ່ຕໍ່ສູ້ໂດຍບໍ່ໃຫ້ຢ້ານກົວສິ່ງໃດໆໝົດ, ຍ້ອນເພິ່ນເປັນນັກການເມືອງທີ່ກ້າຕໍ່ສູ້ເພື່ອປະເທດຊາດ ແລະ ປະຊາຊົນຢູ່ໃນແນວໜ້າ ກໍແມ່ນເພື່ອຜົນປະໂຫຍດອັນສູງສົ່ງຂອງຊາດຂອງປະຊາຊົນເດີ້ (ຍ້ອນວ່າຢູ່ ເຂດວຽງຈັນ ທີ່ຖືວ່າເຂດຂອງສັດຕູ). ຕໍ່ໜ້າເຮືອນ ບ້ານເກົ່າຍອດ ກໍແມ່ນມີໜ່ວຍປະສານງານ ທີ່ເປັນກ້ອງວົງຈອນປິດທີ່ມີຊີວິດ (ທະຫານ + ຕຳຫຼວດຈ້ອງມອງຢູ່ປະຈຳເລີຍ), ເພາະແມ່ນບ່ອນທີ່ພະນັກງານຖັນແຖວແນວລາວຮັກຊາດເຂົ້າ-ອອກ ຕົ້ນຕໍກໍລ້ວນແຕ່ເປັນເປົ້າໝາຍສົງໃສຕິດຕາມຂອງພວກສັດຕູຂອງການປະຕິວັດຢູ່ແລ້ວ. ໂດຍສະເພາະໃນໄລຍະລອມລາວຄັ້ງທີ 3, ປີ 72-73.

---

[12]ຮູ້ຕາມຫຼັງວ່າລາວແມ່ນສົ່ງອກັບ ນາງເຂັມວຽງ ພົນເສນາ (ຊື່ຫຼິ້ນ ແມ່ນນາງຕ່ອດ) ຊຶ່ງໄດ້ກາຍເປັນພັນລະຍາຂອງຂ້າພະເຈົ້າເອງນັບແຕ່ວັນທີ 18 ມັງກອນ 1984 ເປັນຕົ້ນມາ, ຈຶ່ງເຫັນວ່າຄວາມສະອື້ນດັ່ງກ່າວມາຈາກການສູນເສຍຜູ້ເປັນພໍ່ຂອງສົ່ງທີ່ເຄີຍຫຼິ້ນນຳກັນມາແຕ່ນ້ອຍ!

[13]ໃນປຶ້ມທີ່ຂຽນໂດຍນັກຂຽນຂອງຄົນອາເມລິກາເອງ ກໍໄດ້ພັນລະນາເຖິງຄວາມອຳມະຫິດໂຫດທ້ຽມຂອງຄາດຕະກອນ ທີ່ພາຍຫຼັງທີ່ຍິງທ່ານ ກິນິມ ພົນເສນາ ສິ້ນຊີວິດກັບທີ່ແລ້ວຍັງບໍ່ໃຫ້ຄົນອອກຄົນເຂົ້າ ປ່ອຍໃຫ້ ແມ່ໄພບູນ ພົນເສນາ ອາບຟູມກອງເລືອດຢູ່ເຖິງຫ້າຊົ່ວໂມງຈຶ່ງໄດ້ເອົາໄປພະຍາບານຕົວທີ່ໂຮງໝໍ....

ພາຍຫຼັງເຊັນສັນຍາວຽງຈັນ, ເວລາສະເດັດເຈົ້າສຸພານຸວົງເຂົ້າມາ ວຽງຈັນ, ເພິ່ນກໍໄດ້ກ່າວສະແດງຄວາມຂອບ ໃຈຕໍ່ພໍ່ຄຳເພັງ ບຸບຜາ[14] ແລະ ລູກສາວ ດຣ. ບຸນຍົງ ບຸບຜາ ທີ່ໄດ້ເອົາໃຈໃສ່ຕັ້ງໜ້າເຄື່ອນໄຫວສະໜັບ ສະໜູນຂະບວນການ ຕໍ່ສູ້ປະຕິວັດຂອງລາວ. ເພິ່ນກໍແມ່ນໜຶ່ງໃນຜູ້ຊົງ ຄຸນວຸດທິທີ່ຮັກຊາດ ແລະ ກ້າວໜ້າທີ່ການປະຕິວັດໄດ້ເອົາເຂົ້າຄຳຮ່ວມ ເອົາ ແລະ ໄດ້ມອບໝາຍໜ້າທີ່ຮັບຜິດຊອບເປັນລັດຖະມົນຕີກະຊວງໄປສະນີ ໂທລະຄົມມະນາຄົມ ໃນລັດຖະບານປະສົມຄັ້ງທີສາມ ແລະ ໃນວັນທີ 12 ທັນວາ ປີ 1975 ກໍໄດ້ດຳລົງຕຳແໜ່ງເປັນລັດຖະມົນຕີວ່າການກະຊວງ ໄປສະນີໂທລະຄົມມະນາຄົມ ໃນລັດຖະບານແຫ່ງສ.ປ.ປ.ລາວ. ພໍ່ຄຳເພັງ ເອງກໍໄດ້ເລົ່າເຖິງເຫດການຕ່າງໆ ທີ່ໄດ້ຜ່ານຜ່າ ໂດຍຜ່ານການແນະນຳ, ປະສານສົມທົບ ແລະ ຮ່ວມສຳພັນກັບກຳລັງແນວລາວຮັກຊາດ ທັງໄດ້ປະ ກອບສ່ວນຢ່າງຕັ້ງໜ້າເຮັດໃຫ້ການປົດປ່ອຍໄດ້ບັນລຸຜົນໂດຍບໍ່ມີການນອງ ເລືອດທີ່ນະຄອນຫຼວງວຽງຈັນ ແລະ ໃນໄລຍະຜ່ານມາ. ໂດຍສືບຕໍ່ພາລະກິດ ຂອງທ່ານກຶນີມ ນັກຮັກຊາດທີ່ກ້າແກ່ນ, ພໍ່ຄຳເພັງ ບຸບຜາ ກໍແມ່ນບຸກຄົນໜຶ່ງ ທີ່ຫາຍາກເຊັ່ນດຽວກັນ ທີ່ໄດ້ຕິດຕໍ່ກັບຜູ້ນຳຂອງການປະຕິວັດຫຼາຍທ່ານ, ນັບແຕ່ທ່ານປະທານໄກສອນ ພົມວິຫານ, ທ່ານ ປະທານສຸພານຸວົງ, ທ່ານ ພູມສີປະເສີດ, ທ່ານ ພູມີ ວົງວິຈິດ, ທ່ານ ເຈົ້າສຸກວົງສັກ, ທ່ານມາໄຂ ຄຳພິທູນ, ທ່ານໂຊດ ເພັດລາສີ ແລະ ບັນດາຜູ້ນຳຄົນອື່ນໆ... ທີ່ໄດ້ຖືກຮັບຮູ້ ວ່າໄດ້ຮ່ວມຂະບວນການປະຕິວັດ ນັບແຕ່ສະໄໝອິດສະຫຼະຄັ້ງທຳອິດ, ຄື ເຄື່ອນໄຫວປະຕິວັດແບບປິດລັບໃນຖິ່ນຂອງສັດຕູເອງ ຊຶ່ງຖືວ່າເປັນແນວ ໜ້າທີ່ທຸລະກັນດານ ທີ່ໄດ້ເອົາຄວາມສ່ຽງຕໍ່ຊີວິດເປັນສິ່ງເດີມພັນເຊັ່ນດຽວ

---

[14]ປັດຈຸບັນ ສຈ ດຣ. ບຸນຍົງ ບຸບຜາ ເປັນຮອງປະທານກຳມາທິການຕ່າງປະເທດຂອງ ສະພາແຫ່ງຊາດ, ຊຶ່ງພວມສືບຕໍ່ພາລະກິດທີ່ພໍ່ໄດ້ສ້າງໄວ້ໃນສະພາຜູ້ແທນລາດຊະດອນ ໃນເມື່ອກ່ອນ, ຄືເປັນສະມາຊິກສະພາແຫ່ງຊາດໃນລະບອບປັດຈຸບັນ;

ກັນ. ເພິ່ນກໍໄດ້ຮັບນະໂຍບາຍເງິນບຳນານ ແລະ ຈົນເຖິງວິນາທີສຸດທ້າຍ ຂອງການສິ້ນລົມຫາຍໃຈຂອງເພິ່ນ, ສູນກາງພັກ ແລະ ລັດຖະບານແຫ່ງ ສ.ປ.ປ.ລາວ ກໍໄດ້ຈັດງານຊາປະນະກິດສົບຢ່າງເປັນທາງການໃຫ້ຢ່າງສົມ ກຽດທີ່ຫຼວງພະບາງ ໃນປີ 2004.

ສ່ວນຂ້າພະເຈົ້າເອງແມ່ນພາຍຫຼັງໄດ້ສອບເສັງເອົາທຶນໄປຮຽນທີ່ປະ ເທດຝະລັ່ງ ຍາມໃດກໍມີທ່າອ່ຽງຫັນໄປສູ່ການສະໜັບສະໜູນກຳລັງປະຕິວັດ ຕະຫຼອດມາ ແລະ ໂດຍສະເພາະໄດ້ກັບຄືນມາພ້ອມຂະບວນການນັກສຶກ ສາຈາກຝະລັ່ງໃນປີ 1977 ແລະ ໄດ້ຕິດຕາມລຸງໜູຮັກ ແຕ່ເໜືອຕະຫຼອດໃຕ້ ໄດ້ຊ່ວຍວຽກງານແກ້ໄຂບັນຫາດ້ານເສດຖະກິດ-ການເງິນ-ທະນາຄານ-ການຄ້າ ຮ່ວມກັບຄະນະນັກວິຊາການອື່ນໆກ່ອນຈະຫັນລົງພື້ນຖານລົງໄປ ປະຈຳການຢູ່ແຂວງຫຼວງພະບາງ ນັບແຕ່ປີ 1979 ເຖິງປີ 1986.

ຈາກເສັ້ນທາງໂຄ້ງ ກ່ຽວກັບ ການຮັບຊາບຊື່ສຽງຮຽງນາມຂອງທ່ານ ກິນິມ ພົນເສນາ ທີ່ໄດ້ອຸທິດເຫື່ອແຮງ, ກຳລັງວັງຊາ ສ້າງຄຸນງາມຄວາມດີໃຫ້ ແກ່ປະເທດຊາດໃນຂອບເຂດທົ່ວປະເທດ ແລະ ລືຊື່ທົ່ວສາກົນ ໃນສະໄໝ ປະຕິວັດຊາດປະຊາທິປະໄຕ, ພ້ອມທັງສ້າງກ້ອນກຳລັງສືບທອດ ເຊັ່ນລູກໆ ຫຼານໆທີ່ກ້າວໜ້າທີ່ໄດ້ ແລະ ພວມສານຕໍ່ພາລະກິດກໍ່ສ້າງ ແລະ ປົກປັກ ຮັກສາປະເທດຊາດສັງຄົມນິຍົມ, ກັບມາຫາຖານະທີ່ມີຄວາມໃກ້ຊິດໂດຍ ຖືກຕ້ອງຕາມກົດໝາຍໃນວັນທີ 18 ມັງກອນ ປີ 1984, ຄືໄດ້ຮ່ວມສ້າງ ຄອບຄົວກັບລູກສາວຄົນທີຫ້າຂອງເພິ່ນເອງ ທ່ານກາງ ການເຫັນດີເຫັນ ພ້ອມຈາກຜູ້ໃຫ່ຍຍາດຕິພີ່ນ້ອງ, ໝູ່ເພື່ອນ, ການຈັດຕັ້ງ ແລະ ກໍໄດ້ພ້ອມ ກັນສືບຕໍ່ສ້າງຜົນງານໃນຂອບເຂດຄວາມຮັບຜິດຊອບຂອງໃຜລາວ ໃນຂະ ແໜງການເງິນ-ທະນາຄານ ແລະ ພ້ອມກັນຈາລຶກບຸນຄຸນເຖິງພໍ່ກິນິມພົນ ເສນາ ແຕ່ລະປີ, ທັງປີນ້ອຍ ແລະ ປີໃຫຍ. ເວລາພໍ່ຄຳເພັງ ຍັງມີຊີວິດ ພໍ່ກໍໄດ້ ເລົ່າເຖິງຄຸນງາມຄວາມດີຂອງພໍ່ດອງ ຊຶ່ງບໍ່ເຄີຍເຫັນລູກເຂີຍຜູ້ນີ້, ເຄີຍເຫັນ

ແຕ່ເຂີຍຢອກແຕ່ຍັງນ້ອຍ, ແລະ ກໍຍັງເວົ້າວ່າຖ້າເພິ່ນຍັງມີຊີວິດແນ່ນອນ ເພິ່ນກໍຈະເຫັນດີ ເຫັນພ້ອມຮັບເອົາລູກເຂີຍຄົນນີ້, ພໍ່ຄຳເພັງ ກໍຮັກແພງໃຜ້ ຂອງເພິ່ນທີ່ສຸດ. ຫຼາຍຄົນກໍຍັງວ່າ ແນ່ນອນຢູ່ແລ້ວ, ບໍ່ດັ່ງນັ້ນ ທ່ານໜູຮັກ ພູມສະຫວັນ ກໍຈະບໍ່ອະນຸມັດດອກ ແລະ ເພິ່ນເອງກໍເປັນຜູ້ໃຫ້ໂອວາດ ຕັກເຕືອນເວລາມື້ສູ່ຂວັນ. ແລະ ມື້ຕໍ່ມາ ທ່ານ ປະທານໄກສອນ ພົມວິຫານ ພ້ອມດ້ວຍຄອບຄົວ[15] ກໍໄດ້ໃຫ້ກຽດລູກສາວ ແລະ ລູກເຂີຍຂອງທ່ານ ກິນິມ ພົນເສນາ ໄປຮ່ວມຮັບປະທານອາຫານ ພ້ອມທັງໃຫ້ຄຳໂອວາດຕັກເຕືອນ ເພື່ອໃຫ້ພ້ອມກັນສ້າງຜົນງານໃໝ່ທີ່ໃຫ່ຍຫຼວງກ່ວາເກົ່າ ແລະ ພ້ອມກັນ ກ້າວໜ້າ.

ສອງເທດການທີ່ໜ້າຖືດ້ຳອັດສະຈັນສົມຄວນແມ່ນ ໃນງານເກັບດູກ ທ່ານ ທິວຕ້າຄຳສຸກ ແກ້ວລາ, ຂ້າພະເຈົ້າໄດ້ຮັບຍັນຄຳໃສ່ສາຍຄໍ ໜຶ່ງອັນ ແລະ ໃນງານເກັບດູກ ພໍ່ຄຳເພັງ ບຸບຜາ, ຂ້າພະເຈົ້າກໍໄດ້ຮັບສາຍແຂນຄຳ ໜຶ່ງບາດໜຶ່ງເສັ້ນ ຊຶ່ງຂ້າພະເຈົ້າກໍໄດ້ມອບຕໍ່ໃຫ້ລູກໃພ້ເພິ່ນຮັກສາໄວ້ເລີຍ. ໃຜໆກໍຮັບຮູ້ວ່າ ພວກເພິ່ນຮັກແພງ ແລະ ໄວ້ເນື້ອເຊື່ອໃຈພວກຂ້າພະເຈົ້າ ແລະພວກຂ້າພະເຈົ້າເອງກໍຖືວ່າພວກເພິ່ນໄດ້ຈາກໄປດ້ວຍການມອບໝາຍ ສິດໜ້າທີ່ຄວາມຮັບຜິດຊອບໃຫ້ສົບຫວດຜົນງານ ແລະ ຄຸນງາມຄວາມດີທີ່ ພວກເພິ່ນຕົກຫວດໄວ້ໃຫ້. ເມື່ອງໃນງານທີ່ລະລຶກວັນຄົບຮອບຫ້າສິບປີ ແຫ່ງການຈາກໄປຂອງພໍ່ເຖົ້າກິນິມ ພົນເສນາ ທີ່ສຸດແສນເຄົາລົບຮັກ ແລະ ອາໄລອາວອນ, ພວກລູກໆ ຂໍສົບຕໍ່ໃຫ້ຄຳປະຕິຍານຕໍ່ດວງວິນຍານ ຂອງ ພໍ່ແມ່ ຜູ້ທີ່ລ່ວງລັບໄປວ່າ ເຖິງແມ່ນວ່າຜົນງານຂອງພວກລູກໆ ຈະເລັກໆ ນ້ອຍໆ, ຖ້າສົມທຽບໃສ່ບໍລິມາດ ແລະ ຂະໜາດຂອງຜົນງານທີ່ພໍ່ໆ ແລະ

---

[15]ຍ້ອນປະທານ ໄກສອນ ພົມວິຫານ ໄປຮ່ວມງານຊາປະນາກິດສົບແມ່ຜູ້ບັງເກີດເກົ້າຂອງ ເພິ່ນ ທີ່ແຂວງສະຫວັນນະເຂດ. ເວລາກັບມາ ເຫັນບັດເຊີນ ຈຶ່ງເອີ້ນລູກຫຼານ ໄປຮ່ວມຮັບ ປະທານອາຫານຳພວກເພິ່ນ ຕາງອວຍພອນ ໂດຍປ້າເຂັມເພັດ ພົນເສນາ ເປັນຜູ້ນຳພາໄປ.

ແມ່ໆ ໄດ້ພ້ອມກັນສ້າງ ແລະ ສະສົມປະໄວ້ໃຫ້ພວກລູກສືບທອດ, ລູກໆກໍຈະສືບຕໍ່ພະຍາຍາມນຳໃຊ້ໄລຍະສຸດທ້າຍຂອງຊີວິດຂອງຕົນ ສືບຕໍ່ອຸທິດນ້ຳໃຈຮັກຊາດ, ແພງເຊື້ອ ບໍ່ໃຫ້ສິ່ງທີ່ພວກພໍ່ແມ່, ລຸງປ້າອາວອາ ໄດ້ຕັກເຕືອນສັ່ງສອນເສົ້າໝອງ ແລະ ຈືດຈາງໄປ. ພວກລູກເອກອ້າງທີ່ສຸດ ແລະ ທະນົງໃຈທີ່ສຸດ ທີ່ໄດ້ເປັນລູກໆ, ເປັນເຂີຍ, ເປັນໃພ້ ທີ່ດີຂອງພໍ່ແມ່, ລຸງປ້າ, ອາວອາ ແລະ ເດັດຂາດ ຈະສືບຕໍ່ໄປນຳການປະຕິວັດຢ່າງສຸດກຳກສຸດປາຍ ຢູ່ ສ.ປ.ປ.ລາວ!

ແວ່ນແຍງ ແລະ ຜົນງານອັນສັກກະລະບູຊາ ຂອງພໍ່ແມ່ ຂອງພວກລູກໆ ຈະຄົງສະຖິດ, ເຫຼື້ອມໃສໃນຊີວິດຈິດໃຈ ແລະ ກາຍເປັນກຳລັງແຮງທະວີຄູນທີ່ມີຜົນສັກສິດຢ່າງແທ້ຈິງ ສຳລັບ ເຊັ່ນລູກຫຼານ ເຫຼັນ ຫຼ້ອນ ຕະຫຼອດການລະນານ!

ວຽງຈັນ, ວັນທີ 18 ມີນາ 2013

ສຈ. ດາລັດ ບຸບຜາ

“ພໍ່ກິນິມ ພົນເສນາ ທີ່ແສນຮັກ ແລະ ເຄົາລົບບູຊາ”

ໂດຍລູກໆ ຂອງພໍ່ ແລະ ແມ່

ຫ້າສິບປີແຫ່ງການຈາກໄປຢ່າງກະທັນຫັນ ຂອງພໍ່ຜູ້ບັງເກີດເກົ້າທີ່ແສນຮັກ ແລະ ເຄົາລົບບູຊາ ຍ້ອນເງື້ອມມືອັນໂຫດຮ້າຍປ່າເຖື່ອນຂອງຄາດຕະກອນ ທີ່ໄດ້ຮັບການບົ່ງການຈາກ ພວກອິດທິກຳລັງຈັກກະພັດ ແລະ ລູກແຫ້ງຕົນມືຂອງເຂົາ ແມ່ນເຄິ່ງສັດຕະວັດທີ່ ແມ່ ໄພບູນ ພ້ອມດ້ວຍລູກໆໄດ້ອົດທົນພົ້ນຜ່ານຄວາມລະອົດລະອ້ຽວ ແລະ ຜ່ານການຄົ້ນຄິດກ່ຽວກັບ ເຫດການຕ່າງໆທີ່ໄດ້ຢັ້ງຢືນເຖິງຜົນງານອັນລ້ຳຄ່າມະຫາ ສານຊຶ່ງ ບໍ່ມີໃຜປະຕິເສດ ນັ້ນກໍຄື ຜົນງານທີ່ສຸດແສນປະເສີດຊຶ່ງພໍ່ໄດ້ສະສົມໄວ້ໃນ ໄລຍະການປະຕິວັດຊາດປະຊາທິປະໄຕ ຍັງຄົງສືບຕໍ່ເປັນພື້ນຖານທາງ ດ້ານຈິດສຳນຶກ ແລະ ການກະທຳຕົວຈິງໃຫ້ແກ່ລູກໆ ແລະ ຫຼານເຫຼັນໃນ ໄລຍະໃໝ່ຂອງການປະຕິວັດ ແຫ່ງການກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດ. ການຢັ້ງຢືນຕ່າງໆ ທີ່ສະແດງອອກດ້ວຍຄວາມຈິງໃຈ ແລະ ຄວາມເຫຼື້ອມໃສ ຕໍ່ການຕໍ່ສູ້ເສັງສະຫຼະຊີວິດເລືອດເນື້ອຂອງພໍ່ ໂດຍນັກປະຕິວັດລຸ້ນອາວຸໂສ, ເພື່ອນຮ່ວມງານ ແລະ ລູກຫຼານຂອງເພິ່ນ ໃນວົງຄະນະຍາດປະຊາຊົນບັນດາເຜົ່າຊົນ ທີ່ເຄີຍເປັນເພື່ອນຮ່ວມຂະບວນການກອບກູ້ເອົາຄວາມເປັນເອກະລາດ ແລະ ຄວາມປອງດອງຊາດທີ່ພໍ່ໄດ້ອຸທິດທຸກຢາດເຫື່ອແຮງ ຈົນຮອດເລືອດເນື້ອຢົດສຸດທ້າຍນັ້ນ ລ້ວນແຕ່ໄດ້ເປັນບົດຮຽນອັນລ້ຳຄ່າໃຫ້ແກ່ປະເທດຊາດຂອງພວກເຮົາ ກໍຄືຂອງ ພາກພື້ນ ແລະ

ໃນໂລກ ທີ່ໄດ້ແບ່ງປັນຄວາມເສົ້າໂສກ ແລະ ສຸດແສນເສງດາຍ ຕໍ່ການ ລ່ວງລັບໄປຂອງພໍ່. ຄຸນງາມຄວາມດີ ທີ່ພໍ່ໄດ້ອຸທິດໃນຊີ່ວຊີວິດຂອງຕົນ ໃຫ້ແກ່ພາລະກິດອັນສູງສົ່ງຂອງປະເທດຊາດ ໄດ້ກາຍເປັນກຳລັງແຮງທະ ວີຄູນ ແລະ ເປັນພະລັງເສີມ ຄືແນວໃດນັ້ນ, ພວກລູກໆໄດ້ເກັບກຳເອົາຫຼັກ ຖານທາງປະຫວັດສາດ, ການບອກເລົ່າຂອງຜູ້ ທີ່ໄດ້ຮ່ວມເຫດການ ຫຼື ຈາກການສືບຕໍ່ບອກເລົ່າປາກຕໍ່ປາກ ມາເຖິງປັດຈຸບັນນີ້. ຈາກນີ້, ພວກຂ້າ ພະເຈົ້າຈຶ່ງຂໍອະນຸຍາດຈັດແບ່ງບົດຂຽນ ເປັນ 3 ພາກດັ່ງລຸ່ມນີ້ ຄື : ພາກທີ I ຈະເວົ້າເຖິງປະຫວັດຫຍໍ້ ຂອງພໍ່ກີນີມ ໃນໄວໜຸ່ມ ແລະ ບົດຮຽນ ແຫ່ງຊີວິດ ທີ່ພໍ່ໄດ້ປະໄວ້ໃຫ້ລູກໆ. ພາກທີ II ຈະເນັ້ນໜັກ ກ່ຽວກັບ ປະຫວັດຫຍໍ້ ແຫ່ງ ການເຄື່ອນໄຫວວຽກງານປະຕິວັດຂອງພໍ່ ກີນີມ ແລະ ພາກທີ III ຈະມ້ວນ ທ້າຍ ດ້ວຍເຫດການວັນທີ 1/4/63 ທີ່ເສົ້າສະຫຼົດໃຈ ແລະ ການຫັນເອົາ ຄວາມຄຽດແຄ້ນຕໍ່ສັດຕູຂອງຊາດມາເປັນພະລັງແຮງຕໍ່ສູ້ ເພື່ອພາລະກິດ ອັນສັກສິທະລະບູຊາຂອງຊາດ.

I. <u>ປະຫວັດຫຍໍ້ ຂອງພໍ່ກີນີມ ໃນໄວໜຸ່ມ ແລະ ບົດຮຽນແຫ່ງຊີວິດ ທີ່ພໍ່ໄດ້ ປະໄວ້ໃຫ້ລູກໆ</u>

ພໍ່ກີນີມ ພົນເສນາເກີດເມື່ອວັນທີ 14/7/1911 ທີ່ເມືອງປາກເຊ, ແຂວງຈຳປາສັກ, ເປັນລູກຊາຍກົກຂອງປູ່ມາ ແລະ ຍ່າເຊົາ. ພໍ່ມີນ້ອງ 4 ຄົນ ຄື: ອາວ ຄຳລຽງ, ອາວ ຄຳເຊັ້ງ, ອາ ຄຳພວງ ແລະ ອາວ ຄຳລຽນ. ພໍ່ ເກີດຢູ່ໃນຄອບຄົວຖານະປານກາງ, ຊີວິດການເປັນຢູ່ແຕ່ຍັງເຍົາໄວບໍ່ຄ່ອຍ ອຸດົມສົມບູນ, ອາໄສຕົ້ນຕໍແຕ່ພໍ່ຜູ້ບັ້ງເກີດເກົ້າເຮັດວຽກລ້ຽງຄອບຄົວ, ໂດຍ ແມ່ຂອງເພິ່ນ ກໍເຮັດວຽກຊ່ວຍພໍ່, ທັ້ງເປັນຜູ້ລ້ຽງດູ, ເບິ່ງແຍງລູກເຕົ້າທັ້ງ ຫຼາຍ. ດັ່ງນັ້ນ ຍ່າເຊົາ ຈຶ່ງກັບກາຍເປັນອາຈານແຫ່ງຊີວິດຜູ້ທຳອິດຂອງພໍ່ ດ້ານຄວາມດຸໝັ່ນ, ຂະຫຍັນໝຸ່ນ ແລະ ຄວາມບາກບັ່ນຕໍ່ສູ້ກັບຄວາມທຸກ

ຍາກ ແລະ ອຸປະສັກ ນາໆປະການ.

ພໍ່ໄດ້ເຂົ້າໂຮງຮຽນປະຖົມ ຢູ່ປາກເຊ. ໃນເວລານັ້ນ ຍ້ອນສະພາບ ຄອບຄົວທຸຍ້ຽງຍາກ, ພໍ່ຕ້ອງໄດ້ທັງຮຽນທັງສີ ທັງຮັບຈ້າງເຮັດວຽກ. ພາຍ ຫຼັງສຳເລັດການສຶກສາຂັ້ນປະຖົມແລ້ວ, ພໍ່ໄດ້ສືບຕໍ່ການຮຽນ ຂອງຕົນທີ່ ໂຮງຮຽນລີເຊປາວີ ຢູ່ວຽງຈັນ. ໃນໄລຍະສອງສາມປີທຳອິດ ທີ່ມາຮຽນຢູ່ ວຽງຈັນ, ພໍ່ໄດ້ໄປອາໄສພັກເຊົາຢູ່ເຮືອນຂອງຍາພໍ່ເຖົ້າມະຫາແກ້ວ ລາຊະ ວົງໄຊ ພ້ອມໆກັບທ່ານປະທານ ຄຳໄຕ ສີພັນດອນ ແລະ ລູກຫຼານຈຳນວນ ໜຶ່ງ ທີ່ມາຈາກແຂວງຈຳປາສັກ. ຕໍ່ມາກ່ອນເພິ່ນຈະຈົບໂຮງຮຽນໜຶ່ງປີ, ຍາ ພໍ່ເຖົ້າມະຫາແກ້ວ ທີ່ເປັນເພື່ອນສະໜິດຂອງປູ່ມາໄດ້ເສຍຊີວິດ, ພໍ່ຈຶ່ງໄປຢູ່ ນຳເຮືອນຂອງສະເດັດເຈົ້າສຸວັນນະພູມາ, ໂດຍພັນລະຍາຂອງເພິ່ນເປັນອາ ຈານຄົນຝະລັ່ງຂອງພໍ່; ຍ້ອນພວກເພິ່ນອີ່ຕົ້ນພໍ່ທີ່ມີຄວາມທຸຍ້ຽງຍາກ ໃນ ການດຳລົງຊີວິດເພື່ອສືບຕໍ່ຮ່ຳຮຽນໃຫ້ຈົບ, ນອກນັ້ນ ກໍແມ່ນຍ້ອນພວກເພິ່ນ ຊົ່ນຊົມນ້ຳໃຈດຸໝັ່ນຮ່ຳຮຽນ ແລະ ຮຽນເກັ່ງຂອງພໍ່, ຈຶ່ງຢາກສົ່ງເສີມພໍ່. ແຕ່ ພໍ່ກໍບໍ່ໄດ້ເຮັດໃຫ້ບັນດາຜູ້ທີ່ມີພະຄຸນໃນການລ້ຽງດູເພິ່ນຜິດຫວັງ. ຕາມການ ບອກເລົ່າຂອງທ່ານປະທານຄຳໄຕ ສີພັນດອນ, ພໍ່ເປັນນັກຮຽນທີ່ເກັ່ງ, ບໍ່ ເຄີຍຕົກຫ້ອງຈັກເທື່ອ ແລະ ໄດ້ທີ່ໜຶ່ງຕະຫຼອດ.

ພາຍຫຼັງຈົບໂຮງຮຽນ ທີ່ວຽງຈັນ, ພໍ່ກັບມາເຮັດວຽກທີ່ບ້ານເກີດ ຂອງເພິ່ນ. ໃນວັນທີ 14/7/1940 ພໍ່ໄດ້ສ້າງຄອບຄົວກັບແມ່ໄພບູນ ພົນເສ ນາ ແລະ ໄດ້ມີລູກນຳກັນ 12 ຄົນ ຄື: ນາງ ເຂັມເພັດ, ທ້າວ ແກ່ນແກ້ວ, ນາງ ເຂັມຄຳ, ນາງ ເຂັມແພງ, ນາງ ເຂັມວຽງ, ທ້າວ ສົມມະໂນ, ທ້າວ ສົມມາດ, ທ້າວສົມມັກ, ທ້າວ ສົມປອງ, ທ້າວ ສົມພອນ ແລະ ນາງ ສີ ເຮືອງນາມ.

ໃນຄວາມຊົງຈຳຂອງລູກໆ, ພໍ່ກົນ ເປັນຄົນທີ່ມັກຮ່ຳຮຽນ ເພື່ອສະ ແຫວງຫາຄວາມຮູ້, ແລະ ເປັນຄົນເຮັດວຽກດ້ວຍຄວາມໝາໝັ້ນອົດທົນ, ທັງມີ

ຫຼັກການທີ່ເຂັ້ມງວດ ເພື່ອຢຶດຖືຄວາມຍຸຕິທຳ ແລະ ເປັນທຳໃນສັງຄົມ ຕະຫຼອດຊີວິດຂອງເພິ່ນ. ພໍ່ ຍາມໃດກໍສັ່ງສອນລູກຫຼານ ໃຫ້ເປັນຄົນທີ່ສັດຊື່ ແລະ ດຸໝັ່ນຮໍ່າຮຽນ, ເພາະພໍ່ວ່າເງິນຄຳ ແລະ ຍົດຖາບັນດາສັກເປັນສິ່ງນອກກາຍ, ມີແຕ່ຄວາມຮູ້ຈຶ່ງເປັນສົມບັດທີ່ແທ້ຈິງ ແລະ ບໍ່ບິກແຫ້ງຈັກເທື່ອ ຂອງມວນມະນຸດ. ດ້ວຍເຫດຜົນດັ່ງກ່າວ, ພໍ່ໄດ້ເປີດຮ້ານຂາຍປຶ້ມເພື່ອລ້ຽງຊີບ, ທັງສົ່ງເສີມໃຫ້ລູກເຕົ້າມັກອ່ານປຶ້ມ. ນອກນັ້ນ, ເວລາພໍ່ໄປເຮັດວຽກຢູ່ຕ່າງປະເທດ ເພິ່ນບໍ່ຄ່ອຍເອົາສິ່ງຂອງມາຕ້ອນລູກ, ແຕ່ພັດຊື້ປຶ້ມທີ່ມີລາຄາແພງໆ ມາໃຫ້ລູກອ່ານ.

ສົມບັດອັນລ້ຳຄ່າປະການໜຶ່ງທີ່ພໍ່ແມ່ ທີ່ແສນຮັກໄດ້ປະໄວ້ໃຫ້ພວກລູກໆ ຄືນ້ຳໃຈກະຕັນຍູ, ກະຕະເວທິຕໍ່ຜູ້ທີ່ມີພະຄຸນ ແລະ ນ້ຳໃຈເມດຕາກະລຸນາ ແລະ ໂອບເອື້ອອາລີ ຕໍ່ພີ່ນ້ອງ ແລະ ເພື່ອນມິດ, ສະຫາຍ ໂດຍພໍ່ແມ່ໄດ້ເປັນແບບຢ່າງຕົວຈິງທີ່ໃສແຈ້ງໃນການໃຫ້ບົດຮຽນແຫ່ງຊີວິດໃຫ້ລູກເຕົ້າຂອງຕົນຊຶ່ງສະແດງອອກໃນເຫດການຕ່າງໆດັ່ງລຸ່ມນີ້:

1. ຍ້ອນວ່າ ຍ່າ ເຊົ້າ ເສຍຊີວິດ ແຕ່ເວລານ້ອງຊາຍຫຼ້າຂອງພໍ່ ຍັງນ້ອຍ, ດັ່ງນັ້ນ ເວລາພໍ່ສ້າງຄອບຄົວແລ້ວ ບໍ່ພຽງແຕ່ໄດ້ຮ່ວມກັບແມ່ລ້ຽງດູລູກເຕົ້າຂອງຕົນ, ແຕ່ຍັງໄດ້ລ້ຽງດູນ້ອງນຸ່ງ, ລູກຫຼານຂອງເພິ່ນອີກ, ທັງສົ່ງເສີມດ້ານການຮໍ່າຮຽນຂອງທຸກຄົນອີກ. ໃນໄລຍະຢູ່ປາກເຊ ແລະ ຕໍ່ມາຢູ່ວຽງຈັນ, ພໍ່ ແລະ ແມ່ ໄດ້ຮັບລ້ຽງດູນ້ອງຄົງຂອງຕົນ ກໍຄື ນ້ອງລູກອາວຂອງເພິ່ນ ແລະຫຼານຂອງທັງພໍ່ ແລະແມ່ ຈຳນວນຫຼາຍສິບຄົນ.

2. ເຖິງແມ່ນວ່າ ຄອບຄົວພວກຂ້າພະເຈົ້າເປັນຄອບຄົວໃຫ່ຍ, ແຕ່ລະມື້ກິນເຂົ້າກໍເປັນຫຼາຍພາ ແຕ່ພໍ່ກຳນົດຕ້ອງໃຫ້ກິນພ້ອມໜ້າພ້ອມຕາກັນ. ພໍ່ບໍ່ສົ່ງເສີມ ແລະ ບໍ່ອະນຸຍາດໃຫ້ລູກເຕົ້າໄປເລາະກິນຢູ່ຕາມຮ້ານຕ່າງໆຢູ່ທາງນອກ. ຈື່ວ່າມີຄັ້ງໜຶ່ງ, ນ້ອງຊາຍຜູ້ໜຶ່ງຂອງພໍ່ ຍ້ອນຟ້າວຈະໄປທ່ຽວນຳໝູ່ ຈຶ່ງລຸກຈາກພາເຂົ້າໂດຍປະຖ້ອຍເຂົ້າທີ່ກິນບໍ່ທັນໝົດໄວ້. ພໍ່

ໄດ້ເອີ້ນນ້ອງຊາຍໃຫ້ກັບມາກິນເຂົ້າໃຫ້ໝົດຈຶ່ງໄປ, ນ້ອງເພິ່ນຕອບວ່າອີ່ມ ແລ້ວ ແລະ ຍັງສືບຕໍ່ຍ່າງອອກຈາກພາເຂົ້າ. ພໍ່ເອີ້ນລາວກັບຄືນດ້ວຍນ້ຳສຽງທີ່ເຄັ່ງຂຶມ ແລະ ຢ້ຳບອກໃຫ້ກິນເຂົ້າໃຫ້ໝົດ ແລະ ສັ່ງສອນທຸກຄົນວ່າ ເຮົາບໍ່ແມ່ນຄົນປູກເຂົ້າ, ບໍ່ຮູ້ຄວາມທຸກ ຂອງຊາວນາ ທີ່ປູກເຂົ້າ ດັ່ງນັ້ນ ເຮົາ ຕ້ອງຮູ້ບຸນຄຸນຕໍ່ຜູ້ປູກເຂົ້າລ້ຽງດູເຮົາ. ຖ້າຕັກເຂົ້າໃສ່ຖ້ວຍເທົ່າໃດກໍ ຕ້ອງກິນ ໃຫ້ໝົດ, ຖ້າກະວ່າຈະກິນບໍ່ໝົດ ກໍບໍ່ຕ້ອງຕັກຫຼາຍ. ສຸດທ້າຍນ້ອງຂອງພໍ່ ຕ້ອງໄດ້ກັບຄືນມາກິນເຂົ້າໃນຖ້ວຍໃຫ້ໝົດ ຈຶ່ງອອກຈາກພາເຂົ້າໄດ້. ຕໍ່ມາ, ແມ່ໄພບູນ ກໍມັກເອົານິທານເລື່ອງນີ້ ເລົ່າສູ່ລູກຫຼານຂອງຕົນຟັງ ເພື່ອເຕືອນ ໃຫ້ລູກຫຼານຮູ້ຄຸນຄົນ ແລະ ຮູ້ປະຢັດ, ມັດທະຍັດ.

3. ຕອນທ້າຍສັບປະດາ, ພໍ່ ແລະ ແມ່ ມັກພາລູກເຕົ້າໄປກິນເຂົ້າ ປ່າຢູ່ສວນຫາດດອກແກ້ວ. ຍາມເກັບກ່ຽວຜົນລະປູກໄດ້ ເຊັ່ນໝາກມ່ວງ, ໝາກສາລີ, ໝາກພ້າວ ແລະ ຜັກມີ່ຕ່າງໆ, ເພິ່ນກໍມັກໃຫ້ລູກຫຼານ ຂັບລົດ ໄປສົ່ງໃຫ້ໝູ່ຄູ່, ພີ່ນ້ອງທັ້ງຫຼາຍ ໄດ້ຊີມ ແລະ ກິນນຳກັນ. ບາງເທື່ອຍັງເອົາ ໝາກສາລີທີ່ຕົ້ມແລ້ວ ຫຼື ປຸງແຕ່ງ ເປັນເຂົ້າໜົມແໜບ ແລ້ວເອົາໄປສົ່ງໃຫ້ ພວກເພິ່ນ.

ຈົນເທົ່າທຸກວັນນີ້, ປະຊາຊົນຢູ່ເຂດຫາດດອກແກ້ວ ຍັງເວົ້າເຖິງບຸນ ຄຸນຂອງພໍ່ ແລະ ແມ່ ທີ່ໄດ້ແບ່ງປັນດິນໃຫ້ຜູ້ທີ່ທຸກຍາກ ໂດຍບໍ່ເກັບເງິນນຳ.

4. ພໍ່ ແລະ ແມ່ ເປັນຜູ້ຖືສາດສະໜາພຸດ. ແຕ່ເວລາພວກລູກໆ ຍັງນ້ອຍພຸ້ນ, ເພິ່ນມັກສັ່ງສອນໃຫ້ ລູກເຕົ້າຢູ່ໃນສິນກິນໃນທຳ, ບໍ່ໃຫ້ທຳ ບາບຜູ້ອື່ນ, ໂດຍໃຫ້ຈື່ຈຳວ່າ “ຢາກໃຫ້ເພິ່ນດີ, ໂຕດີ; ຢາກໃຫ້ເພິ່ນຊື່ວ, ໂຕ ຊື່ວ”.ພໍ່ມັກໄປຫາພະສົງຄະນາຍົກຄູນ ມະນີວົງ ຢູ່ວັດຫາດຫຼວງ, ພະອາ ຈານໃຫ່ຍປີຊາ ຢູ່ວັດເທບນິມິດ ແລະ ພະອາຈານໃຫ່ຍ ຜ່ອງ ຢູ່ວັດອົ່ງຕໍ້, ເວລາພະອາຈານໃຫ່ຍ ດຣ. ວິຈິດ ສົງຫາລາດ ຍັງມີຊີວິດ, ເພິ່ນເຄີຍເລົ່າ ວ່າ, ເວລາຄູບາຈາກທາງໃຕ້ມາປະຈຳຢູ່ວັດເທບນິມິດໃໝ່, ພໍ່ ແລະ ແມ່ໄດ້

ເຄມວັດຖຸປັດໄຈ ເປັນຈຳນວນຫຼາຍໃຫ້ວັດ ແລະ ໃນແຕ່ລະເດືອນ, ຍັງເຄມ ເຂົ້າສານສີເປົ້າໃຫ້ວັດ.

23 ປີ ພາຍຫຼັງພໍ່ເສຍຊີວິດ, ເວລາແມ່ກັບຈາກເຮືອນດີຂອງພີ່ນ້ອງ ເພິ່ນໄດ້ລົມໃຫ້ລູກໆຟັງວ່າເພິ່ນໄດ້ພົບສາທຸໃຫ່ຍຄຳຈັນ ວິລະຈິດ ທີ່ມາແຕ່ ເມືອງຫຼວງແລ້ວຈຶ່ງຄິດພໍ້ວ່າ ກ່ອນພໍ່ຈະເສຍຊີວິດບໍ່ດົນ, ເພິ່ນເຄີຍຂຶ້ນເມືອ ເມືອງຫຼວງ ເພື່ອໄປເຂົ້າເຝົ້າເຈົ້າຊີວິດ ແລະ ເພິ່ນໄດ້ໄປໄຫ້ວສາທຸໃຫ່ຍ ຄຳ ຈັນຢູ່ວັດແສນ. ໃນເວລາໄອ້ລົມກັນ, ພໍ່ເວົ້ານຳສາທຸໃຫ່ຍວ່າ ຈະຊື້ພົມສີແດງ ມາປູໃສ່ວັດແສນ... ແລ້ວພໍ່ກໍເສຍຊີວິດກ່ອນ. ພວກຂ້າພະເຈົ້າເມື່ອໄດ້ຍິນ ແມ່ເວົ້າແນວນັ້ນ ຈຶ່ງໄດ້ຕິດຕໍ່ໄປຫາທ່ານຈານບຸນເພັ່ງຢູ່ເມືອງຫຼວງໃຫ້ລາວ ຊ່ວຍແທກທໍແຈກຢູ່ວັດແສນມາໃຫ້ແລ້ວ ກໍໄດ້ອອກເງິນກັນສັ່ງ ຊື້ພົມແດງ ຈາກເມືອງຈີນໄປເຄມສາທຸໃຫ່ຍ ເພື່ອໃຫ້ຄຳໝັ້ນສັນຍາຂອງພໍ່ກິນິມ ທີ່ມີຕໍ່ ສາທຸໃຫ່ຍ ຄຳຈັນ ປາກົດຜົນເປັນຈິງ.

5. ໃນປີ 1961, ດ້ວຍການຊ່ວຍເຫຼືອຂອງລັດຖະບານ ແລະ ປະ ຊາຊົນຂອງອະດີດສະຫະພາບ ໂຊວຽດ ແລະ ສປ. ຈີນ, ລູກລຸ້ນໃຫ່ຍ 4 ຄົນ ຂອງພໍ່ ແລະ ແມ່ ໄດ້ໄປສຶກສາຮ່ຳຮຽນທີ່ອະດີດສະຫະ ພາບໂຊວຽດ ແລະ ລຸ້ນກາງ 4 ຄົນ ໄປຮຽນຢູ່ສປ.ຈີນ. ສ່ວນລຸ້ນຜູ້ນ້ອຍ 4 ຄົນ ຢູ່ນຳພໍ່ແມ່.

ກ່ອນຈະສົ່ງພວກລູກໄປຮຽນ, ພໍ່ໄດ້ສັ່ງສອນໃຫ້ພວກລູກຕັ້ງໃຈ ສຶກສາ ຮ່ຳຮຽນເອົາຄວາມຮູ້ນຳຄູອາຈານຂອງບັນດາປະເທດເພື່ອນມິດ ທີ່ ເປັນຜູ້ມີບຸນຄຸນຮັບເອົາລູກໆໄປຮຽນ ເພື່ອກັບມາສ້າງສາພັດທະນາປະເທດ ຊາດບ້ານເມືອງ. ພາຍຫຼັງການເສຍຊີວິດຂອງພໍ່ທີ່ແສນຮັກ, ສູນກາງແນວ ລາວຮັກຊາດໄດ້ຕິດຕໍ່ເອົາແມ່ ທີ່ຖືກບາດເຈັບສາຫັດ ໃນເວລາສັດຕູຄາດ ຕະກຳພໍ່, ໄປປິ່ນປົວທີ່ປະເທດ ສ.ສ. ຫວຽດນາມ ແລະ ສ.ປ.ຈີນ, ແລະ ລູກໆ ລຸ້ນຜູ້ນ້ອຍ 4 ຄົນ ທີ່ຢູ່ນຳພໍ່ແມ່ ກໍໄດ້ໄປຮຽນຢູ່ສ.ປ.ຈີນແລະ ຕໍ່ມາ ຢູ່ສ.ສ. ຫວຽດນາມ. ໂດຍຈື່ຈຳຄຳສັ່ງສອນຂອງພໍ່ແລະແມ່, ພວກລູກທັ້ງ

ຫຼາຍ ໄດ້ຕັ້ງໜ້າບຸກບືນ ສຶກສາຮ່ຳຮຽນ ເພື່ອນຳເອົາວິຊາຄວາມຮູ້ທີ່ໄດ້ຮັບການຖ່າຍທອດຈາກຄູອາຈານ ມາຮັບໃຊ້ປະເທດຊາດ ແລະ ປະຊາຊົນ ເພື່ອເປັນການຕອບແທນບຸນຄຸນແຜ່ນດິນທີ່ໃຫ້ກຳເນີດ, ທັງເປັນການສະແດງຄວາມຮູ້ບຸນຄຸນອັນເລິກເຊິ່ງ ຕໍ່ການສຶກສາອົບຮົມ, ບີ່ມເພາະ ແລະ ດູແລ ເບ່ິງແຍງຂອງພັກປະຊາຊົນປະຕິວັດລາວ ກໍຄື ລັດຖະບານ ແລະ ປະຊາຊົນຂອງປະເທດ ສ.ສ. ຫວຽດນາມ, ສ.ປ.ຈີນ ແລະ ອະດີດສະຫະພາບໂຊວຽດ.

II. <u>ປະຫວັດຫຍໍ້ ແຫ່ງການເຄື່ອນໄຫວວຽກງານປະຕິວັດຂອງພໍ່ກິນິມ</u>

ໃນເສັ້ນທາງດ້ານໜ້າທີ່ການຂອງເພິ່ນ, ພໍ່ໄດ້ດຳເນີນຫຼາຍໜ້າທີ່ວຽກງານ ໂດຍເລີ່ມຈາກການເປັນນາຍພາສາ, ເປັນສະໝຸນໃນຫ້ອງການຂອງເຈົ້າແຂວງ ກ້າວໄປເຖິງການດຳລົງຕຳແໜ່ງຕ່າງໆໃນລະບົບການປົກຄອງ ຂອງພວກລ່າເມືອງຂຶ້ນຝະລັ່ງ ແລະ ອະດີດລາດຊະອານາຈັກລາວ ເຊັ່ນເຈົ້າ ເມືອງເມືອງປາກຊ່ອງ, ຮອງເຈົ້າແຂວງ ແຂວງຈຳປາສັກ, ຜູ້ແທນລາດຊະດອນແຂວງອັດຕະປື ທັງເປັນເຈົ້າແຂວງ ແຂວງອັດຕະປື, ເຈົ້າແຂວງ ແຂວງຫົວພັນ, ລັດຖະມົນຕີວ່າການກະຊວງຖະແຫຼງຂ່າວ ແລະ ໂຄສະນາການ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ແລະ ຮັກສາການນາຍົກລັດຖະ ມົນຕີລັດຖະບານປະສົມເປັນການ ຂອງ ສະເດັດເຈົ້າສຸວັນນະພູມາ; ລັດຖະມົນຕີວ່າການກະຊວງການຕ່າງປະເທດຂອງລັດຖະບານປະສົມສາມຝ່າຍ.

ຕາມການບອກເລົ່າຂອງແມ່ໄພບູນພົມເສນາ ແລະ ບັນດາລຸງປ້າອາວອາໃນຕະກຸນພົມເສນາຕະຫຼອດເຖິງເພື່ອນສະໜິດ, ມິດສະຫາຍ ແລະ ເພື່ອນຮ່ວມງານຂອງພໍ່ ກໍຄື ພໍ່ແມ່ພີ່ນ້ອງປະຊາຊົນ ທີ່ເຄີຍມີໂອກາດໄດ້ຮູ້ຈັກ ຫຼື ໄດ້ຍິນ ກ່ຽວກັບ ຊີວິດ ແລະ ວຽກງານຂອງພໍ່, ພວກລູກໆທັງຫຼາຍ

ຂອງພໍ່ ມີຄວາມເອກອ້າງທະນົງໃຈທີ່ສຸດ ທີ່ໄດ້ຍິນແຕ່ພວກເພິ່ນຍົກຍ້ອງ ສັນລະເສີນພໍ່ ວ່າເປັນຄົນທີ່ມີຄວາມທ່ຽງທຳ, ຮັກປະເທດຊາດ ແລະ ຮັກປະຊາຊົນລາວ ທີ່ເປັນເພື່ອນຮ່ວມຊາດ ຂອງເພິ່ນ, ທັງບາກບັ່ນຕໍ່ສູ້ເພື່ອຄວາມເປັນເອກະລາດ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດ ກໍຄື ເພື່ອຄວາມສົມບູນພູນສຸກຂອງປະຊາຊົນລາວບັນດາເຜົ່າ. ຜົນງານ ແລະ ຄຸນງາມຄວາມດີຂອງພໍ່ ມີມາກມາຍກ່າຍກອງ, ໃນນີ້ ພວກລູກໆຂໍຍົກບາງເຫດການພົ້ນເດັ່ນດັ່ງຕໍ່ໄປນີ້:

1. ໃນເວລາພໍ່ເປັນເຈົ້າແຂວງ ແຂວງຫົວພັນ ແຕ່ທ້າຍປີ 1949 ເຖິງຕົ້ນປີ 1951, ເພິ່ນໄດ້ປະກາດລົບລ້າງລະບອບກວາງລ່ານ, ທັງບໍ່ອະນຸຍາດໃຫ້ມີການກະທຳດູໝິ່ນ ແລະ ຖືຕ່ຳຜູ້ຍິງ, ເປັນ ຕົ້ນ ເວລາເຈົ້ານາຍ ຫຼື ນາຍທະຫານຂຶ້ນເຮືອນປະຊາຊົນຊາວບ້ານ, ຖ້າບໍ່ໄດ້ຮັບການສົມຍອມຂອງພວກກ່ຽວ ແມ່ນຫ້າມກອດຈູບຜູ້ຍິງແບບລຳພັງໃຈໃນເຮືອນຂອງພໍ່ແມ່ເຂົາເຈົ້າຄືດັ່ງທີ່ເຄີຍປະຕິບັດໃນໄລຍະຜ່ານມາ.

ການທີ່ພໍ່ຖືກສົ່ງໄປເປັນເຈົ້າແຂວງຢູ່ແຂວງຫົວພັນ, ຊຶ່ງຖືວ່າເປັນບ່ອນທຸລະກັນດານ ແລະ ຫ່າງໄກສອກ ຫຼີກ, ເປັນການລົງໂທດເພິ່ນໂດຍຈັກກະພັດຜູ້ປົກຄອງ, ຍ້ອນເຫັນວ່າເພິ່ນເປັນ “ຄົນຫົວແຂງ”, ມັກທັກທ້ວງ ແລະ ຕໍ່ສູ້ກັບສິ່ງທີ່ເຂົາເຈົ້າເຮັດບໍ່ຖືກຕ້ອງ. ແຕ່ພັດກາຍເປັນການລະໂອກາດທີ່ດີ ໃຫ້ພໍ່ມີການຕິດຕໍ່, ພົວພັນກັບກຳລັງແນວລາວອິດສະຫຼະຢູ່ເຂດນັ້ນ, ເປັນຕົ້ນແມ່ນ ທ່ານ ປະທານ ໄກສອນ ພົມວິຫານ. ພໍ່ໄດ້ຊ່ວຍແນວລາວອິດສະຫຼະໂດຍທາງອ້ອມ ດ້ວຍການແນະນຳໃຫ້ປະຊາຊົນຫຼີກລ້ຽງການເສ່ຍ ສ່ວຍໃຫ້ສັດຕູ ຫຼື ການເກນທະຫານຂອງເຂົາເຈົ້າ. ຕົວຢ່າງ, ເພິ່ນໄດ້ບອກວິທີໃຫ້ນາຍບ້ານ, ຕາແສງໄປລາຍງານຕົວະພວກ ຝະລັ່ງວ່າ ສະບຽງອາຫານທີ່ກຽມເສ່ຍສ່ວຍໃຫ້ພວກເຂົານັ້ນຖືກພວກອິດສະຫຼະມາກວດລ້າງເອົາໄປໝົດແລ້ວ. ຕາມການຊີ້ນຳທີ່ສະຫຼາດສະຫຼົວຂອງພໍ່, ພວກນາຍບ້ານຕາ

ແສງເລືອກເອົາແຕ່ຊາວໜຸ່ມຊາຍສະກັນທີ່ຈ່ອຍຜອມ, ປ່ອຍໂຊໄປເປັນທະ ຫານ, ສ່ວນພວກທີ່ແຂງ ແຮງກໍໃຫ້ໄປລີ້ຢູ່ປ່າຊົ່ວຄາວກ່ອນ. ໃນທີ່ສຸດພວກ ທີ່ບໍ່ໄດ້ມາດຕະຖານກໍຖືກສົ່ງກັບບ້ານຄືນ.

ດັ່ງທີ່ໄດ້ຂຽນໃນບົດຂອງທ່ານໄມສຸກ ໄຊສົມແພງ ແລະ ທ່ານ ຕິງ ເຢີທໍ, ພໍ່ມີການຕິດຕໍ່, ພົວພັນກັບກຳລັງແນວລາວອິດສະຫຼະຜ່ານຫຼາຍ ແຫ່ງ, ໃນນີ້ ພວກຂ້າພະເຈົ້າຂໍເລົ່າຄືນເລື່ອງທີ່ໄດ້ຍິນຈາກທ້າວແສງສຸວັນ, ລູກຫຼານຄົນຊໍ້າເໜືອທີ່ເຄີຍເອົາໃຈໃສ່ດູແລ, ເບິ່ງແຍງແມ່ໄພບູນ ເປັນເວ ລາ 12 ປີ ຈົນເຖິງວາລະສິ້ນລົມຫາຍໃຈຂອງເພິ່ນ. ທ້າວແສງໄດ້ເວົ້າວ່າ : ປູ່ຂອງລາວ ຊື່ມາ ເປັນຄົນຢູ່ບ້ານນາຈອງ, ເມືອງວຽງໄຊ ແຂວງຫົວພັນ. (ປັດຈຸບັນເສຍຊີວິດແລ້ວ). ຕາມການບອກເລົ່າຂອງປູ່ມາ, ເພິ່ນເຄີຍເປັນຜູ້ ຕິດຕໍ່ ລະຫ່ວາງ ເຈົ້າແຂວງກິນິມ ແລະ ກຳລັງອິດສະຫຼະ, ໂດຍອ້າໄສອ້າ ຊີບເປັນພໍ່ຄ້າແບກຫາບເຄື່ອງໄປຂາຍແລ້ວ ເອົາຈົດໝາຍຂອງກຳລັງອິດ ສະຫຼະມາສົ່ງໃຫ້ເຈົ້າແຂວງກິນິມ. ມີເທື່ອໜຶ່ງຖືກທະຫານຂອງສັດຕູກັກໄວ້ ເພື່ອຈະກວດເຄື່ອງ, ເພິ່ນຟ້າວເອົາຈົດໝາຍທີ່ບໍ່ທັນໄດ້ສົ່ງໃຫ້ເຈົ້າແຂວງ ມາຈິກມຸ່ນ ແລ້ວກືນກິນເລີຍ ເພື່ອບໍ່ໃຫ້ຄວາມລັບຕົກໃສ່ມືຂອງສັດຕູ. ປູ່ມາ ຍັງເລົ່າຕື່ມວ່າ: ເຈົ້າແຂວງ ກິນິມ ເປັນຄົນດີ, ຮັກປະຊາຊົນ ແລະ ປົກປ້ອງ ປະຊາຊົນ. ມີຫຼາຍເທື່ອ ພວກພໍ່ຄ້າຄືເພິ່ນ ມັກຈະຖືກພວກທະຫານສັດຕູ ຢຶດເອົາເຄື່ອງຂອງໂດຍບໍ່ຈ່າຍເງິນໃຫ້. ຖ້າຖືກກໍລະນີທີ່ທ່ານເຈົ້າແຂວງ ພົບພໍ້ ແມ່ນທ່ານເຈົ້າແຂວງຕ້ອງສັ່ງໃຫ້ພວກເຂົາ ສົ່ງເຄື່ອງຄືນໃຫ້ປະຊາ ຊົນ. ເທົ່າທຸກມື້ນີ້, ເມື່ອພົບລູກຫຼານຂອງພໍ່ກິນິມ,ຜູ້ເຖົ້າຜູ້ແກ່ທີ່ເຄີຍຮູ້ຈັກ ຫຼື ເຄີຍໄດ້ຍິນເລື່ອງລາວ ກ່ຽວກັບ ພໍ່ກິນິມ ກໍມັກຈະເວົ້າເຖິງຄວາມດີ ຂອງ ເຈົ້າແຂວງກິນິມ. ເຊັ່ນຕົວຢ່າງ ເວລາພວກຂ້າພະເຈົ້າໄປຫາທ່ານໄມສຸກ ໄຊສົມແພງ ທີ່ພວກຂ້າພະເຈົ້າເອີ້ນເພິ່ນເປັນອາວ້ວຍຄວາມເຄົາລົບນັບຖື, ເພາະເພິ່ນເຄີຍຮ່ວມງານນຳພໍ່ກິນິມ ແຕ່ສະໄໝພໍ່ເປັນເຈົ້າແຂວງ ແຂວງ

ຫົວພັນພຸ້ນ, ເພື່ອໄປເອົາເອກະສານ ແລະ ປຶ້ມຕ່າງໆທີ່ເພີ່ນຂຽນກ່ຽວກັບ ພໍ່, ພວກຂ້າພະເຈົ້າໄດ້ພໍ້ພໍ່ເຖົ້າທ້າວວຸນດີ[1] ທີ່ມາຢາມທ່ານໄມສຸກ. ພໍແຕ່ ໄດ້ຍິນທ່ານໄມສຸກແນະນຳໃຫ້ຮູ້ວ່າ ພວກຂ້າພະເຈົ້າເປັນລູກ ຂອງພໍ່ກິນິມ, ພໍ່ເຖົ້າຟ້າວລຸກຈາກຕັ່ງດ້ວຍຄວາມຕື້ນຕັນໃຈ ແລະ ໂດດມາຈັບມືພວກຂ້າ ພະເຈົ້າ, ພ້ອມທັງເວົ້າດ້ວຍສຽງສະອື້ນ ແລະ ມີນ້ຳຕາໃນເບົ້າຕາຂອງເພີ່ນ ອີກວ່າ: "ໂອ, ພວກລູກແມ່ນລູກຂອງເຈົ້າແຂວງກິນິມນໍ?.... ພໍ່ເຖົ້າຮູ້ເພີ່ນດີ ໃດ. ເພີ່ນເປັນຄົນດີຫຼາຍ ແລະ ໄດ້ເຮັດວຽກຊ່ວຍພວກເຮົາຫຼາຍ. ເພາະເວ ລານັ້ນ ພໍ່ເຖົ້າເປັນຫົວໜ້າຫ້ອງໂຄສະນາອົບຮົມ ຢູ່ເມືອງຊ່ອນ ໂດຍທ່ານ ໄມສຸກເປັນຫົວໜ້າ ແລະ ເປັນຜູ້ໄປຕິດຕໍ່ກັບທ່ານເຈົ້າແຂວງ"... ພວກຂ້າ ພະເຈົ້າທີ່ເປັນລູກຫຼານຂອງພໍ່ ຮູ້ສຶກຊາບຊຶ້ງໃຈທີ່ສຸດ ທີ່ພໍ່ແມ່ປະຊາຊົນມີ ຄວາມເຫຼື້ອມໃສຕໍ່ນ້ຳໃຈເສຽສະຫຼະອັນສູງສົ່ງຂອງພໍ່ ເພື່ອພາລະກິດຂອງ ປະເທດຊາດ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນ.

2. ໃນໂອກາດທີ່ພໍ່ເປັນຜູ້ແທນລາດຊະດອນແຂວງອັດຕະປື, ທັງ ເປັນເຈົ້າແຂວງ ແຂວງອັດຕະປື, ເພີ່ນໄດ້ຊຸກຍູ້ການພັດທະນາຂອງທ້ອງ ຖິ່ນ, ທັງສົ່ງເສີມໃຫ້ປະຊາຊົນມີວຽກເຮັດງານທຳ ເພື່ອໃຫ້ມີລາຍໄດ້ມາປັບ ປຸງຊີວິດການເປັນຢູ່ພາຍໃນຄອບຄົວຂອງຕົນ. ໃນເວລານັ້ນ ມັກມີປະຊາ ຊົນທີ່ພົບຄວາມຫຍຸ້ງຍາກດ້ານຊີວິດການເປັນຢູ່ ໄປຫາເພີ່ນ ເພື່ອຂໍການ ຊ່ວຍເຫຼືອ, ລູກສາວກິນິກຂອງເພີ່ນມັກເອົາເງິນ ຫຼື ສິ່ງຂອງໃຫ້ພວກເຂົາເຈົ້າ ເພາະອີຕົນ ແລະ ເຫັນໃຈເຂົາເຈົ້າ. ພໍ່ເລີຍບອກລາວວ່າ: "ໃນສັງຄົມເຮົາ ຍັງມີຄົນທຸກ ແລະ ຄົນທີ່ມີຄວາມຫຍຸ້ງຍາກດ້ານຊີວິດການເປັນຢູ່ຫຼາຍ, ລູກ ຈະຊ່ວຍເຂົາເຈົ້າແບບນີ້ບໍ່ຫຼ້ອນດອກ. ດີແທ້ຕ້ອງສົ່ງເສີມໃຫ້ເຂົາມີວຽກມີ

---

[1] ຕາມໄດ້ຖາມທ່ານໄມສຸກ ຕາມຫຼັງ, ເພີ່ນບອກໃຫ້ຮູ້ວ່າ ພໍ່ເຖົ້າທ້າວວຸນດີ ກິ ປີນີ້ມີອາຍຸ 93 ປີແລ້ວ, ເພີ່ນ ເປັນຊາວຫວຽດນາມຕ່າງດ້າວຢູ່ລາວ, ທັງເປັນພະນັກງານຫຼັກແຫຼ່ງໃນຖັນແຖວປະຕິວັດຂອງພວກເຮົາ,ແລະ ເປັນລູກຊາຍຂອງເລຂາທິການພັກກອມມຸຍນິດອິນດູຈີນ ປະຈຳແຄ້ວນລາວ ຊຶ່ງມີຊື່ລັບ ເປັນທ່ານ ຕີ ຊຶ່ງຖືກ ພວກຈັກກະພັດຝະລັ່ງສັງຫານຢູ່ລາວໃນຊຸມປີ 30.

ງານ ເພື່ອສ້າງລາຍໄດ້ມາລ້ຽງຊີບ, ທັງສົ່ງເສີມໃຫ້ລູກ ເຕົ້າຂອງເຂົາເຈົ້າໄດ້ ມີໂອກາດສຶກສາຮໍ່າຮຽນເອົາຄວາມຮູ້ ເພື່ອຈະມີໂອກາດທີ່ດີກ່ວາເກົ່າດ້ານ ການຈ້າງງານ ແລະ ການພັດທະນາ."

3. ເວລາພໍ່ເປັນໜຶ່ງໃນຈຳນວນຜູ້ແທນ 43 ທ່ານ ຈາກທົ່ວປະເທດ ທີ່ໄດ້ເຂົ້າຮ່ວມໃນການຮ່າງລັດຖະທຳມະນູນສະບັບທຳອິດຂອງປະເທດ ລາວ, ໃນນາມເປັນຜູ້ແທນຂອງເຂດໃຕ້ເພິ່ນເປັນຜູ້ໜຶ່ງທີ່ໄດ້ຮ່ວມຕໍ່ສູ້ຢ່າງ ເດັດຂາດຕ້ານເລ່ກົນຂອງພວກປົກຄອງຝະລັ່ງ ທີ່ຢາກທັນປ່ຽນອັກສອນ ລາວ ໃຫ້ກາຍເປັນອັກສອນ "ລາແຕງ" ຄືພາສາຫວຽດນາມ, ແຕ່ພວກເຂົາ ບໍ່ໄດ້ຮັບຜົນສຳເລັດໃນເຈດຈຳນົງດັ່ງກ່າວ. ດັ່ງນັ້ນ ພວກເຮົາຈຶ່ງສາມາດ ຮັກສາອັກສອນພາສາລາວໄວ້ໄດ້ຈົນເຖິງທຸກວັນນີ້.

ໃນໄລຍະລວມລາວຄັ້ງທີໜຶ່ງ, ພໍ່ກິນິມ ພົນເສນາ ເປັນຜູ້ແທນລາດ ຊະດອນໃນສະພາ. ໂດຍສືບຕໍ່ມູນເຊື້ອແຫ່ງການປະສານຮ່ວມມືກັບແນວ ລາວອິດສະຫຼະ ໃນສະໄໝຢູ່ຊຳເໜືອ, ພໍ່ກິນິມ ແລະ ແມ່ໄພບູນ ໄດ້ປະ ກອບສ່ວນດ້ວຍຫຼາຍຮູບການ ແລະ ຊ່ວຍເຫຼືອບັນດາທ່ານຜູ້ນຳແນວລາວ ຮັກຊາດໃນການເຄື່ອນໄຫວທັງເປີດເຜີຍ ແລະ ປິດລັບ ຢູ່ວຽງຈັນ ໂດຍມີ ກໍລະນີໃຊ້ຮູບການຮ່ວມພາເຂົ້ານຳກັນເພື່ອມາປະຊຸມປຶກສາຫາລືວຽກງານ. ບັນດາທ່ານຜູ້ນຳເຊັ່ນ ທ່ານປະທານສຸພານຸວົງ, ທ່ານປະທານ ຄຳໄຕ ສີພັນດອນ, ທ່ານໜູຮັກ ພູມສະຫວັນ, ທ່ານ ສາລີ ວົງຄຳຊາວ, ທ່ານ ສົມລັດ ຈັນທະມາດ.... ມັກມາກິນເຂົ້າຢູ່ເຮືອນຂອງພວກຂ້າພະເຈົ້າ ແລະ ມາຮ່ວມປະຊຸມນຳພໍ່ກິນິມ. ມີຫຼາຍເທື່ອ, ທ່ານໜູຮັກ ພູມສະຫວັນ, ທ່ານ ສາລີ ວົງຄຳຊາວ, ທ່ານສົມລັດ ຍັງນອນຄ້າງຄືນຢູ່ໃນເຮືອນອີກ. ນອກນັ້ນ, ພໍ່ຍັງ ຊ່ວຍຊອກເຊົ່າເຮືອນໃຫ້ສຳນັກງານແນວລາວຮັກຊາດຢູ່ນາໄຮ່ດງ ນຳອີກ.

ເພື່ອອຳນວຍຄວາມສະດວກແກ່ການໂຄສະນາແນວທາງນະໂຍ ບາຍຂອງແນວລາວຮັກຊາດ, ພໍ່ ແລະ ແມ່ ໄດ້ເອົາເງິນຈາກການຂາຍ ເຄື່ອງໃນບໍລິສັດໄພບູນ ເພື່ອຈັດຊື້ເຄື່ອງພິມ ແລະ ອຸປະກອນການພິມ ແລ້ວ ຈັດພິມໜັງສືພິມ ແລະ ໃບປິວ ກໍຄືເອກະສານອື່ນໆຂອງແນວລາວ ຮັກຊາດຢູ່ເຮືອນຂອງພວກຂ້າພະເຈົ້າ, ໂດຍແນວລາວຮັກຊາດສິ່ງພະນັກ ງານຂອງເພິ່ນມາກຳກັບໂດຍກົງ, ເປັນຕົ້ນມີ ທ່ານ ນາຍພົນຊຽງພູມ (ເສຍ ຊີວິດແລ້ວ), ທ່ານ ບຸນທຳ, ທ່ານທາ.... ພວກເພິ່ນມາກິນຢູ່ ພັກເຊົາໃນ ເຮືອນ ແລະ ເຮັດວຽກຍາມກາງຄືນ. ພໍ່ແມ່ ກໍຖືພວກເພິ່ນເປັນຄືລູກເຕົ້າ ຂອງຕົນ ແລະ ໃຫ້ຄວາມສະ ດວກທຸກປະການແກ່ການດຳເນີນງານຂອງ ພວກເພິ່ນ.

ດ້ວຍການສະໜັບສະໜູນຂອງແນວລາວຮັກຊາດ, ພໍ່ໄດ້ຈັດຕັ້ງພັກ ສັນຕິພາບເປັນກາງທີ່ເປັນພັນ ທະມິດທີ່ຕັ້ງໜ້າໃນການຮ່ວມປະສານວຽກ ງານກັບແນວລາວຮັກຊາດ ເພື່ອຕໍ່ສູ້ຢ່າງຖືກຕ້ອງຕາມກົດໝາຍໃນສະພາ ກັບຝ່າຍຂວາຈັດ ໃນຖານະເປັນຫົວໜ້າພັກຝ່າຍຄ້ານ.

ໃນບັ້ນເລືອກຕັ້ງເພີ່ມເຕີມ ປີ 1958, ພໍ່ກິນິມ ແລະ ຄະນະພັກ ສັນ ຕິພາບເປັນກາງ ໄດ້ຮ່ວມມືກັບແນວລາວຮັກຊາດໃນການອອກແຮງໂຄສະ ນາຫາສຽງ ເພື່ອຍາດແຍ່ງການສະໜັບສະໜູນຂອງປະຊາ ຊົນໃຫ້ປ່ອນບັດ ເອົາຕົວແທນຂອງແນວລາວຮັກຊາດ ແລະ ພັກສັນຕິພາບເປັນກາງໃຫ້ໄດ້ ຫຼາຍເທົ່າທີ່ຈະຫຼາຍໄດ້. ໃນທີ່ສຸດ, ຝ່າຍແນວລາວຮັກຊາດ ແລະ ພັກສັນ ຕິພາບເປັນກາງ ໄດ້ 13 ທີ່ນັ່ງໃນ 21 ທີ່ນັ່ງ, ໃນນັ້ນແນວລາວຮັກຊາດໄດ້

---

[2] ໃນພັກສັນຕິພາບເປັນກາງ, ພໍ່ກິນິມເປັນປະທານ, ທ່ານມະຫາກຸ ສຸວັນນະເມທີ ແລະ ທ່ານ ຈານປາວ ວັນທານຸວົງ ເປັນຮອງປະທານ. ນອກນັ້ນ, ໃນຄະນະຍັງມີ ແມ່ ໄພບູນ ພົນເສນາ, ທ່ານ ມະຫາບຸດດີ, ທ່ານ ກູຍຫຼີ ບັນຈິງພານິດ, ທ່ານ ອຸ່ນເນືອ ພິມມະສອນ, ທ່ານ ສົມສີ ບັນດາສັກ, ທ່ານ ຄຳເພົ້າ ບຸບຜາ, ທ່ານ ທຳມະສິນ, ທ່ານ ສຸບັນ ສະລິດທິລາດ, ທ່ານໜູພັນ ສິດພະໄຊ, ທ່ານ ສີສະອາດ, ທ່ານສະຫວາງ ຈັນເທພາ, ທ່ານ ສົມຮ ຈຳປາສິດ, ທ່ານ ມະໄລຄຳ ແລະ ບັນດາທ່ານອື່ນໆທີ່ ພວກຂ້າພະເຈົ້າຈື່ຈຳບໍ່ ໄດ້ໝົດ.

9 ທີ່ນັ່ງ ແລະ ພັກສັນຕິພາບເປັນກາງ ໄດ້ 4 ທີ່ນັ່ງ.

ເວລາທ່ານປະທານສຸພານຸວົງ ແລະ ບັນດາທ່ານຜູ້ນຳແນວລາວຮັກຊາດ ຖືກກັກຂັງຢູ່ຄ້າຍໂພນເຄັງ, ພໍ່ໄດ້ເປັນທະນາຍຄວາມຂອງພວກເພິ່ນໃນການຕໍ່ສູ້ຄະດີໃນສານຢ່າງເດັດດ່ຽວ ເພື່ອທວງໃຫ້ພວກປະຕິການຂວາຈັດປ່ຽຕ໊ອພວກເພິ່ນ. ເວລານັ້ນ ພັນລະຍາຂອງທ່ານປະທານສຸພານຸວົງ (ທ່ານ ປ້າວຽງຄຳ ສຸພານຸວົງ) ແລະ ທ່ານ ປ້າຄຳແພງ ບຸບຜາທີ່ເປັນຜູ້ແທນຂອງຝ່າຍແນວລາວຮັກຊາດ ກໍຄືບັນດາຄະນະນຳໃນຫ້ອງການສຳນັກງານຂອງແນວລາວຮັກຊາດ ກໍທຽວມາປຶກສາຫາລືວຽກງານກັບພໍ່. ແລະ ໃນຖານະເປັນທະນາຍຄວາມໃຫ້ທ່ານປະທານສຸພານຸວົງ, ພໍ່ກິນິມ ໄດ້ຮັບອະນຸຍາດໄປຢ້ຽມຢາມພວກເພິ່ນຢູ່ໃນຄຸກ ເພື່ອຕິດຕາມ ແລະ ແຈ້ງສະພາບການ ກ່ຽວກັບ ພວກເພິ່ນໃຫ້ຄະນະນຳຂອງແນວລາວຮັກຊາດ ປະຈຳຢູ່ວຽງຈັນຊາບ. ໃນເວລານັ້ນ, ພໍ່ກິນິມ ແລະ ແມ່ໄພບູນໄດ້ປະກອບສ່ວນຢ່າງຫຼວງຫຼາຍໃນການຊ໊ອາຫານ ແລະ ຢາປ໊ອພະຍາດໃຫ້ບັນດາທ່ານຜູ້ນຳແນວລາວຮັກຊາດຢູ່ໃນຄຸກ.

ນອກນັ້ນ ເພິ່ນຍັງຍາດແຍ່ງຫາງສຽງຂອງສາກົນ ເພື່ອຕ໋ໍສູ້ທວງໃຫ້ປ່ຽນຕ໊ອທ່ານປະທານ ສຸພານຸວົງ ແລະຄະນະຂອງເພິ່ນ. ໃນທີ່ສຸດ ເມື່ອເຫັນວ່າພໍ່ກິນິມ ມີການເຄື່ອນໄຫວຢ່າງແຂງແຮງເພື່ອຕ້ານພວກເຂົາ, ພວກປະຕິການຂວາຈັດໄດ້ສັ່ງກັກບໍລິເວນ ແລະ ເອົາຕຳຫຼວດມາເຝົ້ານອກເຮືອນຂອງພວກຂ້າ ພະເຈົ້າເພື່ອບັນລຸເປົ້າໝາຍ "ຄົນໃນບ່ໃຫ້ອອກ, ຄົນນອກບ່ໃຫ້ເຂົ້າ". ແຕ່ດ້ວຍຄວາມສະຫຼຽວສະຫຼາດ ແລະ ໄຫວພິກຂອງພໍ່ກິນິມ, ການຕິດຕໍ່ສື່ສານ ລະຫ່ວາງ ພໍ່ ແລະ ແນວລາວຮັກຊາດຍັງຄົງດຳເນີນຕາມເດີມໂດຍອາໃສລູກສາວກົກ ແລະ ລູກຊາຍກົກຂອງເພິ່ນ ເວລາໄປໂຮງຮຽນແລ້ວນຳເອົາເງິນຄຳ, ວັດຖຸສິ່ງຂອງ ແລະ ຈົດໝາຍໄປສົ່ງໃຫ້ຝ່າຍແນວລາວຮັກຊາດ ແລະໃນທາງກັບ ກໍເອົາຈົດໝາຍຈາກຝ່າຍແນວລາວ

ຮັກຊາດນຳມາໃຫ້ພໍ່. ໃນກໍລະນີທີ່ຝ່າຍແນວລາວຮັກຊາດມີຄວາມຕ້ອງ ການດ່ວນ, ພວກຂ້າພະເຈົ້າໄດ້ນັດກັບພະນັກງານຂອງແນວລາວຮັກຊາດ ກ່ອນ ເພື່ອມາເອົາເງິນເປັນເປົ້າເປັນເປົ້າຖິ້ມລົງທາງຫຼັງບ້ານໃຫ້ພວກເພິ່ນ. ພໍ່ແມ່ມອບເງິນດັ່ງກ່າວໃຫ້ເພື່ອເປັນຄ່າໃຊ້ຈ່າຍວົ່ງເຕັ້ນ ຊ່ວຍບັນດາທ່ານຜູ້ ນຳແນວລາວຮັກຊາດຢູ່ໃນຄຸກ, ລວມທັງຄ່າຊື້ຈ້າງພວກທະຫານທີ່ເຝົ້າ ພວກເພິ່ນ. ໃນທີ່ສຸດ, ດ້ວຍການນຳພາອັນສະຫຼາດສ່ອງໃສຂອງພັກປະ ຊາຊົນປະຕິວັດລາວທີ່ມີ ທ່ານ ປະທານ ໄກສອນ ພົມວິຫານ ເປັນປະທານ, ດ້ວຍການປະສານສົມທົບ ລະຫ່ວາງ ກຳລັງແນວລາວຮັກຊາດ ທີ່ເຄື່ອນ ໄຫວປິດລັບຢູ່ເຂດຕົວເມືອງ ແລະ ກຳລັງຮັກຊາດ ອັນມີພັກສັນຕິພາບ ເປັນກາງເປັນແກນກາງ, ບວກກັບກຳລັງແຮງຕໍ່ສູ້ຂອງປະຊາຊົນທຸກຊັ້ນ ຄົນໃນຕົວເມືອງ ແລະ ທາງສ່ຽງຄັດຄ້ານຂອງສາກົນ ຕໍ່ການກັກຕົວບັນດາ ທ່ານຜູ້ນຳແນວລາວຮັກຊາດ, ໃນວັນທີ 24/4/60, ທ່ານ ປະທານ ສຸພາ ນຸວົງ ແລະ ບັນດາທ່ານຜູ້ນຳແນວລາວຮັກຊາດໄດ້ແຫກຄຸກໂພນເຄັ່ງຢ່າງ ປອດໄພ ແລະ ມີໄຊສະຫ່ຳງາມ.

4. ເວລາເກີດລັດຖະປະຫານ 9/8/60, ຄະນະລັດຖະປະຫານ ກໍ ໄດ້ມາຂໍການຊີ້ນຳນຳພໍ່, ໂດຍພໍ່ໄດ້ໃຫ້ການສະໜັບສະໜູນຄະນະລັດຖະ ປະຫານທັງ ທາງດ້ານວັດຖຸ, ເງິນຄຳ (ເວລານັ້ນ ຄະນະລັດຖະປະຫານເຂົ້າ ອອກເຮືອນພວກຂ້າພະເຈົ້າເປັນຈຳນວນຫຼວງຫຼາຍ ເພື່ອມາປະຊຸມປຶກສາ ຫາລືວຽກງານນຳພໍ່) ແລະທັງໃຫ້ທິດຊີ້ນຳແກ່ພວກເຂົາເຈົ້າ. ພໍ່ສະເໜີໃຫ້ ຄະນະລັດຖະປະຫານ ເຊີນສະເດັດເຈົ້າສຸວັນນະພູມາ ມາຈັດຕັ້ງລັດຖະ ບານຊຸດໃໝ່ ທີ່ຖືກຕ້ອງຕາມກົດໝາຍ ເພື່ອມີເງື່ອນໄຂຂໍການຊ່ວຍເຫຼືອນຳ ພວກປະເທດເພື່ອນມິດ, ໂດຍສະເພາະ ບັນດາປະເທດສັງຄົມນິຍົມ. ນອກ ນັ້ນ ພໍ່ແນະນຳໃຫ້ຄະນະລັດຖະປະຫານ ຕ້ອງມີການຕິດຕໍ່ກັບແນວລາວ ຮັກຊາດ ເພື່ອຈະມີກຳລັງແຮງໃນການປະສານວຽກງານ ແລະຮ່ວມສຳພັນ

ສູ້ລົບ. ໂດຍການບອກເລົ່າຂອງທ່ານພົນຕີ ຊຽງສົມ ກູນລະວົງ, ວິລະຊົນ ແຫ່ງຊາດ, ອະດີດກຳມະການສູນກາງພັກ, ອະດີດລັດຖະມົນຕີຊ່ວຍວ່າ ການກະຊວງປ້ອງກັນຄວາມສະຫງົບ, ໂດຍຜ່ານທ່ານປ້າຄຳແພງ ບຸບຜາ, ທ່ານ ທອງຈັນ ອຸປະລະວັນ ແລະທ່ານ ຊຽງສົມເອງ, ພໍ່ກິນິມ ແລະ ຄະນະ ລັດຖະປະຫານ ຈຳນວນໜຶ່ງໄດ້ພົບປະ ແລະປະຊຸມກັບບັນດາທ່ານຜູ້ນຳ ແນວລາວຮັກຊາດ ທີ່ຊີ້ນຳວຽກງານຢູ່ເຂດຕົວເມືອງ ຄື ທ່ານສາລີ ວົງຄຳ ຊາວ, ທ່ານ ຄຳຜົນ ບຸດດາຄຳ ແລະທ່ານຊຽງສົມ ກູນລະວົງ.

ພາຍຫຼັງໄດ້ມີການຕິດຕໍ່ພົວພັນກັບບັນດາປະເທດສັງຄົມນິຍົມ, ເປັນຕົ້ນ ແມ່ນອະດີດສະຫະພາບ ໂຊວຽດ, ສ.ປ.ຈີນ ແລະ ສ.ປ. ຫວຽດ ນາມ, ພວກເພິ່ນ ກໍໄດ້ໃຫ້ການສະໜັບສະໜູນຄະນະລັດຖະປະຫານ ແລະ ໄດ້ສົ່ງເງິນລ້ຽງກອງທະຫານລັດຖະປະຫານ, ສະບຽງອາຫານ ຕະຫຼອດ ເຖິງອາວຸດຍຸດໂທປະກອນມາຊ່ວຍເຫຼືອ ຢ່າງທັນການ.

ເວລານັ້ນ, ສຳລັບໄທວຽງຈັນ ແລະ ຄົນລາວໂດຍທົ່ວໄປແລ້ວ, ພວກທີ່ເອີ້ນວ່າ ຄອມມູຍນິດ ເປັນ "ພວກທີ່ປ່າເຖື່ອນ ແລະ ໜ້າຢ້ານກົວ", ໂດຍພວກຕາເວັນຕົກ ມັກຈະສາຍຮູບເງົາໃຫ້ປະຊາຊົນເບິ່ງ ກ່ຽວກັບ ຮູບ ພາບຂອງພວກຄອມມູຍນິດ.ມີຕອນໜຶ່ງ ຍັງສາຍໃຫ້ເຫັນ ກ່ຽວກັບ ພາບທີ່ ເອົາຄົນເປັນຫຼາຍສິບ, ຫຼາຍຮ້ອຍຄົນໄປຝັງຢູ່ດິນ ໃຫ້ເຫຼືອແຕ່ຄໍ ແລ້ວເອົາ ລົດໄຖ ໄປຕັດຫົວຜູ້ຄົນທັ້ງຫຼາຍເລົ່ານັ້ນ. ດັ່ງນັ້ນ, ເມື່ອພໍ່ກິນິມ ເຊື້ອເຊີນ ທ່ານເອກອັກຄະລັດຖະທູດອະດີດສະຫະພາບໂຊວຽດມາຮັບປະທານອາ ຫານຢູ່ເຮືອນພວກຂ້າພະເຈົ້າ, ເວລາທ່ານທູດລົງຈາກລົດຂອງເພິ່ນ, ຜູ້ຄົນ ທັ້ງຫຼາຍມາຫຸ້ມເບິ່ງ "ຄອມມູຍນິດ" ບັກຫຼາຍໆ, ໃນນັ້ນ ມີທັ້ງນັກຂ່າວຕ່າງ ປະເທດ ທີ່ພັກຢູ່ໂຮງແຮມ ກົງສະແຕນລາຊີອີ ຕໍ່ໜ້າເຮືອນ ພວກຂ້າພະ ເຈົ້າ. ເມື່ອເຫັນວ່າທ່ານທູດ ກໍເປັນຄົນທຳມະດາ, ປະຊາຊົນກໍພາກັນເວົ້າວ່າ ຄອມມູຍນິດ ກໍເປັນຄົນຄືພວກເຮົາເຈົ້າຂ້ອຍນີ້ແຫຼະ, ສົມພໍພະນະທ່ານ ກິ

ນິມ ເພິ່ນບໍ່ຢ້ານທ່ານທູດ, ແຕ່ຍັງເຊີນຜູ້ກ່ຽວ ມາຮັບປະທານອາຫານນຳອີກ.

ໃນວັນທີ 29 ທັນວາ ປີ 1960, ທ່ານ ປະທານ ສຸພານຸວົງ ແລະ ພໍ່ ກີນິມ ໄດ້ອອກຖະແຫຼງ ການຮ່ວມ ເພື່ອຢືນຢັນກ່ຽວກັບ ຄວາມສາມັກຄີ ລະ ຫວ່າງ ທຸກກຳລັງຮັກຊາດໃນທົ່ວປະເທດ ແນໃສ່ຄັດຄ້ານ ຈັກກະພັດຜູ້ຮຸກ ຮານ ແລະ ຮຽກຮ້ອງໃຫ້ເປີດກອງປະຊຸມເຊີແນວກ່ຽວກັບລາວ.

ພາຍຫຼັງລັດຖະປະຫານ 9/8/60, ໃນໄລຍະທີ່ພໍ່ກີນິມ ດຳລົງຕຳ ແໜ່ງເປັນລັດຖະມົນຕີກະຊວງ ການຕ່າງປະເທດຂອງລັດຖະບານເປັນ ກາງໂດຍ ສະເດັດເຈົ້າ ສຸວັນນະພູມາເປັນນາຍົກ, ພໍ່ໄດ້ໄປຢ້ຽມຢາມເຂດທີ່ ໝັ້ນຊຳເໜືອສອງຄັ້ງ. ຄັ້ງທຳອິດ, ພໍ່ເປັນຫົວໜ້າຄະນະ, ໂດຍຮ້ອຍເອກ ກອງແລ ແລະ ຄະນະລັດຖະປະຫານຈຳນວນໜຶ່ງໄປນຳເພິ່ນ. ນອກນັ້ນ ລູກຊາຍກີກຂອງເພິ່ນ ດຣ. ແກ່ນແກ້ວ ກໍຕິດຕາມພໍ່ ໄປເຊັ່ນດຽວກັນ. ຕາມ ການບອກເລົ່າຂອງ ດຣ. ແກ່ນແກ້ວ, ເວລາພໍ່ລົງຍົນມາກໍມີ ທ່ານ ໜູຮັກ ພູມສະຫວັນ ແລະ ທ່ານນາ ໄຂຄຳພິທູນ (ເຈົ້າແຂວງ ແຂວງຫົວພັນ) ອອກ ໄປຕ້ອນຮັບເພິ່ນ ໂດຍມີ ປະຊາຊົນຊາວເມືອງຊຳເໜືອ ອອກໄປຕ້ອນຮັບ "ເຈົ້າແຂວງກີນິມ" ຂອງເຂົາເຈົ້າ ເປັນຈຳນວນຫຼວງຫຼາຍ. ໃນມືຂອງພໍ່ແມ່ ປະຊາຊົນ ຖືທຸງຮູບນົກສັນຕິພາບ ໂບກປ້ອຕ້ອນຮັບຜູ້ນຳຂອງຄະນະລັດ ຖະປະຫານ ທັງເປັນຫົວໜ້າພັກສັນຕິພາບເປັນກາງ. ເວລາອອກເດີນບິນ ຊຳເໜືອ ຄະນະຂອງພໍ່ ກໍມຸ້ງໜ້າເມືອເຮືອນ ທ່ານ ປະທານ ສຸພານຸວົງ, ແຕ່ພັດ ເຫັນແຕ່ພັນລະຍາຂອງເພິ່ນ ຄື ທ່ານປ້າວຽງຄຳ ສຸພານຸວົງ. ເມື່ອ ພໍ່ຖາມຫາ ສະເດັດເຈົ້າສຸພານຸວົງ, ພັນລະຍາຂອງເພິ່ນຕອບວ່າ ມື້ອື່ນຈະ ກັບມາ. (ບາດນັ້ນ ຈຶ່ງຮູ້ຕາມຫຼັງວ່າເພິ່ນພວມຢູ່ບົນເສັ້ນທາງແຫ ກຄຸກໂພນ ເຄັງກັບມາເຂດທີ່ໝັ້ນຊຳເໜືອ). ແລະ ໃນມື້ຕໍ່ມາ, ພໍ່ກີນິມ ແລະ ຮ້ອຍເອກ ກອງແລ ພ້ອມດ້ວຍຄະນະຈາກວຽງຈັນ ໄດ້ໄປຮ່ວມກັບບັນດາທ່ານຜູ້ນຳ ແນວລາວ ຮັກຊາດອອກຕ້ອນຮັບທ່ານປະທານສຸພານຸວົງຢ່າງສົມກຽດ,

ໂດຍສອງ ຟາກທາງ ກໍມີປະຊາຊົນຊາວເມືອງຊໍາເໜືອ ອອກຕ້ອນຮັບເພີ່ນ ຢ່າງຄັບຄາໜາແໜ້ນ. ທ່ານ ປະທານ ສຸພານຸວົງ ຂີ່ມ້າຢ່າງສະຫງ່າອີງອາດ ມາແຕ່ໄກ, ເມື່ອເຖິງບ່ອນຈະໂຮມຊຸມນຸມມິດຕິງຕ້ອນຮັບຄະນະຂອງພໍ່ ກິນິມ, ເພີ່ນລົງຈາກມ້າ ແລະ ຍິ້ມແຍ້ມແຈ່ມໃສ ຈັບມືກັບບັນດາທ່ານຜູ້ນໍາ ແນວລາວຮັກຊາດ ແລະ ຄະນະຂອງພໍ່ກິນິມ, ທັງໂບກມືໃສ່ມວນຊົນທີ່ມາ ຄອຍຕ້ອນຮັບເພີ່ນ. ເວລານັ້ນ, ໃນຄະນະປະທານມິດຕິງ, ນອກຈາກ ທ່ານ ປະທານ ສຸພານຸວົງ ແລະ ພໍ່ ກິນິມ ແລ້ວ, ຍັງມີບັນດາທ່ານຜູ້ນໍາຂອງແນວ ລາວຮັກຊາດ, ເຊັ່ນ ທ່ານ ປະທານ ໄກສອນ ພົມວິຫານ, ທ່ານໜູຮັກ ພູມສະຫວັນ, ທ່ານ ສີທົນ ກົມມະດໍາ ແລະ ທ່ານ ເຈົ້າ ສຸກ ວົງສັກ. ນອກ ນັ້ນ ຍັງມີຮ້ອຍ ເອກກອງແລ. ໃນທີ່ຊຸມນຸມ, ທ່ານປະທານສຸພານຸວົງ ແລະ ພໍ່ກິນິມ ໄດ້ຜັດປ່ຽນກັນ ອອກຄໍາເຫັນ ເພື່ອຢືນຢັນຄວາມເປັນເອກະພາບ ຕໍ່ແນວທາງນະໂຍບາຍຂອງແນວລາວຮັກຊາດ ແລະ ພັກສັນຕິພາບເປັນ ກາງໃນການຕໍ່ສູ້ ເພື່ອທວງໃຫ້ຝ່າຍຂວາຈັດ ທີ່ມີອິດທິກໍາລັງຈັກກະພັດໜູນ ຫຼັງ ຕ້ອງປະຕິບັດສັນຍາເຊີແນວ ກ່ຽວກັບລາວ, ທັງຢຶດໝັ້ນເສັ້ນທາງສັນຕິ ພາບເປັນກາງ, ເອກະລາດແຫ່ງຊາດ ແລະ ຄວາມຖືກຕ້ອງປອງດອງຊາດ.

ໃນຄັ້ງທີສອງ, ພໍ່ກິນິມໄດ້ຕິດຕາມນາຍົກ ສະເດັດເຈົ້າສຸວັນນະພູມາ ມາຢ້ຽມຢາມແຂວງຫົວພັນ ເພື່ອຮ່ວມປະຊຸມ ແລະ ປຶກສາຫາລືວຽກງານ ກັບທ່ານປະທານໄກສອນ ພົມວິຫານ, ທ່ານປະທານ ສຸພານຸວົງ ແລະ ບັນ ດາທ່ານຜູ້ນໍາອື່ນໆຂອງແນວລາວຮັກຊາດ. ໃນຄະນະທີ່ຕິດຕາມມາແຕ່ວຽງ ຈັນ, ຍັງມີທ່ານ ຄໍາສຸກ ແກ້ວລາ, ທ່ານ ເຈົ້າ ສີສຸມັງ ສີສະເຫຼີມສັກ, ຮ້ອຍ ເອກ ກອງແລ, ທ່ານເຈົ້າມູນ ທີ່ເປັນ ລູກສາວ ແລະ ເລຂາປະຈໍາສະເດັດ ເຈົ້າສຸວັນນະພູມາ.

ບ່ວ່າຈະຢູ່ໃນຖານະເປັນລັດຖະມົນຕີວ່າການກະຊວງການຕ່າງປະ ເທດ ຂອງລັດຖະບານເປັນກາງ ທີ່ສະເດັດເຈົ້າສຸວັນນະພູມາເປັນນາຍົກ ຫຼື

ໃນຖານະເປັນລັດຖະມົນຕີວ່າການກະຊວງການຕ່າງປະເທດຂອງ ລັດຖະ ບານປະສົມສາມຝ່າຍ, ຍາມໃດ ພໍ່ກີນີມ ກໍສະໜັບສະໜູນນະໂຍບາຍຜູກ ມິດກັບທຸກໆປະເທດທີ່ຮັກຫອມສັນຕິພາບໃນໂລກ, ໂດຍສະເພາະ ບັນດາ ປະເທດສັງຄົມນິຍົມ, ເປັນຕົ້ນແມ່ນອະດີດ ສະຫະພາບໂຊວຽດ, ສ.ປ.ຈີນ, ສ.ປ.ຫວຽດນາມ. ໃນທາງກັບ, ບັນດາປະເທດສັງຄົມນິຍົມ ກໍໄດ້ໃຫ້ ການ ສະໜັບສະໜູນທີ່ທັນການ ແລະ ລ້ຳຄ່າແກ່ລັດຖະບານລາວ ເພື່ອບັນລຸ ເປົ້າໝາຍຂອງການປະຕິວັດຄືສ້າງປະເທດລາວ ສັນຕິພາບ-ເອກະລາດ-ເປັນກາງ-ປະຊາທິປະໄຕ ແລະ ວັດທະນະຖາວອນ. ໃນການຢ້ຽມສັນທະ ອະໄມຕີອະດີດສະຫະພາບໂຊວຽດ, ສ.ປ.ຈີນ ແລະ ສ.ປ.ຫວຽດນາມ, ຜ່ານ ການຮ່ວມປຶກສາຫາລືວຽກງານກັບບັນດາທ່ານຜູ້ນຳຂອງບັນດາປະເທດດັ່ງ ກ່າວຂ້າງເທິງ, ພໍ່ກີນີມ ໄດ້ມີໂອກາດເຂົ້າຢ້ຽມຄຳນັບທ່ານປະທານເໝົາເຈີ ຕົ້ງ, ທ່ານປະທານໂຮຈີມິນ, ທັ້ງໄດ້ຄຸ້ນເຄີຍ ແລະ ເປັນເພື່ອນທີ່ສະໜິດກັບ ທ່ານ ນາຍົກຈູເອີນລາຍ, ທ່ານນາຍົກ ຟາມວັນດົ້ງ, ທ່ານ ລັດຖະມົນຕີຕ່າງ ປະເທດເຊັນອີ, ທ່ານ ພົນເອກ ຫວໍທ້ອງນຢາບ, ທ່ານລັດຖະມົນຕີຊ່ວຍວ່າ ການກະຊວງການຕ່າງປະເທດຂອງອະດີດສະຫະພາບໂຊວຽດ[3], ທ່ານລັດ ຖະມົນຕີຫງວຽນເກີດແທ່ກ.

...ແລະ ຄວາມຮັກແພງ, ຜູກພັນທີ່ສະໜິດ ແໜ້ນລະຫວ່າງຮຸ້ນຄົນ ລຸ້ນກ່ອນ ຍັງຄົບສືບເນື່ອງມາເຖິງເຊັ່ນລູກ, ເຊັ່ນ ຫຼານຂອງພວກເພິ່ນ, ຊຶ່ງ ສະແດງອອກຢູ່ບ່ອນວ່າ ໃນເວລາພຽງແຕ່ 23 ຊົ່ວ ໂມງທີ່ທ່ານປະທານ ປະເທດ ສີຈິນຜິງ ແຫ່ງສ.ປ.ຈີນ[4] ມາຢ້ຽມຢາມລາວ, ເພິ່ນໄດ້ຍາດເວລາ 35 ນາທີ ພົບປະກັບລູກໆຂອງພໍ່ກີນີມ ແລະ ແມ່ໄພບູນ ທີ່ເປັນເພື່ອນຮ່ວມ ໂຮງຮຽນດຽວກັນກັບເພິ່ນ, ໂດຍເນັ້ນໃຫ້ພວກເຮົາ ທີ່ເປັນຮຸ້ນຄົນລຸ້ນຫຼັງ

---

[3] ເມື່ອເພິ່ນຮູ້ຂ່າວວ່າພໍ່ກີນີມເສຍຊີວິດ, ເພິ່ນເປັນຫົວໃຈວາຍ ແລະ ເສຍຊີວິດທັນທີ. ທາງການໄດ້ຈັດໃຫ້ລູກລຸ້ນ ຜູ້ໃຫ່ຍ 4 ຄົນ ຂອງພໍ່ກີນີມ ໄປໄວ້ອາໄລຕໍ່ໜ້າສົບຂອງເພິ່ນ.

[4] ເວລານັ້ນ, ທ່ານ ສີຈິນຜິງ ດຳລົງຕຳແໜ່ງເປັນຮອງປະທານປະເທດ.

ຕ້ອງຖະໜຸຖະໜອມ ແລະ ເສີມຂະຫຍາຍສາຍພົວພັນ ມິດຕິພາບ ແລະ ການຮ່ວມມືຮອບດ້ານ ລະຫ່ວາງ ສອງປະເທດ ຈີນ-ລາວ. ເວລາທ່ານ ເສີນ ຮາວສູ່, ລູກຊາຍຂອງທ່ານ ເຊັນອີ ທີ່ເປັນອະດີດຮອງນາຍົກ, ອະດີດ ລັດຖະມົນຕີວ່າການ ກະຊວງການຕ່າງປະເທດຂອງ ສ.ປ.ຈີນ, ມາຢ້ຽມ ຢາມລາວ, ເພິ່ນກໍສະເໜີມາຢ້ຽມຢາມ ແມ່ໄພບູນ ໂດຍນຳເອົາ ຄວາມຢ້ຽມ ຖາມຂ່າວຂອງແມ່ເພິ່ນສົ່ງເຖິງແມ່ໄພບູນ.

ເວລາມີຄະນະຜູ້ແທນຂັ້ນສູງຂອງປະເທດຫວຽດນາມມາຢ້ຽມຢາມ ລາວ, ສະຖານທູດຫວຽດນາມປະຈຳລາວ ມັກຈະຕິດຕໍ່ພາພະນັກງານອາ ວຸໂສຫຼາຍທ່ານ ໃນຄະນະຜູ້ແທນນັ້ນ (ເຊັ່ນທ່ານທູດ ເລ່ວັນຫງຸນ ແລະ ທ່ານທູດ ບຸຍວັນແທງ ເປັນຕົ້ນ) ມາຢ້ຽມຢາມແມ່ໄພບູນ ໂດຍບັນດາທ່ານ ເຫຼົ່ານັ້ນໄດ້ເວົ້າໃຫ້ແມ່ຟັງເຖິງຄວາມຢ້ຽມຖາມຂ່າວຂອງບັນດາທ່ານຜູ້ນຳ ພັກ ແລະ ລັດຖະບານ ສ.ສ.ຫວຽດນາມ ທີ່ສົ່ງມາໃຫ້ ແມ່ ໄພບູນ ແລະ ຄອບຄົວ. ເວລາແມ່ຍັງມີຊີວິດ ແລະ ຍັງແຂງແຮງດີ, ບັນດາທ່ານລັດຖະ ມົນຕີວ່າການ ກະຊວງການຕ່າງປະເທດ ທ່ານ ຫງວຽນເກີແທກ, ທ່ານ ຫງວຽນແມ່ງເກີມ ກໍເຊື້ອເຊີນແມ່ ແລະ ລູກຫຼານຂອງເພິ່ນໄປພັກຜ່ອນຢູ່ ຫວຽດນາມທຸກໆປີ. ເວລາແມ່ເສຍຊີວິດແລ້ວ, ທ່ານ ລັດຖະມົນຕີວ່າການກະ ຊວງການຕ່າງປະເທດ ຫວຽດນາມ ຟາມບິ່ງມິ່ງ ທີ່ເປັນລູກຊາຍຂອງທ່ານ ຫງວຽນເກີແທກ ໄດ້ມາຢ້ຽມຢາມອ້າຍເອື້ອຍນ້ອງໃນຄອບຄົວ ພິນເສນາ ທີ່ ບ້ານພັກຂອງພໍ່ ແລະ ແມ່. ແລະເວລາທີ່ພວກຂ້າພະເຈົ້າໄປຢ້ຽມຢາມ ສ.ສ. ຫວຽດນາມ ຕາມຄຳເຊີນຂອງ ທ່ານລັດຖະມົນຕີ ຟາມບິ່ງມິ່ງ, ພວກຂ້າ ພະເຈົ້າ ໄດ້ໄປຢ້ຽມຢາມ ທ່ານປ້າ ຟາມທີຟຸກ, ພັນລະຍາຂອງທ່ານ ຫງວຽນເກີແທກ ທີ່ໄດ້ຕ້ອນຮັບພວກຂ້າພະເຈົ້າຢ່າງອົບອຸ່ນເໝືອນດັ່ງລູກ ຫຼານຂອງເພິ່ນ.... ແລະ ທ່ານພິນເອກ ຫວໍຫງວຽນຢາບ ກໍໄດ້ຝາກຮູບ ພາບນິກຍາງຂາວ ທີ່ແສ່ວດ້ວຍໄໝມາໃຫ້ ແມ່ ໄພບູນ ໃນໂອກາດທີ່ລູກ

ຊາຍຂອງເພີ່ນ ມາເຮັດວຽກຢູ່ລາວ ຊຶ່ງແມ່ໄດ້ສັ່ງໃຫ້ເອົາຮູບດັ່ງກ່າວ ຕິດຢູ່ ຫ້ອງຮັບ ແຂກຂອງເພີ່ນເພື່ອແຍງ...

ພາບພິດທີ່ສວຍສິດງົດງາມດັ່ງກ່າວຂ້າງເທິງນີ້ ລ້ວນແຕ່ເປັນກຳລັງ ແຮງມະຫາສານປຸກລະດົມ, ຊຸກຍູ້ໃຫ້ພວກຂ້າພະເຈົ້າຕ້ອງສືບຕໍ່ອອກແຮງ ປົກປັກຮັກສາ ແລະ ເສີມຂະຫຍາຍຄວາມສາມັກຄີ ແລະ ສາຍພົວພັນມິດ ຕະພາບທີ່ເປັນ ມູນເຊື້ອອັນດົງງາມຂອງປະຊາຊົນສອງຊາດ ລາວ-ຫວຽດ ແລະ ລາວ-ຈີນ.

7. ກ່ອນບັ້ນລົບວຽງຈັນ ຄັ້ງວັນທີ 13/12/60, ສະເດັດເຈົ້າສຸວັນ ນະພູມາ ແລະ ບັນດາທ່ານໃນລັດຖະບານເປັນກາງຂອງເພີ່ນໄດ້ໄປລີ້ໄພຢູ່ ປະເທດກຳປູຊາ ແລະ ພະມ້າ, ຍັງເຫຼືອແຕ່ພໍ່ກົມມະດຸ໊ງວ ທີ່ຍັງສືບຕໍ່ຢູ່ວຽງ ຈັນ ເພື່ອຊີ້ນຳກຳລັງລັດຖະປະຫານ ຕໍ່ສູ້ປົກປັກຮັກສາຕົວເມືອງວຽງຈັນ ຮ່ວມກັບກຳລັງແນວລາວຮັກຊາດ. ກ່ອນຈະອອກໄປພະນົມເປັນ, ສະເດັດ ເຈົ້າສຸວັນນະພູມາ ໄດ້ມອບໃຫ້ພໍ່ເປັນຜູ້ຮັກ ສາການນາຍົກລັດຖະມົນຕີ ຂອງລັດຖະບານ. ແຕ່ຍ້ອນການໂອກາດປະຕິວັດບໍ່ທັນສຸກງອມ, ກຳລັງ ຂອງພວກເຮົາຍັງອ່ອນນ້ອຍ, ຖ້າທຽບໃສ່ກຳລັງຂອງຝ່າຍປະຕິການຂວາ ຈັດວຽງຈັນທີ່ໄດ້ຮັບການໜູນຫຼັງຈາກອິດທິກຳລັງຈັກກະພັດ, ດັ່ງນັ້ນ ຈຶ່ງບໍ່ ສາມາດປ້ອງກັນນະຄອນຫຼວງວຽງຈັນໄດ້. ພໍ່ກົມມະດຸ໊ງວ ໄດ້ນຳພາຄະນະລັດຖະ ປະຫານ ແລະ ກອງທະຫານຜ່າວິງປົດລ້ອມຂອງສັດຕູອອກມາ ແລະ ຮ່ວມ ສຳພັນສູ້ລົບກັບກຳລັງແນວລາວຮັກຊາດເພື່ອປົດປ່ອຍທົ່ງໄຫຫີນຢ່າງມີໄຊ ໃນວັນທີ 1/1/61. ສະເດັດເຈົ້າສຸວັນ ນະພູມາ ແລະ ຄະນະລັດຖະບານ ເປັນກາງ ກໍໄດ້ກັບຈາກການໄປລີ້ໄພຢູ່ຕ່າງປະເທດມາຄັ້ງໄຊເພື່ອຈັດຕັ້ງ ລັດຖະບານເປັນກາງໂດຍສະເດັດເຈົ້າສຸວັນນະພູມາເປັນນາຍົກ ແລະ ພໍ່ກົ ມມະດຸ໊ງວ ເປັນລັດຖະມົນຕີ ວ່າການກະຊວງການຕ່າງປະເທດ.

ໃນວັນທີ 30/12/1960, (ກ່ອນມື້ປົດປ່ອຍທົ່ງໄຫຫີນ 2 ມື້) ໃນນາມ

ຂອງຜູ້ຮັກສາການນາຍົກ ລັດຖະມົນຕີຂອງ ລັດຖະບານເປັນກາງຄັ້ງໄຂ, ພໍ່ ກິນິມ ໄດ້ຜ່ານວິທະຍຸກະຈາຍສຽງອອກ ຄຳຖະແຫຼງການໄປທົ່ວປະເທດ ເພື່ອຮຽກຮ້ອງໄປຍັງກອງທະຫານຂອງ ກຳລັງເປັນກາງທີ່ຮັກຊາດ, ຊາວ ໜຸ່ມ ນັກສຶກສາທີ່ຮັກຊາດ ແລະ ປະຊາຊົນລາວ ທຸກຖ້ວນໜ້າ ຈົ່ງເຫັນແຈ້ງ ຕໍ່ກົນອຸບາຍແຊກແຊງ, ຮຸກຮານຂອງພວກອິດທິກຳລັງຈັກກະພັດ ແລະ ພວກປະຕິການຂວາຈັດ ວຽງຈັນ ແລະ ຈົ່ງຮັດແໜ້ນຄວາມສາມັກຄີ, ເສີມ ຂະຫຍາຍນ້ຳໃຈຮັກຊາດ ແລະ ຈິດໃຈສູ້ຮົບ ຢ່າງພິລະອາດຫານ ເພື່ອໃຫ້ ປະເທດລາວມີ ສັນຕິພາບ, ເປັນກາງ ແລະ ຄວາມຖືກຕ້ອງ ປອງດອງຊາດ.

ນອກນັ້ນ, ພໍ່ຍັງຮຽກຮ້ອງໄປຫາ ນາຍ ແລະ ພົນທະຫານຂອງ ກອງທັບລາດຊະອານາຈັກລາວ ຈົ່ງຮ່ວມມືກັບກອງທັບຂອງກຳລັງຮັກຊາດ ແລະ ຫັນປາຍປືນໄປໃສ່ສັດຕູລວມຂອງຊາດຄື ພວກອິດທິກຳລັງຈັກກະພັດ ແລະ ພວກປະຕິການຂວາຈັດ ວຽງຈັນ.

ໃນເວລາຖອຍທັບຈາກວຽງຈັນມາຢູ່ວັງວຽງໄລຍະໜຶ່ງ, ເພື່ອກະ ກຽມປົດປ່ອຍທົ່ງໄຫຫີນ, ພໍ່ໄດ້ ໄປຂໍການຊ່ວຍເຫຼືອດ້ານການທະຫານນຳ ລັດຖະບານສ.ປ.ຫວຽດນາມ ໃນຖານະເປັນຜູ້ຮັກສາການນາຍົກຂອງລັດ ຖະບານເປັນກາງຄັ້ງໄຂ ທີ່ໄດ້ຮັບການພະລາດຊະທານແຕ່ງຕັ້ງຢ່າງຖືກ ຕ້ອງຕາມກົດໝາຍ ໂດຍເຈົ້າຊີວິດ. ເວລານັ້ນ ແມ່ນຈຸບິນ ອານ 2 (AN 2) ທີ່ຮັບໃຊ້ການນຳຂອງຫວຽດນາມ ມາຮັບພໍ່ກິນິມ ໄປຮາໂນຍ ເພື່ອໄປພົບ ປະເຈລະຈາ ແລະ ປຶກສາຫາລືວຽກງານກັບບັນດາທ່ານຜູ້ນຳຂອງ ລັດຖະ ບານ ສ.ປ.ຫວຽດນາມ[5]. ຈາກນັ້ນມາ, ການຊ່ວຍເຫຼືອຈາກ ສ.ປ.ຫວຽດນາມ ແລະບັນດາປະເທດສັງຄົມນິຍົມອື່ນໆ, ເຊັ່ນ ສ.ປ.ຈີນ ແລະ ອະດີດສະຫະ ພາບໂຊວຽດ ກໍຫຼັ່ງທັ່ງເທເຂົ້າມາເຂດປົດປ່ອຍ ແລະ ດ້ວຍຄຳຂັວນ "ເອົາ ສອງຕີໜຶ່ງ" ຂອງແນວລາວຮັກຊາດ (ໝາຍເຖິງກຳລັງແນວລາວຮັກຊາດ

[5] ຈົ່ງເບິ່ງບົດ "ຖ້ວຍບິນ ທີ່ບໍ່ຄ່ອຍມີໃຜຮູ້ ແລະ ແຂກພິເສດ "VIP" " ໃນປຶ້ມຄວາມຊົງຈຳສະບັບນີ້.

ແລະ ກຳລັງເປັນກາງຮັກຊາດຕິກັບຝ່າຍຂວາຈັດວຽງຈັນ)ເຮັດໃຫ້ທ່ວງທ່າ ການປະຕິວັດມີການປ່ຽນແປງຢ່າງມີຜົນດີແກ່ກຳລັງແນວລາວຮັກຊາດ ແລະ ກຳລັງເປັນກາງຮັກຊາດ, ຈົນທີ່ສຸດໄດ້ບີບບັງຄັບໃຫ້ຝ່າຍປະຕິການ ຂວາຈັດວຽງຈັນຍອມເຂົ້າໂຕະເຈລະຈາກັບແນວລາວຮັກຊາດ ແລະ ກຳລັງ ເປັນກາງຮັກຊາດ ແລະກ້າວໄປເຖິງການລວມລາວຄັ້ງທີ 2, ໂດຍມີການ ສ້າງຕັ້ງລັດຖະບານປະສົມສາມຝ່າຍ ອັນມີສະເດັດເຈົ້າສຸວັນນະພູມາ ເປັນ ນາຍົກ ແລະ ພໍ່ກົມ ເປັນລັດຖະມົນຕີວ່າການກະຊວງການຕ່າງປະເທດ.

... ໃນເວລາແມ່ໄພບູນ ຍັງມີຊີວິດຢູ່, ແຕ່ກໍມີສຸກຂະພາບອ່ອນເພຼ ລົງຫຼາຍແລ້ວ, ເພື່ອນຮ່ວມ ງານຂອງຄະນະຈຸບົນ ອານ 2 ທີ່ເຄີຍມາຮັບພໍ່ ຈາກວັງວຽງໄປຮ່າໂນຍນັ້ນ ໄດ້ມາຢ້ຽມຢາມລາວໃນຖານະເປັນແຂກຂອງ ສະຫະພັນນັກລົບເກົ່າ. ພວກເພິ່ນໄດ້ສະເໜີມາຢ້ຽມຄຳນັບແມ່ໄພບູນ ທີ່ນັ່ງ ລໍ້ຕ້ອນ ຮັບພວກເພິ່ນ(ຍ້ອນຜົນສະທ້ອນຂອງການຖືກຍິງບາດເຈັບ ເວລາ ພໍ່ຖືກຄາດຕະກຳ, ແມ່ຖືກເສຽອົງຄະ ແລະ ຕໍ່ມາໄດ້ຕັດຂາເບື້ອງໜຶ່ງ). ພວກເພິ່ນມີທັງໝົດ 4 ຄົນ ຄື ທ່ານພັນເອກ ດ່ວນມິງ, ທ່ານພັນເອກ ດວນ ມິ່ງໂຮວ, ທ່ານພັນເອກ ຫວູແມ່ງ ແລະທ່ານພັນເອກ ຮູອີ່ງວັນນາມ. ເມື່ອ ພົບແມ່ໄພບູນ, ພວກເພິ່ນກໍມາຖາມສະບາຍດີເພິ່ນ, ໂດຍເອີ້ນເພິ່ນເປັນ "ແມ່" ແລະໄດ້ຈູດທູບໄຫ້ຢູ່ຕໍ່ໜ້າຮູບພໍ່ກົມ ພົນເສນາ. ແມ່ດີໃຈຫຼາຍທີ່ ລູກຫຼານຈາກແດນຫວຽດນາມທີ່ຫ່າງໄກບໍ່ຫຼົງລືມເພິ່ນ ແລະ ຍັງມາຢ້ຽມ ຢາມເພິ່ນ. ແມ່ຍັງທ່ອງເອົາການກອນຂອງ ທ່ານ ປະທານໂຮ່ຈິມິນ "ຮັກ ແພງກັນໝາຍໝັ້ນ..." ເປັນພາສາລາວໃຫ້ພວກເພິ່ນຟັງອີກ, ໂດຍໄດ້ຮັບ ສຽງຕົບມືຢ່າງດັງຈາກລູກຫຼານຫວຽດນາມ ແລະ ລາວ ທີ່ນັ່ງອ້ອມເພິ່ນ ດ້ວຍຄວາມຮັກໃຄ່.

ໃນເວລາ ພໍ່ ກົມ ດຳລົງຕຳແໜ່ງເປັນ ລັດຖະມົນຕີວ່າການກະ ຊວງການຕ່າງປະເທດຂອງລັດຖະບານ ປະສົມສາມຝ່າຍ, ພໍ່ໄດ້ຖືກແຕ່ງ

ຕັ້ງໃຫ້ເປັນ ຫົວໜ້າຄະນະຜູ້ແທນຂອງລັດຖະບານປະສົມສາມຝ່າຍ ທັງ ເປັນຕົວແທນຂອງກຳລັງເປັນກາງ ໄປຮ່ວມເຈລະຈາໃນກອງປະຊຸມ ເຊີ ແນວ ກ່ຽວກັບລາວ.ໂດຍຝ່າຍແນວລາວຮັກຊາດແມ່ນທ່ານພູມີວົງວິຈິດ ເປັນຫົວໜ້າ. ເວລາເຮັດວຽກ, ພໍ່ລ້ວນແຕ່ມີການປະສານສົມ ທົບກັບທ່ານ ພູມີ ວົງວິຈິດ ແລະ ທ່ານປະທານສຸພານຸວົງ ເວລາເພິ່ນມາຮ່ວມປະຊຸມສາມ ສະເດັດຢູ່ຊູລິກ. ນອກນັ້ນ ກໍໄດ້ມີການປຶກສາຫາລືວຽກງານກັບຄະນະຜູ້ ແທນຂອງສ.ປ.ຈີນ (ທ່ານນາຍົກ ໂຈວເອີນລາຍ ແລະ ທ່ານ ເຊັ້ນອີ ທີ່ເປັນ ລັດຖະມົນຕີວ່າການກະຊວງການຕ່າງປະເທດ, ທັງເປັນຫົວໜ້າຄະນະຜູ້ ແທນຂອງລັດຖະບານສ.ປ.ຈີນ) ແລະ ຂອງສ.ປ.ຫວຽດນາມ (ທ່ານນາຍົກ ຟາມວັນດົງ ທັງເປັນລັດຖະມົນຕີວ່າການກະຊວງການຕ່າງປະເທດ ແລະ ທັງເປັນຫົວໜ້າຄະນະຜູ້ແທນຂອງລັດຖະບານ ສ.ປ.ຫວຽດນາມ. ເວລານັ້ນ ທ່ານ ຫງວຽນເກີແທ່ກ ເປັນຜູ້ຊ່ວຍ ທ່ານ ນາຍົກຟາມວັນດົງ ແລະ ໄດ້ຄຸ້ນ ເຄີຍ, ຮັກແພງກັບພໍ່ກິນິມ ແຕ່ເວລານັ້ນເປັນຕົ້ນໄປ). ຫົວໜ້າຄະນະຜູ້ແທນ ຂອງອະດີດສະຫະພາບໂຊວຽດ ແມ່ນທ່ານລັດຖະມົນຕີຊ່ວຍວ່າການກະ ຊວງການຕ່າງປະເທດ. ເວລານັ້ນ ລັດຖະບານ ສ.ປ.ຈີນ ເປັນ ຜູ້ສະໜັບ ສະໜູນຄ່າໃຊ້ຈ່າຍທັງໝົດຂອງຄະນະຜູ້ແທນຝ່າຍແນວລາວຮັກຊາດ ແລະ ຝ່າຍເປັນກາງ, ລວມທັງຄ່າເຊົ່າເຮືອນສອງຫຼັງໃຫ້ຄະນະຜູ້ແທນທັງສອງ.

ເວລານັ້ນ, ພວກນັກສຶກສາລາວກ້າວໜ້າ ຢູ່ປະເທດຝະລັ່ງ ກໍມັກ ມາເຂົ້າພົບພໍ່ກິນິມ ເພື່ອຟັງເພິ່ນໂອ້ລົມ ກ່ຽວກັບ ນະໂຍບາຍສັນຕິພາບ ເປັນກາງ, ເອກະພາບ ແລະ ຄວາມຖືກຕ້ອງປອງດອງຂອງຊາດ, ໃນນັ້ນກໍ ມີທ່ານ ສຈ ດຣ ວັນນະເລດ ລາດຊະໂພ, ທ່ານ ດຣ ປອນເມກ ດາລາລຸ, ທ່ານ ເຊີນ ເພັດສັງທານ, ທ່ານ ທິມມະກອນ ມະໂນທຳ, ທ່ານ ສຈ ດຣ ສຸລິ ນັນນະວົງ, ທ່ານ ຈັນເພັງ ບຸນນະຜົນ... ທ່ານ ສຈ ດຣບຸນຕຽມ ພິດສະໄໝ ກໍເວົ້າໃຫ້ຟັງວ່າເວລາເປີດກອງປະຊຸມເຊີແນວ ກ່ຽວກັບ ລາວ, ເພິ່ນຫາກໍ

ເປັນນັກສຶກສາປີທີນຶ່ງ ຢູ່ຝະລັ່ງ, ບໍ່ໄດ້ມີໂອກາດໄປຫາພໍ່ກີນີມ, ແຕ່ກໍເປັນ ຜູ້ນຶ່ງທີ່ສະໜັບສະໜູນນະໂຍບາຍສັນຕິພາບເປັນກາງຂອງພໍ່. ທ່ານດຣ ລຳ ເງິນ ກໍວ່າໄດ້ເອົາບົດປາໃສ ທີ່ພໍ່ໄດ້ກ່າວໃນກອງປະຊຸມເຊີແມວໃນນາມ ຂອງລັດຖະບານລາວໄປຕິດໃສ່ກະດານຂ່າວຂອງນັກສຶກສາຢູ່ມິງເປລີເອ.

ໃນທີ່ສຸດ, ກຳລັງຮັກຫອມສັນຕິພາບໃນໂລກ ໄດ້ເອົາຊະນະອິດທິ ກຳລັງປະຕິກາມກະຫາຍສົງຄາມ. ພໍ່ກີນີມ ໄດ້ຕາງໜ້າລັດຖະບານປະສົມ ສາມຝ່າຍຂອງລາວ ລົງນາມໃນສັນຍາ ເຊີແມວ ກ່ຽວກັບ ລາວຮ່ວມກັນ ກັບ ອີກ 13 ປະເທດໃນໂລກ ທີ່ໄດ້ເປັນເອກະສັນ ຮັບຮອງເອົາອຳນາດ ອະທິ ປະໄຕ ແລະ ຄວາມເປັນເອກະລາດແຫ່ງຊາດຂອງ ປະເທດລາວ ເພື່ອບັນລຸ ເປົ້າໝາຍປະເທດລາວ ສັນຕິພາບ, ເປັນກາງ ແລະ ວັດທະນາຖາວອນ.

III. <u>ເຫດການວັນທີ 1/4/63 ທີ່ເສົ້າສະຫຼົດໃຈ ແລະ ການທັນເອົາຄວາມ ຄຽດແຄ້ນຕໍ່ສັດຕູຂອງຊາດມາເປັນພະລັງແຮງຕໍ່ສູ້ ເພື່ອພາລະກິດອັນສັກ ກະລະບູຊາຂອງຊາດ.</u>

ໃນເວລາທີ່ພໍ່ກີນີມ ໄດ້ຕິດຕາມເຈົ້າຊີວິດໄປຢ້ຽມຢາມ ສ.ປ.ຈີນ ທີ່ ເປັນພາຄີສັນຍາເຊີແມວ ກ່ຽວກັບ ລາວ, ພວກຂ້າພະເຈົ້າທີ່ເປັນລຸ້ນລູກກາງ ຂອງພໍ່ ແລະ ແມ່ ສີຄຳ ພ້ອມກັບຫຼານສາວຂອງພໍ່ຜູ້ໜຶ່ງ ໄດ້ໄປຢ້ຽມຢາມ ແລະ ພັກນຳພໍ່ທີ່ "ຕຽວອູຖາງ" ຊຶ່ງເປັນບ່ອນຮັບຮອງແຂກຂອງລັດຖະບານ ຈີນ.ທາງການຈີນໄດ້ຈັດໃຫ້ອ້າຍເອື້ອຍນ້ອງພວກຂ້າພະເຈົ້າພັກຢູ່ເຮືອນທີ່ ຈັດໄວ້ສະເພາະ ພໍ່ກີນີມ. ພວກຂ້າພະເຈົ້າດີອົກດີໃຈ ຫາອັນປຽບບໍ່ໄດ້, ເພາະນີ້ເປັນຄັ້ງທຳອິດທີ່ໄດ້ພົບພໍ່ທີ່ແສນຮັກ ພາຍຫຼັງທີ່ຈາກເພິ່ນມາຮຽນຢູ່ ສ.ປ.ຈີນ. ພວກຂ້າພະເຈົ້າ ຍັງຄອງຄອຍວັນຈະກັບເມືອຢາມບ້ານ ເວລາ ພັກແລ້ງຈະມາເຖິງ, ເພາະພໍ່ວ່າພວມປຸກເຮືອນໃໝ່ຢູ່ໜອງດ້ວງ ເພື່ອລໍຖ້າ

ຕ້ອນຮັບພວກລູກໆ ທີ່ຈະມາຢາມຈາກມິດສະກູ ແລະ ປັກກິ່ງ[6]. ແຕ່ພວກຂ້າ ພະເຈົ້າ ບໍ່ນຶກບໍ່ຝັນວ່າ ການພົບປະໄລຍະສັ້ນໆກັບ ພໍ່ ກິນິມ ຄັ້ງນີ້ຈະເປັນ ການລາຈາກໄປຊົ່ວນິລັນດອນຂອງພໍ່ຜູ້ບັງເກີດເກົ້າ.

ເຫດຮ້າຍທີ່ບໍ່ຄາດຝັນໄດ້ເກີດຂຶ້ນ ໃນວັນທີ 1/4/63 ໂດຍ ພໍ່ ກິນິມ ທີ່ແສນຮັກ ແລະ ເຄົາລົບບູຊາຂອງ ພວກລູກໆໄດ້ສິ້ນລົມຫາຍໃຈລົງ ດ້ວຍ ເງື້ອມມືຂອງ ຄາດຕະກອນທີ່ຊົ່ວຊ້າທີ່ໄດ້ຮັບການຊື້ຈ້າງ ແລະ ບົ່ງການ ຈາກພວກປະຕິການຂວາຈັດວຽງຈັນ ແລະ ພວກອົດທິກຳລັງຈັກກະພັດ ເພື່ອຄາດຕະກຳພໍ່ຢ່າງໂຫດຮ້າຍສາມານ, ແລະ ແມ່ໄພບູນ ທີ່ແສນຮັກ ແລະ ເຄົາລົບບູຊາຂອງພວກລູກໆ ກໍຖືກຍິງບາດເຈັບສາຫັດ.

ການທີ່ພວກສັດຕູຂອງຊາດສັ່ງຫານ ພໍ່ກິນິມຢ່າງປ່າເຖື່ອນ ກໍຍ້ອນ ວ່າພໍ່ເປັນນັກການເມືອງທີ່ມີນ້ຳໃຈຮັກຊາດ, ມີຄວາມມຸ້ງໝັ້ນ ແລະ ເດັດ ດ່ຽວໜຽວແໜ້ນໃນການຕໍ່ສູ້ເພື່ອບັນລຸອຸດົມການທີ່ສູງສົ່ງຂອງເພິ່ນຄືໃຫ້ປະ ເທດລາວປົດສະຈາກການແຊກແຊງ, ຮຸກຮານຂອງພວກຈັກກະພັດຕ່າງ ດ້າວ ແລະ ບັນລຸ ສັນຕິພາບ-ເອກະລາດ-ເປັນກາງ ແລະ ຄວາມປອງດອງ ຊາດ ກ້າວໄປເຖິງອັດທະນະຖາວອນ. ການທີ່ພໍ່ກິນິມ ແລະ ພັກສັນຕິພາບ ເປັນກາງ ທີ່ພໍ່ເປັນປະທານ ໄດ້ໃຫ້ການສະໜັບສະໜູນ ແລະ ຮ່ວມມື ຢ່າງ ຕັ້ງໜ້າ ແລະ ຍາວນານ ກັບແນວລາວຮັກຊາດ ໃນການປຸກລະດົມ, ຂົນ ຂວາຍ ປະຊາຊົນທີ່ຮັກຫອມສັນຕິພາບ ຢູ່ພາຍໃນປະເທດ ແລະ ຢູ່ໃນ ຂອບເຂດສາກົນເຂົ້າໃຈ ແລະ ສະໜັບສະໜູນແນວທາງນະໂຍບາຍຂອງ ກຳລັງຮັກຊາດ ເປັນສິ່ງກີດຂວາງ ຕໍ່ກົນອຸບາຍກະຫາຍສົງຄາມ ຫວັງຢຶດ

---

[6] ໃນທີ່ສຸດ ພວກຂ້າພະເຈົ້າບໍ່ໄດ້ກັບບ້ານມາຢາມພໍ່ແມ່ ແລະ ຢູ່ເຮືອນໃໝ່ຄົບໜ້າຄົບຕາກັນໝົດຄອບຄົວ, ເພາະພໍ່ຖືກຄາດຕະກຳຢ່າງໂຫດໜ້ຽມໃນວັນທີ 1/4/63. ຫຼັງຈາກນັ້ນ ພວກຂ້າພະເຈົ້າກໍໄດ້ໃຫ້ສະຖານທູດ ສ.ປ.ຫວຽດນາມພັກເຊົ່າ ຢູ່ເຮືອນທີ່ຫາກໍປຸກໃໝ່ດັ່ງກ່າວ ໂດຍບໍ່ໄດ້ເກັບຄ່າເຊົ່າ ເປັນຫຼາຍສິບປີ. ດ້ວຍເຫດ ຜົນດັ່ງກ່າວ, ແມ່ ໄພບູນ ໄດ້ຮັບໃບຍົກຕິຄຸນຈາກ ທ່ານ ປະທານ ເຈີນດຶກເລື່ອງ, ປະທານປະເທດ ແຫ່ງ ສ.ສ ຫວຽດນາມ.

ຄອງປະເທດລາວຂອງພວກອິດທິກຳລັງຈັກກະພັດ ທີ່ມີພວກປະຕິການ ຂວາຈັດວຸງງຈັນ ເປັນລູກແຫ້ງຕີນມື. ພວກເຂົາໃຊ້ທຸກຮູບການ ເພື່ອກຳຈັດ ປາບປາມມານະຈິດຕ່ໍສູ້ ບ່ຍອມຈຳນົນຕ່ໍສັດຕູຂອງ ພ່ໍ ກິນິມ. ເບ້ືອງຕົ້ນ ເຂົາ ໃຊ້ໄມ້ມື ຊ້ືຈ້ຳ, ຈອບອອຍ ໂດຍຮັບປາກວ່າຈະມອບເງິນ ໜ່ຶງລ້ານ ໂດລາ ສະຫະລັດໃຫ້ພ່ໍ ພ້ອມດ້ວຍໃຫ້ຕຳແໜ່ງທ່ີໜ້າເພ່ິງພໍໃຈ ສຳລັບພ່ໍ ດ້ວຍ ເງ່ືອນໄຂທ່ີວ່າພ່ໍຕ້ອງປະລະອຸດົມການຕ່ໍສູ້ເພ່ືອ ຄວາມເປັນເອກະລາດ ແລະ ອຳນາດອະທິປະໄຕຂອງຊາດ. ແຕ່ເລ່ືກົນດ່ັງກ່າວ ຖ້ືກປະລາໄຊ ເພາະ ພ່ໍ ກິນິມ ປະຕິເສດຢ່າງເດ້ັດຂາດ, ທ້ັງປະນາມການກະທຳທ່ີມ້ືດມ້ົນ ຂອງພວກເຂົາຢ່າງເປ້ີດເຜ່ີຍ. ຕ່ໍມາ, ພວກເຂົາໄດ້ລອບຂ້າ ທ່ານ ສ້ີສະ ອາດ ຢູ່ປາກເຊ ທ່ີເປັນນ້ອງເຂ່ີຍຂອງ ແມ່ ໄພບູນ, ທ້ັງເປັນເພ່ືອນຮ່ວມງານ ທ່ີຂະຫຍັນຂັນແຂງຂອງພ່ໍ ໃນພັກສັນຕ້ິພາບເປັນກາງ. ພ່ໍ ກິນິມ ບ່ໍໄດ້ຫວ່ັນ ໄຫວຕ່ໍການກະທຳຊ່ໍຊ້ອນ, ນາບຊ່ໍຂອງພວກເຂົາ. ກົງກັນຂ້າມ, ການກະທຳ ທ່ີຊ່ົວຮ້າຍຂອງເຂົາໄດ້ຮັບການປະນາມຢ່າງແຂງແຮງ ຈາກພ່ໍ ແລະ ຍ່ິງ ເຮັດໃຫ້ພ່ໍມີຄວາມເດ້ັດດ່ຽວກ້າຫານ ແລະ ສ້ືບຕ່ໍຢ້ືດໝ້ັນໃນອຸດົມການຂອງ ເພ່ິນ.

ຕາມການບອກເລ່ົາຂອງ ແມ່ ໄພບູນ ພ້ິນເສນາ, ໃນວັນທ ີ 1/4/63, ພ່ໍ ແລະ ແມ່ ໄປຮ່ວມງານລ້ຽງຮັບຮອງໂດຍເຈ້ົາຊ້ີວ້ິດທ່ີຫໍຄຳ ພາຍຫ້ຼັງເພ່ິນ ແລະ ຄະນະລັດຖະບານ, ໃນນ້ັນມີພ່ໍ ກິນິມນຳ, ກັບຈາກປະເທດພະມ້ຳ ເພ່ືອຊ້ົມເຊ້ີຍຜ້ິນສຳເລັດຂອງການໄປຢ້ຽມຢາມ ຂອບໃຈບັນດາປະເທດພາ ຄ້ີສັນຍາເຊ້ີແນອ ກ່ຽວກັບ ລາວ. (ພະມ້ຳ ແມ່ນ ປະເທດສຸດທ້າຍໃນ 13 ປະ ເທດຄູ່ສັນຍາ) ເວລາກັບຈາກງານລ້ຽງ ເພ່ືອເມ້ືອເຮ້ືອນ, ພ່ໍຍ້ັງຖາມແມ່ວ່າ: ຢູ່ເຮ້ືອນມ້ີຫຍ້ັງກ້ິນບ່ໍ? ເພາະໃນງານລ້ຽງ ພ່ໍບ່ໍໄດ້ກ້ິນຫຍ້ັງປານໃດ. ແມ່ເລ້ີຍ ບອກເພ່ິນວ່າ ຢູ່ເຮ້ືອນ ຍ້ັງມ້ີແກງໜ່ໍໄມ້ທ່ີຫາກ ໍຕ້ົມໃໝ່ໆ, ພ ໍດ້ີກັບເມ້ືອກ ໍກ້ິນ ໄດ້ໂລດ... ແຕ່ໜ້າເສ້ົາດາຍ ທ່ີພ່ໍກິນິມບ່ໍທັນໄດ້ຊ້ົມຝ້ີມ ືແຕ່ງກ້ິນທ່ີແຊບຊ້ອຍ

ຂອງແມ່ຊໍ້າ. ເພາະເມື່ອເພິ່ນຍ່າງລົງຈາກລົດ ກໍຖືກຄາດຕະກອນເອົາປືນ ອາກາ ຍິງໃສ່ໝົດບັ້ງ. ພໍ່ລົ້ມລົງທັນທີ ແລະ ແມ່ກໍຖືກຍິງບາດເຈັບສາຫັດ ແລະ ລົ້ມລົງຂ້າງສາມີທີ່ແສນຮັກຂອງຕົນ ທີ່ນອນຟຸມອາດເລືອດຢູ່. ແມ່ ເວົ້າດ້ວຍສຽງສະອື້ນ ແລະ ນ້ຳຕາອາບໜ້າວ່າ: ຄາດຄະກອນທີ່ຊົ່ວຊ້າຢ້ານ ພໍ່ຍັງມີຊີວິດ ຈຶ່ງຈົກເອົາປືນສັ້ນມາຍິງໃສ່ຂະໜັບຂອງເພິ່ນອີກ. ຄາດຄະ ກອນທີ່ໂຫດຮ້າຍ ແລະ ພວກປ້ອງກັນໃນເຮືອນ ໄດ້ປ່ອຍປະໃຫ້ແມ່ນັ່ງ ອາບເລືອດຢູ່ (ເພາະເວລາຄາດຄະກອນຍິງກ໋ວາດໃສ່ພໍ່ກິນິມ ແລ້ວລູກປືນ ກໍຖືກຂາແມ່ ທີ່ຍ່າງຄຽງຂ້າງເພິ່ນ) ຄຽງຂ້າງພໍ່ ທີ່ສິ້ນລົມຫາຍໃຈທັນທີ. ເມື່ອ ໄດ້ຂ່າວທີ່ເສົ້າສະຫຼົດໃຈ, ທ່ານນາຍົກ ສະເດັດເຈົ້າສຸວັນນະພູມາ, ທ່ານ ປະ ທານສຸພານຸວົງ, ທ່ານ ພູມີ ວົງວິຈິດ ແລະ ທ່ານ ຄຳສຸກ ແກ້ວລາ ກໍໄດ້ມາ ເຮືອນຂອງພໍ່ ແລະ ແມ່ໂລດ. ແຕ່ພວກປ້ອງກັນບໍ່ຍອມໃຫ້ເຂົ້າ, ໃນທີ່ສຸດ ພວກເຂົາຈຶ່ງອະນຸຍາດໃຫ້ ພວກເພິ່ນເຂົ້າໄປເບິ່ງພໍ່ ແລະ ແມ່ ພາຍຫຼັງ 3 ຊົ່ວໂມງແຫ່ງການຄາດຕະກຳ. ຫຼັງຈາກນັ້ນ ອີກສອງ ຊົ່ວໂມງຈຶ່ງໄດ້ເອົາ ແມ່ໄປໂຮງໝໍ ແລ້ວເອົາກັບມາພັກຢູ່ເຮືອນພັກ ຂອງທ່ານ ພູມີ ວົງວິຈິດ ທີ່ຢູ່ຕິດກັບເຮືອນພັກຂອງພໍ່ ແລະ ແມ່ (ຊຶ່ງປັດຈຸບັນແມ່ນເຮືອນຂອງທ່ານ ສີຊະນະ ສີສານ)

ພໍ່ ກິນິມ ທີ່ແສນຮັກ ໄດ້ຈາກປະເທດຊາດ ທີ່ເພິ່ນເຄົາລົບບູຊາ ແລະ ຍອມເສຍສະຫຼະທຸກສິ່ງທຸກຢ່າງ ບໍ່ວ່າເງິນຄຳ, ຍົດຖາບັນດາສັກ ຕະ ຫຼອດເຖິງຊີວິດທີ່ມີຄ່າແພງທີ່ສຸດຂອງຕົນເພື່ອຄວາມເປັນເອກະລາດ ແລະ ວັດທະນະຖາວອນຂອງຊາດ; ພໍ່ກິນິມໄດ້ຈາກລາເພື່ອນຮ່ວມຊາດ ທີ່ເພິ່ນ ຮັກໄຄ່ ແລະ ໄດ້ຕໍ່ສູ້ຈົນເຖິງວິນາທີສຸດທ້າຍແຫ່ງຊີວິດຂອງຕົນ ເພື່ອຄວາມ ຢູ່ເຢັນເປັນສຸກຂອງປະຊາຊົນບັນດາເຜົ່າ; ພໍ່ ກິນິມ ໄດ້ຈາກລາແມ່ໄພບູນ ທີ່ເປັນພັນລະຍາທີ່ແສນຮັກຂອງເພິ່ນ, ທັງເປັນເພື່ອນຮ່ວມງານທີ່ສຸດຈະ ລຶດຂອງເພິ່ນ ທີ່ໄດ້ຮ່ວມທຸກ ຮ່ວມສຸກ ແລະ ໄດ້ຄຽງບ່າຄຽງໄຫຼ່ກັບເພິ່ນ

ຮ່ວມແບກຫາບພາລະກິດ ຮັບໃຊ້ຊາດ, ຮັບໃຊ້ປະຊາຊົນ; ພໍ່ ກິນິມ ໄດ້ຈາກ ລາລູກ 12 ຄົນ ທີ່ເປັນແກ້ວຕາ ດວງໃຈຂອງເພິ່ນ ຊຶ່ງໂດຍເລີ່ມຈາກເວລາ ທີ່ເພິ່ນສິ້ນລົມຫາຍໃຈໄປ ໄດ້ກັບກາຍເປັນລູກກຳພ້າພໍ່, ໂດຍນ້ອງສາວຫຼ້າ ສີເຮືອງນາມ ຫາກໍມີອາຍຸ 2 ປີເທົ່ານັ້ນ[7]. ໂດຍໄດ້ປະໄວ້ໃຫ້ລູກໆສືບຕໍ່ດຳ ເນີນພາລະກິດຂອງເພິ່ນທີ່ຍັງບໍ່ທັນໄດ້ມີໂອກາດໄດ້ດຳເນີນຢ່າງສຳເລັດ ຜົນ...

ການເສຍຊີວິດຂອງພໍ່ ກິນິມ ເຮັດໃຫ້ປະເທດຊາດ ແລະ ປະຊາຊົນ ລາວບັນດາເຜົ່າ ໄດ້ສູນເສຍລູກ ຮັກຫຼານແພງຂອຕົນ, ທັງເປັນການສູນເສຍ ທີ່ໃຫ່ຍຫຼວງຂອງຕະກຸນ ພົນເສນາ ກໍຄືແມ່ໄພບູນ ພົນເສນາ ແລະ ລູກກຳ ພ້າ 12 ຄົນ ຂອງພໍ່ ແລະ ແມ່. ບັນດາປະເທດເພື່ອນມິດ, ເປັນຕົ້ນ ບັນດາ ປະເທດສັງຄົມນິຍົມ ໄດ້ສະແດງຄວາມເສົ້າສະຫຼົດໃຈທີ່ໄດ້ສູນເສຍເພື່ອນທີ່ ກ້າຫານ ແລະ ສະໜິດແໜ້ນ ຂອງຕົນ.

ພາຍຫຼັງທີ່ພໍ່ກິນິມເສຍຊີວິດ, ລັດຖະບານປະສົມສາມຝ່າຍ ໄດ້ຕົກ ລົງໃນກອງປະຊຸມຂອງຕົນດັ່ງລຸ່ມນີ້:

1. ຈັດຕັ້ງງານຊາປະນະກິດສົບລະດັບຊາດ ຢ່າງສົມກຽດໃຫ້ພໍ່, ຊຶ່ງໝາຍເຖິງການໄຫວ້ທຸກທ່ວປະເທດ, ໂດຍທຸກໆອົງການ ຂອງລັດຖະບານ, ລວມທັງສະຖານທູດລາວປະຈຳຢູ່ຕ່າງປະ ເທດ ຕ້ອງເອົາທຸງຊາດລົງເຄິ່ງເສົາ[8].
2. ນອກນັ້ນ, ໃນກອງປະຊຸມຂອງລັດຖະບານດັ່ງກ່າວ ຂ້າງເທິງ ນັ້ນ ກໍໄດ້ແຕ່ງຕັ້ງຄະນະຊາປະນະກິດສົບ ພໍ່ກິນິມ ທີ່ປະກອບ

---

[7] ກ່ອນມື້ພໍ່ກິນິມ ຖືກລາດຕະກຳ, ນຶ່ງມື້ຄືໃນວັນທີ 31/3/63, ພໍ່ໄດ້ສະຫຼອງວັນເກີດໃຫ້ນ້ອງສາວຫຼ້າ ທີ່ມີອາຍຸ 2 ປີເຕັມ.

[8] ບັນດາສະຖານທູດຕ່າງປະເທດຢູ່ລາວ ກໍໄດ້ເອົາທຸງຊາດຂອງຕົນ ລົງເຄິ່ງເສົາ ເພື່ອສະແດງຄວາມໄວ້ອາໄລ ເຖິງພໍ່ກິນິມ ແລະ ລັດຖະບານຂອງປະເທດດັ່ງກ່າວ ກໍໄດ້ສົ່ງສານສະແດງຄວາມເສົ້າສະຫຼົດໃຈ ຕໍ່ການເສຍຊີ ວິດຂອງພໍ່ກິນິມ ເຖິງລັດຖະບານລາວ ແລະ ຄອບຄົວຂອງ ພໍ່ ກິນິມ.

ດ້ວຍບັນດາທ່ານດັ່ງຕໍ່ໄປນີ້: ທ່ານ ເພັງ ພິງສະຫວັນ ເປັນປະທານ ຊາປະນະກິດສິບ ລະດັບຊາດ, ສ່ວນກຳມະການໃນຄະນະຊາປະນະກິດສິບ ລວມມີ: ທ່ານພູມີ ວົງວິຈິດ, ທ່ານ ໂງ່ນ ຊະນະນິກອນ, ທ່ານ ວັນທອງ, ທ່ານ ບຸນທິງ ວໍລະວົງ ແລະ ທ່ານ ພວງເພັດ ພັນນະເລດ.

3. ພິທີສົ່ງສະການລະດັບຊາດ ຈະຈັດຕັ້ງຂຶ້ນ ໃນວັນທີ 8/4/63 ທີ່ ເດີ່ນພະທາດຫຼວງ.

ຢູ່ມິດສະກູ ແມ່ນທ່ານ ປ້າວຸງຄຳ ສຸພານຸວົງ, ພັນລະຍາຂອງ ທ່ານ ປະທານ ສຸພານຸວົງ ເປັນຜູ້ມາເລົ່າຂ່າວເສົ້າສະຫຼົດໃຈ ກ່ຽວກັບ ການມໍລະນະກຳຂອງພໍ່ກິນິມ ໃຫ້ລູກລຸ້ນໃຫ່ຍ 4 ຄົນຂອງພໍ່ ແລະ ແມ່. ສຳລັບພວກ ລູກ ລຸ້ນກາງ 4 ຄົນຂອງພໍ່ແມ່ ແມ່ນຜູ້ຕາງໜ້າຂອງສະຖານທູດລາວ ຢູ່ປັກກິ່ງ ເປັນຜູ້ມາບອກເລົ່າຂ່າວທີ່ສະເທືອນໃຈດັ່ງກ່າວ.

ລັດຖະບານ ແຫ່ງ ສ.ປ.ຈີນ ໄດ້ໃຫ້ການຊ່ວຍເຫຼືອແກ່ຄອບຄົວພົນ ເສນາ ແຕ່ຫ໊ວທີ. ທ່ານຜູ້ຕາງໜ້າຂອງອົງການຈັດຕັ້ງທີ່ກ່ຽວຂ້ອງຂອງຈີນ ໄດ້ມາພົບ ແລະ ແບ່ງເບົາຄວາມທຸກໂສກຂອງລູກກຳພ້າຂອງພໍ່ 4 ຄົນ ແລະ ຂອງຫຼານສາວຂອງພວກເພິ່ນອີກຜູ້ໜຶ່ງ. ນອກນັ້ນ, ລັດຖະບານຈີນ ຍັງຈັດ ສົ່ງຍົນພິເສດໜຶ່ງລຳ ເພື່ອເອົາລູກຂອງພໍ່ແມ່ 6 ຄົນ[9] ແລະ ຫຼານສາວ ອີກຜູ້ ໜຶ່ງເມືອວຽງຈັນ ເພື່ອຮ່ວມງານຊາປະນະກິດສິບຂອງພໍ່ຜູ້ບັງເກີດເກົ້າ. ແຕ່ ເມື່ອຍົນມາເຖິງຮ່າໂນຍແລ້ວ, ທາງສະຖານທູດລາວປະຈຳຫວຽດ ນາມໄດ້ ແຈ້ງໃຫ້ຊາບວ່າ ຍ້ອນສະພາບການຢູ່ວຽງຈັນ ສັບສົນອຸ້ມຍາຍ, ດັ່ງນັ້ນ ເພື່ອຮັບປະກັນຄວາມປອດໄພ, ສູນກາງແນວລາວຮັກຊາດຕົກລົງໃຫ້ ແຕ່ລູກສາວກົກ ແລະ ລູກຊາຍກົກຂອງພໍ່ ແລະ ແມ່ ສືບຕໍ່ໄປວຽງຈັນນຳ ຍົນຂອງ ສ.ປ.ຈີນ. ສ່ວນທີ່ຍັງເຫຼືອ ໃຫ້ລໍຖ້າເອົ້ອຍ ແລະ ອ້າຍຢູ່ຮ່າໂນຍ.

---

[9] ສອງຄົນຈາກສະຫະພາບໂຊວຽດ

ແລະ ຍິນລຳດັ່ງກ່າວ ໄດ້ລໍຖ້າເອົາແມ່, ລູກສາວກົກ ແລະ ລູກຊາຍກົກ ພ້ອມກັບລູກລຸ້ນນ້ອຍ 4 ຄົນ ຂອງ ພໍ່ ແລະ ແມ່ ກັບຄືນຮ່າໂນຍ ພາຍຫຼັງ ງານຊາປະນະກິດສົບໄດ້ສິ້ນສຸດລົງ. ເມື່ອຮອດຮ່າໂນຍ, ແມ່ໄດ້ເຂົ້າປິ່ນປົວ ຢູ່ໂຮງໝໍຫວຽດໂຊ ຂອງສູນກາງ (ຊຶ່ງໝາຍເຖິງໂຮງໝໍມິດຕະພາບ ຫວຽດ ນາມ-ໂຊວຽດ). ສ່ວນລູກຫຼານ 6 ຄົນ ຂອງພໍ່ ແລະ ແມ່ ໄດ້ກັບຄືນປັກກິ່ງ ພ້ອມດ້ວຍຍິນພິເສດດັ່ງກ່າວ.

ງານຊາປະນະກິດສົບຂອງ ພໍ່ ກິນິມ ໄດ້ຖືກຈັດຂຶ້ນຢ່າງສົມກຽດໃນ ຕອນແລງຂອງວັນທີ 8/4/63, ໂດຍມີທ່ານຜູ້ຕາງໜ້າເຈົ້າຊີວິດ, ທ່ານນາ ຍົກ ສະເດັດເຈົ້າ ສຸວັນນະພູມາ ແລະ ຄະນະລັດຖະບານ ປະສົມສາມຝ່າຍ ເຂົ້າຮ່ວມທັງໝົດ. ນອກນັ້ນ ກໍຍັງມີບັນດາທ່ານຜູ້ຕາງໜ້າຂອງ ລັດຖະບານ ປະເທດເພື່ອນມິດ ຕະຫຼອດເຖິງຄູບາອາຈານ ແລະ ປະຊາຊົນຊາວເມືອງ ວຽງຈັນ ແລະ ຕ່າງແຂວງ ເປັນຈຳນວນຫຼວງຫຼາຍ ທີ່ມາອຳລາພໍ່ກິນິມເປັນ ຄັ້ງສຸດທ້າຍ[10] .

ທ່ານນາຍົກ ສະເດັດເຈົ້າສຸວັນນະພູມາ ເປັນຜູ້ຕາງໜ້າລັດຖະບານ ກ່າວປິດໄວ້ອາໄລເຖິງ ພໍ່ ກິນິມ ໂດຍເພີ່ນໄດ້ຍົກຍ້ອງຄຸນງາມຄວາມດີ ທີ່ພໍ່ ກິນິມ ມີຕໍ່ປະເທດຊາດ ແລະ ປະຊາຊົນ ແລະ ວິ້ງວອນໃຫ້ດວງວິນຍານ ຂອງພໍ່ໄປສູ່ສຸຂະຕິ. ປ້າເຂັມເພັດ ພົນເສນາ ທີ່ເປັນລູກສາວກົກຂອງພໍ່ ແລະ ແມ່ ໄດ້ຕາງໜ້າຄອບຄົວກ່າວຄຳໄວ້ອາໄລເຖິງພໍ່ກິນິມ, ທັງສະແດງ ຄວາມຮູ້ບຸນຄຸນ ແລະ ຂອບໃຈຕໍ່ພະສົງອົງ ຄະເຈົ້າ, ບັນດາແຂກຜູ້ມີກຽດ ກໍຄືປະຊາຊົນຊາວເມືອງ ວຽງຈັນ ແລະ ຜູ້ທີ່ມາຈາກແຂວງຕ່າງໆໃນທົ່ວປະ ເທດ ທີ່ມາສົ່ງສະການ ພໍ່ ກິນິມ ທີ່ແສນຮັກ. ສ່ວນ ດຣ ແກ່ນແກ້ວ ທີ່ເປັນ

---

10 ພວກຂ້າພະເຈົ້າເບິ່ງຮູບພາບຂອງງານຊາປະນະກິດສົບ ກໍເຫັນວ່າ ຂະບວນການແຫ່ສົບພໍ່ກິນິມ ຈາກບ້ານ ພັກຂອງເພິ່ນ ມາເຖິງເດີ່ນພະທາດຫຼວງຍາວຢ່ງດ ໂດຍໂລງສົບຂອງພໍ່ຖືກບັນຈຸໃນລົດແຫ່ສົບ ທີ່ມີຮູບນົກ ສັກກະລີລົນ ທີ່ປະດັບປະດາດ້ວຍ ສົນລະປະລວດລາຍຈາກສີມືລະອຽດ ແລະ ປານີດ ວິຈິດງົດງາມທີ່ສຸດ ໂດຍບັນດາຊ່າງທີ່ລືຊື່ທັ້ງນັ້ນ.

ລູກຊາຍກົກຂອງ ພໍ່ ແລະ ແມ່ ໄດ້ບອດເປັນພະ ຢືນຢູ່ຄຽງຂ້າງ ປ້າເຂັມ ເພັດ. ບົດປາໃສຂອງປ້າເຂັມເພັດຖືກຖ່າຍທອດອາກາດສົ່ງໄປທົ່ວປະເທດ ຊຶ່ງຜູ້ຄົນທີ່ໄດ້ຟັງ ບໍ່ວ່າຜູ້ທີ່ຢູ່ໃນເດີ່ນພະທາດຫຼວງ ຫຼື ຟັງຜ່ານວິທະຍຸກະ ຈາຍສຽງລ້ວນແຕ່ຫຼັ່ງໄຫຼນ້ຳຕາ ເພື່ອສະແດງເຖິງຄວາມເສົ້າສະຫຼົດໃຈຫາ ອັນປຽບບ່ໄດ້ ທີ່ປະເທດຊາດໄດ້ສູນເສຍຜູ້ມີບຸນ ແລະ ຄົນດີທີ່ຮັກຊາດ, ຮັກ ປະຊາຊົນ ຄື ພໍ່ ກິນິມ. ໃນບົດປາໃສຂອງຕົນ, ປ້າ ເຂັມເພັດ ໄດ້ກ່າວເຖິງ ນ້ຳໃຈຮັກຊາດ, ຮັກປະຊາຊົນ ແລະ ຄວາມຈົ່ງຮັກພັກດີ ອັນບໍລິສຸດໃຈຂອງ ພໍ່ ທີ່ມີຕໍ່ປະເທດຊາດທີ່ແສນຮັກຂອງຕົນ ກໍຄືຄວາມເດັດດ່ຽວ, ໝັ່ນແໜ້ນ ຂອງເພິ່ນໃນການກ້າວເດີນຕາມເສັ້ນທາງສັນຕິພາບເປັນກາງ, ເອກະລາດ, ອະທິປະໄຕ ແລະ ຄວາມຖືກຕ້ອງປອງດອງຂອງຊາດ ເພື່ອບັນລຸພາລະກິດ ທີ່ ສັກກະລະບູຊາຂອງຊາດ ດ້ວຍຜົນສຳເລັດທີ່ສະຫງ່າງາມ. ປ້າ ເຂັມເພັດ ຍັງໄດ້ປະນາມຢ່າງແຂງແຮງ ຕໍ່ ພວກຄາດຕະກອນ ທີ່ໄດ້ລອບຄາດຄະກຳ ພໍ່ທີ່ແສນຮັກຂອງ ພວກລູກກຳພ້າ 12 ຄົນ, ທັງສະແດງຄວາມ ຕັດສິນໃຈ ເດັດຂາດຂອງລູກຫຼານ ໃນຕະກຸນ ພົນເສນາ ທີ່ຈະສືບຕໍ່ພາລະກິດຂອງພໍ່ທີ່ ບໍ່ໄດ້ສຳເລັດຜົນ.

ເທົ່າທຸກວັນນີ້ ຍັງມີຫຼາຍໆຄົນຫວນຄືນເຖິງວັນຊາປະນະກິດສິບພໍ່ ກິນິມ, ເຖິງແມ່ນວ່າພໍ່ໄດ້ລ່ວງລັບ ໄປໄດ້ 50 ປີແລ້ວກໍຕາມ. ຕົວຢ່າງເຊັ່ນ ໃນເວລາທີ່ຍັງມີຊີວິດຢູ່, ທ່ານ ສີວິໄຊ ໄຊຊະນະວົງເພັດ, ອະດີດຜູ້ອຳນວຍ ການກອງທຶນຫຼຸດຜ່ອນຄວາມທຸກຍາກ ຍັງເຄີຍເວົ້ານຳ ປ້າ ເຂັມເພັດວ່າ ເວລາພໍ່ເສຍຊີວິດ, ລາວຍັງເປັນນັກຮຽນທີ່ໜຸ່ມນ້ອຍ ແລະ ໄດ້ໄປສົ່ງສະ ການ ພໍ່ ກິນິມ. ເມື່ອລາວໄດ້ຍິນບົດປາໃສຂອງປ້າເຂັມເພັດ, ນ້ຳຕາຂອງ ລາວຫຼັ່ງໄຫຼລົງມາໂດຍບໍ່ຮູ້ສຶກຕົວ, ໂດຍສະເພາະລາວຍັງຈື່ບໍ່ລືມເທົ່າທຸກ

---

[11] ເວລາແມ່ໄພບູນຈາກວຽງຈັນ ມາປິ່ນປົວຢູ່ຫວຽດນາມ ແລະ ຕໍ່ມາຢູ່ສ.ປ.ຈີນ, ເພິ່ນໄດ້ເອົາສ່ວນນ້ອຍໜຶ່ງ ຂອງອັດຖິຂອງພໍ່ກິນິມມານຳ ແລະ ຕັ້ງໄວ້ຕໍ່ໜ້າຮູບຂອງພໍ່ເພື່ອໃຫ້ລູກຫຼານໄດ້ໄຫ້ວເພິ່ນ.

ມື້ນີ້ແມ່ນຄຳເວົ້າທີ່ ປ້າ ເຂັມເພັດ ໄດ້ເວົ້າວ່າ: ຜູ້ທີ່ຄາດຕະກຳພໍ່ ບໍ່ຮູ້ບຸນຄຸນ ແລະ ເປັນຄົນທີ່ເນລະຄຸນຕໍ່ຜູ້ທີ່ມີບຸນຄຸນຕໍ່ຊາດ, ຕໍ່ປະຊາຊົນຄືດັ່ງ ພໍ່ກິນິມ ພົນເສນາ. ພໍ່ແມ່ ພີ່ນ້ອງຊາວນະຄອນຫຼວງວຽງຈັນ ຍັງພາກັນເວົ້າວ່າ ການ ເສຍຊີວິດຂອງພໍ່ ບໍ່ພຽງແຕ່ເຮັດໃຫ້ປະຊາຊົນທີ່ຮັກ ແລະ ເຄົາລົບ ເພີ່ນ ຮ້ອງໄຫ້ ນຳເພີ່ນດ້ວຍຄວາມໂສກເສົ້າເສຍດາຍເທົ່ານັ້ນ, ແຕ່ເທວະດາຟ້າ ແຖນຍັງຫຼັ່ງໄຫຼນ້ຳຕານຳບຸກຄົນທີ່ມີບຸນຄື ພໍ່ ກິນິມ. ຍ້ອນວ່າໃນມື້ຄືນຂອງ ວັນທີ 7/4/63 ແລະ ໝົດມື້ເຊົ້າຂອງວັນທີ 8/4/63 ທີ່ເປັນມື້ສົ່ງສະການພໍ່, ມີຝົນຕົກລົງຢ່າງ ແຮງ, ທັງມີສຽງຟ້າຮ້ອງອີກ. (ເວລານັ້ນ, ຢູ່ຣາໂນຍ ກໍ ແມ່ນສະພາບຟ້າຝົນລົມແດງເຊັ່ນດຽວກັນ). ແຕ່ເມື່ອໃກ້ຈະຮອດຍາມເລີ່ມ ພິທີຊາປະນະກິດສົບຢ່າງເປັນທາງການ, ຝົນພັດເຊົາຕົກ ແລະ ຟ້າກໍມືດ ຄົ້ມຕະຫຼອດໄລຍະດຳເນີນພິທີ. ເມື່ອພິທີສົ້ນສຸດລົງແລ້ວ ແລະ ຜູ້ຄົນທັ້ງ ຫຼາຍກໍກັບບ້ານພາຍຫຼັງສົ່ງສະການ ພໍ່ແລ້ວ, ຝົນພັດຕົກລົງບັກແຮງໆອີກ, ທັງມີຟ້າຮ້ອງອີກດ້ວຍ. ຜູ້ເຖົ້າຜູ້ແກ່ໄທວຽງຈັນ ຍໍມືນິບແລ້ວ ວິ້ງວອນໃຫ້ ດວງວິນຍານຂອງ ພໍ່ ກິນິມ ຈົ່ງໄປສູ່ສຸຂະຕິເຖີດ. ພວກເພິ່ນ ເວົ້າວ່າ ຕະ ຫຼອດຊີວິດຂອງ ທ່ານ ກິນິມ, ເພິ່ນກໍມີຄວາມຮັກແພງປະຊາຊົນ ແລະ ຕໍ່ສູ້ ເພື່ອຜົນປະໂຫຍດອັນຊອບທຳຂອງປະຊາຊົນ. ບາດເມື່ອອຳລາຈາກປະຊາ ຊົນ, ເພິ່ນກໍຍັງຄິດເຖິງປະຊາຊົນ, ບໍ່ຢາກໃຫ້ເຂົາເຈົ້າລຳບາກ, ແຂ່ງຝົນໄປ ສົ່ງສະການເພິ່ນ...

ດັ່ງທີ່ໄດ້ກ່າວໄວ້ຂ້າງເທິງນັ້ນ, ພາຍຫຼັງງານຊາປະນະກິດສົບຂອງ ພໍ່ສົ້ນສຸດລົງ, ແມ່ໄພບູນ ມາສີບ ຕໍ່ປີ່ນປົວ ຢູ່ສ.ປ.ຈີນ, ແລະ ລູກລຸ້ນນ້ອຍ ຂອງພໍ່ແມ່ 4 ຄົນກໍມາພ້ອມກັນກັບ ແມ່ ເພື່ອສຶກສາ, ຮ່ຳຮຽນຢູ່ ສ.ປ.ຈີນ. ໃນໄລຍະປີ່ນປົວຢູ່ ສ.ປ.ຈີນ, ແມ່ໄພບູນ ໄດ້ຮັບຄວາມເອົາໃຈໃສ່ປີ່ນປົວ ຈາກຖັນແຖວແພດໝໍ ທີ່ເກ່ັງທີ່ສຸດຂອງໂຮງໝໍ ທີ່ດີທີ່ສຸດຂອງປະເທດຈີນ (ໂຮງໝໍເສຽເຫືອ). ບັນດາອົງການຈັດຕັ້ງທີ່ກ່ຽວ ຂ້ອງຂອງຈີນ ກໍໄດ້ເອົາໃຈ

ໃສ່ເບິ່ງແຍງດູແລ ແລະ ຕິດຕາມອາການເຈັບເປັນຂອງແມ່ຢ່າງໃກ້ຊິດ. ພັນ ລະຍາຂອງທ່ານນາຍົກ ໂຈວເອີນລາຍ, ທ່ານຮອງນາຍົກລັດຖະມົນຕີ ເຊັນ ຢີ ແລະ ພັນລະຍາ, ທ່ານ ລັດຖະມົນຕີຕ່າງປະເທດ ສີເຕີສຽນ... ກໍໄດ້ມາ ຢ້ຽມຢາມຖາມຂ່າວ ແລະ ໃຫ້ກຳລັງໃຈແກ່ແມ່. ພວກຂ້າພະເຈົ້າຍັງຈື່ບໍ່ລືມ ພາບທີ່ແມ່ໄດ້ເລົ່າສູ່ຟັງ ກ່ຽວກັບ ການມາຢ້ຽມຢາມຖາມຂ່າວເພິ່ນຢູ່ໂຮງໝໍ ຢ່າງອົບອຸ່ນໂດຍ ທ່ານ ຮອງນາຍົກ ເຊັນຢີ ແລະ ພັນລະຍາ. ເວລາໄດ້ພົບ ພວກເພິ່ນ ແມ່ນຕື້ນຕັນໃຈ ຈົນນ້ຳຕາໄຫຼອອກຈາກເບົ້າຕາ. ກ່ອນຈະນັ່ງໂອ້ ລົມກັບແມ່, ທ່ານ ຮອງນາຍົກ ເຊັນຢີ ແລະ ພັນລະຍາ ໄດ້ໄປຢືນກົ້ມຫົວໄວ້ ອາໄລ ຢູ່ຕໍ່ໜ້າໂຖອັດຖີຂອງພໍ່ກີນີມ. (ອັດຖີສ່ວນໃຫ່ຍຂອງພໍ່ກີນີມ ຖືກເອົາ ໄວ້ໃນໂຖແກ້ວ ແລະ ແມ່ນ ພະສັງຄະນາຍົກ ຄູນ ມະນີວົງ ເປັນຜູ້ຮັກສາໄວ້ ຢູ່ວັດທາດຫຼວງ. ໃນປີ 1975, ເວລາພວກຂ້າພະເຈົ້າຮຽນຈົບຈາກຕ່າງປະ ເທດກັບມາ ວຽງຈັນ ໄດ້ໄປໄຫ້ວ ພະອາຈານໃຫ່ຍ ປີຊາ ຢູ່ວັດເຫບນີມິດ, ເພິ່ນຈຶ່ງເອົາໂຖແກ້ວ ທີ່ບັນຈຸອັດຖີ ຂອງພໍ່ອອກມາໃຫ້ພວກຂ້າພະເຈົ້າໄດ້ ນົບໄຫ້ວ. ພວກຂ້າພະເຈົ້າຮ້ອງໄຫ້ຂຶ້ນເມື່ອ ໄດ້ຍິນ ພະອາຈານໃຫ່ຍ ປີຊາ ເລົ່າສູ່ຟັງວ່າ ເດີມອັດຖີຂອງ ພໍ່ ກີນີມ ຖືກຮັກສາໄວ້ນຳ ພະສັງຄະນາຍົກ ຢູ່ວັດທາດຫຼວງ. ພວກທະຫານປະຕິການຍັງໄປນຳຫາເພິ່ນ ເພື່ອຫວງໃຫ້ ເພິ່ນສົ່ງອັດຖີຂອງ ພໍ່ ກີນີມ ໃຫ້ພວກເຂົາເພື່ອພວກເຂົາຈະເອົາໄປຖິ້ມ. ພະ ສັງຄະນາຍົກ ຄູນ ເດັດຂາດບໍ່ຍອມສົ່ງອັດຖີຂອງພໍ່ໃຫ້ພວກເຂົາ ແລະ ຍັງ ສັ່ງສອນໃຫ້ເຂົາຮູ້ບາບບຸນຄຸນໂທດ, ບໍ່ໃຫ້ລ່ວງລະເມີດ ເຖິງດວງວິນຍານ ຂອງບຸກຄົນຜູ້ດີ ທີ່ໄດ້ລ່ວງລັບໄປແລ້ວ. ພວກເຂົາຢ້ານຈຶ່ງຫຼົບໜີໄປ. ກ່ອນ ພະສັງຄະນາຍົກ ຈະມໍລະນະພາບ, ເພິ່ນໄດ້ມອບອັດຖີຂອງພໍ່ໃຫ້ ພະອາ ຈານໃຫ່ຍ ປີຊາ ຮັກສາໄວ້ໃຫ້ ພັນລະຍາ ແລະ ລູກຂອງພະນະ ທ່ານ ກີນີມ ເມື່ອພວກເພິ່ນກັບຕ່າວຄືນມາວຽງຈັນ. ພະອາຈານໃຫ່ຍ ປີຊາ ຍັງເລົ່າໃຫ້ ພວກຂ້າພະເຈົ້າຟັງວ່າ ກ່ອນ ພໍ່ ກີນີມ ຈະໄປ ພະມ້າ ນຳເຈົ້າຊີວິດ, ເພິ່ນນັ່ງ

ທຳເບິ່ງຊາຕາຂອງພໍ່, ເຫັນວ່າ ພໍ່ຈະມີອັນຕະລາຍ, ເພິ່ນຈຶ່ງພະຍາຍາມ ໜ່ວງໜ່ຽວ ບໍ່ໃຫ້ພໍ່ໄປຕ່າງປະເທດ, ແຕ່ໃຫ້ມາຢູ່ໃນວັດນຳເພິ່ນຈັກ 20 ມື້ ກໍ່ຈະພົ້ນໄພ. ແຕ່ພໍ່ກໍ່ຄອບ ພະອາຈານໃຫຍ່ວ່າ ເພິ່ນຈຳເປັນຕ້ອງໄປນຳເຈົ້າຊີວິດ ເພື່ອໄປຂອບໃຈລັດຖະບານ ພະມ້າ ໃນຖານະເພິ່ນເປັນຫົວໜ້າຄະນະຜູ້ແທນຂອງ ລັດຖະບານລາວ ໄປຮ່ວມສັນຍາ ເຊີແນວ ກ່ຽວກັບລາວ. ພະອາຈານໃຫຍ່ ສຸດແສນເສຍດາຍທີ່ເພິ່ນ ບໍ່ສາມາດຊ່ວຍພໍ່ ພົ້ນຈາກໄພພິບັດດັ່ງກ່າວໄດ້). ທ່ານຮອງນາຍົກ ເຊັນຢີ ແລະ ພັນລະຍາ ໄດ້ແບ່ງເບົາຄວາມທຸກ ໂສກຂອງແມ່ ທີ່ໄດ້ສູນເສຍສາມີທີ່ແສນຮັກຂອງຕົນ ແລະ ໄດ້ສະເໜີໃຫ້ແມ່ຈົ່ງອຸ່ນອ່ຽນ ປິ່ນປົວໃຫ້ດີ ເພື່ອຈະໄດ້ນຳພາລູກເຕົ້າ ສືບຕໍ່ພາລະກິດຂອງທ່ານກິນິມ. ເພິ່ນເວົ້າວ່າ ລັດຖະບານ ແລະ ປະຊາຊົນຈີນ ຈະໃຫ້ການສະໜັບສະໜູນ ຕໍ່ພາລະກິດປະຕິວັດຂອງປະເທດລາວຕະຫຼອດໄປ. ຂໍໃຫ້ ແມ່ ໄພບູນ ຈົ່ງຖືວ່າ ປະເທດຈີນ ແມ່ນຄອບຄົວຂອງຕົນເອງ ແລະ ສາມາດອາໃສໄພເພິ່ງໄດ້. ທ່ານ ຮອງນາຍົກ ເຊັນຢີ ຍັງເວົ້າວ່າ ທ່ວງໆແລ້ວນີ້ ເວລາເພິ່ນໄປຢ້ຽມຢາມບາງປະເທດໃນອາຊີ, ທ່ານປະທານ ໂຮຈິມິນ, ທ່ານ ນາຍພົນ ເນວິນ, ສົມເດັດເຈົ້າສີຫານຸ ແລະ ຜູ້ນຳຄົນອື່ນໆ ກໍລ້ວນແຕ່ໄດ້ເວົ້າເຖິງເຫດການທີ່ ພໍ່ ກິນິມຖືກຄາດຄະນຳ, ໂດຍໃຫ້ຖືເປັນບົດຮຽນ. ທ່ານ ເຊັນຢີ ເວົ້ານຳແມ່ວ່າ ເຫດຜົນທີ່ເພິ່ນເລົ່າເລື່ອງດັ່ງກ່າວໃຫ້ແມ່ຟັງ ກໍຍ້ອນເພິ່ນຖືວ່າ ແມ່ ເປັນຄືກັນກັບຄົນໃນຄອບຄົວຂອງ ເພິ່ນ, ເພາະເພິ່ນເປັນເພື່ອນທີ່ສະໜິດສະໜົມຂອງພໍ່, ແຕ່ກ່ອ ກໍຮ່ວມເຮັດວຽກກັບພໍ່ຢ່າງເປັນປະຈຳ. ເພິ່ນເວົ້າວ່າ ຜ່ານມາ ບັນດາທ່ານຜູ້ນຳ ແລະ ນັກລົບປະຕິວັດຂອງ ຈີນ ຕະຫຼອດເຖິງປະຊາຊົນຈີນ ກໍຖືກສັດຕູສັງຫານ ເປັນຈຳນວນຫຼວງຫຼາຍ, ໄຊຊະນະຂອງການປະຕິວັດໃນປະເທດຈີນ ແມ່ນແລກມາດ້ວຍເລືອດຂອງບັນດາທ່ານຜູ້ນຳ, ນັກລົບ ແລະ ປະຊາຊົນເຫຼົ່ານັ້ນ. ທ່ານ ເຊັນຢີ ຂໍໃຫ້ແມ່ຈົ່ງມີຄວາມກ້າຫານ ແລະ ເຂັ້ມແຂງ... ເວລາ ແມ່ເລົ່າເລື່ອງ

ໃນອະດີດໃຫ້ພວກຂ້າພະເຈົ້າຟັງ, ເພິ່ນຍັງຮ້ອງໄຫ້ ແລະ ຈົ່ມຄິດຮອດຫາ ພໍ່ ກິນິມ. ແມ່ເວົ້າວ່າ: ເວລາພໍ່ຍັງມີຊີວິດຢູ່, ພໍ່ເຄີຍຢ້ຳໄປຢ້ຳມາ ໃຫ້ແມ່ຟັງ ວ່າ ປະເທດຈີນ ເປັນເພື່ອນທີ່ໄວ້ເນື້ອເຊື່ອໃຈ ໄດ້, ຖ້າມື້ໃດມື້ນຶ່ງ ພໍ່ຫາກມີ ອັນເປັນໄປ, ໃຫ້ແມ່ໄປຊອກຫາເພື່ອນທີ່ດີຂອງ ພໍ່ ຄື ທ່ານນາຍົກ ໂຈວເອີນ ລາຍ, ທ່ານຈອມພົນ ເຊັນຢີ...

ແມ່ໄພບູນ ຍັງເຄີຍເລົ່າໃຫ້ພວກຂ້າພະເຈົ້າຟັງວ່າ ທ່ານ ເຈີນຈີຜິງ, ເອກອັດຄະລັດຖະທູດຫວຽດນາມ ປະຈຳຢູ່ ສ.ປ.ຈີນ ກໍໄດ້ມາຢາມແມ່ຢູ່ ໂຮງໝໍເຊັ່ນດຽວກັນ. ທ່ານໄດ້ສະແດງຄວາມເສົ້າສະຫຼົດໃຈ ຕໍ່ການເສຍຊີ ວິດຂອງພໍ່ກິນິມ. ທ່ານເວົ້າວ່າ ທ່ານ ກິນິມ ເປັນເພື່ອນມິດ ທີ່ສະໜິດແໜ້ນ ຂອງປະເທດຫວຽດນາມ. ປະຊາຊົນຫວຽດນາມ ຈະຈາລຶກຄຸນງາມຄວາມດີ ຂອງທ່ານ ກິນິມ ທີ່ໄດ້ມີການອຸທິດຢ່າງໃຫ່ຍຫຼວງ ຕໍ່ການເສີມຂະຫຍາຍ ສາຍພົວພັນມິດຕະພາບ ລະຫ່ວາງ ສອງປະເທດ ຫວຽດນາມ-ລາວ. ລັດ ຖະບານຫວຽດນາມ ຈະຮັກສາສາຍພົວພັນອັນດີທີ່ເຄີຍມີມາກັບຄອບຄົວ ຂອງ ທ່ານ ກິນິມ ພົ້ນເສນາ ຕະຫຼອດໄປ.

ຕາມການສະເໜີຂອງແມ່, ອົງການຈັດຕັ້ງທີ່ກ່ຽວຂ້ອງຂອງ ສ.ປ. ຈີນ ກໍໄດ້ຈັດຕັ້ງໃຫ້ແມ່ໃຊ້ເວລາໃນການປິ່ນປົວຂອງຕົນເພື່ອຮ່ຳຮຽນທິດ ສະດີການເມືອງມາກ-ເລນິນ ແລະ ບົດຮຽນຂອງການປະຕິວັດຈີນ. ນອກ ນັ້ນ, ຕາມການຊີ້ນຳຂອງບັນດາທ່ານຜູ້ນຳແນວລາວຮັກຊາດ, ແມ່ ໄພບູນ ໄດ້ສົ່ງສານໄປເຖິງ ກອງປະຊຸມແມ່ຍິງໂລກ ເພື່ອປະນາມພວກອິດທິກຳລັງ ຈັກກະພັດ ແລະ ລູກແຫ້ງຕົນມືຂອງພວກເຂົາທີ່ໄດ້ຄາດຕະກຳ ພໍ່ ກິນິມ ຢ່າງໂຫດຮ້າຍປ່າເຖື່ອນ, ໂດຍອາໄສຄະນະຜູ້ແທນແມ່ຍິງຂອງ ຝ່າຍແນວ ລາວຮັກຊາດອ່ານຕາງແມ່ ໃນກອງປະຊຸມດັ່ງກ່າວ.

ເຖິງແມ່ນວ່າພໍ່ກິນິມໄດ້ລ່ວງລັບໄປໄດ້ 50 ປີແລ້ວກໍຕາມ, ແຕ່ປະ ເທດຊາດບໍ່ໄດ້ຫຼົງລືມເພິ່ນແຕ່ປະການໃດ. ພາຍຫຼັງການມໍລະນະກຳ ຂອງ

ພໍ່, ໃນວັນທີ 1 ເດືອນ 4 ຂອງທຸກໆປີ ຈົນເຖິງມື້ປົດປ່ອຍທົ່ວປະເທດ ແລະ ການສ້າງຕັ້ງ ສ.ປ.ປ.ລາວ, ສູນກາງແນວລາວຮັກຊາດຢູ່ຊໍາເໜືອໄດ້ຈັດຕັ້ງພິທີໄວ້ອາ ໄລເຖິງ ພໍ່ ເພື່ອປຸກລະດົມປະຊາຊົນລາວທົ່ວປະເທດ ໃຫ້ມີນໍ້າໃຈຮັກຊາດ, ຄຽດແຄ້ນສັດຕູ ແລະ ເດັດດ່ຽວຕໍ່ສູ້ ກັບສັດຕູຈົນເຖິງໄຊຊະນະຂັ້ນສຸດທ້າຍ.

ໃນໂອກາດວັນຄົບຮອບ 1 ປີ ທີ່ພໍ່ກິນິມໄດ້ລ່ວງລັບໄປແລ້ວ, ທ່ານ ປະທານສຸພານຸວົງ ໄດ້ອອກຖະແຫຼງການຜ່ານວິທະຍຸກະຈາຍສຽງສົ່ງໄປ ທົ່ວປະເທດ ເພື່ອກ່າວປະນາມການກະທໍາທີ່ໂຫດຮ້າຍ ປ່າເຖື່ອນຂອງພວກ ອິດທິກໍາລັງຈັກກະພັດ ແລະ ພວກລູກແຫຼ້ງຕີນມືຂອງເຂົາທີ່ໄດ້ຄາດຕະກໍາ ພໍ່ ກິນິມ, ທັງຮຽກຮ້ອງໃຫ້ປະຊາຊົນລາວທົ່ວປະເທດ ຈົ່ງເພີ່ມທະວີຄວາມ ຄຽດແຄ້ນຕໍ່ສັດຕູຂອງຊາດ, ມີສະຕິລະວັງຕົວຕໍ່ການແບ່ງແຍກຂອງສັດຕູ ແລະ ຮັດແໜ້ນຄວາມສາມັກຄີ ເພື່ອຕໍ່ສູ້ທວງໃຫ້ປະຕິບັດສັນຍາ ເຊີແນວ ກ່ຽວກັບ ລາວ ແລະ ບັນລຸເປົ້າໝາຍໃນການສ້າງປະເທດລາວ ສັນຕິພາບ, ເອກະລາດ ແລະ ປະຊາທິປະໄຕ ທີ່ແລກມາດ້ວຍເລືອດຂອງນັກຮັກຊາດ ແລະ ນັກລົບປະຕິວັດ. ນອກນັ້ນ, ທ່ານປະທານສຸພານຸວົງ ແລະ ທ່ານໝູຮັກ ພູມສະຫວັນ ໄດ້ຮ່ວມກັນສົ່ງສານສະບັບນຶ່ງເຖິງທ່ານມະຫາກຸ ສຸວັນນະ ເມທີ, ຜູ້ຮັກສາການປະທານພັກສັນຕິພາບເປັນກາງ, ເພື່ອສະແດງຄວາມ ເສົ້າສະຫຼົດໃຈ ຕໍ່ການມໍລະນະກໍາຂອງ ພໍ່ ກິນິມ, ທັງຢືນຢັນຫຼັກໝັ້ນ ຂອງສູນກາງແນວລາວຮັກຊາດ ໃນການສືບຕໍ່ການຮ່ວມມືກັບ ພັກສັນຕິ ພາບເປັນກາງ ທີ່ພໍ່ເປັນຜູ້ກໍ່ຕັ້ງຂຶ້ນ ເພື່ອແນໃສ່ການຕໍ່ສູ້ຮ່ວມກັນໃນການບັນ ລຸນະໂຍບາຍສັນຕິພາບ, ເປັນກາງ ແລະ ຄວາມປອງດອງຊາດ. ຕາມການ ຊີ້ນໍາຂອງບັນດາທ່ານຜູ້ຕາງໜ້າແນວລາວຮັກຊາດ ປະຈໍາສ.ປ.ຈີນ ແລະ ອະດີດສະຫະພາບໂຊວຽດ, ບັນດາສະມາຄົມນັກສຶກສາລາວກ້າວໜ້າຢູ່ ປັກກິ່ງ ແລະ ມົດສະກູ ໄດ້ຈັດຕັ້ງພິທີໄວ້ອາໄລເຖິງພໍ່ກິນິມ ເຊັ່ນດຽວກັນ.

ສຳລັບລູກຫຼານ ຕະກຸນ ພົນເສນາ ແລ້ວແມ່ນເຮັດບຸນນຳພໍ່ກິນີມທີ່ແສນຮັກ ທຸກໆປີ (ແລະພາຍຫຼັງແມ່ ໄພບູນ ທີ່ແສນຮັກເສຍຊີວິດ ກໍໄດ້ເຮັດບຸນຫາ ແມ່ທຸກໆປີເຊັ່ນດຽວກັນ) ເພື່ອໃຫ້ເຊັ່ນລູກ, ຫຼານ, ເຫຼັນ ແລະ ຮຸ້ນຄົນຕໍ່ໆ ໄປໃນຕະກຸນ ພົນເສນາ ບໍ່ຫຼົງລືມຄວາມຄຽດແຄ້ນຕໍ່ພວກອິດທິ ກຳລັງຈັກ ກະພັດ ແລະ ລູກ ແຫ້ງຕົນມືຂອງເຂົາທີ່ໄດ້ຄາດຕະກຳ ພໍ່ ກິນີມ ທີ່ແສນຮັກ ແລະ ເຄົາລົບບູຊາ, ແລະ ເພື່ອຫັນຄວາມຄຽດແຄ້ນຕໍ່ສັດຕູຂອງຊາດ ມາ ເປັນກຳລັງແຮງກະຕຸກຊຸກຍູ້ເດັດດ່ຽວກ້າວເດີນຕາມເສັ້ນທາງຂອງ ພໍ່ ແລະ ສືບຕໍ່ດຳເນີນໃຫ້ສຳເລັດພາລະກິດປະຕິວັດ ທີ່ພໍ່ໄດ້ປະໄວ້. ພ້ອມກັນນັ້ນ ກໍຮ່ຳຮຽນເອົາແບບຢ່າງອັນໃສແຈ້ງຂອງພໍ່ ແລະ ແມ່ທີ່ມີນຳໃຈຮັກຊາດ, ຮັກປະຊາຊົນຢ່າງແຮງກ້າ, ມີຄວາມຊື່ສັດ, ຈົ່ງຮັກພັກດີ ແລະ ຍອມເສຍສະ ຫຼະທຸກສິ່ງທຸກຢ່າງ ເພື່ອອຸທິດໃຫ້ແກ່ພາລະກິດທີ່ສັກກະລະບູຊາຂອງຊາດ.

ພາຍຫຼັງການພັກຜ່ອນປີ່ນປົວຢູ່ ສ.ປ. ຈີນ ເປັນເວລາ 5 ປີ, ໃນປີ 1969 ແມ່ ໄພບູນ ໄດ້ກັບຄືນມາ ເຂດປົດປ່ອຍ ຊຳເໜືອ ເພື່ອເຂົ້າຮ່ວມໃນ ຂະບວນການຕໍ່ສູ້ກູ້ຊາດທີ່ ພິລະອາດຫານຂອງ ປະຊາຊົນລາວ ບັນດາເຜົ່າ ພາຍໃຕ້ການນຳພາ ອັນສະຫຼາດສ່ອງໃສຂອງ ພັກປະຊາຊົນປະຕິວັດລາວ ອັນມີ ທ່ານ ປະທານ ໄກສອນ ພົມວິຫານ ເປັນ ປະທານ ຈົນເຖິງ ໄຊຊະນະ ຂັ້ນສຸດທ້າຍຂອງ ການປະຕິວັດລາວ ທີ່ນຳໄປສູ່ການປົດປ່ອຍທົ່ວປະເທດ ລາວ ແລະ ການສະຖາປະນາ ສ.ປ.ປ. ລາວ (ຈົ່ງເບິ່ງຊີວະປະຫວັດຫຍໍ້ ຂອງ ແມ່ ໄພບູນ ທີ່ຊ້ອນທ້າຍບົດຂຽນສະບັບນີ້).

ໃນຕະຫຼອດໄລຍະ 29 ປີ ແຫ່ງຊີວິດຕໍ່ສູ້ປະຕິວັດຂອງ ແມ່ ໄພບູນ, ເພິ່ນໄດ້ສຶກສາ, ອົບຮົມ ໃຫ້ລູກຫຼານຂອງຕົນມີຄວາມຊື່ສັດ, ຈົ່ງຮັກພັກດີ ແລະ ມີນ້ຳໃຈຮັກຊາດ, ຮັກປະຊາຊົນຄືດັ່ງ ພໍ່ ກິນີມ ຜູ້ບັງເກີດເກົ້າ, ທັງ ຕ້ອງເຊື່ອຟັງຄຳສັ່ງສອນຂອງ ພັກປະຊາຊົນປະຕິວັດລາວ ທີ່ສະຫງ່າເພື່ອ ປະຕິບັດໜ້າທີ່ວຽກງານທີ່ ພັກ ແລະ ລັດກຳຄື ປະຊາຊົນລາວ ບັນດາເຜົ່າ

ໄດ້ມອບໝາຍໃຫ້ຕົນ ໃຫ້ສຳລັດຜົນຢ່າງຈົບງາມ.

ນັບແຕ່ມື້ທີ່ ພໍ່ ກິນິມ ທີ່ແສນຮັກ ແລະ ເຄົາລົບບູຊາ ຖືກຄາດຕະກຳ ໃນວັນທີ 1/4/1963 ຢ່າງໂຫດຫ້ຽມ ແລະ ແມ່ ໄພບູນ ທີ່ແສນຮັກ ແລະ ເຄົາລົບບູຊາຖືກຍິງບາດເຈັບສາຫັດ ເປັນຕົ້ນມາ, ລູກໆ ຫຼານໆຂອງ ພໍ່ ແລະ ແມ່ ໄດ້ປະຕິບັດຕາມຄຳໝັ້ນສັນຍາທີ່ໄດ້ມີຕໍ່ ພໍ່ ແລະ ແມ່ ວ່າ ຈະສືບຕໍ່ດຳເນີນພາລະກິດປະຕິວັດ ທີ່ ພໍ່ ແລະ ແມ່ ບໍ່ທັນໄດ້ດຳເນີນສຳເລັດ.

ຍ້ອນບຸນຄຸນຂອງ ພັກປະຊາຊົນປະຕິວັດລາວ ກໍ່ຄື ປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າ, ແລະ ຍ້ອນບຸນຄຸນຂອງລັດຖະບານ ແລະ ປະຊາຊົນຂອງ ບັນດາປະເທດສັງຄົມນິຍົມເຊັ່ນ ສ.ສ ຫວຽດນາມ, ສ.ປ. ຈີນ, ອະດີດ ສະຫະພາບໂຊວຽດ ແລະ ອະດີດ ສ.ປ. ເຢຍລະມັນ, ລູກຫຼານ ຂອງ ພໍ່ ກິນິມ ແລະ ແມ່ ໄພບູນ ຈຶ່ງໄດ້ມີໂອກາດໄດ້ສຳເລັດການສຶກສາ, ຮ່ຳຮຽນໃນລະດັບ ມະຫາວິທະຍາໄລ ແລະ ເໜືອມະຫາວິທະຍາໄລ ແລະ ໄດ້ຮັບໜ້າທີ່ວຽກງານໃນຂະແໜງການຕ່າງໆຂອງພັກ, ລັດ, ອົງການຈັດຕັ້ງມະຫາຊົນ ແລະ ພາກສ່ວນເອກະຊົນ.

ໃນປີ 1983 ຊຶ່ງແມ່ນ ວັນຄົບຮອບ 20 ປີ ແຫ່ງການມໍລະນະກຳ ຂອງ ພໍ່ ກິນິມ ພົນເສນາ, ແມ່ ໄພບູນ ໄດ້ນຳພາລູກຫຼານໃນຕະກຸນ ພົນເສນາ ຈັດພິທີທຳບຸນ ເພື່ອສົ່ງບຸນກຸສົນໄປເຖິງດວງວິນຍານຂອງ ພໍ່ ທີ່ໄດ້ລ່ວງລັບໄປແລ້ວ, ທັງເອົາອັດຖິຂອງ ພໍ່ ບັນຈຸເຂົ້າຫາດທີ່ ວັດເທບນິມິດ. ບັນດາທ່ານ ຜູ້ນຳຂອງ ພັກ ແລະ ລັດ, ບັນດາເພື່ອນຮ່ວມງານຂອງພໍ່ ໃນພັກສັນຕິພາບເປັນກາງ ແລະ ໃນກຳລັງເປັນກາງຮັກຊາດ ຕະຫຼອດເຖິງຍາດຕິພີ່ນ້ອງ ແລະ ເພື່ອນມິດຂອງຄອບຄົວ ພົນເສນາ ລ້ວນແຕ່ໄດ້ມາຮ່ວມພິທີທຳບຸນ ເປັນຈຳນວນຫຼວງຫຼາຍ ເພື່ອເປັນການຈາລຶກຄຸນງາມຄວາມດີທີ່ ພໍ່ ກິນິມ ມີຕໍ່ປະເທດຊາດ ແລະ ປະຊາຊົນ. ທ່ານ ຜູ້ຕາງໜ້າຂອງພັກ ແລະ ລັດ ໄດ້ມອບຫຼຽນໄຊອິດສະລະ ຊັ້ນ 2 ໃຫ້ ພໍ່ ກິນິມ ໂດຍ

ແມ່ນ ແມ່ ໄພບູນ ເປັນຜູ້ຮັບຕາງ ພໍ່ ຕໍ່ໜ້າທາດຂອງ ພໍ່. (ໝາຍເຫດ: ພາຍ ຫຼັງ ແມ່ ເສຍຊີວິດກໍ່ໄດ້ເອົາອັດຖິຂອງເພິ່ນ ບັນຈຸເຂົ້າໃນທາດທີ່ມີອັດຖິຂອງ ພໍ່ ກິນິມ). ນອກນັ້ນພໍ່ກິນິມ ຍັງໄດ້ຮັບຫຼຽນກາຄຳຊອບ ປະເພດສູງສຸດ ຈາກ ລັດຖະບານຝຣັ່ງ (Medaille Legion D'honneur).

ເນື່ອງໃນໂອກາດ ວັນຄົບຮອບ 50 ປີ ແຫ່ງການລ່ວງລັບໄປຂອງ ພໍ່ ກິນິມ ພົນເສນາ, ພວກລູກ, ຫຼານ, ເຫຼັນຂອງ ພໍ່ ກິນິມ ພົນເສນາ ແລະ ແມ່ ໄພບູນ ພົນເສນາ ຂໍປະຕິຍານ ຕໍ່ດວງວິນຍານອັນບໍລິສຸດຜຸດຜ່ອງຂອງ ພໍ່ ກິນິມ ວ່າ ພວກລູກ, ຫຼານ, ເຫຼັນຂອງ ພໍ່ ຈະຫັນເອົາຄວາມໂສກເສົ້າສະ ຫຼົດໃຈທີ່ໄດ້ສູນເສຍພໍ່, ພໍ່ເຖົ້າ ແລະ ປູ່ ທີ່ແສນເຄົາລົບຮັກ ກໍ່ຄື ຈະຫັນເອົາ ຄວາມຄຽດແຄ້ນ ທີ່ມີຕໍ່ສັດຕູຂອງຊາດ ທີ່ໄດ້ຄາດຕະກຳ ພໍ່ ທີ່ແສນຮັກ ມາ ເປັນກຳລັງແຮງທີ່ມະຫາສານ ແລະ ຄວາມມຸ້ງໝັ້ນ ທີ່ເດັດດ່ຽວໝຸ່ງແໜ້ນ ໃນການຕໍ່ສູ້ ເພື່ອບັນລຸອຸດົມການທີ່ສູງສົ່ງຂອງ ພໍ່ ຄື ການສ້າງປະເທດລາວ ສັນຕິພາບ-ເອກະລາດ-ປະຊາທິປະໄຕ-ເອກະພາບ ແລະ ວັດທະນາຖາ ວອນ. ດ້ວຍຄວາມຮູ້ບຸນຄຸນຢ່າງລົ້ນເຫຼືອຕໍ່ມູນມໍລະດົກອັນລ້ຳຄ່າທາງດ້ານ ວັດຖຸ ແລະ ຈິດໃຈ ທີ່ພໍ່ແມ່ປະໄວ້ໃຫ້ສືບທອດ ແລະ ດຳລົງຄົງຕົວ ແລະ ສືບຕໍ່ຜັນຂະຫຍາຍໄປໃນທາງທີ່ຖືກຕ້ອງ, ແລະ ດ້ວຍຄວາມອາໄລຮັກຕໍ່ ດວງວິນຍານຂອງ ພໍ່ ແລະ ແມ່ ຜູ້ບັງເກີດເກົ້າ, ພວກລູກ, ຫຼານ, ເຫຼັນ, ຫຼ້ອນຂອງ ພໍ່ ແລະ ແມ່ ຂໍໃຫ້ຄຳປະຕິຍານວ່າ ຈະສືບຕໍ່ປຸ້ມລຸມຮັກແພງ ສາມັກຄີ ຖະໜອມຕ່ອມຕຸ້ມກັນ ອອກແຮງ ຮ່ຳຮຽນ ແລະ ດຳລົງຊີວິດຕາມ ແບບຢ່າງອັນໃສແຈ້ງຂອງ ພໍ່ ແລະ ແມ່ທີ່ມີນ້ຳໃຈຮັກຊາດ, ຮັກປະຊາຊົນ ອັນແຮງກ້າ ແລະ ກຽມພ້ອມອຸທິດ ແລະເສຍສະຫຼະທຸກສິ່ງທຸກຢ່າງ ເພື່ອ ຄວາມຈະເລີນຮຸ່ງເຮືອງ ແລະ ເຂັ້ມແຂງ ມັ່ງຄັ່ງຂອງ ປະເທດຊາດ ທີ່ແສນ ຮັກ ກໍ່ຄື ເພື່ອຄວາມຢູ່ເຢັນເປັນສຸກ ແລະ ອຸດົມຮັ່ງມີຂອງປະຊາຊົນລາວ ບັນດາເຜົ່າ. ຂໍໃຫ້ດວງວິນຍານຂອງ ພໍ່ ກິນິມ ແລະ ແມ່ ໄພບູນ ພົນເສນາ ທີ່ແສນຮັກ ແລະ ເຄົາລົບບູຊາ ຈົ່ງໄປສູ່ສຸຂະຕິເຖີດ!

<u>ເອກະສານຊ້ອນທ້າຍ</u>

1. ຊີວະປະຫວັດຂອງ ແມ່ ໄພບູນ ພົນເສນາ
2. ບົດກ່າວຂອບໃຈຂອງ ຄອບຄົວ ພົນເສນາ

   ໃນງານຊາປະນະກິດສົບ ແມ່ ໄພບູນ ພົນເສນາ
3. ບົດກາບກອນ "ບຸນຄຸນພໍ່ແມ່" ໂດຍ ບຸນເລີດ ດຳຣົງສັກ

"ປະຫວັດຫຍໍ້ຂອງ ແມ່ເຖົ້າ ໄພບູນ ພົນເສນາ"

ແມ່ເຖົ້າ ໄພພູນ ພົນເສນາ ເກີດເມື່ອວັນທີ 18/8/1920 ທີ່ ບ້ານ ຫົວຂອງ, ເມືອງຈຳປາສັກ, ແຂວງຈຳປາສັກ ໃນຄອບຄົວຊົນຊັ້ນຊາວນາ, ເປັນບຸດຂອງ ພໍ່ເຖົ້າແດງພັນ ຈະເລີນຊັບ ແລະ ແມ່ເຖົ້າ ພັນ, ແມ່ ເຖົ້າ ໄພບູນ ພົນເສນາ ໄດ້ສ້າງຄອບຄົວກັບ ທ່ານ ກົມ ພົນເສນາ, ມີລູກນຳກັນ 12 ຄົນດັ່ງນີ້:

- ນ. ເຂັມເພັດ ພົນເສນາ
- ທ. ດຣ ແກ່ນແກ້ວ ພົນເສນາ
- ນ. ເຂັມຄຳ ພົນເສນາ (ເສຍຊີວິດ)
- ນ. ເຂັມແພງ ພົນເສນາ
- ນ. ເຂັມວຽງ ພົນເສນາ
- ທ. ສົມມະໂນ ພົນເສນາ
- ທ. ສົມມາດ ພົນເສນາ
- ທ. ສົມມັກ ພົນເສນາ
- ນ. ເຂັມມະນີ ພົນເສນາ
- ທ. ດຣ ສົມປອງ ພົນເສນາ
- ທ. ສົມພອນ ພົນເສນາ
- ນ. ສີເຮືອງນາມ ພົນເສນາ (ເສຍຊີວິດ)

ການເຄື່ອນໄຫວຂອງ ແມ່ເຖົ້າ ໄພບູນ ພົນເສນາ ໄລຍະຜ່ານມາ ມີດັ່ງນີ້:

- ❖ ປີ 1957 ໄດ້ຮ່ວມກັບສາມີ ຄືທ່ານ ກຶນີມ ພົນເສນາ ຊ່ວຍເຫຼືອ ສູນ ກາງແນວລາວຮັກຊາດໃນການສ້າງຕັ້ງໂຮງພິມແນວລາວຮັກ ຊາດ ແຫ່ງທຳອິດຢູ່ເຮືອນຂອງເພິ່ນເອງຢູ່ ວຽງຈັນ, ລວມທັງ ຮັບຜິດ ຊອບ ຄ່າໃຊ້ຈ່າຍທັງໝົດດ້ານການພິມ, ແລະ ຈັດຫາອາຫານ ແລະ ອັດຖຸຕ່າງໆໃຫ້ບັນດາ ທ່ານ ຜູ້ນຳ ແລະ ພະນັກງານ ທັງໝົດຂອງ ແນວລາວຮັກຊາດ ທີ່ມາເຄື່ອນໄຫວວຽກງານຢູ່ວຽງຈັນ.
- ❖ ປີ 1958 ໃນການເລືອກຕັ້ງເພີ້ມເຕີມ, ໄດ້ເຂົ້າສະໝັກຜູ້ແທນລາດ ຊະດອນ ຢູ່ແຂວງ ຈຳປາສັກ ໃນນາມພັກສັນຕິພາບເປັນກາງ.
- ❖ ປີ 1959 ໃນເວລາທີ່ ທ່ານ ກຶນີມ ພົນເສນາ ເປັນທະນາຍຄວາມ ໃຫ້ ບັນດາທ່ານຜູ້ນຳພັກ ແລະ ແນວລາວຮັກຊາດ ທີ່ຖືກປະຕິການ ຈັບ ແລະ ຄຸມຂັງຢູ່ຄຸກຄ້າຍໂພນເຄັງ, ໄດ້ປະກອບສ່ວນຮ່ວມ ກັບສາ ມີ ດ້ານວັດຖຸ, ເງິນຄຳເພື່ອຕໍ່ສູ້ຄະດີຢູ່ສານ.
- ❖ ປີ 1962 ຖືກເລືອກຕັ້ງເປັນ ປະທານ ສະຫະພັນສັດຕິລາວຂອງ ກຳ ລັງເປັນກາງຮັກຊາດ ຢູ່ ຄັງໄຂ ແຂວງ ຊຽງຂວາງ.
- ❖ ປີ 1963 ພາຍຫຼັງສາມີ ຖືກຄາດຕະກຳ ແລະ ແມ່ເຖົ້າເອງ ກໍ່ຖືກຍິງ ບາດເຈັບ, ເພິ່ນໄດ້ໄປປິ່ນປົວ ຢູ່ສ.ປ. ຫວຽດນາມ (1963-1969) ສ.ປ ຈີນ (ປີ 1963-1968) ແລະ ອະດີດ ສ.ປ ເຢຍລະມັນ (ປີ 1972)
- ❖ ປີ 1968 ເປັນຄະນະກຳມະການສູນກາງແນວລາວຮັກຊາດ.
- ❖ ປີ 1969 ຖືກແຕ່ງຕັ້ງເປັນກຳມະການ ໃນຄະນະຮ່ວມສຳພັນກຳ ລັງ ເປັນກາງຮັກຊາດຢູ່ຊຳເໜືອ (ແຂວງ ຫົວພັນ)
- ❖ ປີ 1975 ຖືກແຕ່ງຕັ້ງເປັນສະມາຊິກສະພາປະຊາຊົນສູງສຸດຊຸດທີ I , ປະຈຳໃນຄະນະກຳມາທິການ ຮ່າງລັດຖະທຳມະນູນ ແລະ ກົດໝາຍ ການເລືອກຕັ້ງສະພາປະຊາຊົນສູງສຸດ.

- ❖ ປີ 1971 ໄດ້ໄປຢ້ຽມຢາມ ສ.ສ ຫວຽດນາມ ນຳຄະນະຜູ້ແທນຂອງ ປະເທດລາວ ນຳໂດຍທ່ານ ຈັນມີ ດວງບຸດດີ.
- ❖ ໃນຊຸມປີ 80 ໄດ້ໄປຢ້ຽມຢາມ ລາດຊະອານາຈັກ ກຳປູເຈຍ ນຳຄະ ນະຜູ້ແທນ ສະມາຄົມ ມິດຕະພາບ ລາວ-ກຳປູເຈຍ ນຳໂດຍທ່ານ ມະຫາ ກຸ ສຸວັນນະເມທີ.
- ❖ 5/1990 ໄດ້ເຂົ້າຮ່ວມໃນຄະນະຜູ້ແທນຂອງ ສ.ປ.ປ. ລາວ ນຳໂດຍ ທ່ານ ປະທານໄກສອນ ພົມວິຫານ ໄປຮ່ວມງານສະເຫຼີມສະຫຼອງ ວັນເກີດ ທ່ານປະທານ ໂຮຈິມິນ ຄົບຮອບ 100 ປີ
- ❖ ປີ 1989 ໄດ້ເຂົ້າຮັບບຳນານ (ລວມອາຍຸການປະຕິວັດ 29 ປີ)

ແມ່ເຖົ້າ ໄພບູນ ພົມເສນາ ໄດ້ປະກອບຊັບສິນສ່ວນຕົວ ໃຫ້ການປະຕິວັດ ແລະ ຊາດດັ່ງຕໍ່ໄປນີ້:

- ❖ ປີ 1964 ໃນໂອກາດ ທ່ານ ໝູຮັກ ພູມສະຫວັນ ໄດ້ນຳພາຄະນະ ໄປ ຢ້ຽມຢາມ ສ.ປ ຈີນ ໄດ້ມອບເງິນຈຳນວນ 36 000 ໂດລາ ສະຫະລັດ ໃຫ້ສູນກາງແນວລາວຮັກຊາດ ໂດຍຊ້ອງໜ້າ ທ່ານ ໄມສຸກ ໄຊສົມ ແພງ ແລະ ທ່ານ ທອງດຳ ຈັນທະພອນ.
- ❖ ແຕ່ປີ 1962-1980 ໄດ້ເອົາບ້ານພັກຂອງຄອບຄົວຢູ່ໜອງດ້ວງ ມອບໃຫ້ສະຖານທູດ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ ນຳໃຊ້ ໂດຍບໍ່ເກັບຄ່າເຊົ່າ (1962-1976) ແລະ ຫຼັງຈາກນັ້ນ ມອບ ໃຫ້ສຳນັກງານນາຍົກລັດຖະມົນຕີ ໃຊ້ເປັນບ່ອນຮັບແຂກ (1976-1980) ໂດຍບໍ່ຄິດຄ່າເຊົ່າ.
- ❖ ປີ 1976 ໄດ້ມອບດິນໜຶ່ງຕອນ ໃຫ້ປະຊາຊົນບ້ານສີສັງວອນ ນະ ຄອນຫຼວງວຽງຈັນ ເພື່ອປຸກສ້າງໂຮງຮຽນ.

ພັກ-ລັດ ແລະ ການຈັດຕັ້ງ ໄດ້ຍ້ອງຍໍສັນລະເສີນຜົນງານ ຂອງແມ່ເຖົ້າ ໄພບູນ ພົນເສນາ ໂດຍຫຼາຍລະດັບດັ່ງນີ້:

1. ຫຼຽນໄຊອິດສະຫຼະຊັ້ນ III 1 ໜ່ວຍ.
2. ຫຼຽນໄຊຊະນະເລີດ 1 ໜ່ວຍ.
3. ຫຼຽນໄຊແຮງງານຊັ້ນ III 1 ໜ່ວຍ.
4. ຫຼຽນກາຕ້ານຈັກກະພັດອາເມລິກາ 1 ໜ່ວຍ.
5. ຫຼຽນລະນຶກ 10 ປີ ວັນສ້າງຕັ້ງ ສ.ປ.ປ.ລາວ 1 ໜ່ວຍ.
6. ຫຼຽນລະນຶກວັນສ້າງຕັ້ງແນວລາວສ້າງຊາດ 60 ປີ 1 ໜ່ວຍ.
7. ໃບຍ້ອງຍໍຈຳນວນໜຶ່ງ 1 ໜ່ວຍ.

ນອກນັ້ນ, ແມ່ເຖົ້າໄພບູນ ຍັງໄດ້ຮັບໃບຍົກຕິຄຸນ ຈາກທ່ານປະທານປະເທດ ສ.ສ.ຫວຽດນາມ.

ບົດກ່າວຂອບໃຈ ໃນງານຊາປະນະກິດສົບຂອງແມ່ໄພບູນ ພົນເສນາ

ꩻꩻꩻꩻ ꩻꩻꩻꩻ

– ນ້ອມນະມັດສະການ ພະເຖລາ ນຸເຖລະ,
– ຂໍຮຽນ ບັນດາທ່ານຜູ້ນຳພັກ, ລັດ ທີ່ເຄົາລົບ ແລະ ນັບຖືຢ່າງສູງ,
– ຮຽນ ບັນດາທ່ານແຂກຜູ້ມີກຽດ ທັງພາຍໃນ ແລະ ຕ່າງປະເທດ, ຍາດຕິພີ່ນ້ອງ, ເພື່ອນມິດ ສະຫາຍທີ່ນັບຖື,

ຂ້າພະເຈົ້າ, ຂໍຕາງໜ້າໃຫ້ຄອບຄົວພົນເສນາ ແລະຍາດຕິພີ່ນ້ອງ, ລູກ, ຫຼານ, ເຫຼັນ ຂອງແມ່ເຖົ້າໄພ ບູນ ພົນເສນາ ສະແດງຄວາມຮູ້ບຸນຄຸນຢ່າງສູງ ແລະ ຄວາມຂອບໃຈ ຢ່າງເລິກເຊິ່ງ ຕໍ່ທ່ານຜູ້ນຳພັກ, ລັດ, ອົງການຈັດຕັ້ງທຸກຂັ້ນ, ບັນດາທ່ານແຂກຜູ້ມີກຽດ ທັງພາຍໃນ ແລະ ຕ່າງປະເທດ, ຍາດຕິພີ່ນ້ອງ ແລະເພື່ອນ ມິດສະຫາຍທັງຫຼາຍ ທີ່ໄດ້ ສະຫຼະເວລາອັນມີຄ່າຂອງທ່ານ ມາຮ່ວມພິທີຊາປະນາກິດສົບ ຂອງແມ່ໄພບູນ ພົນເສນາ ຜູ້ເປັນແມ່, ເປັນຍ່າ, ເປັນແມ່ເຖົ້າ, ເປັນເອື້ອຍຂອງຂ້າພະເຈົ້າ ທີ່ໄດ້ລ່ວງລັບໄປ.

ບັນດາທ່ານທັນບຖ,

ໃນທ່າມກາງຄວາມໂສກເສົ້າ, ງ່ວມເຫງົາ, ແລະ ສຸດແສນ ອາໄລອາວອນ ຂອງພວກ ຂ້າພະເຈົ້ານີ້, ບັນດາ ທ່ານ ໄດ້ຢືນຢູ່ຄຽງຂ້າງ ແບ່ງເບົາຄວາມທຸກໂສກ ແລະ ໄດ້ໃຫ້ ຄວາມອົບອຸ່ນແກ່ພວກຂ້າພະເຈົ້າທັງໄດ້ ສົມທົບວັດຖຸ ແລະ ກຳລັງໃຈ ອັນໄດ້ເຮັດໃຫ້ການທ້າງຫາກະກຽມ ແລະ ການຈັດງານຊາປະນາກິດສົບໃນຄັ້ງນີ້ ໄດ້ດຳເນີນໄປຢ່າງສົມກຽດ.

ແມ່ໄພບູນ ພົນເສນາ ເປັນພະນັກງານປະຕິວັດອາວຸໂສ ທີ່ບໍລິສຸດ

ຜຸດຜ່ອງ, ຈົ່ງຮັກພັກດີ ຕໍ່ປະເທດຊາດ ແລະ ພາລະກິດປະຕິວັດ ທັ້ງເປັນ ເປັນເອື້ອຍ, ແມ່, ເປັນແມ່ເຖົ້າ ແລະ ເປັນຍ່າທີ່ແສນປະເສີດ ຂອງພວກ ນ້ອງນຸ່ງ, ລູກຫຼານ ແລະ ຍາດພີ່ນ້ອງທັ້ງຫຼາຍ. ແມ່ໄພບູນ ໄດ້ຮ່ວມຄຸງບ່າ ຄຸງໄລ່ກັບພໍ່ ກີນິມ ພົນເສນາ ໃນທຸກຂະບວນການຕໍ່ສູ້ ເພື່ອພາລະກິດ ປອງດອງຊາດ. ເມື່ອພໍ່ຖືກສັດຕູຂອງຊາດ ຄາດຕະກຳ ແລະ ແມ່ເອງ ກໍ ຖືກຍິງບາດເຈັບ, ແມ່ໄດ້ ອົດກັ້ນຄວາມເຈັບປວດ ທີ່ໄດ້ສູນເສຍສາມີທີ່ ແສນຮັກຂອງຕົນ ເພື່ອແບກຫາບໜ້າທີ່ເປັນ ເສົາຄ້ຳຫຼັກຂອງຄອບຄົວໃນ ການລ້ຽງດູ, ອົບຮົມ ລູກກຳພ້າ ທັງ 12 ຄົນ ໃຫ້ ມີນ້ຳໃຈຮັກຊາດອັນດູດ ດື່ມ, ມີຄວາມຄຸງດແຄ້ນຕໍ່ສັດຕູຂອງຊາດ ແລະ ຢືນຢັດໃນການເດີນຕາມ ເສັ້ນທາງປະຕິວັດ ພາຍໃຕ້ການນຳພາອັນສະຫຼາດສ່ອງໃສຂອງພັກປະຊາ ຊົນປະຕິວັດລາວ ທີ່ມີກຽດສະຫ່ຽ. ດັ່ງທີ່ທ່ານປະທານງານຊາປະນາກິດ ສົບ ໄດ້ກ່າວມານັ້ນ, ໃນຕະຫຼອດ 29 ປີ ແຫ່ງຊີວິດປະຕິວັດຂອງແມ່, ແມ່ ໄດ້ເດັດດ່ຽວໜຽວແໜ້ນ ໃນການປະຕິບັດ ທຸກໜ້າທີ່ວຽກງານ ທີ່ພັກ ແລະ ລັດໄດ້ມອບໝາຍ ໃຫ້ຢ່າງສຳເລັດຜົນ ທັງຢູ່ໃນໄລຍະຕໍ່ສູ້ປົດປ່ອຍຊາດ ກໍຄື ໃນໄລຍະກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດ, ຄຸນງາມຄວາມດີ ຂອງແມ່ ໄດ້ຮັບການຍົກຍ້ອງຈາກອົງການ ຈັດຕັ້ງຂອງພັກ ແລະ ລັດທຸກ ຂັ້ນ ກໍຄືຈາກພໍ່ແມ່ພີ່ນ້ອງປະຊາຊົນລາວທຸກຊັ້ນຄົນ, ຊຶ່ງສະແດງອອກຢູ່ ບ່ອນວ່າ ເມື່ອແມ່ໄພບູນເຈັບເປັນ ແລະ ລົ້ມປ່ວຍ, ບັນດາທ່ານຜູ້ນຳພັກລັດ ແລະ ອົງການຈັດຕັ້ງ ຂອງພັກ, ລັດທີ່ກ່ຽວຂ້ອງ ກໍໄດ້ມາຢ້ຽມຖາມຂ່າວ ເພີ່ນ ແລະ ໄດ້ປະຕິບັດນະໂຍບາຍຕໍ່ເພີ່ນເປັນຢ່າງດີ. ອົງການແພດໝໍທີ່ ດີເດັ່ນທີ່ສຸດ ຂອງປະເທດລາວ, ເປັນຕົ້ນແມ່ນແພດໝໍ ຂອງໂຮງໝໍມະໂຫ ສົດ ແລະ ໂຮງໝໍເສດຖາທິລາດ, ກໍໄດ້ໃຫ້ການເອົາໃຈໃສ່ປິ່ນປົວ ເພີ່ນ ດ້ວຍຄວາມຮັບຜິດຊອບສູງ. ສິ່ງຢັ້ງຢືນທີ່ເດັ່ນຊັດ ອີກປະການນຶ່ງ ຄືເມື່ອ ພະຍາດຂອງແມ່ ມີຄວາມໜັກໜ່ວງ, ແພດໝໍ, ຄອບຄົວ ລູກຫຼານ ແລະ

ຍາດຕິພີ່ນ້ອງ ບໍ່ສາມາດກອບກູ້ເອົາຊີວິດຂອງເພິ່ນໄດ້, ແມ່ໄດ້ສິ້ນລົມຫາຍໃຈໃນເວລາ 11 ໂມງຂອງວັນທີ 5/10/10, ບັນດາທ່ານຜູ້ນຳພັກ, ລັດ, ບັນດາອົງການຈັດຕັ້ງພັກ, ລັດ ແລະ ພີ່ນ້ອງ, ເພື່ອນມິດທັງພາຍໃນ ແລະ ຕ່າງປະເທດ ກໍໄດ້ພາກັນມາໄວ້ອາໄລນຳ ແມ່ ແລະ ໄດ້ຍົກຍ້ອງຄຸນງາມຄວາມດີຂອງແມ່, ໂດຍຂ້າພະເຈົ້າຂໍຍົກຂຶ້ນບາງຄຳເວົ້າ ທີ່ຈົບງາມ ທີ່ເວົ້າເຖິງແມ່ ດັ່ງນີ້: “ພວກລູກຫຼານ ຂໍກົ້ມຫົວສະແດງຄວາມເຄົາລົບ ແລະ ຮ່ຳຮຽນ ແບບຢ່າງທີ່ດີຂອງຜູ້ເປັນແມ່ທີ່ດີເລີດ, ນັກເຄື່ອນໄຫວຕໍ່ສູ້ເພື່ອສັນຕິພາບຕ້ານສັດຕູຜູ້ຮຸກຮານ”, “ແມ່ອິດເມື່ອຍຕະຫຼອດຊີວິດ ເພື່ອພາລະກິດຂອງປະເທດຊາດ ແລະ ໄດ້ອຸທິດ, ທຸ້ມເທເຫື່ອແຮງອັນຫຼວງຫຼາຍແກ່ປະເທດຊາດ”, “ຄຸນງາມຄວາມດີຂອງຜູ້ເປັນ ແມ່ທີ່ຍິ່ງໃຫ່ຍ ແລະ ເຂັ້ມແຂງ ຈະສະຖິດຢູ່ໃນດວງໃຈຂອງພວກເຮົາຕະຫຼອດໄປ”, “ຕະຫຼອດຊີວິດຂອງແມ່ເຖົ້າ, ແມ່ເປັນແມ່ທີ່ດີ ໄດ້ສ້າງຄຸນຢ່າງມະຫາສານໃຫ້ແກ່ຊາດ ແກ່ຕະກຸນ. ລູກໆຂອງແມ່ລ້ວນແຕ່ເປັນລູກຜູ້ປະເສີດ, ມີບົດບາດໃນການສືບທອດອຸດົມການຂອງພໍ່ແມ່. ແມ່ເປັນແມ່ແທ່ງພະຄຸນຂອງລູກ, ຫຼານ, ເຫຼັນຫຼ້ອນ ເພື່ອເປັນແວ່ນແຍງຕະຫຼອດການລະນານ...”

ດ້ວຍຄວາມອາໄລຮັກຕໍ່ແມ່ທີ່ແສນປະເສີດ, ພວກລູກ, ຫຼານ, ເຫຼັນ, ຫຼ້ອນຂອງແມ່ ຂໍໃຫ້ຄຳໝັ້ນສັນ ຍາວ່າ ຈະສືບຕໍ່ຮ່ຳຮຽນເອົາ ແບບຢ່າງອັນດີງາມຂອງແມ່, ຈະເຕົ້າໂຮມສາມັກຄີກັນເປັນຈິດໜຶ່ງໃຈດຽວ, ເບິ່ງແຍງອຸ້ມຊູ ຊ່ວຍເຫຼືອຊຶ່ງກັນ ແລະ ກັນ, ຈົ່ງຮັກພັກດີຕໍ່ພັກ-ລັດ ແລະ ເປັນພົນລະເມືອງທີ່ດີ ຂອງຊາດ ຕາມຄຳສັ່ງສອນ ອັນສັກກະລະບູຊາ ແລະ ມີຜົນສັກສິດຕະຫຼອດການ ຂອງພໍ່ ແລະ ແມ່.

ອີກເທື່ອໜຶ່ງ ຂ້າພະເຈົ້າ ຂໍຖືໂອກາດນີ້ ຕາງໜ້າໃຫ້ຄອບ ຄົວພົນເສນາ ສະແດງຄວາມຮູ້ບຸນຄຸນແລະ ຂອບໃຈ ຢ່າງສຸດຊຶ້ງ ຕໍ່ບັນດາທ່ານຜູ້ນຳພັກ-ລັດ, ຄະນະຮັບຜິດຊອບຊາປະນາກິດສົບ, ລວມທັງຍາດຕິພີ່ນ້ອງ,

ເພື່ອນ ມິດສະຫາຍ ແລະ ແພດໝໍ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ໃຫ້ ຄວາມເປັນຫ່ວງເປັນໃຍ ແລະ ໃຫ້ກຳລັງ ໃຈແກ່ແມ່ຕະຫຼອດມາ. ພວກຂ້າ ພະເຈົ້າ ຂໍຈາລຶກບຸນຄຸນອັນລົ້ນເຫຼືອດັ່ງກ່າວໄວ້ຕະຫຼອດໄປ. ຂໍອວຍພອນ ໃຫ້ ບັນດາທ່ານຜູ້ນຳພັກ-ລັດ, ບັນດາທ່ານແຂກທີ່ມີກຽດ, ຍາດຕິພີ່ນ້ອງ ແລະ ເພື່ອນມິດທີ່ມາຮ່ວມງານຊາປະ ນາກິດສົບຄັ້ງນີ້ ຈົ່ງມີສຸກຂະພາບ ເຂັ້ມແຂງ, ອາຍຸໝັ້ນຍືນ, ປະສົບຜົນສຳເລັດທຸກປະການໃນໜ້າທີ່ການງານ ແລະ ໃນຊີວິດຄອບຄົວ.

ຂໍຂອບໃຈ

ບຸນຄຸນພໍ່ - ແມ່

ໂດຍ ບຸນເລີດ ດຳຣິງສັກ

ບຸນຄຸນຂອງແມ່ນີ້
ມີມາກຍິ່ງຫນັກຫນາ
ບໍ່ອາດພັນລະນາ
ສູ່ຟັງໃຫ້ຫມົດໄດ້
ແມ່ມີໃຈພຽນລ້ຽງ
ຢູ່ໃນຄັນຈົນທ້ອງໃຫຍ່
ນັບເກົ້າເດືອນລ່ວງໄດ້
ເຮົາຈຶ່ງໄດ້ເກີດມາ
ເມື່ອເຮົາພົ້ນຈາກທ້ອງ
ແມ່ເປັນຫ່ວງເຫລືອທີ່ສຸດ
ຂໍໃຫ້ບຸດຂອງເຮົາ
ຈຶ່ງປອດໄພໄດ້ເຫັນຫນ້າ
ຄອຍປ້ອນນົມປ້ອນເຂົ້າ
ຂອງກິນຜິດແມ່ກໍຢ່າ
ກຽມຢູກຢາເຄື່ອງຫລິ້ນ
ຂອງຕ້ອນເຄື່ອງນຸ່ງສວຍ
ຍາມລູກໄຫ້ແມ່ກໍ່ໄຫ້
ດ້ວຍໃຈຫ່ວງອາໄລຫາ
ຍາມລູກຫິວເຮຮາ
ແມ່ກໍ່ເຮຮາດ້ວຍ
ລູກຖືກເຂົາຕີຂ້າ
ແມ່ຟ້າວມາປັດປ້ອງຊ່ວຍ
ຍາມລູກປ່ວຍແມ່ກໍເຝົ້າ
ອາໄລເຈົ້າບໍ່ຫ່ວງກິນ
ອົບອົມນົດໄສໃຫ້
ຕັ້ງແຕ່ອ່ອນເຍົາໄວ
ໃຫ້ມີໃຈອົດທົນ
ຕໍ່ການງານບໍ່ສູນສິ້ນ
ສອນວຽກການງານໃຫ້
ຫນັກຫລືເບົາບໍ່ດູຫມິ່ນ

ທ້ງຊັບສິນກໍມອບໃຫ້
ຍາມເຮົາພາດແມ່ບອກໃຫ້
ແມ່ອາໄລຍາມເຮົາຜິດ
ເຮົາມີທຸກແມ່ທຸກພ້ອມ
ເຮົາມີສຸກຊື່ນຊ້ອຍ
ຍາມເຮົາໄກຈາກຂ້າງ
ອອນໃຫ້ປອງເທອາ
ຍາມເຮົາເຈັບແມ່ທົນກຸ້ມ
ແມ່ກະທຳທຸກຢ່າງໃຫ້
ບຸນຄຸນຂອງແມ່ນີ້
ໃຜບ່ຄິດຮັກເຮົາ
ເປັນຄວາມສຸກຂອງລູກແລ້ວ
ຊີວິດນີ້ແມ່ມອບໃຫ້
ສ່ວນບຸນຄຸນຂອງພໍ່ນັ້ນ
ເມື່ອແມ່ມີຄັນມາ
ດີໃຈທຳງານສູ້
ເພື່ອສາຍເລືອດລູກນ້ອຍ
ຍາມແມ່ຢູ່ກຳເຝົ້າ

ໃຫ້ລູກໄດ້ແຕ່ສິ່ງດີ
ໃຫ້ຈີ່ຈຳຝັງໃນ
ບ່ຄິດຊັ່ງຫລີ້ຫລິບລີ້
ແສນກ້ງວິນເຫມືອນໄຟຈີ່
ດວງໃຈນ້ອຍແມ່ຊື່ນບ
ໃຈແມ່ທ່ວງອາໄລຫາ
ຊ່ວຍຮັກສາແລະຊູຄ້ຳ
ຢູ່ໃນທວງທ້ງເຊົ້າຄ່ຳ
ຂໍພຽງລູກໄດ້ຢູ່ດີ
ຍັງຝັງຢູ່ໃນດວງຈິດ
ເຫມືອນດັ່ງໃຈແມ່ເຮົານີ້
ແມ່ພໍໃຈບ່ຕະຫນີ
ພຽງລູກໄດ້ຢູ່ສະບາຍ
ກໍມີມາກຄືກັນ
ກໍ່ຊື່ນໃຈບ່ມີຮ້າຍ
ທ້ງເວັນຄືນເອົາທຸກຝ່າຍ
ຄອບຄົວຂ້ອຍໄດ້ຢູ່ດີ
ພໍ່ກໍເລົ່າພຽນຫາ

ທັງນ້ຳຢາຟືນໄຟ
ອາຫານແລະເງິນພ້ອມ
ຊັກຜ້າຍ່ຽວແລະຜ້າຂີ້
ພໍ່ເປັນຜູ້ຄິດຄົ້ນ
ບໍ່ໃຫ້ມືອຫມອງສີ
ສົ່ງເຂົ້າໂຮງຮຽນພ້ອມ
ສອນການງານໃຫ້ໄດ້ຮູ້
ມີການງານມີຄວາມຮູ້
ມີຮັກປອງຮ່ວມຊີວິ
ໄດ້ມອບເງິນຄຳໃຫ້
ລູກມີສຸກກ້າວຫນ້າ
ພໍ່ແມ່ເປັນເພື່ອນຫລົ້ນ
ເປັນມິດໃຈທີ່ຫມັ້ນຄົງ
ເປັນເພື່ອນຕາຍເປັນຄູພ້ອມ
ຮັກຫລົງຫວງບໍ່ເອັ້ນ
ພໍ່ແມ່ຮັກລູກແທ້
ເຈັບໄຂ້ມາຮາວີ
ລູກບໍ່ດີກໍຕາມຖ້ອນ

ບໍ່ຂາດເຂີນຈັກດີ້
ພໍ່ຈັດຫາໃຫ້ຖ້ວນຖີ່
ເຫັນລູກນ້ອຍແລ້ວຊື່ນບານ
ສ້າງກໍ່ທາງຄອບຄົວ
ຂາດເຂີນຍ້ອນຄວາມຄ້ານ
ໃຫ້ສຶກສາຂີດຂຽນອ່ານ
ເມື່ອເຮົາໄດ້ເຕີບໃຫຍ່ມາ
ຈັດຫາຄູ່ໃຫ້ທຽມສອງ
ສ້າງຄອບຄົວໃຫ້ແຂງກ້າ
ພ້ອມວັດຖຸອັນມີຄ່າ
ພໍ່ແມ່ນັ້ນກໍອຸ່ນທອງ
ຍາມເຮົາອ່ອນເຍົາໄວ
ເຮົາຜິດໄປກໍຄອຍທ້ວງ
ທັງສິ່ງສາມທັງເປັນຫ່ວງ
ໃຈນັ້ນບໍ່ປ່ຽນແປ
ອາໄລຫ່ວງບໍ່ລາຫນີ
ຫລີ່ຢ່າງໃດບໍ່ຍອມແພ້
ຫລີພິການກໍຕາມແຕ່

ใจพ่ແม่ຮັกลูกหมั้น
พ่ปฺงบถีเสิาถ้ำ
แม่เป้นเสิาขวันขอๆเรือน
พ่กับแม่เป้นถีต้ิน
เป้นพระพิมลูกกำได้
พ่แม่รักลูกด้วย
มีบุดหลายเป้นโหล
ชิทุกจิมกำตามถ้อม
ขอแต่พงๆให้ลูกน้อย
จิมอ่าลูกใหย่แล้อ
บาๆถินกำเอมมิ
ปะให้สอๆผิอเมยเถ้ำ
ชิยู่กินกำยากซ้ำ
ลูกหลายถินเพิ่มล้งๆได้
แต่อ่าบุดหลายถิน
บ่สิงสามพ่แม่ล้งๆ
ป่อยให้สอๆผู้เถ้ำ
บุนคุมเพิ่นมากล้ิน

สะเหมิต้ินตะหลอดปาย
เป้นเสิาแก่นที่แขงแรๆ
กะเบื้อๆมุงเซิดซูไว้
โพไชที่สูงใหย่
ใผชิก้ำตอบถๆ
ใจผุดผ่อๆบ่อิสุด
กำเล่ำพูมรักสาล้งๆ
ขาดเขิมหลายกำขอส่งๆ
มิเข้ำได้ยู่กิน
พ่แม่ชื่นใจนำ
ลูกหนิไปจิมหมิดสิ้ม
ทำละมานเขิาดูหมิ่น
ขาดถินชอ้านช่อยซู
ด้อยใจห่อๆอาไลสุด
บ่ห่อๆนำกำถิๆรู้
ยังมิใจหมายลิบหลู่
เหิาว้องขาดลูกหลาม
เหมิอพื้นแผ่นทำระนิ

ຊີ ຕອບຄຸນແນວໃດ
ບໍ ລະບັດມີຫລາຍຂໍ້
ໃຫ້ ທ່ານໄດ້ປາບປື້ມ
ເມື່ ອທ່ານລ້ ຽງໃຫຍ່ ແລ້ ວ
ຢ່ າເຮັ ດໂຕເລວຊາມ
ໃຫ້ ຂອງກິ ນແລະຂອງໃຊ້
ເຈົ ້ າຊີ ຈົ ່ ມດ່ າປ້ ອຍ
ກາມ ຕອບແທນຄຸ ນນັ ້ ນ
ທ່ ານຊີ ໄດ້ ຮັ ບຮູ ້
ຖ້ າທ່ ານຕາຍໄປແລ້ ວ
ໃຫ້ ເຮົ າທໍ າດີ ແຕ່ ບັ ດນີ ້

ຈົ ່ ງບໍ ່ ອາຍພວກຊາວບ້ ານ
ເຮົ າສົ ມຄວນໄດ້ ຄິ ດອ່ ານ
ສົ ມຄຸ ນເຖົ ້ າໄດ້ ລ້ ຽງມາ
ໃຫ້ ລ້ ຽງຕອບແທນຄຸ ນ
ເພິ ່ ນປະນາມລ້ ຽງເຮົ າລ້ າ
ອຸ ປະຖໍ າຫ ມິ ດທຸ ກທ່ າ
ຫ ລີ ຈ ້ າຢ ່ າມ ະທໍ າ
ຄວນ ເຮັ ດຕອບເພິ ່ ນຍັ ງຢ ູ ່
ຄ ວ າ ມ ດີ ນັ ້ ນ ລ ູ ກ ໄ ດ ້ ທ ໍ າ
ຈົ ່ ງ ເ ຮັ ດ ດ ີ ຄ ຸ ນ ຄ ່ າ ຕ ໍ ່ າ
ບຸ ນ ຄຸ ນ ນັ ້ ນ ຊ ິ ມ າ ກ ຫ ລ າ ຍ ແ ທ ້ ແ ລ ້ ອ

(ຄັ ດ ຈ າ ກ ຫ ນ ້ າ 216-220, ໃ ນ ປ ຶ ້ ມ ໄ ຫ ວ ້ ພ ຣ ະ ສ ູ ດ ມ ິ ນ ຕ ໌ ເ ປ ັ ນ ອ າ ຈ ິ ນ ອ ະ ທ ິ ຖ ານ ຈ ິ ດ ປ ະ ຈ ໍ າ ອ ະ ໂ ຫ ສ ິ ກ ັ ມ ກ ່ ອ ນ ແ ຜ ່ ເ ມ ດ ຕ າ ນ ໍ າ ພ າ ຈ ິ ດ ສ ູ ່ ຄ ວ າ ມ ດ ີ ງ າ ມ ຈ ັ ດ ພ ິ ມ ເ ພ ື ່ ອ ສ ິ ່ ງ ບ ຸ ນ ກ ຸ ສ ິ ນ ເ ຖ ິ ງ ດ ວ ງ ວ ິ ນ ຍ ານ ຂ ອ ງ ຍ ່ າ ແ ມ ່ ເ ຖ ົ ້ າ ໃ ຫ ຍ ່ ໄ ພ ບ ູ ນ ພ ິ ນ ເ ສ ນ າ, ໂ ດ ຍ ພ ຣ ະ ອ າ ຈ ານ ຍ ์ ທ ອ ງ ໃ ສ ພ ັ ນ ທ ະ ວ ົ ງ ส ์ ເ ຈ ົ ້ າ ອ ະ ທ ິ ກ ານ ວ ັ ດ ส ิ ธ ิ ว ั ທ ນ າ ຣ າ ມ ທ ນ ອ ງ ດ ้ ວ ງ)

ກອງປະຊຸມ ຄັ້ງທີ່ ສາມສິບສີ່
ທີ່ກຸງວຽນ, ປະເທດໂອຕຼິດ

ວັນພຸດ, 3 ເມສາ 1963 ເວລາ ບ່າຍ 3ມ10

ປະທານ: ທ່ານ ບາກແມສ (ລິເບເຣຍ)

ໄວ້ອາໄລ ເຖິງທ່ານ ກີນິມ ພິນເສນາ,
ລັດຖະມົນຕີ ວ່າການກະຊວງການຕ່າງປະເທດລາວ

ຕາມການສະເໜີຂອງທ່ານປະທານ, ຄະນະກຳມະການໄດ້ຢືນຂຶ້ນ ກົ້ມຫົວໄວ້ອາໄລໜຶ່ງນາທີ ເຖິງດວງວິນຍານຂອງທ່ານກີນິມ ພິນເສນາ, ລັດຖະມົນຕີວ່າການກະຊວງການຕ່າງປະເທດລາວ.

(ຄັດຈາກປຶ້ມບັນທຶກກອງປະຊຸມ ກ່ຽວກັບ ສາຍພົວພັນດ້ານການກ້ຽສູນ - ເຫຼັ້ມ I)

ອວຍພອນ ໃຫ້ແກ່ອ້າຍເອື້ອຍນ້ອງທັງຫຼາຍ

ໃນຄອບຄົວ ພົນເສນາ

ຈົ່ງປະສົບແຕ່ ທຸກສິ່ງທີ່ຈົບງາມ.

ຣ່າໂນຍ ວັນທີ 19/8/2000

ຈາກລຸງ

(ລາຍເຊັນ)

ພົນເອກ ຫວໍ ຫງວຽນ ຢາບ


TOAN THANG
Chúc cả anh chị em
gia đình Phong Lê
mọi sự tốt đẹp.
Hà Nội, 1918/2000
Bác
Đại tướng Võ Nguyên Giáp.

ພະລາດຊະອານາຈັກລາວ
ກະຊວງ
ການຕ່າງປະເທດ

ເລກທີ 698/ຕປທ/ພທ
ວຽງຈັນ, ວັນທີ 25 ມິຖຸນາ 1962

ພະນະທ່ານ,

ໃນໂທລະເລກຂອງພະນະທ່ານ ຄັ້ງວັນທີ 23 ມິຖຸນາ 1962, ໃນນາມລັດຖະບານແຫ່ງສາທາລະນະລັດປະຊາຊົນຈີນ, ພະນະທ່ານໄດ້ສະແດງຄວາມຊົມເຊີຍ ແລະ ອວຍພອນຕໍ່ລັດຖະບານປອງດອງແຫ່ງຊາດຊຸດໃໝ່, ພ້ອມກັນນັ້ນ ກໍໄດ້ແຈ້ງໃຫ້ພວກຂ້າພະເຈົ້າຮູ້ວ່າ ປະເທດຂອງພວກທ່ານ ໄດ້ຮັບຮູ້ລັດຖະບານປອງດອງແຫ່ງຊາດໃໝ່ຂອງພວກຂ້າພະເຈົ້າ, ທັງໄດ້ສະເໜີສ້າງຕັ້ງສາຍພົວພັນການທູດ ລະຫ່ວາງສອງປະເທດ ເພື່ອຂະຫຍາຍການຮ່ວມມື ແລະ ມິດຕະພາບລະຫ່ວາງປະຊາຊົນຂອງສອງປະເທດພວກເຮົາ.

ລັດຖະບານປອງດອງແຫ່ງຊາດ ຮູ້ຂ່າວວ່າພະນະທ່ານ ໄດ້ສົ່ງໂທລະເລກມາ ກໍຮູ້ສຶກພໍອົກ ພໍໃຈທີ່ສຸດ. ລັດຖະບານປອງດອງແຫ່ງຊາດ ຂໍສະແດງຄວາມຂອບໃຈຢ່າງສຸດຊຶ້ງຕໍ່ລັດຖະບານ ສາທາລະນະລັດປະຊາຊົນຈີນ ແລະ ຂໍສະແດງຄວາມເຫັນດີທັນທີຕໍ່ການສະເໜີໃຫ້ມີການແລກປ່ຽນ ລະດັບເອກອັກຄະລັດຖະທູດ ລະຫ່ວາງ ສອງປະເທດ, ເພື່ອແນໃສ່ເພີ່ມທະວີຕື່ມອີກບາດກ້າວໜຶ່ງ ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນແໜ້ນແຟ້ນ ລະຫ່ວາງປະຊາຊົນຈີນ ແລະ ປະຊາຊົນ ລາວ ທີ່ມີຢູ່ແລ້ວ.

ໃນວາລະທີ່ເບີກບານມ່ວນຊື່ນນີ້, ຂ້າພະເຈົ້າຂໍສະແດງຄວາມນັບຖືອັນສູງສົ່ງ ແລະ ຄວາມຢ້ຽມຖາມຂ່າວທີ່ສະໜິດສະໜົມທີ່ສຸດຂອງຂ້າພະເຈົ້າ ມາຍັງພະນະທ່ານ.

ພະນະທ່ານ ເຊັ້ນ ຢີ
ລັດຖະມົນຕີ ກະຊວງການຕ່າງປະເທດ
ສາທາລະນະລັດ ປະຊາຊົນ ຈີນ
ທີ່ ປັກກິ່ງ

ເຊັ້ນ ແລະ ປະທັບຕາ
ກິນິມ ພົນເສນາ
ລັດຖະມົນຕີ ວ່າການກະຊວງ
ການຕ່າງປະເທດ

ROYAUME DU LAOS

MINISTÈRE
DES
AFFAIRES ÉTRANGÈRES

N° 698 /AE/PROT.-

Vientiane, le 25 Juin 1962

EXCELLENCE,

Par message daté du 23 Juin 1962, Votre Excellence a bien voulu, au nom du Gouvernement de la République de la Chine Populaire, adresser ses félicitations chaleureuses au nouveau Gouvernement d'Union Nationale, en même temps qu'Elle a bien voulu nous annoncer la reconnaissance de ce Gouvernement par votre pays et proposer l'échange de relations diplomatiques en vue de développer la coopération et l'amitié entre nos deux peuples.

C'est avec une grande satisfaction que le Gouvernement d'Union Nationale prend connaissance du message de Votre Excellence. Il vous exprime en retour, ses remerciements les plus vifs et son acquiescement le plus empressé concernant l'échange des Ambassadeurs avec le Gouvernement de la République de la Chine Populaire afin de renforcer davantage les liens d'amitié et d'étroite collaboration qui existent déjà entre le Peuple Chinois et le Peuple Lao.

Je saisis cette occasion heureuse pour renouveler à Votre Excellence, les assurances de ma très haute considération et mes sentiments personnels les plus cordiaux.-

Quinim PHOLSENA,
Ministre des Affaires
Etrangères

Son Excellence TCHEN-YI,
Ministre des Affaires Etrangères
de la REPUBLIQUE POPULAIRE de CHINE

à P E K I N

ພະລາດຊະອານາຈັກລາວ
ກະຊວງ
ການຕ່າງປະເທດ

ວຽງຈັນ, ວັນທີ 10ຕຸລາ 1962

ພະນະທ່ານ ເຊັນຢີ
ລັດຖະມົນຕີວ່າການກະຊວງການຕ່າງປະເທດ
ຂອງສາທາລະນະລັດ ປະຊາຊົນຈີນ
ທີ່ປັກກິ່ງ

ພະນະທ່ານ

ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈຕໍ່ຈົດໝາຍຂອງພະນະທ່ານ ລົງວັນທີ 13 ກັນຍາ 1962.

ເຊັ່ນດຽວກັນກັບພະນະທ່ານ, ຂ້າພະເຈົ້າເຊື່ອໝັ້ນວ່າ ການທີ່ປະເທດ ລາວ ແລະ ສາທາລະນະລັດ ປະຊາຊົນຈີນ ແລກປ່ຽນເອກອັກຄະລັດຖະທູດ ນຳກັນ ເປັນສັນຍາລັກແຫ່ງສາຍພົວພັນທີ່ມີການຂະຫຍາຍຕົວໃໝ່ທີ່ດີ ລະຫ່ວາງ ສອງປະເທດພວກເຮົາ. ການທີ່ພວກທ່ານໄດ້ໃຫ້ການຊ່ວຍເຫຼືອທີ່ ກ້ວາງຂວາງແກ່ ພວກຂ້າພະເຈົ້າໃນໄລຍະທີ່ພວກຂ້າພະເຈົ້າ ໄດ້ຜ່ານການ ທົດສອບທີ່ຫຍຸ້ງຍາກລຳບາກ ຍິ່ງເຮັດໃຫ້ການພົວພັນລະຫ່ວາງ ສອງປະ ເທດໄດ້ຮັບການເພີ່ມທະວີຂຶ້ນ, ບວກກັບສະພາບການດັ່ງກ່າວຂ້າງເທິງນີ້, ການພົວພັນລະຫ່ວາງສອງປະເທດພວກເຮົາຍັງຈະໄດ້ຮັບການຮັດແໜ້ນໃຫ້ ເລິກເຊິ່ງຕື່ມອີກບາດກ້າວໜຶ່ງ, ຊຶ່ງ ເປັນສິ່ງທີ່ໜ້າປື້ມປິຕິຊົມຊື່ນ ສຳລັບຂ້າ ພະເຈົ້າ. ນະທີ່ນີ້ ຂ້າພະເຈົ້າຂໍສະແດງຄວາມຂອບໃຈຕໍ່ພະນະທ່ານ ອີກເທື່ອ ໜຶ່ງ.

ໂດຍສ່ວນຕົວ, ຂ້າພະເຈົ້າຍັງຈື່ບໍ່ລືມ ກ່ຽວກັບການຕ້ອນຮັບອັນອົບ ອຸ່ນ ຊຶ່ງພະນະທ່ານເອງ ແລະ ເພື່ອນຮ່ວມງານໄດ້ມີຕໍ່ຂ້າພະເຈົ້າ ເວລາຜ່ານ

ໄປປັກກິ່ງ ແລະ ການຊ່ວຍເຫຼືອຈາກຄະນະຜູ້ແທນຂອງສາທາລະນະ ລັດ ປະຊາຊົນຈີນ ໃນຕະຫຼອດໄລຍະດຳເນີນກອງປະຊຸມເຊີແນວ.

ແນ່ນອນແລ້ວວ່າ, ສັນຕິພາບໃນປະເທດລາວ ໄດ້ຮັບການຟື້ນຟູ ແລະ ເປັນປະເທດເປັນກາງ ແລະ ເອກະລາດ ຊຶ່ງເພື່ອບັນລຸສິ່ງດັ່ງກ່າວທັ້ງໝົດເຫຼົ່ານີ້, ປະເທດລາວໄດ້ດຳເນີນການຕໍ່ສູ້ທີ່ຍາວນານ. ແຕ່ວ່າພື້ນຖານແຫ່ງຜົນສຳເລັດດັ່ງກ່າວຍັງບອບບາງທີ່ສຸດ. ເພື່ອປັບປຸງພື້ນຖານດັ່ງກ່າວ, ພວກຂ້າພະເຈົ້າຕ້ອງ ຜ່ານຜ່າອຸປະສັກຕ່າງໆ ທີ່ໄດ້ພົບພໍ້ໃນເສັ້ນທາງແຫ່ງການກ້າວເດີນຂອງຕົນ.

ແຕ່ຂ້າພະເຈົ້າກໍມີຄວາມໝັ້ນໃຈໃນອະນາຄົດ. ຂ້າພະເຈົ້າເຊື່ອໝັ້ນວ່າ ມານະຈິດຂອງປະຊາຊົນ ລາວຈະຕ້ອງກຳຈັດອິດທິກຳລັງທີ່ຊົ່ວຮ້າຍ ທີ່ຫວັງຈະປົກຄອງເຂົາເຈົ້າໄດ້ຢ່າງແນ່ນອນ. ຂ້າພະເຈົ້າ ແລະ ກຳລັງຮັກຊາດ ຮູ້ດີວ່າ, ໃນການຕໍ່ສູ້ທີ່ພວກຂ້າພະເຈົ້າພວມດຳເນີນໃນປັດຈຸບັນ, ບັນດາປະເທດທີ່ມີອິດສະຫຼະພາບ ແລະ ຮັກຫອມສັນຕິພາບ ຈະບໍ່ປະຕິເສດ ໃນການໃຫ້ການສະໜັບສະໜູນແກ່ພວກຂ້າພະເຈົ້າ. ການຍຶດຖືດ້ວຍຄວາມມຸ້ງຫວັງດັ່ງກ່າວ, ບົນເສັ້ນທາງກ້າວໄປສູ່ໄຊຊະນະຂອງຕົນ, ພວກຂ້າພະເຈົ້າເຊື່ອແນ່ວ່າຕົນຈະຕ້ອງບັນລຸຜົນຕາມເປົ້າໝາຍທີ່ໄດ້ວາງໄວ້.

ຂ້າພະເຈົ້າຂໍຈົ່ງໃຈ ອວຍພອນພະນະທ່ານ ຈົ່ງປະສົບຜົນສຳເລັດຢ່າງຈົບງາມໃນການປະຕິບັດໜ້າທີ່ອັນໃຫ່ຍຫຼວງຂອງຕົນ, ທັ້ງຂໍສະແດງຄວາມນັບຖືອັນສູງສົ່ງມາຍັງທີ່ນີ້ດ້ວຍ.

ລາຍເຊັນ ແລະ ປະທັບຕາ

ກິນິມ ພົນເສນາ

ລັດຖະມົນຕີວ່າການກະຊວງການຕ່າງປະເທດ

ROYAUME DU LAOS

MINISTÈRE
DES
AFFAIRES ÉTRANGÈRES

VIENTIANE, le IO Octobre I962

Son Excellence Monsieur Tchen Yi
Ministre des Affaires Etrangères de la
République Populaire de Chine
à PEKIN

Excellence,

J'accuse réception de votre aimable lettre du I3 Septembre I962 dont je vous remercie.

Je suis, comme vous, persuadé que l'échange d'Ambassadeurs entre le Laos et la République Populaire de Chine marquera un nouveau développement heureux dans les relations entre les deux Pays. Les liens qui les unissent, déjà renforcés par l'aide généreuse que vous nous avez apportée durant les lourdes épreuves que nous avons traversées, vont, de ce fait, se resserrer encore et je m'en réjouis.

Personnellement, je ne suis pas près d'oublier le chaleureux accueil que vous même et vos collaborateurs m'avez réservé lors de mes passages à Pekin et l'aide qui m'a été apportée par la Délégation de la République Populaire de Chine pendant les travaux de la Conférence de Genève.

Certes, le Laos a retrouvé la Paix et obtenu la Neutralité et l'Indépendance pour lesquelles il a lutté durant de si longues années. Cependant, les bases de ce succès sont encore bien fragiles et, pour les consolider, il nous faudra surmonter les nombreux obstacles qui ne manqueront pas de se dresser sur notre route.

Je suis pourtant confiant en l'avenir. J'ai la ferme conviction que la volonté du peuple lao saura venir à bout des forces mauvaises qui tentent encore de le dominer. Dans ce combat que nous engageons maintenant, je sais, et les forces patriotiques savent, que l'appui des Pays amis de la Paix et de la Liberté ne leur sera jamais refusé. Je sais, et les forces patriotiques savent, que nous pouvons compter sur le ferme soutien et l'amitié de la Chine. C'est forts de cette conviction que nous nous engageons sur le chemin de la consolidation de nos victoires et que nous sommes certains d'atteindre les buts que nous nous sommes assignés.

J'adresse à Votre Excellence mes voeux sincères de plein succès dans son importante mission et je saisis cette occasion pour la prier d'agréer l' assurance de ma très haute considération./.

Quinim PHOLSENA
Ministre des Affaires Etrangères
du Gouvernement Royal du Laos

“ຄວາມຮັກແພງທີ່ສຸດຊຶ້ງທີ່ຂ້າມຜ່ານເຄິ່ງສັດຕະວັດ ບັນທຶກກ່ຽວກັບ ທ່ານ ສີຈິນຜິງ ໄດ້ພົບປະເພື່ອນຄົນລາວ”

ໂດຍນັກຂ່າວ ຊິນຮວາ ອູຫຼີໝິງ ແລະ ລີສິງ

ໃນວັນທີ 16 ເດືອນ 6 (ປີ 2010), ໃນໄລຍະທີ່ ທ່ານ ຮອງປະທານ ປະເທດ ສີຈິນຜິງ (ປັດຈຸບັນດຳລົງຕຳແໜ່ງ ປະທານປະເທດ ສ.ປ ຈີນ) ຢ້ຽມຢາມປະເທດລາວ, ເພິ່ນໄດ້ພົບປະກັບ ທ່ານ ສົມມາດ, ລັດຖະມົນຕີວ່າ ການ ກະຊວງ ໂຍທາທິການ ແລະ ຂົນສົ່ງ, ທ່ານ ນາງ ເຂັມມະນີ, ຮອງລັດ ຖະມົນຕີ ກະຊວງອຸດສະຫະກຳ ແລະ ການຄ້າ ແລະ ເພື່ອນມິດລາວ. ນີ້ຄືຮູບ ພາບທີ່ ທ່ານ ສີຈິນຜິງ ພວມເບິ່ງຮູບຖ່າຍເກົ່າໃນເວລານັ້ນກັບເພື່ອນມິດ ລາວ. ໂດຍນັກຂ່າວ “ຊິນຮວາ” ຫຼືອເວປ່ຶ ເປັນຜູ້ຖ່າຍພາບ.

ຮູບຖ່າຍຂາວດຳບາງແຜ່ນໃບເຈ້ຍຮູບອອກສີເຫຼືອງ ແລະ ເຄື່ອງໝາຍ ຂອງສິ່ງພິມກໍ່ມີຮ່ອງຮອຍ ຈາງລົງ. ຜູ້ຄົນໃນຫ້ອງພົບປະກັນເປີດປຶ້ມຮູບເບິ່ງ ໂດຍລະອຽດແຕ່ລະໜ້າ ພາຍໃຕ້ບັນຍາກາດທີ່ອົບອຸ່ນ ແລະ ໜ້າຊາບຊຶ້ງໃຈ, ຄວາມຮັກແພງທີ່ເລິກເຊິ່ງ ແລະ ສະໜິດແໜ້ນທີ່ຂ້າມຜ່ານສອງປະເທດໃນ ເຄິ່ງສັດ ຕະວັດແຫ່ງວັນເວລາ.

ໃນຕອນແລງຂອງວັນທີ 16 ເດືອນ 6, ໃນໄລຍະເວລາຢ້ຽມຢາມປະ ເທດລາວທີ່ສັ້ນ ແລະ ຮີບດ່ວນ, ທ່ານ ຮອງປະທານປະເທດ ສີຈິນຜິງ ໄດ້ຈັດ ເວລາສະເພາະເພື່ອພົບປະກັບໝູ່ເພື່ອນລາວ. ນັ້ນຄືແຂກທີ່ ພິເສດ, ເພື່ອນ ມິດລາວ 10 ທ່ານ ລ້ວນແຕ່ເປັນລູກຫຼານຜູ້ສືບທອດພາລະກິດຂອງ ທ່ານ ນັກປະຕິວັດ ອາວຸໂສ ກິນິມ ພົນເສນາ. ໃນນັ້ນ 7 ຄົນ ແມ່ນ ອ້າຍເອື້ອຍນ້ອງ ກັນ ທີ່ມີມິດຈິດມິດໃຈທີ່ເລິກ ເຊິ່ງສຸດຂະໜາດຕໍ່ປະເທດຈີນ. ຢູ່ປະເທດຈີນ ມີເພື່ອນສະໜິດຂອງ ພໍ່ ກິນິມ ຂອງເຂົາເຈົ້າ, ໃນຍາມເຂົາ ເຈົ້າພົບຄວາມ

ຫຍຸ້ງຍາກ ມີຄວາມຮັກໄຄ່ທີ່ເຂັ້ມຂຸ້ນ ຄືດັ່ງສາຍພົວພັນດ້ານສາຍເລືອດ, ທັງໄດ້ປະໄວ້ຮ່ອງ ຮອຍແຫ່ງໄວ ໜຸ່ມຂອງເຂົາເຈົ້າໃນການສະແຫວງຫາ ການສຶກສາຄວາມຮູ້, ທັງຍັງສ້າງຄວາມມຸ້ງໝັ້ນຂອງເຂົາເຈົ້າທີ່ມີຕໍ່ ສາຍ ພົວພັນມິດຕະພາບ ລະຫວ່າງ ສອງປະເທດ ຈີນ-ລາວ.

ນັ້ນຄືການພົບປະກັນຄັ້ງໃໝ່ທີ່ພິເສດ. ໃນຊຸມປີ 60 ຂອງ ສັດຕະວັດ ກ່ອນ, ເຂົາເຈົ້າລ້ວນແຕ່ໄດ້ ຮ່ຳຮຽນຢູ່ "ໂຮງຮຽນແປດໜຶ່ງ" ໃນນະຄອນຫຼວງ ປັກກິ່ງ (ໝາຍເຫດ: ວັນທີ 1 ເດືອນ 8 ເປັນວັນສ້າງຕັ້ງ ກອງທັບປົດປ່ອຍ ປະຊາຊົນຈີນ). ໃນການພົບປະກັນຄັ້ງໃໝ່ນີ້ພັດແມ່ນຈາກປັກກິ່ງມາວຽງຈັນ, ຊາວໜຸ່ມທີ່ໜຸ່ມແໜ້ນ ໃນເວລານັ້ນ, ມາເຖິງປັດຈຸບັນນີ້ພັດມີຫຼາຍຄົນມີຜົມ ຂາວແລ້ວ. ທ່ານ ຮອງປະທານປະເທດ ສີຈິນຜິງ ຍັງຄົງບໍ່ຫຼົງລືມ "ເພື່ອນຮ່ວມ ຮຽນ ແລະ ໝູ່ເພື່ອນເກົ່າ". ເມື່ອເພິ່ນຫາກໍ່ນັ່ງລົງ, ເພິ່ນກໍ່ເວົ້າວ່າ: ຜ່ານເຄິ່ງສັດ ຕະວັດແຫ່ງວັນເວລາ ໄດ້ມາພົບພໍ້ກັບເພື່ອນເກົ່າທີ່ສະໜິດ ໃນເຂດຕ່າງ ແດນ ເປັນສິ່ງທີ່ ຂ້າພະເຈົ້າ ໄດ້ຄອງຄອຍມາແຕ່ເທິງນານ, ທັງເປັນສິ່ງທີ່ໜ້າ ປຶ້ມປິຕິຊົມຊື່ນເປັນຢ່າງຍິ່ງ..." ເພິ່ນແນມເບິ່ງ ລູກຊາຍຜູ້ທີ່ສອງ (ໝາຍເຫດ: ເປັນລູກຊາຍຜູ້ທີສອງ ໃນລູກຊາຍ ຫົກ ຄົນຂອງພໍ່ ແລະ ແມ່, ແຕ່ເປັນລູກຜູ້ທີ ຫົກ ຂອງ ພໍ່ ແລະ ແມ່) ຂອງ ທ່ານ ກິນິມ ແລ້ວເວົ້າວ່າ: ຂ້າພະເຈົ້າຈື່ວ່າ ທ່ານ ແຕ່ຍັງນ້ອຍອຸດົມສົມບູນດີ, ຈີນໜຸ່ມັກເອີ້ນທ່ານເປັນ "ທ້າວ ອ້ວນນ້ອຍ". ຖ່ານກາງສຽງຫົວ, ທ່ານ ສົມມະໂນ ນ້ຳຕາຜ່າໜ່ວຍ ແລະ ເວົ້າວ່າ: "ບໍ່ນຶກ ວ່າທ່ານຍັງຈື່ພວກຂ້າພະເຈົ້າ".

ນັ້ນຄືຂອງຂັວນສອງຢ່າງທີ່ພິເສດ. ຜູ້ສືບທອດພາລະກິດຂອງ ທ່ານ ກິນິມ ໄດ້ມອບຮູບຖ່າຍເກົ່າ ສາມໃບໃຫ້ ທ່ານ ຮອງປະທານປະເທດ ສີຈິນຜິງ ແລະ ທ່ານ ຮອງປະທານປະເທດ ສີຈິນຜິງ ໄດ້ມອບປຶ້ມຮູບໃຫ້ພວກເຂົາເຈົ້າ. ຄວາມປາກເວົ້າ ບໍ່ອາດຈະໄລ່ທັນກະແສແຫ່ງຄວາມຊົງຈຳ, ວັນເວລາ ຈະບໍ່ສາ ມາດກີດກັ້ນ ແລະ ຕັດຂາດ ລັກສະນະຕໍ່ເນື່ອງແຫ່ງສາຍພົວພັນມິດ

ຕະພາບໄດ້.

ໃນເວລານາທີນີ້, ຂອງຂ້ວນທີ່ມີລັກສະນະຄ້າຍຄືກັນ ແລະ ເອົາມາ ມອບໃຫ້ກັນ ໂດຍບໍ່ໄດ້ນັດ ໝາຍໄວ້ກ່ອນ ເປັນສິ່ງທີ່ຍິ່ງຮັດແໜ້ນ ຄວາມຮັກ ແພງກັນ.

ຮູບຖ່າຍແຕ່ລະໃບກໍ່ສະແດງເຖິງ ເຫດການປະຫວັດສາດໃນໄລຍະ ຜ່ານມາ, ມີຫຼາຍຄັ້ງສຸງຕິບມື ໄດ້ຕັດຈັ່ງຫວະການໂອ້ລົມກັນ, ນ້ຳຕາກໍ່ຫຼັ່ງ ໄຫຼອອກຈາກເບົ້າຕາຫຼາຍຄັ້ງຍ້ອນ ຫວນຄືນເຖິງຄວາມຮັກຄວາມແພງຖານ ເພື່ອນຮ່ວມຮຸງນນຳກັນ, ທັ່ງຈິດຈຳເຖິງສາຍພົວພັນມິດຕະພາບ ລະຫວ່າງ ສອງປະເທດ ຈີນ-ລາວ, ທັ່ງມີຄວາມມານະບຸກບືນເພື່ອອານາຄົດຂອງ ສອງປະເທດ.

ຮູບຖ່າຍສາມໃບເປັນສິ່ງກັ່ນຕອງຄວາມຜູກພັນໃນປະຫວັດສາດ ໃນທ້າຍຊຸມປີ 50 ຂອງສັດຕະ ວັດຜ່ານມາ, ທ່ານ ກິນິມ ພົນເສນາ ໄດ້ສ້າງຕັ້ງ ພັກສັນຕິພາບເປັນກາງ, ໂດຍທ່ານດຳລົງຕຳແໜ່ງເປັນ ປະທານຂອງພັກ. ນາງ ເຂັມວຸງ, ລູກສາວຜູ້ທີສີ່ຂອງ ທ່ານ ກິນິມ (<u>ໝາຍເຫດ:</u> ໝາຍເຖິງລູກ ສາວຜູ້ທີສີ່ ໃນລູກສາວຫ້າຄົນ ຂອງ ພໍ່ ແລະ ແມ່, ແຕ່ເປັນລູກຜູ້ທີຫ້າ ຂອງ ພໍ່ ແລະ ແມ່) ໄດ້ເອົາຮູບຖ່າຍສາມໃບ ອອກມາແລ້ວເວົ້າວ່າ: "ນີ້ແມ່ນສົມບັດ ທີ່ລ້ຳຄ່າຂອງຄອບຄົວພວກຂ້າພະເຈົ້າ"

ທ່ານ ຮອງປະທານປະເທດ ສີຈິນຜິງຢືນຂຶ້ນຮັບເອົາຮູບຖ່າຍດັ່ງກ່າວ ດ້ວຍຄວາມເຄົາລົບ, ນັບຖື.

ໃນຮູບຖ່າຍໃບໜຶ່ງ, ທ່ານ ປະທານ ເໝົາເຈີຕຸງ ນັ່ງລົມກັນກັບ ທ່ານ ກິນິມ ພົນເສນາ, ທ່ານ ປະທານເໝົາ ທ່າທີສະຫງ່າ ແລະ ເໜັ້ງຕີ້ງສົບເລັກ ນ້ອຍ, ທ່ານ ກິນິມ ຍົ້ມຫົວ ງ່ຽງຫູຟັງ ນ້ຳສຽງແຫ່ງປະຫວັດສາດ.

ໃນອີກຮູບຖ່າຍໃບໜຶ່ງ, ທ່ານ ນາຍົກ ໂຈວເອິນລາຍ ແລະ ທ່ານ ກິນິມ ຍ່າງຮຽງກັນອອກຈາກ ຫໍ ສະພາ ປະຊາຊົນ. ທ່ານ ນາຍົກ ໂຈວເອິນລາຍ

ອ່ອຍໜ້າໄປເລັກນ້ອຍເພື່ອສືບຕໍ່ໂອ້ລົມກັບ ທ່ານ ກິນິມ.

ທ່ານ ຮອງປະທານປະເທດ ສີຈິນຜິງ ຍັງຄົງຈົດຈຳດີກ່ຽວກັບໄລຍະ ປະຫວັດສາດຂອງຊຸມປີ 50-60. ເພິ່ນເວົ້າວ່າ:"ສາຍພົວພັນມິດຕະພາບ ລະຫວ່າງສອງປະເທດ ຈີນ-ລາວ ແມ່ນ ບັນດາ ທ່ານ ຜູ້ນຳ ຮຸ່ນອະວຸໂສ ເປັນ ຜູ້ກໍ່ຕັ້ງ ແລະ ບຳລຸງສ້າງຮ່ວມກັນ. ໃນເວລາທີ່ເພິ່ນຍັງມີຊີວິດ, ພໍ່ ກິນິມ ຂອງ ພວກທ່ານ ໄດ້ຍົກສູງຄັນທຸງຮັກຊາດ, ສັນຕິພາບ, ເປັນກາງ, ໂດຍທ່ານມີ ຄວາມເຫັນອົກເຫັນໃຈ ຢ່າງສຸດຊຶ້ງ ແລະ ໄດ້ໃຫ້ການສະໜັບສະໜູນ ກຳລັງປະຕິວັດຄື ແນວລາວຮັກຊາດ, ທັງເດັດດ່ຽວຕໍ່ສູ້ຕ້ານການແຊກແຊງ, ຮຸກຮານ ຂອງ ພວກຈັກກະພັດ ແລະ ໄດ້ອຸດທິດຢ່າງໃຫຍ່ຫຼວງເພື່ອພາລະ ກິດ ສ້າງປະເທດຊາດໃຫ້ມີ ສັນຕິພາບ ແລະ ເອກະລາດ. ໃນໄລຍະກະກຽມ ສ້າງຕັ້ງ ລັດຖະບານປະສົມຂອງລາວຄັ້ງທີ 1 ແລະ ຄັ້ງທີ 2 ກໍ່ຄືໃນໄລຍະດຳ ເນີນກອງປະຊຸມເຊີແນວ (<u>ໝາຍເຫດ:</u> ກ່ຽວກັບລາວ) ຄັ້ງປີ 1961,ທ່ານ ກິນິມ ໄດ້ຮູ້ຈັກກັບ ທ່ານ ນາຍົກ ໂຈວເອິນລາຍ ແລະ ບັນດາທ່ານຜູ້ນຳອື່ນໆຂອງ ຈີນ ແລະ ພວກເພິ່ນ ກໍ່ໄດ້ສ້າງສາຍພົວພັນມິດຕະພາບທີ່ເລິກເຊິ່ງນຳກັນ. ພວກທ່ານທັງຫຼາຍເປັນ ບຸກຄົນທີ່ສຳຄັນໃນການເສີມສ້າງ ສາຍພົວພັນມິດ ຕະພາບຈີນ-ລາວ".

ຈົ່ງພ້ອມກັນຟັງບາດກ້າວເດີນຂອງປະຫວັດສາດ...

ໃນວັນເວລາທີ່ຜ່ານພົ້ນໄປ, ບັນດາທ່ານຜູ້ນຳຮຸ້ນອະວຸໂສຂອງສອງ ປະເທດໄດ້ໃຫ້ການຊຸກຍູ້, ສະໜັບສະໜູນເຊິ່ງກັນ ແລະ ກັນ, ທັງເປັນບ້ານ ໃກ້ເຮືອນຄຽງທີ່ດີ, ເປັນເພື່ອນມິດທີ່ດີ, ເປັນສະຫາຍທີ່ດີ ແລະ ເປັນຄູ່ຮ່ວມມື ທີ່ດີຕໍ່ກັນ. ສຳລັບຮຸ່ນຄົນຜູ້ສືບທອດຂອງ ທ່ານ ກິນິມ, ປີ 1963 ເປັນປີທີ່ ມີຄວາມຫຍຸ້ງຍາກລຳບາກ, ແຕ່ກໍ່ທັງເປັນປີທີ່ເຕັມໄປດ້ວຍຄວາມອົບອຸ່ນ. ທ່ານ ກິນິມ ຖືກຄາດຕະກຳ, ບັນດາທ່ານຜູ້ນຳຂອງ ຈີນ ໄດ້ຍື່ນມືໃຫ້ການ ຊ່ວຍເຫຼືອຢ່າງທັນການ, ທັງໄດ້ຈັດແຈງໃຫ້ພັນລະຍາ ທ່ານ ກິນິມ ພ້ອມ ນ້ອຍ

ລູກເຕົ້າມາ ປັກກິ່ງ ຮ່ຳຮຽນທີ່ "ໂຮງຮຽນແປດໜຶ່ງ", "ໂຮງຮຽນປະຖົມຊົ່ວຈີ່ອາ" ແລະ ໂຮງຮຽນແຫ່ງອື່ນໆອີກ,ຈົນເຖິງປີ 1970 ຈຶ່ງກັບຄືນປະເທດ.

ນາງ ເຂັມອຽງ ໄດ້ເວົ້າວ່າ: "ແມ່ຂອງພວກຂ້າພະເຈົ້າ ມີອາຍຸ 89 ປີ ແລ້ວ. ເມື່ອຮູ້ວ່າ ມື້ນີ້ ທ່ານຈະມາພົບປະກັບພວກຂ້າພະເຈົ້າ, ແມ່ມີຄວາມ ຕື້ນຕັນໃຈຫຼາຍ" ທ່ານຮອງປະທານປະເທດ ສີຈິນຜິງ ເວົ້າວ່າ: "ຂໍໃຫ້ພວກ ທ່ານຈົ່ງຕາງໜ້າຂ້າພະເຈົ້າ ສະແດງຄວາມຢ້ຽມຖາມຂ່າວທີ່ສຸດຊຶ້ງ ຕໍ່ຍາແມ່, ຂໍອວຍ ພອນໃຫ້ເພີ່ນມີສຸຂະພາບແຂງແຮງ ແລະ ມີອາຍຸໝັ້ນ ຍືນຍາວ".

ທ່ານ ສົມມາດ ທີ່ເປັນລູກຊາຍຜູ້ທີສາມຂອງ ທ່ານ ກົ໋ມ (ໝາຍເຫດ: ໝາຍເຖິງລູກຊາຍຜູ້ທີ ສາມ ໃນລູກຊາຍ ຫົກ ຄົນ ຂອງ ພໍ່ ແລະ ແມ່, ແຕ່ເປັນ ລູກຜູ້ທີ ເຈັດ ຂອງ ພໍ່ ແລະ ແມ່) ໄດ້ຕໍ່ຄວາມວ່າ: "ຂ້າພະເຈົ້າເຄີຍໄດ້ຊື້ ປຶ້ມຫົວໜຶ່ງຢູ່ຈີນ, ໃນນັ້ນ ໄດ້ເວົ້າເຖິງສາຍພົວພັນມິດຕະພາບ ແລະ ການໄປ ມາຫາສູ ລະຫວ່າງ ຮຸ່ນຄົນຜູ້ອະວຸໂສ. ເມື່ອອ່ານປຶ້ມຫົວນັ້ນແລ້ວ, ຂ້າພະເຈົ້າ ຮູ້ສຶກ ຊາບຊຶ້ງໃຈຫຼາຍ". ທ່ານ ຮອງປະທານປະເທດ ສີຈິນຜິງ ໄດ້ເວົ້າດ້ວຍ ນ້ຳສຽງທີ່ຕື້ນຕັນໃຈວ່າ: "ການຂະຫຍາຍຕົວດ້ານສາຍພົວພັນ ຈີນ-ລາວ ສາມາດບັນລຸໝາກຜົນດີໃນປັດຈຸບັນນີ້ແມ່ນ ບໍ່ສາມາດປາສະຈາກຄວາມ ເອົາໃສ່ເພີ່ມພູນຄູນສ້າງຂອງ ບັນດາ ທ່ານ ຜູ້ນຳສອງປະເທດ ຫຼາຍຮຸ່ນຄົນ".

ປຶ້ມຮູບຖ່າຍຫົວໜຶ່ງທີ່ເປັນພະຍານແຫ່ງສາຍພົວພັນມິດຕະພາບທີ່ນິ ລັນດອນ.

"ຂ້າພະເຈົ້າກໍ່ມີຮູບຖ່າຍຈະມອບໃຫ້ພວກທ່ານ ເຊິ່ງແມ່ນຮູບພາບ ກ່ຽວກັບສະຖານທີ່ບ່ອນທີ່ ພວກເຮົາເຄີຍຮ່ຳຮຽນນຳກັນ". ທ່ານ ຮອງປະທານ ປະເທດ ສີຈິນຜິງ ໄດ້ເອົາປຶ້ມຮູບຖ່າຍຫົວໜຶ່ງອອກມາ ຊຶ່ງ ເວລາຢູ່ປັກກິ່ງ, ເພິ່ນໄດ້ສັ່ງສະເພາະໃຫ້ພະນັກງານທີ່ກ່ຽວຂ້ອງກະກຽມ ໄວ້ໃຫ້ເພິ່ນ.

ທ່ານ ຮອງປະທານປະເທດ ສີຈິນຜິງ ເວົ້າວ່າ: "ໃນສະໄໝນັ້ນ, ພວກທ່ານ ເປັນທີ່ຈ້ອງມອງຢ່າງປະຈັກຕາ, ຂ້າພະເຈົ້າຍັງຈື່ໄດ້ວ່າ ນັກຮຽນຜູ້ຊາຍຂອງພວກທ່ານ ນຸ່ງຊຸດກຳມະຍິ ສີຕັບໝູ, ສ່ວນນັກຮຽນຜູ້ຍິງນຸ່ງເຄື່ອງນຸ່ງປະຈຳຊາດ, ມີຫຼາຍຄົນໃດຮູ້ຈັກພວກທ່ານ".

ທ່ານ ສີຈິນຜິງ ເວົ້າຕໍ່ໄປອີກວ່າ: ເດີມ "ໂຮງຮຽນແປດໜຶ່ງ" ແມ່ນໂຮງຮຽນ "ຢ້ງເຈີນ" (ໝາຍເຫດ: ໝາຍເຖິງ ທ່ານ ຈອມພົນ ເນຍຢ້ງເຈີນ, ໜຶ່ງໃນ 10 ຈອມພົນຂອງຈີນ) ໃນເຂດທະຫານ "ຈິນສາຈີ້", ຕໍ່ມາຈຶ່ງຍ້າຍມາປັກກິ່ງ. ຂ້າພະເຈົ້າຈື່ວ່າ ໃນເວລານັ້ນ ໝູ່ຄູ່ນັກຮຽນນຳກັນມັກຊ່ວຍເຫຼືອກັນ ໂດຍຕັ້ງເປັນຈຸ, ເປັນຄູ່, "ໜຶ່ງຄົນຊ່ວຍໜຶ່ງຄົນ", "ມີຜົນງານແດງເປັນຄູ່".... ເພື່ອນຮ່ວມໂຮງຮຽນດຽວກັນກັບ ທ່ານ ສີຈິນຜິງ ຫຸ້ມຫໍ່ເພີ່ນ ເພື່ອເບິ່ງຮູບຖ່າຍ ແລະ ມີຄວາມຕື້ນຕັນໃຈຫຼາຍທີ່ໄດ້ຟັງເພີ່ນຫວນຄືນເລື່ອງ ເກົ່າຄວາມຫຼັງໃນອະດີດ.

ທ່ານ ຮອງປະທານປະເທດ ສີຈິນຜິງ ໄດ້ຊີ້ຕຶກສອງຫຼັງທີ່ມີຮ່ອງຮອຍເກົ່າແກ່ໃນຮູບພາບ ແລ້ວເວົ້າວ່າ: "ນີ້ຄື ຫໍປະຊຸມເກົ່າ ແລະ ຕຶກພັກເຊົາຂອງນັກຮຽນ" ບໍ່ຈັກໃຜເວົ້າດອດອອກມາວ່າ "ຕຶກ ກ, ຕຶກ ຂ", ທຸກຄົນຟັງແລ້ວກໍ່ຫົວຂຶ້ນຢ່າງຊື່ນຊົມ.

ທ່ານ ຮອງປະທານປະເທດ ສີຈິນຜິງ ຍັງເວົ້າຕໍ່ອີກວ່າ:"ໃນເວລານັ້ນ ບັນດາທ່ານ ຜູ້ນຳ ຂັ້ນສູນ ກາງ ມີຄວາມເອົາໃຈໃສ່ຕໍ່ວຽກງານການສຶກສາທີ່ສຸດ. ຂ້າພະເຈົ້າຍັງຈື່ດີວ່າ ພວກເພີ່ນເຄີຍເວົ້າວ່າ: "ພວກເຮົາຍອມກິນແຕ່ນ້ຳເກືອນ້ອຍໜຶ່ງ ກໍ່ຕ້ອງໃຫ້ລູກຫຼານນັກຮຽນຂອງພວກເຮົາໄດ້ກິນຜັກ. ເງື່ອນໄຂຊີວິດການ ເປັນຢູ່ຂອງພວກເຮົາຈະຍຸ້ງຍາກປານໃດກໍ່ຕາມ ກໍ່ບໍ່ຕ້ອງໃຫ້ພວກນັກຮຽນລາວຢູ່ທຸກກິນທຸກ"...

ຫວນຄືນ ຊີວິດໃນອະດີດກ່ຽວກັບການຜູກພັນຮັກແພງໃນໄວໜຸ່ມ, ທ່ານ ສົມມາດ ໄດ້ເວົ້ານຳ ທ່ານ ຮອງປະທານປະເທດ ສີຈິນຜິງ ດ້ວຍຄວາມ

ຈິງໃຈວ່າ: “ປັດຈຸບັນນີ້ ອ້າຍເອື້ອຍນ້ອງ ພວກຂ້າພະເຈົ້າສາມາດໄດ້ບັນ ລຸຜົນງານຄືທຸກມື້ນີ້ ແມ່ນບໍ່ສາມາດປາສະຈາກການສຶກສາ ແລະ ອົບຮົມ ກໍ່ສ້າງ ທີ່ໄດ້ຮັບໃນປະເທດຈີນ. ການດຳລົງຊີວິດໃນເວລານັ້ນ ເປັນສິ່ງທີ່ບໍ່ ສາມາດຫຼົງລືມໄດ້ຈັກເທື່ອ. ພວກຂ້າພະເຈົ້າ ຈະຕັ້ງໜ້າປະກອບສ່ວນເຂົ້າ ໃນການເສີມຂະຫຍາຍ ສາຍພົວພັນມິດຕະພາບ ລາວ-ຈີນ ຢ່າງສຸດອົກສຸດ ໃຈ”.

ທ່ານ ສົມປອງ ລູກຊາຍຜູ້ທີ ຫ້າ ຂອງ ທ່ານ ກິນິມ (ໝາຍເຫດ: ໝາຍ ເຖິງ ລູກຊາຍຜູ້ທີ ຫ້າ ໃນລູກຊາຍ ຫົກ ຄົນ ຂອງ ພໍ່ ແລະ ແມ່, ແຕ່ເປັນລູກຜູ້ທີ ສິບ ຂອງ ພໍ່ ແລະ ແມ່) ໄດ້ຈົກເອົາໃບປະກາດການຮຽນຈົບຊັ້ນ ສີແດງເຂັ້ມ ອອກມາ ແລ້ວເວົ້າວ່າ: “ໂດຍໄດ້ຮັບປະໂຫຍດຈາກການພົວພັນແລກປ່ຽນ ລະຫວ່າງ ພັກ ຂອງ ສອງປະເທດ ລາວ-ຈີນ, ໃນຕໍ່ມາ ຂ້າພະເຈົ້າໄດ້ໄປຮຽນ ຢູ່ທີ່ ປະເທດ ຈີນ ຕື່ມ ແລະ ໄດ້ເຂົ້າຮຽນຢູ່ທີ່ໂຮງຮຽນພັກຂັ້ນສູນກາງ”.

ສອງຮຸ່ນຄົນ, ການໄປສຶກສາຮ່ຳຮຽນ ສອງຄັ້ງດ້ວຍຄວາມມານະອົດ ທົນ, ເຫັນໄດ້ວ່າ ເຂົາເຈົ້າມີຄວາມຮັກທີ່ຝັງໃຈຕໍ່ປະເທດຈີນ, ທັງມີຄວາມມຸ້ງ ໝັ້ນທີ່ຍາວນານ ຕໍ່ການສືບທອດ ສາຍພົວພັນມິດຕະພາບລະຫວ່າງ ສອງປະເທດ ຈີນ-ລາວ.

ການທີ່ກົກໄມ້ມີຮາກທີ່ແໜ້ນແກ່ນ ເປັນສິ່ງທີ່ບົ່ງບອກເຖິງກົກໄມ້ນັ້ນ ຈະມີກິ່ງ ແລະ ໃບທີ່ດົກໜາ. ໃນປັດຈຸບັນນີ້, ລູກເຕົ້າຂອງທ່ານ ກິນິມ ໄດ້ກາຍເປັນ ພະນັກງານຫຼັກແຫຼ່ງຂອງປະເທດ.ທ່ານ ສີຈິນຜິງ ເວົ້າວ່າ: “ພວກທ່ານ ເຄີຍ ແລະ ພວມດຳເນີນໜ້າທີ່ຕຳແໜ່ງການນຳພາທີ່ສຳຄັນ ໃນບັນດາອົງການຂອງປະເທດລາວ, ທັງເປັນ ຜູ້ເສີມສ້າງສາຍພົວພັນ ຈີນ-ລາວ ທີ່ດີງາມໃນປັດຈຸບັນນີ້”. ທ່ານ ຮອງປະທານປະເທດ ສີຈິນຜິງ ເວົ້າວ່າ: “ຂ້າພະເຈົ້າຫວັງວ່າ ພວກທ່ານ ຈະສືບຕໍ່ເສີມຂະຫຍາຍບົດບາດທີ່ບໍ່ສາມາດ ປຽບ ທຽບໄດ້ ໃນພາລະກິດຜູກມິດ ຈີນ-ລາວ”.

ໃນຜູ້ຈັດມາຢ້ຽມຢາມຄຳນັບ ທ່ານ ຮອງປະທານປະເທດ ສີຈິນຜິງ ຍັງມີຊາວໜຸ່ມສອງຄົນຄື ຮຸ່ນຫຼານຂອງ ທ່ານ ກີນິມ ນາງ ອຳມະລາ ແລະ ທ້າວ ຂວັນຄຳ : ທ່ານ ຮອງປະທານປະເທດ ສີຈິນຜິງ ເວົ້າດ້ວຍນ້ຳສຽງ ທີ່ສະໜິດສະໜົມວ່າ: “ຊາວໜຸ່ມຂອງສອງປະເທດພວກເຮົາຕ້ອງບຸກບືນ ຮ່ວມກັນ ເພື່ອແບກຫາບໜ້າທີ່ໃນການເສີມຂະຫຍາຍສາຍພົວພັນ ມິດຕະ ພາບ ຈີນ-ລາວ ທີ່ເປັນມູນເຊື້ອ, ທັງເສີມຂະຫຍາຍມູນເຊື້ອປະຕິວັດທີ່ດີງາມ ເພື່ອເຮັດໃຫ້ສອງປະເທດ ຈີນ-ລາວ ພວກເຮົາ ໄດ້ເປັນບ້ານໄກ້ເຮືອນຄຽງ ທີ່ດີ, ເປັນເພື່ອນມິດທີ່ດີ, ເປັນຄູ່ຮ່ວມມືທີ່ດີຕະຫຼອດການ!”.

ສາຍພົວພັນມິດຕະພາບລະຫວ່າງ ສອງປະເທດ ຈີນ-ລາວ ທີ່ເປັນ ປະເທດສັງຄົມນິຍົມ ປຽບສະເໝືອນເຫຼົ້າທີ່ເລີດລ້ຳ, ເຊິ່ງໄດ້ຂ້າມຜ່ານເຖິງ ສັດຕະວັດ, ທັງໄດ້ຮັບການເພີ່ມພູນຄູນສ້າງຕາມການເວລາ ແລະ ຈະສືບ ຕໍ່ຖືກຮັດແໜ້ນຂຶ້ນຕື່ມ ໃນແຕ່ລະຮຸ່ນຄົນ, ຈະນັບມື້ນັບຫອມຫວນຊວນ ດື່ມ...

(ຈາກ ນັກຂ່າວ ຊູຫຼີໝິງ ແລະ ລີສິງ)

ບັນນາທິການ: ຫຼີວສີ

(ຈຸບິນ AN 2 ທີ່ນຳພາໂດຍຫົວໜ້າຈຸບິນ ຟານຍູເກີນ ພາຍຫຼັງຖ້ຽວບິນຮັບໃຊ້ຄະນະຕ່າງປະເທດ)

ຖ້ຽວບິນ ທີ່ບໍ່ຄ່ອຍມີໃຜຮູ້ ແລະ ແຂກພິເສດ (VIP)

ຂຽນໂດຍ ເຈີນກີ

ໃນຕອນສວາຍຂອງວັນທີ 17 ເດືອນ 12 ປີ 1960, ທ້າວ ໂຮ່ອາ ທີ່ເປັນນັກລົບກົດລັບທາງອາກາດ ພວມເຮັດວຽກຢູ່ກອງບິນສຳລັບເຮືອບິນພິເສດ ໄດ້ຮັບຄຳສັ່ງໃຫ້ມາປະຕິບັດໜ້າທີ່ ທີ່ກອງບິນ AN 2. ຂັ້ນເທິງໄດ້ບອກແຈ້ງວ່າ ແມ່ນໄປຮັບແຂກພິເສດທີ່ສຳຄັນ (VIP) ຈາກເດີ່ນບິນວ້ຽງໆ ຂອງປະເທດລາວ ມາຮ່າໂນຍ.

ຜູ້ກ່ຽວ ຮູ້ວ່າກ່ອນໜ້ານີ້ 2 ມື້ ຄືວັນທີ 15/12/60, ກົມກອງທັບອາກາດໄດ້ຮັບຄຳສັ່ງໃຫ້ກຽມຍົນເອລີກົບແຕ Mi 4 ໜຶ່ງຄັນ ເພື່ອປະຕິບັດໜ້າທີ່ພິເສດ. ທ່ານຜູ້ບັນຊາການສູງສຸດ ຄື ພົນເອກຫວໍທ້ຽງຢາບ ໄດ້ຕາງໜ້າໃຫ້ຄະນະພັກການທະຫານຂັ້ນສູນກາງ ແລະ ກະຊວງປ້ອງກັນປະເທດ ພົບປະໂດຍກົງກັບ ສ/ທ ຮອງເທຫຽນ ຫົວໜ້າການເມືອງຂອງກົມກອງທັບອາກາດ ແລະ ສ/ທ ຫົວໜ້າກອງບິນຟາມດິ່ງເກືອງ ເພື່ອໃຫ້ໄປຮັບພະນັກງານທີ່ສຳຄັນ ຢູ່ແສນສູນ (ທີ່ຫ່າງຈາກວ້ຽງໆ 25 ຫຼັກ ແລະ ຕິດກັບສາຍແດນລາວ-ໄທ) ມາຮ່າໂນ. ຈຸບິນ Mi 4 ທີ່ລວມມີນັກບິນ ທີ່ຂັບຍົນ

ເອລິກັບແຕ ທີ່ເກ່ງ ເຊັ່ນ ຮອງຈອງຄາຍ, ເລືອງເຍີດຫງອງນ, ເວລັນລາວ ຊຶ່ງຢູ່ພາຍໃຕ້ການບັງຄັບບັນຊາຂອງຫົວໜ້າກອງບິນຟາມດິງເກືອງ ພ້ອມກັບພະນັກງານຈາກກົມເສນາທິການ ທີ່ໄປກຳສະພາບການໜ້າດິນ ຈຳນວນໜຶ່ງ ໄດ້ອອກເດີນທາງໃນວັນທີ 16/12/60.

ເຮືອບິນ Mi 4 ທີ່ຖືກລຶບເຄື່ອງໝາຍ ເພື່ອໄປຮັບແຂກພິເສດດັ່ງກ່າວ ດຽວນີ້ ຢູ່ໃສ? ແຂກພິເສດຂອງວານນີ້ (ວັນທີ 16/12) ແລະ ແຂກໃນມື້ນີ້ ແມ່ນຜູ້ດຽວກັນ ຫຼື ແມ່ນສອງຄົນ? ຈຸບິນ Mi 4 ທີ່ເດີນທາງໃນມື້ວານນີ້ ແລະ ຈຸບິນ AN 2 ໃນມື້ນີ້ ມີການພົວພັນກັນ ຄືແນວໃດ?

ເມື່ອມາເຖິງກອງພັນໃຫ່ທະຫານລາບ, ສ/ທ ໂຮ່ອາ ໄດ້ເຫັນຄະນະຈຸບິນ AN 2 ຄົບໜ້າກັນໝົດແລ້ວ. ຫົວໜ້າກອງຮ້ອຍຂອງ AN 2 ຟານຍີ ເກົນ ຊຶ່ງເປັນນັກບິນ ທີ່ມີປະສົບການຫຼາຍ ຖືກແຕ່ງຕັ້ງເປັນຫົວໜ້າຈຸບິນ (ສ/ທ ໄດ້ເສຍຊີວິດໃນບັ້ນລົບຜາທີ ຂອງປະເທດລາວ ໃນປີ 1967 ແລະ ໄດ້ຮັບນາມະຍົດວິລະຊົນຂອງກຳລັງປະກອບອາວຸດ).

ສ/ທ ພັນໂທ ທີ່ຕາງໜ້າໃຫ້ກົມເສນາທິການ ໄດ້ເຜີຍແຜ່ໜ້າທີ່ດັ່ງລຸ່ມນີ້:

"ຈຸບິນພິເສດ Mi 4 ທີ່ໄດ້ອອກຈາກເດີ່ນບິນ ຢາເລິມຮ່າໂນຍ (ໃນວັນທີ 16/12/60) ໄດ້ເຖິງຊ່ຳເໜືອໃນເວລາ 11ໂມງ 30 ນາທີ. ອາກາດຂອງຊ່ຳເໜືອຂີ້ຮ້າຍຫຼາຍ, ແນມບໍ່ເຫັນໜ້າດິນ, ທັງບໍ່ມີຍຸໂທປະກອນ ແລະ ບໍ່ມີຜູ້ບັນຊາໜ້າດິນ, ແຕ່ໜ້າທີ່ພັດຮີບດ່ວນ, ຊັກຊ້າບໍ່ໄດ້. ເຮືອບິນຍັງຕ້ອງໄປບິນຕາມແຜນການ, ເຖິງຈະຮູ້ວ່າມີຄວາມຫຍຸ້ງຍາກປານໃດກໍຕາມ. ເຮືອບິນ ຢູ່ໃນຄວາມສູງ 3000 ແມດ, ທັງບໍ່ສາມາດສັງເກດໜ້າດິນໄດ້ ແລະ ລົມພັດແຮງ, ເຮືອບິນຈຶ່ງຫຼົງທາງ. ເມື່ອຮອດຕອນແລງ, ນ້ຳມັນໃນຍົນກໍໝົດ, ເຮືອບິນຈຶ່ງຕ້ອງລົງຈອດຢູ່ດິນແດນທີ່ບໍ່ຄຸ້ນເຄີຍ. ຈຸບິນໄດ້ລາຍງານເມືອຫາກອງບັນຊາການຢ່າງທັນການແລ້ວ. ຮອດປັດຈຸບັນນີ້ ຍັງບໍ່ຮູ້ກ່ຽວ

ກັບຊາຕາກຳຂອງຈຸບິນ ແລະ ເຮືອບິນ.

ໜ້າທີ່ສຸດທີ່ໜັກໜ່ວງ. ໃນມື້ນີ້ ຈຸບິນ AN 2 ຕ້ອງໄປປະຕິບັດໃຫ້ສຳເລັດໜ້າທີ່ ທີ່ຈຸບິນ M14 ບໍ່ໄດ້ສຳເລັດຜົນ. ຄືຕ້ອງບິນ ຕາມເສັ້ນທາງ ຢາເລິມ - ວັງວຽງ - ຢາເລິມ.

ໃນປັດຈຸບັນນີ້ ຍັງບໍ່ຮູ້ວ່າ ເດີ່ນບິນວັງວຽງ ແມ່ນຂອງເຮົາ ຫຼື ຂອງ ຝ່າຍສັດຕູ. ດັ່ງນັ້ນ ຈຸບິນຕ້ອງປະກອບອາວຸດໃຫ້ຄົບຖ້ວນເພື່ອກຽມພ້ອມສູ້ ລົບ. ຖ້າຫາກເຫັນວ່າແມ່ນເດີ່ນບິນຂອງຝ່າຍສັດຕູ ກໍຕ້ອງບິນກັບດ່ວນ. ຖ້າ ວ່າແມ່ນເດີ່ນບິນຂອງຝ່າຍເຮົາ ກໍຕ້ອງຮັບເອົາແຂກພິເສດດັ່ງກ່າວກັບມາ ຮ່າໂນຍໃຫ້ໄດ້. ຈຸບິນໄດ້ນຳເອົາອາວຸດ ແລະ ອາຫານແຫ້ງຕິດຕົວໄປນຳ ຈຳນວນໜຶ່ງ ເພື່ອປ້ອງກັນກໍລະນີຈຳຕ້ອງໄດ້ຈອດລົງໜ້າດິນແບບບັງຄັບ. ເຄື່ອງໝາຍຢູ່ໜ້າດິນຄືກອງໄຟ 3 ກອງ ຕາມຮູບສາມຫຼ່ຽມ ຢູ່ເບື້ອງຂວາ ຂອງເດີ່ນບິນບ່ອນເຮືອບິນລົງຈອດ".

ເມື່ອເຜີຍແຜ່ໜ້າທີ່ແລ້ວ ກໍເຫັນລົດໂວນກາ ສີດຳຈອດຢູ່ຕໍ່ໜ້າເດີ່ນ. ທ່ານພົນເອກ ຫວໍຫງວຽນຢາບ ລົງລົດແລ້ວ ຍ່າງເຂົ້າຫ້ອງປະຊຸມເລີຍ. ທ່ານແນມເບິ່ງທຸກຄົນດ້ວຍແສງຕາທີ່ເຄັ່ງຂຶມແລ້ວເວົ້າວ່າ: ໜ້າທີ່ຂອງພວກ ສ/ຫ ສຳຄັນທີ່ສຸດ. ມີຄວາມຈຳເປັນທີ່ສຸດ ທີ່ພວກສະຫາຍຈະ ຕ້ອງໄປຮັບ ແຂກພິເສດຜູ້ນັ້ນ ເພາະສິ່ງດັ່ງກ່າວມີການພົວພັນຢ່າງໃກ້ຊິດທີ່ສຸດກັບການ ຂະຫຍາຍຕົວຂອງການປະຕິວັດລາວໃນໄລຍະນີ້. ເຖິງຈະຫຍຸ້ງຍາກພຽງ ໃດ, ພວກສ/ຫ ກໍຕ້ອງປະຕິບັດໃຫ້ຫຼ້ອນໜ້າທີ່. ທ່ານພົນເອກຊີ້ມື ດ້ວຍນິ້ວຊີ້ ແລ້ວຖາມອ້າຍນ້ອງວ່າ:

ພວກສ/ຫ ຈະເຮັດໄດ້ບໍ່? ຫົວໜ້າຈຸບິນ ຟາມຍີເກິນ ລຸກຂຶ້ນໃຫ້ຄຳ ໝັ້ນສັນຍານຳທ່ານພົນເອກ. ທ່ານພົນເອກງຶກຫົວແລ້ວຈັບມືກັບຟາມຍີ ເກິນ.

ກອງທະຫານອາກາດ 919 ເຄີຍປະຕິບັດໜ້າທີ່ຫຼາຍຄັ້ງ, ແຕ່ບໍ່ເຄີຍ

ມີຄັ້ງໃດ ທີ່ທ່ານພົນເອກຫົວໜ້າກອງບັນຊາການສູງສຸດມາມອບໝາຍໜ້າທີ່ກັບທີ່ດ້ວຍຕົນເອງຄືຄັ້ງນີ້. ຄັ້ງນີ້ ທ່ານພົນເອກມາໂດຍກົງ, ແນ່ນອນມັນຕ້ອງເປັນເຫດການທີ່ສຳຄັນທີ່ສຸດ. ນັ້ນຄືຄວາມຮັບຜິດຊອບ, ທັງເປັນກຽດອີກດ້ວຍ. ເມື່ອເຂົ້າໃຈເຖິງຄວາມສຳຄັນຂອງໜ້າທີ່, ໝົດຈຸບິນເລີ່ມປະຕິບັດໜ້າທີ່ຢ່າງຄຶກຄັກ. ໃນຈຸບິນລວມມີ ຮອງເກີນ, ຜູ້ນຳທາງ, ເຈີນວັນນາມ, ກຳມະກອນກົນຈັກ, ໂຮ່ອາ, ກົດລັບທາງອາກາດ ແລະ ຫົວໜ້າຈຸບິນຟານຍີເກີນ. ເພື່ອຮັບປະກັນຄວາມແນ່ນອນດ້ານເຕັກນິກ, ຂັ້ນເທິງໄດ້ສັ່ງເພີ່ມໃຫ້ອາຈານຄົນລັດເຊຍນັ່ງຢູ່ບ່ອນຄົນຂັບສຳຮອງ ແລະ ອາຈານຄົນລັດເຊຍອີກຄົນໜຶ່ງຊ່ວຍຮອງເກີນໃນການນຳທາງ. ພາຍໃຕ້ການບັນຊາຂອງຫົວໜ້າຈຸບິນ, ໝົດຈຸບິນມີການແບ່ງງານ ແລະ ຮ່ວມມືກັນເຮັດວຽກ. ແຕ່ລະຄົນໃນຈຸບິນ ລ້ວນແຕ່ມີປືນ AK ຜູ້ລະກະບອກ ພ້ອມທັງລູກແຕກຜູ້ລະສອງໜ່ວຍ ແລະ ລູກປືນ ຈຳນວນໜຶ່ງ. ນອກນັ້ນ ຍັງມີເຄື່ອງກົນ ແລະ ນ້ຳດື່ມ. ໃນຍົນຍັງມີນ້ຳມັນແອດຊັງ 2 ຟູຍ 400 ລິດ, ຄຸ ໜຶ່ງໜ່ວຍ ພ້ອມເຊືອກ ແລະ ຂອງປ້ຳນ້ຳມັນດ້ວຍມື. ນອກນັ້ນ, ອ້າຍເອື້ອຍລ້ຽງຍັງກຽມເຂົ້າໜຽວ, ກ້ວຍ ໃຫ້ຕື່ມ. ອ້າຍນ້ອງຍັງກຽມເຂົ້າສານ ແລະ ຟືນຕື່ມ ເພື່ອປ້ອງກັນກໍລະນີຕ້ອງລົງຈອດໜ້າດິນແບບບັງຄັບຢູ່ແຫ່ງໃດໜຶ່ງ.

ເຮືອບິນໄດ້ບິນຂຶ້ນໄປທາງຕາເວັນຕົກ. ເຖິງວ່າອາກາດຈະບໍ່ດີປານໃດກໍຕາມ, ແຕ່ດ້ວຍປະສົບການ ແລະ ຄວາມຄຸ້ນເຄີຍຕໍ່ເສັ້ນທາງບິນ, ດັ່ງນັ້ນ ພາຍຫຼັງບິນໄດ້ 1 ຊົ່ວໂມງ 45 ນາທີ, ເຮືອບິນໄດ້ມີໜ້າຢູ່ທ້ອງຟ້າເມືອງວັງວຽງ. ເດີ່ນບິນວັງວຽງພວມອາບແດດຢູ່. ເຮືອບິນປີ່ນອ້ອມເດີ່ນບິນສອງຮອບເພື່ອຕິດຕາມສະພາບຢູ່ໜ້າດິນ. ຢູ່ເດີ່ນບິນມີຫຼາຍຄົນທີ່ນຸ່ງຖືເສື້ອຜ້າຫຼາຍສີຢ່າງໄປຢ່າງມາ. ແມ່ນຝ່າຍເຮົາ ຫຼື ຝ່າຍສັດຕູ? ເພື່ອຄວາມລະມັດລະວັງ, ຫົວໜ້າຈຸບິນ ຫຼຸດຄວາມສູງຂອງເຮືອບິນລົງຫຼຸດ 50 ແມດ. ໃນເວລາທີ່ ອ້າຍນ້ອງພວມຕຶກຕອງຢູ່, ຜູ້ນຳທາງຮ່ອງເກີນ ຮ້ອງໂຮຂຶ້ນວ່າ

ຢູ່ເບື້ອງຊ້າຍຂອງເສື້ອທະຫານມີແພສີແດງ ແລະ ຍັງມີກອງໄຟສາມກອງ ຢູ່ຂ້າງທາງແລ່ນຂອງເດີ່ນບິນ.

ຟາມຍີເກີນ ແລກປ່ຽນຄວາມເຫັນກັບອ້າຍນ້ອງວ່າ: ແມ່ນທະຫານ ຂອງພວກເຮົາແລ້ວ. ກຽມເອົາເຮືອບິນລົງຈອດຢູ່ເດີ່ນ. ແຕ່ຍັງຕ້ອງມີສະ ຕິລະວັງຕົວ. ສ/ທ ໂຮ່ອາ ແລະ ເຈີນວັນນາມ ກຽມພ້ອມສູ້ລົບເມື່ອຈຳເປັນ.

ເຮືອບິນໄດ້ມອດຈັກແລ້ວ. ໂຮ່ອາ ໄຂປະຕູຂອງເຮືອບິນ ແລະ ເຈີນ ວັນນາມ ກຽມພ້ອມຍິງ. ທະຫານປະເທດລາວແລ່ນມາຫຼາຍຄົນ ຍ້ອນວ່າ ເປັນເວລາດົນເຂົາເຈົ້າຈຶ່ງໄດ້ເຫັນເຮືອບິນ, ດັ່ງນັ້ນອ້າຍນ້ອງຈຶ່ງຮ້ອງໂຮຟົດ ສະນັ່ນ ເພື່ອຊົມເຊີຍຈຸບິນ. ອ້າຍນ້ອງໃນຈຸບິນ ຈີ່ ສ/ທ ຈູຮູ່ຍເມີນ ທີ່ເປັນ ຫົວໜ້າຄະນະຊ່ຽວຊານຫວຽດນາມ ພ້ອມກັບທ່ານຜູ້ບັນຊາການທະຫານ ປະເທດລາວ.

ໃນຂະນະທີ່ຫົວໜ້າຈຸບິນ ລາຍງານຕໍ່ສ/ທ ຈູຮູ່ຍເມີນ ແລະ ສ/ທ ລາວອີກສອງຄົນ, ອ້າຍນ້ອງໃນຈຸບິນ ໄດ້ກວດກາເຄື່ອງຈັກ ແລະ ນຳເອົາ ນ້ຳມັນໃສ່ຖັງ. ເມື່ອແຂກໄດ້ຂຶ້ນເຮືອບິນຮຽບຮ້ອຍ, ຟາມຍີເກີນນຳເຮືອບິນ AN 2ກັບ ຮ່າໂນຍ.

ສ/ທ ລາວ ສອງຄົນ ນັ່ງຢູ່ທາງຫຼັງເຮືອບິນ, ໃນນັ້ນ ແຂກຜູ້ທີ່ສູງ ແລະ ຂາວ ນັ່ງອ່ານໜັງສືພິມເປັນພາສາຝະລັ່ງຢ່າງຕັ້ງໃຈ. ສ/ທ ຈູຮູ່ຍເມີນ ນັ່ງຢູ່ໃກ້ຈຸບິນ ແລະ ລົມກັບອ້າຍນ້ອງຢ່າງມ່ວນຊື່ນເບີກບານ. ອ້າຍນ້ອງ ເຊີນເພີ່ນກິນເຂົ້າໜຽວ, ກ້ວຍ ແລະ ທ່ານກິນຢ່າງແຊບນ້ວ ແລະ ຍັງຖາມ ຂ່າວຫາຄອບຄົວຂອງແຕ່ລະຄົນອີກ. ທ່ານເວົ້ານ້ວຫົວມ່ວນ ແລະ ເວົ້າວ່າ: ຜົນສຳເລັດຂອງຖ້ຽວບິນນີ້ ຄວນໄດ້ຮັບການຍ້ອງຍໍ ເພາະມັນເປັນການປະ ກອບສ່ວນທີ່ສຳຄັນຕໍ່ການຫັນປ່ຽນສະຖານະການທີ່ເປັນຜົນດີໃຫ້ແກ່ການ ປະຕິວັດລາວ.

ເຮືອບິນລົງເດີ່ນໃນເວລາ 16 ໂມງ 45 ນາທີ. ສ/ທ ຈູຮູ່ຍເກີນ ເຊີນ

ສ/ທ ລາວສອງຄົນລົງກ່ອນ. ທ່ານພົນເອກ ຫວໍຫງວຽນຢາບ ໄດ້ຢືນລໍຖ້າຢູ່ເດີ່ນບິນແລ້ວ. ທ່ານຍົ້ມແຍ້ມແຈ້ມໃສ່ອ້າແຂນໂອບກອດ ທ່ານແຂກຜູ້ທີ່ສູງ ແລະ ຂາວ ແລະ ມອບຊໍ່ດອກໄມ້ທີ່ສວຍສົດງົດງາມໃສ່ມືຂອງແຂກ. ໝົດຈຸບິນຕື່ນເຕັ້ນ ແລະ ຮູ້ວ່າ ທ່ານຜູ້ນີ້ ຈຶ່ງແມ່ນແຂກທີ່ຕົນຕ້ອງໄປຮັບ (ຫຼັງຈາກນັ້ນ ອ້າຍນ້ອງຈຶ່ງຮູ້ວ່າແຂກທ່ານນັ້ນແມ່ນ ພະນະທ່ານ ກິນິມ ພົນເສນາ, ລັດຖະມົນຕີວ່າການກະຊວງການຕ່າງປະເທດຂອງລັດຖະບານປະສົມຂອງ ລາວ ເມື່ອລົດໂວນກາ ໄດ້ນຳເອົາແຂກ ແລະ ສ/ທ ຈູຮູ່ຍເມີນ ເມືອຮາ ໂນຍ, ທ່ານພົນເອກ ຍົ້ມແຍ້ມແຈ່ມໃສມອບຊໍ່ດອກໄມ້ໃຫ້ຈຸບິນດ້ວຍຕົນເອງ. ທ່ານເວົ້າວ່າ: ຈຸບິນໄດ້ປະຕິບັດໜ້ອນໜ້າທີ່ຂອງຕົນຢ່າງຍອດຢ້ຽມ. ຂ້າພະເຈົ້າ ຂໍຕາງໜ້າໃຫ້ຄະນະພັກການທະຫານຂັ້ນສູນກາງ ແລະ ກອງບັນຊາການທະຫານສູງສຸດສະແດງຄວາມຍ້ອງຍໍຊົມເຊີຍພວກສະຫາຍ.

ເພື່ອໃຫ້ເຂົ້າໃຈ ກ່ຽວກັບ ຖ້ຽວບິນ ທີ່ບໍ່ຄ່ອຍມີໃຜຮູ້ກໍຄື ບຸກຄົນທີ່ສຳຄັນທີ່ສຸດໃນຖ້ຽວບິນນັ້ນ (VIP) ພວກເຮົາ ຈຶ່ງພາກັນຫວນຄືນເບິ່ງເສັ້ນທາງ ລະອິດລະອ້ຽວ ແລະ ຫຍຸ້ງຍາກລຳບາກຂອງການປະຕິວັດລາວ ທີ່ນຳພາ ໂດຍອະດີດເລຂາທິການໃຫ່ຍ ໄກສອນ ພົມວິຫານ ແລະ ອະດີດປະທານ ສຸພານຸວົງ.

ພາຍຫຼັງສັນຍາເຊີແນວ ກ່ຽວກັບ ລາວ ປີ 1954, ໃນວັນທີ 18/8/58, ສະເດັດສຸວັນນະພູມາ ໄດ້ກຳນົດໃຫ້ຜູຍ ຊະນະນິກອນ ຈັດຕັ້ງລັດຖະບານ. ຜູຍໄດ້ເພີ່ມຄົນໃໝ່ໃນລັດຖະບານ ແລະ ໄດ້ອອກກົດໝາຍຕ້ານຄອມມຸຍນິດ ພ້ອມທັງປະກາດວ່າ ສັນຍາເຊີແນວປີ 1954 ບໍ່ມີຜົນສັກສິດ! ລັດຖະບານປະຕິການໄດ້ຢຶດຄອງເຂດປົດປ່ອຍຂອງຝ່າຍປະເທດລາວ ແລະ ໄດ້ບຸກຕີເມືອງຫຼວງວຽງຈັນ. ນອກນັ້ນ ຍັງໃຊ້ກຳລັງຂອງກອງທັບ ປາບປາມຂະບວນການປະຕິວັດຢູ່ທ້ອງຖິ່ນ ແລະ ເຂັ່ນຂ້າພະນັກງານຕໍ່ຕ້ານ ແລະ ຫຼັກແຫຼ່ງໃນໝູ່ບ້ານຕ່າງໆ.

ໃນວັນທີ 28/7/1959, ຜູຍອອກຄຳສັ່ງຈັບສະເດັດເຈົ້າສຸພານຸວົງ ແລະ ບັນດາຜູ້ນຳຝ່າຍປະເທດລາວ ຈຳນວນໜຶ່ງໂດຍບໍ່ໄດ້ຄຳນຶງເຖິງການ ຄັດຄ້ານຢ່າງແຂງແຮງຂອງບັນດາຊັ້ນຄົນ ແລະ ຊົນເຜົ່າໃນປະເທດລາວ.

ໃນວັນທີ 23/5/60, ໂດຍໄດ້ຮັບການຊ່ວຍເຫຼືອຂອງທະຫານທີ່ຮັກຊາດ ຈຳນວນໜຶ່ງໃນລັດຖະບານ ກໍຄືຈາກປະຊາຊົນໃນບ້ານບອກ, ຖ້ຳ ແກວ, ສະເດັດ ແລະ ບັນດາຜູ້ນຳຂອງຝ່າຍປະເທດລາວ ໄດ້ແຫກຄຸກກັບ ມາຫາປະຊາຊົນ ແລະ ກອງທັບຢູ່ເຂດປົດປ່ອຍ.

ໃນວັນທີ 1/8/60, ຂະບວນການຂອງນັກຮຽນ, ນັກສຶກສາໄດ້ທວງ ສິດເສລີພາບ ແລະ ປະຊາທິປະໄຕ. ໂດຍໄດ້ຮັບການສະໜັບສະໜູນຈາກ ປະຊາຊົນ ແລະ ກອງທະຫານລາບອາກາດທີ 2, ຮ້ອຍເອກ ກອງແລ ແລະ ຮ້ອຍໂທ ເດືອນ ໄດ້ຊີ້ນຳການໂຄ່ນລົ້ມລັດຖະບານຝ່າຍຂວາ ແລະ ກັບ ກາຍມາເປັນກຳລັງທີສາມໃນທ່ວສະຖານະການ.

ພວກເຮົາເຫັນວ່ານີ້ ແມ່ນການໂອກາດທີ່ດີ ສຳລັບການສ້າງຕັ້ງ ລັດຖະບານທີ່ມີຄວາມປອງດອງຊາດ, ມີສະເຖຽລະພາບ ແລະ ສັນຕິພາບ ໃນແຜ່ນດິນລາວ. ໃນສະພາບແວດລ້ອມດັ່ງກ່າວ, ທ່ານພົນເອກ ຫວໍ ທາວຈຸນຢາບ ໄດ້ເຊື້ອເຊີນໃຫ້ພະນະທ່ານກິນິມພົນເສນາມາຮ່ວມ.

ພະນະທ່ານ ກິນິມ ພົນເສນາ ເປັນບຸລຸດໃນຂະບວນການປະຕິວັດຕໍ່ ສູ້ເພື່ອປະເທດລາວສັນຕິພາບ, ເອກະພາບ ແລະ ປະຊາທິປະໄຕ. ເມື່ອສຳ ເລັດການສຶກສາມັດທະຍົມຕົ້ນ, ທ່ານປະການສຶກສາມາເຮັດວຽກເປັນສະ ໝຽນຢູ່ຫ້ອງການຂອງເຈົ້າຄອງນະຄອນຫຼວງວຽງຈັນ. ໃນປີ 1954 ເມື່ອ ຝຣັ່ງຮຸກຮານສາມປະເທດອິນດູຈີນ, ທ່ານເດືອນໄຫວໃນຂະບວນການນັກ ຮຽນ, ນັກສຶກສາ. ທ່ານ ເປັນບຸກຄົນທີ່ມີອິດທິພົນ ໃນຂະບວນການນັກຮຽນ, ນັກສຶກສາ ກໍຄືຢູ່ໃນບັນດາເຈົ້ານາຍ, ເຈົ້າເຫຼົ່າຂອງປະເທດລາວ. ທ່ານເປັນ ຜູ້ທີ່ມີ ຄວາມຮູ້ທີ່ກ້ວາງຂວາງ ແລະ ມີຄວາມມຸ້ງຫວັງຢາກໃຫ້ມີສັນຕິພາບ

ເປັນກາງ, ເອກະລາດ, ວັດທະນະຖາວອນ ແກ່ຊົນຊາດລາວ. ທ່ານມີຄວາມນັບຖືຕໍ່ການຕໍ່ສູ້ທີ່ບໍ່ຮູ້ອິດຮູ້ເມື່ອຍຂອງກຳລັງປະເທດລາວ, ດັ່ງນັ້ນ ທ່ານມັກຈະຢືນຢູ່ຝ່າຍຂອງປະເທດລາວ ເພື່ອຕໍ່ສູ້ກັບຝ່າຍຂວາ. ຍ້ອນເຫດຜົນດັ່ງກ່າວ, ທ່ານຈຶ່ງໄດ້ຮັບຄວາມນັບຖື ແລະ ນິຍົມຊົມຊອບຈາກທຸກໆຄົນ.

ໃນວັນທີ 23/2/61, ກອງຊົນສິ່ງທະຫານອາກາດ 919 ໄດ້ຮັບຄຳສັ່ງໃຫ້ປະຕິບັດຖ້ຽວບິນປິດລັບໃນກາງຄືນ ເພື່ອນຳສະເດັດເຈົ້າສຸພານຸວົງໄປພະນົມເປັນ ໂດຍສະເດັດເຈົ້າສຸພານຸວົງຮຽກຮ້ອງໃຫ້ປະຊາຊົນ ແລະ ພັກຝ່າຍຕ່າງໆສ້າງຕັ້ງລັດຖະບານປະສົມ. ຄຳຮຽກຮ້ອງຂອງສະເດັດໃນເວລານັ້ນ ມີຜົນສະທ້ອນອັນໃຫ່ຍຫຼວງທີ່ສຸດຕໍ່ສະຖານະການໃນເວລານັ້ນ. ສະເດັດເຈົ້າສຸວັນນະພູມາ ກໍຮຽກຮ້ອງໃຫ້ປະຊາຊົນທຸກຊັ້ນຄົນ ສາມັກຄີກັນ ເພື່ອປະເທດລາວເອກະລາດ ແລະ ປະຊາທິປະໄຕ, ທັງຮຽກຮ້ອງໃຫ້ສ້າງຕັ້ງລັດຖະບານປະສົມ ກໍເປັນບາດຄ້ອນການເມືອງທີ່ທັບມ້າງກົນອຸບາຍແບ່ງແຍກຂອງຈັກກະພັດອາເມລິກາ ແລະ ລູກແຫ້ງຕົນມື.

ໃນເດືອນ 5 ຂອງປີນັ້ນ, ຕໍ່ໜ້າການເຕີບໃຫ່ຍຂະຫຍາຍຕົວທີ່ໄວວາຂອງການປະຕິວັດລາວ, ຈັກກະພັດອາເມລິກາ ແລະ ບັນດາອິດທິກຳລັງປະຕິການ ຈຳຕ້ອງຮັບຮອງເອົາການຢຸດຍິງເພື່ອມາເຂົ້າຮ່ວມກອງປະຊຸມທີ່ເຊີແນວ.

ໃນວັນທີ 12/6/62 ລັດຖະບານປະສົມຖືກສ້າງຕັ້ງຂຶ້ນໂດຍລວມມີສາມຝ່າຍ ຄື: ຝ່າຍປະເທດລາວ, ຝ່າຍຂວາ, ແລະ ຝ່າຍເປັນກາງ. ສະເດັດເຈົ້າສຸວັນນະພູມາເປັນນາຍົກ ແລະ ພະນະທ່ານກີນີມ ພົນເສນາຖືກເລືອກຕັ້ງເປັນລັດຖະມົນຕີວ່າການກະຊວງການຕ່າງປະເທດໃນລັດຖະບານ.

ນີ້ເປັນໄລຍະການປັບປຸງ, ກໍ່ສ້າງ ແລະ ຂະຫຍາຍຕົວຂອງກຳລັງການປະຕິວັດລາວ ເພື່ອເປັນບາດກ້າວສຳລັບໃຫ້ປະຊາຊົນລາວຕໍ່ສູ້ເພື່ອປົດປ່ອຍທົ່ວປະເທດ ແລະ ປະກາດສ້າງຕັ້ງສປປລາວ ໃນວັນທີ

2/12/1975.

ພວກປະຕິການຝ່າຍຂວາໄດ້ຊອກວິທີທາງຫຼາຍຄັ້ງ ເພື່ອຄາດຕະກຳທ່ານ. ມີຄັ້ງໜຶ່ງ, ພວກມັນເອົາ ລົດບັນທຸກທີ່ເຕັມດ້ວຍຫີນ ແລ່ນໄປຕຳລົດຂອງທ່ານເວລາທ່ານມາເຖິງຫ້ອງການເຮັດວຽກຂອງຕົນ. ຜູ້ຂັບລົດຂອງທ່ານສາມາດຫຼີກໄດ້ຢ່າງວ່ອງໄວ, ແຕ່ຝາປີກຫຼັງລົດຖືກຟັ້ງອອກ. ໃນທີ່ສຸດທ່ານຖືກຄາດຕະກຳພາຍຫຼັງລົງຈາກລົດ ຫຼັງຈາກກັບຈາກງານລ້ຽງ. ຝ່າຍຂວາກໍໂຄສະນາຢ່າງໃຫ່ຍວ່າທ່ານຖືກຝ່າຍປະເທດລາວຄາດຕະກຳ.

ເມື່ອປະເທດລາວໄດ້ຮັບການປົດປ່ອຍຢ່າງສົມບູນ, ນາຍທະຫານທີ່ສັ່ງກັດກຳລັງກຸປະສິດທີ່ເປັນຜູ້ບັນຊາການທະຫານເຂດ 5 ມາຄຸເຂົ່າຢູ່ຕໍ່ໜ້າພັນລະຍາທ່ານກິນິມ ພົນເສນາ ເພື່ອສາລະພາບໂທດກຳຂອງຕົນ.

ໃນປີ 1982, ພັນລະຍາ ແລະ ລູກຫຼານຂອງທ່ານ ໄດ້ສ້າງທາດທີ່ໃຫ່ຍ ຢູ່ວຽງຈັນ ເພື່ອເອົາອັດຖິຂອງທ່ານໄປບັນຈຸໄວ້ໃນທາດນັ້ນ.

ເມື່ອໃດຫາກໄດ້ພົບພໍ້ກັນ, ບັນດາສະມາຊິກໃນຈຸບິນ AN 2 ທີ່ເຄີຍໄດ້ຮັບເອົາແຂກທີ່ສຳຄັນທີ່ສຸດດັ່ງກ່າວ ກໍມັກເວົ້າເຖິງຖ້ຽວບິນທີ່ສ້າງບາດລ້ຽວເພື່ອໃຫ້ມີວັນທີ 2/12/75 ຊຶ່ງເປັນມື້ທີ່ປະເທດລາວຖືກປົດປ່ອຍຢ່າງສົມບູນ. ອ້າຍນ້ອງ ບໍ່ຫຼົງລືມໃນການເວົ້າເຖິງພະນະທ່ານ ກິນິມ ພົນເສນາ ທີ່ເປັນລັດຖະມົນຕີວ່າການກະຊວງການຕ່າງປະເທດຂອງລັດຖະບານປະສົມສາມຝ່າຍຂອງລາວ.

“ເຂັມເພັດ ພົນເສນາ, ລູກສາວກົກຂອງ ທ່ານ ກົນິມ ພົນເສນາ”

(ໂດຍນັກຂ່າວຂອງ ອະດີດ ສ.ປ. ເຢຍລະມັນ)

ແນວລາວຮັກຊາດ ໄດ້ຈັບປືນຕໍ່ສູ້ກັບການຮຸກຮານຂອງ ພວກຈັກກະພັດ ອາເມລິກາ ແລະ ໄດ້ເຕົ້າໂຮມກຳລັງຮັກຊາດຂອງປະຊາຊົນ ຢູ່ອ້ອມຂ້າງຕົນ. ເປົ້າໝາຍປະຊາທິປະໄຕຂອງ ແນວລາວຮັກຊາດ ທີ່ໄດ້ບັນລຸໃນໄລຍະຜ່ານມາ ນັບມື້ນັບມີຜົນສະທ້ອນທີ່ເພີ່ມຂຶ້ນ ໃນວົງການປະຊາທິປະໄຕ ນາຍທຶນຢູ່ໃນຕົວເມືອງຕ່າງໆ.

ທ່ານ ນາງ ເຂັມເພັດ ພົນເສນາ ກໍ່ເປັນແບບຢ່າງອັນນຶ່ງ:

ພໍ່ ຂອງລາວ ທ່ານ ກົນິມ ພົນເສນາ ເປັນຜູ້ຕາງໜ້າທີ່ມີຊື່ສຽງໃນ ກຳລັງປະຊາທິປະໄຕນາຍທຶນຂອງປະເທດລາວ. ໃນປີ 1962, ທ່ານ ກົນິມ ໄດ້ເຂົ້າຮ່ວມໃນລັດຖະບານປະສົມຂອງລາວໂດຍທ່ານເປັນຕົວແທນຂອງ ກຳລັງເປັນກາງ ແລະ ໄດ້ດຳລົງຕຳແໜ່ງເປັນ ລັດຖະມົນຕີວ່າການ ກະຊວງການຕ່າງປະເທດ. ທ່ານໄດ້ຢຶດໝັ້ນໃນການປະຕິບັດຫຼັກການຕ່າງໆທີ່ ໄດ້ກຳນົດໃນສັນຍາ ເຊີແນວ ກ່ຽວກັບ ລາວ ສະບັບປີ 1962. ທ່ານ ໄດ້ເຮັດ ວຽກຢ່າງຕໍ່ເນື່ອງເພື່ອປະເທດລາວເປັນກາງ ແລະ ເອກະລາດ, ຊຶ່ງເປັນ ການຂັດກັບ ນະໂຍບາຍການແຊກແຊງຂອງ ພວກຈັກກະພັດອາເມລິກາ.

ນັ້ນຄືເຫດຜົນທີ່ ທ່ານ ກົນິມ ຖືກຄາດຕະກຳ ໃນວັນທີ 1/4/1963 ໂດຍຄາດຕະກອນ ທີ່ໄດ້ຮັບການບົ່ງການຈາກ ພວກປະຕິການ.

ໃນເຂດພູດອຍຂອງພາກເໜືອຂອງ ປະເທດລາວ, ຂ້າພະເຈົ້ານັ່ງ ຢູ່ໃນຖ້ຳກັບ ທ່ານ ນາງ ເຂັມເພັດ, ຊຶ່ງສຳລັບລາວກໍ່ຄື ພະນັກງານ ແລະ ປະຊາຊົນໃນເຂດນີ້, ຖ້ຳເປັນທັງບ່ອນພັກເຊົາ ແລະ ບ່ອນເຮັດວຽກພ້ອມໆ ກັນ. ຈາກດວງຕາຂອງລາວ, ຂ້າພະເຈົ້າສາມາດເຫັນໄດ້ວ່າ ລາວເປັນຜູ້ຍິງ

ທີ່ມີທັດສະນະທີ່ເຂັ້ມແຂງ ຊຶ່ງຜ່ານມາລາວໄດ້ຜ່ານຜ່າຄວາມຫຍຸ້ງຍາກນາໆປະການ. ປັດຈຸບັນລາວມີອາຍຸ 26 ປີ ແລະ ເຄີຍໄດ້ຮັບການສຶກສາທີ່ສະຖາບັນການພິວພັນຕ່າງປະເທດທີ່ ມິດສະກູ. ລາວສາມາດປາກ ພາສາ ລັດເຊຍ, ຝຣັ່ງ, ອັງກິດ ແລະ ແອສປາຍອນ. ປັດຈຸບັນນີ້ ລາວເຮັດວຽກຢູ່ໃນຫ້ອງການ ສຳນັກງານຂອງ ແນວລາວຮັກຊາດ.

ລາວເລົ່າໃຫ້ຟັງວ່າ: "ພໍ່ຂອງຂ້າພະເຈົ້າ ເວລາໃດກໍ່ເຮັດວຽກເພື່ອຈະຫວັດດີພາບ ແລະ ຜົນປະໂຫຍດຂອງປະຊາຊົນລາວ. ພວກຂ້າພະເຈົ້າຈະຕ້ອງດຳລົງຊີວິດພາຍໃຕ້ສາຍພິວພັນທີ່ລ້າຫຼັງຂອງ ລະບອບສັກດິນາ ແລະ ລ່າເມືອງຂຶ້ນ. ວິທີທາງດຽວທີ່ຈະເຮັດໃຫ້ປະຊາຊົນລາວ ຫຼຸດພົ້ນອອກຈາກຄວາມທຸກຍາກຄື ເມື່ອໃດສິ້ນສຸດການແຊກແຊງຂອງ ສະຫະລັດອາເມລິກາ ແລະ ປະເທດຊາດຈະໄດ້ຮັບຄວາມເປັນເອກະລາດຢ່າງແທ້ຈິງ. ເມື່ອນັ້ນ ສາຍພິວພັນສັງຄົມ ຈະມີການປ່ຽນແປງໃນວິທີທາງທີ່ຕອບສະໜອງຕໍ່ຜົນປະໂຫຍດຂອງ ປະຊາຊົນ. ປັດຈຸບັນນີ້ ໃນປະເທດຂອງພວກຂ້າພະເຈົ້າ, ກຳລັງທີ່ເຂັ້ມແຂງກວ່າໝູ່ ທີ່ຕໍ່ສູ້ເພື່ອບັນລຸເປົ້າໝາຍດັ່ງກ່າວຄື ກຳລັງແນວລາວຮັກຊາດ. ດ້ວຍເຫດຜົນດັ່ງກ່າວ, ພວກຂ້າພະເຈົ້າ ຈຶ່ງຕໍ່ສູ້ຢູ່ໃນຖັນແຖວຂອງແນວລາວຮັກຊາດ ເພື່ອປະເທດລາວທີ່ ເອກະພາບ, ເອກະລາດ, ປະຊາທິປະໄຕ ກໍ່ຄືເພື່ອຄວາມສຸກ ແລະ ສະຫວັດດີພາບຂອງ ປະຊາຊົນ ໃນປະເທດຂອງພວກຂ້າພະເຈົ້າ".

ການພົບປະກັບຜູ້ຍິງລາວຜູ້ນີ້ທີ່ດຳລົງຊີວິດຢູ່ໃນເຂດພູດອຍຂອງປະເທດ ເພື່ອຮັບໃຊ້ປະຊາຊົນ ເຮັດໃຫ້ຂ້າພະເຈົ້າມີຄວາມຊາບຊຶ້ງໃຈທີ່ສຸດ, ທັງເປັນການປະກອບສ່ວນໃຫ້ຂ້າພະເຈົ້າມີຄວາມເຊື່ອໝັ້ນວ່າ ທ່ານນາງ ເຂັມເພັດ ພົນເສນາ ແລະ ບັນດາສະຫາຍຂອງລາວ ຈະສາມາດສືບທອດມູນມໍລະດົກດ້ານການຕໍ່ສູ້ຂອງ ທ່ານ ກິນິມ ພົນເສນາ ໄດ້.

ໃນປຶ້ມເສັ້ນທາງແຫ່ງມິດຕະພາບ ລາວ-ຫວຽດນາມ ຊຶ່ງເປັນປຶ້ມມູນເຊື້ອມິດຕະພາບ
ແລະ ການຮ່ວມມືໃນຂະແໜງການຄົມມະນາຄົມຂົນສົ່ງ ຫວຽດນາມ-ລາວ

ຕ້ອງຂ້າມຜ່ານ ພູສາຍພູຫລວງ, ມະລິນເບື້ອງຝັ່ງ ມີບາງບ່ອນສູງລົບລີ, ສວນສະລິບ ຕາຫລີງຊັນທີລີ, ແຕ່ແລ້ວຄວາມຫຍຸ້ງຫຍາກໃດໆ ກໍ່ຕາມ ກໍ່ບໍ່ເທົ່າກັບ ສະຕິປັນຍາ ແລະ ຄວາມຄິດຂອງຄົນເຮົາ. ດຽວນີ້, ແຕ່ສາຍແດນດ່ານ ເບີ ອີ (ກອນຕຸມ), ຂໍ້ລິດ ມາຈອດ ຢ້ຽດຍປີ ພຽງປະມານ 1 ຊົ່ວໂມງ 30 ນາທີ ເທົ່ານັ້ນ ນີ້ແມ່ນ ປະຕູການຄ້າ ທີ່ໄດ້ເປີດອອກໃໝ່.

ຜູ້ທີ່ຂ້າມພູ

ສາຍພູຫລວງ (ສາຂາຫນຶ່ງຂອງ Himalaya ແລ່ນແຕ ໃຕ້ຕ້ຽ ຂອດ ອິນດູຈີນ) ຄືກັນກັບກະດູກສັນຫລັງທ້າມະຊາດທີ່ມະຫິມາໄດ້ແບ່ງຂາຍແດນ ຫວຽດນາມ ແລະ ລາວ. ເຖິງວ່າຈະຫຸ້ມເຫລ່ອຍເພື່ອນລາວຫລຸດພົ້ນອອກຈາກໄພພິບັດທ້າມະຊາດ ທີ່ໄດ້ເກີດຂຶ້ນແຕ່ລະປີ ແຕ່ສາຍພູ ຫລວງ ຊ້ຳພັດກາຍເປັນ ອຸປະສັກໃນໃຫ້ແກ່ ເພື່ອນ ໃນການຂອກຫາທາງອອກສູ່ທະເລຢູ່ທາງພາກເໜືອ. ແຕ່ຫວຽດນາມ ມາລາວ ຫລື ກົງກັນຂ້າມ, ຕ້ອງຜ່ານຂາຍແດນໃດກໍ່ຕາມ ປະຊາຊົນ ລອງປະເທດຕ້ອງ ໄດ້ຂ້າມພູຫລວງ ຈຶ່ງໄປຮອດ ຄົນຫວຽດນາມທັງຫລາຍ ທີ່ຂ້າມພູ ມາຫາດິນເພື່ອນ ບ້ານ ຕາມທີ່ຂ້າພະເຈົ້າຮູ້ວ່າ ແລະ ຢືນຢັນໄດ້ ຜູ້ໃດກໍ່ຕາມ ຖ້າຢາກຂ້າມພູຫລວງ ໄດ້ກໍ່ຕ້ອງມີເພື່ອນ ຍັນຄາ ເພື່ອນເຫລົ່ານັ້ນ ຈະແມ່ນເພື່ອນຫວຽດ ຫລື ເພື່ອນລາວ ກໍ່ລ້ວນແຕ່ແມ່ນຜົວຈອມກົມກອງ, ແມ່ນ ສະຫາຍ ທີ່ຈົງຮັກພັກດີ ມີນ້ຳໃຈ, ຈາກຝາກ ເບື້ອງນັ້ນຂອງສາຍພູຫລວງ ກໍ່ມີຄົນຕ່າເພື່ອນລາວ ທີ່ຂ້າມພູມາ ແຕ່ນດົນ ຫວຽດນາມ. ມາຮອດນີ້ ຂ້າພະເຈົ້າຄິດໄດ້ວ່າ ມີຄອບຄົວຄົນລາວ, ເພື່ອນຂອງທ່ານ ລັດຖະມົນຕີຊ່ວຍວ່າການ ໄງ ຫ໋ຽ ດຶກ ທີ່ພວກຂ້າພະເຈົ້າ ໄດ້ມີໂອກາດ ໄປຢ້ຽມຢາມນັ້ນ ແມ່ນຄອບຄົວທ່ານ ນິມມາດ ພົນເສນາ ລັດຖະມົນຕີວ່າການ ກະຊວງ ຄົມມະນາຄົມ ຂົນສົ່ງໄປສະນີ ແລະ ທ່ຽວ.

ແມ່ຂອງທ່ານນິມມາດ ພົນເສນາ ເປັນຜູ້ເຄີຍເອົາເຮືອນຂອງຄອບຄົວເອງ ຫລັງໜຶ່ງ ໃຫ້ສະຖານທູດ ຫວຽດນາມ ປະຈຳລາວ ຢືມເປັນບ່ອນຢູ່ອາໃສຕະຫລອດ 10 ກວ່າປີ. ໃນສະໄໝ ມີຄວາມຫຍຸ້ງຍາກຫລາຍປະການ. ເປັນຄອບຄົວໃຫ່ຍ ໃນປະຈຸບັນ ໄດ້ມີຂອງຄົນດຳລົງຕຳແໜ່ງ ເປັນລັດຖະມົນຕີວ່າການ. ຜູ້ໜຶ່ງເປັນ ລັດຖະມົນຕີຊ່ວຍວ່າການ. ຜູ້ໜຶ່ງລາດີດ ເປັນນອງປະທານ ສະຫະພັນແມ່ຍິງ, ເປັນຜູ້ ທີ່ກຳລັງຮັກສາຫນ້າທີ່ສຳຄັນໃນຄະນະລັດຖະບານລາວ ເມື່ອເວລາ ຕ້ອນຮັບ ພວກຂ້າພະເຈົ້າ ຢູ່ເຮືອນຂອງເພິ ເຕັ້ມໄປດ້ວຍເຄື່ອງຂອງ ທີ່ລະນຶກຈາກ ຫວຽດນາມ ແລະ ຍັງຍອມຮັບວ່າເປັນຫລານລຸງໄຮ່. ເພິ່ນສະແດງທ່າທີຕໍ່ຂ້າພະເຈົ້າ ຜູ້ທີ່ແປກໜ້າ ມາແຕ່ປະເທດ ຫວຽດນາມ ເໝືອນກັບ ຄົນຮັກແພງສະໜິດ ສະໜົມກັນ ມາແຕ່ຄົນແລ້ວ ໄດ້ພົບກັນ ຈັ່ງຊັ້ນລະ.■

ຄະນະຮັບຜິດຊອບເນື້ອໃນເອກະສານ

ກ. **ຜູ້ຊີ້ນຳ ການກວດແກ້ເອກະສານ**:

ທ່ານ ເຈືອງ ສົມບູນຂັນ, ຄະນະເລຂາທິການສູນກາງພັກ,
ກຳມະການສູນກາງພັກ,
ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ
ປະຊາຊົນປະຕິວັດລາວ

ຂ. **ຜູ້ເກັບກຳຂໍ້ມູນ ແລະ ຮຽບຮຽງເອກະສານ**

ທ່ານ ນາງ ເຂັມເພັດ ພົນເສນາ
ທ່ານ ດຣ ແກ່ນແກ້ວ ພົນເສນາ
ທ່ານ ນາງ ເຂັມແພງ ພົນເສນາ
ທ່ານ ສຈ. ດາລັດ ບຸບຜາ
ທ່ານ ນາງ ເຂັມວົງ ພົນເສນາ
ທ່ານ ສົມມະໂນ ພົນເສນາ
ທ່ານ ສົມມາດ ພົນເສນາ
ທ່ານ ນາງອາລີ ພົນເສນາ
ທ່ານ ສົມມັກ ພົນເສນາ
ທ່ານ ພັນເອກ ຄຳສີ ວົງຄຳຊາວ
ທ່ານ ນາງ ເຂັມມະນີ ພົນເສນາ
ທ່ານ ດຣ ສົມປອງ ພົນເສນາ
ທ່ານ ສົມພອນ ພົນເສນາ
ທ່ານ ນາງ ແພງມະນີ ສຸນີໄຊ - ແພນເຄັກ

๔. **<u>ຜູ້ແປເອກະສານ</u>**

ທ່ານ ນາງ ເຂັມວຽງ ພົນເສນາ

๗. **<u>ຜູ້ຈັດພິມເອກະສານ</u>**

ທ່ານ ສຈ ດາລັດ ບຸບຜາ

ທ່ານ ນາງ ອໍາມາລີ ພົນເສນາ

ທ່ານ ຂວັນຄໍາ ວົງຄໍາຊາວ

ທ່ານ ນາງ ອໍາມາລາ ພົນເສນາ

ທ່ານ ນາງ ວຽງມະນີ ພົນເສນາ

.๘. **<u>ຜູ້ຈັດວາງຮູບພາບ</u>**

ທ່ານ ສົມມະໂນ ພົນເສນາ

ທ່ານ ສົມມາດ ພົນເສນາ

ທ່ານ ສົມມັກ ພົນເສນາ

ຄະນະຮັບຜິດຊອບເນື້ອໃນເອກະສານ

ກ. **ຜູ້ຊີ້ນຳ ການກວດແກ້ເອກະສານ**:

ທ່ານ ເຈືອງ ສິມບູນຂັນ, ຄະນະເລຂາທິການສູນກາງພັກ,
ກຳມະການສູນກາງພັກ,
ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ
ປະຊາຊົນປະຕິວັດລາວ

ຂ. **ຜູ້ເກັບກຳຂໍ້ມູນ ແລະ ຮຽບຮຽງເອກະສານ**

ທ່ານ ນາງ ເຂັມເພັດ ພົນເສນາ
ທ່ານ ດຣ ແກ່ນແກ້ວ ພົນເສນາ
ທ່ານ ນາງ ເຂັມແພງ ພົນເສນາ
ທ່ານ ສຈ. ດາລັດ ບຸບຜາ
ທ່ານ ນາງ ເຂັມອ່ຽງ ພົນເສນາ
ທ່ານ ສົມມະໂນ ພົນເສນາ
ທ່ານ ສົມມາດ ພົນເສນາ
ທ່ານ ນາງອາລີ ພົນເສນາ
ທ່ານ ສົມມັກ ພົນເສນາ
ທ່ານ ພັນເອກ ຄຳສີ ວົງຄຳຊາວ
ທ່ານ ນາງ ເຂັມມະນີ ພົນເສນາ
ທ່ານ ດຣ ສົມປອງ ພົນເສນາ
ທ່ານ ສົມພອນ ພົນເສນາ
ທ່ານ ນາງ ແພງມະນີ ສຸນິໄຊ - ແພນເຄັກ

๔. **<u>ผู้แปเอกะสาม</u>**

ท่าม นาง เขัมอง พิมเสมา

๗. **<u>ผู้จัดพิมเอกะสาม</u>**

ท่าม สจ ดาลัด บุบผา

ท่าม นาง อำมาลิ พิมเสมา

ท่าม ขอันคำ อิงคำซาอ

ท่าม นาง อำมาลา พิมเสมา

ท่าม นาง องมะนิ พิมเสมา

.จ. **<u>ผู้จัดอางรูบพาบ</u>**

ท่าม สิมมะโม พิมเสมา

ท่าม สิมมาด พิมเสมา

ท่าม สิมมัก พิมเสมา



ພໍ່ ກິນິມ ພົນເສນາ (ຖ່າຍໃນປີ 1962 ທີ່ເຊີແນວ)



ພໍ່ ກິນິມ ແລະ ແມ່ ໄພບູນ ພົນເສນາ

ຮູບຖ່າຍລວມຄອບຄົວ ທີ່ ຮ່າໂນຍ ໃນປີ 1961

ຄະນະປະທານໃນມິດຕິງຕ້ອນຮັບຄະນະຜູ້ແທນກຳລັງເປັນກາງນຳໂດຍ ພໍ່ກິນິມ
ພົນເສນາ ຢູ່ ເຂດປົດປ່ອຍຊຳເໜືອ ໃນ ທ້າຍປີ 1960
ແຕ່ຊ້າຍເຖິງຂວາ: ທ່ານ ເຈົ້າສຸກ ວົງສັກ, ທ່ານ ປະທານ ໄກສອນ ພົມວິຫານ,
ທ່ານ ຮ້ອຍເອກ ກອງແລ, ທ່ານ ປະທານ ສຸພານຸວົງ, ທ່ານ ກິນິມ ພົນເສນາ
ທ່ານສີທົນ ກົມມະດຳ ແລະ ທ່ານ ໜູຮັກ ພູມສະຫວັນ

ພໍ່ ກິນິມ ພົນເສນາກ່າວຄຳປາໃສໃນມິດຕິງຕ້ອນຮັບຄະນະຜູ້ແທນກຳລັງເປັນກາງ
ຢູ່ ເຂດປົດປ່ອຍຊຳເໜືອ ໃນ ທ້າຍປີ 1960
ຢູ່ເບື້ອງຫລັງ ແຕ່ຊ້າຍຫາຂວາ: ທ່ານ ສີທົນ ກົມມະດຳ ແລະ ທ່ານ ໜູຮັກ ພູມສະຫວັນ

ທ່ານ ປະທານ ສຸພານຸວົງ ຕ້ອນຮັບ ພໍ່ ກິນິມ ພົນເສນາ ຢູ່ທີ່ບ້ານພັກ ຢູ່ເຂດປົດປ່ອຍຊຳເໜືອ
ໃນທ້າຍປີ 1960, ແຕ່ຊ້າຍເຖິງຂວາ: ທ່ານ ສີທົນ ກົມມະດຳ, ພໍ່ ກິນິມ ພົນເສນາ,
ທ່ານ ປະທານ ສຸພານຸວົງ, ຮ້ອຍເອກ ກອງແລ, ທ່ານ ໝູຮັກ ພູມສະຫວັນ



ການພົບປະ ກັບຄະນະຜູ້ແທນຫວຽດນາມໃນທ້າຍປີ 1960 ທີ່ ຮ່າໂນຍ, ສປ ຫວຽດນາມ
ກ໊ຳຊ້າຍ: ທ່ານ ພົນເອກ ຫວໍຫງຽນຢາບ(ທີ 2), ທ່ານ ນາຍົກ ຟາມວັນດົ໋ງ (ທີ 3),
ກ໊ຳຂວາ: ທ່ານ ປະທານ ໄກສອນ ພົມວິຫານ, ທ່ານ ປະທານ ສຸພານຸວົງ, ພໍ່ ກິນິມ ພົນເສນາ
ທ່ານ ຮ້ອຍເອກ ກອງແລ



ການພົບປະລະຫວ່າງ ສາມສະເດັດ
ແຖວທີໜຶ່ງ ແຕ່ຊ້າຍເຖິງຂວາ: ທ່ານ ປະທານ ສຸພານຸວົງ, ສະເດັດ ເຈົ້າ ສຸວັນນະພູມາ,
ພໍ່ ກິນິມ ພົນເສນາ, ສະເດັດ ເຈົ້າ ບຸນອູ້ມ ນະຈຳປາສັກ, ທ່ານ ພູມີ ໜໍ່ສະຫວັນ,
ທ່ານ ເຈົ້າ ສີສຸມັງ ສີສະເຫຼີມສັກ, ທ່ານ ຄຳສຸກ ແກ້ວລາ

ການເຈລະຈາລະຫ່ວາງສາມສະເດັດ
ແຕ່ຊ້າຍເຖິງຂວາ: ສະເດັດ ເຈົ້າ ບຸນອູ້ມ ນະຈຳປາສັກ, ສະເດັດ ເຈົ້າ ສຸວັນນະພູມາ,
ທ່ານ ປະທານ ສຸພານຸວົງ, ພໍ່ ກິນິມ ພົນເສນາ,

ທ່ານ ປະທານ ສຸພານຸວົງ ແລະ ພໍ່ ກຶນີມ ພົນເສນາ

ສະເດັດ ເຈົ້າ ສຸວັນນະພູມາ, ພໍ່ ກຶນີມ ພົນເສນາ ແລະ ທ່ານ ປະທານ ສຸພານຸວົງ

ການພົບປະລະຫ່ວາງຄະນະຜູ້ແທນກຳລັງຮັກຊາດ ແລະ ການນຳ ຂອງ ສປ ຈີນ
ທ່ານ ປະທານ ເໝົາເຈີຕຸງ, ທ່ານນາຍົກ ໂຈວເອິນຫຼາຍ, ທ່ານ ລັດຖະມົນຕີກະຊວງການຕ່າງ
ປະເທດເຊີນອີ, ສະເດັດ ເຈົ້າ ສຸວັນນະພູມາ, ທ່ານ ປະທານ ສຸພານຸວົງ, ພໍ່ ກົມົມ ພົນເສນາ

ພໍ່ ກົມົມ ພົນເສນາ ພົບປະກັບ ທ່ານປະທານ ເໝົາເຈີຕຸງ

ທ່ານ ນາຍົກ ໂຈວເອີນຫຼາຍ, ທ່ານ ພູມີ ວົງວິຈິດ ແລະ ພໍ່ ກີນິມ ພົນເສນາ

ພໍ່ ກີນິມ ພົນເສນາ ແລະ ທ່ານ ພູມີ ວົງວິຈິດ ໃນງານລ້ຽງຮັບຮອງໂດຍ ທ່ານຈອມພົນ ເຊີນອີ



ມິດຕິ໋ງຕ້ອນຮັບຄະນະຜູ້ແທນລາດຊະອານາຈັກລາວຢູ່ຮ່າໂນຍ ໃນປີ 1963
ແຕ່ຊ້າຍເຖິງຂວາ: ທ່ານ ປະທານ ສະພາ ເຈືອງຈິ໋ງ, ພໍ່ ກຶນິມ ພົນເສນາ, ທ່ານ ນາຍົກ
ຟາມວັນດົ໋ງ, ສະເດັດເຈົ້າ ສຸວັນນະພູມາ, ທ່ານ ປະທານ ໂຕນດຶກຖ໋ັງ,
ທ່ານເຈົ້າຊີວິດ ສີສະຫ່ວ່າ໋ງ ວັດທະນາ ແລະ ທ່ານ ປະທານ ໂຮຈິມິ໋ງ

ພໍ່ ກຶນິມ ພົນເສນາ ແລະ ທ່ານ ປະທານ ສຸພານຸວົ໋ງ

ພໍ່ ກິນິມ ພົນເສນາ, ທ່ານ ພູມີ ວົງວິຈິດ ແລະ ຄະນະຜູ້ແທນລາວ ຢູ່ ເຊີແນວ (ປີ 1962)

ພໍ່ ກິນິມ ພົນເສນາ ພົບປະນັກສຶກສາລາວກ້າວໜ້າຢູ່ເມືອງ ຝະລັ່ງ (ປີ 1962)



ພໍ່ ກຶນິມ ພົນເສນາ ກັບ ທ່ານ ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດ
ອະດີດສະຫະພາບໂຊຫວຽດ (ປີ 1963)

ແມ່ ໄພບູນ ພົນເສນາ ໄປຢ້ຽມຢາມຕ່າງປະເທດ

ພໍ່ ກິນິມ ພົນເສນາ



ພໍ່ ກິນິມ ພົນເສນາ ຖ່າຍຮູບຮ່ວມກັບລູກ ໃນວັນທີ 31-3-63 (ໜຶ່ງວັນກ່ອນມື້ຖືກຄາດຕະກຳ)

ROYAUME DU LAOS

CARTE DE SERVICE

N° 65/AE-CS

Signature du Porteur,

VALABLE JUSQU'AU

CETTE CARTE DOIT ÊTRE RENVOYÉE AU SERVICE DU PROTOCOLE LORSQUE LE TITULAIRE EST APPELÉ A D'AUTRES FONCTIONS.

LE MINISTRE DES AFFAIRES ÉTRANGÈRES certifie que le titulaire de la présente carte est S.Ex. Quinim Pholsena

Ministre des Affaires Etrangères du Gouvernement Royal

et il prie les Autorités Civiles et Militaires de vouloir bien le faire bénéficier des privilèges attachés à sa fonction et lui accorder les facilités compatibles avec les Lois et Règlements.

VIENTIANE, le 8 Novembre 1962

P. le Ministre & p. e.

Le Directeur du Protocole,

Nakkhala SOUVANNAVONG

ຄອບຄົວພົນເສນາ ແລະ ຍາດຕິພີ່ນ້ອງ ຖ່າຍຮູບຕໍ່ໜ້າໂລງ ຂອງ ພໍ່ ກິນິມ ພົນເສນາ

ຂະບວນແຫ່ສົບຂອງ ພໍ່ ກິນິມ ພົນເສນາໃນວັນຊາປະນາກິດສົບ ພໍ່ ກິນິມ ພົນເສນາ (8-4-63)

ສະເດັດ ເຈົ້າ ສຸວັນນະພູມາ ຕາງໜ້າລັດຖະບານ ກ່າວປິດໄວ້ອາໄລ
ພໍ່ ກິນິມ ພົນເສນາ (8-4-63)

ທ່ານ ປະທານ ສຸພານຸວົງ ວາງທູບທຽນ ຕໍ່ໜ້າຫໍພະເນມ ພໍ່ ກຶນີມ ພົນເສນາ



ທ່ານ ນາງ ເຂັມເພັດ ພົນເສນາ ກ່າວບົດໄວ້ອາໄລ ພໍ່ ກຶນີມ ພົນເສນາ ແລະ
ທ່ານ ດຣ ແກ່ນແກ້ວ ພົນເສນາ (ບວດນຳພໍ່), ຢືນຢູ່ຄຽງຂ້າງເອື້ອຍ (8-4-63)

ແມ່ ໄພບູນ ພົນເສນາ ແລະ ລູກຂອງເພິ່ນຢູ່ໂຮງໝໍ ເຊຍເຫີ, ນະຄອນປັກກິ່ງ
ໃນເວລາພະຍາບານຕົວຫຼັງຖືກບາດເຈັບໃນເວລາພໍ່ກິນນຶ່ງຖືກຄາດຕະກຳ

ແມ່ ໄພບູນ ພົນເສນາ ຖ່າຍໃນໂອກາດວັນສ້າງຕັ້ງພັກ ປະຊາຊົນ ປະຕິວັດລາວ
ຄົບຮອບ 40 ປີ, ໃນປີ 1995

ທ່ານ ປະທານ ໄກສອນ ພົມວິຫານ ແລະ ແມ່ ໄພບູນ ພົນເສນາ

ຊ້າຍສຸດ ປ້າຄຳແພງ ບຸບຜາ, ແມ່ ໄພບູນ ພົນເສນາ ຢືນຂ້າງຂວາມື
ທ່ານ ປະທານ ສຸພານຸວົງ, ປ້າຄຳສຸກ ວົງວິຈິດ ຢູ່ຂ້າງຊ້າຍ

ອ້າຍເອື້ອຍນ້ອງຄອບຄົວ ພົນເສນາ ຖ່າຍຮູບຮ່ວມກັບ ທ່ານ ປະທານ ສີຈິນພິງ
16 ມິຖຸນາ 2010

ອ້າຍເອື້ອຍນ້ອງຄອບຄົວ ພົນເສນາ ແລະ ທ່ານ ປະທານ ສີຈິນພິງ ຫວນຄືນຊີວິດ
ນັກຮຽນຮ່ວມກັນ ໃນທົດສະວັດ 1960, ຖ່າຍວັນທີ 16 ມິຖຸນາ 2010

ທາດທີ່ບັນຈຸ ອັດຖິຂອງ ພໍ່ ກິນິມ ພົນເສນາ ແລະ ແມ່ ໄພບູນ ພົນເສນາ
ທີ່ວັດເທບນິມິດ, ນະຄອນຫຼວງວຽງຈັນ

ຄອບຄົວພົນເສນ

ຍ່າ
ເຊີ ພົນເສນ

ປູ່
ນ ພົນເສນ

ແມ່ໄພບຸນ
ພົນເສນ

ພໍ່ຄຳພັນ
ພົນເສນ

ເສັ່ນເພັດ ພົນເສນ

ຄຳປຸ່ ສຸນິໄຊ

ທອງພັນຄຳ ສຸນິໄຊ

ແພງເພນີ ສຸນິໄຊ

ເຈມ ແພນເຜົ່າ

ມີວິສຸກ ສຸນິໄຊ

ດຣ ວຽງເພໄນ ສຸນິໄຊ

ເສັ່ດວິສຸກ ສຸນິໄຊ

ເລືອງເພໄນ ສຸນິໄຊ

ວິໄລພອນ ສີຈັນໄທ

ສົມພອນໄຊ ພົນເສນ

ສົມບຸ ດຖພນ ພົນເສນ

ສົມພອນປະເສີດ ພົນເສນ

ສົມນາລາ ພົນເສນ

ສົມວຽເສັ ພົນເສນ

ສຸກສັນຫາ ສີສະນົນ

ດຣ ແພນເກົ່ ພົນເສນ

ດຣເສັ່ນຄຳ ພົນເສນ

ດຣ.ໄວນ໌ງ ກູເປີເຊັກ

ອ້ງດພເລ ກູເປີເຊັກ


ອາແລງ ກູເປີເຊັກ

ນິກແຮນເດ ກູເປີເຊັກ

ເສັ່ນແພງ ພົນເສນ


ລອຍ ຈັນສະຫວັດ

ມະນີຮັກ ພູນຊຸນນ

ແພງນາລີ ຈັນສະຫວັດ

ນິລະລອຍລອງ ຈັນສະຫວັດ

ວິໄລວັນ ວັນດີ

ນິລາວັກແພງ ຈັນສະຫວັດ

ເສັ່ນວຽ ພົນເສນ

ສຈ. ດາລັດ ບຸບຜາ

ລິດນະວີ ພົນເສນ

ສົມນະໄນ ພົນເສນ

ມະໄນລິດ ພົນເສນ

ຄຳສະຫີດ ສຸວັນນະລາດ

ມະໄນຄຳ ສຸວັນນະລາດ


ຄຳເຊັ່ງ ພົນເສນາ
ຄຳພວງ ພົນເສນາ
ຄຳລ່ຽງ ພົນເສນາ
ຄຳລ່ຽມ ພົນເສນາ
ອາລີ ພົນເສນາ
ສົມມາດ ພົນເສນາ
ສົມມັກ ພົນເສນາ
ເສັ່ມມະນີ ພົນເສນາ
ຄຳສີ ວົງຄຳຊາວ
ມີນາວັນ ພົນເສນາ
ດຣ.ສົມປ່ອຍ ພົນເສນາ
ສົມພອນ ພົນເສນາ
ສີເຮືອງນາມ ພົນເສນາ
ອຳມະລີ ພົນເສນາ
ອຳມະລາ ພົນເສນາ
ສົມສັກ ລຸນທະປັນຍາ
ວຽງມະນີ ພົນເສນາ
ສົມບູນ ພົນເສນາ
ວິນາ ໄຊບົວອ່ອນຣາດ
ຂວັນຄຳ ພົນເສນາ
ຂວັນມະໄນ ພົນເສນາ
ສົມມະນີ ພົນເສນາ
ມີນາວຽງ ພົນເສນາ
ສົມມີນາ ພົນເສນາ
ມະໄນພັດ ພົນເສນາ
ສົມມະນາ ລຸນທະປັນຍາ

ແກ້ຄຳຜິດ

ການກະກຽມບົດ ແລະ ການຈັດພິມປຶ້ມເຫຼັ້ມນີ້ ໄດ້ມີຄວາມຜິດພາດ ທາງດ້ານເນື້ອໃນ, ຊຶ່ງຄວາມຜິດພາດດັ່ງກ່າວ ໄດ້ເຮັດໃຫ້ປຶ້ມເຫຼັ້ມນີ້ ຂາດ ຄວາມສົມບູນ.

ພວກຂ້າພະເຈົ້າໃນນາມຜູ້ຈັດທຳ ແລະ ຈັດພິມ ຈຶ່ງຂໍອະໄພມາ ນະ ໂອກາດນີ້ ຄວາມຜິດພາດດັ່ງກ່າວເກີດຂຶ້ນຍ້ອນຄວາມຟ້າວຟັ່ງໃນການ ກະກຽມ ແລະ ຈັດພິມ ມີເວລາສັ້ນ, ຈຶ່ງໄດ້ດັດແກ້ ເພື່ອໃຫ້ຖືກຕ້ອງຕາມ ລະອຽດດັ່ງລຸ່ມນີ້:

ໜ້າ 170

ພໍ່ກິນົມ ພົນເສນາ ມີນ້ອງ 7 ຄົນ ຄື:

1. ອາວ ຄຳເຊັ່ງ
2. ອາວ ກິຊວງ
3. ອາ ຄຳພວງ
4. ອາ ຈຳປາ
5. ອາວ ຄຳລຽງ
6. ອາ ກິ່ຮ່ຽງ
7. ອາວ ຄຳລຽນ

ໜ້າ 172

ພໍ່ກິນົມ ພົນເສນາ ມີລູກ 12 ຄົນ ຄື:

1. ນາງ ເຂັມເພັດ
2. ທ້າວ ແກ່ນແກ້ວ
3. ນາງ ເຂັມຄຳ
4. ນາງ ເຂັມແພງ
5. ນາງ ເຂັມວຽງ
6. ທ້າວ ສົມມະໂນ
7. ທ້າວ ສົມມາດ
8. ທ້າວ ສົມມັກ
9. ນາງ ເຂັມມະນີ
10. ທ້າວ ສົມປອງ
11 ທ້າວ ສົມພອນ
12. ນາງ ສີເຮືອງນາມ

ພິມທີ່ໂຮງພິມໜຸ່ມລາວ:
ໂທ/ແຟັກ: 021 215721; ໂທ: 021 216338; 242578
ພິມໃນປີ 2013
ຈຳນວນ 5.000 ເຫລັ້ມ